ຄົນທັ້ງຫລາຍເວົ້າເຖິງການເລົ່າເຣື່ອງເຈາະໃຈ ແນວໃດແດ່

ການເຂົ້າໄປເຖິງດ້ວຍການເລົ່າເຣື່ອງເຈາະໃຈນັ້ນມີປະສິດທິພາບຫຼາຍ ເພາະວ່າມັນຊ່ວຍເຮົາໃຫ້ມີປະສົບການກັບ ເຣື່ອງທີ່ເລົ່າ, ຂໍ້ພຣະຄັມພີກໍມີຊີວິດຊີວາ ແລະຊຸມຊັບແຕ່ລະຊຸມທີ່ຄົ້ນພົບກໍສິດໃໝ່ແລະມີຣິດເດດ. ມັນເປັນຄວາມ ຊົມຊື່ນຍິນດີຂອງຂ້າພະເຈົ້າທີ່ໄດ້ໃຊ້ໃນຫລາຍທີ່ຫລາຍບ່ອນ ແລະການຕອບສນອງຈາກຜູ້ຟັງກໍຢູ່ໃນທາງບວກສເມີ.

Babu Ganta - Communication Officer, Bible Society in the Gulf

---

ໂລກເປັນທີ່ຢູ່ຂອງຂ້າພະເຈົ້າເປັນເວລາເຖິງ 30 ປີ, ຢູ່ກັບງານຮັບໃຊ້ ແບບທະວີຄູນ. ການທະວີຄູນໄດ້ເກີດຂຶ້ນຢ່າງ ບໍ່ຄາດຝັນ ຊຶ່ງມາຈາກຊາຍຈີນອາຍຸ 79 ປີຄົນນຶ່ງ ທີ່ໄດ້ຍ້າຍມາຕັ້ງຖິ່ນຖານຢູ່ປະເທດການາ. ລາວເວົ້າວ່າ:

> "ຂ້ອຍຄິດວ່າຂ້ອຍຄວນຮູ້ຈັກ ການເລົ່າເຣື່ອງເຈາະໃຈ ຕັ້ງແຕ່ 40 ປີຜ່ານມາພຸ້ນ. ພວກເຮົາບໍ່ໄດ້ຖືກລ້ຽງດູ ແບບຄຣິສຕຽນ ທີ່ຕັ້ງຄຳຖາມຈາກຄວາມຄິດທີ່ດີໆ ອອກມາຈາກພຣະຄັມພີແລະຕິດຕາມດ້ວຍການແລກ ປ່ຽນຄວາມຄິດເຫັນ. ດຽວນີ້, ພຣະຄັມພີເປັນເໝືອນປຶ້ມໃໝ່ໆ ສຳລັບຂ້ອຍ."

ການຮັບໃຊ້ທີ່ຂາດການເພີ້ມພລັງທີ່ຈະໃຊ້ພຣະຄຳຂອງພຣະເຈົ້າຢ່າງຖືກຕ້ອງສຳລັບຄຣິສຕຽນແຕ່ລະຄົນນັ້ນ ກໍຄື ການຄັດລອກ. ການເລົ່າເຣື່ອງເຈາະໃຈເປັນສື່ນຳທີ່ສຳຄັນເພື່ອໃຫ້ພຣະມະຫາບັນຊາປະສົບຜົນສຳເຣັດ.

Jim Thurber - Seminary Lecturer / Mission Trainer, Global

"ຂ້າພະເຈົ້າໄດ້ຮັບການຝຶກອົບຮົມ ເລົ່າເຣື່ອງເຈາະໃຈ ສອງສາມປີຜ່ານມາແລ້ວ ຊຶ່ງເປັນຄຳຕອບການອະທິຖານ ຂອງຂ້າພະເຈົ້າ. ຂ້າພະເຈົ້າເປັນມິສຊັນນາຣີຮັບໃຊ້ພຣະເຢຊູເປັນເວລາ 35 ປີ ຢູ່ໃນຫລາຍທະວີບ ກັບສາມກຸ່ມ ໃຫຍ່ໃນໂລກທີ່ບໍ່ແມ່ນຄຣິສຕຽນ ແຕ່ຂ້າພະເຈົ້າມີບັນຫາທີ່ຈະເວົ້າເຣື່ອງຄວາມເຊື່ອຂອງຂ້າພະເຈົ້າທີ່ເປັນໄປຕາມ ທັມມະຊາດທີ່ເໝາະສົມກັບທາງທີ່ພຣະເຈົ້າປະທານໃຫ້ຂ້າພະເຈົ້າ.

"ການຝຶກອົບຮົມເລົ່າເຣື່ອງເຈາະໃຈນີ້ ໄດ້ປ່ຽນແປງຊີວິດຂອງຂ້າພະເຈົ້າແລະເຮັດໃຫ້ການປະກາດແລະການເປັນສາ ວິກບໍ່ພຽງແຕ່ເປັນທັມມະຊາດເທົ່ານັ້ນ ແຕ່ມີຄວາມປິຕິຍິນດີພ້ອມ ! ດຽວນີ້ຂ້າພະເຈົ້າມີອິສຣະພາບແລະຊົມຊື່ນຍິນ ດີໃນການເຮັດງານກັບພຣະວິນຍານບໍຣິສຸດຂອງພຣະເຈົ້າ ແລະເລື້ອຍໆ ຂ້າພຣະເຈົ້າໄດ້ເຫັນພຣະຄຳຂອງພຣະອົງ ຝັງເລິກໃນຊີວິດຂອງຫລາຍໆ ຄົນ. ເວລານີ້ຂ້າພະເຈົ້າຊົມຊື່ນຍິນດີໃນງານຮັບໃຊ້ຢ່າງແທ້ຈິງ ແລະໄດ້ເຫັນໝາກຜົນ ເກີດຂຶ້ນຈາກງານຮັບໃຊ້ນັ້ນ ຊຶ່ງບໍ່ເຄີຍມີມາກ່ອນ!"

Bryan Thompson - church planter/missionary/storyteller/podcaster with story4all, UK

"ການສຶກສາພຣະຄັມພີແບບປາກເປົ່ານີ້' ຄວນຈະເປັນຫົວເຣື່ອງທີ່ຕ້ອງມີໃນໂຮງຮຽນພຣະຄັມພີແລະສະຖາບັນການ ສຶກສາທຸກແຫ່ງຂອງຄຣິສຕຽນ ! ການເລົ່າເຣື່ອງເຈາະໃຈເປັນ 'ເຄື່ອງມືທີ່ມີພລັງ' ທີ່ຈະເຮັດໃຫ້ຄຣິສຕຽນທຸກຄົນມີປະ ສິດທິພາບໃນການປະກາດຂ່າວປະເສີດ."

Regina Manley - Oral Communications Specialist, Mission Aviation Fellowship, Global

---

"ການເລົ່າເຣື່ອງເຈາະໃຈ ແມ່ນທາງທີ່ດີທີ່ສຸດໃນການເຂົ້າເຖິງ ກຸ່ມຄົນທີ່ເຂົ້າໄປເຖິງໄດ້ຍາກ ຕັ້ງແຕ່ພວກເຮົາໄດ້ຮັບ ການຝຶກອົບຮົມເທື່ອທຳອິດເປັນຕົ້ນມາ. ປຶ້ມຄູ່ມືເຫຼັ້ມນີ້ເປັນທາງອັນມີພລັງໃຫ້ແກ່ພວກເຮົາໃນການສ້າງສາວິກແບບ ທະວີຄູນແລະເປັນແສງປະກາຍໃຫ້ພວກເຮົາມີຄວາມປາຖນາໃນຂຸມຊັບແຫ່ງພຣະຄຳຂອງພຣະເຈົ້າ. ພວກເຮົາຮຽນ ເຣື່ອງໃນພຣະຄັມພີແລະບັນຈຸໄວ້ໃນ 'ຖົງຫົວໃຈ' ຂອງພວກເຮົາ. ຈົ່ງອ່ານປຶ້ມຄູ່ມືເຫຼັ້ມນີ້ເພື່ອຄົ້ນຄວ້າການເລົ່າເຣື່ອງ ເຈາະໃຈແລະຈົ່ງຕຽມພ້ອມທີ່ຈະກາຍເປັນຜູ້ເລົ່າເຣື່ອງ. ການເດີນທາງຝ່າຍວິນຍານຂອງທ່ານກັບອົງພຣະຜູ້ເປັນເຈົ້າ ຈະບໍ່ເໝືອນເດີມອີກ."

Rev. Apollos Djibo - Director Fufulde Ministries Training Centre, Niger

---

"ພລັງອັນສຳຄັນຢ່າງນຶ່ງຂອງການເລົ່າເຣື່ອງເຈາະໃຈ ແມ່ນຂຶ້ນຢູ່ກັບການເລົ່າເຣື່ອງຈາກຄຳເວົ້າຂອງຜູ້ເລົ່າເຣື່ອງ ແຕ່ຕ້ອງລະວັງໃຫ້ດີທີ່ຈະບໍ່ເພີ້ມເຂົ້າແລະຕັດອອກຈາກຂໍ້ພຣະຄັມພີ. ຈຸດສຳຄັນອີກຢ່າງນຶ່ງແມ່ນເຣື່ອງນັ້ນໄດ້ສ້າງ ເປັນຄຳຖາມເພື່ອໃຫ້ອົງພຣະວິນຍານເປີດເຜີຍໃຫ້ນັກຮຽນໄດ້ເຫັນຂຸມຊັບທີ່ຢູ່ໃນເຣື່ອງແລະນຳໃຊ້ໃນຊີວິດຝ່າຍວິນ ຍານຂອງເຂົາເຈົ້າ. ວິທີດັ່ງກ່າວນີ້ເປັນການໜູນໃຈນັກຮຽນຫລາຍແລະໃຫ້ເຂົາເຈົ້າຍອມຮັບວ່າເຂົາເຈົ້ານຳສາມາດທີ່ ຈະແບ່ງປັນພຣະຄຳຂອງພຣະເຈົ້າກັບຄົນອື່ນຢ່າງຖືກຕ້ອງແລະໃນທາງທີ່ຖວາຍພຣະກຽດແດ່ພຣະເຈົ້າ."
"ເວລານີ້ ຄວາມຄິດຂອງເຂົາເຈົ້າເຣື່ອງ ໂຮງຮຽນພຣະຄັມພີປາກເປົ່າ ໄດ້ຂຍາຍເພີ້ມຂຶ້ນ ສິ່ງຜົນໃຫ້ມີຄວາມຕ້ອງ ການຜູ້ນຳຄຣິສຕະຈັກເພີ້ມຂຶ້ນຢ່າງຫລວງຫລາຍໃນໂລກ."

Mike Holman - MAF Learning Technologies, Global

"ຂ້າພະເຈົ້າຮັບໃຊ້ໃນຖານະເປັນນັກໜັງສືພິມສາທາຣະນະ. ຂ້າພະເຈົ້າຂອບພຣະຄຸນພຣະເຈົ້າເປັນພິເສດທີ່ໄດ້ເປັນ ສ່ວນນຶ່ງຂອງໂຄງການເຣື່ອງລາວຂອງພຣະເຈົ້າ ແລະ ການເລົ່າເຣື່ອງເຈາະໃຈ ທີມງານຝຶກອົບຮົມຜູ້ນຳໃນ ຄານາ ທະກະ. ການສຶກສາພຣະຄຳຂອງພຣະເຈົ້າຜ່ານການເລົ່າເຣື່ອງເຈາະໃຈ ໄດ້ຊ່ວຍຂ້າພະເຈົ້າແລະຄອບຄົວໄດ້ເຂົ້າ ໃຈພຣະຄຳຂອງພຣະເຈົ້າຕາມຂຽນໄວ້ແລະຮັກສາພຣະຄຳຂອງພຣະອົງໄວ້ໃນໃຈແລະເພື່ອຈະແບ່ງປັນພຣະຄຳຂອງ ພຣະອົງ(ເລົ່າເຣື່ອງ)ໃນທຸກທີ່ທຸກບ່ອນທີ່ຂ້າພະເຈົ້າເດີນທາງໄປໃນຖານະເປັນຄົນສາທາຣະນະ."

M. Krishna, M.A. - Senior Journalist, Pal Voice Publisher, V J Pur, Karnataka, India.

"ຂ້າພະເຈົ້າທຳງານຖ້າມກາງຄົນໄທເປັນເວລາເຖິງ 30 ປີ. ເມື່ອຂ້າພະເຈົ້າຮູ້ຈັກກັບການເລົ່າເຣື່ອງເຈາະໃຈ ຂ້າພະ ເຈົ້າຍອມຮັບວ່ານີ້ແມ່ນການເຂົ້າເຖິງທີ່ສອດຄ່ອງຢ່າງແທ້ຈິງກັບການເວົ້າປາກເປົ່າອັນເປັນທັມມະຊາດຂອງປະເທດທີ່ ນັບຖືສາສນາພຸດມາແຕ່ດົນນານແລ້ວ.
"ສິ່ງທີ່ຕ້ອງການທີ່ສຸດຂອງປະເທດນີ້ແມ່ນການສ້າງຕັ້ງຄຣິສຕະຈັກ ຊຶ່ງໝາຍຄວາມວ່າຈະຕ້ອງມີການສິ່ງຕ່ໃນທັນທີ ທີ່ຈະສື່ຄວາມຈິງຂອງພຣະຄັມພີຢ່າງຖືກຕ້ອງ ແລະຍັງໃຫ້ເໝາະສົມກັບວັທນະທັມອີກດ້ວຍ. ຫລັງຈາກຂ້າພະເຈົ້າ ໄດ້ສອນການເລົ່າເຣື່ອງເຈາະໃຈຢູ່ຫລາຍປະເທດໃນອາຊີ ແລະໃນຫລາຍໆ ບ່ອນທີ່ປະເທດໄທ ຂ້າພະເຈົ້າໄດ້ເຫັນ ເຖິງຄວາມເໝາະສົມກັບຜູ້ຮຽນແບບປາກເປົ່າທີ່ຢູ່ໃນຊົນນະບົດແລະທັງບັນດາຜູ້ທີ່ຢູ່ໃນເມືອງນຳ."

Larry Dinkins, ThM., PhD. - Bible Teacher, OMF Thailand

"ພວກເຮົາລ້ຽງເດັກກຳພ້າຈຳນວນ 60 ຄົນ. ທຸກໆ ມື້ພວກເຮົາພົບກັບຄວາມຫຍຸ້ງຍາກໃນການຄວບຄຸມເດັກກຳພ້າເຫລົ່ານີ້ ເພາະວ່າແຕ່ລະຄົນມາຈາກຕ່າງວັທນະທັມ ແລະຕ່າງທີ່ຕ່າງບ່ອນ. ວິທີການເລົ່າເຣື່ອງເຈາະໃຈ ໄດ້ຊ່ອຍພວກເຮົາສັ່ງສອນພຣະຄຳຂອງພຣະເຈົ້າ ແລະໃນເວລານີ້ເດັກນ້ອຍຂອງພວກເຮົາດີຫລາຍໃນການສຶກສາແລະເຕີບໃຫຍ່ທາງຈິດວິນຍານ ແລະແບ່ງປັນເຣື່ອງຂອງພຣະອົງແກ່ເພື່ອນໆ ຂອງເຂົາເຈົ້າໃນໂຮງຮຽນ."

Rev. Vijay Raj - Executive Director Happy Home, Karnataka, India

---

"ໃນຖານະທີ່ເປັນມິສຊັນນາຣີອັຟຣິກັນຄົນນຶ່ງ, ເປັນຜູ້ສ້າງຕັ້ງຄຣິສຕະຈັກແລະເປັນຄຣູສອນໃນໂຮງຮຽນພຣະຄັມພີໃນປະເທດຂອງຂ້າພະເຈົ້າ, ຂ້າພະເຈົ້າຂໍແນະນຳປຶ້ມຄູ່ມືເຫຼັ້ມນີ້ກັບຄົນໆນຮັບໃຊ້ຄຣິສຕຽນທຸກຄົນ. ຊຶ່ງເປັນເຄື່ອງມືທີ່ມີຄວາມລະອຽດສຳລັບທຸກຄົນທີ່ສແວງຫາການຮຽນແລະສອນພຣະຄັມພີທາງປາກເປົ່າຕໍ່ຄົນອື່ນໆ, ໃນທຸກແຫ່ງຫົນໃນໂລກ. ການເລົ່າເຣື່ອງເຈາະໃຈ ສຳລັບຂ້າພະເຈົ້າເອງແມ່ນເລີ້ມຮຽນຢູ່ທີ່ເຮືອນ. ທຸກໆ ຄືນກ່ອນພວກເຮົາຈະເຂົ້ານອນ, ພວກເຮົາໄດ້ຮຽນເຣື່ອງໃນພຣະຄັມພີແລະແລກປ່ຽນຄວາມຄິດເຫັນໂດຍການໃຊ້ຫລັກການຢູ່ໃນປຶ້ມຄູ່ມືເຫຼັ້ມນີ້. ຄອບຄົວຂອງພວກເຮົາໄດ້ຮັບການປ່ຽນແປງຕັ້ງແຕ່ນັ້ນມາ."

Rev. Jacob Ochieng Okth - Showers of Blessings Church/Ministries, Founder, Kenya

---

"ໂດໂຣທີ ມິລເລີ ແລະທີມງານເລົ່າເຣື່ອງເຈາະໃຈ ໄດ້ຕິດຕາມການປະກາດຂອງຂະບວນການເລົ່າເຣື່ອງໃນພຣະຄັມພີ. ຂ້າພະເຈົ້າໄດ້ຮັບການຝຶກອົບຮົມເປັນຄຣູສອນເລົ່າເຣື່ອງເຈາະໃຈ ແລະໄດ້ເຫັນເຣື່ອງໃນພຣະຄັມພີມີຊີວິດຊີວາດ້ວຍຕົນເອງ ເມື່ອນຳສເນີການເລົ່າເຣື່ອງເຈາະໃຈໃຫ້ກັບຜູ້ຮຽນທັງດ້ວຍການອ່ານແລະດ້ວຍປາກເປົ່າ."

Charles Cibebe - CEO, MegaVoice, Global

"ໃນການເລົ່າເຣື່ອງເຈາະໃຈ ຂ້າພະເຈົ້າໄດ້ພົບວ່າເປັນສ່ວນນຶ່ງທີ່ຂາດຫາຍໄປໃນການຮັບໃຊ້ທີ່ປະເທດເອທິໂອເປັ່ງ ແລະປະເທດອື່ນໆ. ການອຸທິດຕົນຕໍ່ຄວາມຈິງໃນພຣະຄັມພີກະຕຸ້ນພວກເຮົາໃຫ້ແນະນຳວິທີໂອ້ລົມສົນທະນາຫລືແລກປ່ຽນຄວາມຄິດເຫັນນີ້ໃນການຮຽນພຣະຄັມພີໃນເອທິໂອເປັ່ງ. ຜູ້ເລົ່າເຣື່ອງໄດ້ນຳຫລາຍຄົນມາເຖິງພຣະຄຣິດ ແລະສິ່ງສຳຄັນນັ້ນແມ່ນ ວິທີເລົ່າເຣື່ອງເຈາະໃຈ ໄດ້ປ່ຽນແປງຊີວິດຂອງຜູ້ເລົ່າເຣື່ອງຫລາຍຄົນໃນຂະນະທີ່ເຂົາເຈົ້າຄົ້ນຄວ້າພຣະຄຳຂອງພຣະເຈົ້າດ້ວຍຕົນເອງ ຕາມທີ່ພຣະວິນຍານບໍຣິສຸດນຳພາເຂົາເຈົ້າເຂົ້າໄປສູ່ຄວາມຈິງທັງໝົດ."

Julie Kay Field - Paraclete Mission Group Associate, Global

"ຂ້າພະເຈົ້າຮັບໃຊ້ຖ້າມກາງຊົນເຜົ່າຫິມາລັຍແລະຊົນເຜົ່າພວກເຮົາເອງດ້ວຍການກະທຳຕາມປະເພນີ ຄືເພິ່ງພາສາເວົ້າປາກເປົ່າ ເພາະວ່າພວກເຮົາບໍ່ມີພາສາຂຽນ. ດັ່ງນັ້ນທາງທີ່ດີທີ່ສຸດໃນການສື່ສານຂ່າວປະເສີດກັບຊົນເຜົ່າເຫລົ່ານີ້ແມ່ນຜ່ານການເລົ່າເຣື່ອງ. ການເລົ່າເຣື່ອງ (ເຈາະໃຈ) ແມ່ນແບບຢ່າງອັນນຶ່ງທີ່ດີທີ່ສຸດໃນການປະກາດຂ່າວປະເສີດໃນກຸ່ມຊາວພູເຂົາຂອງພວກເຮົາ."

Rev. Tinuyangba Imchen - Senior Pastor / Bible Teacher, Arunachal Pradesh, India

---

"ການເລົ່າເຣື່ອງເຈາະໃຈ ຊ່ອຍພວກເຮົາໃຫ້ເຂົ້າໃຈພຣະຄຳຂອງພຣະເຈົ້າ ເຮັດໃຫ້ເຂົ້າໃຈງ່າຍຂຶ້ນແລະຈື່ຈຳເຣື່ອງໄດ້ ແລະຮັກສາໄວ້ໃນ 'ຖົງໃຈ' ຂອງພວກເຮົາ. ມັນຊ່ອຍພວກເຮົາຝຶກອົບຮົມຜູ້ອາວຸໂສໃນໂບດຂອງພວກເຮົາທີ່ອ່ານບໍ່ໄດ້ ໃນການຢຽນພຣະຄຳຂອງພຣະເຈົ້າແລະເພື່ອເຂົ້າໄປຫາຄອບຄົວເພື່ອນບ້ານເຂົາເຈົ້າແລະໃນໝູ່ບ້ານຂອງເຂົາເຈົ້າ. ວິທີການເລົ່າເຣື່ອງເຈາະໃຈ ໄດ້ຊ່ອຍພວກເຮົາສ້າງຕັ້ງຄຣິສຕະຈັກເພີ້ມຂຶ້ນຫລາຍກວ່າແຕ່ກ່ອນ."

Rev. Devasahayam - Senior Pastor/Church Planter, F L Church, Andra Pradesh, India

---

"ຂ້າພະເຈົ້າຕົກຊະເງື້ ໂດຍຄວາມຖືກຕ້ອງຂອງພຣະຄັມພີທີ່ບັນຈຸຢູ່ໃນການເລົ່າແບບງ່າຍໆ, ເລົ່າລົ້ມຄືນ ແລະສຳຣວດໃນເຣື່ອງ ເພື່ອການສັງເກດຝ່າຍວິນຍານແລະນຳໃຊ້ໃນຊີວິດຝ່າຍວິນຍານ ຊຶ່ງພົບເຫັນໃນເຣື່ອງ. ທຸກໆ ເທື່ອທີ່ບາງຄົນ ຢູ່ໃນການໂອ້ລົມສົນທະນາ, ຂະນະແລກປ່ຽນຄວາມຄິດເຫັນ ຖ້າຫາກເວົ້າບາງສິ່ງທີ່ເຫັນວ່າ 'ຜິດ' ພຽງໜ້ອຍດຽວ ຜູ້ເລົ່າເຣື່ອງກໍຈະບອກແບບງ່າຍໆ ວ່າ, 'ພວກເຮົາເຫັນສິ່ງນັ້ນໃນເຣື່ອງຫລືບໍ່?' ໃນທັນໃດນັ້ນກໍຈະນຳກຸ່ມຜູ້ຟັງກັບເຂົ້າມາສູ່ພຣະຄຳ ແລະເຫັນວ່າເປັນການງ່າຍທີ່ຈະໄດ້ຮູ້ວ່າຜິດຫລືຖືກ."

Pastor Miles DeBenedictis - Cross Connection, USA

"ໃນຖານະທີ່ເປັນຜູ້ຊ່ຽວຊານດ້ານພຣະຄັມພີແລະເປັນນັກສາສນາສາດ, ຂ້າພະເຈົ້າໄດ້ເຫັນການເລົ່າເຣື່ອງເຈາະໃຈເປັນວິທີທີ່ມີປະສິດທິພາບທີ່ສຸດໃນການອະທິບາຍພຣະຄັມພີ. ໃນ 24 ປີໃນການຮັບໃຊ້ສ້າງສາວົກຢູ່ໃນປະເທດຂອງຂ້າພະເຈົ້າ ຂ້າພະເຈົ້າຍອມຮັບວ່າຂ້າພະເຈົ້າບໍ່ເຄີຍໄດ້ສ້າງສາວົກແມ່ນແຕ່ຄົນດຽວກັບຜູ້ທີ່ຂຽນແລະອ່ານບໍ່ໄດ້. ຄວາມສາມາດໃນປຶ້ມຄູ່ມືເລົ່າເຣື່ອງເຈາະໃນເຫຼັ້ມນີ້ໄດ້ຊ່ອຍຂ້າພະເຈົ້າໃຫ້ເລີ້ມເຮັດງານຢ່າງອັສຈັນ. ຂ້າພະເຈົ້າຂໍແນະນຳທຸກໆ ໜ້າໃນປຶ້ມນີ້ຕໍ່ທຸກໆ ຄົນ, ໂດຍສະເພາະແມ່ນເພື່ອນຂອງຂ້າພະເຈົ້າທີ່ເປັນນັກສາສນາສາດ."

Rev. Luvao - Jerusalem New Life Pentecostal Church International, D. R. Congo

---

"ຂ້າພະເຈົ້າໄດ້ເຫັນຄວາມເຕີບໃຫຍ່ຂອງໂຄງການເຣື່ອງລາວຂອງພຣະເຈົ້າຢູ່ໃນປະເທດອິນເດັຽທີ່ໄດ້ກໍ່ຕັ້ງຂຶ້ນມາ. ພວກເຮົາໄດ້ເຫັນຊີວິດຂອງຄົນທັງຫລາຍປ່ຽນແປງຜ່ານທາງຣິດອຳນາດແບບງ່າຍໆ ແລະການຖ່າຍທອດເຣື່ອງລາວໃນພຣະຄັມພີ. ຂ້າພະເຈົ້າແນ່ໃຈວ່າຖ້າເຮົາຢາກເຂົ້າເຖິງຄົນໃນປະເທດນີ້ເພື່ອນຳເຂົາເຈົ້າໃຫ້ມາເຖິງອົງພຣະຜູ້ເປັນເຈົ້າໃນຍຸກສມັຍຂອງເຮົາ ເຮົາຕ້ອງສອນ, ຕ້ອງຝຶກອົບຮົມ ແລະສ້າງຄົນທັງຫລາຍໃຫ້ເປັນສາວົກໃນທາງທີ່ເຂົາເຈົ້າສາມາດເຂົ້າໃຈໄດ້. ຂ້າພະເຈົ້າຂໍແນະນຳຢ່າງໜັກແໜ້ນກັບຜູ້ສ້າງຕັ້ງຄຣິສຕະຈັກທຸກໆ ທ່ານໃຫ້ທຳການຝຶກອົບຮົມໃນທາງນີ້ແລະໃຊ້ເຣື່ອງລາວໃນພຣະຄັມພີເພື່ອສ້າງສາວົກໃນປະເທດເຮົາເພື່ອພຣະຄຣິດ."

Rev. Dr. Sam Abraham - Director Himachal Bible College, Berachah Ministries, India

---

ການເລົ່າເຣື່ອງເຈາະໃຈ

Simply The Story

ການສຶກສາພຣະຄັມພີດ້ວຍການສັງເກດ ໃຊ້ວິທີປາກເປົ່າ

Inductive Bible Study "Oral Style"

ຄູ່ມືເລົ່າເຣື່ອງເຈາະໃຈ

ຄົ້ນຄວ້າພຣະຄຳຂອງພຣະເຈົ້າຜ່ານການສົນທະນາ

ຟັງແລະຕອບໂຕ້

STS Handbook

Exploring Scripture Through Discussion
Listening and Responding

ໂດໂຣທີ ເອ. ມິລເລີ

ໂຄງການ "ເຣື່ອງລາວຂອງພຣະເຈົ້າ"

Dorothy A. Miller
The God's Story Project

ຄູ່ມືເລ່ົາເຣື່ອງເຈາະໃຈ ສະບັບພິມຄັ້ງທີ 6

ສງວນລິຂະສິດ 2006, 2012, 2014, 2017ໂດຍໂຄງການ "ເຣື່ອງລາວຂອງພຣະເຈົ້າ"

ຈັດພິມໂດຍໂຄງການ "ເຣື່ອງລາວຂອງພຣະເຈົ້າ" ຕູ້ ປ.ນ. 187 ເຮເມັດ ຄາລິຟໍເນັ່ງ 92546
(951) 658-1619

info@SimplyTheStory.org | info@Gods-Story.org
www.SimplyTheStory.org | www.Gods-Story.org

ຟັງເຣື່ອງລາວທີ່ເລ່ົາໃນພາສາຕ່າງໆ

ສງວນລິຂະສິດ ຫ້າມຄັດລອກລງນແບບສ່ວນໃດສ່ວນນຶ່ງຂອງປຶ້ມເຫຼ້ັມນີ້ ລວມທັງຫ້າມຖ່າຍທອດ ບ່ວ່າຈະເປັນຮູບແບບຫລືວິທີການໃດໆ ດ້ວຍຂະບວນການທາງອີເລັກໂທຣນິກ ການຖ່າຍຮູບ ການຈົດບັນທຶກ ຫລືວິທີການອື່ນໆ-ຍົກເວັ້ນອ້າງອີງເຖິງສັ້ນໆ ໃນບົດວິຈານງານຂຽນ ໂດຍບ່ໄດ້ຮັບອະນຸຍາດຈາກເຈ້ົາຂອງລິຂະສິດ.

ຖ້າທ່ານຫາກຕ້ອງການແປຄູ່ມືເຫຼ້ັມນີ້ເປັນພາສາຂອງທ່ານ ໂຜດແຈ້ງໃຫ້ພວກເຮົາຊາບນຳ ພວກເຮົາຍິນດີຈະໃຫ້ອະນຸຍາດແປແລະທຸກຢ່າງຈະໄດ້ເຮັດຕາມແບບແຜນຂອງ "ໂຄງການເຣື່ອງລາວຂອງພຣະເຈົ້າ"

ໂດໂຣທີ ເອ. ມິລເລີ
ຜູ້ອຳນວຍການບໍຣິຫານ ໂຄງການ ເຣື່ອງລາວຂອງພຣະເຈົ້າ

ຂໍ້ພຣະຄັມພີອ້າງອີງທັງໝົດໃນການພິມນີ້ ແມ່ນໄດ້ມາຈາກພຣະຄັມພີສະບັບກະສັດເຈມສ໌

ທ່ານຄວນໃຊ້ຂໍ້ພຣະຄັມພີທີ່ຄູ່ມືນີ້ອ້າງເຖິງ ຖ້າຫາກພຣະຄັມພີທີ່ແປອອກມາຈາກພາສາຂອງທ່ານຕ່າງສະບັບມີຄວາມໝາຍຕ່າງກັນ ແລະປ່ຽນຄວາມໝາຍຂອງພຣະຄັມພີໄປ
ໃຫ້ສຶກສາຈາກເຣື່ອງແລະສແວງຫາພຣະເຈ້ົາເພື່ອຈະຕັດສິນໃຈໄດ້ວ່າ ຈະເລ່ົາເຣື່ອງຢ່າງໃດ.

ISBN 978-0-9855206-6-3

Contents

ສາຣະບານ

ຄຳນຳ: ອັຟຣິກາ 8
ຄຳນຳ: ສະຫະຣັດອະເມຣິກາ 9
ບົດທີ 1 ຄວາມຈຳເປັນທີ່ຕ້ອງໃຊ້ວິທີເລົ່າປາກເປົ່າ 11
ບົດທີ 2 ຄຳຖາມແລະເຣື່ອງລາວ ແບບຢ່າງຈາກພຣະຄັມພີ 17
ບົດທີ 3 ການເລົ່າເຣື່ອງເຈາະໃຈ - ບົດສລຸບໃນນຶ່ງໜ້າ 23
ບົດທີ 4 ວິທີຕຽມເລົ່າເຣື່ອງ ການເລົ່າເຣື່ອງເຈາະໃຈ 25
ຄວາມສາມາດທີ 1 ວິທີເລືອກ ຮຽນຮູ້ແລະເລົ່າເຣື່ອງໃຫ້ໄດ້ດີ 25
ຄວາມສາມາດທີ 2 ວິທີຄົ້ນຫາຂຸມຊັບຈາກເຣື່ອງ 36
ວິທີຄົ້ນຫາຂຸມຊັບທີ່ເອີ້ນວ່າ "ການສັງເກດຝ່າຍວິນຍານ" 37
ວິທີຄົ້ນຫາຂຸມຊັບທີ່ເອີ້ນວ່າ "ການນຳໃຊ້ຝ່າຍວິນຍານ" 42
ຄວາມສາມາດທີ 3 ວິທີຕັ້ງຄຳຖາມ 47
ວິທີສ້າງຄຳນຳສຳລັບເຣື່ອງ 50
ບົດທີ 5 ຝຶກຄວາມສາມາດໃນການຕຽມຕົວແລະການນຳສເນີເຣື່ອງ 53
ການຕຽມ ຄົ້ນຫາຂຸມຊັບຝ່າຍວິນຍານ 53
ການນຳສເນີ ຂັ້ນທີນຶ່ງ ເລົ່າເຣື່ອງສາມເທື່ອ 55
ການນຳສເນີ ຂັ້ນທີສອງ ສົນທະນາເຣື່ອງ ການຄົ້ນຫາ(ສັງເກດ)ຂຸມຊັບຝ່າຍວິນຍານ 63
ການນຳສເນີ ຂັ້ນທີສອງ ສົນທະນາເຣື່ອງ ການນຳໃຊ້ໃນຊີວິດຝ່າຍວິນຍານ 70
ບົດທີ 6 ວິທີການນຳສົນທະນາແລກປ່ຽນຄວາມຄິດເຫັນ 75
ບົດທີ 7 ການໝູນໃຊ້ຢ່າງຖືກຕ້ອງ ການຮູ້ຈັກຊ້າໆ 85
ບົດທີ 8 ໂຮງຮຽນພຣະຄັມພີປາກເປົ່າ 91
ບົດທີ 9 ເຊີ້ນໃຊ້ປາກກາ...ຫັນມາໃຊ້ຂະບວນຄວາມຄິດ 97
ບົດທີ 10 ຜູ້ທີ່ເຮັດໜ້າທີ່ຕ່າງໆ ໃນຣະບົບການເລົ່າເຣື່ອງເຈາະໃຈ 113
ບົດທີ 11 ສະຖານທີ່, ວິທີຮຽນແລະການເຜີຍແຜ່ການເລົ່າເຣື່ອງເຈາະໃຈ 117
ພາກເພີ້ມເຕີມ ກ. ແບບຟອມລົ້ມຄືນສຳລັບຜູ້ຝຶກສອນ 123
ພາກເພີ້ມເຕີມ ຂ. ເດີນທາງຜ່ານເຣື່ອງຕົວຢ່າງ 127
ພາກເພີ້ມເຕີມ ຄ. ລາຍງານຜົນຈາກຜູ້ໃຊ້, ການເປັນທີ່ປຶກສາແລະການເຕີບໃຫຍ່ທະວີຄູນ 149
ພາກເພີ້ມເຕີມ ງ. ການຄົ້ນພົບຂອງຜູ້ນຳ 153
ເຣື່ອງລາວຂອງພຣະເຈົ້າ: ຈາກການນິຣະມິດສ້າງສູ່ນິຣັນດອນ 156
ບ່ອນຕິດຕໍ່ ກັບທາງອົງການພວກເຮົາ 157

ຄຳນຳຈາກອັຟຣິກາ

ຂ້າພະເຈົ້າໄດ້ພົບກັບ ນາງໂດໂຣທີ ມິລເລີ ໄດ້ສອງສາມປີຜ່ານມາແລ້ວໃນກອງປະຊຸມທີ່ສຳຄັນແຫ່ງນຶ່ງ ນາງໄດ້ແນະນຳວິທີການເລົ່າເຣື່ອງຂອງພຣະເຈົ້າໃຫ້ແກ່ຂ້າພະເຈົ້າແລະພັຣຍາ ໂດຍບອກວ່າເປັນວິທີທີ່ດີໃນການເຂົ້າເຖິງຄົນອື່ນ ແມ່ນແຕ່ຢູ່ໃນເຂດທີ່ຫ້າມຖືພຣະຄັມພີ ພວກເຮົາໄດ້ຝຶກເລົ່າເຣື່ອງມາຫາແລະມາຣີອານຳກັນ ຂ້າພະເຈົ້າປລາດໃຈຫລາຍທີ່ໄດ້ພົບຊຸມຊັບຝ່າຍວິນຍານຢ່າງຫລວງຫລາຍໃນເຣື່ອງນີ້.

ຕໍ່ມາ ຂ້າພະເຈົ້າສົນໃຈໃນຄວາມຄິດນີ້ ຈຶ່ງໄດ້ແນະນຳໃຫ້ເພື່ອນຜູ້ຮັບໃຊ້ໃນ ໄນຈີເຣັຽ ຊຶ່ງເຮັດງານໃນຄັລວາຣີ ມິນິສຕຣີ (CAPRO) ຊຶ່ງໄດ້ມີການຕອບຮັບຢ່າງຫລວງຫລາຍ CAPRO ເປັນງານຮັບໃຊ້ພື້ນເມືອງເພື່ອສ້າງຄຣິສຕະຈັກໃນກຸ່ມຄົນທີ່ຍັງບໍ່ຮູ້ຈັກພຣະເຈົ້າໃນອັຟຣິກາ 30 ປະເທດ. ພວກເຮົາມີງານສ້າງຄຣິສຕະຈັກຖ້າມກາງ 65 UPGs ແລະ MUPGs.

ພວກເຮົາພົບວ່າ ຈາກຄົນລຸ້ນນຶ່ງໄປສູ່ອີກລຸ້ນນຶ່ງ ພຣະເຈົ້າຊົງເປີດເຜີຍພຣະອົງເອງດ້ວຍວິທີຕ່າງໆ ການເປີດເຜີຍນັ້ນຖືກເຊື່ອງໄວ້ໃນເຣື່ອງລາວໃນພຣະຄັມພີ ການປາກົດພຣະອົງໃນພຣະຄຣິດແລະອົງພຣະວິນຍານ ເປັນຕົວຢ່າງທີ່ຊັດແຈ້ງເຖິງຄວາມຮັກທີ່ມີຕໍ່ມະນຸດຊາດ ແລະຈະຊົງຊ່ອຍໃຫ້ມະນຸດຄົ້ນຫາຊຸມຊັບຈົນພົບ.

ການເລົ່າເຣື່ອງເຈາະໃຈເປັນວິທີການອັນມີຣະບົບໃນການຄົ້ນຄວ້າພຣະຄັມພີ ທັງຄົນທີ່ອ່ານໄດ້ແລະອ່ານບໍ່ໄດ້ກໍມີໂອກາດທີ່ຈະຄົ້ນພຣະຄຳແລະຮູ້ຈັກສັງເກດໄປຕາມເຣື່ອງຢ່າງລະອຽດ.

ວັທນະທັມອັຟຣິກັນໃນການເລົ່າເຣື່ອງສືບຕໍ່ກັນມາ ເປັນຫົນທາງອັນຍອດຢ້ຽມທີ່ຈະຕອກຍ້ຳເຖິງຄຸນຄ່າອັນນີ້ ແລະສິ່ງຕໍ່ຄຳສອນທີ່ເຮັດໃຫ້ຊີວິດປ່ຽນແປງ ແລະຜົນທີ່ໄດ້ກໍຄື ເປັນການສ້າງພື້ນຖານທີ່ຄຸ້ນເຄັຍ ໂດຍສະເພາະແມ່ນໃນຊົນນະບົດທີ່ຄົນສ່ວນໃຫຍ່ອາສັຍຢູ່ ແລະສນຸກເພີດເພີນກັບປະເພນີການເລົ່າປາກເປົ່າ.

ນອກຈາກນີ້ ການເລົ່າເຣື່ອງເຈາະໃຈຍັງຊ່ອຍໃຫ້ຜູ້ຟັງໄດ້ເຂົ້າໄປເຖິງຂໍ້ສລຸບອັນມີອິສຣະພາບ ເຮັດໃຫ້ເຂົາເຈົ້າເປັນເຈົ້າຂອງຕັດສິນໃຈໃນຈຸດທີ່ຄົ້ນພົບຊຸມຊັບເປັນການສ່ວນຕົວ ສິ່ງທີ່ຊ່ອຍໃຫ້ຄວາມເປັນອິສຣະເກີດຂຶ້ນຫລາຍທີ່ສຸດນັ້ນແມ່ນ ວິທີການທີ່ຜູ້ເລົ່າໃຊ້ແລະຕັ້ງຄຳຖາມ ຊຶ່ງໄດ້ເພີ້ມຄວາມສາມາດໃນການສື່ສານຄວາມຈິງໃນພຣະຄັມພີຢ່າງຖືກຕ້ອງທີ່ສຸດ ບໍ່ວ່າຈະເປັນການສື່ສານໃນວັທນະທັມໃດໆ ກໍຕາມ.

ການມີຂໍ້ສັງເກດຝ່າຍວິນຍານແລະການນຳໃຊ້ນີ້ ໄດ້ຊ່ອຍກະຕຸ້ນເຮັດໃຫ້ຜູ້ຕາມຫາເຂົ້າໃຈແລະຈື່ຈຳຄວາມຈິງທີ່ຝັງເລິກຢູ່ໃນເຣື່ອງລາວ ຊຶ່ງເປັນເນື້ອຫາສ່ວນໃຫຍ່ຂອງພຣະຄັມພີ ນອກຈາກນັ້ນ ການເລົ່າເຣື່ອງເຈາະໃຈຍັງໃຫ້ຄຳເຕືອນຫລາຍຢ່າງເມື່ອຜູ້ເລົ່າອອກທ່າທາງໃນການເລົ່າ ມີການເນັ້ນວ່າຕ້ອງຄົ້ນຄວ້າຫາແລະຈຸດຕ່າງໆ ທີ່ເຂົາເຈົ້າໄດ້ຍິນ.

ນອກເໜືອໄປຈາກຄຳຊົມເຊີຍຈາກຜູ້ທີ່ໄດ້ຮັບປໂຍດຈາກການຝຶກອົບຮົມເລົ່າເຣື່ອງເຈາະໃຈທົ່ວໂລກ ປຶ້ມຄູ່ມືນີ້ຍັງໄດ້ບອກເຄັດລັບຜ່ານຄຳຖາມເພື່ອຊ່ອຍໃນການຄົ້ນຫາເຣື່ອງລາວໃນພຣະຄັມພີເປັນສ່ວນຕົວ.

ຂໍແນະນຳໃຫ້ທຸກຄົນທີ່ໄດ້ຮັບການຊົງຮຽກເອີ້ນໃຫ້ສ້າງສາວົກໃນທຸກປະເທດ ໄດ້ເຂົ້າຝຶກອົບຮົມການເລົ່າເຣື່ອງເຈາະໃຈ ໂດຍສະເພາະແມ່ນຄົນທີ່ຢູ່ໃນຊຸມຊົນທີ່ຮຽນຮູ້ດ້ວຍປາກເປົ່າ ແລະຄົນທີ່ຢາກຮື້ຟື້ນຄວາມສັມພັນກັບພຣະເຈົ້າເປັນການສ່ວນຕົວ.

Amos Aderonmu - International Director, Calvary Ministry (CAPRO)

ຄຳນຳ: ສະຫະຣັດອະເມຣິກາ

ພວກເຮົາຮູ້ຈັກແລະເປັນເພື່ອນກັບ ໂດໂຣທີ ແລະ ທອມ ມີລເລີເປັນເວລາດົນກວ່າ 40 ປີ ການເກີດແລະການເຕີບໃຫຍ່ຢ່າງໄວຂອງໜັງ(ຮູບເງົາ)ເຣື່ອງແຣກແມ່ນ "ເຣື່ອງຂອງພຣະເຈົ້າ" ຮວມທັງການຝຶກອົບຮົມ "ເລົ່າເຣື່ອງເຈາະໃຈ" ນັ້ນ ເຫັນວ່າເປັນສິ່ງທີ່ໂດດເດ່ນຫລາຍສຳລັບຂ້າພະເຈົ້າ.

ພວກເຮົາມີຄວາມຊື່ນຊົມໃນການຮັບໃຊ້ນີ້ ໄດ້ປ່ຽນແປງວິທີທີ່ຄຣິສຕຽນຈະເປີດເຜີຍອົງພຣະເຢຊູຄຣິດຕໍ່ຄົນທັງຫລາຍ ໄດ້ສ້າງສາວົກແລະໄດ້ຮັບການສ້າງດ້ວຍພຣະຄຳຂອງພຣະເຈົ້າໂດຍກົງ.

ພວກເຮົາໄດ້ຮັບການໜູນໃຈຢ່າງຫລວງຫລາຍ ເມື່ອເຫັນວິທີການນີ້ໄດ້ໃຊ້ຢ່າງແພ່ຫລາຍຕາມໝູ່ບ້ານ ແລະຫລາຍປະເທດທົ່ວໂລກ ໄດ້ນຳມາຊຶ່ງແຮງບັນດົນໃຈໃໝ່ແລະຄວາມຮູ້ສຶກຕື່ນເຕັ້ນໃນພຣະຄຳຂອງພຣະເຈົ້າ ແບບຢ່າງການເລົ່ານັ້ນໄດ້ດຶ່ງດູດໃຈທຸກຄົນ ໃນທຸກແຫ່ງ.

ວິທີການເລົ່າເຣື່ອງເຈາະໃຈທີ່ເນັ້ນການສັງເກດ ໄດ້ຊ່ອຍສ້າງຄວາມເຂົ້າໃຈອັນລ□້າເລີກ ແລະຄ□າສອນຈາກຜູ້ ຟັງເອງເຮັດໃຫ້ພວກເຮົາໄດ້ຮັບປະສົບການສັມຜັດພຣະຄັມພີຫລາຍຂຶ້ນ ເລີກເຊິ່ງກວ່າການຮຽນພຣະຄັມພີແບບທົ່ວ ໄປ ສິ່ງທີ່ດີສຸດຍອດທີ່ສຸດຂອງເທັກນິກການເລົ່າເຣື່ອງເຈາະໃຈແມ່ນການເຂົ້າເຖິງຄົນທັງຫລາຍ.

ແທ້ຈິງແລ້ວ ການທີ່ຄົນຈ□ານວນຫລາຍທີ່ມີພູມຫລັງຫລາກຫລາຍແຕກຕ່າງກັນ ໄດ້ມາພົບຂ່າວສານອັນແທ້ຈິງຂອງຂ່າວປະເສີດ ບໍ່ວ່າຈະເປັນຄົນທີ່ມີອາຍຸໃນວັຍໃດ ຊາດໃດ ສາສນາໃດ ຣະດັບການສຶກສາແບບໃດ ເຂົາເຈົ້າເຫລ່ານີ້ເຮັດໃຫ້ພວກເຮົາເຫັນວ່າ ການເລົ່າເຣື່ອງເຈາະໃຈນັ້ນມີເອກລັກສະເພາະຕົວແລະມີປະສິດພິພາບຢ່າງສູງ.

ວິທີການນີ້ຈັບໃຈພວກເຮົາຫລາຍ ເພາະມັນເຂົ້າເຖິງຄົນສ່ວນໃຫຍ່ທາງນອກທີ່ຖືກເບິ່ງຂ້າມ ເຂົາເຈົ້າບໍ່ມີຖານະ ບໍ່ມີຄວາມສາມາດ ບໍ່ມີອິດທິພົນໃດໆ ຄວາມສາມາດຂອງການເລົ່າເຣື່ອງເຈາະໃຈທີ່ຈະເຂົ້າໄປສັມຜັດຈິນຍານຈິດຂອງຜູ້ໃດກໍຕາມ ບໍ່ວ່າຈະເປັນຄົນມີການສຶກສາ ຫລືອ່ານບໍ່ໄດ້ ຫລືມີຖານະຍາກຈົນ ຫລືຄົນທີ່ຂາດສິດທິ ຫລືຄົນທີ່ດ້ອຍໂອກາດ ຈາກການພົບເຫັນຂອງພວກເຮົາມາຕລອດປີທີ່ພວກເຮົາຮັບໃຊ້ພຣະເຈົ້າຮອບໂລກ ພວກເຮົາເຫັນວ່າການເລົ່າເຣື່ອງເຈາະໃຈເປັນເຄື່ອງມືທີ່ດີແລະມີປະສິດທິພາບທີ່ສຸດສຳລັບການຂຍາຍອານາຈັກຂອງພຣະເຈົ້າ.

Don and Sondra Tipton -Founders & Directors, Friend Ships Unlimited

ຄວາມຈິງອັນລ້ຳເລີກຂອງພຣະເຈົ້ຳ
ຖືກເກັບຮັກສຳໄວ້ໃນເຣື່ອງທີ່ລຽບງ່ຳຍໃນພຣະຄັມພີ

ພຣະຄຳຂອງພຣະເຈົ້ຳໄດ້ເຕືອນພວກເຮົຳວ່ຳ ຄວຳມຄິດຂອງເຮົຳອຳດຈະຖືກທັນເຫໄປຈຳກ "ຄວຳມລຽບງ່ຳຍທີ່ມີ ຢູ່ໃນພຣະຄຣິດ" 2 ໂກຣິນໂທ 11:3 (ຄວຳມສັດຊື່ແລະຄວຳມບໍຣິສຸດຂອງພຣະຄຣິດ)

ປະກຳດ ກຳນອຸປຖັມ

ພຣະເຈົ້ຳໄດ້ຊົງເປີດເຜີຍພຣະອົງເອງແລະພຣະປະສົງຂອງພຣະອົງໄວ້ໃນພຣະຄັມພີ ພວກເຮົຳຂໍຂອບພຣະຄຸນ ສຳລັບພຣະຄຳຂອງພຣະອົງທີ່ພຣະເຈົ້ຳຊົງວຳງໃຫ້ເຮົຳຮັບໃຊ້ພຣະອົງ ແລະນຳພຣະຄຳອອກໄປ. ພວກເຮົຳຂໍຂອບ ພຣະຄຸນສຳລັບສິດພິເສດນີ້ ແລະຂໍຖວຳຍພຣະສະງ່ຳຣຳສີແດ່ພຣະອົງຈຳກກຳນຮັບໃຊ້ທີ່ເກີດຜົນທຸກແຫ່ງ.

ພຣະເຈົ້ຳຊົງສິ່ງ "ໂຄງກຳນເຣື່ອງຂອງພຣະເຈົ້ຳ" ໄປຍັງຜູ້ຮັບໃຊ້ອຳສຳສມັກຈຳນວນຫລຳຍພັນຄົນ ພວກເຮົຳໄດ້ສ້ຳງ ເຣື່ອງຂອງພຣະເຈົ້ຳອອກມຳໄດ້ຫລຳຍຮ້ອຍພຳສຳ ພວກເຮົຳຂໍຂອບພຣະຄຸນພຣະເຈົ້ຳສຳລັບຜູ້ຜະລິດເພງ ຜູ້ແປ ຜູ້ບັລຍຳຍ ຜູ້ອັດສຽງ ຜູ້ຖວຳຍເງິນ ແລະທຸກຄົນທີ່ໃຊ້ເຣື່ອງຂອງພຣະເຈົ້ຳ ຊຶ່ງມຳຈຳກກຸ່ມມິສຊັນນຳຣີ ຜູ້ຮັບໃຊ້ໃນ ທ້ອງຖິ່ນ ແລະຜູ້ເຊື່ອທີ່ຮັກພຣະເຢຊູຄຣິດ,

ສຳລັບຜູ້ເຮັດງຳນໃນສຳນັກງຳນແລະຜູ້ຈັດງຳນໃນຫລຳຍໆ ປะเทด ຊຶ່ງຮັບໃຊ້ຢ່ຳງເອົຳຈິງເອົຳຈັງ ຊຶ່ງບໍ່ມີທ່ຳໃດຄົນ ທີ່ສັງເກດເຫັນກຳນເຮັດງຳນຂອງຄົນເຫລ່ຳນີ້ນອກຈຳກພຣະເຈົ້ຳ. ພວກເຮົຳຂໍສັຣເສີນພຣະອົງ ພວກເຮົຳຂໍຮ່ວມກັບ ທຸກຄົນທີ່ຮ່ວມງຳນ ຄວຳມຄິດ ແລະເຣື່ອງກ່ຽວກັບເຂົຳເຈົ້ຳທີ່ຢູ່ໃນປຶ້ມເຫລັ້ມນີ້ ສຳລັບກຸ່ມຜູ້ອຳນວຍກຳນແລະຜູ້ຝຶກ ອົບຮົມເລ່ຳເຣື່ອງເຈຳະໃຈ ພວກເຮົຳຂໍຂອບພຣະຄຸນພຣະເຈົ້ຳດ້ວຍຄວຳມຢ້ຳນຢຳ ພວກເຮົຳສັຣເສີນພຣະເຈົ້ຳສຳ ລັບກອງທັບທີ່ຍິ່ງໃຫຍ່ຈຳນວນຫລຳຍລ້ຳນຄົນທີ່ເລ່ຳເຣື່ອງຂອງພຣະເຈົ້ຳຢ່ຳງກ້ຳຫຳນອອກໄປທົ່ວໂລກ.

ໃນປີ 1994 ທ່ຳນນອມ ແມັກແກຣີ ໄດ້ແຕ້ມຮູບຈຳກພຣະຄັມພີ 10 ຮູບ ເພິ່ນໄດ້ແຕ້ມຮູບພຣະເຢຊູໃນຖຳນະທີ່ຊົງ ເປັນ "ເຮົຳເປັນຊຶ່ງເຮົຳເປັນ ໂດຍຫວັງວ່ຳແມ່ຂອງເພິ່ນເອງຈະວຳງໃຈໃນພຣະເຢຊູວ່ຳພຣະອົງຊົງເປັນພຣະເຈົ້ຳແລະ ເປັນພຣະຜູ້ໂຜດໃຫ້ພົ້ນຂອງແມ່ ທ່ຳນນອມ ໄດ້ເສັງຊີວິດໃນປີ 2012 ໄປຢູ່ກັບພຣະເຈົ້ຳແລະຢູ່ກັບແມ່ຂອງເພິ່ນ ງຳນແຕ້ມຮູບຂອງເພິ່ນກຳຍເປັນ "ເຣື່ອງຂອງພຣະເຈົ້ຳ" ຊຶ່ງກະຕຸ້ນໃຫ້ເກີດກຳນເລ່ຳເຣື່ອງເຈຳະໃຈຂຶ້ນມຳ ພວກເຮົຳ ຮັກທ່ຳນນອມ ແລະຫົວໃຈຮັບໃຊ້ຂອງເພິ່ນ ພວກເຮົຳຂໍສັຣເສີນພຣະເຈົ້ຳທີ່ຊຳຍຄົນນຶ່ງຊຶ່ງຮັກພຣະເຢຊູ ແລະປຳຖນຳຍຳກເຫັນແມ່ຂອງເພິ່ນໄດ້ຮັບຄວຳມພົ້ນ ໄດ້ກຳຍເປັນກຳນປะกาดอีกวิธีนึ่ง.

ທອມແລະໂດໂຣທີ ມິລເລີ
ໂຄງກຳນ "ເຣື່ອງລຳວຂອງພຣະເຈົ້ຳ"

ບົດທີ 1
ຄວາມຈຳເປັນທີ່ຕ້ອງໃຊ້ວິທີເລົ່າປາກເປົ່າ

ໃນຖານະທີ່ເປັນຄຣູທັງໃນກຸ່ມຄຣິສຕຽນແລະກຸ່ມຄົນທົ່ວໄປໃນໂລກຕາເວັນຕົກ ຂ້າພະເຈົ້າມີຄວາມປາຖນາທີ່ຈະນຳສເນີພຣະຄັມພີຕາມແບບທີ່ເຂົ້າໃຈໄດ້ງ່າຍ ແລະເຮັດໃຫ້ຊີວິດປ່ຽນແປງ ແລະເຫັນວ່າການນຳສເນີເຣື່ອງແບບການລຽງລຳດັບເຫດການແລະການແລກປ່ຽນຄວາມຄິດເຫັນຈາກເຣື່ອງນັ້ນ ເຮັດໃຫ້ເກີດຄວາມເຂົ້າໃຈແລະມີການປ່ຽນແປງຊີວິດຕາມທີ່ຫວັງໄວ້ຢ່າງແທ້ຈິງ ໂດຍສະເພາະຢ່າງຍິ່ງເມື່ອມີການໃຊ້ຄຳຖາມນຳຕາມເຣື່ອງ ແລະຍັງເປີດໂອກາດໃຫ້ຜູ້ຟັງໄດ້ຄົ້ນພົບສິ່ງຕ່າງໆ ໃນເຣື່ອງດ້ວຍຕົນເອງອີກ ຜູ້ຟັງກໍຈະເຂົ້າໃຈແລະສາມາດນຳພຣະຄັມພີທີ່ຮຽນຮູ້ນັ້ນມາໝູນໃຊ້ໃນຊີວິດໄດ້ ພຣະເຈົ້າຊົງເປີດປະຕູໃຫ້ຂ້າພະເຈົ້າຊຽນບົດພາກໜັງ(ຮູບເງົາ) *"ເຣື່ອງລາວຂອງພຣະເຈົ້າຈາກການບັຣະມົດສ້າງສູ່ນິຣັນ"* ໂດຍໜັງເຣື່ອງນີ້ໄດ້ນຳສເນີພຣະຄັມພີໂດຍລຳດັບເຫດການໃຫ້ຜູ້ທີ່ເບິ່ງທົ່ວໂລກເຮົາໄດ້ເຫັນຜົນສະທ້ອນອັນດີຂອງໜັງທີ່ເລົ່າເຣື່ອງຍາວ 80 ນາທີຢ່າງຊັດແຈ້ງເມື່ອມັນອອກໄປສູ່ສາຍຕາຂອງຜູ້ເບິ່ງຫລາຍຮ້ອຍພາສາ ໜັງເຣື່ອງນັ້ນ ພ້ອມກັບສຽງພາກທີ່ເຮັດໃຫ້ເຮົາເຂົ້າໃຈເຖິງຄວາມສຳຄັນຂອງການເລົ່າເຣື່ອງ, ໃນການປະກາດແລະການຝຶກຝົນຜູ້ຕິດຕາມອົງພຣະເຢຊູຄຣິດ.

ຕໍ່ມາພວກເຮົາໄດ້ຕິດຕໍ່ກັບຜູ້ນຳມິສຊັນທີ່ໄດ້ເລີ້ມເນັ້ນຄວາມສຳຄັນຂອງການເນັ້ນຢູ່ກັບເຣື່ອງເລົ່າ ພວກເຂົາກຳລັງເຂົ້າໃຈວ່າຈຳເປັນທີ່ຈະຕ້ອງຂຍາຍວິທີການໃນການນຳສເນີພຣະຄຳກັບບັນດາຜູ້ທີ່ບໍ່ອາດສາມາດຮຽນຮູ້ດ້ວຍການອ່ານ ຈາກຄວາມເຂົ້າໃຈທີ່ພວກເຮົາໄດ້ຈາກຜູ້ນຳທ່ານອື່ນໆ ເຫລົ່ານີ້ໄດ້ຊ່ວຍສນັບສນູນໃຫ້ພວກເຮົານຳມາປະກອບໃຊ້ໃນການສອນພຣະຄຳຜ່ານການສົນທະນາແລກປ່ຽນຄວາມຄິດເຫັນໂດຍແຕ່ລະຄັ້ງຈະເນັ້ນຢູ່ໃນເຣື່ອງໆ ດຽວເທົ່ານັ້ນ ການແກ້ໄຂດັ່ງກ່າວກາຍມາເປັນວິທີການ "ເລົ່າເຣື່ອງເຈາະໃຈ"
ການເລົ່າເຣື່ອງເຈາະໃຈໃຊ້ການເລົ່າເຣື່ອງຢູ່ໃນ ເຣື່ອງໆ ດຽວແລະຄ່ອຍໆ ກ້າວເລິກລົງໄປໃນພຣະຄຳ
ໃຊ້ຄຳຖາມທີ່ມີເປົ້າໝາຍເພື່ອໃຊ້ສົນທະນາແລກປ່ຽນຄວາມຄິດ
ແລ້ວຄົນທີ່ມີສ່ວນຮ່ວມກໍຈະຄົ້ນພົບຄວາມຈິງດ້ວຍຕົນເອງ ພວກເຮົາຈຶ່ງໄດ້ຮັບຮູ້ຫລາຍກວ່າຄວາມເຂົ້າໃຈແລະການນຳໃຊ້ນັ້ນກໍແມ່ນພວກເຮົາໄດ້ເຫັນຄວາມຈື່ຈຳຈາກຜູ້ຟັງ!

ຄົນທີ່ຂີ່ກ້ວຍເຂົ້າໄປໃນເມືອງເທື່ອນຶ່ງແລ້ວ
ໃນເທື່ອຕໍ່ໄປລາວກໍຈະຮູ້ທາງເຂົ້າໄປໃນເມືອງນັ້ນອີກ

ແລະນອກເໜືອຈາກຜົນຮັບທີ່ດີໆເຫລົ່ານັ້ນ ພວກເຮົາເຫັນວ່າເຂົາເຈົ້າມີຄວາມສາມາດແລະຄວາມກ້າຫານທີ່ຈະແບ່ງປັນກັບຄົນອື່ນ

"ການເລົ່າເຣື່ອງເຈາະໃຈ" ຈະສນັບສນູນໃຫ້ຄົນທີ່ນຳສເນີຂໍ້ມູນພຣະຄັມພີໄດ້ໃຊ້ປໂຍດຈາກເຣື່ອງໃນແບບທີ່ພຣະເຈົ້າປະທານໃຫ້ແກ່ລາວ ເມື່ອພວກເຮົາກ່າວຄຳວ່າ "ເຣື່ອງ" ພວກເຮົາລວມໄປເຖິງເນື້ອຄວາມຫລາຍໆ ຕອນໃນພຣະຄັມພີ ລວມໄປເຖິງເນື້ອຄວາມທີ່ເບິ່ງເທື່ອທຳອິດແລ້ວເໝືອນກັບວ່າບໍ່ແມ່ນເຣື່ອງລາວ ປຶ້ມຄູ່ມືເຫລັ້ມນີ້ຈະນຳສເນີຂໍ້ມູນທີ່ຈະຊ່ວຍໃຫ້ການເລົ່າເຣື່ອງເປັນໜ້າສົນໃຈຢ່າງຖືກຕ້ອງ ແລະບອກວິທີສອນຄວາມຈິງໂດຍໃຊ້ການສົນທະນາແລກປ່ຽນຄວາມຄິດ ປຶ້ມຄູ່ມືເຫຼັ້ມນີ້ແລະການສື່ສານອື່ນໆ ລວມເຖິງການຝຶກອົບຮົມແບບປະຕິບັດຕົວຈິງຈະຊ່ວຍ

ໃຫ້ທ່ານໄດ້ພັທນາຄວາມສາມາດດັ່ງກ່າວ.

ໃຜທີ່ຕ້ອງຮຽນຮູ້ພຣະຄຳດ້ວຍວິທີນີ້?

ໃນການອົບຮົມແບບປະຕິບັດຕົວຈິງຂອງການເລົ່າເຣື່ອງເຈາະໃຈໃນສະຫະຣັດອະເມຣິກາ ຜູ້ເຂົ້າອົບຮົມທ່ານນຶ່ງອະທິບາຍເຖິງເຫດຜົນທີ່ເຂົ້າມາຮ່ວມການອົບຮົມ.

ປີທຳອິດທີ່ຂ້າພະເຈົ້າຮັບໃຊ້ໃນຖານະເປັນສິດຍາພິບານ ຂ້າພະເຈົ້າເຂົ້າໃຈດີວ່າໄດ້ມີບັນຫາໃຫຍ່ ຂ້າພະເຈົ້າໄດ້ຮຽນພຣະຄັມພີຈົບຈາກມະຫາວິທຍາລັຍຊາເລສຕັນໃຕ້ ແລະຍັງຈົບກຽດນິຍົມປະຣິນຍາໂທຈາກມະຫາວິທຍາລັຍສາສນາສາດກໍດອນຄອນເວລ ຂ້າພະເຈົ້າພ້ອມທີ່ຈະສອນແລະຝຶກອົບຮົມຄົນອື່ນໆ ແລະຕັ້ງໃຈທີ່ຈະບັນລຸເປົ້າໝາຍຂອງພຣະມະຫາບັນຊາໃນງານທີ່ຂ້າພະເຈົ້າຮັບຜິດຊອບ ເມື່ອເບິ່ງຈາກທັມມາດແລ້ວທຸກຢ່າງເປັນໄປດ້ວຍດີ ຄົນທີ່ມາໂບດຕ່າງກໍໃຫ້ຄວາມໝັ້ນໃຈກັບຂ້າພະເຈົ້າ. ທຸກໆ ຄັ້ງທີ່ເລີກໂບດຈະໄດ້ຍິນວ່າ "ອາຈານເທດໄດ້ດີຫລາຍ"

ສອງສາມເດືອນຕໍ່ມາ ກໍມີຜູ້ເຊື່ອໃໝ່ເຕົ້າໂຮມກັນເພື່ອຮຽນພຣະຄຳສຳລັບຜູ້ເຊື່ອໃໝ່ໂດຍສະເພາະ ເຂົາເຈົ້າເຊື່ອໃນພຣະເຈົ້າແລ້ວ ແຕ່ກໍຕ້ອງຮຽນຫລາຍຂຶ້ນເພື່ອຈະໄດ້ເຕີບໃຫຍ່ ພວກເຮົາຈຶ່ງໃຫ້ເຂົາເຈົ້າອ່ານບົດຮຽນຈົນສຳເຣັດຊຶ່ງໄດ້ພິມໂດຍຄະນະຂອງພວກເຮົາເອງ ຂ້າພະເຈົ້າໄດ້ບອກເຂົາເຈົ້າວ່າ "ກັບເມືອເຮືອນແລ້ວຈົ່ງອ່ານຕາມທີ່ບອກນີ້ເນີ ແລ້ວພວກເຮົາຈະໄດ້ມາໂອ້ລົມກັນໃນເທື່ອຕໍ່ໄປ"

ອາທິດແລ້ວອາທິດເລົ່າ ຂ້າພະເຈົ້າຖາມເຂົາເຈົ້າສເມີວ່າ "ພວກທ່ານໄດ້ຮຽນຮູ້ຫຍັງແດ່ຕາມທີ່ໄດ້ອ່ານມານັ້ນ, ມີໃຜຢາກຖາມຫຍັງແດ່, ພວກທ່ານເຫັນສິ່ງໃດທີ່ໜ້າສົນໃຈຫລືບໍ່?" ແລະທຸກເທື່ອຄຳຕອບທີ່ໄດ້ຮັບຈາກເຂົາເຈົ້າກໍຄື "ຄວາມມິດງຽບ"

ຈຶ່ງເຫັນວ່າເຂົາເຈົ້າບໍ່ໄດ້ອ່ານບົດຮຽນ ໃນທີ່ສຸດໃນມື້ນຶ່ງຂ້າພະເຈົ້າຂໍໃຫ້ຄົນນຶ່ງເລີ້ມຕົ້ນໜ້ອງຮຽນດ້ວຍການອ່ານບົດຮຽນນັ້ນດັງໆ ຫລັງຈາກທີ່ລໍຄອຍຢູ່ຄາວນຶ່ງກໍມີຄົນນຶ່ງອາສາອ່ານດັງໆ ລາວອ່ານຊ້າ ດ້ວຍຄວາມລຳບາກຫລາຍ ແລະມີການພິມຜິດຫລາຍຄຳ ໃນຕອນນັ້ນເອງຂ້າພະເຈົ້າເລີ້ມເຂົ້າໃຈ...ທີ່ເຂົາເຈົ້າບໍ່ໄດ້ອ່ານບົດຮຽນກໍເພາະວ່າ ເຂົາເຈົ້າອ່ານໜັງສືບໍ່ຄ່ອຍໄດ້ນັ້ນເອງ

ເມື່ອຂ້າພະເຈົ້າເຫັນບັນຫານີ້ຢ່າງແທ້ຈິງຈຶ່ງພົບວ່າ ນຶ່ງໃນຈຳນວນສາມຄົນຂອງຜູ້ໃຫຍ່ທີ່ອາສັຍຢູ່ໃກ້ກັບໂບດນັ້ນບໍ່ໄດ້ຮຽນຈົບຊັ້ນມັທຍົມເລີຍ ໃນຖານະທີ່ເປັນສິດຍາພິບານວັຍໜຸ່ມຈຶ່ງພົບກັບຄຳຖາມທີ່ລຳບາກໃຈ ເຮົາຈະປະກາດແລະສ້າງສາວົກຈາກຄົນເຫລ່ານີ້ທີ່ບໍ່ອ່ານໜັງສືໄດ້ແນວໃດ?

ເປັນໜ້າເສັງດາຍທີ່ຂ້າພະເຈົ້າບໍ່ໄດ້ຖືກຕຽມມາເພື່ອຕອບຄຳຖາມນີ້ ເຖິງແມ່ນຈະໃຊ້ເວລາເຖິງ 7 ປີໃນການຕຽມຕົວເພື່ອຮັບໃຊ້ຈາກມະຫາວິທຍາລັຍສອງແຫ່ງ ຂ້າພະເຈົ້າບໍ່ເຄີຍໄດ້ຍິນເຣື່ອງຂອງຜູ້ຮຽນແບບປາກເປົ່າເລີຍ ຂ້າພະເຈົ້າຈຶ່ງຄິດວ່າບັນຫາການອ່ານໜັງສືບໍ່ໄດ້ຈະເປັນການທ້າທາຍໃນການຮັບໃຊ້ຂອງຂ້າພະເຈົ້າທັງໆ ທີ່ເປັນສິດຍາພິບານຂອງເຂົາເຈົ້າ ຂ້າພະເຈົ້າກໍບໍ່ມີເຄື່ອງມືທີ່ຈະຮັບໃຊ້ເພື່ອຊ່ວຍຄົນເຫລ່ານັ້ນ ດັ່ງນັ້ນຂ້າພະເຈົ້າຈຶ່ງເຂົ້າມາຝຶກອົບຮົມ ສິດຍາພິບານທ່ານນີ້ແລະຄົນອື່ນໆ ທີ່ເຂົ້າມາຝຶກອົບຮົມແບບປະຕິບັດຕົວຈິງໃນການເລົ່າເຣື່ອງເຈາະໃຈຈະມີ

ສາມສິ່ງທີ່ເໝືອນກັນຄື ເຂົາເຈົ້າຈະເຫັນຄຸນຄ່າຂອງພຣະຄຳ, ຕ້ອງການຈະເຂົ້າໃຈ ຈື່ຈຳ ແລະນຳພຣະຄຳນັ້ນໄປໃຊ້ໃນຊີວິດ ແລະເຂົາເຈົ້າຕ້ອງການທີ່ຈະປູກຝັງລ້ຽງດູຄວາມຮູ້ສຶກເຫລົ່ານັ້ນໃຫ້ເຂົ້າໄປໃນຊີວິດຂອງຄົນອື່ນນຳ.

ຈຳເປັນພຽງໃດທີ່ຕ້ອງໃຊ້ການສື່ສານແບບປາກເປົ່າ?

ການນຳສເນີເຣື່ອງລາວໃນພຣະຄັມພີທັງໝົດນັ້ນມີຄວາມສຳຄັນຫລາຍຂຶ້ນ ເມື່ອເຮົາເຂົ້າໃຈດີວ່າ ຄົນທີ່ຮຽນຮູ້ຈາກການສື່ສານດ້ວຍປາກເປົ່າໝາຍເຖິງໃຜ ແລະວິທີການທີ່ເຂົາເຈົ້າຮວບຮວມຂໍ້ມູນມີຄວາມຮູ້ສຶກຢ່າງໃດ ຄົນທີ່ອ່ານໜັງສືບໍ່ໄດ້ກໍຈະເປັນຄົນທີ່ຮຽນຈາກການຟັງຄົນອື່ນເລົ່າ ຕາມທີ່ພວກເຮົາໄດ້ສຶບຮູ້ມາ ຫລາຍປະເທດໄດ້ເພີ້ມອັດຕຣາການອ່ານໜັງສືໄດ້ໂດຍການວັດແທກຈາກປະຊາຊົນທີ່ສາມາດເຊັນຊື່ຂອງຕົນເອງໄດ້.

ຈາກການທົດສອບແລະວິຈັຍການສຶກສາເຣື່ອງຄວາມສາມາດໃນການອ່ານໄດ້ຂຽນໄດ້ແຫ່ງຊາດ ຊີ້ໃຫ້ເຫັນວ່າຄົນໃນສະຫະຣັດອະເມຣິກາຈຳນວນ 43% ບໍ່ສາມາດອ່ານ ຫລືອ່ານບໍ່ໄດ້ດີ ທີ່ຈະສາມາດເຂົ້າໃຈຄວາມໝາຍໃນແຕ່ລະວັກແຕ່ລະຕອນຂອງໜ້າເຈ້ັ້ຍໄດ້ ບໍ່ພຽງແຕ່ທ່ີນັ້ນ ອີກ 44% ຂອງປະຊາກອນໃນສະຫະຣັດອະເມຣິກາພໍໃຈທີ່ຈະແລກປ່ຽນຂໍ້ມູນຂ່າວສານດ້ວຍການຟັງແລະການໂອ້ລົມສົນທະນາ. ປະເທດອື່ນໆ ທີ່ພັດທະນາແລ້ວກໍມີສະຖິຕິທີ່ໜ້າແປກໃຈເຊັ່ນດຽວກັນ ຈຶ່ງໝາຍຄວາມວ່າໃນປະເທດທີ່ກຳລັງພັດທະນາມີປະຊາກອນປະມານ 87% ທີ່ບໍ່ສາມາດຮຽນດ້ວຍການອ່ານ ຫລືຈະເວົ້າອີກຢ່າງນຶ່ງກໍແມ່ນເຂົາເຈົ້າພໍໃຈທີ່ຈະຮຽນຮູ້ຈາກການຟັງຫລາຍກວ່າ.

ໃນປະເທດທີ່ກຳລັງພັດທະນາຊຶ່ງໂອກາດທີ່ຈະໄປໂຮງຮຽນນັ້ນມີໜ້ອຍ ອັດຕຣາການອ່ານໄດ້ຂຽນໄດ້ຈຶ່ງຕ່ຳລົງໄປອີກ ດັ່ງນັ້ນສັດສ່ວນຂອງຄົນທີ່ອ່ານບໍ່ໄດ້ຫລືພໍໃຈທີ່ຈະຮຽນຮູ້ຈາກການຟັງໃນປະເທດເຫລົ່ານັ້ນຈຶ່ງສູງຂຶ້ນໄປອີກ.

ຄົນທີ່ຮຽນຮູ້ຈາກການຟັງບ່ອາດຈະຈົດບັນທຶກສິ່ງທີ່ຕົນເອງໄດ້ຟັງ ດັ່ງນັ້ນເຂົາເຈົ້າຈຶ່ງຈື່ຈຳຂໍ້ມູນສິ່ງທີ່ໄດ້ຟັງນັ້ນມາສານຕໍ່ກັນໃຫ້ເປັນເຣື່ອງລາວ. ຂໍ້ມູນທີ່ສິ່ງຕໍ່ໃຫ້ແກ່ຜູ້ຮຽນຮູ້ຈາກການຟັງຊຶ່ງເປັນແນວຄິດ, ຂໍ້ຄິດ, ຫລືຮູບແບບທີ່ເປັນຫົວຂໍ້ນຶ່ງ, ສອງແລະສາມນັ້ນ ເຫັນວ່າບໍ່ມີເຣື່ອງລາວແລະວິທີທີ່ຈະຊ່ວຍໃຫ້ເຂົາເຈົ້າຈື່ຈຳໄດ້.

ຕໍ່ໄປນີ້ເຮົາຈະເຫັນວ່າ ພຣະເຈົ້າຊົງເນັ້ນເຣື່ອງລາວຢ່າງໃດຈາກວິທີການທີ່ພຣະອົງອອກແບບພຣະຄັມພີ

- ເປັນການອະທິບາຍ 10%
- ເປັນບົດກະວີ 15%
- ເປັນເຣື່ອງລາວ 75%

ທ່ານເຄີຍພຍາຍາມເລົ່າເຫດການໃດເຫດການນຶ່ງກັບຄົນໃດຄົນນຶ່ງ ແຕ່ລາວໄດ້ເວົ້າສອດໃສ່ເຣື່ອງທີ່ທ່ານກຳລັງເວົ້າຕລອດເວລາ ພ້ອມທັງຖາມແລະຕ້ອງຕິ ແດ່ບໍ? ເມື່ອທ່ານເລົ່າຈົບເຣື່ອງນັ້ນກໍໝົດອິດທິພົນເພາະຄົນນັ້ນໄດ້ສອດຂຶ້ນເລື້ອຍໆ ເຣື່ອງລາວໃນພຣະຄັມພີກໍເຊັ່ນດຽວກັນ ເຣື່ອງນັ້ນຈະມີອິດທິພົນຕໍ່ຜູ້ຟັງໄດ້ຫລາຍທີ່ສຸດເມື່ອມີການເລົ່າເຕັມເຣື່ອງຕາມທີ່ຂຽນໄວ້ ໃນເມື່ອພຣະເຈົ້າໄດ້ປະທານເນື້ອຫາໃນພຣະຄັມພີເຖິງ 75% ເປັນເຣື່ອງເລົ່າ ບາງເທື່ອເຮົາຄວນຍອມໃຫ້ພຣະເຈົ້າເລົ່າເຣື່ອງຂອງພຣະອົງຕລອດທັງເຣື່ອງ ແມ່ນບໍ?

ອັນຕະລາຍຂອງການໃຊ້ວິທີການ ທີ່ມັກໃຊ້ກັນໃນປັດຈຸບັນ

ລອງຄິດເຖິງຂອງຂວັນທີ່ທ່ານຫໍ່ຢ່າງຈືບຈາມສິ່ງໄປໃຫ້ເພື່ອນ ແຕ່ຫໍ່ຂອງຂວັນນັ້ນຕີກັບມາໂດຍທີ່ບໍ່ໄດ້ໄຂ ທ່ານຈະສລຸບເອົາວ່າເພື່ອນຂອງທ່ານບໍ່ຕ້ອງການສິ່ງທີ່ຢູ່ກ່ອງນັ້ນແມ່ນບໍ? ຫລືວ່າຜູ້ຮັບບໍ່ຮູ້ວິທີທີ່ຈະໄຂຫໍ່ຂອງຂວັນນັ້ນ?

ເມື່ອເຮົາຫໍ່ຄວາມຈິງຂອງພຣະຄັມພີໃນຮູບແບບທີ່ເປັນຫົວຂໍ້, ແນວຄິດ, ຫລືການວິເຄາະ ຜູ້ທີ່ຮຽນຜ່ານການຮຽນແບບປາກເປົ່າບໍ່ສາມາດທີ່ຈະໄຂໄດ້.

ໃນເມື່ອເຮົາຕ້ອງການນຳເອົາຄວາມຈິງໃນພຣະຄັມພີອອກໄປໃຫ້ຄົນອື່ນ ເຖິງເວລາແລ້ວທີ່ເຮົາຄວນຈະພິຈາຣະນາເຖິງການສູນເສັຍ "ເຣື່ອງລາວ." ຄົນຈຳນວນຫລາຍຕ້ອງການໄດ້ຍິນຂ່າວປະເສີດແລະຕ້ອງການຝຶກອົບຮົມເພື່ອເປັນສາວົກນັ້ນ ແມ່ນບັນດາຜູ້ທີ່ຮຽນຜ່ານການສື່ສານແບບປາກເປົ່າ. ເມື່ອເຮົາສື່ສານກັບເຂົາເຈົ້າໂດຍໃຊ້ທາງອື່ນທີ່ບໍ່ແມ່ນເຣື່ອງລາວເຊັ່ນ ການແຕ່ງໂຄງຮ່າງ, ຈັດຂໍ້ມູນໃຫ້ໃໝ່ໆ, ວິທີນີ້ນອກຈາກວ່າເຂົາເຈົ້າຈະບໍ່ເຂົ້າໃຈ ແລະບໍ່ສາມາດຈື່ຈຳຂໍ້ມູນໄດ້ແລ້ວ ເຂົາເຈົ້າຍັງຈະບໍ່ເຂົ້າໃຈຄວາມຈິງທີ່ເຮົານຳສເນີອີກດ້ວຍ.

ເປັນຫຍັງຈຶ່ງໃຊ້ ການເລົ່າເຣື່ອງເຈາະໃຈ?

ຄວາມແຕກຕ່າງຂອງວິທີການສອນແບບເປັນຫົວຂໍ້ທີ່ໃຊ້ກັນທົ່ວໄປນັ້ນ ວິທີການເລົ່າເຣື່ອງເຈາະໃຈດ້ວຍການສື່ສານແບບປາກເປົ່າແລະຫາຂໍ້ສລຸບຈາກສິ່ງທີ່ໄດ້ສັງເກດເຫັນ ໄດ້ສະທ້ອນຢູ່ໃນຄຳຖາມນີ້...ໃຜ ຫລືແມ່ນຫຍັງທີ່ຈະສອນ? ໃຫ້ເຮົາເບິ່ງບົດບາດຂອງຄຣູ, ຂອງນັກຮຽນ, ພຣະຄຳ ແລະອົງພຣະວິນຍານດ້ວຍມຸມມອງຂອງພຣະຄັມພີ.

ການສອນແບບເປັນຫົວຂໍ້ ຜູ້ນຳເປັນຜູ້ສເນີແລະຕັດສິນໃຈລ່ວງໜ້າວ່າ ຈະສອນຫຍັງ ພ້ອມທັງຂໍ້ພຣະຄັມພີແລະເນື້ອຫານັ້ນ ຜູ້ສອນເປັນຜູ້ເລືອກແລ້ວສິ່ງຕ່ໃຫ້ແກ່ຜູ້ຟັງເພື່ອເປັນການຂຍາຍຖ້ອຍຄຳແລະສນັບສນູນຄວາມຄິດເຫັນຂອງຜູ້ເປັນຄຣູ. ວິທີນີ້ກໍບໍ່ຜິດຫຍັງ ແຕ່ຫາກບໍ່ແມ່ນວິທີດຽວເທົ່ານັ້ນທີ່ຈະໃຊ້ໃນການສອນ.

ການສອນແບບໃຊ້ຫົວຂໍ້ນັ້ນໄດ້ທຳລາຍເຣື່ອງລາວ...ເຮັດໃຫ້ຂໍ້ມູນຈື່ຈຳໄດ້ຍາກຂຶ້ນ ເນື້ອເຣື່ອງໃນພຣະຄັມພີນັ້ນບໍ່ໄດ້ເວົ້າຕົງເຂົ້າໄປໃສ່ຈິດວິນຍານ, ຈິດໃຈແລະຮ່າງກາຍຂອງເຮົາ. ເມື່ອຜູ້ສອນແຍກເຣື່ອງລາວອອກຈາກກັນ, ແນະນຳສເນີຂໍ້ມູນ, ແຍກປະເພດ ຂໍ້ມູນກໍຈະເຂົ້າໄປໃນຄວາມຄິດຂອງເຮົາ ບໍ່ໄດ້ເຂົ້າໄປໃນຈິດໃຈແລະຈິດວິນຍານຂອງເຮົາ.

ເມື່ອສອນໂດຍໃຊ້ແບບຫົວຂໍ້ ຜູ້ສອນຈະເລືອກຖ້ອຍຄຳຈາກພຣະຄັມພີຫລາຍໆ ຕອນເພື່ອສນັບສນູນຫົວຂໍ້ທີ່ລາວຈະເວົ້າ ຜູ້ຟັງກໍຟັງແລະຈິດໄປນຳ ວິທີນີ້ບໍ່ມີເຣື່ອງຢູ່ນຳໃຫ້ຕິດຕາມ ສຳລັບຜູ້ທີ່ຈິດໄປນຳກໍຈິດບໍ່ທັນ ກໍບໍ່ຮູ້ວ່າຈະໃຊ້ຫຍັງເພື່ອຊ່ອຍເກັບກຳຂໍ້ມູນ ດັ່ງນັ້ນເຂົາເຈົ້າຈຶ່ງເປັນເໝືອນກັບຮ່າງກາຍທີ່ບໍ່ມີກະດູກ.

ເມື່ອຜູ້ຮຽນທີ່ໄດ້ຮຽນທາງປາກເປົ່າມາ ທີ່ນັ່ງຢູ່ຖ້ວນກາງກອງປະຊຸມ ບໍ່ມີທາງເລີຍທີ່ຈະຈື່ຈຳສິ່ງທີ່ສອນຢູ່ນັ້ນໄດ້ ເຂົາເຈົ້າຈຶ່ງບໍ່ສາມາດເລົ່າເຣື່ອງຕ່ໄປໃຫ້ຄົນອື່ນຟັງໄດ້ ເມື່ອບໍ່ມີເຣື່ອງໃຫ້ຕິດຕາມ ກໍບໍ່ມີຫຍັງທີ່ຈະເຊື່ອມໂຍງຂໍ້ມູນປະກອບເຂົ້າກັນ.

ຜູ້ຮຽນທີ່ອ່ານໄດ້ຊຽນໄດ້ເດຈະເປັນແນວໃດ? ຖ້າຫາກບໍ່ກັບໄປເບິ່ງຈາກທີ່ຈົດບັນທຶກໄວ້ ຄົນສ່ວນຫລາຍບໍ່ອາດຈະເລົ່າໄດ້ຈາກຂໍ້ມູນທີ່ໄດ້ຍິນມາ ຄວາມຈິງນັ້ນກໍຄື ບໍ່ມີຜູ້ໃດເອົາການຈົດບັນທຶກຂອງຕົນຕິດຕົວໄປທຸກຫົນທຸກແຫ່ງໄດ້ ແຕ່ເຖິງປານນັ້ນຜູ້ຮຽນທັງສອງແບບ ບໍ່ວ່າຈະເປັນພວກທີ່ຮຽນຈາກການຟັງຫລືຜູ້ທີ່ຮຽນຈາກການອ່ານຕ່າງບໍ່ສາມາດ ຈະເລົ່າຄຳພຍານທີ່ດີແລະເຣື່ອງຕົວຢ່າງທີ່ປະກອບໃຊ້ກັບຄຳເທສນາໄດ້ຢ່າງແນ່ນອນ.

ເຊັ່ນດຽວກັນ ຜູ້ຟັງສ່ວນໃຫຍ່ບໍ່ມີທາງເລີຍທີ່ຈະພົບຂໍ້ມູນຂອງຫົວຂໍ້ດ້ວຍຕົນເອງ ດັ່ງນັ້ນເຂົາເຈົ້າຕ້ອງເພິ່ງຜູ້ສອນໄປ ຕລອດ ຂໍ້ມູນທີ່ຖືກສົ່ງໄປໃຫ້ຜູ້ຟັງເທື່ອລະເລັກລະນ້ອຍ ກໍເໝືອນກັບແມ່ນົກທີ່ປ້ອນອາຫານລູກຂອງມັນດ້ວຍການ ປ່ອນອາຫານເຂົ້າໄປໃນປາກລູກຂອງມັນທີ່ອ້າປາກຄອຍຖ້າຢູ່ ແຕ່ລະວັນອາທິດບັນດາຜູ້ຟັງຈະຕ້ອງລໍຄອຍອາຫານ ຄາບຕໍ່ໆ ໄປ ການສອນແບບໃຊ້ຫົວຂໍ້ຈຶ່ງເໝືອນກັບລ້ຽງນົກນ້ອຍທີ່ຢູ່ໃນຮັງທີ່ມີອາຍຸໄດ້ 50 ປີ.

ອັນຕະລາຍຂອງການສອນແບບໃຊ້ຫົວຂໍ້ນັ້ນກໍຄື ຄຣູຈະສອນເຣື່ອງທີ່ຕົນເຫັນວ່າຈຳເປັນຕໍ່ຜູ້ຟັງ ຈຶ່ງມີແນວໂນ້ມໃຫ້ ເລືອກຂໍ້ພຣະຄຳຈາກສ່ວນຕ່າງໆ ໃນພຣະຄັມພີຊຶ່ງເປັນຂໍ້ພຣະຄັມພີທີ່ຄຣູຮູ້ດີຢູ່ແລ້ວ ວິທີສອນແບບໃຊ້ຫົວຂໍ້ຈຶ່ງບໍ່ກົດ ດັນໃຫ້ຄຣູຄົ້ນຫາຂໍ້ພຣະຄັມພີທີ່ຕົນບໍ່ຄຸ້ນເຄີຍເພື່ອຈະໄດ້ຂໍ້ມູນແລະຄວາມເຂົ້າໃຈມາເພີ້ມເຕີມ.

ຜູ້ທີ່ເຊື່ອສ່ວນຫລາຍເຄີຍໄປຮ່ວມປະຊຸມຂອງຄຣິສຕຽນມາແລ້ວ ການນຳສເນີແບບໃຊ້ຫົວຂໍ້ອາດຈະຢູ່ໃນເຣື່ອງການ ປະກາດ ການເຂົ້າເຖິງກຸ່ມຄົນໂດຍສະເພາະ ເຣື່ອງຄອບຄົວ ການເງິນ ສິ່ງທີ່ຕ້ອງຫລີກເວັ້ນ ການອະທິຖານ ພຣະ ລັກສະນະຂອງພຣະເຈົ້າ ການປົວພຍາດ ຄວາມສັດຊື່ໃນວຽກງານ ຫລືການທຳນວາຍ ທັງໝົດທີ່ກ່າວມານີ້ເປັນຫົວຂໍ້ ທີ່ສຳຄັນ ແຕ່ທີ່ໜ້າສົນໃຈນັ້ນແມ່ນເຮົາເຫັນວ່າຫົວຂໍ້ເຫລົ່ານີ້ສາມາດນຳສເນີຜ່ານເຣື່ອງເລົ່າກັບການສົນທະນາແລກ ປ່ຽນຄວາມຄິດເຫັນໄດ້. ໃນການເລົ່າປາກເປົ່າ ຄືການເລົ່າເຣື່ອງເພື່ອໃຫ້ຜູ້ຟັງສັງເກດ ຄຣູຈະເລົ່າໝົດທັ້ງເຣື່ອງແລະ ໃຫ້ເນື້ອຫາຂອງເຣື່ອງເປັນຜູ້ນຳ ເຮັດໃຫ້ເກີດຄວາມເຂົ້າໃຈແລະເປັນບົດຮຽນທີ່ຈະສອນ.

ເມື່ອຄຣູຕັດສິນໃຈລ່ວງໜ້າວ່າຈະໃຊ້ຫົວຂໍ້ໃດຫລືເຣື່ອງໃດໃນພຣະຄັມພີ ຂໍ້ມູນຈາກພຣະຄຳຂອງພຣະເຈົ້າທີ່ເລືອກ ມາອາດຈະຖືກເບິ່ງຂ້າມກໍໄດ້ ແຕ່ຖ້າມີການຄົ້ນຄວ້າເຣື່ອງລາວແລະມີການຢ້ຳຜ່ານທາງຄຳຖາມ ແລະການສົນທະ ນາແລກປ່ຽນຄວາມຄິດເຫັນກັນ ກໍຈະໄດ້ຄົ້ນພົບຫົວຂໍ້ເພີ້ມຂຶ້ນ ພຣະວິນຍານບໍຣິສຸດຈະນຳເອົາສາຣະແກ່ນສານໄປ ໃຫ້ແຕ່ລະຄົນຕາມທີ່ພຣະອົງຊົງຕຽມໄວ້.

ໂດຍທົ່ວໄປແລ້ວການສອນເປັນຫົວຂໍ້ ໂດຍຍົກເອົາຂໍ້ພຣະຄັມພີຢ່າງຫລວງຫລາຍມາສນັບສນູນຫົວຂໍ້ນັ້ນໆ ອາດຈະ ເປັນການສື່ສານຂໍ້ມູນຈາກພຣະຄັມພີໃນຮູບແບບກົດເກນ ຂໍ້ບັງຄັບ ແຕ່ເມື່ອໃຊ້ແບບເລົ່າເຣື່ອງ ຈິດວິນຍານຂອງເນື້ອ ເຣື່ອງທັງໝົດກໍຈະມີໂອກາດເວົ້າກັບຜູ້ຟັງໂດຍກົງ.

ບາງເທື່ອຄຣູຄິດວ່າລາວໄດ້ໃຊ້ວິທີການເລົ່າເຣື່ອງເຈາະໃຈແລ້ວ ແທ້ຈິງແລ້ວລາວໄດ້ພາດໄປຈາກເນື້ອຫາທີ່ຈຳເປັນ ທີ່ຈະເຮັດໃຫ້ເຣື່ອງເຈາະໃຈໄດ້ສັມຜັດຊີວິດຂອງຄົນທັງຫລາຍ ພວກຄຣູໄດ້ຜິດພາດໄປເພາະເມື່ອເລົ່າເຣື່ອງແລ້ວກັບ ໄປເນັ້ນໃນຫົວຂໍ້ທີ່ບໍ່ໄດ້ກ່າວເຖິງນັ້ນ. ດັ່ງນັ້ນເຣື່ອງທີ່ເລົ່າຈຶ່ງຖືກເຮັດໃຫ້ເໝາະກັບຄຣູ ແທນທີ່ຈະເຮັດໃຫ້ຄຣູເໝາະ ສົມກັບເຣື່ອງລາວ ໃນການເລົ່າເຣື່ອງເຈາະໃຈທີ່ແທ້ຈິງນັ້ນບໍ່ວ່າທ່ານຈະສອນສິ່ງໃດ ຜູ້ຟັງຈະຕ້ອງເຫັນສິ່ງນັ້ນໃນເຣື່ອງ

ທີ່ທ່ານເລົ່າ.

ເມື່ອຄຣູໃຊ້ເຣື່ອງລາວມາສອນໃນສິ່ງທີ່ຕົນເອງຮູ້ແລະເຊື່ອ ລາວຈຶ່ງພາດໂອກາດທີ່ຈະຮຽນຮູ້ຂໍ້ມູນທີ່ພຣະວິນຍານຈະຊົງສອນໃນການຄົ້ນຫາຊຸມຊັບຝ່າຍວິນຍານໃນເຣື່ອງນັ້ນ ທີ່ເປັນປະສົບການທີ່ຕື່ນເຕັ້ນສຳລັບຄຣູ ຄວາມທ້າທາຍສຳລັບຄຣູທີ່ເລົ່າເຣື່ອງຈຶ່ງກາຍເປັນການທີ່ລາວພຍາຍາມຈະສົ່ງຕໍ່ຊຸມຊັບຝ່າຍວິນຍານທີ່ລາວຄົ້ນພົບຜ່ານຄຳຖາມ ເພື່ອຜູ້ຟັງຈະໄດ້ຮັບປະສົບການທີ່ຕື່ນເຕັ້ນຈາກການຄົ້ນຫາຊຸມຊັບຝ່າຍວິນຍານນັ້ນເຊັ່ນດຽວກັນ.

ການຕັດສິນໃຈທີ່ສຳຄັນ. ຫາກເຮົາມີເປົ້າໝາຍຢາກຈະເວົ້າຄວາມຈິງຂອງພຣະຄັມພີໃນປະເທດທີ່ກຳລັງພັດທະນາ ແລະພຍາຍາມທຸກຢ່າງເພື່ອຈະເຂົ້າເຖິງຄົນທີ່ກຳລັງຫລົງທາງ ຮວມໄປເຖິງຄົນໃນໂລກທີ່ຍັງບໍ່ທັນໄດ້ຍິນເຣື່ອງຂ່າວປະເສີດ ເຮົາຈຳເປັນຕ້ອງປ່ຽນວິທີການສເນີຂໍ້ມູນຂອງເຮົາໃໝ່. (ຈົ່ງເບິ່ງຕາມປຶ້ມ *ການສ້າງສາວົກຂອງຜູ້ຮຽນດ້ວຍການຟັງ*. ມີໄວ້ພ້ອມແລ້ວທີ່ຈະດາວໂລດເອົາເພື່ອພິມອອກ ແລະຮະບົບຟັງສຽງ ທີ່ www.oralbible.com)

✞

ບົດທີ 2

ຄຳຖາມແລະເຣື່ອງລາວແບບຢ່າງຈາກພຣະຄັມພີ

ຕົ້ນແບບຈາກພຣະເຢຊູ: ເລ່ົາເຣື່ອງ ໃຊ້ຄຳຖາມ

ພຣະເຢຊູຊົງສອນຢ່າງໃດ ພຣະເຢຊູຖືກຖາມຫລາຍກວ່າ 200 ເທື່ອແຕ່ພຣະອົງຊົງຕອບແບບຕົງໆ ພຽງບໍ່ທ່ໍໃດເທື່ອ ສ່ວນຫລາຍພຣະອົງຈະຖາມຄືນ ບາງເທື່ອກໍເລ່ົາເປັນເຣື່ອງຫລືເປັນຄຳອຸປມາ ຄັ້ນຊັ້ນ ພຣະເຢຊູພຽງແຕ່ເລ່ົາເຣື່ອງ ແລ້ວກໍແລ້ວໄປເທ່ົານັ້ນບໍ? ບໍ່ແມ່ນຈັ່ງຊັ້ນດອກ, ສ່ວນຫລາຍແລ້ວ ຫລັງຈາກທີ່ພຣະອົງເລ່ົາເຣື່ອງແລ້ວ ພຣະອົງຈະຖາມແລະເຊີນຊວນໃຫ້ມີການສົນທະນາ.

ສາຍເຫດທີ່ພຣະເຢຊູໃຊ້ການເລ່ົາເຣື່ອງນັ້ນກໍເພາະວ່າ ພຣະອົງບໍ່ໄດ້ຈົບຈາກໂຮງຮຽນພຣະຄັມພີ ຫລືພຣະອົງຊົງເປັນພຽງຊ່ໍາງໄມ້ ແມ່ນບໍ່? ບໍ່, ບໍ່ແມ່ນ. ແຕ່ອາດຈະເປັນເພາະວ່າຄົນໃນສມັຍນັ້ນສ່ວນໃຫຍ່ບໍ່ອ່ານໜັງສື ຈະມີຄົນອ່ານໜັງສືໄດ້ປະມານສິບເອັດສ່ວນຮ້ອຍເທ່ົານັ້ນ ດັ່ງນັ້ນພຣະເຢຊູຈຶ່ງໃຊ້ການເລ່ົາເຣື່ອງເພື່ອໃຫ້ຄົນທີ່ບໍ່ມີການສຶກສາໄດ້ເຂົ້ໍາໃຈແມ່ນບໍ່? ກໍອາດຈະເປັນໄປໄດ້ ແຕ່ຈະເຫັນວ່າພຣະເຢຊູຊົງສົນທະນາກັບພວກຟາຣີຊາຍນໍາ ພຣະອົງໃຊ້ການເລ່ົາເຣື່ອງກັບພວກຟາຣີຊາຍຫລືບໍ່? ແມ່ນແທ້, ພຣະເຢຊູຊົງເລ່ົາເຣື່ອງແລະເຂົາເຈ້ົາກໍເຂ້ົາໃຈຄວາມໝາຍແລະມີບາງຄົນໄດ້ຮັບເຊື່ອ.

ເຮົາຕ້ອງຖາມຕົວເຮົາເອງວ່າ ພຣະເຢຊູຊົງໃຊ້ການອະທິບາຍ ແລະໃຊ້ຄຳສັບທີ່ເລິກເຊິ່ງໃນສມັຍຂອງພຣະອົງໄດ້ບໍ? ໄດ້ແທ້ ໄດ້ຢ່າງແນ່ນອນ ແຕ່ພຣະເຢຊູຊົງເລືອກເອົາຖ້ອຍຄຳທີ່ຄົນທັມມະດາສາມັນສາມາດເຂ້ົາໃຈໄດ້. ສຳລັບຄົນທີ່ມີການສຶກສາສູງພຣະເຢຊູກໍບໍ່ໄດ້ໃຊ້ຄຳສັບທີ່ຍາກ.

ພຣະເຢຊູບໍ່ໄດ້ສະເດັດມາເພື່ອສອນປະວັດສາດ ແຕ່ພຣະອົງໄດ້ນໍາເອົາຂ່າວສານຝ່າຍວິນຍານມາ ເພື່ອທຸກຄົນທີ່ໄດ້ "ຟັງ" ຈະເຂ້ົາໃຈໃນຂ່າວສານນັ້ນ. ໃນການເລ່ົາເຣື່ອງເຈາະໃຈ ຜູ້ທີ່ຮ່ວມຟັງຈະໄດ້ຮຽນວິທີຄົ້ນຫາຂຸມຊັບຫລືຂໍ້ມູນຝ່າຍວິນຍານທີ່ຢູ່ໃນເຣື່ອງນັ້ນໆ ແລະຈະໄດ້ຮຽນຮູ້ວິທີຕັ້ງຄຳຖາມແບບໂອ້ລົມສົນທະນາ

ຜູ້ໃດທີ່ຕິດຕາມວິທີການຂອງການເລ່ົາເຣື່ອງເຈາະໃຈຈາກປຶ້ມເຫລ້ັມນີ້ ຫລືຮຽນຈາກການຝຶກອົບຮົມພາກປະຕິບັດຕົວຈິງ ກໍສາມາດທີ່ຈະເປັນຜູ້ເລ່ົາເຣື່ອງດັ່ງທີ່ໄດ້ກ່າວມາແລ້ວຢ່າງເກີດຜົນ ຂໍພຣະເຈ້ົາຊົງອວຍພຣະພອນພຣະຄຳຂອງພຣະອົງ ທີ່ພຣະຄຳນັ້ນໄດ້ຖືກເຜີຍແຜ່ອອກໄປຜ່ານຜູ້ເລ່ົາເຣື່ອງເຫລ່ົານັ້ນ.

ເມື່ອໄດ້ຂໍ້ມູນເພ້ີມເຕີມ, ໄດ້ຝຶກຝົນແລະຮຽນຮູ້ຈາກຄວາມຜິດພາດ ຜູ້ເລ່ົາເຣື່ອງຈະສາມາດໄຕ່ເຕ້ົາຂ້ຶນໄປເປັນຜູ້ສອນໄດ້ ແລະຕ່ໍໄປກໍສາມາດໄຕ່ເຕ້ົາຂ້ຶນໄປເປັນຄຣູຝຶກອົບຮົມເລ່ົາເຣື່ອງເຈາະໃຈທີ່ຜ່ານການຮັບຮອງ.

ປຶ້ມເຫ້ັມນີ້ຈະຊ່ວຍໃຫ້ທ່ານເຫັນພາບໃນການພັດທະນາດັ່ງກ່າວ ແລະພວກເຮົາກໍຊ່ືນໃຈຍິນດີທີ່ມີຜູ້ນໍາເພ້ີມຂ້ຶນຢ່າງທະວີຄູນເຊ່ັນນີ້.

ຊຸມຊັບໃນພຣະຄັມພີ ແມ່ນຫຍັງ? ເຣື່ອງຫົນທາງ

ຄັ້ງນຶ່ງ ມີຊາຍຄົນນຶ່ງໄດ້ເຂົ້າໄປເຮັດງານຢູ່ໃນເມືອງ ຫລາຍປີຜ່ານໄປລາວຫາເງິນໄດ້ຢ່າງຫລວງຫລາຍໄດ້ກາຍເປັນ ເສດຖີ ຕໍ່ມາເສດຖີຄົນນັ້ນໄດ້ກັບຄືນເມືອບ້ານຂອງລາວ ທຸກຄົນໃນບ້ານໄດ້ຕ້ອນຮັບລາວເປັນຢ່າງດີ.

ເສດຖີຄົນນັ້ນໄດ້ຊື້ຂອງຂວັນໄປຕ້ອນເພື່ອນໆ ຂອງລາວ. ລາວຈຶ່ງໄດ້ວາງແຜນເພື່ອຈະເອົາຂອງຂວັນໃຫ້ໝູ່ເພື່ອນ ຂອງລາວ: ເສດຖີຄົນນັ້ນໄດ້ເດີນທາງອອກຈາກບ້ານໄປພໍໄດ້ມື້ນຶ່ງແລ້ວກໍກັບມາແລະໄດ້ບອກໝູ່ເພື່ອນທຸກຄົນໄປ ພົບກັບລາວຢູ່ຟາກພູນ້ອຍຂ້າງນັ້ນຊຶ່ງຢູ່ໃກ້ກັບບ້ານນັ້ນ

ເມື່ອເພື່ອນທຸກຄົນໄປຮອດຟາກພູຂ້າງນັ້ນແລ້ວ ເສດຖີກໍເວົ້າກັບເຂົາເຈົ້າວ່າ "ເຮົາໄດ້ສ້າງທາງເສັ້ນນຶ່ງແຕ່ບ່ອນນີ້ໄປ ຫາຫ້ວຍນ້ຳ ຖ້າພວກທ່ານຍ່າງໄປຕາມທາງເສັ້ນນີ້ກໍຈະພົບຂອງຂວັນຫລາຍຢ່າງ ຈົ່ງຍ່າງໄປດຽວນີ້ແລ້ວຈະພົບຂອງ ຂວັນທີ່ເຮົາໄດ້ຕຽມໄວ້ໃຫ້."

ດັ່ງນັ້ນທຸກຄົນຈຶ່ງເລີ້ມເດີນໄປຕາມທາງເສັ້ນນັ້ນ, ບາງຄົນກໍໄປທາງລັດແລະເວົ້າກັນວ່າທາງເສັ້ນນີ້ໜ້າສົນໃຈຫລາຍ ໃຫ້ພວກເຮົາມາເບິ່ງນຳກັນ ແລ້ວພວກເຂົາກໍກົ້ມລົງກອບເອົາດິນຊາຍກັບເມືອເຮືອນເພື່ອເອົາໄປຄົ້ນຄວ້າເບິ່ງວ່າຊິມີ ຫຍັງຢູ່ໃນດິນນັ້ນ.

ບາງຄົນກໍແລ່ນໄປຕາມທາງຈົນຮອດຫ້ວຍນ້ຳ ເມື່ອສຸດທາງແລ້ວຈຶ່ງຈົ່ມວ່າ "ເຮົາຮູ້ທາງເສັ້ນນີ້ດີຢູ່ແລ້ວ ບໍ່ເຫັນມີຫຍັງ ບໍ່ເຫັນມີຂອງຂວັນອັນໃດເລີຍ"

ສ່ວນພວກທີ່ຍັງເຫລືອໄດ້ຍ່າງໄປຕາມທາງນັ້ນແລະໂອ້ລົມກັນໄປ ຄົນນຶ່ງເວົ້າຂຶ້ນວ່າ, "ເບິ່ງແມ ໄມ້ຕົ້ນນັ້ນແຕ່ກ່ອນ ມັນລົ້ມຢູ່ບ່ອນໜີ້ ແຕ່ເພື່ອນຂອງພວກເຮົາໄດ້ແກ່ມັນອອກໄປເພື່ອໃຫ້ພວກເຮົາຍ່າງໄປສະດວກ" ບາງຄົນສັງເກດ ເຫັນວ່າພຸ່ມໜາມໄດ້ຖືກຖາງອອກເພື່ອໃຫ້ຄົນທີ່ເດີນທາງມີຄວາມປອດພັຍ.

ຄົນກຸ່ມນີ້ບໍ່ໄດ້ແລ່ນໄປເພື່ອຊອກຫາຂອງຂວັນ ແຕ່ເຂົາເຈົ້າໄດ້ພາກັນຍ່າງໄປຊ້າໆ ແລ້ວເຂົາເຈົ້າກໍຄິດໄດ້ວ່າທາງເສັ້ນ ນີ້ເອງທີ່ເພື່ອນເສດຖີສ້າງໄວ້ເປັນຂອງຂວັນ ໃນທັນໃດນັ້ນຄົນນຶ່ງໄດ້ຢຸດຍ່າງແລ້ວເອີ້ນໃສ່ໝູ່ຂອງລາວວ່າ, "ເບິ່ງທີ່ ກ້ອງພຸ່ມໄມ້ນີ້ແມ, ມີໄຖ່ເຂົ້າສານຕັ້ງຫລາຍໄຖ່"

ແລະອີກຄົນນຶ່ງກໍຮ້ອງຂຶ້ນວ່າ "ເບິ່ງກ້ອງພຸ່ມໄມ້ທາງນັ້ນແມ ມີໝໍ້ກະທະຫລາຍໜ່ວຍມີແຕ່ໜ່ວຍງາມໆ ທັງນັ້ນ" ເມື່ອ ຄົນກຸ່ມນີ້ຍ່າງຕໍ່ໄປກໍໄດ້ພົບຂອງຂວັນຢ່າງຫລວງຫລາຍຕາມຂ້າງທາງ ເຂົາເຈົ້າຈຶ່ງຮູ້ວ່າແມ່ນເພື່ອນເສດຖີນັ້ນເອງທີ່ ເປັນຜູ້ວາງຂອງຂວັນເຫລົ່ານີ້ໄວ້. ດັ່ງນັ້ນແມ່ນຄົນກຸ່ມນີ້ເທົ່ານັ້ນ ທີ່ໄດ້ພົບຂອງຂວັນຢ່າງຫລວງຫລາຍ ເພາະເຂົາເຈົ້າ ພາກັນຍ່າງໄປຊ້າໆ.

(ສ່ວນກຸ່ມທີ່ຟ້າວແລ່ນໄປກໍບໍ່ໄດ້ພົບກັບຂອງຂວັນເຫລົ່ານັ້ນ ແລະກຸ່ມທີ່ກອບເອົາດິນຊາຍໄປຄົ້ນ ຄວ້ານັ້ນກໍຍັງຄົ້ນ

ຄ້ຳຕໍ່ໄປ ແລະບໍ່ມີໂອກາດໄດ້ຍ່າງໄປຕາມທາງເສັ້ນນັ້ນເລີຍ.)

ເຣື່ອງໃນພຣະຄັມພີປຽບເໝືອນຫີນທາງທີ່ພຣະເຈົ້າຊົງຕຽມໄວ້ໃຫ້ເຮົາ ຄົນທີ່ຍ່າງໄປຊ້ຳໆ ຜ່ານເຣື່ອງຕ່າງໆໃນພຣະຄັມພີກໍຈະໄດ້ພົບຂຸມຊັບທີ່ຊຸກເຊື່ອງໄວ້ ເປັນຂອງຂວັນແຫ່ງຄວາມຈິງຈາກອົງພຣະຜູ້ເປັນເຈົ້າ ການ "ເລົ່າເຣື່ອງເຈາະໃຈ" ກໍແມ່ນວິທີການດັ່ງກ່າວນີ້ເອງ.

ຕິດຕາມວິທີການຂອງນາທານ

ໃນ 2 ຊາມູເອນ 12:1-14 ພຣະເຈົ້າໄດ້ໃຫ້ຫລັກການ ໃນການຕິດຕໍ່ສື່ສານຄວາມຈິງຝ່າຍວິນຍານແກ່ພວກເຮົາ. ກະສັດດາວິດໄດ້ເຮັດບາບຄືໄດ້ຫຼິ້ນຊູ້(ລ່ວງປະເວນີ)ກັບຜູ້ຍິງຄົນນຶ່ງຊື່ບັດເຊບາ ແລະຍັງໄດ້ສັ່ງໃຫ້ທະຫານຂ້າຜົວຂອງນາງອີກ ດາວິດໄດ້ພຍາຍາມປົກປິດຄວາມບາບຂອງເພິ່ນຕລອດມາ...

ນາທານ ຜູ້ປະກາດພຣະທັມຂອງພຣະເຈົ້າໄດ້ເຂົ້າໄປພົບກະສັດດາວິດ ໄດ້ເລົ່າເຣື່ອງຜູ້ຊາຍສອງຄົນສູ່ກະສັດດາວິດຟັງວ່າ

> "ມີຊາຍສອງຄົນ, ຄົນນຶ່ງເປັນຄົນທຸກຍາກ ອີກຄົນນຶ່ງເປັນຄົນຮັ່ງມີ ຄົນທີ່ຮັ່ງມີ ມີຝູງງົວ ຝູງແກະຈຳນວນຫລາຍ ສ່ວນຄົນທຸກຍາກມີແກະນ້ອຍພຽງຕົວດຽວ. ມື້ນຶ່ງເພື່ອນຂອງ ຄົນຮັ່ງມີໄດ້ມາຢາມ ຄົນຮັ່ງມີບໍ່ຢາກຂ້າແກະຂອງຕົນເປັນອາຫານ ຈຶ່ງໄປເອົາແກະນ້ອຍ ຂອງຄົນທຸກຍາກມາຂ້າແທນ"

ເມື່ອກະສັດດາວິດໄດ້ຍິນເຣື່ອງນັ້ນກໍໃຈຮ້າຍຢ່າງແຮງ ແລະເວົ້າວ່າ "ເຮົາຂໍສາບານຕໍ່ພຣະເຈົ້າອົງຊົງມີຊີວິດວ່າ ຄົນທີ່ເຮັດຊົ່ວແບບນັ້ນສົມຄວນຕາຍ ລາວຕ້ອງສົ່ງລູກແກະຄືນໃຫ້ແກ່ຄົນທຸກຍາກສີ່ຕໍ່ ລາວເຮັດໃນສິ່ງທີ່ໂຫດຮ້າຍຫລາຍ" ນາທານຈຶ່ງເວົ້າກັບກະສັດດາວິດວ່າ, "ທ່ານນັ້ນແຫລະຄືຊາຍທີ່ຮັ່ງມີຄົນນັ້ນ"

ກ່ອນດາວິດໄດ້ຟັງເຣື່ອງທີ່ນາທານເລົ່າ ເພິ່ນຮູ້ດີວ່າເພິ່ນໄດ້ເຮັດບາບແຕ່ໄດ້ປິດບັງໄວ້ ບໍ່ຍອມຮັບສາຣະພາບແລະບໍ່ສຳນຶກໃນຄວາມຜິດບາບທີ່ເພິ່ນໄດ້ເຮັດ.

ນາທານເປັນຜູ້ປະກາດພຣະທັມພຣະເຈົ້າ ສາມາດທີ່ຈະສັ່ງສອນກະສັດດາວິດໂດຍຕົງກໍໄດ້ ແຕ່ລາວເລືອກທີ່ຈະເລົ່າເຣື່ອງສູ່ດາວິດຟັງ.

ຈົ່ງສັງເກດເບິ່ງວ່າກະສັດດາວິດໄດ້ຕອບນາທານຢ່າງໃດ? ແມ່ນແລ້ວກະສັດດາວິດຕັດສິນວ່າຊາຍທີ່ຮັ່ງມີໄດ້ເຮັດຜິດ ແລະລາວຄວນຊົດເຊີຍໃຊ້ຄືນໃຫ້ແກ່ຄົນຍາກຈົນຢ່າງໃດ? ແມ່ນຫຍັງເປັນສິ່ງທີ່ໃຊ້ຊົດເຊີຍທີ່ເໝາະສົມທີ່ສຸດ? ແມ່ນແລ້ວ, ກະສັດດາວິດເວົ້າວ່າ, ຊາຍທີ່ຮັ່ງມີຕ້ອງໃຊ້ລູກແກະຄືນໃຫ້ຄົນຍາກຈົນ 4 ຕົວ ແທນທີ່ຈະເປັນຕົວດຽວ ແລະລາວຍັງສົມຄວນຕາຍອີກ.

ກະສັດດາວິດຮູ້ສຶກວ່າເພິ່ນໄດ້ຮ່ວມຢູ່ໃນເຣື່ອງທີ່ນາທານເລົ່າສູ່ຟັງ ໄດ້ເຫັນຄວາມບາບຂອງຊາຍທີ່ຮັ່ງມີແລະໄດ້ສັ່ງ

ເກດເຫັນຄວາມຈິງຝ່າຍວິນຍານອີກນຳ. ຫລັງຈາກນາໂຊສັດດາວິດໄດ້ເວົ້າອອກມາວ່າແມ່ນຫຍັງຄືສິ່ງທີ່ຖືກຕ້ອງ ນາທານກໍໄດ້ນຳນາໂຊສັດດາວິດເຂົ້າໄປສູ່ເຣື່ອງນັ້ນ ແລະໄດ້ຊີ້ໃຫ້ນາໂຊສັດດາວິດເຫັນເຫດການທີ່ກົງກັບຊີວິດຂອງເພິ່ນວ່າ, "ທ່ານນັ້ນແຫລະຄືຊາຍທີ່ຮັ່ງມີຄົນນັ້ນ" ແລ້ວນາທານກໍໄດ້ເພີ້ມລາຍລະອຽດຂອງຄວາມບາບທີ່ເພິ່ນໄດ້ກະທຳ..... ແລ້ວນາໂຊສັດດາວິດໄດ້ເວົ້າກັບນາທານວ່າ, "ເຮົາໄດ້ເຮັດບາບຕໍ່ອົງພຣະຜູ້ເປັນເຈົ້າແລ້ວ" ຕໍ່ມາອີກນາໂຊສັດດາວິດໄດ້ເວົ້າວ່າຊາຍທີ່ຮັ່ງມີຄວນໄດ້ຮັບໂທດເຖິງຕາຍ. ແລະຈະເຫັນວ່າໂທດນັ້ນໄດ້ສະທ້ອນມາສູ່ຄອບຄົວຂອງດາວິດເອງ.

ເຣື່ອງໃນພຣະຄັມພີເຣື່ອງນີ້ໄດ້ຊີ້ໃຫ້ເຮົາເຫັນເຖິງຄວາມໂດດເດັ່ນຂອງການເລົ່າເຣື່ອງເຈາະໃຈ ເພາະວ່າເມື່ອຜູ້ຟັງໄດ້ຍິນຈາກພຣະຄັມພີແລ້ວກໍເກີດຄວາມຮູ້ສຶກວ່າຕົນເອງໄດ້ຮ່ວມຢູ່ໃນເຣື່ອງນັ້ນ ດັ່ງນັ້ນເຂົາເຈົ້າຈຶ່ງມີຄວາມເຂົ້າໃຈອັນເລິກເຊິ່ງພ້ອມທີ່ຈະສົນທະນາແລກປ່ຽນຄວາມຄິດເຫັນ ເມື່ອເບິ່ງເຂົ້າໄປໃນເຣື່ອງເຂົາເຈົ້າຈະພົບຂໍ້ມູນຝ່າຍວິນຍານຊຶ່ງກ່ຽວຂ້ອງກັບບຸກຄົນທີ່ຢູ່ໃນເຣື່ອງ ເຂົາເຈົ້າຈຶ່ງສາມາດນຳມາໂອ້ລົມສົນທະນາຕໍ່ໄປໄດ້ ຊຶ່ງເຮົາເອີ້ນການຄົ້ນພົບນີ້ວ່າ "ຂໍ້ສັງເກດຝ່າຍວິນຍານ" ຫລື "ຄົ້ນພົບຂຸມຊັບຝ່າຍວິນຍານ."

ຫລັງຈາກທີ່ຜູ້ຟັງໄດ້ໂອ້ລົມໃນຊ່ວງໂອ້ລົມສົນທະນາ ແລະແບ່ງປັນສິ່ງທີ່ເຂົາເຈົ້າເຫັນຈາກບຸກຄົນທີ່ຢູ່ໃນເຣື່ອງ ຜູ້ເລົ່າຈຶ່ງຊວນຜູ້ຟັງໃຫ້ເຂົ້າໄປໃນເຣື່ອງ ເມື່ອເຂົາເຈົ້ານຳຕົວເອງເຂົ້າໄປໃນເຣື່ອງແລະໄດ້ພິຈາຣະນາວ່າ ຄົນໃນສມັຍປັດຈຸບັນໄດ້ພົບກັບການທ້າທາຍແລະມີໂອກາດເໝືອນກັບບຸກຄົນທີ່ຢູ່ໃນເຣື່ອງຢ່າງໃດ ຜູ້ທີ່ເລົ່າເຣື່ອງຈະຕັ້ງຄຳຖາມເພື່ອຊ່ວຍໃຫ້ຜູ້ຟັງຄິດເຖິງສິ່ງທີ່ເຂົາເຈົ້າໄດ້ສັງເກດເຫັນແລະຫາວິທີທາງທີ່ຈະນຳໄປໃຊ້ໃນຊີວິດຂອງຕົນ.

ສິ່ງທີ່ໜ້າສົນໃຈນັ້ນແມ່ນພວກເຮົາໄດ້ພົບວ່າ ໃນຣະຫວ່າງໂອ້ລົມສົນທະນາເຖິງຂໍ້ສັງເກດຝ່າຍວິນຍານນັ້ນ ຫລາຍຄັ້ງພຣະວິນຍານບໍຣິສຸດໄດ້ເວົ້າກັບເຂົາເຈົ້າແລ້ວໂດຍທາງສ່ວນຕົວໃນການເລົ່າເຣື່ອງເຈາະໃຈ ພວກເຮົາຈຶ່ງເອີ້ນສິ່ງນີ້ວ່າ, "ການນຳໄປໃຊ້ໃນຊີວິດຝ່າຍວິນຍານ."

ແມ່ນຫຍັງແລະແມ່ນໃຜເຮັດໃຫ້ສິ່ງເຫລົ່ານີ້ເກີດຂຶ້ນ?

ບໍ່ວ່າຄົນໃດຄົນນຶ່ງຈະຮູ້ຈັກພຣະເຈົ້າເປັນການສ່ວນຕົວມາເທິ່ງນານເທົ່າໃດກໍຕາມ ບໍ່ວ່າລາວຈະມີການສຶກສາພຣະຄັມພີມາຢ່າງໃດ ມີທາງດຽວທີ່ຈະເຂົ້າໃຈພຣະຄັມພີໄດ້ນັ້ນກໍຄືຕ້ອງມີຄວາມສັມພັນກັບພຣະເຈົ້າໂດຍທາງພຣະວິນຍານ ພຣະຄັມພີໄດ້ບັນທຶກຂ່າວສານຝ່າຍວິນຍານໄວ້ ດັ່ງນັ້ນການທີ່ຈະເຂົ້າໃຈຄວາມຈິງຝ່າຍວິນຍານທີ່ບັນທຶກໄວ້ໃນພຣະຄັມພີກໍຈະຕ້ອງໄດ້ຮັບການຊີ້ນຳ ການສອນຈາກພຣະວິນຍານບໍຣິສຸດ.

ຜູ້ທີ່ເຊື່ອໃນພຣະເຢຊູຄຣິດຈຳນວນຫລວງຫລາຍທີ່ປ່ອຍໃຫ້ຄົນອື່ນສອນພຣະຄັມພີໃຫ້ເຂົາເຈົ້າ ບັນດາຜູ້ທີ່ໄປໂບດກໍໃຫ້ສິດຍາພິບານບອກຄວາມຈິງຝ່າຍວິນຍານໃຫ້ເຂົາເຈົ້າ ຫລາຍຄົນໄດ້ເຂົ້າໂຮງຮຽນພຣະຄຣິສຕະທັມຄັມພີເພື່ອໃຫ້ມີຄວາມຮູ້ຫລາຍຂຶ້ນ ແມ່ນແຕ່ສິດຍາພິບານເອງກໍຕ້ອງໄປໂຮງຮຽນວິທຍາລັຍພຣະຄັມພີເພື່ອສຶກສາຮ່ຳຮຽນແລະເພື່ອຈະໄດ້ຮັບແຮງບັນດານຈາກປຶ້ມແນະນຳ ປຶ້ມອະທິບາຍພຣະຄັມພີ ບໍ່ພຽງແຕ່ເທົ່ານັ້ນ ບັນດາຜູ້ທີ່ເຊື່ອຍັງພາກັນໄປຮ່ວມກອງປະຊຸມ ຮ່ວມການຝຶກອົບຮົມເພື່ອຈະໄດ້ຂໍ້ມູນໃໝ່ໆ ເຂົາເຈົ້າໄດ້ສຶກສາຮ່ຳຮຽນຈາກນັກຂຽນຫລາຍຄົນເພື່ອເພີ້ມພູນຄວາມເຂົ້າໃຈ.

ແທ້ຈິງແລ້ວທີ່ກ່າວມານັ້ນກໍມີຄຸນຄ່າດີ ແຕ່ເຮົາມັກຈະເບິ່ງຂ້າມວິທີການອັນດີເລີດທີ່ຈະຊ່ວຍໃຫ້ເຮົາເຂົ້າໃຈພຣະຄັມ ພີ ຊຶ່ງເປັນຂອງຂວັນທີ່ພຣະເຈົ້າໄດ້ປະທານໃຫ້ແກ່ເຮົາ ຂອງຂວັນນັ້ນແມ່ນຫຍັງກັນແທ້? ຈົ່ງສັງເກດເບິ່ງຈາກເຣື່ອງຕໍ່ ໄປນີ້;

ຫລັງຈາກພວກອັຄສາວົກໄດ້ຢູ່ນຳພຣະເຢຊູແລະໄດ້ຮຽນຮູ້ຈາກພຣະອົງເຖິງ 3 ປີ ພວກເພິ່ນກໍໄດ້ຍິນສິ່ງທີ່ເຮັດໃຫ້ ພວກເພິ່ນຕົກໃຈ ເພາະພຣະເຢຊູກຳລັງຈະຈາກພວກເພິ່ນໄປ ພຣະອົງເວົ້າກັບພວກອັຄສາວົກວ່າ, "ຢ່າໃຫ້ໃຈຂອງ ທ່ານທັງຫລາຍຫວຸ້ນວາຍໄປ, ຢ່າຢ້ານ." ຈາກຄຳເວົ້າຂອງພຣະເຢຊູ ພວກເຮົາອາດຈະເຫັນຄວາມຮູ້ສຶກຂອງພວກ ສາວົກແລ້ວແມ່ນບໍ? ແມ່ນແລ້ວ, ພວກສາວົກພາກັນຢ້ານ ເພາະວ່າພຣະອາຈານທີ່ແສນດີຜູ້ທີ່ສັ່ງສອນພວກເພິ່ນກຳ ລັງຈະຈາກໄປ ຈະບໍ່ໄດ້ຢູ່ນຳພວກເພິ່ນອີກຕໍ່ໄປ ແລ້ວແມ່ນໃຜຈະເປັນຜູ້ເລົ້າໂລມໃຈພວກເພິ່ນ? ໃຜຈະເປັນຜູ້ສອນ? ແຕ່ໃນຕອນສຸດທ້າຍນັ້ນພຣະເຢຊູໄດ້ເວົ້າກັບພວກເພິ່ນໃຫ້ໝັ້ນໃຈວ່າພວກເພິ່ນຈະບໍ່ຢູ່ໂດດດ່ຽວດຽວດາຍ ພຣະອົງ ສັນຍາວ່າ ຈະມີພຣະຜູ້ຊ່ວຍອົງນຶ່ງຈະເປັນຜູ້ສອນພວກເພິ່ນ ຈະຢູ່ນຳພວກເພິ່ນທຸກໆ ວັນ.

"ແຕ່ພຣະຜູ້ຊ່ວຍຄືພຣະວິນຍານບໍຣິສຸດ ທີ່ພຣະບິດາຈະຊົງໃຊ້ມາໃນນາມຂອງເຮົາ ພຣະອົງນັ້ນແຫລະຈະສອນທ່ານ ທັງຫລາຍທຸກໆ ສິ່ງ ແລະຈະເຕືອນພວກທ່ານໃຫ້ລະນຶກເຖິງທຸກສິ່ງທີ່ເຮົາໄດ້ກ່າວກັບພວກທ່ານທັງຫລາຍແລ້ວນັ້ນ"
ໂຢຮັນ 14:26

"ແຕ່ເມື່ອພຣະອົງນັ້ນຄືພຣະວິນຍານແຫ່ງຄວາມຈິງຈະສະເດັດມາແລ້ວ ພຣະອົງຈະນຳທ່ານທັງຫລາຍໄປສູ່ຄວາມຈິງ ທັງໝົດ ເພາະພຣະອົງຈະບໍ່ກ່າວແຕ່ລຳພັງຂອງພຣະອົງເອງ ແຕ່ພຣະອົງຊົງໄດ້ຍິນສິ່ງໃດກໍຈະຊົງກ່າວສິ່ງນັ້ນ,"
ໂຢຮັນ 16:3

ແຫລ່ງທີ່ຈະຊ່ວຍໃຫ້ເຂົ້າໃຈພຣະຄຳຂອງພຣະເຈົ້າກໍຄືອົງພຣະວິນຍານບໍຣິສຸດ ເປັນຂອງປະທານທີ່ອົງພຣະເຢຊູໄດ້ ມອບໃຫ້ແກ່ເຮົາ ແລະພຣະເຈົ້າກໍຊົງອະທິບາຍວ່າພຣະວິນຍານຈະເປັນຜູ້ສອນຄວາມຈິງຝ່າຍວິນຍານໃຫ້ແກ່ພວກ ເຮົາແນວໃດແດ່.

"ດັ່ງທີ່ມີຄຳຂຽນໄວ້ໃນພຣະຄັມພີວ່າ, ສິ່ງທີ່ຕາບໍ່ໄດ້ເຫັນ ຫູບໍ່ໄດ້ຍິນ ແລະສິ່ງທີ່ມະນຸດຄຶດບໍ່ອອກ ຄືສິ່ງທີ່ພຣະເຈົ້າໄດ້ ຊົງຈັດແຈງໄວ້ສຳລັບຄົນທີ່ຮັກພຣະອົງ, ແຕ່ພຣະເຈົ້າໄດ້ຊົງສຳແດງສິ່ງເຫລົ່ານັ້ນແກ່ເຮົາທັງຫລາຍທາງພຣະວິນຍານ ເພາະວ່າພຣະວິນຍານຊົງຢັ່ງຮູ້ທຸກສິ່ງ ແມ່ນເປັນຄວາມເລິກລັບຂອງພຣະຈົ້າ"

ດ້ວຍວ່າມີໃຜໜໍ່ອາດຈະຮູ້ຄວາມຄິດຂອງມະນຸດໄດ້ ເວັ້ນແຕ່ຈິດວິນຍານພາຍໃນມະນຸດຜູ້ນັ້ນເອງ ດັ່ງນັ້ນແຫລະ ພຣະທັຍຂອງພຣະເຈົ້າບໍ່ມີຜູ້ໃດຮູ້ໄດ້ ເວັ້ນແຕ່ພຣະວິນຍານຂອງພຣະເຈົ້າເທົ່ານັ້ນ. ເຮົາທັງຫລາຍບໍ່ໄດ້ຮັບວິນຍານ ຂອງໂລກ ແຕ່ໄດ້ຮັບພຣະວິນຍານຊຶ່ງມາຈາກພຣະເຈົ້າ ເພື່ອເຮົາທັງຫລາຍຈະໄດ້ຮູ້ເຖິງສິ່ງຕ່າງໆທີ່ພຣະເຈົ້າໄດ້ຊົງ ໂຜດປະທານແກ່ພວກເຮົານັ້ນ ເຮົາບໍ່ໄດ້ກ່າວສິ່ງເຫລົ່ານີ້ດ້ວຍຖ້ອຍຄຳຊຶ່ງປັນຍາຂອງມະນຸດສອນໄວ້ ແຕ່ດ້ວຍຖ້ອຍ ຄຳຊຶ່ງພຣະວິນຍານໄດ້ຊົງສັ່ງສອນ ຄືເຮົາໄດ້ອະທິບາຍຄວາມໝາຍຂອງເຣື່ອງຝ່າຍວິນຍານໃຫ້ຄົນທີ່ມີພຣະວິນຍານ ຟັງ
ແຕ່ມະນຸດທີ່ມີຈິດໃຈທັມມະດາຈະຮັບສິ່ງເຫລົ່ານັ້ນ ຊຶ່ງເປັນຂອງພຣະວິນຍານແຫ່ງພຣະເຈົ້າບໍ່ໄດ້ ເພາະວ່າທີ່ຈະ

ເຂົ້າໃຈສິ່ງເຫລົ່ານັ້ນໄດ້ກໍຕ້ອງອາສັຍພຣະວິນຍານ ແຕ່ຜູ້ທີ່ຢູ່ຝ່າຍພຣະວິນຍານກໍສັງເກດຮູ້ສິ່ງສາຣະພັດໄດ້ ແຕ່ບໍ່ມີ ໃຜສັງເກດຮູ້ໃຈຜູ້ນັ້ນໄດ້ "ດ້ວຍວ່າຜູ້ໃດໜໍ ໄດ້ຮູ້ຈັກພຣະທັຍຂອງອົງພຣະຜູ້ເປັນເຈົ້າ ຈຶ່ງຈະສັ່ງສອນພຣະອົງໄດ້" ແຕ່ຝ່າຍເຮົາທັງຫລາຍກໍມີພຣະທັຍຂອງພຣະຄຣິດ." 1 ໂກຣິນໂທ 2:9-16

ຫ້ອງຮຽນຂອງພຣະວິນຍານໄດ້ວ່າງເປົ່າມາເປັນເວລາດົນນານ ດັ່ງນັ້ນໃຫ້ພວກເຮົາມາຮຽນກັບພຣະອົງອີກເທາະ ຍົກ ມືຂຶ້ນຕັ້ງຄຳຖາມ ແລະໃນຂະນະທີ່ເຮົາສຶກສາໃນແຕ່ລະເຣື່ອງ ເຮົາສາມາດທູນຂໍຈາກພຣະອົງໄດ້ເພື່ອໃຫ້ເຮົາມີສະຕິ ປັນຍາແລະເຂົ້າໃຈໃນເຣື່ອງນັ້ນໆ ແລະເຊື່ອວ່າອົງພຣະວິນຍານຈະຊົງປະທານຄຳຕອບໃຫ້ແກ່ພວກເຮົາ.

✝

ບົດທີ 3
ການເລົ່າເຣື່ອງເຈາະໃຈ ໂດຍສລຸບໃນນຶ່ງໜ້າ

ການຫຍໍ

ຄວາມສາມາດໃນການເລົ່າເຣື່ອງເຈາະໃຈປະກອບດ້ວຍການຮຽນຮູ້ເຣື່ອງໃນພຣະຄັມພີ
ແລະການຄົ້ນພົບຂຸມຊັບຝ່າຍວິນຍານທີ່ຢູ່ໃນເຣື່ອງ ລວມໄປເຖິງການຕັ້ງຄຳຖາມແບບປາກເປົ່າ
ເພື່ອເຮັດໃຫ້ການໂອ້ລົມສົນທະນາແລກ ປ່ຽນເຣື່ອງລາວນັ້ນໆ ງ່າຍຂຶ້ນ.

ການນຳສເນີ

ມີຢູ່ສອງຂັ້ນຕອນ ທຳອິດແມ່ນການເລົ່າເຣື່ອງ ຕ່ຈາກນັ້ນແມ່ນການຄົ້ນຫາຂຸມຊັບ

- **<u>ຂັ້ນຕອນທີນຶ່ງ</u>**; ເລົ່າເຣື່ອງສາມເທື່ອ ເພື່ອໃຫ້ຜູ້ຟັງຄຸ້ນເຄີຍກັບເນື້ອຫາຂອງເຣື່ອງນັ້ນ ຄວາມສາມາດທີ່ຜູ້ເລົ່າຕ້ອງ
ການນັ້ນແມ່ນ ການເລົ່າເຣື່ອງໃຫ້ໄດ້ດີ ໜູນໃຈໃຫ້ມີຜູ້ອາສາເລົ່າເຣື່ອງລົ້ມຄືນ
ແລະທົບທວນເນື້ອເຣື່ອງໃຫ້ເປັນທີ່ໜ້າສົນໃຈ.

1. **ເລົ່າເຣື່ອງ;** ຜູ້ເລົ່າເຣື່ອງ ເລົ່າຄັ້ງທຳອິດເພື່ອໃຫ້ຜູ້ຟັງເຫັນພາບ ແລະມີຄວາມຮູ້ສຶກຕ່ເຣື່ອງທີ່ເລົ່າ
2. **ອາສາສມັກ;** ຜູ້ເລົ່າຮ້ອງຂໍໃຫ້ຄົນນຶ່ງອາສາສມັກເລົ່າເຣື່ອງລົ້ມຄືນ ຫລືຂໍໃຫ້ຜູ້ຟັງຈັບຄູ່ປ່ຽນຜຽນເລົ່າເຣື່ອງລົ້ມຄືນ
ສູ່ກັນຟັງ (ຜູ້ຟັງຈະເຫັນວ່າ ຄູ່ຂອງລາວເລົ່າເຣື່ອງໄດ້ຢ່າງຖືກຕ້ອງຫລືບ່ ຊຶ່ງຕອນນີ້ຈະຊ່ອຍໃຫ້ຜູ້ຟັງຈື່ເຣື່ອງໄດ້ດີ
ຂຶ້ນ)
3. **ນຳຕາມເຣື່ອງ;** ຜູ້ເລົ່າເຣື່ອງ ເລົ່າເປັນເທື່ອທີສາມ ໃນຕອນນີ້ໃຫ້ຜູ້ຟັງເຂົ້າມາມີສ່ວນ ເພື່ອຊ່ອຍທົບທວນເຣື່ອງ
ເພື່ອໃຫ້ເຣື່ອງຄົບສົມບູນໂດຍການຊ່ອຍເຫລືອຈາກຜູ້ຟັງ (ຜູ້ເລົ່າຕັ້ງຄຳຖາມ, ຍະວ່າງໃຫ້ຜູ້ຟັງເພີ້ມເຕີມໃສ່ ແລະ
ເວົ້າກົງກັນຂ້າມ ຫລືທຳທ່າເວົ້າຜິດ)

- **<u>ຂັ້ນຕອນທີສອງ</u>;** ຜູ້ເລົ່າເຣື່ອງນຳພາຜູ້ຟັງເຂົ້າໄປສູ່ຂຸມຊັບຂອງເຣື່ອງ ຜູ້ເລົ່າຈະບ່ໃຫ້ຜູ້ຟັງເລົ່າລົ້ມຄືນອີກ ກ່ອນ
ຈະຄົ້ນຫາຂຸມຊັບແຕ່ລະຕອນ ຜູ້ເລົ່າຈະເລົ່າຕອນນັ້ນໆ ລົ້ມຄືນ ເພື່ອຈະພາຜູ້ຟັງຄົ້ນຫາຂຸມຊັບຝ່າຍວິນຍານ

1. **ສັງເກດຝ່າຍວິນຍານ;** ຊຶ່ງເອີ້ນອີກຢ່າງນຶ່ງວ່າ ຄົ້ນຫາຂຸມຊັບຝ່າຍວິນຍານ ທຳອິດຜູ້ເລົ່າຈະໜູນໃຈໃຫ້ຜູ້ຟັງຄົ້ນ
ພົບຂໍ້ມູນຝ່າຍວິນຍານໂດຍໃຊ້ "ຄຳຖາມຂອງຜູ້ໃຫ້ຄຳປຶກສາທີ່ສລາດ" (ໃຫ້ຜູ້ຟັງສັງເກດເບິ່ງ ການເວົ້າ, ການ
ກະທຳ, ທາງເລືອກ, ທາງເລືອກອື່ນ, ຜົນສະທ້ອນ, ຜົນຕາມມາ ຂອງຄົນໃນເຣື່ອງ ຊຶ່ງເຮົາເອີ້ນວ່າການຄົ້ນຫາ
ຂຸມຊັບຝ່າຍວິນຍານ)
2. **ການນຳໃຊ້ໃນຊີວິດຝ່າຍວິນຍານ;** ເມື່ອພົບກັບຂຸມຊັບຝ່າຍວິນຍານໃນແຕ່ລະຕອນຂອງເຣື່ອງແລ້ວ ກໍແມ່ນການ
ນຳມາໃຊ້ໃນຊີວິດຝ່າຍວິນຍານ ໂດຍເລືອກເອົາຕອນທີ່ເຫັນວ່າສຳຄັນທີ່ພົບເຫັນໃນການຄົ້ນຫາຂຸມຊັບແລະນຳ
ມາປຽບທຽບໃສ່ກັບເຫດການປັດຈຸບັນ ວາງຄຳຖາມເພື່ອໃຫ້ຜູ້ຟັງຕອບ ເຮົາເອີ້ນສິ່ງນີ້ວ່າການນຳມາໃຊ້ໃນຊີວິດ
ຝ່າຍວິນຍານ.

ບົດທີ 4
ວິທີຫຽນເລົ່າເຣື່ອງເຈາະໃຈ

ວິທີເລົ່າເຣື່ອງເຈາະໃຈ ຕ້ອງມີຄວາມສາມາດສາມຢ່າງດັ່ງລຸ່ມນີ້;

I. ຮູ້ວິທີເລືອກເຣື່ອງ, ຮຽນຮູ້ເຣື່ອງແລະເລົ່າເຣື່ອງໄດ້ດີ
II. ຮູ້ວິທີຄົ້ນຫາຂຸມຊັບຝ່າຍວິນຍານໃນເຣື່ອງ
III. ຮູ້ວິທີການສ້າງແລະຕັ້ງຄຳຖາມຢ່າງສລາດ

ຄວາມສາມາດທີ I: ຮູ້ວິທີເລືອກເຣື່ອງ, ຮຽນຮູ້ເຣື່ອງແລະເລົ່າເຣື່ອງໄດ້ດີ

ໃນຂະນະທີ່ທ່ານດຳເນີນໄປຕາມວິທີການຂອງການເລົ່າເຣື່ອງເຈາະໃຈນັ້ນ ສິ່ງທີ່ຈະຕ້ອງຕິດຕາມເໜືອສິ່ງອື່ນໃດນັ້ນ ແມ່ນການໄວ້ວາງໃຈໃນພຣະຄຳຂອງພຣະເຈົ້າ ຕ້ອງເຊື່ອວ່າການເລົ່າເຣື່ອງຈາກພຣະຄັມພີຈະສິ່ງຜົນດີທີ່ສຸດ ເມື່ອເຮົາເລົ່າເຣື່ອງທີ່ພຣະເຈົ້າຊົງບັນທຶກໄວ້ຢ່າງຕົງໄປຕົງມາ ເມື່ອທ່ານເລົ່າເຣື່ອງຈະຕ້ອງບໍ່ເພີ້ມເຕີມຂໍ້ມູນໃດໆ ແລະບໍ່ຕັດອອກຈາກເຣື່ອງທີ່ທ່ານເລົ່າ ບໍ່ເທສນາ ບໍ່ສອນ ບໍ່ອະທິບາຍໃດໆ ທັງສິ້ນ

ເລືອກເຣື່ອງຈາກພຣະຄັມພີ

ໃນບາງໂອກາດທ່ານອາດຈະກຳນົດໄວ້ວ່າຈະເລົ່າເຣື່ອງໃດ ແຕ່ຖ້າທ່ານຕ້ອງເລືອກເຣື່ອງດ້ວຍຕົນເອງ ຂໍໃຫ້ກະທຳດັ່ງຕໍ່ໄປນີ້;

1. ເມື່ອທ່ານບໍ່ມີໂອກາດຫລາຍພໍ ເພື່ອຈະເລົ່າເຣື່ອງກັບກຸ່ມທີ່ສະເພາະເຈາະຈົງ ໃຫ້ເລືອກເຣື່ອງທີ່ມີເນື້ອຫາທີ່ເໝາະກັບກຸ່ມອາຍຸຂອງຜູ້ຟັງ ເຣື່ອງທີ່ມີຄວາມຍາວເໝາະສົມກັບເວລາທີ່ມີຢູ່ ອະທິຖານຂໍການຊົງນຳຈາກພຣະວິນຍານບໍຣິສຸດທີ່ຈະນຳພາໃນເຣື່ອງທີ່ມີຄວາມຈິງທີ່ "ຜູ້ຟັງ" ຄວນຈະໄດ້ຮັບຟັງ.

2. ເມື່ອພຣະເຈົ້າປະທານພຣະຄັມພີໃຫ້ ພຣະອົງຊົງໃຫ້ຜູ້ຊອບທັມຂອງພຣະອົງບັນທຶກເຣື່ອງຕ່າງໆ ເປັນປະວັດສາດຢ່າງຫລວງຫລາຍໃຫ້ທ່ານສາມາດເລືອກໄດ້. ພຣະອົງຊົງເລືອກເຣື່ອງຕ່າງໆ ທີ່ເໝາະສົມກັບມະນຸດດ້ວຍພຣະປັນຍາຂອງພຣະອົງ ພຣະເຈົ້າຊົງເປັນຜູ້ສ້າງມະນຸດຂຶ້ນມາ ພຣະອົງຈຶ່ງຊົງຮູ້ເຖິງຄວາມຕ້ອງການຂອງພວກເຂົາ. ນອກຈາກນັ້ນ, ໃນຖານະທີ່ພຣະເຈົ້າຊົງມີປັນຍາອັນສູງສຸດ ພຣະອົງຊົງຮູ້ເຖິງວັດທະນະທັມຂອງກຸ່ມຕ່າງໆ ແລະຣະບົບຄວາມເຊື່ອທີ່ມະນຸດຄິດຄົ້ນຂຶ້ນມາ.

ພຣະຄັມພີຈຶ່ງຢູ່ເໜືອວັດທະນະທັມ ໝາຍເຖິງເນື້ອຫາໃນພຣະຄັມພີສູງສົ່ງກວ່າວັດທະນະທັມ ສາຍເຫດທີ່ເວົ້າແບບນີ້ກໍເພື່ອໃຫ້ທຸກຄົນທີ່ເລົ່າເຣື່ອງຮູ້ວ່າ ພຣະເຈົ້າຊົງຫຽມຊຸມຊັບຝ່າຍວິນຍານໄວ້ໃນທຸກເຣື່ອງເພື່ອທຸກຄົນຈະບໍ່ຕ້ອງກະວົນກະວາຍໃຈຢ້ານວ່າຈະເລືອກເຣື່ອງ "ຜິດ" ເພາະໃນຂະນະທີ່ທ່ານເລົ່າເຣື່ອງທີ່ທ່ານໄດ້ເລືອກນັ້ນ ພຣະວິນຍານຈະຊ່ອຍເປີດເຜີຍສິ່ງທີ່ພຣະອົງປະສົງຈະເວົ້າກັບແຕ່ລະຄົນດ້ວຍພຣະອົງເອງ.

3. ໃນໂປຣແກຣມ "ເລົ່າເຣື່ອງເຈາະໃຈ" ຈະບໍ່ມີການແຍກປະເພດວ່າເຣື່ອງນີ້ສຳລັບການປະກາດ, ອີກເຣື່ອງນຶ່ງສຳລັບການສ້າງສາວົກແລະເຣື່ອງອື່ນໆ ກໍແຍກເປັນປະເພດຂອງໃຜລາວ ເພາະເຮົາພົບວ່າພຣະວິນຍານບໍຣິສຸດຊົງເຄື່ອນໄຫວຜ່ານເຣື່ອງທີ່ເລົ່າທຸກໆ ເຣື່ອງເພື່ອນຳຄົນທັງຫລາຍມາເຊື່ອແລະໄວ້ວາງໃຈໃນພຣະເຈົ້າ.

4. ຖ້າຫາກທ່ານມີໂອກາດເລົ່າເຣື່ອງຫລາຍໆ ເທື່ອກັບກຸ່ມຜູ້ຟັງກຸ່ມເດີມແລະມີເວລາພຽງພໍ ກໍຄວນຈະເລົ່າເຣື່ອງເລີ້ມແຕ່ປະຖົມມະການ ເພາະເຣື່ອງໃນພຣະຄັມພີນັ້ນມັກຈະເກີດຂຶ້ນຕໍ່ເນື່ອງກັນມາ ດັ່ງນັ້ນຈຶ່ງເຫັນວ່າເປັນການດີຖ້າຫາກເລົ່າເຣື່ອງຕໍ່ໆ ກັນລຽງຕາມເວລາທີ່ເກີດຂຶ້ນ.

5. ເມື່ອທ່ານເລົ່າເຣື່ອງຫລືອັດສຽງໄວ້ ຖ້າຫາກທ່ານຮູ້ສຶກວ່າພຣະເຈົ້າຊົງນຳກໍອາດຈະຂ້າມບາງເຣື່ອງໄດ້ ແຕ່ຖ້າເຮັດເຊັ່ນນັ້ນອາດຈະຕ້ອງມີຄຳນຳຂອງເຣື່ອງກໍຈະເປັນການດີ ເພາະຈະເຮັດໃຫ້ເຣື່ອງໄດ້ຕໍ່ເນື່ອງກັນໄປຢ່າງລາບລື້ນ ເຖິງແມ່ນບໍ່ໄດ້ຕັດເຣື່ອງໃດອອກໄປກໍຕາມ ກໍຄວນຈະລົ້ມຄືນເຣື່ອງເດີມທີ່ເກີດຂຶ້ນກ່ອນຈັກໜ້ອຍນຶ່ງເພື່ອເປັນການເຕືອນຄວາມຈຳໃຫ້ກັບຜູ້ຟັງ ຫລືທ່ານອາດຈະຂໍໃຫ້ຄົນທີ່ເຄີຍຟັງຊ່ວຍເລົ່າເຣື່ອງທີ່ຜ່ານມາກໍຈະເປັນການດີ.

6. ຖ້າຫາກເຣື່ອງນັ້ນເປັນເຣື່ອງທີ່ຍາວມີພຣະຄັມພີເຖິງ 15 ຂໍ້ ທ່ານສາມາດແຍກອອກເປັນສອງເຣື່ອງກໍໄດ້ເພື່ອຊ່ວຍໃຫ້ຜູ້ຟັງໄດ້ຮຽນຮູ້ແລະສົນທະນາທັງສອງເຣື່ອງໄດ້ດີ ການແບ່ງເຣື່ອງອອກເປັນຫລາຍເຣື່ອງຄວນຫາຈຸດທີ່ສາມາດຢຸດຢ່າງເໝາະສົມ ບໍ່ຈຳເປັນຕ້ອງແບ່ງໃຫ້ເຄິ່ງກັນກໍໄດ້ ຍົກຕົວຢ່າງເຊັ່ນ; ເ ຣື່ອງຂອງນາອາມານໃນ 2 ກະສັດ 5:1-27 ຊຶ່ງເປັນເຣື່ອງທີ່ເໝາະສົມຫຼາຍກັບການເລົ່າເຣື່ອງເຈາະໃຈ ຖ້າທ່ານຫາກມີເວລາເຖິງ 3 ຊົ່ວໂມງໃນການສົນທະນາ ແທ້ຈິງແລ້ວ ໃນເຣື່ອງນີ້ເຮົາສາມາດແບ່ງອອກເປັນສີ່ເຣື່ອງ(ຕອນ)ໄດ້ດັ່ງນີ້ 1-5, 6-14, 15-19 ແລະ 20-27.

7. ບາງເຣື່ອງກໍມີຊື່ຕ່າງໆ ຢ່າງຫລວງຫລາຍເຊັ່ນ ຊື່ເມືອງ ຊື່ສະຖານທີ່ ຊື່ຄົນ ຖ້າເຫັນວ່າເຣື່ອງນັ້ນເປັນເຣື່ອງທີ່ຍາວເຮົາກໍເລີ້ມຕົ້ນທີ່ລາຍການຂອງຊື່ເປັນເຣື່ອງທີນຶ່ງ ຕ່ຈາກນັ້ນເມື່ອເລົ່າເຣື່ອງຕອນທີສອງໃຫ້ເວົ້າເຖິງລາຍການຂອງຊື່ເຫລົ່ານັ້ນກ່ອນເຊັ່ນ "ປະຊາຊົນຈາກເມືອງຕ່າງໆ 14 ເມືອງພາກັນມາຊຸມນຸມກັນ" ຫລັງຈາກຈົບລາຍການຊື່ແລ້ວໃຫ້ເລົ່າເຣື່ອງທີສອງຕໍ່ກັນໃນທັນທີ.

ການນຳສເນີຂໍ້ມູນແບບນີ້ ແມ່ນທ່ານໄດ້ເລົ່າເຣື່ອງໃນພຣະຄັມພີຢ່າງຕິງໄປຕິງມາ ຢ່າງສັດຊື່ ຢ່າງຖືກຕ້ອງສຳລັບຜູ້ທີ່ຫາກໍໄດ້ຮັບການຝຶກອົບຮົມໃໝ່ຮວມທັງຜູ້ຟັງນັ້ນ ການແບ່ງເຣື່ອງອອກເປັນຕອນໆ ຈະເຮັດໃຫ້ເຂົາເຈົ້າຈື່ເຣື່ອງໄດ້ງ່າຍຂຶ້ນ ເມື່ອຜູ້ເລົ່າມີຄວາມສາມາດເລົ່າເຣື່ອງດີຂຶ້ນ ລາວກໍສາມາດຮວມເອົາເຣື່ອງເຫລົ່ານັ້ນເປັນເຣື່ອງດຽວກັນໄດ້.

ເອົາລະ...ເມື່ອເຮົາຮູ້ເຖິງວິທີການຄັດເອົາເຣື່ອງມາເລົ່າແລ້ວ ໃຫ້ເຮົາເບິ່ງຕໍ່ໄປອີກວ່າເຮົາຈະເລົ່າເຣື່ອງນັ້ນຢ່າງໃດ.

1. **ອະທິຖານ**ທູນຂໍພຣະເຈົ້າໃຫ້ເຮົາຈື່ຈຳແລະເຂົ້າໃຈເຣື່ອງນັ້ນ ສາມາດເລົ່າຕໍ່ໄດ້ຢ່າງຖືກຕ້ອງ ດ້ວຍຄວາມກະຕືລືລົ້ນ.
2. **ອ່ານເຣື່ອງ**ນັ້ນໃຫ້ຈົບລວດດຽວເທື່ອນຶ່ງກ່ອນ ໂດຍອ່ານອອກສຽງ(ຫລືຟັງຄົນອື່ນອ່ານຫລືເລົ່າ) ໃນຂະນະທີ່ອ່ານເຣື່ອງຢູ່ນັ້ນ ທ່ານອາດຈະປ່ຽນບາງຖ້ອຍຄຳ ຈາກພາສາຂຽນມາເປັນພາສາປາກເວົ້າສົນທະນາທີ່ຜູ້ຟັງເຂົ້າໃຈງ່າຍ ເຊັ່ນ "ຈິງຫລື" ປ່ຽນເປັນ "ແມ່ນແທ້ບໍ," "ສະເດັດໄປ" ປ່ຽນເປັນ "ໄດ້ໄປ" ດັ່ງນີ້ເປັນຕົ້ນ ທ່ານຕ້ອງລະວັງໃຫ້ດີເພື່ອໃຫ້ເຣື່ອງທີ່ເລົ່າຕິງກັບພຣະຄັມພີ ບໍ່ຕັດແລະບໍ່ເພີ້ມເຕີມ.

ຖ້າຫາກທ່ານສາມາດອ່ານແລະເວົ້າໄດ້ສອງພາສາ ທ່ານກໍສາມາດຮຽນຮູ້ເຣື່ອງທີ່ບໍ່ເໝືອນກັບຄົນອື່ນ ຂໍໃຫ້ທ່ານອ່ານເຣື່ອງເປັນພາສານຶ່ງກ່ອນ ຕ່ຈາກນັ້ນໃຫ້ເລ່ົາເຣື່ອງລົ້ມຄືນເປັນພາສາທີ່ທ່ານຈະນຳໄປເລ່ົາກັບຜູ້ຟັງ. ຍົກຕົວຢ່າງເຊ່ັນ; ຖ້າທ່ານຈະເລ່ົາເຣື່ອງເປັນພາສາອັງກິດ ແຕ່ທ່ານອ່ານພາສາຮິນດູໄດ້ກໍໃຫ້ອ່ານເປັນພາສາຮິນດູ ເມ່ືອເລ່ົາເຣື່ອງກໍເລ່ົາເປັນພາສາອັງກິດ. ໃນວິທີນ້ີ ເຖ່ິງແມ່ນທ່ານບໍ່ຕ້ອງການໃຊ້ຄຳນ້ັນໂດຍຕົງກໍຕາມ ແຕ່ມັນຈະຊ່ວຍທ່ານໃຫ້ຈ່ືຈຳແລະເລ່ົາເຣື່ອງໄດ້ດີ ແລະຈະເຮັດໃຫ້ທ່ານເລ່ືອກເອົາຄຳຈາກພາສາທ່ີເໝາະສົມເປັນທັມມະຊາດ.

3. **ປິດພຣະຄັມພີ, ຫລັບຕາແລະເລ່ົາເຣື່ອງອອກສຽງຈາກຄວາມຊົງຈຳ** ພຍາຍາມຈ່ືຈຳເຣື່ອງໃຫ້ຫລາຍເທ່ົາທ່ີຈະເຮັດໄດ້ ໃນຂະນະທ່ີຝຶກຊ້ອມເລ່ົາເຣື່ອງນ້ັນໃຫ້ຄິດເຖ່ິງພາບທ່ີເກ່ີດຂ້ຶນໃນເຣື່ອງນ້ັນ ຖ້າຫາກລືມເປັນບາງຕອນຫລືຈ່ືບໍ່ທັນໄດ້ດີ ກໍຢ່ານ້ອຍໃຈ ຢ່າຢຸດ ແຕ່ໃຫ້ເລ່ົາຕ່ໍໄປ ທ່ານສາມາດທ່ີຈະເພ່ີມເຕ່ີມຕອນທ່ີຂາດຫາຍຕາມພາຍຫລັງກໍໄດ້ເມ່ືອທ່ານຄິດອອກ **ນ້ີແມ່ນການເລ່ົາເຣື່ອງບໍ່ແມ່ນທ່ອງຈຳ.**

ຍົກຕົວຢ່າງ; "ພຣະເຢຊູໄດ້ພາເປໂຕ ຢາໂກໂບແລະໂຢຮັນ...." ໃນຂະນະທ່ີເລ່ົາເຣື່ອງທ່ານລືມຊ່ືທ້ັງສາມຄົນ ທ່ານສາມາດເວ້ົາວ່າ "ພຣະເຢຊູໄດ້ພາອັຄສາວົກສາມຄົນໄປ...." ເມ່ືອເລ່ົາເຣື່ອງຕ່ໍໄປ ທ່ານຄິດອອກ ຈ່ືຊ່ືທ້ັງສາມຄົນໄດ້ ແທນທ່ີທ່ານຈະເວ້ົາວ່າ "ພວກເພ່ືນ" ທ່ານກໍສາມາດເອ່ີຍຊ່ືທ້ັງສາມຄົນນ້ັນໄດ້ວ່າ, "ເປໂຕ, ຢາໂກໂບແລະໂຢຮັນ" ແລະເຮັດໃຫ້ເຣື່ອງນ້ັນຍັງຢູ່ໃນຄວາມຈ່ິງຢູ່ (ໃນຕອນນ້ີແມ່ນທ່ານກຳລັງແກ້ໄຂເຣື່ອງໃຫ້ເຂ້ົາຮູບຮອຍອ່ີກເທ່ືອນ່ຶງ ດ່ັງນ້ັນເມ່ືອທ່ານມ່ີໂອກາດເລ່ົາເຣື່ອງລົ້ມຄືນອ່ີກເທ່ືອນ່ຶງ ທ່ານກໍສາມາດທ່ີຈະຈ່ືຊ່ືທ້ັງສາມຄົນນ້ັນໄດ້ຕ່ັງແຕ່ເລ່ີມຕົ້ນເລ່ົາເຣື່ອງ)

4. **ອ່ານອອກສຽງອ່ີກເທ່ືອນ່ຶງ** ໃນຂະນະທ່ີທ່ານອ່ານ ຈ່ົງສັງເກດຂ້ໍມູນທ່ີທ່ານຢາກຈະເພ່ີມເຕ່ີມຫລືຕັດອອກເມ່ືອທ່ານເລ່ົາເທ່ືອກ່ອນນ້ັນ (ນ້ີໝາຍເຖ່ິງຂ້ໍມູນ ທ່ີເລ່ົາກ່ອນຄຳນຳ ບໍ່ແມ່ນຂ້ໍພຣະຄັມພີ) ບາງເທ່ືອເຮົາອາດຈະແປກໃຈທ່ີເຮົາສາມາດເລ່ົາເຣື່ອງໄດ້ເກ່ືອບຄົບຖ້ວນ. ຖ້າຫາກເຣື່ອງທ່ີເລ່ົາຍາວກວ່າ 12 ຫລື15 ຂ້ໍ ໃຫ້ທ່ານແບ່ງອອກເປັນສອງສ່ວນ ໃນແຕ່ລະເຣື່ອງສ່ວນຫລາຍຈະເປັນຕອນຂອງໃຜລາວເປັນທັມມະຊາດຢູ່ແລ້ວ ດ່ັງນ້ັນທ່ານອາດຈະລອງຈ່ືເຣື່ອງນ້ັນເປັນສອງຕອນ ເໝືອນກັບສາກໜັງຫລືສາກລະຄອນໃນຄວາມຄິດຂອງທ່ານ ແຕ່ຢ່າລືມວ່າທ່ານບໍ່ໄດ້ທ່ອງຈຳຂ້ໍພຣະຄັມພີ **ແຕ່ຈ່ືຈຳເຫດການໃນເຣື່ອງເປັນພາບລວມໃນຄວາມຄິດຂອງທ່ານ.**

5. ເທ່ືອນ້ີ, **ປິດພຣະຄັມພີ ຫລັບຕາແລະເລ່ົາເຣື່ອງອອກສຽງອ່ີກເທ່ືອນ່ຶງ** ການອ່ານອອກສຽງເຮັດໃຫ້ເຮົາບ່ໍສົນໃຈກັບສຽງອ່ືນໆ ທ່ີລົບກວນ ແລະຍັງຊ່ວຍໃຫ້ເຮົາຈ່ືຈຳເຣື່ອງໄດ້ດີອ່ີກ ການຫລັບຕາໃນຂະນະທ່ີຝຶກຊ້ອມເລ່ົາເຣື່ອງຈະເຮັດໃຫ້ທ່ານໄດ້ເຫັນພາບເຫດການຂອງເຣື່ອງ ເບ່ິງພາບບຸກຄົນແລະສະພາບການຕ່າງໆ ໃນຄວາມຄິດຂອງທ່ານ ເທ່ືອນ້ີໃນຂະນະທ່ີທ່ານເລ່ົາເຣື່ອງຊ້ຳອ່ີກທ່ານຈະພົບວ່າທ່ານຈ່ືເຣື່ອງໄດ້ດີກວ່າເທ່ືອທ່ຳອ່ິດ ເມ່ືອທ່ານເລ່ົາຈົບກໍເປ່ີດພຣະຄັມພີໄດ້ ແລະອ່ານອອກສຽງອ່ີກເທ່ືອເພ່ືອກວດເບ່ິງວ່າທ່ານໄດ້ເພ່ີມເຕ່ີມຫລືຕັດສ່ິງໃດອອກຫລືບ່ໍ ເຖ່ິງຈະເປັນເຣື່ອງສ້ັນໆ ກໍຕ້ອງເຮັດໃຫ້ຖ້ືກຕ້ອງ ເພາະວ່າທຸກໆສ່ວນຂອງເຣື່ອງທ່ີພຣະເຈ້ົາປະທານໃຫ້ທາງພຣະຄັມພີນ້ັນຖ່ືວ່າເປັນສ່ິງທ່ີສຳຄັນຍ່ິງ.

6. **ເລ່ືອກຖ້ອຍຄຳທ່ີຈະໃຊ້ໃນເຣື່ອງແລະຄຳລ່ົງທ້າຍຂອງເຣື່ອງ** ເມ່ືອວາງແຜນການເລ່ົາເຣື່ອງແລ້ວ ກໍຈຳເປັນຕ້ອງ

ຄິດອີກວ່າຈະເລີ້ມເຣື່ອງແລະຈົບເຣື່ອງຢ່າງໃດ ເຣື່ອງທີ່ເລືອກມານັ້ນອາດຈະຈື່ຈຳໄດ້ງ່າຍຄ້າຍຄືທາງທີ່ຊື່ເສັ້ນດຽວ ຕັ້ງແຕ່ຕົ້ນຈົນຈົບ.

7. **ເຄື່ອງໝາຍໃນໃຈ** ໃນເຣື່ອງທີ່ນຳມາເລົ່າ ບາງເທື່ອກໍມີບາງຕອນທີ່ຈື່ໄດ້ຍາກ ເຮົາມັກລືມຊື່ແລະລືມບາງສ່ວນຂອງເຣື່ອງ ດັ່ງນັ້ນເຮົາຈຶ່ງຄວນມີເຄື່ອງໝາຍໄວ້ໃນໃຈ ຫລັງຈາກທີ່ຝຶກຊ້ອມເລົ່າເຣື່ອງອີກສອງຫລືສາມເທື່ອເຮົາຈະພົບວ່າມີບາງສ່ວນທີ່ຈື່ໄດ້ຍາກ ຖ້າຫາກຊື່ແລະບາງສ່ວນຂອງເຣື່ອງໄດ້ຂາດຫາຍໄປຊ້ຳແລ້ວຊ້ຳອີກກໍສະແດງວ່າ ເຮົາຕ້ອງການເຄື່ອງໝາຍໃນໃຈທີ່ຈຸດນັ້ນ.

   ກ. ຖ້າເປັນຖ້ອຍຄຳຫລືຊື່ ຫລືລາຍລະອຽດທີ່ຈື່ໄດ້ຍາກ ໃຫ້ເຮົາອາດພາບແບບຕລົກໆ ໄວ້ໃນໃຈລອງເບິ່ງ (ທ່ານເຈີຣີ ລູກັສ ທີ່ຫລາຍຄົນຮູ້ຈັກເພິ່ນດີ ເປັນໝໍແພດທີ່ຈື່ຈຳໄດ້ດີ ໄດ້ນຳເອົາວິທີຈື່ຈຳມາເຜີຍແຜ່ແກ່ຄົນທັງຫລາຍ) ຍົກຕົວຢ່າງເຊັ່ນ; ເມື່ອເລົ່າເຣື່ອງໂຢນາ ອາດຈະຈື່ຊື່ພໍ່ຂອງໂຢນາບໍ່ໄດ້ ເພາະເປັນຊື່ທີ່ຈື່ໄດ້ຍາກຄື "ອາມິດທັຍ" ເຮົາອາດຈະພຍາຍາມຫາທາງຈື່ຊື່ຂອງລາວໂດຍຄິດເຖິງອາ(ນ້ອງສາວພໍ່)ຂອງເຮົາໄດ້ເປັນມິດກັບຄົນໄທ ກາຍມາເປັນອາມິດທັຍ ການທີ່ຄິດຕລົກໆ ແບບນີ້ອາດຈະຊ່ອຍໃຫ້ເຮົາຈື່ຊື່ທີ່ຍາກໄດ້ງ່າຍຂຶ້ນ. ຍິ່ງພາບທີ່ທ່ານຄິດແບບຕລົກໄຮ້ແກ່ນສານເທົ່າໃດ ທ່ານກໍຈະຈື່ຖ້ອຍຄຳນັ້ນໄດ້ງ່າຍຂຶ້ນເທົ່ານັ້ນ ບໍ່ວ່າທ່ານຈະເວົ້າພາສາໃດກໍຕາມ ໃຫ້ທ່ານຫາຖ້ອຍຄຳທີ່ສອດຄ່ອງກັນຫລືພາບແບບຕລົກຊວນຫົວມາຊ່ອຍໃຫ້ເຮົາຈື່ເຫດການແລະຊື່ຂອງຄົນໄດ້ດີຂຶ້ນ.

   ຂ. ບາງເທື່ອຜູ້ສອນຝຶກອົບຮົມອາດຈະບໍ່ເນັ້ນການຈື່ຊື່ ແຕ່ເຮົາສນັບສນູນໃຫ້ທ່ານເອີ່ຍຊື່ຂອງບຸກຄົນໃນເຣື່ອງ ເຖິງຈະເປັນສ່ວນທີ່ຍາກທີ່ສຸດຂອງເຣື່ອງກໍຕາມ ພຣະເຈົ້າຊົງຮູ້ດີວ່າຄົນຈຳນວນຫລາຍບໍ່ຈື່ຊື່ໄດ້ດີ ແຕ່ໃນເມື່ອພຣະເຈົ້າຊົງເລືອກທີ່ຈະໃສ່ຊື່ຫລືສະຖານທີ່ໄວ້ໃນຕອນນັ້ນ ໃນຈຸດນັ້ນ ເຮົາກໍຄວນເລົ່າຂໍ້ມູນໃນຈຸດນັ້ນຂອງເຣື່ອງນຳ.

8. **ເລົ່າເຣື່ອງແລະກວດກາຕົນເອງຈົນສາມາດເລົ່າໄດ້ຢ່າງຖືກຕ້ອງ** ຈົ່ງຍ້ຳຂັ້ນຕອນທີ່ໄດ້ກ່າວມານັ້ນອີກຈົນທ່ານຮູ້ເຣື່ອງນັ້ນເປັນຢ່າງດີ ເລົ່າເຣື່ອງອອກສຽງດັງໆ ຫລັບຕາ ຈົນທ່ານເລົ່າເຣື່ອງນັ້ນໄດ້ຢ່າງຖືກຕ້ອງ.

ຂໍໃຫ້ລະວັງຢ່າງເຂັ້ມງວດທີ່ຈະບໍ່ເພີ້ມເຕີມຂໍ້ມູນໃດໆ ໃສ່ໃນເຣື່ອງ ເຖິງແມ່ນຈະມີເຣື່ອງດຽວກັນປາກົດຢູ່ໃນພຣະຄັມພີອີກເຫຼັ້ມນຶ່ງກໍຢ່າເອົາມາປະສົມກັນ ຖ້າເລືອກເຣື່ອງຈາກເຫລັ້ມໃດ ກໍໃຫ້ເລົ່າເຣື່ອງທີ່ໄດ້ມາຈາກເຫລັ້ມນັ້ນພຽງເທົ່ານັ້ນເພາະພຣະເຈົ້າຊົງຕັດສິນພຣະທັຍທີ່ຈະໃຫ້ເຣື່ອງດຽວກັນບັນທຶກໄວ້ໃນພຣະຄັມພີຄົນລະເຫລັ້ມ ເມື່ອພຣະອົງຊົງໃຫ້ເຣື່ອງນັ້ນຢູ່ໃນພຣະຄັມພີຄົນລະເຫລັ້ມເຮົາກໍຄວນເຮັດເຊັ່ນນັ້ນ. ການສຶກສາທີ່ເນັ້ນໃນເຣື່ອງດຽວທີ່ມາຈາກແຫລ່ງດຽວ ຈະເຮັດໃຫ້ເຮົາຄົ້ນຫາຂຸມຊັບໄດ້ເລິກເຊິ່ງຂຶ້ນ ແລະເຮົາຈະຄົ້ນພົບຄວາມຈິງຝ່າຍວິນຍານໃນແຕ່ລະຕອນຢ່າງໜ້າປລາດໃຈ ແລະເມື່ອໄດ້ນຳເອົາສອງເຣື່ອງມາກວດສອບໃສ່ກັນພາຍຫລັງ ເຮົາຈະພົບວ່າທັງສອງເຣື່ອງຈະມີຄວາມສອດຄ່ອງກັນດີ.

ກ້າວເຂົ້າໄປສູ່ສິ່ງທີ່ບໍ່ຄຸ້ນເຄີຍ

ໃນຂະນະທີ່ເຮົາໄດ້ຝຶກຄວາມສາມາດໃໝ່ໆ ເຮົາທຸກຄົນມັກຈະມີແນວໂນ້ມນຳເອົາບາງສ່ວນຂອງສິ່ງໃໝ່ມາປະສົມກັນກັບສິ່ງທີ່ເຮົາຄຸ້ນເຄີຍຢູ່ແລ້ວ.

ຍົກຕົວຢ່າງເຊັ່ນ; ມີຜູ້ອາສາສມັກສອງສາມຄົນຕົກລົງໃຈວ່າ ຈະຟັງແນວຄວາມຄິດໃໝ່ທີ່ກຳລັງຂຽນລົງໃນປຶ້ມຄູ່ມື "ເລົ່າເຣື່ອງເຈາະໃຈ" ຄວາມຕັ້ງໃຈທຳອິດຂອງຂ້າພະເຈົ້ານັ້ນແມ່ນ ຢາກຈະເບິ່ງກ່ອນວ່າໃນແຕ່ລະຕອນນັ້ນມີຄວາມຊັດເຈນຫລືບໍ່ ແຕ່ພຣະເຈົ້າກໍຊົງໃຊ້ເຫດການນີ້ສອນບົດຮຽນອັນມີຄຸນຄ່າໃຫ້ຢ່າງບໍ່ຄາດຄິດມາກ່ອນ.
ການທີ່ຈະເຂົ້າໃຈສ່ວນຕ່າງໆ ຂອງວິທີການນັ້ນ ຜູ້ຮຽນຈະຕ້ອງຮູ້ເຣື່ອງນັ້ນກ່ອນ ດັ່ງນັ້ນຂ້າພະເຈົ້າຈຶ່ງຂໍໃຫ້ສອງຄົນທີ່ຂ້ອນຂ້າງເປັນຄົນຂີ້ອາຍໄດ້ຮຽນຮູ້ຈັກເຣື່ອງ ຄົນນຶ່ງເປັນຜູ້ຍິງທີ່ໄດ້ເຂົ້າມາຮຽນແລະຊ່ວຍຈັດແຈ່ງງານສັມມະນາໂດຍທາງປະຕິບັດແບບແປະໆ ບາງໆ ເຖິງ 4 ເທື່ອ ສ່ວນອີກຄົນນຶ່ງເປັນຊາຍຊະຣາອາຍຸໄດ້ 80 ປີ ແຕ່ລາວຕັ້ງໃຈເຮັດງານເໝືອນກັບຄົນໜຸ່ມທີ່ອາຍຸໄດ້ 20 ປີ. ເປັນເວລາດົນນານທີ່ທັ້ງສອງພຍາຍາມຫລີກລ້ຽງບໍ່ຢາກເລົ່າເຣື່ອງ.

ຂ້າພະເຈົ້າຈຶ່ງອະທິບາຍໃຫ້ທັ້ງສອງຟັງວ່າ "ພຽງແຕ່ທ່ານທັ້ງສອງເຮັດຕາມຄຳແນະນຳ ທ່ານກໍຈະຈື່ເຣື່ອງທີ່ມີ 10 ຂໍ້ ໄດ້ພາຍໃນສິບນາທີ" ແລ້ວຂ້າພະເຈົ້າໄດ້ເນັ້ນຍ້ຳເພື່ອໃຫ້ທັ້ງສອງຄົນຮູ້ເຖິງຂັ້ນຕອນຂອງການເລົ່າເຣື່ອງເຈາະໃຈວ່າ, "ອ່ານເຣື່ອງເທື່ອທຳອິດທັ້ງໝົດໂດຍອອກສຽງໃນຂະນະທີ່ກຳລັງອ່ານ ໃຫ້ອອກສຽງທີ່ເປັນທັມມະຊາດເໝືອນກັບກຳລັງເວົ້າຢູ່ ຍົກຕົວຢ່າງເຊັ່ນ; ແທນທີ່ຈະເວົ້າວ່າ, "ດູເຖີດ" ໃຫ້ເວົ້າວ່າ "ເບິ່ງແມ" ໃຫ້ວາດພາບໃນໃຈວ່າມີຫຍັງແດ່ເກີດຂຶ້ນ ຫລັງຈາກອ່ານເທື່ອທຳອິດແລ້ວໃຫ້ຫລັບຕາ ແລ້ວເວົ້າອອກມາໃນສິ່ງທີ່ຕົນຈື່ໄດ້ໃຫ້ຫລາຍເທົ່າທີ່ຈື່ໄດ້.

ເປົ້າໝາຍຂອງທ່ານກໍຄື ເລົ່າເຫດການທີ່ເກີດຂຶ້ນໃນເຣື່ອງຢ່າງຕົງໄປຕົງມາ ບໍ່ແມ່ນຕ້ອງຈື່ຈຳເອົາທຸກໆ ຄຳໃນເຣື່ອງມາເລົ່າ ແຕ່ແມ່ນເລົ່າເປັນເຣື່ອງ ຕ່ຈາກນັ້ນກໍອ່ານເຣື່ອງນັ້ນດັງໆ ອີກເທື່ອນຶ່ງ ໃນຕອນນີ້ທ່ານຈະເລີ້ມເບິ່ງເຫັນວ່າ ທ່ານໄດ້ຜ່ານຕອນໃດໄປແດ່ແລ້ວ ຫລັບຕາ ເລົ່າເຣື່ອງໂດຍອອກສຽງ ເຮັດແບບນີ້ຈັກ 4 ເທື່ອ."

ທັ້ງສອງຄົນໄດ້ໃຫ້ຄວາມຮ່ວມມື ຊຶ່ງເປັນຫົວໃຈຂອງຜູ້ຮັບໃຊ້ ລຶ້ມຄົນຄຳແນະນຳອີກເທື່ອ, "ອ່ານສຽງດັງ ອອກສຽງໃຫ້ເປັນທັມມະຊາດເໝືອນກຳລັງເວົ້າຢູ່ ປິດພຣະຄັມພີໄວ້ ເລົ່າເຣື່ອງ" ແຕ່ເມື່ອສອງຄົນເລີ້ມອ່ານ ເຂົາເຈົ້າຊ້ຳພັດອ່ານແບບງຽບໆ ບໍ່ມີຜູ້ໃດອອກສຽງເລີຍ ຂ້າພະເຈົ້າຈຶ່ງເວົ້າແຊກ ຖາມຂຶ້ນວ່າ, "ພວກທ່ານຈະຕ້ອງອ່ານເຣື່ອງນີ້ຢ່າງໃດ?" ທັ້ງສອງຄົນຕອບພ້ອມກັນວ່າ, "ອ່ານອອກສຽງດັງ" ຂ້າພະເຈົ້າຕອບໄປວ່າ, "ແຕ່ຂ້າພະເຈົ້າບໍ່ໄດ້ຍິນສຽງພວກທ່ານເລີຍ" ຊາຍຊະຣາຕອບວ່າ, "ຂ້າພະເຈົ້າກຳລັງອ່ານໃຫ້ຕົວເອງຟັງເທົ່ານັ້ນ." "ຄັນຊັ້ນ ພວກທ່ານກໍຮູ້ຢູ່ແລ້ວວ່າ ຕ້ອງອ່ານສຽງດັງໆ ພວກທ່ານໃຫ້ຄວາມຮ່ວມມືດີຢູ່ແລ້ວ ເປັນຫຍັງພວກທ່ານຈຶ່ງບໍ່ອ່ານຕາມທີ່ຂ້າພະເຈົ້າໄດ້ແນະນຳ." ຂ້າພະເຈົ້າຕໍ່ວ່າເຂົາເຈົ້າ. "ເອີ...ຂ້າພະເຈົ້າບໍ່ຮູ້ວ່າເປັນຫຍັງ" ຊາຍຊະຣາຮູ້ສຶກງົງໆ "ສົງສັຍວ່າຂ້າພະເຈົ້າບໍ່ເຄີຍເຮັດແບບນີ້ມາກ່ອນ." ຊາຍຊະຣາອະທິບາຍຕື່ມ. ແລ້ວຂ້າພະເຈົ້າກໍອ່ວຍໜ້າໄປຫາຜູ້ຍິງ, "ທ່ານຮູ້ບໍ່ວ່າ ທ່ານຕ້ອງອ່ານອອກສຽງດັງໆ?" ຜູ້ຍິງຄົນນັ້ນຕອບວ່າ, "ຂ້າພະເຈົ້າຮູ້ແລ້ວ" "ຖ້າຮູ້ແລ້ວ ເປັນຫຍັງຈຶ່ງບໍ່ອ່ານອອກສຽງດັງໆ?" ນາງຈຶ່ງອະທິບາຍແບບເລີ່ອນລາງວ່າ, "ຖ້າເຮັດແນວນັ້ນ ຂ້າພະເຈົ້າຮູ້ສຶກວ່າເໝືອນກັບເປັນຄົນໂງ່" ທຸກຄົນຢູ່ທີ່ນັ້ນໄດ້ພາກັນຫົວຂຶ້ນພ້ອມໆ ກັນ.

ໃນທີ່ສຸດຫລັງຈາກໄດ້ເກັ້ງກ່ອມທັ້ງສອງຄົນຢູ່ຊົ່ວຂະນະນຶ່ງ ທັ້ງສອງກໍພົ້ນຈາກຄວາມຮູ້ສຶກແບບເກົ່າໆ ໄດ້ ທີ່ຮູ້ສຶກວ່າ, "ຂ້າພະເຈົ້າບໍ່ເຄີຍເຮັດແບບນີ້ມາກ່ອນ" ພ້ອມທັ້ງຄວາມຮູ້ສຶກຢ້ານທີ່ວ່າ, "ຄົນອື່ນຊິເຫັນວ່າຂ້າພະເຈົ້າເປັນຄົນໂງ່" ໃນທີ່ສຸດທັ້ງສອງຄົນໄດ້ອ່ານເຣື່ອງດ້ວຍສຽງດັງ ຫລັບຕາ ເລົ່າເຣື່ອງລຶ້ມຄືນໄດ້ດີທີ່ສຸດເທົ່າທີ່ເຮັດໄດ້ ຫລັງຈາກທັ້ງ

ສອງຝຶກຊ້ອມໄດ້ 4 ເທື່ອແລ້ວ ຂ້າພະເຈົ້າໄດ້ຖາມເຂົາເຈົ້າວ່າ, "ບັດນີ້ເລົ່າເຣື່ອງໃຫ້ຟັງໄດ້ບໍ່?" ໜ້າແປກໃຈຫລາຍແທ້ໆ ຫລັງຈາກໄດ້ຮຽນເຣື່ອງພຽງ 10 ນາທີ ທັງສອງຄົນກໍເລົ່າເຣື່ອງໄດ້ຢ່າງຖືກຕ້ອງເກືອບຄົບສົມບູນດີ.

"ເປັນຈັ່ງໃດພໍ່ລຸງ" ຂ້າພະເຈົ້າຖາມແບບຢອກກັບຊາຍຊະຣາ, "ພໍ່ລຸງຈື່ເຣື່ອງສິບຂໍ້ພາຍໃນສິບນາທີໄດ້ບໍ່ເນາະ?" ລາວພຽງແຕ່ຫົວຕອບ ສ່ວນຜູ້ຍິງໄດ້ເວົ້າວ່າ, "ຂ້າພະເຈົ້າບໍ່ເຄີຍຮຽນເຣື່ອງໃນພຣະຄັມພີມາກ່ອນທັງໆ ທີ່ຢາກຮຽນ ແລະໄດ້ພຍາຍາມແຕ່ກໍເຮັດບໍ່ໄດ້," ຂ້າພະເຈົ້າຈຶ່ງຖາມວ່າ, "ທ່ານໄດ້ເຮັດຕາມຄຳແນະນຳຫລືບໍ?" ລາວຕອບວ່າ, "ບໍ່" ລາວຍິ້ມແລ້ວເວົ້າວ່າ, "ແຕ່ຕອນນີ້ໄດ້ເຮັດຕາມຄຳແນະນຳແລ້ວ,"

ທີ່ເລົ່າມານີ້ແມ່ນຕົວຢ່າງ ເພື່ອໜູນໃຈທ່ານໃຫ້ເຮັດຕາມຂັ້ນຕອນຕ່າງໆ ຕາມວິທີຂອງການເລົ່າເຣື່ອງເຈາະໃຈ ການທີ່ທ່ານອ່ານສະແດງວ່າທ່ານສາມາດອ່ານອອກຂຽນໄດ້ ແຕ່ການຮຽນຮູ້ການສື່ສານໃນຮູບແບບຂອງການເລົ່າເຣື່ອງນີ້ ແມ່ນການໃຊ້ພາສາເວົ້າ ດັ່ງນັ້ນທ່ານກໍກຳລັງກ້າວເຂົ້າມາສູ່ອີກໂລກນຶ່ງທີ່ໃຊ້ການເລົ່າປາກເປົ່າເປັນສິ່ງສຳຄັນ.

ຂໍໃຫ້ໃຊ້ຂັ້ນຕອນການເລົ່າເຣື່ອງ ຕາມທີ່ວາງໄວ້ໂດຍຄວາມເຊື່ອ ເຫັນເຫດການທີ່ເລົ່າມານັ້ນເປັນເຣື່ອງປົກກະຕິ ຖ້າໃຊ້ພຽງແຕ່ບາງຕອນຂອງການເລົ່າເຣື່ອງກໍຈະບໍ່ເກີດຜົນຕາມທີ່ຄາດຫວັງໄວ້ ຫລັງຈາກທີ່ທ່ານໄດ້ເຮັດຕາມຂັ້ນຕອນຂອງການເລົ່າເຣື່ອງເຈາະໃຈແລ້ວ ພຣະເຈົ້າອາດຈະໃຫ້ທ່ານເຫັນວິທີການໃໝ່ໆ ທີ່ຈະຊ່ອຍເສີມສ້າງປະສິດທິພາບໃນການຮຽນເຣື່ອງແລະການນຳສເນີເຣື່ອງໃນພຣະຄັມພີ.

ເພີ້ມຄວາມເລິກເຊິ່ງແລະດຶງຄວາມສົນໃຈຂອງຜູ້ຟັງ

1. **ຄິດເຖິງເຫດການ, ສະພາບການທີ່ເກີດຂຶ້ນຂອງເຣື່ອງ.** ອ່ານຫລືຟັງຈາກຂໍ້ພຣະຄັມພີທີ່ຈະນຳໄປສູ່ເຣື່ອງທີ່ທ່ານເລົ່າ. ສ່ວນຫລາຍການທີ່ຮູ້ວ່າແມ່ນຫຍັງເກີດຂຶ້ນໃນພຣະຄັມພີຊຶ່ງເກີດຂຶ້ນກ່ອນເຣື່ອງນັ້ນ (ທັງ ປວັດສາດແລະຈິດວິນຍານ)ຈະຊ່ອຍໃຫ້ທ່ານເຂົ້າໃຈເຣື່ອງນັ້ນດີຂຶ້ນ. ຫລັງຈາກທ່ານໄດ້ຕຽມເຣື່ອງທີ່ຈະເລົ່າແລ້ວ ທ່ານຕ້ອງຕັດສິນໃຈວ່າເຣື່ອງນັ້ນຕ້ອງມີຄຳນຳ "ອາລັມພະບົດ" ຫລືບໍ່ ເພື່ອຊ່ອຍໃຫ້ຜູ້ຟັງເຂົ້າໃຈໃນເຣື່ອງນັ້ນດີຂຶ້ນ. ຕໍ່ໄປໃນປຶ້ມເຫລັ້ມນີ້ ເຮົາຈະໄດ້ເຫັນວິທີຕຽມຄຳນຳຫລື "ອາລັມພະບົດ."

2. **ຫລີກເວັ້ນການໃຊ້ຄຳສັພນາມ.** ຜູ້ຟັງຈະເຂົ້າໃຈເຣື່ອງໄດ້ດີຂຶ້ນ ຖ້າທ່ານໃຊ້ຊື່ຄົນ, ສະຖານທີ່ ຫລືສິ່ງຂອງແທນທີ່ຈະເວົ້າວ່າ, ມັນ, ລາວ, ເພິ່ນ, ເຂົາເຈົ້າ. ຖ້າເປັນໄປໄດ້ໃຫ້ປ່ຽນຄຳສັພນາມເປັນຄຳນາມ. ຍົກ ຕົວຢ່າງ; "ເພິ່ນ" ປ່ຽນເປັນ "ເປໂຕ," "ຜູ້ຍິງ" ປ່ຽນເປັນ "ນາງເອວາ" ແລະອື່ນໆ ຄ້າຍໆ ກັນນີ້.

3. **ຄິດເຖິງຊ່ວງເວລາເກີດຂຶ້ນຂອງເຣື່ອງ.** ("ຊ່ວງເວລາເກີດຂຶ້ນຂອງເຣື່ອງ" ແລະຕໍ່ໄປກໍແມ່ນ "ຊີວິດຊີວາຂອງເຣື່ອງ" ຊຶ່ງເປັນໃຈກາງອັນສຳຄັນເພື່ອໃຫ້ມີຄວາມເຂົ້າໃຈໃນເຣື່ອງແລະສາມາດທີ່ຈະເລົ່າເຣື່ອງໄດ້ດີ.

ກ. ພວກເຮົາສາມາດອ່ານເຣື່ອງໃນພຣະຄັມພີຈົບໄວກວ່າເວລາຂອງເຣື່ອງທີ່ເກີດຂຶ້ນຢ່າງແທ້ຈິງ ດັ່ງນັ້ນເພື່ອຈະເຂົ້າໃຈເຣື່ອງດີ ຈົ່ງອ່ານເຣື່ອງນັ້ນຊ້າໆ. ຈື່ເຣື່ອງ **"ຫິ່ນທາງ"** ໄດ້ບໍ່? ບັນດາຜູ້ທີ່ຍ່າງໄປຕາມທາງຊ້າໆກໍໄດ້ພົບຂຸມຂັບ(ຂອງຂວັນທີ່ເຊື່ອງໄວ້).

ຂ. ໃຫ້ວາດພາບໃນໃຈແຕ່ລະຕອນຂອງເຣື່ອງ ໃຫ້ຂໍ້ມູນຕ່າງໆ ໃນເຣື່ອງຊ່ວຍທ່ານກ້າວເຂົ້າໄປສູ່ເຣື່ອງນັ້ນ. ພິຈາຣະນາຢ່າງຖ້ວນຖີ່ວ່າເຣື່ອງນັ້ນເປີດເຜີຍໃຫ້ເຫັນແຕ່ລະບຸກຄົນໃນເຣື່ອງ ເຂົາເຈົ້າກຳລັງຄິດແລະມີຄວາມຮູ້ສຶກ ຢ່າງໃດ.

ຄ. ຈົ່ງເຂົ້າໃຈວ່າ ເຖິງແມ່ນເຣື່ອງໃນພຣະຄັມພີໄດ້ເກີດຂຶ້ນຫລາຍພັນປີຜ່ານມາແລ້ວ ຄົນທີ່ຢູ່ໃນເຣື່ອງນັ້ນໆ ມີຊີວິດຢູ່ໃນສະພາບການນັ້ນ ຢູ່ໃນສມັຍນັ້ນ ເຖິງແມ່ນເຮົາຈະຄຸ້ນເຄັຍກັບເຣື່ອງທີ່ເຮົາກຳລັງຮຽນແລະຈົດບັນທຶກໄວ້ ກໍຕາມ ບໍ່ມີບຸກຄົນໃດໃນເຣື່ອງມີຊີວິດຢູ່ກ່ອນທີ່ເຣື່ອງນັ້ນຈະເກີດຂຶ້ນ. ດັ່ງນັ້ນຈົ່ງເດີນໄປຕາມເຫດການນັ້ນຊ້ໆ ດ້ວຍ ຄວາມຄິດໄຕ່ຕອງ ເໝືອນກັບບຸກຄົນທີ່ຢູ່ໃນເຣື່ອງທີ່ມີປະສົບການກັບເຫດການເຫລົ່ານັ້ນ.

4. ຊີວິດຊີວາຂອງເຣື່ອງ. ຈົ່ງສັງເກດເບິ່ງແຕ່ລະບຸກຄົນໃນເຣື່ອງວ່າເຂົາເຈົ້າເຮັດຫຍັງແລະເວົ້າຫຍັງ ເຂົາເຈົ້າເຮັດຕໍ່ ກັນແລະກັນແນວໃດແດ່ໃນເຣື່ອງ. ຖ້າເຮົາຫາກ "ຟັງ" ຢ່າງຕັ້ງໃຈ ການກະທຳແລະຄຳເວົ້າຂອງຄົນໃນເຣື່ອງຈະບອກ ໃຫ້ເຮົາຮູ້ເຖິງຈິດວິນຍານຂອງເຂົາເຈົ້າ. ຈົ່ງສັງເກດຢ່າງເອົາໃຈໃສ່ຕລອດເຣື່ອງ ຜູ້ທີ່ເລົ່າເຣື່ອງຈະສາມາດເຂົ້າໃຈໃນ ເຣື່ອງເປັນຢ່າງດີ ເຮັດໃຫ້ຜູ້ເລົ່າເຣື່ອງສາມາດເລົ່າໄດ້ຢ່າງຖືກຕ້ອງດ້ວຍການສະແດງອອກແລະການອອກທ່າທາງ.

ຈົ່ງເຕືອນຕົນເອງສເມີວ່າ ຄົນທັງຫລາຍທີ່ເຮົາໄດ້ອ່ານພົບຢູ່ໃນພຣະຄັມພີ ເຖິງຈະເປັນຜູ້ນຳ ຫລືຜູ້ປະກາດພຣະທັມ ຂອງພຣະເຈົ້າ ເຂົາເຈົ້າກໍເປັນພຽງມະນຸດ. ເຖິງແມ່ນຫລາຍຄົນເຊື່ອຟັງພຣະເຈົ້າແລະສະແດງຄວາມເຊື່ອຖ້ໍາມກາງ ສະຖານະການທີ່ຍາກລຳບາກ ໃນທຸກໆ ກໍຣະນີແຕ່ລະຄົນຕ້ອງຕັດສິນໃຈເລືອກທີ່ຈະເຊື່ອແລະໄວ້ວາງໃຈ.

5. ເວົ້າຕາມຄວາມເວົ້າໃນເຣື່ອງຂອງທ່ານ. (ສອນຄວາມ) ຖ້າຄົນໃນເຣື່ອງໄດ້ເວົ້າດ້ວຍອາລົມທີ່ເຫັນໄດ້ເດັ່ນຊັດ ກໍ ໃຫ້ຜູ້ເລົ່າເຣື່ອງໃຊ້ອາລົມແບບດຽວກັນນັ້ນ. ຈົ່ງເບິ່ງ ຄວາມໃຈຮ້າຍ, ຄວາມໂສກເສົ້າ, ຄວາມຢ້ານ, ຄວາມເສັ່ງໃຈ ແລະອື່ນໆ. ຈົ່ງເລົ່າແບບລະຄອນເທົ່າທີ່ຈະເຮັດໄດ້ໃນຂະນະທີ່ທ່ານໃຊ້ຄຳເວົ້າຂອງບຸກຄົນທີ່ຢູ່ໃນເຣື່ອງ. ຖ້າບໍ່ເຫັນ ອາການຂອງອາລົມໃດໆ ທ່ານກໍສາມາດເວົ້າໄດ້ຕາມທີ່ທ່ານຄິດວ່າຄົນໃນເຣື່ອງໄດ້ເວົ້າໃນລັກສະນະນັ້ນ. ແຕ່ທ່ານ ຈະຕ້ອງແນ່ໃນໃຈວ່າໃຫ້ "ຄວາມຄິດ" ຂອງທ່ານຢູ່ພາຍໃນເຣື່ອງ. ການສະແດງອາລົມຕາມຄຳເວົ້າຂອງບຸກຄົນໃນ ເຣື່ອງ(ສອນຄວາມ) ຈະໃຫ້ທ່ານມີໂອກາດເຮັດໃຫ້ເຣື່ອງທີ່ທ່ານເລົ່ານັ້ນມີຊີວິດຊີວາ.

ຖ້າທ່ານຫາກບໍ່ແນ່ໃຈວ່າຄົນໃນເຣື່ອງມີອາລົມ ມີຄວາມຮູ້ສຶກແນວໃດ ທ່ານຢ່າເວົ້າຕາມທີ່ທ່ານຄິດວ່າອາລົມ ຂອງຄົນໃນເຣື່ອງຕ້ອງເປັນແນວນັ້ນ ເພາະຈະເປັນການເພີ້ມເຕີມໃສ່ໃນເຣື່ອງ ຊຶ່ງພຣະເຈົ້າຊົງເຕືອນພວກເຮົາບ່ໃຫ້ ເຮັດ.

"ທຸກໆສິ່ງທີ່ຂ້າພະເຈົ້າບັນຊາທ່ານໄວ້ ຈົ່ງລະວັງທີ່ຈະກະທຳຕາມ ທ່ານຢ່າເພີ້ມເຕີມຫລືຕັດຖ້ອຍຄຳໃດໆ ອອກໄປ ຈາກທີ່ຂ້າພະເຈົ້າໄດ້ບັນຊາໄວ້" (ພຣະບັນຍັດສອງ 12:32)

"ພຣະຄຳທຸກຄຳຂອງພຣະຜູ້ເປັນເຈົ້ານັ້ນພິສູດເຫັນຈິງແລ້ວ ພຣະອົງຊົງເປັນໂລ້ແກ່ບັນດາຜູ້ລີ້ພັຍຢູ່ໃນພຣະອົງ. ຢ່າເພີ້ມຫຍັງເຂົ້າກັບພຣະຄຳຂອງພຣະອົງ ເກງວ່າພຣະອົງຈະຊົງຕຳໜິເຈົ້າແລະເຂົາຈະເຫັນວ່າເຈົ້າເປັນຄົນມຸສາ"

(ສຸພາສິດ 30:5-6)

6. ສະແດງທ່າທີຂອງເຣື່ອງ. ໃນຂນະທີ່ທ່ານຝຶກຊ້ອມການເລົ່າເຣື່ອງ ສຽງຂອງທ່ານຈະຕ້ອງເປັນໄປຕາມອາລົມແລະຄວາມຮູ້ສຶກທີ່ຢູ່ໃນເຣື່ອງ.

ກ. ເມື່ອຜູ້ເລົ່າເຣື່ອງ ເລີ້ມເລົ່າເຣື່ອງຄັ້ງທຳອິດ ບາງເທື່ອການໃຊ້ຄວາມພຍາຍາມທີ່ຈະເລົ່າແບບລະຄອນ ຜູ້ເລົ່າເຣື່ອງກໍເລີ້ມຕົ້ນເລົ່າດ້ວຍສຽງທີ່ຕື່ນເຕັ້ນ ແລະໃຊ້ສຽງທີ່ຕື່ນເຕັ້ນໄປຈົນຕລອດເຣື່ອງ ການໃຊ້ສຽງທີ່ຕື່ນເຕັ້ນດົນເກີນໄປຈະເຮັດໃຫ້ຜູ້ຟັງເບື່ອ ຈະເຮັດໃຫ້ຜູ້ຟັງຂາດຄວາມສົນໃຈ. ຕາມຄວາມຈິງແລ້ວ, ເຣື່ອງທີ່ເລົ່າຈະບໍ່ຖືກຕ້ອງຖ້າຫາກໃຊ້ສຽງທີ່ຕື່ນເຕັ້ນຕລອດເຣື່ອງ.

ຂ. ແທ້ຈິງແລ້ວ, ບາງຕອນຂອງເຣື່ອງຈະມີຄວາມໂສກເສົ້າ, ມີຄວາມຢ້ານກົວ, ມີຄວາມສົງສານ, ມີຄວາມເສັງໃຈ ຫລືມີອາລົມອື່ນໆ ຊຶ່ງຖ້າໃຊ້ແຕ່ສຽງທີ່ຕື່ນເຕັ້ນຢ່າງດຽວກໍຈະບໍ່ສອດຄ່ອງເລີຍ. ປ່ຽນສຽງຂອງທ່ານສະແດງທ່າທີຂອງເຣື່ອງດ້ວຍການຍົກສຽງຂຶ້ນແລະອ່ອນສຽງລົງ ໃຊ້ສຽງທີ່ແຜ່ວເບົາ ແຕ່ໃຫ້ຜູ້ຟັງໄດ້ຍິນ. ເນັ້ນໜັກບາງຕອນຂອງເຣື່ອງດ້ວຍຄຳເວົ້າຊ້າໆ ຫລືເວົ້າຢ່າງໄວເພື່ອສະແດງເຖິງການເຄື່ອນໄຫວທີ່ວ່ອງໄວ. ປັບຣະດັບສຽງທີ່ຕື່ນເຕັ້ນຂອງທ່ານໃຫ້ສອດຄ່ອງກັບເຣື່ອງ. ອາລົມຕ່າງໆໃນເຣື່ອງຈະເຫັນໄດ້ຈາກນ້ຳໜັກຂອງສຽງ ແລະການສະແດງທ່າທີຈາກສຽງຂອງທ່ານ.

ຄ. ເມື່ອຄົນໂອ້ລົມສົນທະນາກັນບໍ່ວ່າພາສາໃດກໍຕາມ ຈະເປັນສຽງ(ເວົ້າ)ບໍ່ແມ່ນເປັນຖ້ອຍຄຳ(ຂຽນ) ຈະເປັນສຽງເວົ້າຕາມທັມມະຊາດ. ສ່ວນຫລາຍໃນວັທນະທັມຕ່າງໆ ການເໜັງຕີງຂອງລີ້ນຈະສະແດງອອກເຖິງອາລົມ. ສຽງເຫລົ່ານີ້ຈະເປັນເອກລັກຕໍ່ທຸກພາສາແລະທຸກວັທນະທັມ.

ບາງເທື່ອທ່າທີກໍຊີ້ໃຫ້ເຫັນເຖິງຄວາມເມື່ອຍ ຫລືການຫາຍໃຈອອກແຮງໆ ໝາຍເຖິງຄວາມບໍ່ພໍໃຈ, ການຫາຍໃຈເຂົ້າຢ່າງໄວກໍຊີ້ໃຫ້ເຫັນເຖິງຄວາມປລາດໃຈຫລືຢ້ານກົວ. ສຽງຫົວຫລືສຽງທີ່ຜິດປົກກະຕິຊີ້ບອກເຖິງອາລົມ. ສຽງຈາກການປາກເວົ້າທັງໝົດເຫລົ່ານັ້ນມີຢູ່ແລ້ວ ພວກເຮົາໄດ້ເຫັນການໃຊ້ສຽງເຫລົ່ານັ້ນຈາກຄົນທີ່ຢູ່ອ້ອມຮອບເຮົາຕັ້ງແຕ່ນ້ອຍຈົນໃຫຍ່. ເພີ້ມຄວາມຊຳນານໃນການເລົ່າເຣື່ອງພຣະຄັມພີໃຫ້ເປັນທັມຊາດ ແລະໃຫ້ເກີດຄວາມສົນໃຈດ້ວຍການຟັງສຽງຈາກວັທນະທັມຕ່າງໆ ໃນຂນະທີ່ທ່ານໂອ້ລົມກັບຄົນອື່ນ. ເມື່ອທ່ານສັງເກດເຫັນສຽງແປກໃໝ່ ຈົ່ງຈື່ຈຳໄວ້ໃນໃຈ ເພື່ອທ່ານຈະໄດ້ໃຊ້ສຽງເຫລົ່ານັ້ນເມື່ອທ່ານເລົ່າເຣື່ອງໃນພຣະຄັມພີ

ງ. ແມ່ນແຕ່ການໂຈະຫລືການລັງເລຣະຫວ່າງຄຳເວົ້າສາມາດເພີ້ມການເລົ່າແບບລະຄອນແລະເຮັດໃຫ້ເກີດຄວາມສົນໃຈໃນການຟັງໃນເຣື່ອງທີ່ເລົ່າ. ຍົກຕົວຢ່າງ, ໃນເຣື່ອງພຣະເຢຊູໂຜດຄົນຂີ້ທູດຄົນນຶ່ງ ຜູ້ເລົ່າເຣື່ອງເວົ້າວ່າ, "ພຣະເຢຊູ ຊົງຢຽດພຣະຫັດອອກໄປຖືກຕ້ອງຄົນຂີ້ທູດ" ຖ້າຜູ້ເລົ່າເຣື່ອງເວົ້າຖ້ອຍຄຳເຫລົ່ານີ້ໂດຍບໍ່ມີການລັ່ງເລຫລືຊ້າລົງ, ລາວກໍຈະເສັງໂອກາດອັນສຳຄັນນີ້.

ການທີ່ພຣະເຢຊູຖືກຕ້ອງຕົວຄົນຂີ້ທູດເຫັນວ່າເປັນສິ່ງທີ່ອັສຈັນ; ຊຶ່ງສະແດງເຖິງຄວາມເມດຕາສົງສານ. ຜູ້ເລົ່າເຣື່ອງຕ້ອງເວົ້າຖ້ອຍຄຳເຫລົ່ານີ້ຊ້າໆ ດ້ວຍຄວາມລັ່ງເລຣະຫວ່າງການຢຽດມືຂອງຜູ້ເລົ່າເຣື່ອງ ໄປຫາຄົນຂີ້ທູດ.

ຊ່ວງເວລາອັນປະທັບໃຈຣະຫວ່າງອົງພຣະເຢຊູກັບຄົນຂີ້ທູດເຮົາສາມາດໄດ້ເຫັນ ໄດ້ຍິນ ແລະໄດ້ຮູ້ສຶກ ເມື່ອຜູ້ເລົ່າເຣື່ອງເວົ້າຊ້ໆລົງແລະເວົ້າສຽງແບບອັສຈັນ, "ອົງ...ພຣະ...ເຢ...ຊູ ຊົງ...ຢຸງດ... ພຣະ...ທັດ ໄປ...ຖືກ...ຕ້ອງ... ຄົນ...ຂີ້...ທູດ."

ຈ. ຊອກຫາຊ່ວງເວລາທີ່ເປັນລະຄອນພາຍໃນເຣື່ອງ, ເມື່ອພຍາດຫາຍດີ ຫລືມີບາງສິ່ງທີ່ແປກໆ ເກີດຂຶ້ນ ຫລືຄຳເວົ້າທີ່ແຂງຊຶ່ງບຸກຄົນໃນເຣື່ອງໄດ້ເວົ້າ, ຈົ່ງພິຈາຣະນາການເວົ້າແບບລັ່ງເລ ຫລືໂຈະໜ້ອຍນຶ່ງໃນການເວົ້າ. ການກະທຳແບບນີ້ ທ່ານກໍໄດ້ໃຊ້ເວລາໃນການເລົ່າແບບລະຄອນໃຫ້ຜູ້ຟັງໄດ້ເຫັນ ໄດ້ເຂົ້າໃຈ ແລະມີຄວາມຮູ້ສຶກວ່າ ເປັນເຣື່ອງຈິງມີຊີວິດຊີວາ.

ສ. ໃນຫລາຍໆເຣື່ອງ ການເລົ່າຈະເປັນສຽງທັມມະດາຕາມທີ່ບຸກຄົນໃນເຣື່ອງເປັນຜູ້ເວົ້າ ໃນພາກຕອນ ເຫລົ່ານັ້ນເຮົາກໍສາມາດທີ່ຈະເລົ່າເປັນສຽງທັມມະດາໄດ້.

ຊ. ແຕ່ຢ່າງໃດກໍຕາມ ບາງຄັ້ງແມ່ນແຕ່ການໃຊ້ສຽງແບບທັມມະດາກໍສາມາດສ້າງຄວາມສົນໃຈໃຫ້ແກ່ເຣື່ອງ ໄດ້. ການເລົ່າເຣື່ອງແບບທັມທະດາກໍສາມາດຊີ້ໃຫ້ເຫັນການປ່ຽນສະຖານທີ່ຫລືສ້າງຄວາມສົນໃຈອັນອັສຈັນຕໍ່ເຣື່ອງ ທີ່ເລົ່າໄດ້. ຖ້ອຍຄຳເຫລົ່ານີ້ ໄດ້ເວົ້າດ້ວຍຄວາມຮູ້ສຶກອັນໜັກແໜ້ນຢ່າງໜ້າສົນໃຈ ເໝືອນກັບວ່າຜູ້ທີ່ເລົ່າເຣື່ອງໄດ້ ແບ່ງປັນຄວາມເລິກລັບ, ແລະຂໍ້ມູນທີ່ຕື່ນເຕັ້ນກັບບັນດາຜູ້ຟັງ, ດັ່ງນັ້ນຖ້ອຍຄຳນັ້ນຈຶ່ງເວົ້າເປັນສຽງຊື່ມທີ່ດັງ ໃນລັກ ສະນະ ນັ້ນ.

ການເວົ້າແບບນີ້ ໄດ້ຊີ້ໃຫ້ບັນດາຜູ້ຟັງໄດ້ຟັງຖ້ອຍຄຳທີ່ໜ້າສົນໃຈ ແມ່ນແຕ່ຄຳເວົ້າທັມມະດາເຊັ່ນ "ໃນເວ ລານັ້ນ" ຫລື "ໃນເວລາດຽວກັນນັ້ນ" ຫລື "ຫລັງຈາກເຂົາເຈົ້າມາຮອດແລ້ວ" ສາມາດທີ່ຈະເວົ້າເພື່ອສ້າງຄວາມສົນ ໃຈໄດ້. ທ່ານສາມາດເວົ້າແບບລັ່ງເລແລະໃຊ້ນ້ຳໜັກຂອງສຽງພ້ອມທັງການອອກທ່າທາງໄປນຳ ຊຶ່ງຈະເປັນການສ້າງ ຄວາມສົນໃຈຢ່າງໃດຢ່າງນຶ່ງແກ່ຜູ້ຟັງ.

7. ອອກທ່າທາງ, ສະແດງອອກໃນເຣື່ອງ. ການອອກທ່າທາງທີ່ຖືກຕ້ອງກັບເຣື່ອງສາມາດສະແດງໃຫ້ເຫັນເຖິງຄວາມ ຢ້ານ, ຄວາມໂລບ, ການກ້າວກ່າຍ, ການຫລົບໜີ, ຄວາມປລາດໃຈ, ຄວາມກ້າຫານ, ມີປັນຍາ, ຄວາມກົດດັນ ແລະອາລົມອື່ນໆ. ອາລົມສາມາດສະແດງອອກດ້ວຍການອອກທ່າທາງພຽງເລັກນ້ອຍ. ຈາກບ່ອນທີ່ທ່ານຢືນ, ທ່ານເບິ່ງ, ທ່ານອອກທ່າທາງ, ທ່ານສາມາດເຮັດໃຫ້ເຫັນບ່ອນທີ່ຄົນຢູ່, ກຸ່ມຄົນທີ່ຢູ່ ແລະສະຖານທີ່ ທີ່ທ່ານເວົ້າ ເຖິງໃນການເລົ່າເຣື່ອງຂອງທ່ານ.

ໃນຂະນະທີ່ທ່ານເວົ້າຕາມຄຳເວົ້າຂອງຄົນໃນເຣື່ອງ ທ່ານອ່ວຍໄປທາງຂ້າງໜ້ອຍນຶ່ງ ຫລຽວໄປໃຫ້ຖືກທາງບ່ອນທີ່ ຄົນໃນເຣື່ອງຢູ່ນັ້ນ, ລາວຫລຽວໄປທາງໃດ, ຫລືລາວກຳລັງເຮັດຫຍັງ. ຍົກຕົວຢ່າງເຊັ່ນ; ຄົນທີ່ໄດ້ຮັບການປິ່ນປົວ ອາດຈະຢູ່ໃນທ່າທີທີ່ປລາດໃຈແລະຫຍັບຍ້າຍຮ່າງກາຍທີ່ຖືກປິ່ນປົວຢ່ໆຊ້ໆ ຫລືລາວອາດຈະຕື່ນເຕັ້ນ ກະໂດດ ເຕັ້ນດ້ວຍຄວາມຊົມຊື່ນຍິນດີ. ການເວົ້າຊ້ໆ ແບບລັ່ງເລປະກອບກັບການອອກທ່າທາງໄປນຳ ຈະເຮັດໃຫ້ການ ເລົ່າເຣື່ອງເໝືອນກັບລະຄອນຫລາຍຂຶ້ນ.

ຄຳເຕືອນ. ຖ້າບັນດາຜູ້ຟັງໄດ້ບອກທ່ານວ່າ "ເຈົ້າເລົ່າໄດ້ດີຫລາຍ" ຫລື "ຂ້ອຍມັກການອອກທ່າທາງຂອງເຈົ້າ" ໃຫ້ທ່ານຄິດເຖິງຕອນທີ່ທ່ານເລົ່າເຣື່ອງ ຄວາມໂດດເດັ່ນບໍ່ໄດ້ຢູ່ທີ່ຜູ້ເລົ່າເຣື່ອງ ແຕ່ຢູ່ທີ່ພຣະຄຳຂອງພຣະເຈົ້າ. ການອອກທ່າທາງເກີນຂອບເຂດຈະເຮັດໃຫ້ຜູ້ຟັງບໍ່ໄດ້ຕັ້ງໃຈຟັງພຣະຄຳທີ່ທ່ານເລົ່າ ແຕ່ຜູ້ຟັງຈະເບິ່ງທ່າທາງຂອງທ່ານຫຼາຍກວ່າຟັງ. ທາງທີ່ດີທີ່ສຸດແມ່ນອອກທ່າທາງໃຫ້ເໝາະສົມກັບຖ້ອຍຄຳທີ່ທ່ານເລົ່າ. ທ່ານຢາກຈະໄດ້ຍິນຜູ້ຟັງເວົ້າວ່າ, "ເຣື່ອງນີ້ປະທັບໃຈຂ້ອຍຫລາຍ" ຫລືເຂົາເຈົ້າໄດ້ເວົ້າວ່າ "ເໝືອນກັບວ່າຂ້ອຍເປັນບຸກຄົນນຶ່ງທີ່ຢູ່ໃນເຣື່ອງນີ້."

8. **ຈະຢືນຫລືນັ່ງໃນການເລົ່າເຣື່ອງ?** ໃນຫລາຍໆ ວັທນະທັມແລະຫລາຍໆ ສະພາບການ ເປັນການເໝາະສົມທີ່ຜູ້ເລົ່າເຣື່ອງຄວນນັ່ງເລົ່າເຣື່ອງກັບບັນດາຜູ້ຟັງຫລາຍກວ່າການຢືນ. ແຕ່ພວກເຮົາຂໍແນະນຳໃຫ້ທ່ານຝຶກການເລົ່າເຣື່ອງດ້ວຍການຢືນ. ເພື່ອທ່ານຈະສາມາດເລົ່າເຣື່ອງດ້ວຍການອອກທ່າທາງໄດ້ເຕັມທີ່ ພ້ອມທັງການວາງທ່າ. ຫລັງຈາກນັ້ນ ເມື່ອທ່ານມີໂອກາດໄດ້ເລົ່າເຣື່ອງຖ້າມກາງກຸ່ມໃຫຍ່ຫລືໃນເຫດການອື່ນໆເມື່ອເຫັນວ່າການຢືນເລົ່າເປັນການດີທີ່ສຸດ ທ່ານກໍຈະສາມາດອອກທ່າທາງໄດ້ຫລາຍຂຶ້ນ.

ພວກເຮົາຢາກໃຫ້ບັນດາຜູ້ຟັງເຂົ້າໃຈແລະຈື່ຈຳໄດ້ໃນເຣື່ອງທີ່ເຮົາເລົ່າ. ບໍ່ພຽງແຕ່ອອກທ່າທາງແລະການສະແດງທີ່ເຮັດໃຫ້ຜູ້ຟັງມີຄວາມສົນໃຈໃນເຣື່ອງ ແຕ່ມັນຍັງເຮັດໃຫ້ຜູ້ຟັງສາມາດເຂົ້າໃຈແລະຈື່ເຣື່ອງໄດ້ດີອີກນຳ. ແນ່ນອນ, ເມື່ອນັ່ງເລົ່າເຣື່ອງເປັນທາງເລືອກທີ່ດີ ຄືການນັ່ງເລົ່າ ແຕ່ເຖິງແມ່ນທ່ານເລົ່າເຣື່ອງດ້ວຍການນັ່ງຕລອດເວລາ ທ່ານກໍຍັງສາມາດອອກທ່າງທາງທີ່ທ່ານໄດ້ຝຶກອົບຮົມມານັ້ນ.

9. **ເລີ້ມເລົ່າເຣື່ອງ.** ເມື່ອທ່ານເລີ້ມຕົ້ນເລົ່າເຣື່ອງທ່ານຕ້ອງເວົ້າວ່າ, "ນີ້ແມ່ນເຣື່ອງທີ່ຂ້າພະເຈົ້າຈະເລົ່າ" ຫລື "ນີ້ແມ່ນເຣື່ອງຈາກພຣະຄັມພີ" ເມື່ອທ່ານເລີ້ມເລົ່າເຣື່ອງຈົ່ງເປີດພຣະຄັມພີຖືໄວ້ແລະຫລຽວເບິ່ງພຣະຄັມພີເໝືອນກັບວ່າທ່ານໄດ້ອ່ານ ການກະທຳເຊັ່ນນີ້ກໍເພື່ອສະແດງໃຫ້ບັນດາຜູ້ຟັງເຫັນວ່າເຣື່ອງທີ່ທ່ານຈະເລົ່າມາຈາກພຣະຄັມພີ. ຖ້າເຣື່ອງທີ່ທ່ານຈະເລົ່າມີຄຳນຳຫລືອາລັມພະບົດ ໃຫ້ທ່ານປິດພຣະຄັມພີໄວ້ໃນຂະນະທີ່ທ່ານອາລັມພະບົດຫລືເລົ່າຄຳນຳ ສາຍເຫດທີ່ປິດພຣະຄັມພີໄວ້ກໍເພາະວ່າອາລັມພະບົດຫລືຄຳນຳພຽງແຕ່ເປັນຖ້ອຍຄຳສັ້ນໆ ກ່ອນຈະເລົ່າເຣື່ອງ ບໍ່ແມ່ນເຣື່ອງທີ່ຈະເລົ່າຈາກພຣະຄັມພີເທື່ອ.

ບາງເຣື່ອງທີ່ທ່ານເລົ່າ ທ່ານອາດຈະຕ້ອງການໃຊ້ມືທັງສອງຂ້າງອອກທ່າທາງ ດັ່ງນັ້ນໃນຂະນະທີ່ເລີ້ມເລົ່າເຣື່ອງ ທ່ານສາມາດຄ່ອຍໆ ວາງພຣະຄັມພີໄວ້ເທິງໂຕະຫລືໃນບ່ອນທີ່ເໝາະສົມໃກ້ໆ ກັບຕົວທ່ານ ໃນຂະນະທີ່ທ່ານກຳລັງວາງພຣະຄັມພີນັ້ນທ່ານບໍ່ຕ້ອງຢຸດເວົ້າ ດັ່ງນັ້ນບັນດາຜູ້ຟັງຈະຮູ້ວ່າທ່ານໄດ້ເລົ່າເຣື່ອງທີ່ມາຈາກພຣະຄັມພີ ເມື່ອທ່ານເລົ່າເຣື່ອງເກືອບຈະຈົບ ໃຫ້ທ່ານເອົາປຶ້ມພຣະຄັມພີຂຶ້ນມາຖືໄວ້ອີກ.

ຖ້າທ່ານເລົ່າເຣື່ອງໃນຂົງເຂດທີ່ມີການຕໍ່ຕ້ານ ມີການຂົ່ມເຫງຄຣິສຕຽນ ທ່ານບໍ່ຈຳເປັນຕ້ອງຖືພຣະຄັມພີຫລືບໍ່ຕ້ອງບອກວ່າເປັນເຣື່ອງທີ່ໄດ້ມາຈາກພຣະຄັມພີ. ໃນກໍຣະນີນີ້ ທ່ານກໍພຽງແຕ່ເລົ່າເຣື່ອງໃຫ້ຜູ້ຟັງໄດ້ຮັບການຊີ້ນຳຈາກພຣະວິນຍານບໍຣິສຸດເມື່ອເວລາແລກປ່ຽນຄວາມຄິດເຫັນຫລັງຈາກນັ້ນ.

10. **ແນມເບິ່ງທຸກໆຄົນບາງຄັ້ງຄາວ.** ການເລົ່າເຣື່ອງເຈາະໃຈ ພວກເຮົາສອນນັກຮຽນໃຫ້ແນມເບິ່ງທຸກໆຄົນໃນຂະນະ

ທີ່ເລົ່າເຣື່ອງ. ສິ່ງນຶ່ງທີ່ໜ້າສົນໃຈ, ໃນການຝຶກອົບຮົມຄັ້ງນຶ່ງ ຜູ້ຮຽນເລົ່າເຣື່ອງໃຫມ່ໄດ້ແນມເບິ່ງຄຣູຕລອດເວລາ ຕໍ່ມາຈຶ່ງຮູ້ຈັກສາຍເຫດນັ້ນ. ກ່ອນທີ່ຈະແກ້ໄຂການກະທຳຂອງລາວ ຄຣູໄດ້ຖາມຄົນນັ້ນວ່າ ເປັນເພາະວັທນະທັມ ຫລືບໍ່ ທີ່ຜູ້ເລົ່າເຣື່ອງຕ້ອງການໃຫ້ກຽດຄົນທີ່ແກ່ກວ່າ ຫລືຜູ້ທີ່ສຳຄັນກວ່າໃນກຸ່ມ ຜູ້ຊາຍຄົນນັ້ນຕອບວ່າ "ແມ່ນແລ້ວ."

ໂອ, ກ່ຽວຂ້ອງກັບວັທນະທັມອີກແລ້ວ. ການອອກແບບໃນການເລົ່າເຣື່ອງເຈາະໃຈຂອງພວກເຮົາແມ່ນໃຫ້ດຶງເອົາຄວາມສົນໃຈທຸກໆ ຄົນ ແລະໜູນໃຈໃຫ້ທຸກຄົນມີສ່ວນຮ່ວມໃນການຕອບຄຳຖາມ. ໃນຕອນແລງມື້ນັ້ນພວກເຮົາໄດ້ໂອ້ລົມເຖິງຄວາມແຕກຕ່າງທາງວັທນະທັມເປັນເວລາດົນກັບຄຣູສອນການເລົ່າເຣື່ອງເຈາະໃຈ. ພວກເຮົາຈຶ່ງຂໍແນະນຳວ່າ ເຖິງຈະມີການໂຄຣົບນັບຖືຄົນແກ່ ຫລືຜູ້ນຳ ແຕ່ກໍໃຫ້ທຸກໆ ຄົນມີສ່ວນຮ່ວມໃນການເລົ່າເຣື່ອງ.

ພວກເຮົາເຫັນດີນຳທີ່ວ່າ ຜູ້ເລົ່າເຣື່ອງຕ້ອງຮັບຮູ້ບັນດາຄົນເຖົ້າຄົນແກ່ ແຕ່ຜູ້ເລົ່າເຣື່ອງຕ້ອງເວົ້າກັບທຸກໆ ຄົນເທົ່າທີ່ຈະເປັນໄປໄດ້ ບໍ່ວ່າຄົນໃນຊຸມຊົນນັ້ນຈະມີຖານະຫລືຕຳແໜ່ງສູງກໍຕາມ. ຜູ້ເລົ່າເຣື່ອງຕ້ອງແນມເບິ່ງ ແລະເວົ້າກັບບັນດາຜູ້ຟັງໃນກຸ່ມຊຶ່ງເປັນການສະແດງອອກເຖິງ "ໃຜເປັນເພື່ອນບ້ານຂອງເຮົາ" ເໝືອນໃນຄຳອຸປມາເຣື່ອງໄຫຊາມາເຮັ່ງໃຈດີ.

ພຣະເຈົ້ານ້ອຍໆ ທັງຫລາຍຂອງໂລກນີ້ໄດ້ຊຶມຊວ່ານເຂົ້າໄປສູ່ວັທນະທັມຕ່າງໆ ຂອງບັນດາມະນຸດຊາດ ເຮັດໃຫ້ຄວາມເຂັ້ມແຂງມີຣາຄາສູງແລະຄວາມອ່ອນແອມີຣາຄາຕ່ຳ. ຈະເຫັນໄດ້ແຈ້ງຈາກຂໍ້ພຣະຄັມພີທີ່ວ່າ ບໍ່ໃຫ້ປະວາງຄົນໃດຄົນນຶ່ງ ໃຫ້ທຸກຄົນມີສ່ວນ ອົງພຣະເຢຊູໄດ້ກະທຳສິ່ງນີ້ແລ້ວ. ພຣະອົງຊົງຖືກຕຳໜິເພາະໄດ້ກະທຳສິ່ງນີ້ ຄືພຣະອົງຊົງຍອມຮັບແລະໄດ້ໃຊ້ເວລາກັບຄົນທີ່ສັງຄົມປະຖິ້ມແລະຄົນທີ່ສັງຄົມເຫັນວ່າເປັນຄົນຕ່ຳຕ້ອຍ.

ໃນການຝຶກອົບຮົມເລົ່າເຣື່ອງເຈາະໃຈ, ເຮົາໄດ້ສະແດງອອກເຖິງວິທີທີ່ຈະໃຫ້ຄົນທັງຫລາຍທີ່ສັງຄົມປະໄວ້ຂ້າງໆ ໄດ້ມີສ່ວນຮ່ວມ ບໍ່ວ່າຈະເປັນຜູ້ຍິງ, ເດັກນ້ອຍ, ຄົນຕ່ຳຕ້ອຍ, ຄົນທີ່ສັງຄົມລັງກຽດ, ຄົນທີ່ບໍ່ມີການສຶກສາ ຫລືເຊື້ອຊາດອື່ນໆ ທີ່ຄົນອື່ນເຫັນວ່າຕ່ຳຕ້ອຍ.

ເມື່ອເຫັນວ່າມີບາງສິ່ງໃນວັທນະທັມຂັດແຍ່ງກັບພຣະຄັມພີ ຜູ້ທີ່ເຊື່ອຈະຕ້ອງເປັນຜູ້ຕັດສິນໃຈເລືອກ:

ຈະຍອມໃຫ້ວັທນະທັມນຳພາຄວາມປະພຶດແລະຄວາມເຊື່ອ ຫລືຈະໃຫ້
ພຣະຄຳຂອງພຣະເຈົ້ານຳພາໃນຄວາມປະພຶດແລະຄວາມເຊື່ອ ເພື່ອກ້າວ
ຂຶ້ນໄປສູ່ລະດັບທີ່ສູງກວ່າ ຜູ້ເຊື່ອແຕ່ລະຄົນຕ້ອງຕັດສິນໃຈເອົາເອງ.

11. **ຈົບການເລົ່າເຣື່ອງ.** ເມື່ອທ່ານເລົ່າເຣື່ອງສິ້ນສຸດລົງ ຈົ່ງບອກບັນດາຜູ້ຟັງວ່າ, "ເຣື່ອງນີ້ກໍຈົບພຽງເທົ່ານີ້" ແລ້ວປິດພຣະຄັມພີ. ຫລືເຣື່ອງທີ່ຂ້າພະເຈົ້າເລົ່າຈົບລົງ ໄດ້ມາຈາກພຣະຄັມພີນີ້.

12. **ເລົ່າເລື້ອຍໆ ໃນເຣື່ອງທີ່ທ່ານເລືອກ** ເລົ່າກັບຜູ້ໃດກໍໄດ້ຄືຜູ້ທີ່ຈະຟັງທ່ານເລົ່າ ຈົນກວ່າທ່ານໄດ້ເລົ່າເຣື່ອງນັ້ນໆໄດ້ລ່ຽນໄຫລດີ. ຖ້າຊອກຫາຜູ້ໃດບໍ່ໄດ້ທີ່ຈະຟັງທ່ານເລົ່າ ກໍໃຫ້ເລົ່າກັບສັດສາວາສິ່ງທີ່ຢູ່ໃກ້ໆ ທ່ານ ຫລືເລົ່າກັບຕົ້ນໄມ້ກໍໄດ້. ຈົ່ງຈື່ໄວ້ສເມີວ່າ, ທ່ານບໍ່ໄດ້ທ່ອງຂຶ້ນໃຈຈາກຖ້ອຍຄຳແຕ່ລະຄຳໃນພຣະຄັມພີ ແຕ່ທ່ານເລົ່າເຣື່ອງໃນ

ພຣະຄັມພີໄດ້ຢ່າງຖືກຕ້ອງ.

ຈົ່ງກ້າຫານ-ຈົ່ງໝັ້ນໃຈ-ຢ່າຈົດບັນທຶກໄວ້

ຄິດເບິ່ງວ່າພຣະເຢຊູຊົງຢືນຂຶ້ນເທສນາຢູ່ຈ້າຍພູ ພຣະອົງຊົງເບິ່ງເຈ້ຶ້ງຈົດບັນທຶກຈາກໂຄມໄຟທີ່ໃຊ້ນ້ຳມັນໃນສມັຍ ນັ້ນຫລືບໍ່? ອາດຈະບໍ່ໄດ້ເບິ່ງ ! ຖ້າມີຄົນຂໍໃຫ້ທ່ານເລ່ົາໃຫ້ຟັງວ່າທ່ານໄດ້ພົບກັບສາມີ/ພັລຍາຂອງທ່ານຢ່າງໃດ ທ່ານ ຈະເລ່ົາດ້ວຍການເພ່ິ່ງຈາກເຈ້ຶ້ງຈົດບັນທຶກຢູ່ບໍ? ປະສົບການຊີວິດບາງຢ່າງ ເຮົາຈະຈ່ືຈຳໄດ້ດີ ເພາະເຮົາເປັນເຈ້ົາຂອງ ປະສົບການນັ້ນ. ຫລືແມ່ນແຕ່ເຮົາເວ້ົາກັບເພ່ືອນໆ ເຖ່ິງຊີວິດຂອງເຮົາແຕ່ລະມ້ື ເຮົາກໍເວ້ົາຈາກຄວາມຈົດຈຳຂອງເຮົາ. ເຮົາເປັນເຈ້ົາຂອງຂໍ້ມູນເຫລ່ົານັ້ນ ເພາະວ່ານັ້ນເປັນພຽງເຮ່ືອງນ່ຶງເຮົາຈ່ຶງສາມາດເລ່ົາລ້ົມຄືນໄດ້.
ພວກເຮົາຮູ້ວ່າ "ການເລ່ົາເຮ່ືອງເຈາະໃຈ" ແມ່ນຢາກໃຫ້ທ່ານມີຄວາມຊ່ຽວຊານແບບໃໝ່ ຖ້າທ່ານເຄ່ັຍເປັນນັກເທດ ຫລືຄຣູສອນ ແນ່ນອນທ່ານກໍຕ້ອງໃຊ້ການຈົດບັນທຶກເພ່ືອຊ່ວຍຄວາມຈຳຂອງທ່ານ. ເມ່ືອທ່ານອະທິບາຍຫລືຮຽນຮູ້ ສ່ິງໃໝ່ໆ ສຳລັບຕົນ ທ່ານກໍຈະຈັດຕຽມເປັນຫົວເຮ່ືອງ, ການຈົດບັນທຶກຈ່ຶງຈຳເປັນສຳລັບທ່ານ. ແຕ່ຖ້າເປັນເຮ່ືອງ ທ່ານບ່ໍຈຳເປັນຕ້ອງຈົດບັນທຶກ.

ພວກເຮົາຈ່ຶງຂໍແນະນຳໃຫ້ເຮັດຕາມວິທີຂອງ "ການເລ່ົາເຮ່ືອງເຈາະໃຈ" ຈ່ຶງເຊ່ືອໝ້ັນວ່າແຕ່ລະຂ້ັນຕອນຂອງ "ການ ເລ່ົາເຮ່ືອງເຈາະໃຈ" ນ້ັນມີຈຸດປະສົງ.

ເມ່ືອທ່ານຕຽມເຮ່ືອງເພ່ືອຈະເລ່ົາແບບ "ການເລ່ົາເຮ່ືອງເຈາະໃຈ" ຄວນຈະຈ່ືເຮ່ືອງນ້ັນໄວ້ໃນ(ຖ່ຶງ)ໃຈ ບ່ໍແມ່ນໃນ ການຈົດບັນທຶກ ສຳລັບຜູ້ທ່ີອ່ານຫລາຍໆ ກໍເຫັນວ່າເປັນໄປບ່ໍໄດ້. ດັ່ງທ່ີເຄ່ັຍໄດ້ກ່າວມາແລ້ວນ້ັນ ເກ່ືອບທຸກໆ ຄົນ ທ່ີອ່ານກໍຈະເພ່ິ່ງການຈົດບັນທຶກເພ່ືອຈະຈ່ືຂໍ້ມູນຕ່າງໆ ໄດ້. ແຕ່ສຳລັບ "ການເລ່ົາເຮ່ືອງເຈາະໃຈ" ທ່ານບ່ໍຈຳເປັນ ຕ້ອງເພ່ິ່ງການຈົດບັນທຶກ ດັ່ງນ້ັນພວກເຮົາຈ່ຶງຮຽກຮ້ອງໃຫ້ທ່ານເຮັດສ່ິງທ່ີແປກໆ ນ້ີ. ຮຽນແລະຕຽມບົດຮຽນໂດຍ ທ່ີ**<u>ບ່ໍຕ້ອງຈົດບັນທຶກ</u>**! ແມ່ນແລ້ວພວກເຮົາເວ້ົາຢ່າງເອ່ົາຈ່ິງວ່າ **<u>ບ່ໍ</u>**ຕ້ອງຈົດບັນທຶກ.

ຄວາມສາມາດທ ii: ວິທ ີຄົ້ນຫາຂຸມຊັບຝ່າຍວິນຍານໃນເຮ່ືອງ

ຄວາມສາມາດທ ີສອງທ ີ່ ທ ່ ານຕ ້ ອງມ ີ ນ ັ ້ ນ ແມ ່ ນວ ິ ທ ີ ຄ ົ ້ ນຫາຂ ຸ ມຊ ັ ບພ າຍໃນເ ຮ ່ ຶ ອ ງທ ີ ່ ທ ່ ານຈ ະ ນ ໍ າ ໄ ປ ເ ລ ່ ົ າ

ແມ່ນຫຍັງຄ ືຂຸມຊັບທ ີ ່ ຢ ູ ່ ໃ ນ ເ ຮ ່ ຶ ອ ງພ ຣ ະ ຄ ັ ມ ພ ີ ? ຄວາມຈ ິ ງ ຝ ່ າ ຍ ວ ິ ນ ຍ ານທ ີ ່ ພ ຣ ະ ເ ຈ ້ ົ າ ຊ ົ ງ ປ ະ ທ ານ ໄ ວ ້ ໃ ນ ເ ຮ ່ ຶ ອ ງ ພ ຣ ະ ຄ ັ ມ ພ ີ ທ ຸ ກ ໆ ເ ຮ ່ ຶ ອ ງ ຄ ື "ຂ ຸ ມ ຊ ັ ບ." ຂ ຸ ມ ຊ ັ ບ ເ ຫ ລ ່ ົ ານ ້ ີ ແ ມ ່ ນ ມ າ ຈ າ ກ ສ ່ ອ ນ ປ ະ ກ ອ ບ ຂ ອ ງ ກ ານ ສ ັ ງ ເ ກ ດ ຝ ່ າ ຍ ວ ິ ນ ຍ ານ ແ ລ ະ ກ ານ ນ ໍ າ ໃ ຊ ້ ຝ ່ າ ຍ ວ ິ ນ ຍ ານ. (Spiritual Obsvervations & Spiritual Applications)

ການສ ັ ງ ເ ກ ດ ຝ ່ າ ຍ ວ ິ ນ ຍ ານ(ຂ ຸ ມ ຊ ັ ບ ຝ ່ າ ຍ ວ ິ ນ ຍ ານ) ແ ມ ່ ນ ກ ານ ທ ໍ າ ງ ານ ຂ ອ ງ ພ ຣ ະ ເ ຈ ້ ົ າ ໃ ນ ຊ ີ ວ ິ ດ ຂ ອ ງ ບ ຸ ກ ຄ ົ ນ ທ ີ ່ ຢ ູ ່ ໃ ນ ເ ຮ ່ ຶ ອ ງ.

ການນ ໍ າ ໃ ຊ ້ ຝ ່ າ ຍ ວ ິ ນ ຍ ານ ແ ມ ່ ນ ຄ ວ າ ມ ຈ ິ ງ ຝ ່ າ ຍ ວ ິ ນ ຍ ານ ຊ ຶ ່ ງ ໄ ດ ້ ມ າ ຈ າ ກ ກ ານ ສ ັ ງ ເ ກ ດ ຂ ຸ ມ ຊ ັ ບ ຝ ່ າ ຍ ວ ິ ນ ຍ ານ ແ ລ ້ ວ ນ ໍ າ ມ າ ໃ ຊ ້ ໃ ນ ຊ ີ ວ ິ ດ ຂ ອ ງ ພ ວ ກ ເ ຮ ົ າ ໃ ນ ປ ັ ດ ຈ ຸ ບ ັ ນ ນ ້ ີ.

ຊ່ອຍຜູ້ຄົ້ນຫາ ເພື່ອໃຫ້ລາວໄດ້ພົບ. ຈື່ໄດ້ບໍ່ເຣື່ອງຟີລິບກັບຄົນເທີອຍໃນພຣະທັມກິຈການ. ເຮົາພົບວ່າມີຜູ້ຊາຍທີ່ສຳຄັນຄົນນຶ່ງເປັນຄົນເທີອຍຊາວເອທິໂອເປັ ທີ່ນັ່ງຢູ່ເທິງຣົດມ້າອ່ານພຣະທັມເອຊາຢາ. ພຣະເຈົ້າຊົງສັ່ງຟີລິບໄປພົບກັບຄົນເທີອຍເພື່ອອະທິບາຍຂໍ້ພຣະຄັມພີໃຫ້ລາວເຂົ້າໃຈ. ການຟັງການເລົ່າເຣື່ອງເປັນສິ່ງທີ່ດີ ແຕ່ການຊ່ອຍຜູ້ຟັງໃຫ້ເຂົ້າໃຈໃນເນື້ອເຣື່ອງທີ່ເຂົາເຈົ້າຫາກໍໄດ້ຍິນຈາກພຣະຄັມພີນັ້ນ ເປັນສິ່ງທີ່ດີກວ່າ.

ວິທີຄົ້ນຫາຂຸມຊັບເອີ້ນວ່າ "ສັ່ງເກດຝ່າຍວິນຍານ" (ຄົ້ນຫາຂຸມຊັບຝ່າຍວິນຍານ)

ທ່ານບໍ່ພຽງແຕ່ເປັນຜູ້ສຳຣວດເບິ່ງເຣື່ອງເໝືອນກັບເປັນພາກສ່ວນນຶ່ງຂອງປະຫວັດສາດ; ແຕ່ທ່ານກຳລັງຊອກຫາເພື່ອຈະຄົ້ນເບິ່ງວ່າແມ່ນຫຍັງເກີດຂຶ້ນທາງດ້ານຈິດວິນຍານ. ພຣະເຈົ້າຊົງມີແຜນການສຳລັບທຸກຄົນສເມີຢູ່ໃນເຣື່ອງພຣະຄັມພີແຕ່ລະເຣື່ອງ. ສິ່ງທີ່ບຸກຄົນໃນເຣື່ອງໄດ້ຮຽນຮູ້(ຫລືບໍ່ໄດ້ຮຽນຮູ້) ເຮົາກໍໄດ້ຄົ້ນພົບສິ່ງເຫລົ່ານັ້ນ ທີ່ພຣະເຈົ້າຢາກໃຫ້ເຮົາໄດ້ຮຽນຮູ້. ດັ່ງທີ່ໄດ້ອະທິບາຍມາກ່ອນນັ້ນ, ພາກສ່ວນທີ່ທ່ານຈື່ໄດ້ແລະເຂົ້າໃຈເຣື່ອງໃນພຣະຄັມພີ ແມ່ນເຮັດໃຫ້ເຣື່ອງນັ້ນໆ ມີຊີວິດຊີວາ.

ໃນຂະນະທີ່ທ່ານໃຫ້ເຣື່ອງນັ້ນມີຊີວິດຊີວາຈາກການເວົ້າແລະການກະທຳຂອງແຕ່ລະບຸກຄົນໃນເຣື່ອງ ຈົ່ງສັງເກດເບິ່ງນຳວ່າພຣະເຈົ້າກຳຊົງທຳງານໃນເຣື່ອງນັ້ນ. ການ "ໃຫ້ເຣື່ອງມີຊີວິດຊີວາ" ໄດ້ຊ່ອຍທ່ານໃຫ້ຄົ້ນພົບຂຸມຊັບຕ່າງໆ ຂອງເຣື່ອງນັ້ນ.

ເພື່ອຈະຊອກຫາຂຸມຊັບຝ່າຍວິນຍານເຫຼົ່ານີ້ ຈົ່ງກັບຄືນໄປເບິ່ງເຣື່ອງໃຫ້ຈົບອີກເທື່ອນຶ່ງວ່າ ໃນເຣື່ອງໄດ້ເວົ້າກ່ຽວກັບແຕ່ລະບຸກຄົນຫລືກຸ່ມຄົນໃນເຣື່ອງແນວໃດແດ່ ພຣະເຈົ້າຈະຊົງທຳງານກັບທຸກໆ ຄົນຢູ່ໃນເຣື່ອງເພື່ອສັ່ງສອນເຂົາເຈົ້າແນວໃດແນວນຶ່ງ.

ຖ້າທ່ານມີຂໍ້ພຣະຄັມພີທີ່ພິມໄວ້ຫລືເປັນສຽງທີ່ອັດໄວ້ ທີ່ມີຂໍ້ຄວາມພຣະຄັມພີທີ່ຢູ່ກ່ອນເຣື່ອງທີ່ທ່ານຈະເລົ່າ ເຫັນວ່າເປັນການສຳຄັນຖ້າທ່ານຫາກສຳຣວດເບິ່ງຂໍ້ມູນເຫລົ່ານັ້ນ. ໄຕ່ຕອງພິຈາຣະນາສິ່ງທີ່ເກີດຂຶ້ນກ່ອນເຣື່ອງທີ່ທ່ານຈະເລົ່າ ມີຫຍັງແດ່ທີ່ອາດຈະຊ່ອຍທ່ານໃຫ້ເຂົ້າໃຈວ່າບຸກຄົນໃນເຣື່ອງທີ່ທ່ານຈະເລົ່າມີໃຜແດ່, ເ ຂົາເຈົ້າຮູ້ຫຍັງແດ່ ແລະ ມີປະສົບການແນວໃດແດ່.

ຄຳອະທິບາຍສັ້ນໆ ເຣື່ອງການຄົ້ນຫາ(ສັ່ງເກດ)ຂຸມຊັບຝ່າຍວິນຍານ:
ຜູ້ໃຫ້ຄຳປຶກສາທີ່ສລາດ

ເປັນເວລາດົນນານມາແລ້ວ ໄຫບ້ານໄດ້ຜິດຖຽງກັນເຣື່ອງນ້ຳສ້າງ ບໍ່ຮູ້ວ່ານ້ຳສ້າງນັ້ນແມ່ນໃຜເປັນເຈົ້າຂອງກັນແທ້ ເມື່ອຕົກລົງກັນບໍ່ໄດ້ເຂົາເຈົ້າຈຶ່ງພາກັນໄປຂໍຄຳປຶກສານຳຜູ້ໃຫ້ຄຳປຶກສາທີ່ສລາດ ຜູ້ໃຫ້ຄຳປຶກສາໄດ້ຖາມໄຫບ້ານຫລາຍຄຳຖາມເພື່ອລາວຊິໄດ້ເຂົ້າໃຈເຖິງບັນຫາແລະໃຫ້ຄຳປຶກສາຢ່າງຖືກຕ້ອງ.

ທຳອິດ ຜູ້ໃຫ້ຄຳປຶກສາໄດ້ຖາມໄຫບ້ານວ່າ "[1]ມີ<u>ເຣື່ອງຫຍັງເກີດຂຶ້ນ</u> ເລົ່າສັ້ນໆ ໃຫ້ຂ້ອຍຟັງເບິ່ງດູ?" ເມື່ອໄຫ ບ້ານ

ເລົ່າເຣື່ອງນັ້ນສັ້ນໆ ຈົບແລ້ວ ຜູ້ໃຫ້ຄຳປຶກສາໄດ້ຖາມອີກວ່າ "[2]ມີຫຍັງເກີດຂຶ້ນກ່ອນເຣື່ອງນີ້?" ໄຫບ້ານ ກໍໄດ້ເລົ່າ ວ່າມີຫຍັງແດ່ເກີດຂຶ້ນກ່ອນເຣື່ອງນີ້.

ຕໍ່ຈາກນັ້ນ ຜູ້ໃຫ້ຄຳປຶກສາໄດ້ບອກໄຫບ້ານວ່າ "ຈົ່ງເລົ່າເຣື່ອງທັງໝົດທີ່ເກີດຂຶ້ນແຕ່ຕົ້ນຈົນຈົບແລະເລົ່າຊ້ຳໆເພື່ອ ຂ້ອຍຊິໄດ້ເຂົ້າໃຈ." ໄຫບ້ານຈຶ່ງເລີ້ມເລົ່າເຣື່ອງນັ້ນຊ້ຳໆ ພໍເລົ່າໄປໄດ້ໜ້ອຍນຶ່ງຜູ້ໃຫ້ຄຳປຶກສາໄດ້ບອກໃຫ້ເຂົາເຈົ້າ ໂຈະໄວ້ແລ້ວຖາມວ່າ "ໃນຕອນນີ້ພວກເຈົ້າ [3]ໄດ້ເວົ້າໄດ້ເຮັດຫຍັງ?" ໄຫບ້ານກໍໄດ້ຕອບວ່າເຂົາເຈົ້າໄດ້ເວົ້າແລະໄດ້ ເຮັດຫຍັງ. ແລ້ວຜູ້ໃຫ້ຄຳປຶກສາຖາມອີກວ່າ, "ແມ່ນຫຍັງຄື[4]ທາງເລືອກ ຂອງພວກເຈົ້າ?" ໄຫບ້ານກໍໄດ້ບອກເຖິງ ທາງເລືອກຂອງເຂົາເຈົ້າ. ຜູ້ໃຫ້ຄຳປຶກສາໄດ້ຖາມຕໍ່ໄປວ່າ, "ພວກເຈົ້າມີ [5]ທາງເລືອກອື່ນບໍ່?" ໄຫບ້ານກໍໄດ້ບອກເຖິງ ທາງເລືອກອື່ນຂອງເຂົາເຈົ້າ. ຜູ້ໃຫ້ຄຳປຶກສາໄດ້ຖາມຕໍ່ໄປອີກວ່າ, "[6]ຜົນທີ່ຕາມມາຈາກທາງເລືອກຄືແນວໃດ?" ໄຫບ້ານກໍໄດ້ບອກເຖິງຜົນທີ່ຕາມມາຈາກທາງເລືອກຂອງເຂົາເຈົ້າ. ສຸດທ້າຍຜູ້ໃຫ້ຄຳປຶກໄດ້ຖາມວ່າ, "ຈາກທາງ ເລືອກຂອງພວກເຈົ້າມີ[7]ຜົນສະທ້ອນ ຢ່າງໃດ? ແລະໄດ້ສະທ້ອນຕໍ່ຜູ້ໃດແດ່? ໄຫບ້ານກໍໄດ້ບອກເຖິງຜົນສະທ້ອນ ຈາກທາງເລືອກຂອງເຂົາເຈົ້າວ່າສະທ້ອນຢ່າງໃດແລະໄດ້ສະທ້ອນຕໍ່ຜູ້ໃດແດ່.

ຕໍ່ມາອີກ ຜູ້ໃຫ້ຄຳປຶກສາໄດ້ບອກໄຫບ້ານວ່າ "ຈົ່ງເລົ່າເຣື່ອງນີ້ໃຫ້ຂ້ອຍຟັງຕໍ່ໄປອີກ" ແລະພໍໄຫບ້ານເລົ່າຕໍ່ຈາກຕອນ ທຳອິດໄປອີກໜ້ອຍນຶ່ງ ຜູ້ໃຫ້ຄຳປຶກສາກໍບອກໃຫ້ເຂົາເຈົ້າໂຈະໄວ້ ແລ້ວລາວກໍໃຊ້ຄຳຖາມດຽວກັນກັບທີ່ລາວ ໄດ້ຖາມໃນຕອນທຳອິດນັ້ນວ່າ ເຂົາເຈົ້າ ໄດ້ເວົ້າໄດ້ເຮັດຫຍັງ, ແມ່ນຫຍັງຄືທາງເລືອກ, ມີທາງເລືອກອື່ນບໍ່, ຜົນ ທີ່ຕາມມາຄືແນວໃດ, ມີຜົນສະທ້ອນຢ່າງໃດແລະໄດ້ສະທ້ອນຕໍ່ໃຜແດ່.

ສຸດທ້າຍ ໄຫບ້ານໄດ້ເລົ່າເຣື່ອງນັ້ນ ເປັນຕອນ ເປັນຕອນ ໄປຈົນຈົບ, ຜູ້ໃຫ້ຄຳປຶກສາກໍໃຊ້ຄຳຖາມດຽວກັນທຸກໆ ຕອນ. ເພາະວ່າຜູ້ໃຫ້ຄຳປຶກສາທີ່ສລາດໄດ້ໃຫ້ໄຫບ້ານເລົ່າເຣື່ອງຊ້ຳໆ ແລະລາວກໍຕັ້ງໃຈຟັງ. ດັ່ງນັ້ນລາວຈຶ່ງເຂົ້າໃຈ ບັນຫານັ້ນຢ່າງແຈ່ມແຈ້ງ ແລະສາມາດໃຫ້ຄຳປຶກສາທີ່ດີແກ່ໄຫບ້ານ...

ໃນ "ການເລົ່າເຣື່ອງເຈາະໃຈ" ພວກເຮົາຢາກຈະຄົ້ນຫາຂໍ້ມູນອັນມີຄ່າທີ່ຢູ່ໃນເຣື່ອງພຣະຄັມພີທຸກໆ ເຣື່ອງ. ເພື່ອຈະ ຊອກຫາຊຸມຊັບ, ເຮົາຕ້ອງຖາມຫລາຍຄຳຖາມ, ເໝືອນກັບຜູ້ໃຫ້ຄຳປຶກສາທີ່ສລາດໄດ້ຖາມຊາວບ້ານ. ແຕ່ເຮົາຕ້ອງ ຖາມໃຫ້ເລິກວ່າມີຫຍັງທີ່ເກີດຂຶ້ນໃນເຣື່ອງ ບໍ່ເຫັນວ່າເປັນພຽງປະຫວັດສາດ. ແຕ່ພວກເຮົາຢາກເຫັນວ່າພວກເຮົາສາ ມາດຮຽນຮູ້ຫຍັງແດ່ທາງດ້ານຈິດວິນຍານ.

ຈົ່ງຈື່ໄວ້ວ່າ ທຳອິດຜູ້ໃຫ້ຄຳປຶກສາທີ່ສລາດໄດ້ຖາມຊາວບ້ານວ່າ, "ຈົ່ງເລົ່າສັ້ນໆ ວ່າມີເຣື່ອງຫຍັງເກີດຂຶ້ນ?" ເຣື່ອງທັງ ໝົດໃນພຣະຄັມພີແລະຖ້ອຍຄຳຕ່າງໆ ຈະມີຄວາມເຄັ່ງຕຶງແລະບັນຫາໃນເຣື່ອງນັ້ນໆ. ພວກເຮົາເອີ້ນວ່າ "ສະຖານະ ການ" (ເຣື່ອງທີ່ເກີດຂຶ້ນ) ກ່ອນທີ່ເຮົາຈະເລົ່າເຣື່ອງພຣະຄັມພີຊ້ຳໆ ແລະຖາມຄຳຖາມທຳອິດເຮົາຕ້ອງເບິ່ງສະຖານະ ການ (ເຣື່ອງທີ່ເກີດຂຶ້ນ)ກ່ອນເຊັ່ນ *ບຸກຄົນໃນເຣື່ອງກຳລັງຫິວຫລືກຳລັງຢູ່ໃນອັນຕະລາຍບໍ? ເຂົາເຈົ້າຢ້ານກົວ, ມີ ຄວາມສັບສົນໃຈ ຫລືມີສິ່ງໃດສິ່ງນຶ່ງທີ່ຂັດແຍ່ງກັນບໍ?*

ການຮູ້ຈັກສະຖານະການຈະເຮັດໃຫ້ບຸກຄົນໃນເຣື່ອງກາຍເປັນເຣື່ອງຈິງຕໍ່ເຮົາ ເຮົາຈະມີຄວາມຮູ້ສຶກໃນເຣື່ອງ ຖ້າເຮົາ ຫາກຮັບຮູ້ວ່າບຸກຄົນໃນເຣື່ອງຈະເປັນແນວໃດເມື່ອເຂົາເຈົ້າຢູ່ໃນສະຖານະການເຊັ່ນນັ້ນ.

ອີກປະການນຶ່ງ, ກ່ອນທີ່ພວກຊາວບ້ານຈະເລົ່າເຣື່ອງບັນຫາຂອງເຂົາເຈ້ົາ ຜູ້ໃຫ້ຄຳປຶກສາຄົນນັ້ນໄດ້ຖາມຊາວບ້ານວ່າ ແມ່ນຫຍັງເກີດຂຶ້ນກ່ອນບັນຫານີ້ຈະເກີດຂຶ້ນ. ໃນກໍຣະນີດຽວກັນ ເມື່ອຊອກຫາຊຸມຊັບຢູ່ໃນເຣື່ອງພຣະຄັມພີ ເຮົາຕ້ອງ ຊອກຫາຮອບໆ ບ່ອນທີ່ເຣື່ອງນັ້ນເກີດຂຶ້ນ ຫລືທີ່ເອີ້ນອີກຢ່າງນຶ່ງວ່າສະພາບແວດລ້ອມ.

ສັງເກດຕໍ່ໄປນີ້: ເຖິງແມ່ນສະພາບແວດລ້ອມຂອງເຣື່ອງຈະຊ່ອຍເຮົາໄດ້ດີ, ເຮົາຍັງຕ້ອງລົງເລິກໄປກວ່ານັ້ນອີກ, ລົງ ເລິກໄປກວ່າສິ່ງທີ່ຜູ້ໃຫ້ຄຳປຶກສາທີ່ສລາດໄດ້ກະທຳ. ເຮົາຍັງຕ້ອງໄດ້ຊອກຫາສິ່ງແວດລ້ອມຝ່າຍວິນຍານນຳອີກ. ເຮົາຕ້ອງຊອກຫາທາງຕ່າງໆ ທີ່ພຣະເຈ້ົາຊົງທຳງານໃນຊີວິດຂອງບຸກຄົນເຫລົ່ານັ້ນໃນເຣື່ອງ. ເຮົາອາດຈະຄົ້ນຄວ້າ ເບິ່ງວ່າເປັນດ້ວຍເຫດໃດເຂົາເຈ້ົາຈຶ່ງຕົກຢູ່ໃນສະຖານະການເຊັ່ນນັ້ນ ຫລືເຂົາເຈ້ົາໄດ້ຕໍ່ສູ້ດິ້ນລົນແນວໃດແດ່ ຫລືເຂົາ ເຈ້ົາໄດ້ຮັບໃຊ້ພຣະເຈ້ົາຫລືບໍ່. ການຊອກຫາສະຖານທີ່ໆເຣື່ອງນັ້ນເກີດຂຶ້ນຫລືສະພາບແວດລ້ອມທາງຈິດວິນຍານ ຈະຊ່ອຍເຮົາໃຫ້ເຂົ້າໃຈພາກສ່ວນຕ່າງໆ ດ້ານຈິດວິນຍານຢູ່ໃນເຣື່ອງທີ່ເຮົາກຳລັງຄົ້ນຫາເພື່ອຈະນຳໄປເລ່ົາ.

ຍັງຈື່ໄດ້ບໍ່ທີ່ຜູ້ໃຫ້ຄຳປຶກສາທີ່ສລາດໄດ້ບອກພວກຊາວບ້ານໃຫ້ເລ່ົາເຖິງບັນຫາຂອງເຂົາເຈ້ົາຢ່າງຊ້ໆ ແລະໃນແຕ່ລະ ຕອນທີ່ລາວໄດ້ບອກໃຫ້ຊາວບ້ານເລ່ົາແລະກະທຳ? ໃນ "ການເລ່ົາເຣື່ອງເຈາະໃຈ" ເມື່ອເຮົາຮຽນເລ່ົາເຣື່ອງເຮົາກໍ ເລ່ົາຊ້ໆ ຕັ້ງແຕ່ຕອນເລີ້ມຕົ້ນຂອງເຣື່ອງແລະຟັງຢ່າງເອົາໃຈໃສ່ໃນແຕ່ລະຕອນ ເໝືອນກັບວ່າເຮົາໄດ້ເຫັນດ້ວຍຈິດ ໃຈຂອງເຮົາແທ້ໆ. ໃຫ້ເຮົາຖາມຕົນເອງວ່າ *ເຮົາສາມາດຮຽນຮູ້ຫຍັງແດ່ທາງດ້ານຈິດວິນຍານ ຈາກການກະທຳແລະ ຄຳເວົ້າຂອງແຕ່ລະບຸກຄົນໃນຕອນນີ້ຂອງເຣື່ອງ?*

ໃຫ້ເຮົາພິຈາຣະນາເບິ່ງທຸກໆ ຄົນທີ່ກ່າວເຖິງໃນຕອນນັ້ນ ຮວມທັງພຣະເຢຊູແລະພຣະເຈ້ົາພຣະບິດາ. ໃຫ້ເຮົາຖາມ ຕົນເອງວ່າ, "ຂ້ອຍໄດ້ຮຽນຫຍັງແດ່ດ້ານຈິດວິນຍານຈາກການເວົ້າແລະການກະທຳ, ຈາກການຕັດສິນໃຈ (ຫລືຄວນ ຈະຕັດສິນໃຈ) ແລະຈາກຜົນກະທົບໂດຍກົງຕໍ່ຜູ້ທີ່ຕັດສິນໃຈ ແລະຜົນກະທົບຕໍ່ຄົນອື່ນໆ ຄຳຕອບຕໍ່ຄຳຖາມທັງໝົດນີ້ ເຮົາເອີ້ນວ່າ "ການສັງເກດດ້ານຈິດວິນຍານ" ຫລືການຄົ້ນຫາຊຸມຊັບຝ່າຍວິນຍານ.

ການຄົ້ນຫາຊຸມຊັບຢ່າງຊ້ໆ ນີ້ຈະຊ່ອຍໃຫ້ເຮົາເຫັນວ່າ ຄົນທີ່ຍັງມີຊີວິດເຊັ່ນພວກເຮົານີ້ໄດ້ເວົ້າແລະໄດ້ກະທຳຫຍັງ ເມື່ອປະເຊີນກັບເຫດການຢ່າງແທ້ຈິງໃນຊີວິດ. ເຮົາໄດ້ຮຽນຮູ້ຢ່າງຫລວງຫລາຍເມື່ອເຮົາໄດ້ພິຈາຣະນາເຖິງຜົນທີ່ຕາມ ມາແລະຜົນກະທົບຈາກການຕັດສິນໃຈຂອງຄົນທີ່ຢູ່ໃນເຣື່ອງ ຫລືສິ່ງເຂົາເຈ້ົາຄວນຈະຕັດສິນໃຈ.

ນອກເໜືອຈາກຄຳຖາມທີ່ຜູ້ໃຫ້ຄຳປຶກສາທີ່ສລາດບໍ່ໄດ້ຖາມ ໃຫ້ເຮົາເບິ່ງໃນເຣື່ອງເພື່ອຊອກຫາວ່າມີພຣະເຈ້ົາຢູ່ໃນ ເຣື່ອງຫລືບໍ່ ເຖິງແມ່ນຊື່ຂອງພຣະເຈ້ົາບໍ່ໄດ້ເອ່ີຍເຖິງຢູ່ໃນເຣື່ອງກໍຕາມ. ເຮົາຕ້ອງຊອກເບິ່ງວ່າພຣະເຈ້ົາຊົງທຳງານໃນ ຊີວິດຂອງບັນດາຜູ້ທີ່ຢູ່ໃນເຣື່ອງແລະໃນສະຖານະການນັ້ນແນວໃດ ແລະເຮົາໄດ້ຮຽນຮູ້ຫຍັງແດ່ກ່ຽວກັບພຣະອົງ.

ຄົນທີ່ຢູ່ໃນເຣື່ອງພຣະຄັມພີ ແມ່ນຄົນທີ່ມີຊີວິດຢູ່ຢ່າງແທ້ຈິງ

ໃຫ້ເຮົາເລີ້ມຄິດເຖິງບັນດາຜູ້ທີ່ມີຊີວິດ ມີລົມຫາຍໃຈ ທີ່ມີປະສົບການກັບສະຖານະການນີ້ຢ່າງແທ້ຈິງ. ຮັບຮູ້ວ່າເຂົາ ເຈ້ົາມີຄວາມຮູ້ສຶກແລະມີອາລົມ ເໝືອນກັບພວກເຮົາ. ຄິດເບິ່ງວ່າບັນດາຜູ້ທີ່ຢູ່ໃນສະພາບການຢ່າງນີ້ຈະມີຄວາມ

ຮູ້ສຶກແນວໃດໃນຂະນະນັ້ນ. ຈາກນັ້ນ ໃຫ້ເຮົາຮຽນຮູ້ເພີ້ມເຕີມກ່ຽວກັບເຣື່ອງນັ້ນ ໃຫ້ເບິ່ງແຕ່ລະບຸກຄົນໃນເຣື່ອງເປັນ ຕອນໆ ໄປຕາມເຣື່ອງທີ່ເກີດຂຶ້ນນັ້ນ.

ຈົ່ງເບິ່ງຕອນທຳອິດຂອງເຣື່ອງ ແລະສັງເກດເບິ່ງແລະຟັງເບິ່ງ. ຈົ່ງຖາມຕົນເອງວ່າ; *ຂ້ອຍສາມາດຮຽນຮູ້ກ່ຽວກັບຄົນ ເຫລົ່ານັ້ນທາງດ້ານຈິດວິນຍານຢ່າງໃດ ຈາກສິ່ງທີ່ຂ້ອຍໄດ້ເຫັນເຂົາເຈົ້າກະທຳແລະປາກເວົ້າ? ເຂົາເຈົ້າກ້າຫານຫລື ຢ້ານກົວ, ເສົ້າໂສກຫລືມີຄວາມສຸກ, ຫລືຂ້ອຍໄດ້ເຫັນຄວາມຮູ້ສຶກອື່ນໆ ຂອງເຂົາເຈົ້າບໍ່? ຂ້ອຍສາມາດເຫັນໄດ້ບໍ່ວ່າ ແມ່ນຫຍັງເຮັດໃຫ້ເຂົາເຈົ້າຮູ້ສຶກແລະກະທຳເຊັ່ນນັ້ນ?*

ໃນແຕ່ລະຕອນຂອງເຣື່ອງໃຫ້ເບິ່ງການຕັດສິນໃຈ. ບາງເທື່ອຄົນໆ ນັ້ນອາດຈະຕັດສິນໃຈໃນທາງທີ່ແຕກຕ່າງຫລືບໍ່? ຈົ່ງຮັບຮູ້ວ່າໃນທຸກໆ ເຣື່ອງໃນພຣະຄັມພີ, ທຸກໆ ຄົນຮວມທັງພຣະເຈົ້າພຣະບິດາແລະອົງພຣະເຢຊູຍ່ອມມີທາງເລືອກ ຫລາຍທາງ ຫລືທາງທີ່ຄວນຕັດສິນໃຈ.

ເມື່ອທ່ານເລີ້ມເຫັນທາງເລືອກຕ່າງໆ ທີ່ບຸກຄົນໃນເຣື່ອງຄວນຕັດສິນໃຈ ທ່ານກໍໄດ້ຄົ້ນພົບຄວາມຈິງ. ຈົ່ງຮູ້ວ່າການ ຕັດສິນໃຈເຫລົ່ານັ້ນແມ່ນການຕັດສິນໃຈເທື່ອທຳອິດຂອງເຂົາເຈົ້າ ແລ້ວເຂົາເຈົ້າກໍກະທຳຕາມທີ່ໄດ້ຕັດສິນໃຈນັ້ນ. ຢູ່ ໃນເຣື່ອງທີ່ທ່ານກຳລັງສຳຣວດເບິ່ງຢູ່ນັ້ນ ທ່ານໄດ້ເຫັນພຽງແຕ່ການຕັດສິນໃຈທີ່ຜ່ານໄປແລ້ວເທົ່ານັ້ນ.

ຈົ່ງເລີ້ມຄິດ: *ແມ່ນຫຍັງຄືທາງອື່ນທີ່ຄວນຕັດສິນໃຈ ທີ່ອາດຈະດີກວ່າ ຫລືບາງເທື່ອ ເຖິງຈະບໍ່ເປັນການຕັດສິນໃຈທີ່ ສລາດ?*

ບາງເທື່ອການຕັດສິນໃຈນັ້ນອາດຈະເປັນການຕັດສິນໃຈທີ່ບໍ່ດີ ແລະທ່ານເຫັນວ່າຜົນທີ່ຕາມມາເປັນທາງລົບຫລືເຈັບ ປວດເພາະໄດ້ຕັດສິນໃຈເຮັດໄປແລ້ວ. ບາງເທື່ອກໍເປັນການຕັດສິນໃຈທີ່ດີ ເພາະຜົນທີ່ໄດ້ຮັບນັ້ນແມ່ນທາງບວກ. ບາງເທື່ອເຮັດໃຫ້ເກີດຄວາມປລາດໃຈ. ບາງເທື່ອຕອນທຳອິດເບິ່ງຄືວ່າບໍ່ດີ ແຕ່ຕໍ່ມາໄດ້ກາຍເປັນດີ. ທ່ານຈຳເປັນ ຕ້ອງເປັນຄົນທີ່ຢາກຮູ້ *ໃນຕອນນັ້ນຂອງເຣື່ອງມີໃຜແດ່ທີ່ໄດ້ຮັບຜົນກະທົບຈາກການຕັດສິນໃຈແລະໄດ້ຮັບຜົນກະທົບ ນັ້ນຢ່າງໃດ?*

ຖາມຕົວທ່ານເອງ: *ຂ້ອຍໄດ້ເຫັນພຣະເຈົ້າຢ່າງໃດຢູ່ໃນເຣື່ອງ? ຂ້ອຍໄດ້ຮຽນຮູ້ກ່ຽວກັບພຣະອົງແນວໃດ ທີ່ພຣະອົງ ໄດ້ເວົ້າແລະໄດ້ກະທຳ?*

ດັ່ງນັ້ນ, ນັ້ນຄືສິ່ງທີ່ພວກເຮົາໄດ້ກະທຳເພື່ອຄົ້ນຫາຊຸມຊັບຝ່າຍວິນຍານ. ພວກເຮົາໄດ້ຊອກຫາເປັນຕອນໆໄປທີ່ຢູ່ໃນ ເຣື່ອງແລະໃຊ້ຄຳຖາມຢ່າງດຽວກັນໃນແຕ່ລະຕອນ. ເຮົາຈະສັງເກດເບິ່ງການເວົ້າ, ການກະທຳ, ແລະການຕັດສິນໃຈ (ຫລືສິ່ງທີ່ຄວນຕັດສິນໃຈ) ແລະສັງເກດເບິ່ງຜົນທີ່ຕາມມາ ແລະຜົນກະທົບຈາກການຕັດສິນໃຈ ທີ່ກະທົບຕໍ່ຄົນອື່ນ ແລະ ຕ້ອງຖາມທຸກໆ ເທື່ອວ່າ: *ຂ້ອຍໄດ້ເຫັນພຣະເຈົ້າຊົງກະທຳຫຍັງ ແລະອະນຸຍາດໃຫ້ສິ່ງໃດເກີດຂຶ້ນໃນຊີວິດ ຂອງຄົນເຫລົ່ານັ້ນທີ່ຢູ່ໃນເຣື່ອງ?*

ໃນຂະນະທີ່ທ່ານຄົ້ນຄວ້າໃນທຸກໆ ເຣື່ອງ, ໃຫ້ຊອກຫາຊຸມຊັບຝ່າຍວິນຍານ, ຊຶ່ງອາດຈະນຳເອົາຄຳຖາມຂອງຜູ້ໃຫ້ຄຳ

ປຶກສາທີ່ສລາດມາໃຊ້ດັ່ງນີ້:

- ຄົນທີ່ຢູ່ໃນເຣື່ອງນີ້ກຳລັງເຮັດຫຍັງແລະເວົ້າຫຍັງ?
- ຂ້າພະເຈົ້າສາມາດເຫັນຄົນຜູ້ນັ້ນທາງຈິດວິນຍານຢ່າງໃດແດ່?
- ຈາກເຣື່ອງນີ້ຂ້າພະເຈົ້າສາມາດຮູ້ໄດ້ບໍ່ວ່າຄົນຜູ້ນີ້ເປັນຜູ້ທີ່ເຊື່ອ, ຜູ້ສແວງຫາ, ຜູ້ສົງສັຍ, ຜູ້ປະຕິເສດ?
- ສິ່ງທີ່ຄົນໃນເຣື່ອງສະແດງອອກມາ ແມ່ນຄວາມເຊື່ອ ຫລືຄວາມສົງສັຍ?
- ພຣະເຈົ້າຊົງໃຊ້ສະຖານະການໃນເຣື່ອງເພື່ອຕັກເຕືອນ, ເພື່ອສອນ ຫລືເພື່ອໜູນນ້ຳໃຈ?

ສຳລັບຜູ້ທີ່ໄດ້ຂໍ້ມູນທີ່ລະອຽດ, ຕໍ່ໄປນີ້ແມ່ນຄຳຖາມທີ່ທ່ານອາດຈະໃຊ້ເພື່ອຄົ້ນຫາຊຸມຊັບຝ່າຍວິນຍານ. ສິ່ງເຫລົ່ານີ້ ພຽງແຕ່ເປັນການແນະນຳເພື່ອໃຫ້ຄວາມຄິດແກ່ທ່ານວ່າ ມີຫລາຍທາງທີ່ທ່ານສາມາດຄົ້ນຫາຊຸມຊັບອັນອຸດົມຝ່າຍ ຈິດວິນຍານທີ່ທ່ານສາມາດພົບຢູ່ໃນແຕ່ລະເຣື່ອງ.

ຖາມຕົນເອງວ່າ:

- *ມີຫຍັງບໍ່ຢູ່ໃນເຣື່ອງທີ່ເຮັດໃຫ້ຂ້ອຍປລາດໃຈ; ການກະທຳຂອງພຣະເຈົ້າຫລືຂອງມະນຸດ, ຫລືຜົນທີ່ຕາມມາ ຈາກການກະທຳຂອງມະນຸດ? ຖ້າຫາກທ່ານ "ຟັງ" ເຣື່ອງຢ່າງຕັ້ງໃຈ ຕາມທີ່ພຣະເຈົ້າຊົງໃຫ້ພວກເຮົາໄດ້ ເຫັນຢູ່ໃນເຣື່ອງ, ຈົ່ງເບິ່ງວ່າທ່ານສາມາດຄົ້ນພົບສາຍເຫດໃນພາກສ່ວນທີ່ເຮັດໃຫ້ເກີດຄວາມປລາດໃຈນັ້ນ ຫລືບໍ່.*
- *ເຫດການທີ່ເກີດຂຶ້ນກ່ອນເຣື່ອງນີ້ສາມາດທີ່ຈະໃຫ້ຄວາມກະຈ່າງແຈ້ງແກ່ຂ້ອຍໄດ້ເຊັ່ນ ບຸກຄົນໃນເຣື່ອງນີ້ມີ ໃຜແດ່ ເປັນຫຍັງເຂົາເຈົ້າຈຶ່ງກະທຳເຊັ່ນນັ້ນ?*
- *ຂ້ອຍໄດ້ເຫັນພຣະລັກສະນະຂອງພຣະເຈົ້າບໍ່ເຊັ່ນ, ຄວາມອົດທົນ, ຄວາມທຸກທໍຣະມານ, ໃຈຮ້າຍ, ຄວາມ ຮອບຮູ້, ຄວາມທ່ຽງທັມ, ຄວາມກະຣຸນາ, ພຣະຄຸນ, ຄວາມເມດຕາ, ຊ່ອຍຄົນທີ່ອ່ອນແອ, ຮັກ ຫລືໃຫ້ຄວາມ ນັບຖືແກ່ທຸກຄົນຢ່າງເທົ່າທຽມກັນ.*
- *ພຣະເຈົ້າຊົງສຳແດງພຣະລັກສະນະນັ້ນແກ່ໃຜ ເປັນບົດຮຽນແກ່ຂ້ອຍຄືແນວໃດ?*
- *ໃນເຣື່ອງນີ້ຂ້ອຍສາມາດຮູ້ໄດ້ບໍ່ວ່າບຸກຄົນໃນເຣື່ອງເປັນຄົນທີ່ເຊື່ອ ຫລືເປັນຄົນທີ່ບໍ່ເຊື່ອ?*
- *ບຸກຄົນໃນເຣື່ອງເປັນຜູ້ສແວງຫາຢ່າງແທ້ຈິງ ຫລືເປັນຄົນສົງສັຍ ຫລືເປັນຄົນຫົວແຂງປະຕິເສດພຣະເຈົ້າ?*
- *ມີຜູ້ໃດໃນເຣື່ອງມີບັນຫາບໍ່? ຖ້າມີ, ແມ່ນບັນຫາໃຫຍ່ຫລືບໍ່?*
- *ຄົນໃນເຣື່ອງທີ່ມີບັນຫາ ໄດ້ພຍາຍາມແກ້ໄຂບັນຫາຢ່າງໃດ?*
- *ຖ້າບຸກຄົນໃນເຣື່ອງທີ່ມີບັນຫາ ໄດ້ໄປຫາພຣະເຈົ້າເພື່ອຂໍຄວາມຊ່ວຍເຫລືອ ຄົນທີ່ໄປນັ້ນໄດ້ທູນຖາມແນວ ໃດ?*
- *ບຸກຄົນໃນເຣື່ອງໄປຫາພຣະເຈົ້າດ້ວຍຄວາມໂຄຣົບຫລືໂອ້ອວດ?*
- *ພຣະເຈົ້າຊົງຕອບສນອງຕໍ່ລາວແນວໃດ, ເຮົາອາດຈະເຫັນແນວໃດ?*
- *ໃນເຣື່ອງ ມີຜູ້ນຳທີ່ຕິດຕາມພຣະເຈົ້າຫລືບໍ່, ຖ້າມີ ຜົນທີ່ຕາມມາຂອງການເຊື່ອຟັງເປັນແນວໃດ?*
- *ໃນເຣື່ອງ ມີຜູ້ນຳທີ່ບໍ່ຕິດຕາມພຣະເຈົ້າຫລືບໍ່, ຖ້າມີ ຜົນທີ່ຕາມມາຂອງການບໍ່ເຊື່ອຟັງເປັນແນວໃດ?*
- *ໃນເຣື່ອງ ມີໃຜບໍ່ທີ່ປ່ຽນແປງຄວາມເຊື່ອ ຫລືປ່ຽນແປງນິສັຍໃໝ່?*
- *ມີບຸກຄົນໃດແດ່ສະແດງໃຫ້ເຫັນຫລັກຖານກ່ຽວກັບຄວາມເຊື່ອ, ຄວາມຮັກ, ຄວາມເມດຕາ, ໃຈຮ້າຍ, ຍ້ານ ກົວ, ຄວາມຫວັງ, ຕີລາຄາກ່ອນເຫດການ, ສົງສັຍ, ໂລບ, ໃຈສັບສົນ, ເພີກເສີຍ, ມີປັນຍາ, ນັບຖື, ເຊື່ອໃນ*

ອະພິນິຫານ ແລະກິຣິຍາທ່າທີອື່ນໆ?

- *ພຣະເຈົ້າຊົງຕອບສນອງຕໍ່ຄວາມເຊື່ອ, ຄວາມຮູ້ສຶກ, ຄຳເວົ້າ ຫລືການກະທຳ ຂອງຄົນເຫລົ່ານັ້ນຢ່າງໃດ, ແລະການຕອບສນອງຂອງພຣະເຈົ້າສຳແດງໃຫ້ເຮົາເຫັນຢ່າງໃດ?*
- *ບຸກຄົນໃນເຣື່ອງມີການປ່ຽນແປງການກະທຳຫລືບໍ?*
- *ແມ່ນຫຍັງແທ້ທີ່ເຮັດໃຫ້ເຂົາເຈົ້າມີການປ່ຽນແປງ?*
- *ແມ່ນຫຍັງເກີດຂຶ້ນເມື່ອເຂົາເຈົ້າມີການປ່ຽນແປງ, ແລະເປັນບົດຮຽນຕໍ່ເຮົາແນວໃດ?*
- *ມີການອັສຈັນຫລືມະຫັສຈັນເກີດຂຶ້ນໃນເຣື່ອງນີ້ບໍ, ຖ້າມີ ການອັສຈັນສິ່ງຜົນສະທ້ອນຕໍ່ບຸກຄົນໃນເຣື່ອງນີ້ຢ່າງໃດ?*

ວິທີຄົ້ນຫາຂຸມຊັບ ຊຶ່ງເອີ້ນວ່າ "ການນຳໃຊ້ໃນຊີວິດຝ່າຍຈິດວິນຍານ"

ການຄົ້ນຫາການນຳໃຊ້ໃນຊີວິດຝ່າຍວິນຍານ. ຫລັງຈາກເຮົາໄດ້ສຳຣວດເບິ່ງເຣື່ອງຢ່າງຄັກແນ່ແລ້ວ ເຮົາກໍຢາກຮູ້ວ່າ ເຣື່ອງນີ້ມີຄວາມໝາຍຕໍ່ເຮົາໃນທຸກວັນນີ້ຢ່າງໃດ. ນີ້ແມ່ນເວລາທີ່ເຮົາຄົ້ນຫາ "ການນຳໄປໃຊ້ໃນຊີວິດຝ່າຍວິນຍານ." ເຮົາສາມາດເຮັດສິ່ງນີ້ໄດ້ ດ້ວຍເອົາຕົວຂອງເຮົາເຂົ້າໄປໃນເຣື່ອງທີ່ເຮົາໄດ້ສັງເກດຢ່າງຄັກແນ່ແລ້ວນັ້ນ. ເຮົາເບິ່ງ ເຣື່ອງຜ່ານທາງສາຍຕາຂອງຜູ້ທີ່ມີຊີວິດຢູ່ໃນເຣື່ອງ. ຕໍ່ຈາກນັ້ນ ຈາກທາງໃນຂອງເຣື່ອງ ໃນແຕ່ລະຕອນໃຫ້ເຮົາເບິ່ງ "ຂຸມຊັບຝ່າຍວິນຍານ" ຊຶ່ງເຮົາໄດ້ຄົ້ນພົບແລ້ວໃນຕອນນັ້ນໆ ທີ່ຜ່ານມາ.

ເຄັດລັບຄວາມສຳເຣັດໃນການ "ເລົ່າເຣື່ອງພຣະຄັມພີ" - **ການນຳໃຊ້ໃນຊີວິດຝ່າຍວິນຍານ** ຕ້ອງໄດ້ມາຈາກ**ການຄົ້ນຫາຂຸມຊັບຝ່າຍວິນຍານ** ທີ່ທ່ານໄດ້ຄົ້ນພົບຢູ່ໃນເຣື່ອງ.
ຖາມຕົວທ່ານເອງ ດ້ວຍຄຳຖາມເຫລົ່ານີ້:

1. *ສະຖານະການທີ່ຂ້ອຍໄດ້ເຫັນໃນເຣື່ອງ..... ໃນທຸກມື້ນີ້ ຍັງມີສິ່ງທີ່ຄ້າຍຄືກັນນີ້ເກີດຂຶ້ນຢູ່ບໍ?*
2. *ຖ້າຍັງມີ, ແມ່ນອັນໃດແດ່ທີ່ຄ້າຍຄືກັນນັ້ນໄດ້ເກີດຂຶ້ນ?*
3. *ສິ່ງນີ້ໄດ້ເກີດຂຶ້ນກັບຂ້ອຍຢູ່ບໍ...ຫລືເກີດຂຶ້ນກັບຄົນທີ່ຂ້ອຍຮູ້ຈັກຢູ່ບໍ?*
4. *ດຽວນີ້ກໍຍັງເກີດຂຶ້ນຢູ່ບໍ, ຖ້າຍັງເກີດຂຶ້ນຢູ່ ມັນເກີດຂຶ້ນແບບໃດ ແລະສິ່ງທີ່ເກີດຂຶ້ນໃນເຣື່ອງນີ້ສາມາດຊ່ວຍໄດ້ຢ່າງໃດ?*

ພຍາຍາມໃຊ້ບາງຄຳຖາມທີ່ເປັນຄຳຖາມດຽວກັນທີ່ທ່ານໃຊ້ໃນການຄົ້ນຫາຂຸມຊັບຝ່າຍວິນຍານ ເພື່ອຊອກຫາການ ນຳໃຊ້ໃນຊີວິດສ່ວນຕົວ. ທ່ານອາດຈະຖາມດັ່ງນີ້:

- *ແມ່ນແລ້ວ, ສິ່ງນັ້ນເຄີຍເກີດຂຶ້ນກັບຂ້ອຍແຕ່ກ່ອນ. ຂ້ອຍໄດ້ເວົ້າຫຍັງ? ຂ້ອຍໄດ້ເຮັດຫຍັງ?*
- *ຂ້ອຍມີທາງເລືອກຫລືບໍ່, ແລະທາງທີ່ຂ້ອຍເລືອກນັ້ນແມ່ນຫຍັງ?*
- *ຂ້ອຍສົມຄວນຈະເຮັດແນວໃດ? ຜົນທີ່ຕາມມາຂອງການເລືອກຂອງຂ້ອຍນັ້ນແມ່ນຫຍັງ?*
- *ມີໃຜແດ່ທີ່ໄດ້ຮັບຜົນກະທົບຈາກການເລືອກຂອງຂ້ອຍ, ແລະແມ່ນຫຍັງຄືສິ່ງທີ່ກະທົບຕໍ່ເຂົາເຈົ້າ?*
- *ຖ້າຫາກສິ່ງເຫລົ່ານີ້ເກີດຂຶ້ນກັບຂ້ອຍເວລານີ້ ຂ້ອຍຈະເຮັດແນວໃດ? ຂ້ອຍໄດ້ຮຽນຮູ້ຫຍັງຈາກສິ່ງທີ່ເກີດຂຶ້ນໃນເຣື່ອງນີ້ ເພື່ອຊ່ວຍຂ້ອຍໃຫ້ຮູ້ວ່າຂ້ອຍຄວນຈະເຮັດແນວໃດຕໍ່ສະຖານະການທີ່ເກີດຂຶ້ນກັບຂ້ອຍ?*

ສຸດທ້າຍ, ໃນເຣື່ອງນີ້, ຖາມຕົວທ່ານເອງວ່າ:

- *ຂ້ອຍໄດ້ເຫັນພຣະເຈົ້າຊົງທຳງານໃນສະຖານະການຂອງຂ້ອຍຢ່າງໃດ, ຫລືໃນຊີວິດຂອງຄົນທີ່ຂ້ອຍຮູ້ຈັກທີ່ຕົກຢູ່ໃນສະພາບນີ້?*
- *ຂ້ອຍໄດ້ຮຽນຫຍັງແດ່, ຫລືຂ້ອຍໄດ້ຮຽນຮູ້ຫຍັງແດ່ກ່ຽວກັບພຣະເຈົ້າແລະພຣະລັກສະນະຂອງພຣະອົງ?*

ທຳອິດເມື່ອທ່ານອ່ານເຣື່ອງຈົບລົງ, ບາງເທື່ອສິ່ງຕ່າງໆ ໃນເຣື່ອງອາດເຮັດໃຫ້ທ່ານມີຄວາມສັບສົນ. ທ່ານອາດຈະຢາກຮູ້ວ່າເປັນຫຍັງພຣະເຈົ້າຈຶ່ງກະທຳເຊັ່ນນັ້ນຕໍ່ຄົນທີ່ຢູ່ໃນເຣື່ອງ. ບາງເທື່ອເມື່ອທ່ານອ່ານເຣື່ອງ ທ່ານອາດຈະຄິດເຖິງຕົວທ່ານເອງ, "ເຣື່ອງນີ້ດີຫລາຍ, ແຕ່ຂ້ອຍບໍ່ເຫັນມີຫຍັງກ່ຽວຂ້ອງກັບຝ່າຍວິນຍານໃນເຣື່ອງນີ້. ແລະແນ່ນອນ ຂ້ອຍບໍ່ເຫັນວ່າມີສິ່ງໃດທີ່ກ່ຽວຂ້ອງກັບຊີວິດຂອງຂ້ອຍເລີຍ! "

ຊອກຫາສິ່ງນີ້. ທຸກໆ ເຣື່ອງໃນພຣະຄັມພີກໍມີບາງສິ່ງບາງຢ່າງສຳລັບພວກເຮົາໃນສມັຍນີ້. ຈົ່ງເບິ່ງວ່າທ່ານສາມາດຄົ້ນພົບຫລືບໍ່ວ່າພຣະຄັມພີສອງຂໍ້ນີ້ເວົ້າວ່າແນວໃດກ່ຽວກັບປໂຍກຂອງຖ້ອຍຄຳຕ່າງໆ ທີ່ພຣະເຈົ້າຊົງເອົາໃສ່ໄວ້ໃນພຣະຄັມພີ. ຄວາມເຂົ້າໃຈແຈ້ງໃນສິ່ງນີ້ຈະໜູນໃຈທ່ານໃຫ້ພຍາຍາມຊອກຫາວ່າເປັນຫຍັງພຣະເຈົ້າຈຶ່ງກະທຳດັ່ງທີ່ພຣະອົງໄດ້ກະທຳຢູ່ໃນເຣື່ອງນຶ່ງໆ ແລະເພື່ອຈະໄດ້ຮູ້ວ່າມີການສັງເກດຝ່າຍຈິດວິນຍານແລະການນຳມາໃຊ້ໃນຊີວິດຝ່າຍວິນຍານ ທີ່ເຫັນໃນທຸກໆ ຕອນໃນພຣະຄັມພີ.

> *ພຣະຄັມພີທຸກຕອນໄດ້ຮັບການຊົງບັນດົນໃຈຈາກພຣະເຈົ້າ ແລະເປັນປໂຍດໃນການສອນ ການກ່າວຕັກເຕືອນວ່າກ່າວ ການປັບປຸງແກ້ໄຂໃຫ້ຖືກຕ້ອງ ແລະການອົບຣົມໃນທາງ ຊອບທັມ ເພື່ອຄົນຂອງພຣະເຈົ້າຈະບັນລຸຜົນສຳເຣັດ ແລະຈັດຕຽມໄວ້ພ້ອມສຳລັບການ ດີທຸກຢ່າງ* (2 ຕີໂມທຽວ 3:16-17)

> *ເຫດການເຫລົ່ານີ້ໄດ້ບັງເກີດຂຶ້ນແກ່ເຂົາເພື່ອເປັນຕົວຢ່າງແກ່ຜູ້ອື່ນ ແລະໄດ້ບັນທຶກໄວ້ ເພື່ອເຕືອນສະຕິເຮົາທັງຫລາຍ ຊຶ່ງກຳລັງປະສົບກັບເວລາສຸດທ້າຍທີ່ຈວນຈະມາເຖິງ ເຫດສັນນັ້ນຜູ້ທີ່ຄຶດວ່າຕົວຕັ້ງໝັ້ນຢູ່ແລ້ວ ຈົ່ງລະວັງໃຫ້ດີ ຢ້ານວ່າຈະລົ້ມລົງ ບໍ່ມີການ ທົດລອງອັນໃດເກີດຂຶ້ນກັບເຈົ້າທັງຫລາຍ ນອກຈາກການທົດລອງທີ່ເຄີຍເກີດກັບມະ ນຸດທົ່ວໄປ ພຣະເຈົ້າຊົງທ່ຽງທັມ ພຣະອົງຈະບໍ່ຊົງຍອມໃຫ້ພວກເຈົ້າຖືກທົດລອງເກີນ ກວ່າທີ່ເຈົ້າຈະທົນໄດ້ ແລະເມື່ອຊົງທົດລອງເຈົ້ານັ້ນ ພຣະອົງຈະຊົງໂຜດໃຫ້ເຈົ້າມີທາງ ຫລີກໜີໄປໄດ້ດ້ວຍ ເພື່ອເຈົ້າທັງຫລາຍຈະສາມາດທົນໄດ້* (1ໂກຣິນໂທ 10:11-13)

ຂໍ້ພຣະຄັມພີເຫລົ່ານີ້ກ່າວວ່າຖ້ອຍຄຳທັງໝົດໃນພຣະຄັມພີ, ລວມທັງຖ້ອຍຄຳໃນເຣື່ອງຕ່າງໆ ໃນພຣະຄັມພີໄດ້ບັນທຶກໄວ້ເພື່ອພວກເຮົາ ແລະສຳລັບພວກເຮົາ. ເພາະເຮົາຮູ້ດີວ່າພຣະເຈົ້າບໍ່ພຽງແຕ່ປະທານຖ້ອຍຄຳໃຫ້ບັນທຶກໄວ້ໃນພຣະຄັມພີເພື່ອໃຫ້ແຕ່ລະໜ້າເບິ່ງຈົບງາມເທົ່ານັ້ນ ດັ່ງນັ້ນເຮົາຕ້ອງເລີ້ມຕົ້ນອ່ານແຕ່ລະເຣື່ອງດ້ວຍຄວາມເອົາໃຈໃສ່ ເພື່ອຈະໄດ້ພົບວ່າຖ້ອຍຄຳທັງໝົດໃນເຣື່ອງນັ້ນໆ ມີຄວາມໝາຍຕໍ່ເຮົາແນວໃດ.

ໃນຖານະເປັນຜູ້ເລົ່າເຣື່ອງແລະເປັນຜູ້ອ່ານຄຳຖາມ, ມີຫລາຍຂັ້ນຕອນທີ່ທ່ານຈະຕ້ອງກະທຳເພື່ອຊ່ອຍຜູ້ຟັງຂອງທ່ານ ໃຫ້ຄົ້ນພົບຄວາມຈິງເຫລ່ານັ້ນດ້ວຍຕົວເຂົາເຈົ້າເອງ.

ທ່ານບໍ່ສາມາດທີ່ຈະນຳພາບັນດາຜູ້ຟັງໄປສູ່ຂຸມຊັບທີ່ຢູ່ໃນເຣື່ອງໄດ້ ຖ້າຫາກວ່າທ່ານເອງບໍ່ໄດ້ຄົ້ນພົບດ້ວຍຕົວທ່ານເອງກ່ອນ

ໃນຂະນະທີ່ທ່ານຕຽມເຣື່ອງທີ່ຈະເລົ່າ ໃນຖານະທີ່ທ່ານເປັນຜູ້ເລົ່າເຣື່ອງ ທ່ານບໍ່ໄດ້ຮັບຜົນກະທົບທາງດ້ານຈິດວິນຍານຈາກເຣື່ອງ ຈະເປັນການດີທີ່ທ່ານຈະຕ້ອງກັບຄືນໄປອ່ານແລະສແວງຫາພຣະເຈົ້າເພື່ອຄົ້ນຫາຄວາມຈິງທີ່ທ່ານອາດຈະບໍ່ເຫັນເທື່ອ. ຖ້າທ່ານຫາກເຮັດຕາມຄຳແນະນຳທັງໝົດໃນການຄົ້ນຫາຊຸມຊັບ ແຕ່ທ່ານຍັງບໍ່ທັນພົບຄວາມຈິງຝ່າຍວິນຍານໃດໆ ໃນເຣື່ອງນັ້ນ ກຳໝາຍຄວາມວ່າທ່ານເອງຍັງບໍ່ພ້ອມ ບໍ່ເໝາະສົມທີ່ຈະເລົ່າເຣື່ອງໃຫ້ຄົນອື່ນຟັງເທື່ອ.

ຄວາມສຳຄັນໃນການຕັ້ງຄຳຖາມ:

ຖ້າທ່ານຫາກຍ່າງອອກຈາກບ້ານໄປແລະພົບຊຸມຊັບ, ທ່ານຈະຕື່ນເຕັ້ນດີໃຈຫລາຍ. ຖ້າທ່ານເອົາຊັບນັ້ນກັບມາບ້ານ ແລະແບ່ງປັນກັບເພື່ອນໆ ຂອງທ່ານ ເຂົາເຈົ້າກໍຈະດີໃຈຫລາຍທີ່ຈະຮັບເອົາ. ແຕ່ການດີໃຈໃນການຮັບເອົາຂອງເຂົາເຈົ້າຈະບໍ່ຫລາຍເທົ່າກັບທ່ານຜູ້ທີ່ໄດ້ພົບກັບຊຸມຊັບນັ້ນ. ການຄົ້ນພົບຈະເຮັດໃຫ້ດີໃຈຫຼາຍ.

ໃນເວລາເລີ້ມຕົ້ນສອນດ້ວຍການແລກປ່ຽນຄວາມຄິດເຫັນຈົ່ງໃຊ້ຄຳຖາມທີ່ຕອບໄດ້ງ່າຍ. **ສິ່ງນີ້ສຳຄັນຫລາຍຕໍ່ຄວາມສຳເຣັດໃນການສຶກສາພຣະຄັມພີແບບເລົ່າເຣື່ອງ.**

ຫລາຍຄົນບໍ່ຮູ້ວ່າໃນພຣະຄັມພີມີຊຸມຊັບແຫ່ງຄວາມຈິງຝ່າຍວິນຍານອັນຮຸ່ງເຮືອງ. ແຕ່ບາງຄົນຮູ້ວ່າມີຊຸມຊັບຝ່າຍວິນຍານຢ່າງຫລວງຫລາຍຢູ່ໃນເຣື່ອງໃນພຣະຄັມພີ ແຕ່ເຂົາເຈົ້າບໍ່ຮູ້ວ່າເຂົາເຈົ້າມີຄວາມສາມາດທີ່ຈະຄົ້ນພົບຊຸມຊັບເຫລ່ານັ້ນ. ເມື່ອຜູ້ຟັງຄົ້ນພົບຂໍ້ມູນທີ່ງ່າຍໆ ແລະຄົນອື່ນເຫັນດີນຳ ເຂົາເຈົ້າກໍໄດ້ຮັບການໜູນໃຈທີ່ຈະຄົ້ນຫາຄຳຕອບຫລາຍຂຶ້ນອີກ.

ໃນການເລົ່າເຣື່ອງເຈາະໃຈ, ໃນຂນະທີ່ພວກເຮົາເລີ້ມເຮັດວຽກກັບບັນດາຜູ້ຟັງກຸ່ມໃໝ່, ສ່ວນຫລາຍພວກເຮົານຳພາເຂົາເຈົ້າເຂົ້າໄປສູ່ຊຸມຊັບແລະເກືອບຈະເອົາຊັບນັ້ນຍື່ນໃສ່ມືໃຫ້ເຂົາເຈົ້າ. ຄຣູຜູ້ຊຳນານສາມາດທີ່ຈະນຳບັນດາຜູ້ທີ່ຕອບສນອງໂດຍເຂົາເຈົ້າບໍ່ຮູ້ສຶກຕົວ ດັ່ງນັ້ນເຂົາເຈົ້າຈຶ່ງຄິດວ່າຊຸມຊັບທັງໝົດແມ່ນເຂົາເຈົ້າໄດ້ຄົ້ນພົບເອງ ເມື່ອບັນດານັກຮຽນສາມາດພົບກັບຊຸມຊັບເຖິງຈະເປັນພາກສ່ວນທີ່ເລັກນ້ອຍ, ເຂົາເຈົ້າກໍໄດ້ຮັບການໜູນໃຈທີ່ຈະຄົ້ນຫາຊຸມຊັບເພີ້ມອີກ.

ຄົນເຫລ່ານັ້ນທີ່ມີການສຶກສາພຣະຄັມພີລະດັບສູງໃນໂຮງຮຽນຫລືໃນວິທຍາລັຍອາດຈະໄດ້ຮຽນວິທີໄຈ້ແຍກຫລືວິຈັຍເຣື່ອງໃນພຣະຄັມພີ ແຕ່ເຂົາເຈົ້າອາດຈະບໍ່ໄດ້ພັທນາຄວາມຊ່ຽວຊານໃນການຟັງເຣື່ອງໃນພຣະຄັມພີແບບສົມບູນ. ດັ່ງທີ່ພວກເຮົາໄດ້ກ່າວມາແລ້ວ, ການເລົ່າເຣື່ອງເຈາະໃຈໄດ້ຮັກສາເຣື່ອງໃນພຣະຄັມພີໃຫ້ຢູ່ດ້ວຍກັນ ແລະເຣື່ອງຈຶ່ງ

ເປັນເໝືອນພາຊະນະທີ່ບັນຈຸຄວາມຈິງໄວ້.

ກ້າວໄປຕົກຫລຸມ. ບາງຄັ້ງຄາວທ່ານອາດຈະພົບກັບບັນດາ(ຜູ້ທີ່ອາດຈະມີຫລືບໍ່ມີການສຶກສາກ່ຽວກັບສາສນາ) ຜູ້ທີ່ຄິດວ່າເຂົາເຈົ້າຮູ້ໝົດທຸກຢ່າງກ່ຽວກັບພຣະຄັມພີ. ເພື່ອຊ່ອຍເຂົາເຈົ້າ, ທ່ານສາມາດໃຊ້ຄຳຖາມທີ່ໃຫ້ບັນດາຜູ້ທີ່ພູມໃຈໃນຕົນເອງເຫລົ່ານີ້ອາສາສມັກກ້າວເຂົ້າໄປໃນຫລຸມ. "ຫລຸມ" ນີ້ແມ່ນການຄາດຄະເນຜິດ ຫລືການສລຸບທີ່ຜິດຊຶ່ງບໍ່ໄດ້ພິສູດຈາກເຣື່ອງທີ່ເລົ່າ. ດັ່ງນັ້ນໃຫ້ທ່ານໃຊ້ຄຳຖາມທີ່ຕອບຍາກ ເປັນຄຳຖາມທີ່ທ່ານຮູ້ດີວ່າຈະເຮັດໃຫ້ຜູ້ບໍ່ເອົາໃຈໃສ່ຟັງຈະຕອບຜິດ. ທ່ານອາດຈະຕອບສນອງວ່າ, ອືມ! ໜ້າສົນໃຈເນາະ, ແລ້ວທ່ານກໍນຳພາຄົ້ນຫາຊຸມຊັບຕໍ່ໄປ.

ໃນຂະນະທີ່ການແລກປ່ຽນຄວາມຄິດໄດ້ດຳເນີນຕໍ່ໄປ, ແລະຄຳຕອບທີ່ຖືກເຮັດໃຫ້ເຫັນແຈ້ງ, ບັນດາຜູ້ທີ່ຕອບຜິດເຫຼົ່ານັ້ນກໍຈະເຫັນວ່າພວກຕົນໄດ້ຕອບຜິດ. ທ່ານອາດຈະບໍ່ຈຳເປັນຕ້ອງຊ່ອຍເຂົາເຈົ້າແກ້ໄຂ ແຕ່ຄຳຕອບທີ່ຜິດຂອງເຂົາເຈົ້າຈະເປີດເຜີຍຄວາມຈິງວ່າເຂົາເຈົ້າບໍ່ໄດ້ຮູ້ຫລາຍດັ່ງທີ່ເຂົາເຈົ້າຄິດໃນຕອນທຳອິດ. ປະສົບການອັນປລາດນີ້ໄດ້ເຂົ້າໄປສູ່ການດັກຈັບ ໄດ້ໜູນໃຈຜູ້ທີ່ຮ່ວມຟັງທີ່ພູມໃຈໃນຕົນເອງກາຍເປັນຜູ້ມີຄວາມສົນໃຈຂຶ້ນໃນການຟັງແລະການຮຽນຢ່າງແທ້ຈິງ.

ຫລາຍຄັ້ງ, ຄົນທັງຫລາຍພົບວ່າສິ່ງທີ່ເຂົາເຈົ້າໄດ້ຍິນໃນເຣື່ອງແຕ່ກ່ອນນັ້ນ(ແລ້ວສລຸບເອົາວ່າຖືກຕ້ອງ) ກໍຖືວ່າໃຊ້ບໍ່ໄດ້ ແລະເຂົາເຈົ້າບໍ່ໄດ້ພົບເຫັນຫລາຍໆ ຢ່າງທີ່ຢູ່ໃນເຣື່ອງ. ຄົນເຫລົ່ານັ້ນໄດ້ຍອມຮັບວ່າເຂົາເຈົ້າຕ້ອງມີຄວາມຣະວັງຮັບຜິດຊອບຫລາຍຂຶ້ນ ແລະຟັງເຣື່ອງໃຫ້ດີ ເພື່ອຈະໄດ້ພົບວ່າແມ່ນຫຍັງແທ້ທີ່ຢູ່ໃນເຣື່ອງນັ້ນ.

ພຣະວິນຍານບໍຣິສຸດ - ພຣະຜູ້ສອນທີ່ຍິ່ງໃຫຍ່

ໃນຖານະທີ່ເປັນຜູ້ທີ່ເຊື່ອ ເມື່ອພວກເຮົາພົບກັບຜູ້ທີ່ບໍ່ທັນລອດພົ້ນ ພວກເຮົາພຽງແຕ່ໃຫ້ລາວໄດ້ຍິນຂໍ້ພຣະຄັມພີໂຢຮັນ 3:16 ເທົ່ານັ້ນບໍ ແລະຫລັງຈາກນັ້ນກໍບໍ່ໄດ້ເວົ້າກັບລາວກ່ຽວກັບພຣະຄັມພີຂໍ້ນີ້? ເຮົາຫລີກເວັ້ນ ທີ່ຈະໂອ້ລົມກ່ຽວກັບພຣະຄັມພີຂໍ້ນີ້ ເພາະເຮົາຄຶດວ່າເປັນວຽກງານຂອງອົງພຣະວິນຍານບໍຣິສຸດແມ່ນບໍ? ບໍ່ເປັນເຊັ່ນນັ້ນດອກ, ຖ້າຫາກເປັນໄປໄດ້ ເຮົາຕ້ອງໂອ້ລົມກ່ຽວກັບພຣະຄັມພີຂໍ້ນີ້.

ເຮົາຮູ້ວ່າອົງພຣະວິນຍານບໍຣິສຸດຈະນຳພາເຮົາໄປສູ່ຄວາມຈິງທັງປວງ. ແຕ່ໃນຂະນະທີ່ພວກເຮົາເດີນທາງໄປທົ່ວໂລກເພື່ອ "ເລົ່າເຣື່ອງເຈາະໃຈ" ພວກເຮົາໄດ້ພົບເຫັນຢູ່ສເມີແລະມີຄວາມເສົ້າໃຈນຳ ທີ່ບັນດາຜູ້ທີ່ເຊື່ອທັງຫລາຍບໍ່ໄດ້ຮູ້ຈັກເລີຍວ່າມີຊຸມຊັບຢູ່ໃນເຣື່ອງພຣະຄັມພີ ຈົ່ງໃຫ້ຜູ້ທີ່ຖືກປະໄວ້ຕາມລຳພັງເຫລົ່ານັ້ນຮູ້ວ່າພຣະເຈົ້າຈະຊ່ອຍເຂົາເຈົ້າໃຫ້ໄດ້ຮຽນຮູ້.

ດັ່ງນັ້ນ, ອົງພຣະວິນຍານຍັງລໍຄອຍຢູ່ພ້ອມທີ່ຈະສອນ, ຊົງປະທັບຢືນຢູ່ທາງໜ້າຫ້ອງຮຽນທີ່ວ່າງເປົ່າຢູ່ນັ້ນ.

ໃນການເລົ່າເຣື່ອງເຈາະໃຈ, ເມື່ອເຮົາຕຽມເຣື່ອງທີ່ຈະເລົ່າ, ເຮົາກໍຂາບທູນອົງພຣະຜູ້ເປັນເຈົ້າໃຫ້ຊົງສຳແດງຊຸມຊັບທັງຫລາຍແກ່ເຮົາໃນເຣື່ອງນັ້ນ ແລະເຮົາສແວງຫາການຊ່ອຍເຫລືອຈາກພຣະອົງເພື່ອຕັ້ງຄຳຖາມຊຶ່ງຈະນຳຄົນທັງຫລາຍໄປພົບກັບຊຸມຊັບທີ່ເຮົາໄດ້ພົບແລ້ວນັ້ນ. ໃນຂນະທີ່ເຮົາໃຊ້ຖາມຄຳຖາມບັນດາຜູ້ຟັງ, ໃຫ້ເຮົາອະທິຖານທູນຂໍໃຫ້

ພຣະວິນຍານບໍຣິສຸດຊົງນຳພາໃນການໂອ້ລົມ. ຕໍ່ຈາກນັ້ນ, ໃນຂະນະທີ່ບັນດາຜູ້ຟັງໄດ້ຄົ້ນພົບຂຸມຊັບ ເຮົາກໍຍອມຮັບວ່າພຣະວິນຍານບໍຣິສຸດໄດ້ທຳງານໃນຫົວໃຈຂອງຜູ້ຟັງທຸກໆ ຄົນທີ່ຢູ່ໃນຫ້ອງນັ້ນ ລວມທັງຫົວໃຈຂອງເຮົານຳ.

ໃນບາງຄັ້ງຄາວ, ຄຳຖາມຕ່າງໆ ມາຈາກບັນດາຜູ້ຟັງຂອງທ່ານນັ້ນຈຳເປັນຕ້ອງໄດ້ຕອບຈາກເຣື່ອງອື່ນໆ ແລະຂໍ້ມູນທີ່ຢູ່ໃນພຣະຄັມພີ. ຖ້າທ່ານຫາກບໍ່ຮູ້ຄຳຕອບແລະບໍ່ສາມາດໃຫ້ຂໍ້ມູນຈາກພຣະຄັມພີ ທ່ານຈຳຕ້ອງສແວງຫາສະຕິປັນຍາທີ່ມາຈາກພຣະເຈົ້າທີ່ຈະຕອບຄຳຖາມນັ້ນຢ່າງຄົບສົມບູນ ຫລືພຽງແຕ່ຕອບແບບສັ້ນໆ ຫລືທ່ານອາດຈະເວົ້າວ່າ, "ເປັນຄຳຖາມທີ່ດີ, ຂໍໃຫ້ລໍຖ້າຈົນການເລົ່າເຣື່ອງນີ້ຈົບກ່ອນ, ຂ້າພະເຈົ້າຈະວາງແຜນໄວ້ທີ່ຈະໃຊ້ເວລາເລົ່າເຣື່ອງອີກເທື່ອນຶ່ງເພື່ອຕອບຄຳຖາມທີ່ດີເລີດຂອງທ່ານ."

ຈົ່ງມີຄວາມຮູ້ສຶກໄວຕໍ່ບັນດາຜູ້ຟັງ. ອົງພຣະວິນຍານບໍຣິສຸດ ຫລືຜູ້ທີ່ຫົວກະທາຍຝ່າຍວິນຍານອາດຈະຖາມຄຳຖາມທີ່ບໍ່ຄາດຄິດ. ຈົ່ງອະທິຖານເພື່ອຈະຮູ້ວ່າຄຳຖາມທີ່ບໍ່ຢູ່ໃນເຣື່ອງອາດຈະເປັນການຊົງນຳຂອງພຣະເຈົ້າທີ່ໃຫ້ໂອກາດໃຫ້ຄົ້ນພົບຄວາມຈິງ. ຢ່າພາດໂອກາດທີ່ຈະຕອບຄຳຖາມນັ້ນ!

ບັນດາຜູ້ເລົ່າເຣື່ອງທີ່ໃຊ້ "ການເລົ່າເຣື່ອງເຈາະໃຈ" ໃນການໂອ້ລົມ ໃນທີ່ສຸດຈະໄດ້ຮຽນເຖິງຄວາມຊຳນານໃນການຕັ້ງຄຳຖາມຕ່າງໆ ທີ່ມີຄຸນພາບສູງ. ໃນຂະນະທີ່ບັນດາຜູ້ຟັງໄດ້ພົບຂຸມຊັບດ້ວຍຕົນເອງ ຜູ້ເລົ່າເຣື່ອງທີ່ສລາດຮຽນຮູ້ວ່າເຂົາເຈົ້າຈະບໍ່ໃຫ້ຂໍ້ມູນທີ່ແຈ່ມແຈ້ງຕໍ່ໄປ ແຕ່ຈະປ່ອຍໃຫ້ບັນດາຜູ້ຟັງຄົ້ນຫາຂຸມຊັບພົບແລ້ວພົບອີກ. ຄວາມປິຕິຍິນດີນັ້ນແມ່ນການທີ່ໄດ້ເຫັນພຣະເຈົ້າຊົງປະທານຄວາມຄິດໃນການຄົ້ນຫາຂຸມຊັບໃຫ້ແກ່ບັນດາຜູ້ຟັງຢ່າງໜ້າຕື່ນເຕັ້ນ.

ສະແດງຄວາມຮັກ

ເມື່ອເຮົາໃຊ້ວິທີການແບບໂອ້ລົມດັ່ງກ່າວນີ້ ເຮົາທັງຫລາຍຕ້ອງໃຊ້ສິ່ງສຳຄັນສິ່ງນຶ່ງເປັນກຸນແຈໄຂໄປສູ່ຄວາມສຳເຣັດທີ່ກ່າວໄວ້ໃນພຣະທັມ 1 ໂກຣິນໂທ 13:1; ເຮົາຕ້ອງສະແດງຄວາມຮັກ. "ເຖິງແມ່ນເຮົາເວົ້າພາສາແປກໆໄດ້ ຈະເປັນພາສາມະນຸດຫລືພາສາເທວະດາກໍດີ ແຕ່ບໍ່ມີຄວາມຮັກ ເຮົາກໍເປັນເໝືອນຄ້ອງຫລືແຊ່ງທີ່ສິ່ງສຽງດັງອຶກກະທຶກ."

ສິ່ງທີ່ຄວນຮູ້. ຄົນສ່ວນຫລາຍຈະຢ້ານສັ່ນເມື່ອເຂົາເຈົ້າຕ້ອງໄປຢືນເວົ້າຢູ່ຕໍ່ໜ້າກຸ່ມຊົນ ດັ່ງນັ້ນທ່ານຕ້ອງເປັນຄົນທີ່ໜູນໃຈໃຫ້ກຳລັງໃຈເຂົາເຈົ້າ.

ໃນບາງເວລາທ່ານອາດຈະໄດ້ສອນບັນດາຜູ້ນຳຫລືສິດຍາພິບານ. ເຖິງແມ່ນເຂົາເຈົ້າສາມາດທີ່ຈະຢູ່ຕໍ່ໜ້າຄົນຈຳນວນຫລາຍໄດ້ຢ່າງສະບາຍ ແຕ່ເຂົາເຈົ້າທັງໝົດບໍ່ເຄີຍຖືກ "ຕຳໜິເພື່ອແກ້ໄຂ" ຕໍ່ໜ້າສາທາຣະນະຊົນ (ບໍ່ເຄີຍຖືກເລີຍ, ຫລືເຄີຍຖືກ ແຕ່ເປັນເວລາດົນຜ່ານມາແລ້ວ).

ດັ່ງນັ້ນ, ໃນຂະນະທີ່ທ່ານສອນໂດຍໃຊ້ການໂອ້ລົມ ຈົ່ງມີຄວາມຮູ້ສຶກໄວຕໍ່ຄົນທັງສອງປະເພດນີ້ຄື ປະເພດທີ່ຢ້ານສັ່ນສາຍແລະພວກຜູ້ນຳທີ່ບໍ່ເຄີຍຖືກຕຳໜິເພື່ອແກ້ໄຂຕໍ່ໜ້າສາທາຣະນະຊົນ. ໃນຂະນະທີ່ຜູ້ຟັງເລົ່າເຣື່ອງລົ້ມຄົນ, ຫລືຕອບຄຳຖາມ, ຫລືແມ່ນແຕ່ຄົ້ນຫາຂຸມຊັບ ຈົ່ງຈື່ຈຳສິ່ງນີ້. ເຖິງແມ່ນບັນດາຜູ້ຟັງອາດຈະຕອບສນອງຢ່າງບໍ່ເໝາະສົມ ຜູ້ເລົ່າເຣື່ອງ/ຜູ້ສອນຈຳເປັນຕ້ອງມີຄວາມອ່ອນສຸພາບແລະຢືນຢັນເຖິງການຕຳໜິເພື່ອແກ້ໄຂທີ່ຕົນໄດ້ກະທຳ. ຈົ່ງຈື່

ໄອ້ສເມີ່ວ່າ ການຕຳໜິເພື່ອແກ້ໄຂດ້ວຍຄຳເວົ້າທີ່ຍິ້ມແຍ້ມຈະເຮັດໃຫ້ບັນດາຜູ້ຟັງຍອມຮັບເອົາໄດ້ຫຼາຍກ່ວາການຕຳໜິເພື່ອແກ້ໄຂແບບເຂັ້ມງວດເຄັ່ງຂຶມ.

ຈື່ໄວ້ໃນໃຈວ່າ ໃນຖານະທີ່ທ່ານເປັນຜູ້ເລົ່າເຣື່ອງທ່ານຕ້ອງເຮັດໃຫ້ກຸ່ມຜູ້ຟັງມີບັນຍາກາດທີ່ດີ. ທ່ານມີທາງເລືອກ. ທ່ານສາມາດທີ່ຈະໃຫ້ບັນດາຜູ້ຟັງມີຄວາມຮູ້ສຶກທີ່ຈະສຳຣວດ ແລະຄົ້ນຄວ້າໂດຍໜູນໃຈໃຫ້ເຂົາເຈົ້າສະແດງຄວາມຄິດເຫັນ ຫລືບໍ່ກໍ່ສ້າງຄວາມເຄັ່ງຕຶງເຮັດໃຫ້ໝົດກຳລັງໃຈໃນການມີສ່ວນຮ່ວມໂດຍບໍ່ເຮັດໃຫ້ບັນດາຜູ້ຟັງມີຄວາມຮູ້ສຶກເໝືອນກັບວ່າ ຕລອດການໂອ້ລົມນັ້ນເໝືອນກັບການສອບເສັງ ທີ່ເຂົາເຈົ້າຈະຕ້ອງຕອບຄຳຖາມໃຫ້ "ຖືກ" ທຸກຄຳຖາມ.

ອີກເທື່ອນຶ່ງ, ໃນຂະນະທີ່ທ່ານພຍາຍາມທີ່ຈະຈື່ເຣື່ອງແລະຕັ້ງຄຳຖາມ, ໃຫ້ຄິດເຫັນບັນດາຜູ້ທີ່ຟັງທ່ານ. ຕອບສນອງເຂົາເຈົ້າ, ຈື່ໄວ້ໃນໃຈຂອງທ່ານຢູ່ສເມີ່ວ່າ ຄວາມຊຳນານຂອງທ່ານບໍ່ແມ່ນສິ່ງສຳຄັນທັງໝົດ; ແຕ່ແມ່ນຄວາມຮັກທີ່ທ່ານສະແດງອອກຕໍ່ບັນດາຜູ້ຟັງໃນຂະນະທີ່ທ່ານໃຊ້ຄວາມຊຳນານຂອງທ່ານ.

ຄວາມສາມາດທີ III: ວິທີຕັ້ງຄຳຖາມ

ເປົ້າໝາຍອັນສຳຄັນແລະໜາກຜົນໃນການເລົ່າເຣື່ອງພຣະຄັມພີ ແລະການໂອ້ລົມກ່ຽວກັບສິ່ງເຫລົ່ານັ້ນຕາມພາຍຫລັງ ແມ່ນດັ່ງລຸ່ມນີ້;

- ການຮຽນຮູ້ພຣະລັກສະນະຂອງພຣະເຈົ້າ
- ການຮຽນຮູ້ວ່າພຣະອົງຢາກໃຫ້ຫຍັງແກ່ມະນຸດ ແລະຢາກໄດ້ຫຍັງຈາກມະນຸດ
- ການເຫັນແລະການຍອມຮັບຄວາມຈິງກ່ຽວກັບຕົວເຮົາເອງ

ຫລັງຈາກການຝຶກອົບຮົມເລົ່າເຣື່ອງ ໃນປະເທດແຄນຢາ ຜູ້ສ້າງຕັ້ງຄຣິສຕະຈັກທ່ານນຶ່ງໄດ້ເຂົ້າຮ່ວມການຝຶກອົບຮົມ ແລະໄດ້ແບ່ງປັນການຄົ້ນພົບຂຸມຊັບ. ຜູ້ຊາຍຄົນນີ້ມີຄວາມເຂັ້ມແຂງໃນການຝຶກອົບຮົມວິຊາສາສນາສາດ ໄດ້ຮັບໃຊ້ເປັນຜູ້ຝຶກອົບຮົມໃນເມືອງທີ່ລາວຢູ່ ແຕ່ພາຍໃນສີ່ປີລາວເຫັນການເກີດຜົນໃນບ້ານຊົນນະບົດນັ້ນແຕ່ພຽງເລັກນ້ອຍ.

ການມາຝຶກອົບຮົມເລົ່າເຣື່ອງ ລາວໃຊ້ເວລາສອງມື້ໂດຍການຂີ່ຈັກ ແລະອີກມື້ນຶ່ງໂດຍທາງຣົດຂົນສົ່ງ(ລາວຕ້ອງນັ່ງເທິງຫລັງຣົດ) ແລະອີກມື້ນຶ່ງໂດຍທາງຣົດບັສ. ລາວມັກໃນສິ່ງທີ່ລາວໄດ້ຮຽນໃນການຝຶກອົບຮົມແລະຮູ້ສຶກວ່າໄດ້ຮັບຣົດເດດ. ລາວເວົ້າວ່າ, "ຂ້ອຍໄດ້ສອນຕາມທີ່ຂ້ອຍໄດ້ຮຽນຈາກຄົນອື່ນ, ຂ້ອຍບໍ່ຮູ້ວິທີຮຽນຈາກພຣະຄັມພີຈົນກະທັ້ງຂ້ອຍໄດ້ມາຮັບການຝຶກອົບຮົມເທື່ອນີ້."

"ເວລານີ້ຂ້ອຍຮູ້ວ່າ ຂ້ອຍບໍ່ສາມາດພາຄົນອື່ນໄປ ບ່ອນທີ່ຂ້ອຍບໍ່ເຄີຍໄດ້ໄປນັ້ນ ເທື່ອ"

ດ້ວຍເຫດນີ້ເອງເປັນຫຍັງພວກເຮົາຈຶ່ງໃຊ້ຄຳຖາມ. ທຳອິດບັນດາຜູ້ເລົ່າເຣື່ອງຮຽນຂໍ້ມູນໃໝ່ດ້ວຍຕົວເຂົາເຈົ້າເອງ ຈາກພຣະຄຳຂອງພຣະເຈົ້າ, ຕໍ່ມາຮຽນຈາກຄຳຖາມ ບັນດາຜູ້ເລົ່າເຣື່ອງນຳພາຄົນອື່ນໄປສູ່ຄວາມຈິງອັນມີຄ່າທີ່ເຂົາ

ເຈົ້າໄດ້ຮຽນ.

ການນຳ ໂດຍໃຊ້ **"ເຂົ້າຈີ່ປ່ຽງນ້ອຍ"**ແມ່ນຫລັກການຢ່າງນຶ່ງທີ່ພວກເຮົາສອນໃນການຝຶກອົບຮົມ "ເລົ່າເຣື່ອງເຈາະໃຈ." ຄົນທີ່ເລີ້ມຕົ້ນຮຽນ "ເລົ່າເຣື່ອງເຈາະໃຈ" ໃໝ່ ສ່ວນຫລາຍຈະຕັ້ງຄຳຖາມທີ່ຕ້ອງການ ຢາກໄດ້ຄຳຕອບອັນຖືກຕ້ອງ "ຄົບຖ້ວນ" ເພື່ອຈະນຳຜູ້ຟັງໄປພົບກັບຂຸມຊັບຝ່າຍວິນຍານ ແຕ່ການກະທຳເຊັ່ນນັ້ນສ່ວນຫລາຍຈະບໍ່ຄ່ອຍເກີດຜົນ. ການເກັ່ງກ່ອນນິກເຂົ້າຄອກ(ກົງ)ນັ້ນ, ທ່ານຈະບໍ່ຖິ້ມເຂົ້າຈີ່ກ້ອນໃຫຍ່ໄວ້ປາກຄອກ ແລະຄິດວ່ານິກຕ້ອງເຂົ້າໄປໃນຄອກນັ້ນ. ແຕ່ທ່ານຕ້ອງຍາຍເຂົ້າຈີ່ປ່ຽງນ້ອຍໆ ເປັນທາງເຂົ້າໄປໃນຄອກນັ້ນ. ໃນກໍຣະນີດຽວກັນນີ້, ເມື່ອທ່ານຕັ້ງຄຳຖາມເພື່ອຈະນຳຜູ້ຟັງໃຫ້ຄົ້ນພົບຂຸມຊັບຝ່າຍວິນຍານ ສ່ວນຫລາຍທ່ານກໍຕ້ອງຕັ້ງຄຳຖາມທີ່ງ່າຍໆ ຫລາຍຄຳຖາມຕໍ່ເນື່ອງກັນ ການເຮັດດັ່ງນີ້ຈະເປັນການງ່າຍໃນການຈູງໃຈໃຫ້ຜູ້ຟັງຮ່ວມມືໃນການຄົ້ນຫາຂຸມຊັບຝ່າຍວິນຍານ.

<u>ໝາຍເຫດ:</u> ເຣື່ອງທີ່ຈະຝຶກຊ້ອມຕໍ່ໄປແມ່ນ "ອັບຣາມແລະຊາຣາຍ" ໃນເຣື່ອງນີ້ແລະໃນຫຼາຍໆ ເຣື່ອງທີ່ຈະພົບເຫັນໃນປຶ້ມນີ້, ການຄົ້ນຫາຂຸມຊັບ, ການນຳໃຊ້ໃນຊີວິດແລະຄຳຖາມຕ່າງໆແມ່ນໄດ້ຕຽມໄວ້ສຳລັບທ່ານ. ແຕ່ວ່າໃນການຮຽນເລົ່າເຣື່ອງເຈາະໃຈ ເຮົາຂໍບອກທ່ານວ່າ ຢ່າ "ຈົດຄຳຖາມ" ໄວ້ເລີຍ ! ທ່ານບໍ່ຈຳເປັນຕ້ອງຈົດຄຳຖາມໄວ້ ມັນຈະເຮັດໃຫ້ການແລກປ່ຽນຄວາມຄິດເຫັນ, ການຖາມແລະຕອບຢຸດຊະງັກ. ພວກເຮົາໄດ້ຕັ້ງຄຳຖາມໄວ້ໃນປຶ້ມນີ້ພຽງແຕ່ເພື່ອຊ່ວຍຜູ້ທີ່ບໍ່ໄດ້ມາຝຶກອົບຮົມດ້ວຍຕົນເອງເທົ່ານັ້ນ ເພື່ອເຂົາເຈົ້າຈະໄດ້ເຫັນແບບຢ່າງ ແລະເຮັດຕາມຂັ້ນຕອນໃນການ "ເລົ່າເຣື່ອງ" ໄດ້. ຄຳຖາມເຫລົ່ານັ້ນພຽງແຕ່ເປັນຕົວຢ່າງເທົ່ານັ້ນ. ສຳລັບທ່ານ ໃນເວລາທີ່ທ່ານສຶກສາ ແລະນຳໄປສອນຄົນອື່ນ ທ່ານກໍຈະໄດ້ຮັບຄວາມຊ່ຽວຊານ ຄວາມຊຳນານເພີ້ມເຕີມເອງ ທັງທາງດ້ານຄວາມຄິດແລະການຕັ້ງຄຳຖາມ.

ໃນຂະນະທີ່ຜູ້ເລົ່າເຣື່ອງໄດ້ຫຍັບຍ້າຍໄປຕາມເຣື່ອງ ບາງຂຸມຊັບຝ່າຍວິນຍານແລະການນຳໃຊ້ຝ່າຍວິນຍານທີ່ທ່ານໄດ້ຕຽມໄວ້ນັ້ນຈະຖືກຄົ້ນພົບໂດຍບັນດາຜູ້ຟັງກ່ອນ ກ່ອນທີ່ທ່ານຈະຕັ້ງຄຳຖາມເພື່ອນຳເຂົາເຈົ້າໄປສູ່ຂຸມຊັບເຫຼົ່ານັ້ນ. ການພົບຂຸມຊັບແຕ່ຫ້ວທີຈາກບັນດາຜູ້ຟັງນີ້ເປັນສິ່ງທີ່ເຮົາປາຖນາ ຊຶ່ງໄດ້ຊີ້ໃຫ້ເຫັນວ່າບັນດາຜູ້ຟັງກຳລັງຮຽນວິທີຄົ້ນຫາໃນຂໍ້ພຣະຄັມພີຢ່າງເລິກເຊິ່ງແລະໄດ້ພົບຂຸມຊັບດ້ວຍຕົວເຂົາເຈົ້າເອງ.

ການພັທນາຄຳຖາມເພື່ອນຳຜູ້ຟັງໄປພົບກັບຂຸມຊັບ

ການຕັ້ງຄຳຖາມເພື່ອຊ່ວຍຜູ້ຟັງໃຫ້ພົບກັບຂຸມຊັບທີ່ທ່ານໄດ້ພົບກ່ອນແລ້ວ, ໃຫ້ກັບຄືນໄປຕອນຕົ້ນຂອງເຣື່ອງ. ລຶ້ມເຣື່ອງນັ້ນແຕ່ຕົ້ນຈົນຈົບດ້ວຍຄວາມຄິດຂອງທ່ານ, ຄິດກ່ຽວກັບການຄົ້ນຫາຂຸມຊັບທີ່ທ່ານໄດ້ພົບແລ້ວ. ຈື່ໄດ້ບໍ່ ຜູ້ໃຫ້ຄຳປຶກສາທີ່ສລາດຊີ້ໃຫ້ເຫັນເຖິງຄວາມສຳຄັນໃນການຖາມຫລາຍໆ ຄຳຖາມໃນແຕ່ລະຕອນຂອງເຣື່ອງ? ທ່ານຈະໄດ້ພົບຂຸມຊັບຝ່າຍວິນຍານກໍຈະເປັນແບບດຽວກັນນັ້ນ.

ໃນກໍຣະນີດຽວກັນ, ທ່ານອາດຈະຕ້ອງຖາມບັນດາຜູ້ຟັງເປັນຄຳຖາມທີ່ຕໍ່ເນື່ອງກັນ ເພື່ອໃຫ້ເຂົາເຈົ້າໄດ້ຄົ້ນຫາໃນຂະນະທີ່ທ່ານຖາມ. ແທ້ຈິງແລ້ວ, ຖ້າທ່ານຫາກໃຊ້ເວລາຄິດເຖິງຄຳຖາມທີ່ທ່ານໄດ້ຖາມໄປແລ້ວ ເພື່ອຄົ້ນຫາຂຸມຊັບ ທ່ານກໍສາມາດທີ່ຈະໃຊ້ຄຳຖາມເຫລົ່ານັ້ນໄດ້ອີກ. ຖາມຜູ້ຟັງໂດຍໃຊ້ຄຳຖາມເຫລົ່ານັ້ນອີກກໍໄດ້.

ຍົກຕົວຢ່າງເຊັ່ນ, ຖ້າທ່ານເລົ່າເຣື່ອງໃນພຣະທັມປະຖົມມະການ 12:10-20 ທ່ານຈະສັງເກດເຫັນຫລາຍສິ່ງໃນຂະນະທີ່ທ່ານຕຽມເຣື່ອງ, ແມ່ນແຕ່ໃນສອງສາມຂໍ້ຕອນຕົ້ນເຣື່ອງທ່ານກໍສາມາດສັງເກດເຫັນ.

> *"ໃນເວລານັ້ນ ມີການອຶດຢາກຢ່າງຮ້າຍແຮງເກີດຂຶ້ນໃນປະເທດການາອານ ຈຶ່ງເປັນເຫດໃຫ້ອັບຣາມຕ້ອງໄປອາສັຍຢູ່ໃນປະເທດເອຢິບຊົ່ວລະຍະນຶ່ງ ເມື່ອໃກ້ຈະຮອດດ່ານເຂົ້າປະເທດ ອັບຣາມໄດ້ເວົ້າກັບເມັຽຂອງລາວວ່າ, "ຊາຣາຍ ເຈົ້າເປັນຜູ້ຍິງທີ່ງາມຫລາຍ ເມື່ອຊາວເອຢິບເຫັນເຈົ້າ ພວກເຂົາຊິເວົ້າວ່າເຈົ້າເປັນເມັຽຂອງຂ້ອຍ ແລ້ວພວກເຂົາກໍຊິຂ້າຂ້ອຍແລ້ວຊິເອົາເຈົ້າໄປ ດັ່ງນັ້ນເພື່ອຂ້ອຍຊິບໍ່ຕາຍ ຂໍໃຫ້ເຈົ້າບອກກັບເຂົາວ່າ ເຈົ້າເປັນນ້ອງສາວຂອງຂ້ອຍ ແລ້ວພວກເຂົາຊິບໍ່ຂ້າຂ້ອຍ ແລະຈະເຮັດດີກັບຂ້ອຍ"*
>
> (ປຖກ 12:10-13)

ທ່ານອາດຈະສັງເກດເຫັນໃນຂະນະທີ່ທ່ານໄດ້ຮຽນເຣື່ອງນີ້ວ່າ, ອັບຣາມໄດ້ຕັດສິນໃຈໃນຕອນທຳອິດ. ລາວຄວນຈະວາງໃຈໃນພຣະເຈົ້າແທນທີ່ຈະສະແດງຄວາມຢ້ານກົວອອກມາ. ລາວແລ່ນໜີຈາກແຜ່ນດິນແຫ່ງຄຳສັນຍາໄປຢູ່ໃນປະເທດອີຢິບ ຍ້ອນເກີດການກັນດານອາຫານ ແລະບອກຊາຣາຍໃຫ້ຕົວະເພື່ອປ້ອງກັນຕົວຂອງລາວ. (ບາງຄົນອາດຈະເຫັນການຂັດແຍ່ງດ້ວຍການສັງເກດວ່າ ການໄປປະເທດອີຢິບນັ້ນເປັນສິ່ງທີ່ຜິດ ເພາະວ່າໃນເຫດການຕ່ໍມາຢາໂຄບແລະຄອບຄົວຂອງລາວຖືກນຳພາໂດຍພຣະເຈົ້າໃຫ້ໄປຢູ່ປະເທດອີຢິບ. ແນ່ນອນ, ຖ້ອຍຄຳທີ່ "ນຳພາໂດຍພຣະເຈົ້າ" ໄດ້ຊີ້ໃຫ້ເຫັນຄວາມແຕກຕ່າງຣະຫວ່າງສອງສະຖານະການນີ້.)

ຫລັງຈາກຄົ້ນຫາຂຸມຊັບໄດ້ຫລາຍຢ່າງແລ້ວ ທ່ານກໍກັບຄືນໄປຄົ້ນຫາການນຳໃຊ້ໃນຊີວິດຝ່າຍວິນຍານຈາກການຄົ້ນຫາຂຸມຊັບເຫລົ່ານັ້ນ. ທ່ານຈະພົບວ່າພຣະເຈົ້າຊົງສັນຍາຕໍ່ທຸກຄົນ ບໍ່ວ່າຈະໜີໄປຫລີ້ຢູ່ກັບທີ່ດ້ວຍການເຊື່ອຟັງຕາມຂໍ້ພຣະຄັມພີ. ຕ່ໍຈາກນັ້ນທ່ານຈະໄດ້ເຫັນການນຳໃຊ້ໃນຊີວິດວ່າໃນເວລາທີ່ມີຄວາມກົດດັນເຮົາສາມາດທີ່ຈະຕັດສິນໃຈໃນທາງທີ່ຜິດແລະອອກໄປບ່ອນອື່ນເພື່ອຂໍຄວາມຊ່ວຍເຫລືອແທ່ນທີ່ຈະຂໍຄຳປຶກສາຈາກພຣະເຈົ້າ. ເຊັ່ນດຽວກັນ, ທ່ານຈະພົບວ່າບາງເທື່ອໃນເວລາເຮົາແລ່ນໜີບັນຫາເຮົາກໍໄດ້ເຮັດບາບເພີ້ມອີກ ອາດຈະເປັນການວາງແຜນຊົ່ວຮ້າຍ ຫລືຕົວະ ຫລືມີສ່ວນຮ່ວມກັບຄົນທີ່ວາງໃຈເຮົາໃນຄວາມບາບທີ່ເຮົາໄດ້ກະທຳ.

ການຄົ້ນຫາຂຸມຊັບ ປ່ຽນເປັນ ຄຳຖາມ

ໃຫ້ຄຳຖາມເຫລົ່ານັ້ນຢູ່ໃນເຣື່ອງ. ໃນຂະນະທີ່ທ່ານຕັ້ງຄຳຖາມເພື່ອຖາມບັນດາຜູ້ຟັງເພື່ອຄົ້ນຫາຂຸມຊັບທີ່ທ່ານໄດ້ພົບແລ້ວ, ຈົ່ງໃຫ້ຄຳຖາມຂອງທ່ານຢູ່ໃນເຣື່ອງ.

ຕ່ໍໄປນີ້ແມ່ນບາງຄຳຖາມທີ່ອາດຈະສາມາດໃຊ້ໄດ້ເພື່ອໄຂເຂົ້າໄປສູ່ການຄົ້ນຫາຂຸມຊັບ ອີງຕາມການຄົ້ນຫາຂຸມຊັບຝ່າຍວິນຍານຊຶ່ງຫາກໍ່ກ່າວມານັ້ນ;

1. *ຈາກເຣື່ອງທີ່ພວກເຮົາໄດ້ຮຽນແລະໄດ້ໂອ້ລົມກັນຜ່ານມານັ້ນ, ພຣະເຈົ້າໄດ້ບອກໃຫ້ອັບຣາມໄປໃສ ແລະພຣະເຈົ້າໄດ້ບອກວ່າພຣະອົງຈະເຮັດຫຍັງແກ່ອັບຣາມ ຢູ່ທີ່ນັ້ນ?*
2. *ເຮົາພົບວ່າການອຶດຢາກເຮັດໃຫ້ອັບຣາມຕ້ອງອອກຈາກແຜ່ນດິນແຫ່ງຄຳສັນຍາໃນທັນທີແລະໄປທີ່ປະເທດອີຢິບເພື່ອຂໍຄວາມຊ່ວຍເຫລືອ. ທ່ານຄິດເຫັນສິ່ງອື່ນບໍ່ທີ່ອັບຣາມຄວນຈະເຮັດແທນທີ່ຈະໜີອອກຈາກແຜ່ນດິນແຫ່ງ*

ຄຳສັນຍາໄປເມື່ອເກີດການອຶດຢາກ?

3. *ໃນເຣື່ອງນີ້ ເຮົາສາມາດຮູ້ໄດ້ບໍ່ວ່າແມ່ນອາລົມແລະຄວາມຮູ້ສຶກແບບໃດທີ່ຄວບຄຸມອັບຣາມ? ທ່ານໄດ້ເຫັນອາລົມຂອງອັບຣາມບໍ່ ຕອນທີ່ອັບຣາມບອກຊາຣາຍໃຫ້ເວົ້າກັບຄົນເອຢິບ? ທ່ານຄິດແນວໃດກ່ຽວກັບເຣື່ອງນີ້?*
4. *ໃນຄຳນຳ ຫລືອາລັມພະບົດກ່ອນຈະເລົ່າເຣື່ອງນີ້ ທ່ານຈື່ໄດ້ບໍ່ວ່າພຣະເຈົ້າໄດ້ສັນຍາກັບອັບຣາມຊຶ່ງຈະຊ່ອຍໃຫ້ອັບຣາມມີຄວາມກ້າຫານ ບໍ່ຕ້ອງຢ້ານກົວ? ຖ້າໄດ້ສັນຍາ, ຄຳສັນຍານັ້ນແມ່ນຫຍັງ? ບ່ອນໃດທີ່ທ່ານເຫັນວ່າອັບຣາມຄວນໄວ້ວາງໃຈໃນພຣະເຈົ້າ?*
5. *ມີໃຜແດ່ທີ່ໃກ້ຊິດກັບອັບຣາມທີ່ໄດ້ຮັບຄວາມເຈັບປວດຍ້ອນຄວາມບາບຂອງລາວ? ທ່ານໄດ້ເຫັນຫຍັງແດ່?*
6. *ທ່ານໄດ້ເຫັນຜົນສະທ້ອນຈາກຄວາມບາບຂອງລາວບໍ່?*

ອີງຕາມການຄົ້ນຫາຊຸມຊັບຝ່າຍວິນຍານທີ່ບັນດາຜູ້ຟັງຫາກໍຄົ້ນພົບຜ່ານການໂອ້ລົມ, ຈົ່ງເບິ່ງຕົວຢ່າງຄຳຖາມຕໍ່ໄປນີ້ ຊຶ່ງອາດຈະເປີດເຜີຍໃຫ້ທ່ານຄົ້ນພົບການນຳໄປໃຊ້ໃນຊີວິດຝ່າຍວິນຍານ.

1. *ພຣະເຈົ້າໄດ້ບອກອັບຣາມເຖິງບ່ອນທີ່ພຣະອົງຈະຊົງອວຍພອນ. ມີບ່ອນໃດບໍ່ໃນເຣື່ອງນີ້ທີ່ເຮົາເຫັນນຳກັນວ່າມີຄຳສັ່ງຈາກພຣະເຈົ້າວ່າບ່ອນໃດທີ່ອັບຣາມຕ້ອງຢູ່ອາສັຍເພື່ອຈະໄດ້ຮັບພຣະພອນ? ເຮົາອາດຈະບໍ່ເຫັນ. ແຕ່ເຮົາສາມາດຄົ້ນຫາຫລັກຖານໄດ້ວ່າແມ່ນບ່ອນໃດ ພຣະເຈົ້າຢາກໃຫ້ເຮົາມີຊີວິດຢູ່ຢ່າງໃດ ເພື່ອຈະໄດ້ຮັບພຣະພອນ? ບ່ອນນັ້ນອາດຈະແມ່ນບ່ອນໃດ?*
2. *ໃນທຸກມື້ນີ້, ບັນດາຜູ້ທີ່ເຊື່ອໃນພຣະເຈົ້າໄດ້ປະເຊີນກັບສະຖານະການທີ່ຂົ່ມຂູ່ຕໍ່ຊີວິດບໍ່? ຄວາມຍາກລຳບາກແບບໃດທີ່ເຂົາເຈົ້າອາດຈະປະເຊີນ? ທ່ານເອງ, ຫລືຄົນອື່ນທີ່ທ່ານຮູ້ຈັກເຄີຍປະເຊີນກັບສະຖານະການທີ່ຂົ່ມຂູ່ຕໍ່ຊີວິດບໍ່? ມີຫຍັງແດ່ທີ່ເຮົາເຫັນຈາກການຕັດສິນໃຈຂອງອັບຣາມທີ່ສາມາດຊ່ອຍເຮົາໃຫ້ມີທາງເລືອກທີ່ດີກວ່າເມື່ອເຮົາພົບກັບສະຖານະການທີ່ຫຍຸ້ງຍາກລຳບາກ?*
3. *ອັບຣາມຍອມໃຫ້ອາລົມຄວບຄຸມລາວແລະຊີ້ໃຫ້ເຫັນເຖິງການຂາດຄວາມເຊື່ອ. ສິ່ງດັ່ງກ່າວນີ້ຍັງເກີດຂຶ້ນໃນສມັຍນີ້ຢູ່ບໍ່? ຈົ່ງອະທິບາຍວ່າເປັນແນວໃດ? ເມື່ອຄົນຂາດຄວາມເຊື່ອ ເຂົາເຈົ້າຈະແລ່ນໄປຫາໃຜແທນທີ່ຈະໄປຫາພຣະເຈົ້າ? ແມ່ນຫຍັງໃນເຣື່ອງນີ້ສາມາດຊ່ອຍເຮົາໃຫ້ຄິດຢ່າງຖ້ວນຖີ່ໃນເວລາເກີດຄວາມຢ້ານກົວ?*
4. *ເມື່ອສິ່ງຮ້າຍເກີດຂຶ້ນ ອັບຣາມໄດ້ໜີໄປຈາກບ່ອນທີ່ພຣະເຈົ້າຊົງບອກໃຫ້ລາວໄປຢູ່. ມີສິ່ງດັ່ງກ່າວເກີດຂຶ້ນໃນຊີວິດຂອງຄົນໃນສມັຍນີ້ບໍ່ທີ່ເຮັດໃຫ້ເຂົາເຈົ້າຕ້ອງໜີໄປຈາກບ່ອນທີ່ພຣະເຈົ້າໄດ້ຮຽກເອີ້ນເຂົາເຈົ້າໃຫ້ຢູ່? ສິ່ງນີ້ໄດ້ເກີດຂຶ້ນກັບທ່ານເອງຫລືກັບຄົນທີ່ທ່ານຮູ້ຈັກຫລືບໍ່?*
5. *ຖ້າຫາກຄວາມຍາກລຳບາກເຂົ້າມາສູ່ຊີວິດເຮົາ ສິ່ງທີ່ເຮົາໄດ້ເຫັນຈາກອັບຣາມໄດ້ຊ່ອຍເຮົາໃຫ້ມີຄວາມຄິດບໍ່ວ່າເຮົາຄວນເຮັດຫລືບໍ່ຄວນເຮັດ? ສິ່ງດັ່ງກ່າວນັ້ນແມ່ນຫຍັງ?*
6. *ໃນສມັຍທຸກມື້ນີ້ ມີບໍ່ທີ່ບາງເທື່ອເຮົາໃຫ້ອາລົມຂອງເຮົາເປັນສິ່ງຕັດສິນໃຈ? ແມ່ນອາລົມແບບໃດທີ່ບາງຄັ້ງມັນໄດ້ຄວບຄຸມຄົນທັງຫລາຍເມື່ອຄວາມຍາກລຳບາກເກີດຂຶ້ນໃນຊີວິດເຂົາເຈົ້າ? ທ່ານເອງ ຫລືບາງຄົນທີ່ທ່ານຮູ້ຈັກຍອມໃຫ້ອາລົມນຳພາທ່ານໃຫ້ຕັດສິນໃຈໃນທາງທີ່ຜິດບໍ່? ທ່ານສາມາດແບ່ງປັນປະສົບການດັ່ງກ່າວນີ້ໄດ້ບໍ? ບໍ່ວ່າເຣື່ອງໃດໆ ໃນພຣະຄັມພີທີ່ພວກເຮົາໄດ້ໂອ້ລົມນຳກັນ ທ່ານຄິດເຫັນຄຳສັນຍາຂອງພຣະເຈົ້າບໍ່ທີ່ຄົນສມັຍນີ້ສາມາດໄວ້ວາງໃຈໄດ້?*
7. *ຈື່ໄດ້ບໍ່ການທີ່ອັບຣາມຂາດຄວາມເຊື່ອເປັນຜົນສະທ້ອນຢ່າງໃດຕໍ່ຄົນອື່ນ? ໃນທຸກມື້ນີ້, ການຂາດຄວາມໄວ້ວາງໃຈໃນພຣະເຈົ້າຂອງເຮົາ ຈະສົ່ງຜົນສະທ້ອນໄປສູ່ຄົນອື່ນບໍ່? ອະທິບາຍວ່າສິ່ງນັ້ນເປັນແນວໃດ? ສິ່ງນັ້ນໄດ້ເກີດ*

ຂຶ້ນກັບທ່ານເອງ ຫລືຄົນອື່ນທີ່ທ່ານຮູ້ຈັກຫລືບໍ?

ສິ່ງທີ່ກ່າວມານັ້ນເປັນພຽງແຕ່ການຄົ້ນຫາຂຸມຊັບແລະຄຳຖາມເພື່ອນຳໄປໃຊ້ໃນຊີວິດຝ່າຍວິນຍານພຽງເລັກນ້ອຍ ທີ່ທ່ານສາມາດທີ່ຈະຖາມຈາກຕອນທຳອິດຂອງເຣື່ອງໃນປະຖົມມະການ 12:10-13

<u>ໝາຍເຫດ:</u> ເຖິງແມ່ນທ່ານຈະມີຄຳຖາມທີ່ໄດ້ຕຽມໄວ້ແລ້ວທີ່ສາມາດນຳຜູ້ຟັງໄປພົບກັບຂຸມຊັບທີ່ທ່ານໄດ້ພົບແລ້ວ, ທ່ານຍັງຕ້ອງຕອບສນອງຕໍ່ຄຳຖາມ, ການຄົ້ນຫາຂຸມຊັບແລະຕອບຄຳຖາມຂອງບັນດາຜູ້ຟັງ. ເຂົາເຈົ້າອາດຈະເຫັນຂຸມຊັບອື່ນໆ ຫລືມີຄຳຖາມໃນແຕ່ລະຕອນຂອງເຣື່ອງທີ່ທ່ານເລົ່າ. ຈົ່ງຖາມຄຳຖາມທີ່ທ່ານໄດ້ຕຽມໄວ້ນັ້ນ. ແຕ່ຖ້າບັນດາຜູ້ຟັງໄດ້ເຫັນຂຸມຊັບທີ່ແຕກຕ່າງທີ່ຢູ່ໃນເຣື່ອງກໍໃຫ້ໂອ້ລົມກ່ຽວກັບຂຸມຊັບເຫລົ່ານັ້ນ. ປະຄຳຖາມຂອງທ່ານໄວ້ກ່ອນ. ຈະເປັນການຈົບງາມເທົ່າໃດໜໍທີ່ເຮົາໄດ້ເຫັນອົງພຣະວິນຍານບໍຣິສຸດເວົ້າໂດຍກົງກັບບັນດາຜູ້ຟັງທັງຫລາຍ.

ວິທີສ້າງຄຳນຳ(ອາລັມພະບົດ) ສຳລັບເຣື່ອງ

ຫລັງຈາກທ່ານໄດ້ຄົ້ນພົບຂຸມຊັບຝ່າຍວິນຍານໃນເຣື່ອງແລ້ວ ທ່ານກໍພ້ອມແລ້ວທີ່ຈະຕັດສິນໃຈວ່າເຣື່ອງທີ່ທ່ານຕຽມນັ້ນຕ້ອງການຄຳນຳຫລືບໍ່. ເຮົາຕຽມຄຳນຳຫລັງຈາກເຮົາໄດ້ພົບຂຸມຊັບແລະການນຳມາໃຊ້ໃນຊີວິດຝ່າຍວິນຍານທັງໝົດ ເພາະວ່າຄຳນຳຍັງບໍ່ມີເທື່ອຈົນກວ່າເຮົາໄດ້ສຶກສາເຣື່ອງເສັງກ່ອນຊຶ່ງເຮົາຮູ້ວ່າທັງໝົດນັ້ນຈະມີຄຳນຳສຳລັບເຣື່ອງນັ້ນຫລືບໍ່.

ຄຳນຳຈະຊີ້ໃຫ້ເຫັນສະຖານທີ່ແລະເບື້ອງຫລັງຂອງເຣື່ອງທີ່ບັນດາຜູ້ຟັງຈະໄດ້ຍິນ. ຄຳນຳຈະຕຽມບັນດາຜູ້ຟັງໃຫ້ຮູ້ຈັກເຣື່ອງແລະເຂົ້າໃຈສະພາບແວດລ້ອມວ່າແມ່ນຫຍັງໄດ້ເກີດຂຶ້ນກ່ອນເຣື່ອງນີ້.

ໃນຄຳນຳນັ້ນມີຫຍັງແດ່?

1. ຖ້າທ່ານຫາກຕ້ອງການຄຳນຳ ສ່ວນຫລາຍຈະເປັນຖ້ອຍຄຳຫລືເປັນປໂຍກສັ້ນໆ. ຄຳນຳ ຕາມທັມມະຊາດແລ້ວຈະເປັນການເລົ່າແບບທັມມະດາບໍ່ເໝືອນເລົ່າເຣື່ອງ ດັ່ງນັ້ນຄຳນຳຈະຕ້ອງສັ້ນເພື່ອສ້າງຄວາມສົນໃຈແກ່ບັນດາຜູ້ຟັງ. ສັ້ນແລະໃຫ້ມີຄວາມສົນໃຈນຳ ເພາະວ່າການເລົ່າແບບທັມມະດາເປັນການຍາກທີ່ຈະຈື່ຈຳໄດ້ດີບໍ່ເໝືອນກັບການເລົ່າເຣື່ອງ. ຕໍ່ໄປນີ້ແມ່ນເຫດຜົນສາມປະການທີ່ທ່ານອາດຈະໃຊ້ຄຳນຳໃນການເລົ່າເຣື່ອງ;
    ກ. ໃຊ້ຄຳນຳເພື່ອເລີ້ມການເລົ່າເຣື່ອງຖ້າຫາກຈຳເປັນ ເພື່ອໃຫ້ເຣື່ອງຢູ່ໃນຊ່ວງເວລາ ຫລືຢູ່ໃນສະຖານະການ. ໃຫ້ຄຳນຳຂອງທ່ານຖືກຕ້ອງ ແນ່ນອນ ສຳຄັນຕໍ່ຄວາມເຂົ້າໃຈໃນເຣື່ອງທີ່ທ່ານໄດ້ເລືອກນັ້ນ.
    ຂ. ບາງເທື່ອມີຄຳສັບໂດຍສະເພາະທີ່ຢູ່ໃນເຣື່ອງນັ້ນ ຊຶ່ງເປັນສິ່ງໃໝ່ແລະເຮັດໃຫ້ບັນດາຜູ້ຟັງສັບສົນ. ທ່ານສາມາດອະທິບາຍຄຳສັບນັ້ນໃນຄຳນຳກ່ອນທີ່ທ່ານຈະເລີ້ມເລົ່າເຣື່ອງ. ຍົກຕົວຢ່າງ ຖ້ອຍຄຳແລະຄຳສັບທີ່ຄວນຈະອະທິບາຍນັ້ນໄດ້ແກ່ "ໂຮງທັມເທສນາ" "ບຸດມະນຸດ" ຫລື "ລູກໆຂອງຜູ້ປະກາດພຣະທັມ."
    ຄ. ໃນຣະຫວ່າງຖ້ອຍຄຳທີ່ເປັນຄຳຖາມ ທ່ານອາດຈະຢາກໃຫ້ບັນດາຜູ້ຟັງຄົ້ນຫາຂຸມຊັບທີ່ຢູ່ໃນເຣື່ອງຊຶ່ງຂຶ້ນຢູ່ກັບຄວາມຮູ້ຂອງເຂົາເຈົ້າບາງຢ່າງໃນພຣະຄັມພີເດີມ. ຍົກຕົວຢ່າງ, ທ່ານອາດຈະເລົ່າເຣື່ອງໃນພຣະຄັມພີໂຢຮັນບົດທີນຶ່ງຊຶ່ງໂຢຮັນໄດ້ກ່າວວ່າ “ເບິ່ງແມ, ລູກແກະຂອງພຣະເຈົ້າ ຜູ້ຊົງຮັບເອົາຄວາມຜິດ

ບາບຂອງມະນຸສໂລກໄປເສັ່ງ." ດັ່ງນັ້ນ, ໃນຄຳນຳ ທ່ານອາດຈະເວົ້າວ່າ ພຣະເຈົ້າໄດ້ບອກໄພ່ພົນຂອງ ພຣະອົງຫລາຍຄັ້ງໃຫ້ນຳເອົາລູກແກະໄປຖວາຍເປັນເຄື່ອງບູຊາເມື່ອເຂົາເຈົ້າໄດ້ເຮັດບາບ.

2. ບໍ່ວ່າຂໍ້ມູນໃດໆ ທີ່ທ່ານຮູ້ສຶກວ່າບັນດາຜູ້ຟັງຈະຕ້ອງຮູ້ເພື່ອຈະເຂົ້າໃຈເຣື່ອງ ຫລືຕອບສນອງຫລັງຈາກທີ່ໄດ້ຖາມ ຄຳຖາມໃນເຣື່ອງ, ທ່ານຈະຕ້ອງເອົາຂໍ້ມູນນັ້ນໃສ່ໃນຄຳນຳຂອງທ່ານ.

3. ຈົ່ງຈື່ໄວ້ເໝືອນກັນວ່າ ບາງຄັ້ງກໍບໍ່ຈຳເປັນຕ້ອງມີຄຳນຳ

4. ໃນການເລົ່າເຣື່ອງເຈາະໃຈ ເຮົາໃຊ້ຂໍ້ມູນທີ່ພົບຢູ່ໃນພຣະຄັມພີເທົ່ານັ້ນ. ເຮົາຈະບໍ່ໃຊ້ປຶ້ມອະທິບາຍພຣະຄັມພີ ອື່ນໆ ຫລືແມ່ນແຕ່ຄຳອະທິບາຍທີ່ເປັນພາສາກຣີກ/ເຮັບເຣີ ເພາະວ່າຂໍ້ມູນເຫລົ່ານັ້ນຈະມີໜ້ອຍທີ່ເລືອກເອົາມາ ໃຊ້. ເຮົາຢາກໜູນໃຈແລະເພີ້ມພລັງໃຫ້ບັນດາຜູ້ຟັງໝົດທຸກຄົນໄດ້ແບ່ງປັນຂໍ້ພຣະຄັມພີທີ່ຢູ່ໃນເຣື່ອງເທົ່ານັ້ນ. ເຮົາ ຢາກຊີ້ໃຫ້ບັນດານັກຮຽນໄດ້ເຫັນຈາກຕົວຢ່າງຂອງເຮົາເຖິງວິທີຄົ້ນຫາຄວາມຈິງອັນເລິກເຊິ່ງໃນພຣະຄຳ ແລະຈາກ ພຣະຄຳຂອງພຣະເຈົ້າ. ສອນເຂົາເຈົ້າໃຫ້ເຊື່ອວາງໃຈໃນເຣື່ອງທີ່ພຣະເຈົ້າປະທານໃຫ້.

5. ຄຳນຳແມ່ນຂໍ້ມູນຈາກພຣະຄັມພີທີ່ທ່ານໄດ້ຮວບຮວມໄວ້. ຫລັງຈາກທ່ານໄດ້ກ່າວຄຳນຳຂອງທ່ານແລ້ວ ຈົ່ງໃຫ້ມີ ຄວາມກະຈ່າງແຈ້ງວ່າຄຳນຳຂອງທ່ານໄດ້ຈົບລົງ ໂດຍເວົ້າຕໍ່ໄປວ່າ...."ເຣື່ອງທີ່ຂ້າພະເຈົ້າຈະເລົ່າແມ່ນຢູ່ໃນພຣະ ຄັມພີນີ້" ຫລືເວົ້າວ່າ, "ຕໍ່ໄປນີ້ແມ່ນເຣື່ອງໃນພຣະຄັມພີ" ບໍ່ຈຳເປັນຕ້ອງເວົ້າຍືດຍາວວ່າ "ຕໍ່ໄປນີ້ແມ່ນເຣື່ອງທີ່ ກ່ຽວກັບ....." ແຕ່ໃຫ້ເຣື່ອງທີ່ທ່ານຈະເລົ່າບອກຜູ້ຟັງເອງວ່າແມ່ນເຣື່ອງກ່ຽວກັບຫຍັງ. (ບໍ່ຕ້ອງບອກວ່າແມ່ນເຣື່ອງ ກ່ຽວກັບຫຍັງ)

✞

ບົດທີ 5

ໃຫ້ເຮົາມາລອງເບິ່ງຄວາມສາມາດຂອງເຮົາໃນການຕຽມເຣື່ອງແລະເລົ່າ(ສເນ)ເຣື່ອງ

ທຳອິດ, ຮຽນຈາກເຣື່ອງນີ້ທີ່ເປັນຕົວຢ່າງ

ທ່ານອາດຈະຢາກກັບຄືນໄປລົ້ມຄືນຄວາມສາມາດ I; ແລະໃຊ້ຂໍ້ມູນນັ້ນເພື່ອຮຽນເຣື່ອງພຣະຄັມພີໃນພຣະທັມລູກາ

> *"ພຣະເຢຊູໄດ້ເຂົ້າໄປໃນບ້ານນຶ່ງກັບພວກສາວົກ ມີຍິງຄົນນຶ່ງຊື່ມາທາ ໄດ້ຕ້ອນຮັບພຣະອົງໄວ້ໃນ ເຮືອນຂອງລາວ ມາທາມີນ້ອງສາວຊື່ ມາຣີອາ ແລະມາຣີອາໄດ້ມານັ່ງໃກ້ຕີນຂອງພຣະເຢຊູ ຟັງ ຖ້ອຍຄຳຂອງພຣະອົງ*
>
> *ສ່ວນມາທາໄດ້ມົວເມົາກັບວຽກງານບົວລະບັດຫລາຍຢ່າງຈຶ່ງມາທາພຣະເຢຊູເວົ້າວ່າ, "ພຣະອົງເຈົ້າ ເອີຍ, ທ່ານບໍ່ສົນໃຈບໍ ທີ່ນ້ອງສາວຂອງຂ້ານ້ອຍປະໃຫ້ຂ້ານ້ອຍເຮັດວຽກແຕ່ຜູ້ດຽວ ຂໍໃຫ້ທ່ານບອກ ນ້ອງມາຊ່ອຍຂ້ານ້ອຍແດ່"*
>
> *ພຣະເຢຊູໄດ້ຕອບວ່າ, "ມາທາ, ມາທາເອີຍ, ເຈົ້າກະວົນກະວາຍແລະຮ້ອນໃຈໃນຫລາຍສິ່ງແທ້ໜໍ ສິ່ງທີ່ຈຳເປັນນັ້ນມີແຕ່ສິ່ງດຽວ ມາຣີອາໄດ້ເລືອກເອົາສິ່ງທີ່ດີນັ້ນແລ້ວ ບໍ່ມີຜູ້ໃດຍາດເອົາໄປຈາກນາງໄດ້.*
>
> (ລູກາ 10:38-42)

ການຕຽມ: ຄົ້ນຫາຂຸມຊັບຝ່າຍວິນຍານ

ຄົ້ນຫາຂຸມຊັບ 1 - ການຄົ້ນຫາຂຸມຊັບຝ່າຍວິນຍານ

ໃນຊ່ວງເວລາທີ່ທ່ານຮຽນເລົ່າເຣື່ອງ ທ່ານອາດຈະເຫັນຂຸມຊັບຕ່າງໆ ແດ່ແລ້ວ. ເມື່ອທ່ານກັບຄືນໄປລົ້ມຄືນຈາກ ຕອນຕົ້ນຂອງເຣື່ອງຢ່າງຊ້າໆ ເປັນຕອນໆ ໄປ ຈົ່ງໃຊ້ຄຳຖາມຂອງຜູ້ໃຫ້ຄຳປຶກສາທີ່ສລາດ. ທ່ານຈະໄດ້ພົບຂຸມຊັບ ເພີ້ມອີກຢ່າງຫລວງຫລາຍ.

ຈົ່ງພຍາຍາມໃຊ້ຄຳຖາມຂອງຜູ້ໃຫ້ຄຳປຶກສາທີ່ສລາດແຕ່ລະຄຳຖາມ; *ແມ່ນຫຍັງກຳລັງເກີດຂຶ້ນໃນເຣື່ອງນີ້? ມີຫຍັງ ບໍ່ທີ່ເກີດຂຶ້ນກ່ອນເຣື່ອງນີ້(ໂດຍທາງປະຫວັດແລະທາງຈິດວິນຍານ) ທີ່ສາມາດໃຫ້ຂ້ອຍໄດ້ເຂົ້າໃຈໃນເຣື່ອງນີ້ດີຂຶ້ນ? ຂ້ອຍໄດ້ຮຽນຮູ້ຫຍັງຝ່າຍວິນຍານຈາກບຸກຄົນໃນເຣື່ອງທີ່ໄດ້ເວົ້າແລະໄດ້ກະທຳ? ຄົນໃນເຣື່ອງໄດ້ຕັດສິນໃຈເຮັດຫຍັງ ບໍ່, ຖ້າຕັດສິນໃຈແລ້ວ, ມີທາງອື່ນເລືອກບໍ່? ຈາກການຕັດສິນໃຈແລະທາງເລືອກນັ້ນຜົນຕາມມາຄືແນວໃດແລະໄດ້ ກະທົບຕໍ່ໃຜແດ່?* ຈົ່ງໃຊ້ເຄື່ອງມືທີ່ຜູ້ໃຫ້ຄຳປຶກສາທີ່ສລາດໃຊ້ ຊຶ່ງລາວໄດ້ຖາມຫລາຍໆ ຄຳຖາມ. ນອກຈາກຄຳຖາມ ທີ່ຜູ້ໃຫ້ຄຳປຶກສາທີ່ສລາດໄດ້ຖາມນັ້ນ ເຮົາຕ້ອງຖາມເພີ້ມອີກວ່າ, *ໄດ້ເຫັນການທຳງານຂອງພຣະເຈົ້າບໍ່ໃນເຣື່ອງນີ້ ແລະໃນຊີວິດຂອງບຸກຄົນໃນເຣື່ອງນີ້ບໍ່?*

ຄຳຖາມທັງໝົດທີ່ກ່າວມານັ້ນຈະຊ່ອຍທ່ານພົບຂຸມຊັບດັ່ງຕໍ່ໄປນີ້;

1. ເມື່ອນາທາພົບວ່ານາງບໍ່ສາມາດເຮັດວຽກຮັບໃຊ້ທັງໝົດສຳເຮັດດ້ວຍຕົວນາງເອງ, ນາງໄດ້ຕັດສິນໃຈເຮັດໃນສິ່ງທີ່ບໍ່ເໝາະສົມ. ເຖິງແມ່ນມາທາເປັນຜູ້ເຊີນພຣະເຢຊູ ມາທາກໍຕຳໜິຄົນອື່ນເພາະຄວາມບົກພ່ອງຂອງຕົນ. ນາງກ່າວຫາພຣະເຢຊູວ່າບໍ່ສົນໃຈ. ນາງເວົ້າຄືເປັນນາຍພຣະເຢຊູ. ນາງບໍ່ໄດ້ທູນຂໍໃຫ້ພຣະເຢຊູຊ່ອຍ.
2. ມາທາເອີ້ນພຣະເຢຊູວ່າ "ນາຍ"(ອີງພຣະຜູ້ເປັນເຈົ້າ) ແຕ່ການກະທຳຂອງນາງເໝືອນກັບວ່ານາງເປັນນາຍ.
3. ພຣະເຢຊູບໍ່ໄດ້ຕອບສນອງຕໍ່ມາທາແບບໂກດຮ້າຍ ທີ່ມາທາບໍ່ໄດ້ໂຄຣົບພຣະອົງ
4. ພຣະເຢຊູຊົງເຕືອນມາທາດ້ວຍຄວາມຮັກ
5. ມາທາຄິດວ່າສິ່ງທີ່ນາງກຳລັງເຮັດຢູ່ນັ້ນເປັນສິ່ງສຳຄັນ, ແຕ່ພຣະເຢຊູກ່າວວ່າມາຣີອາໄດ້ເລືອກເອົາສິ່ງທີ່ດີນັ້ນແລ້ວ
6. ທາງເລືອກຂອງມາທານັ້ນບໍ່ດີໃນເວລານັ້ນ (ບໍ່ເໝາະສົມ)
7. ມາຣີອາເລືອກຢູ່ຝ່າຍພຣະເຢຊູ ແຕ່ຂັດກັບວັທນະທັມຂອງນາງ ແລະຂັດກັບຄວາມຄາດຫວັງຂອງຄົນອື່ນທີ່ມີຕໍ່ນາງ ໂດຍສະເພາະແມ່ນຜູ້ເປັນເອື້ອຍ.
8. ພຣະເຢຊູຈະບໍ່ໃຫ້ສິ່ງທີ່ມາຣີອາເລືອກ ຖືກຄົນອື່ນຍາດເອົາໄປ.

ຄົ້ນຫາຂຸມຊັບ 2 - ຄົ້ນຫາການນຳໃຊ້ໃນຊີວິດຝ່າຍວິນຍານ

ອີງຕາມການຄົ້ນຫາຂຸມຊັບຝ່າຍວິນຍານທີ່ຂຽນເປັນລາຍການຂ້າງເທິງນັ້ນ ແລະຈາກບາງຢ່າງທີ່ທ່ານຫາກໍຄົ້ນພົບ ຈົ່ງກັບຄືນໄປສູ່ເຣື່ອງອີກແລະກວດເບິ່ງຂຸມຊັບການນຳໃຊ້ໃນຊີວິດຝ່າຍວິນຍານ.

ທຳອິດ, ຈົ່ງຄຶດທົບທວນຄືນການຄົ້ນຫາຂຸມຊັບຝ່າຍວິນຍານທີ່ທ່ານໄດ້ພົບ ແລ້ວໃຫ້ຕັ້ງຄຳຖາມດັ່ງນີ້: *ໃນທຸກມື້ນີ້ຍັງມີສິ່ງດັ່ງກ່າວເກີດຂຶ້ນຢູ່ບໍ? ມັນເກີດຂຶ້ນຢ່າງໃດແດ່? ມັນເກີດຂຶ້ນກັບຂ້າພະເຈົ້າຫລືຄົນທີ່ຂ້າພະເຈົ້າຮູ້ຈັກຢູ່ບໍ? ແລະຖ້າມັນເກີດຂຶ້ນກັບຂ້ອຍ ຂ້ອຍໄດ້ເຫັນຫຍັງແດ່ໃນເຣື່ອງນີ້ທີ່ສາມາດຊ່ອຍຂ້ອຍໄດ້?*

ຕໍ່ໄປນີ້ແມ່ນການນຳໃຊ້ໃນຊີວິດຝ່າຍວິນຍານ ຊຶ່ງຄຳຖາມເຫລົ່ານັ້ນອາດຈະຊ່ອຍທ່ານໃນການຄົ້ນຫາ:

1. ຈົ່ງຣະວັງ ທ່ານຢ່າເຮັດວຽກໜັກຫລາຍເກີນໄປ ຈົນເສັຽເວລາອັນສຳຄັນຊຶ່ງທ່ານຕ້ອງການຮຽນຈາກພຣະຄຳຂອງພຣະເຈົ້າ.
2. ເປັນໜ້າເສົ້າໃຈເມື່ອບັນຫາເກີດຂຶ້ນໃນຊີວິດຂອງເຮົາ ຊຶ່ງເຮົາໄດ້ເວົ້າກັບພຣະເຈົ້າວ່າ, "ພຣະອົງບໍ່ສົນໃຈ ຫລື?" ຊຶ່ງເຮັດໃຫ້ພຣະອົງຊົງເສັຽພຣະທັຍ.
3. ເມື່ອເຮົາເລືອກທີ່ຈະເຮັດຫລາຍເກີນກວ່າຄວາມສາມາດຂອງເຮົາ ເປັນການໂງ່ທີ່ເຮົາຕຳໜິພຣະເຈົ້າວ່າ ພຣະອົງບໍ່ສົນໃຈຕ່ອງການອັນຫລວງຫລາຍຂອງເຮົາ.
4. ເຮົາຄວນຈະບອກພຣະເຈົ້າເຖິງວິທີແກ້ໄຂບັນຫາຂອງເຮົາບໍ?
5. ເຮົາເຄີຍເຮັດຫລາຍຈົນເກີນຄວາມສາມາດຂອງເຮົາບໍ່ ຫລືເຮັດວຽກໃຫ້ພຣະເຈົ້າທັງໆ ທີ່ພຣະອົງບໍ່ໄດ້ບອກ?
6. ຫລາຍໆ ຄັ້ງເຮົາໄດ້ຖາມເຖິງຄວາມຮັກຂອງພຣະເຈົ້າທີ່ມີຕໍ່ເຮົາ ເມື່ອສິ່ງທີ່ເຮົາຄາດຫວັງໄວ້ບໍ່ເກີດຂຶ້ນ?
7. ພຣະເຢຊູມີຄວາມອິດທົນແລະອິດກັ້ນພຣະທັຍໃນຂະນະທີ່ພຣະອົງກ່າວເຕືອນມາທາ. ຫລາຍໆ ຄັ້ງ ທີ່ພວກເຮົາ

ເຮັດກັບພຣະເຈົ້າຢ່າງບໍ່ໂຄຣິບຢຳເກງ, ພຣະອົງຊົງອົດກັ້ນພຣະທັຍແລະເວົ້າກັບເຮົາດ້ວຍຄວາມເມດຕາ.

8. ພຣະເຢຊູມີຄວາມເປັນຫ່ວງເປັນພິເສດແລະມີຄວາມສັມພັນສ່ວນຕົວກັບມາທາຢ່າງເຫັນໄດ້ຊັດ ເມື່ອພຣະອົງເອີ້ນຊື່ລາວ, ພຣະເຈົ້າຊົງຮູ້ຈັກຊື່ຂອງພວກເຮົາແລະເວົ້າກັບເຮົາເປັນການສ່ວນຕົວ.
9. ເມື່ອເຮົາໃຊ້ເວລາໃນເຮືອນຄົວ, ໃນການຮັບໃຊ້ຫລືເຮັດງານການຮັບໃຊ້ອື່ນໆ ບໍ່ຖືວ່າເຮັດຜິດແຕ່ຢ່າງໃດ ແຕ່ຖ້າວຽກງານຂອງເຮົາເຮັດໃຫ້ເຮົາຫ່າງໄກຈາກພຣະເຈົ້າ ບໍ່ໄດ້ຟັງພຣະຄຳຂອງພຣະອົງ ເຮົາກໍບໍ່ໄດ້ເລືອກເອົາສິ່ງທີ່ດີ.
10. ໃນຖ້ອຍຄຳສຸດທ້າຍທີ່ພຣະເຢຊູເວົ້າເຖິງການກະທຳຂອງມາທາ, ພຣະອົງກ່າວວ່າມາຣີອາໄດ້ເລືອກເອົາສິ່ງທີ່ດີ. ຈະເຫັນໄດ້ຢ່າງແຈ່ມແຈ້ງວ່າ ມາທາຢາກໃຫ້ມາຣີອາເຊົາຟັງພຣະເຢຊູເພື່ອຈະໄດ້ໄປຊ່ວຍລາວ ມາທາຄິດວ່າສິ່ງທີ່ລາວກຳລັງເຮັດເປັນສິ່ງສຳຄັນ. ບາງເທື່ອເຮົາເຫັນວ່າສິ່ງທີ່ເຮົາກຳລັງເຮັດເປັນສິ່ງສຳຄັນທີ່ສຸດ. ແຕ່ຢ່າງໃດກໍຕາມ, ມັນອາດຈະບໍ່ແມ່ນສິ່ງທີ່ພຣະເຈົ້າເຫັນວ່າສຳຄັນສຳລັບພວກເຮົາທີ່ຈະເຮັດ ກໍເປັນໄດ້.
11. ບາງຄັ້ງເຮົາກໍເປັນຜູ້ຄວບຄຸມສະຖານະການ ບໍ່ຍຸດເພື່ອທູນຕໍ່ພຣະເຈົ້າວ່າແມ່ນຫຍັງທີ່ພຣະອົງຢາກໃຫ້ເຮົາເຮັດ. ເຮົາເປັນຜູ້ຕັດສິນໃຈເອົາເອງວ່າແມ່ນຫຍັງເປັນສິ່ງສຳຄັນແລະຈຳເປັນຈະຕ້ອງເຮັດ. ເຮົາອາດຈະດຶງຄົນອື່ນອອກໄປຈາກພຣະເຈົ້າທີ່ພຣະອົງຊົງຮຽກເອີ້ນໃຫ້ເຂົາເຈົ້າເຮັດ.
12. ພຣະເຢຊູຊົງກ່າວວ່າສິ່ງທີ່ມາຣີອາເຮັດນັ້ນແມ່ນສິ່ງທີ່ດີບໍ່ມີໃຜຍາດເອົາໄປຈາກນາງໄດ້. ໃນວັນພິພາກສາ, ໃນຂະນະທີ່ພຣະເຈົ້າຊົງເບິ່ງວ່າເຮົາໄດ້ເຮັດຫຍັງແດ່ໃນຊີວິດເຮົາ, ສິ່ງທີ່ເຮົາໄດ້ຕັດສິນໃຈເຮັດເພື່ອພຣະເຈົ້ານັ້ນອາດຈະບໍ່ແມ່ນການເລືອກທີ່ດີ. ແຕ່ຖ້າຫາກເປັນທາງເລືອກທີ່ດີກໍຈະບໍ່ສາມາດຍົກສິ່ງນັ້ນໜີໄປຈາກເຮົາໄດ້.
13. ຫລາຍຄັ້ງເຮົາໄດ້ເລືອກເຮັດບາງສິ່ງທີ່ຕ້ານກັບວັທນະທັມແລະຄອບຄົວຂອງເຮົາ, ຕ້ານກັບຄົນອື່ນທີ່ຄາດຫວັງໃນຕົວເຮົາ, ເມື່ອເຮົາເລືອກເອົາຝ່າຍຈິດວິນຍານ.

ເວລານີ້ທ່ານໄດ້ພົບຂຸມຊັບຫລາຍຢ່າງດ້ວຍຕົວທ່ານເອງ, ເຖິງເວລາທີ່ທ່ານຈະຕ້ອງກັບຄືນໄປຕອນຕົ້ນຂອງເຣື່ອງເພື່ອເລີ້ມຕັ້ງຄຳຖາມ ເພື່ອນຳບັນດາຜູ້ຟັງໃຫ້ຄົ້ນພົບຂຸມຊັບດ້ວຍຕົວເຂົາເຈົ້າເອງ. ສິ່ງທີ່ເຮົາຈະເຮັດຕໍ່ໄປແມ່ນການສເນີເຣື່ອງຊຶ່ງອາດຈະໃຊ້ບາງຄຳຖາມທີ່ທ່ານໄດ້ຕັ້ງ ຫລືໄດ້ຫຍຸມໄວ້ແລ້ວ.

ດັ່ງນັ້ນ, ໃຫ້ເຮົາລົ້ມຄືນສິ່ງທີ່ເຮົາໄດ້ກະທຳມານັ້ນ ເມື່ອທ່ານເລົ່າເຣື່ອງໃຫ້ຄົນອື່ນຟັງຢ່າງແທ້ຈິງ...

ການນຳສເນີ ຂັ້ນທີນຶ່ງ:
ເລົ່າເຣື່ອງສາມເທື່ອ

ໃຫ້ບັນດາຜູ້ຟັງໄດ້ຍິນເຣື່ອງສາມເທື່ອ ເປັນການຊ່ວຍເຂົາເຈົ້າໃຫ້ຮູ້ເຣື່ອງດີພຽງພໍທີ່ຈະຕອບຄຳຖາມໄດ້ຢ່າງຖືກຕ້ອງ

1. **ທ່ານເປັນຜູ້ເລົ່າເຣື່ອງ**
2. **ຂໍໃຫ້ມີຜູ້ອາສາສມັກເລົ່າເຣື່ອງລົ້ມຄືນອີກ**
3. **ນຳຕາມເຣື່ອງ.** (ເທື່ອນີ້ແມ່ນທ່ານເປັນຜູ້ເລົ່າເຣື່ອງລົ້ມຄືນອີກ, ແຕ່ໃຫ້ບັນດາຜູ້ຟັງມີສ່ວນຮ່ວມ ເພື່ອຊ່ວຍທ່ານເລົ່າເຣື່ອງໄປຈົນຈົບ)

ເທື່ອທຳອິດ - ທ່ານເປັນຜູ້ເລົ່າເຣື່ອງ

ຈົ່ງເລົ່າເຣື່ອງໃຫ້ຖືກຕ້ອງແລະໃຫ້ມີຄວາມສົນໃຈເທົ່າທີ່ຈະເປັນໄປໄດ້. ຈົ່ງອອກທ່າທາງໄປນຳເພື່ອໃຫ້ເຫັນພາບປະກອບຂອງເຣື່ອງໃນຂະນະທີ່ທ່ານເລົ່າ.

ເທື່ອທີສອງ - ຮ້ອງຂໍໃຫ້ມີຜູ້ອາສາສມັກເລົ່າເຣື່ອງລົ້ມຄືນອີກ

ຈຸດປະສົງອັນສຳຄັນ ທີ່ຂໍໃຫ້ມີຜູ້ອາສາສມັກນັ້ນ ແມ່ນເພື່ອໜູນໃຈບັນດາຜູ້ຟັງໃຫ້ເລົ່າເຣື່ອງລົ້ມຄືນດ້ວຍສຽງອັນດັງ ຖ້າມກາງກຸ່ມ. ການອາສາສມັກນີ້ແມ່ນເພື່ອໃຫ້ຄົນໃນກຸ່ມມີສ່ວນຮ່ວມເປັນເທື່ອທຳອິດໂດຍທາງສ່ວນຕົວ. ດັ່ງນັ້ນ ເມື່ອເຮົາເຮັດກັບຜູ້ອາສາສມັກຢ່າງສຸພາບ ດ້ວຍຄວາມນັບຖື, ໃນຂະນະທີ່ສືບຕໍ່ເລົ່າເຣື່ອງນັ້ນ ບໍ່ພຽງແຕ່ເຮັດໃຫ້ຄົນນັ້ນຢາກຈະເວົ້າແລະຕອບຄຳຖາມເທົ່ານັ້ນ ແຕ່ຄົນອື່ນໆ ໃນກຸ່ມຈະເຫັນເຮົາເຮັດກັບຜູ້ອາສາສມັກຢ່າງສຸພາບ. ການກະທຳຢ່າງສຸພາບຈະຂັບເຄື່ອນເຂົາເຈົ້າໃຫ້ມີຄວາມຮູ້ສຶກຢາກຈະເວົ້າດັງໆ ໂດຍທີ່ບໍ່ອາຍ.

ໃນຕອນນີ້ຂອງການເລົ່າເຣື່ອງ ຍັງບໍ່ຄາດຫວັງໃຫ້ບັນດາຜູ້ຟັງຮຽນເລົ່າເຣື່ອງເທື່ອ. ການເລົ່າເຣື່ອງຢ່າງຖືກຕ້ອງຈະໄດ້ຮຽນອີກຕາມພາຍຫລັງ.

ຖ້າທ່ານຫາກມີເວລາຈຳກັດ(ເວລາບໍ່ຫລາຍ)ໃຫ້ຂ້າມຕອນນີ້ໄປ (ບໍ່ຕ້ອງມີການອາສາສມັກ) ໃຫ້ເລີ້ມຕອນທີສາມຕໍ່ໄປຄື ນຳຕາມເຣື່ອງ

ມີສອງທາງດ້ວຍກັນ ໃນການຮ້ອງຂໍໃຫ້ມີຜູ້ອາສາສມັກ

ທາງທີ 1. ຈົ່ງເວົ້າວ່າ, "ໃຫ້ຈັບຄູ່ກັບຄົນທີ່ນັ່ງຢູ່ໃກ້ກັນ ອວ່າຍໜ້າຫາກັນ ແລ້ວປ່ຽນກັນເລົ່າເຣື່ອງລົ້ມຄືນ." ດັ່ງທີ່ໄດ້ກ່າວມານັ້ນ ເປັນການດີທີ່ສຸດທີ່ໃຫ້ມີຜູ້ອາສາສມັກເລົ່າເຣື່ອງລົ້ມຄືນນັ້ນແມ່ນການໜູນໃຈຜູ້ຟັງເວົ້າອອກດັ່ງໆ. ເພາະວ່າຄົນສ່ວນຫລາຍມັກລັ່ງເລໃຈທີ່ຈະເວົ້າຕໍ່ໜ້າກຸ່ມຄົນ, ການກະທຳດັ່ງກ່າວນີ້ແມ່ນທາງທີ່ຖ່ອມສຸພາບທີ່ຮ້ອງຂໍໃຫ້ມີຜູ້ອາສາສມັກ. ຄົນສ່ວນຫລາຍຈະນັ່ງຢູ່ໃກ້ກັບຄົນທີ່ຕົນຮູ້ຈັກດີ, ດັ່ງນັ້ນເກືອບຈະເວົ້າໄດ້ວ່າ ທຸກຄົນມີຄວາມກ້າພໍທີ່ຈະອວ່າຍໜ້າຫາຄົນທີ່ຢູ່ຂ້າງໆ ຕົນ ແລະເລົ່າເຣື່ອງລົ້ມຄືນໃຫ້ຄົນນັ້ນຟັງ.

ເຖິງແມ່ນໃນກຸ່ມຄຣິສຕຽນ ການສອນສ່ວນຫລາຍຈະເປັນການສອນແບບປາຖະກະຖາ (ອະທິບາຍ), ດັ່ງນັ້ນເພື່ອຊ່ວຍບັນດາຜູ້ຟັງໃຫ້ຂຍາຍວິທີການຮຽນອອກໄປ ເຮົາຕ້ອງສ້າງສະພາບແວດລ້ອມເພື່ອຊ່ວຍໃຫ້ເຂົາເຈົ້າໄດ້ເວົ້າອອກມາໃນສິ່ງທີ່ເຂົາເຈົ້າຄິດຢູ່ນັ້ນ. ເມື່ອທ່ານເລົ່າເຣື່ອງສູ່ກຸ່ມຄົນຟັງໃນເທື່ອທຳອິດ ການຮ້ອງຂໍໃຫ້ຄົນທີ່ນັ່ງຢູ່ໃກ້ກັນເລົ່າເຣື່ອງລົ້ມຄືນສູ່ກັນແລະກັນຟັງແມ່ນທາງທີ່**ດີທີ່ສຸດ.**

ນີ້ແມ່ນຄຳແນະນຳ! ຖ້າທ່ານຄິດວ່າທ່ານໄດ້ລືມບາງຕອນເມື່ອທ່ານເລົ່າເຣື່ອງ ຈົ່ງໃຊ້**ທາງທີ 1** ນີ້ເພື່ອທ່ານຈະມີເວລາກວດຄືນການເລົ່າເຣື່ອງຂອງທ່ານວ່າຖືກຕ້ອງຫລືບໍ . ທ່ານສາມາດເບິ່ງປຶ້ມພຣະຄັມພີໃນຂະນະທີ່ຄົນໃນກຸ່ມກຳລັງຫຍ້ຽງຢູ່ກັບການເລົ່າເຣື່ອງສູ່ກັນແລະກັນຟັງ ເຂົາເຈົ້າຈະບໍ່ສັງເກດວ່າທ່ານເຮັດຫຍັງ ເພາະເຂົາເຈົ້າກຳລັງຫຍ້ຽງຢູ່ກັບການເລົ່າເຣື່ອງໃຫ້ກັນແລະກັນຟັງ.

ທາງທີ 2. ໃຊ້ທາງທີ 2 ນີ້ຫລັງຈາກທ່ານເຄີຍໃຊ້ທາງທີ 1 ແລ້ວ. ບັນດາຜູ້ຟັງຈະມີໃຈກ້າໃນການອາສາສມັກຫລັງຈາກໄດ້ຮຽນການເລົ່າເຣື່ອງເຈາະໃຈນຳກັນ.

ຂໍໃຫ້ຜູ້ນຶ່ງອາສາສມັກເລົ່າເຣື່ອງລົ້ມຄືນແກ່ກຸ່ມຜູ້ຟັງທັງກຸ່ມ. ຖ້າເຂົາເຈົ້າຍັງອາຍບໍ່ຕອບສນອງໃນທັນທີ ທ່ານຈຶ່ງເວົ້າວ່າ, "ໃຫ້ເລົ່າເທົ່າທີ່ຈື່ໄດ້ ຈື່ໄດ້ທໍ່ໃດໃຫ້ເລົ່າທໍ່ນັ້ນ" ໃຫ້ສິ່ງຮອຍຍິ້ມເພື່ອໜູນໃຈບັນດາຜູ້ຟັງ. ທ່ານຈຶ່ງຫຍັບອອກໄປທາງຂ້າງ ສັນຍານໃຫ້ຜູ້ອາສາສມັກຍ່າງອອກມາແທນບ່ອນຂອງທ່ານ.

ເມື່ອມີຄົນນຶ່ງອາສາສມັກແລ້ວ ຈຶ່ງຕົບມືໃຫ້ຫລືຮັບຮູ້ຄົນນັ້ນດ້ວຍຄວາມຍິນດີ. ອີກເທື່ອນຶ່ງ, ຈຶ່ງຍິ້ມແລະເວົ້າກັບຜູ້ອາສາສມັກວ່າ, "ໃຫ້ທ່ານເລົ່າເຣື່ອງເທົ່ານັ້ນ ບໍ່ຕ້ອງເລົ່າຄຳນຳ ຖ້າວ່າຈື່ບໍ່ໄດ້ໝົດກໍບໍ່ເປັນຫຍັງເພາະວ່າທ່ານໄດ້ຟັງເຣື່ອງນີ້ພຽງແຕ່ເທື່ອດຽວ ໃຫ້ເລີ້ມເລົ່າຈາກ..." ແລະທ່ານຈຶ່ງເລົ່າຕອນຕົ້ນຂອງເຣື່ອງໜ້ອຍນຶ່ງ ເພື່ອໃຫ້ຜູ້ອາສາສມັກເລົ່າຕໍ່

ຈຶ່ງຢືນຢູ່ຂ້າງຫ່າງຈາກຜູ້ອາສາສມັກປະມານ 10 ຟຸດ ຖ້າທ່ານຢືນຢູ່ໃກ້ລາວ ລາວຈະບໍ່ຫລຽວໜ້າໄປຫາບັນດາຜູ້ຟັງ ແຕ່ລາວຈະຫລຽວເບິ່ງທ່ານເພື່ອໃຫ້ທ່ານເປັນຜູ້ເຫັນດີນຳ ແຕ່ຖ້າທ່ານຢູ່ໄກຫລາຍຜູ້ອາສາສມັກຈະຮູ້ສຶກວ່າຢູ່ໂດດດ່ຽວ ຖືກປະປ່ອຍ. ເຖິງແມ່ນທ່ານຈະຢູ່ຫ່າງຈາກຜູ້ອາສາສມັກກໍໃຫ້ທ່ານງຶກຫົວໃຫ້ ຫລືອອກທ່າທີໃຫ້ຄວາມສົນໃຈຕໍ່ລາວ ແລະໃຫ້ຄວາມເຫັນດີແກ່ລາວ.

ຈຶ່ງເອົາໃຈໃສ່ຜູ້ອາສາສມັກ. ຢ່າໃຊ້ເວລາໃນຕອນນີ້ເວົ້າກັບຄົນອື່ນ ເພາະຜູ້ອາສາສມັກວາງໃຈໃນຕົວທ່ານ ຈຶ່ງຮັບເອົາຄວາມວາງໃຈນັ້ນດ້ວຍການຟັງລາວ ແລະເອົາໃຈໃສ່ຕໍ່ລາວ.

ຫລັງຈາກນັ້ນ, ຖ້າເຣື່ອງນັ້ນໄດ້ເລົ່າຢ່າງເພິ່ງພໍໃຈ ໂດຍຄຳເວົ້າແລະການສະແດງອອກ ຈຶ່ງບອກຜູ້ອາສາສມັກໃຫ້ຮູ້ວ່າທ່ານມີຄວາມປະທັບໃຈຫລາຍພຽງໃດຕໍ່ການເລົ່າເຣື່ອງລົ້ມຄືນ. ຈຶ່ງກວດເບິ່ງວ່າທ່ານໄດ້ຕັ້ງໃຈຟັງຜູ້ອາສາສມັກດ້ວຍການຮ່ວມມືກັບສິ່ງທີ່ຜູ້ອາສາສມັກໄດ້ກະທຳຫລືບໍ່ ອາດຈະເປັນການສັນຍານດ້ວຍມືແລະໃຊ້ຄຳເວົ້າຢ່າງປະທັບໃຈ.

ສ່ວນຫລາຍ, ຜູ້ເລົ່າເຣື່ອງລົ້ມຄືນຈະບໍ່ຈື່ເຣື່ອງໄດ້ດີເທົ່າໃດຫລືເລົ່າເຣື່ອງບໍ່ໄດ້ດີ. ເມື່ອສິ່ງນີ້ເກີດຂຶ້ນ, ຢ່າເອີ້ນໃຫ້ຄົນອື່ນເປັນຜູ້ເລົ່າແທນເພື່ອເປັນການແກ້ໄຂ. ຖ້າຄົນໃນກຸ່ມ, ຫລືແມ່ນແຕ່ທ່ານເອງ, ເ ປັນຜູ້ເລົ່າແທນເພື່ອດັດແປງແກ້ໄຂຊ່ວຍຜູ້ອາສາສມັກ ກໍຈະເຮັດໃຫ້ຜູ້ອາສາສມັກໄດ້ຮັບຄວາມອັບອາຍ.

ເຊັ່ນດຽວກັນ, ການພຍາຍາມແປງເຣື່ອງທີ່ຜູ້ອາສາສມັກຫລາຍຄົນເລົ່າບໍ່ຖືກ ຈະເຮັດໃຫ້ບັນດາຜູ້ຟັງທັງຫລາຍເກີດຄວາມສັບສົນ. ເປັນການດີທີ່ສຸດທີ່ຈະໜູນໃຈບັນດາຜູ້ອາສາສມັກທີ່ເລົ່າເຣື່ອງບໍ່ໄດ້ດີດ້ວຍການເອີ່ຍເຖິງບາງສິ່ງທີ່ເຂົາເຈົ້າເຮັດໄດ້ດີ ບາງເທື່ອທ່ານອາດຈະເວົ້າວ່າ, "ຂໍຂອບໃຈນຳຫລາຍໆ ໃນຄວາມກ້າຫານຂອງທ່ານ" ຫລື "ຂ້ອຍມັກຄຳເວົ້າທີ່ເຈົ້າເວົ້າໄດ້ເໝືອນລະຄອນ" ຫລືສິ່ງອື່ນໆ ທີ່ເຫັນວ່າເຂົາເຈົ້າເຮັດໄດ້ດີ ເພື່ອເປັນການໜູນໃຈ.

ຖ້າເປັນເຣື່ອງທີ່ຍາວ ບໍ່ວ່າທ່ານຈະໃຊ້ເທດຜົນແນວໃດກໍບໍ່ມີຜູ້ຕອບສນອງ ເຖິງຈະເຊີນແລ້ວເຊີນອີກໃຫ້ອາສາສມັກແລະໜູນໃຈກໍບໍ່ມີຜູ້ໃດອາສາສມັກ ຍັງມີທາງນຶ່ງທີ່ຈະໃຫ້ເຂົາເຈົ້າອາສາສມັກນັ້ນກໍຄື ໃຫ້ທ່ານເວົ້າວ່າ, "ພວກທ່ານ

ສາມາດຊ່ອຍກັນເລົ່າລຶ້ມຄືນໄດ້ ໃຫ້ຄົນນຶ່ງເລີ້ມຕົ້ນແລະໃຫ້ແຕ່ລະຄົນຊ່ອຍກັນເລົ່າຕໍ່ຈົນຈົບເຣື່ອງ ແລະໃຫ້ເລົ່າເທົ່າທີ່ຈື່ໄດ້."

ການໃຫ້ຫລາຍຄົນອາສາສມັກເລົ່າຊ່ອຍກັນຈະເຮັດໃຫ້ຜູ້ຟັງມີຄວາມກ້າຫານຂຶ້ນ

(ການເລົ່າເຣື່ອງໃນ 25 ປະເທດ ຈະເຫັນວ່າມີຜູ້ອາສາສມັກເລົ່າເຣື່ອງລຶ້ມຄືນສເມີ. ແຕ່ຖ້າບໍ່ມີຜູ້ອາສາສມັກເລີຍ ຂ້າພະເຈົ້າກໍຈະເວົ້າວ່າ, "ຂ້າພະເຈົ້າເຫັນວ່າ ຂ້າພະເຈົ້າຈະຕ້ອງເລົ່າເຣື່ອງອີກເທື່ອນຶ່ງ ເພື່ອໃຫ້ພວກເຮົາຈື່ໄດ້ດີຂຶ້ນ" ແລ້ວຂ້າພະເຈົ້າກໍຈະພາບັນດາຜູ້ຟັງ "ນຳຕາມເຣື່ອງ" ຕໍ່ໄປ. (ໝາຍເຖິງຂ້າມການອາສາສມັກໄປ)

ຖ້າຜູ້ອາສາສມັກເພີ້ມບາງສິ່ງໃສ່ເຣື່ອງ ຫລືເຕີມແຕ່ງເຣື່ອງ, ສິ່ງເຫລ່ານີ້ຈຳເປັນຕ້ອງເຕືອນ ຕ້ອງເວົ້າເຖິງ. ບັນດາຜູ້ຟັງຈະສັງເກດເຫັນສິ່ງທີ່ເພີ້ມເຕີມໃສ່ເຣື່ອງ ເຂົາເຈົ້າຈະຄອຍຖ້າເບິ່ງວ່າທ່ານຈະຊີ້ໃຫ້ເຫັນຄວາມຜິດດັ່ງກ່າວນີ້ແນວໃດ. ແຕ່ຖ້າທ່ານເຫັນແກ່ຄວາມຮັກ ໄດ້ຂ້າມຜ່ານການເຕີມແຕ່ງໃສ່ເຣື່ອງ ທ່ານບໍ່ໄດ້ເວົ້າເຣື່ອງນີ້ໃນທາງທີ່ເໝາະສົມ ແລະດ້ວຍຄວາມອ່ອນສຸພາບວ່າ ການແຕ່ງເຕີມໃສ່ເຣື່ອງ "ຍອມຮັບບໍ່ໄດ້" ອີກບໍ່ດົນທ່ານກໍຈະມີຄວາມເສັ້ງໃຈທີ່ທ່ານໄດ້ຫລີກລ້ຽງບໍ່ກະທຳໃນສິ່ງນັ້ນ.

ຜົນທີ່ຕາມມາຂອງການຫລີກລ້ຽງ: ຄວາມຄາດຫວັງໃນຄວາມຖືກຕ້ອງຂອງພຣະຄັມພີ ຈະໄດ້ຮັບຄວາມຜິດຫວັງເພາະ "ອີງການເລົ່າເຣື່ອງເຈາະໃຈ" ຍອມໃຫ້ຄົນເພີ້ມເຕີມໃສ່ພຣະຄຳຂອງພຣະເຈົ້າ(ຊຶ່ງອີງການເລົ່າເຣື່ອງເຈາະໃຈຈະບໍ່ເຮັດເຊັ່ນນັ້ນ) ບໍ່ພຽງແຕ່ທ່ໍນັ້ນ, ຄົນທັ້ງຫລາຍຈະສລູບເອົາວ່າ ເຂົາເຈົ້າສາມາດເພີ້ມເຕີມແລະຕັດອອກໄດ້ຕາມໃຈເມື່ອເຂົາເຈົ້າເລົ່າເຣື່ອງ.

ແທ້ຈິງແລ້ວ, ທ່ານສາມາດບອກການເພີ້ມເຕີມເສີມແຕ່ງນີ້ດ້ວຍຄວາມຖ່ອມສຸພາບ. ພຽງແຕ່ສິ່ງຮອຍຍິ້ມແລະເວົ້າດ້ວຍຄວາມຈິງໃຈວ່າ, "ທ່ານມີຄວາມຮ້ອນຮົນໃຈດີ ທ່ານໄດ້ເອົາສິ່ງອື່ນມາເພີ້ມເຕີມ ຊຶ່ງບໍ່ໄດ້ຢູ່ໃນເຣື່ອງ! ແຕ່ພວກເຮົາຈະເລົ່າຕາມທີ່ຢູ່ໃນເຣື່ອງເທົ່ານັ້ນ."

ສິ່ງທີ່ສຳຄັນທີ່ສຸດ, ບໍ່ວ່າຜູ້ອາສາສມັກຈະເລົ່າເຣື່ອງໄດ້ດີ ຫລືບໍ່ໄດ້ດີເທົ່າໃດ ຈື່ໄວ້ວ່າທ່ານຕ້ອງຫາບາງສິ່ງ ເຮັດບາງສິ່ງຮ່ວມກັບຜູ້ອາສາສມັກນັ້ນ.

ການທີ່ມີຜູ້ອາສາສມັກເພື່ອເລົ່າເຣື່ອງລຶ້ມຄືນ ບໍ່ແມ່ນບ່ອນທີ່ "ການເລົ່າເຣື່ອງເຈາະໃຈ" ໃຫ້ຜູ້ເຂົ້າຮ່ວມໄດ້ຮຽນເລົ່າເຣື່ອງໄດ້ດີ ເພື່ອຈະເລົ່າເຣື່ອງໄດ້ຢ່າງຖືກຕ້ອງ. ພວກເຮົາບໍ່ຂໍແນະນຳໃຫ້ມີຜູ້ອາສາສມັກເລົ່າເຣື່ອງຫລາຍຄົນ ເລົ່າຕໍ່ເນື່ອງກັນເພື່ອໃຊ້ເປັນວິທີຮຽນເລົ່າເຣື່ອງ ເພາະວ່າບັນດາຜູ້ຟັງໄດ້ຍິນເຣື່ອງພຽງແຕ່ເທື່ອດຽວ ຈຶ່ງເຫັນວ່າຜູ້ອາສາສມັກຄົນທຳອິດກໍໄດ້ເລົ່າຜິດຢູ່ແລ້ວແລະບໍ່ສົມບູນ. ດັ່ງນັ້ນເມື່ອມີຜູ້ອາສາສມັກອີກຫລາຍຄົນເລົ່າເຣື່ອງລຶ້ມອີກກໍຍິ່ງຈະຜິດພາດຫລາຍ ແລະຜູ້ຟັງກໍຈະຈື່ຈຳໄດ້ແຕ່ບ່ອນທີ່ຜິດພາດນັ້ນ.

ຖ້າທ່ານຢາກແກ້ໄຂຈຸດອ່ອນດ້ວຍວິທີໃຫ້ມີຜູ້ອາສາສມັກຫລາຍຄົນເລົ່າເຣື່ອງລຶ້ມຄືນຢ່າງຕໍ່ເນື່ອງກັນ ແລະຕຳໜິແກ້ໄຂຕໍ່ໜ້າບັນດາຜູ້ຟັງ ກໍຈະເຮັດໃຫ້ສູນເສັ້ງເປົ້າໝາຍໃນການສ້າງຄົນໃຫ້ມີຄວາມໝັ້ນໃຈ ຈະມີແຕ່ຄົນທີ່ໃຈກ້າແທ້ໆ

ເທົ່ານັ້ນທີ່ຢາກຈະລອງເປັນຜູ້ອາສາສມັກ ສ່ວນຄົນອື່ນໆ ກໍຈະນັ່ງຫົດຢູ່ບ່ໍກ້າທີ່ຈະຕອບສນອງເພາະຢ້ານວ່າຈະໄດ້ຮັບ ຄວາມອັບອາຍຕ່ໍໜ້າຝູງຊົນ.

ເຖິງແມ່ນຜູ້ເລົ່າເຣື່ອງສາມາດທີ່ຈະເລົ່າເຣື່ອງລົ້ມຄືນໄດ້ຢ່າງຖືກຕ້ອງ, ພວກເຮົາຈະບ່ໍແນະນໍາໃຫ້ສອນເລົ່າເຣື່ອງພຣະ ຄັມພີແກ່ຄົນອື່ນດ້ວຍການໃຫ້ຜູ້ເລົ່າເຣື່ອງ ເລົ່າເຣື່ອງເກົ່າເລົ່າແລ້ວເລົ່າອີກ. ເຖິງແມ່ນການເຮັດເຊ່ັນນັ້ນຈະເກີດຜົນ ມັນອາດຈະບ່ໍແມ່ນທາງທີ່ຕື່ນເຕ້ັນ ແລະຖືກຕ້ອງໃນການຮຽນເລົ່າເຣື່ອງ. ການຮຽນດ້ວຍການທ່ອງຈໍາດ້ວຍການລົ້ມ ຄືນເທື່ອແລ້ວເທື່ອເລົ່າຈະບ່ໍຕື່ນເຕ້ັນແລະຈະເກີດຄວາມເບ່ືອໜ່າຍ.

ຈຸດປະສົງຂອງພວກເຮົາໃນຂະບວນການເລົ່າເຣື່ອງເຈາະໃຈ ບ່ໍແມ່ນການສອນເຣື່ອງຢ່າງຄົບສົມບູນແກ່ຄົນທັງຫລາຍ ແຕ່ຄວາມສໍາຄັນນັ້ນແມ່ນ ພວກເຮົາຢາກໃຫ້ຄົນທັງຫລາຍໄດ້ຮຽນເຣື່ອງໄດ້ດີເພ່ືອຈະເຂ້ົາໃຈໃນເຣື່ອງນັ້ນໆ, ສາມາດ ແລກປ່ຽນຄວາມຄິດເຫັນ, ແລະນໍາໄປໃຊ້ໃນຊີວິດຂອງຕົນຕາມທ່ີໄດ້ຄົ້ນພົບຢູ່ໃນເຣື່ອງ.

ຫລັງຈາກທ່ີພວກເຮົາໄດ້ເຮັດຕາມແຕ່ລະຂ້ັນຕອນໃນການເລົ່າເຣື່ອງເຈາະໃຈ ແລະໄດ້ແລກປ່ຽນຄວາມຄິດເຫັນໃນ ເຣື່ອງຢ່າງຄົບຖ້ວນແລ້ວ ກໍມີເວລາໃນການເພ້ີມເຕ້ີມອີກທ່ີພວກເຮົາສາມາດເຮັດໃຫ້ຄົນຮູ້ເຣື່ອງຢ່າງຖືກຕ້ອງ ຊ່ຶງພວກເຮົາ ເອ້ີນວ່າ "ເພ້ີມຄວາມຄິດທ່ີສ້າງສັນ" ລາຍລະອຽດເພ້ີມເຕ້ີມຈະເຫັນໃນຕອນທ້າຍຂອງບົດນ້ີ.

ຂະບວນການເລົ່າເຣື່ອງເຈາະໃຈຈະແກ້ໄຂການທ້າທາຍໃນການເລົ່າເຣື່ອງຢ່າງທັມມະຊາດໃນສອງຂ້ັນຕອນຕ່ໍໄປໃນກ ານເລົ່າເຣື່ອງ. ການນໍາຕາມເຣື່ອງແມ່ນການເລົ່າເຣື່ອງລົ້ມຄືນອີກທ່ີຕ່ໍຈາກອາສາສມັກເລົ່າເຣື່ອງຊ່ຶງຈະຊ່ວຍໃຫ້ບັນ ດາຜູ້ຟັງຈ່ືເຣື່ອງໄດ້. ຕ່ໍຈາກນັ້ນ, ເມ່ືອຜູ້ເລົ່າເຣື່ອງຕ້ັງຄໍາຖາມຕອບຄົ້ນຫາຂຸມຊັບໃນເຣື່ອງ ລາວຈະວາງຄໍາຖາມໂດຍ ການເວ້ົາເຖິງແຕ່ລະຕອນໃນເຣື່ອງທ່ີລາວຢາກຈະຄົ້ນຫາຂຸມຊັບ. ການກະທໍາແບບນ້ີ ບັນດາຜູ້ຟັງຈະໄດ້ຍິນເຣື່ອງ ເປັນຕອນໆ ຕ່ໍກັນໄປເປັນລັບດັບ ດ່ັງນັ້ນຈ່ຶງເປັນການເນ້ັນໃຫ້ເຫັນສ່ວນປະກອບຕ່າງໆ ທ່ີຢູ່ໃນເຣື່ອງ.

ສ່ວນຫລາຍ ເມ່ືອພວກເຮົາໄປສະຖານທ່ີໃໝ່ບ່ອນໃດບ່ອນນ່ຶງໃນໂລກເພ່ືອເປັນຜູ້ນໍາໃນການຝຶກອົບຮົມ ຜູ້ນໍາທ່ີຢູ່ໃນ ທ້ອງຖ່ິນນັ້ນຈະຢູ່ຄຽງຂ້າງພວກເຮົາ ເຂົາເຈ້ົາຈະບອກພວກເຮົາທາງສ່ວນຕົວວ່າ, "ພວກເຮົາບ່ໍຢາກໃຫ້ທ່ານເສ່ັງໃຈ ເພາະວ່າຄົນເຫລ່ົານ້ີຈະບ່ໍຕອບຄໍາຖາມ" ເມ່ືອສ່ິງນ້ີເກີດຂ້ຶນ ພວກເຮົາກໍຂອບໃຈຜູ້ນໍາເຫລ່ົານັ້ນແລະຕອບເຂົາເຈ້ົາວ່າ, "ຂອບໃຈ, ໃຫ້ພວກເຮົາຖ້າເບ່ິງນໍາກັນວ່າຈະເປັນແນວໃດ."

ໃນທຸກໆ ກໍຣະນ ີ ແລະໃນທຸກໆ ບ່ອນ (ຈະເຫັນຜູ້ນໍາທ້ອງຖ່ິນເກີດຄວາມປລາດໃຈ) ເພາະບັນດາຜູ້ຟັງໄດ້ຕອບຄໍາ ຖາມແລະມີສ່ວນຮ່ວມເຮັດໃຫ້ການໂອ້ລົມ ການແລກປ່ຽນຄວາມຄິດເຫັນມີຄວາມໝາຍ. ຄວາມຕ້ັງໃຈຂອງເຂົາເຈ້ົາ ໃນການຕອບສນອງກໍຄ່ອຍໆ ເປັນໄປແລະເປັນການໝ້ັນໃຈຕ່ໍຂະບວນການເລົ່າເຣື່ອງເຈາະໃຈ.

ບາງຄົນໄດ້ໃຊ້ເວລາດົນກວ່າຄົນອື່ນໆ ທ່ີຈະພັດທະນາຄວາມທ້າທານທ່ີຕອບຄໍາຖາມແບບດ້ັງໆ ໄດ້. ເຂົາເຈ້ົາອາດ ຈະເຄ່ີຍໄດ້ຮຽນບ່ໍໃຫ້ເວ້ົາດ້ັງເວລາຕອບຄໍາຖາມຕາມການສອນຂອງຄຣິສຕຽນ ແລະຫລາຍຄົນກໍຢ້ານວ່າຕອບບ່ໍຖືກ ໃນຖ້າມກາງຄົນທັງຫລາຍ. ຫລາຍຄົນຍ້ັງບ່ໍເຊ່ືອວ່າຕົນເອງບ່ໍມີຄວາມຄິດດ້ານຈ ິດວ ິນຍານພຽງພໍທ່ີຈະຕອບຄໍາຖາມ. ແທ້ຈ ິງແລ້ວ, ພວກເຮົາໄດ້ເຫັນຫລາຍຮູບແບບໃນສະພາບການທ່ີຜ່ານມານັ້ນ ຊ່ຶງຄົນສ່ວນຫລາຍບ່ໍພ້ອມທ່ີຈະໃຊ້

ຄວາມຄິດແບບເລິກໆ ເພື່ອພິຈາຣະນາແລະອອກຄວາມຄິດເຫັນຈາກຄວາມຄິດໃໝ່ໆ. ພວກເຮົາຢາກຈະເຫັນ ຄວາມຈຳກັດທີ່ກີດກັ້ນບໍ່ໃຫ້ກະທຳໃນສິ່ງເຫລົ່ານັ້ນ.

ຕົວຢ່າງຄວາມຈຳກັດທີ່ບໍ່ໄດ້ກະທຳ

ໃນຕອນສຸດທ້າຍໃນມື້ທຳອິດທີ່ໄດ້ສຶກສາການເລົ່າເຣື່ອງເຈາະໃຈ, ຊາຍທີ່ມີການສຶກສາຄົນນຶ່ງອາຍຸໄດ້ 70 ປີແລ້ວ ໄດ້ເວົ້າວ່າ, "ຂ້ອຍຕ້ອງການສິ່ງນີ້ໄດ້ 40 ປີຜ່ານມາແລ້ວ ພວກເຮົາຄົນຈີນບໍ່ເຄີຍໄດ້ອອກຄວາມຄິດເຫັນ ພວກເຮົາ ຖືກສອນໃຫ້ເຮັດແລະໃຫ້ເຊື່ອເທົ່ານັ້ນ, ບົດຮຽນນີ້ດີທີ່ສຸດ ແລະເປັນເທື່ອທຳອິດໃນຊີວິດທີ່ພວກເຮົາໄດ້ຄົ້ນພົບຂຸມ ຊັບດ້ວຍຕົນເອງ."

ໝູ່ບ້ານແຫ່ງນຶ່ງໃນປະເທດເນປານທີ່ບໍ່ມີການສຶກສາ ເຂົາເຈົ້າໄດ້ໃຊ້ເວລາບຶດນຶ່ງຈຶ່ງຕອບຄຳຖາມໄດ້ດ້ວຍສຽງດັງໃນການ ຝຶກອົບຮົມ. ເຂົາເຈົ້າເລີ້ມອຸ່ນໃຈຂຶ້ນເມື່ອເຫັນວ່າຄຳຕອບຂອງເຂົາເຈົ້າຖືກຕ້ອງ ຕໍ່ຈາກນັ້ນບໍ່ດົນທຸກຄົນມີສ່ວນຮ່ວມ ໃນການອອກຄວາມຄິດເຫັນຢ່າງມີຊີວິດຊີວາ. ຄົນກີກໜັງສືຄົນນຶ່ງເວົ້າວ່າ, "ຂ້າພະເຈົ້າຫາກໍຮູ້ວ່າພຣະເຈົ້າໄດ້ເວົ້ານຳ ຄົນທີ່ອ່ານບໍ່ໄດ້ ຂຽນບໍ່ເປັນເໝືອນກັນ."

ຄຣູສອນເລົ່າເຣື່ອງເຈາະໃຈຄົນນຶ່ງທີ່ເປັນຄົນໄທ ໃນຂະນະທີ່ມີການຝຶກອົບຮົມໃນໝູ່ບ້ານນຶ່ງໃນປະເທດໄທໄດ້ເລົ່າ ວ່າ, "ທຳອິດບັນດາພວກຜູ້ຍິງບໍ່ຕອບຄຳຖາມໃດໆ ທັງສິ້ນ. ໄດ້ໃຊ້ເວລາຫລາຍວັນພວກຜູ້ຍິງເຫລົ່ານັ້ນຈຶ່ງຮູ້ວ່າເຂົາ ເຈົ້າໄດ້ຮັບອະນຸຍາດໃຫ້ປາກເວົ້າໄດ້ ແລະພົບວ່າການປາກເວົ້າຂອງເຂົາເຈົ້າກໍມີຄຸນຄ່າ. ຕໍ່ຈາກນັ້ນມາ ພວກເຮົາບໍ່ ສາມາດຈະຢຸດຢັ້ງເຂົາເຈົ້າໄດ້ໃນການຕອບຄຳຖາມຕ່າງໆ.

ຄັ້ງທີສາມ-ນຳຕາມເຣື່ອງ:

ຄັ້ງທຳອິດທ່ານເປັນຜູ້ເລົ່າເຣື່ອງ ແລະຕໍ່ມາຜູ້ອາສາສມັກເປັນຜູ້ເລົ່າເຣື່ອງລົ້ມຄືນ. ຕອນນີ້ ແມ່ນການເລົ່າເຣື່ອງຄັ້ງທີ ສາມ ທ່ານຂໍໃຫ້ບັນດາຜູ້ຟັງເລົ່າເຣື່ອງຮ່ວມກັບທ່ານໄປຈົນສຸດອີກເທື່ອນຶ່ງ.

ນີ້ແມ່ນການເລົ່າເຣື່ອງອີກແບບນຶ່ງທີ່ໃຊ້ຄວາມລັງເລໃຈເປັນຊ່ວງໆ ໄປ. ທ່ານທີ່ເປັນຜູ້ເລົ່າເຣື່ອງ ເຮັດເໝືອນກັບວ່າ ທ່ານຕ້ອງການໃຫ້ຜູ້ຟັງຊ່ວຍທ່ານໃຫ້ຄຶດໄດ້ ໃຫ້ຄຶດເຫັນບາງຢ່າງທີ່ຢູ່ໃນເຣື່ອງ. ທ່ານບໍ່ຢາກໃຫ້ການກະທຳແບບນີ້ ເປັນເໝືອນການສອບເສັງເພື່ອທົດສອບຄວາມສາມາດຂອງຜູ້ຟັງ ແຕ່ໃນຖານະທີ່ທ່ານເປັນຜູ້ເລົ່າເຣື່ອງໃຫ້ທ່ານຄາດ ຫວັງຈາກຜູ້ຟັງວ່າບາງຄົນຈະເວົ້າອອກມາສອງຫລືສາມຄຳ ຫລືເປັນປໂຍກ. ຈື່ໄວ້ວ່າ ເທື່ອນີ້ເປັນເທື່ອທີສອງທີ່ບັນດາ ຜູ້ຟັງໄດ້ຍິນເຣື່ອງທີ່ເລົ່າໄດ້ຢ່າງຖືກຕ້ອງ. ເພາະວ່າເທື່ອນີ້ບໍ່ແມ່ນການເລົ່າລົ້ມຄືນຕອນໃດຕອນນຶ່ງຂອງເຣື່ອງແບບ ທັມມະດາ ດັ່ງນັ້ນຈຶ່ງເຫັນວ່າສຳຄັນຫລາຍທີ່ທ່ານຕ້ອງຊ່ວຍທຸກໆ ຄົນ ເລົ່າເຣື່ອງລົ້ມຄືນຢ່າງແມ່ນຢຳ, ຢ່າງຖືກຕ້ອງ.

ເລີ້ມເລົ່າເຣື່ອງອີກເໝືອນກັບທີ່ທ່ານໄດ້ເລົ່າມານັ້ນ ເຮັດເປັນເໝືອນລັງເລໃຈ ເຊີນໃຫ້ບັນດາຜູ້ຟັງເພີ້ມເຕີມໃສ່ບ່ອນທີ່ ທ່ານຍະວ່າງໄວ້, ຕອບຄຳຖາມທີ່ທ່ານຖາມ, ແກ້ໃຫ້ຖືກໃນຖ້ອຍຄຳທີ່ທ່ານທຳທ່າເວົ້າຜິດ(ທຳທ່າເວົ້າຜິດ ຈົ່ງເຮັດພຽງ ເທື່ອດຽວເທົ່ານັ້ນ)

ຍົກຕົວຢ່າງ, ທ່ານອາດຈະເວົ້າວ່າ, "ພຣະເຢຊູໄດ້ເຂົ້າໄປເມືອງນຶ່ງ ພຣະອົງໄປຄົນດຽວຫລືວ່າ...? ແລ້ວໃຫ້ທ່ານລົງເລແລະສັນຍານມືໃຫ້ຜູ້ຟັງເຫັນວ່າທ່ານຕ້ອງການຊ່ອຍເຫລືອ ລໍຖ້າໃຫ້ຜູ້ຟັງເພີ້ມເຕີມໃສ່ບ່ອນທີ່ຍະວ່າງໄວ້. ຫລັງຈາກທີ່ເຂົາເຈົ້າເວົ້າວ່າ, "ພວກສາວົກໄດ້ໄປກັບພຣະອົງ," ທ່ານກໍຕອບວ່າ "ແມ່ນແລ້ວ" ຫລື "ຖືກຕ້ອງ" ຈາກນັ້ນທ່ານກໍນຳຕາມເຣື່ອງຕໍ່ໄປຈົນສຸດເຣື່ອງໃນທຳນອງດຽວກັນນີ້. ສ່ວນຫລາຍບັນດາຜູ້ຟັງຈະບໍ່ຄ່ອຍຈື່ຊື່ຄົນແລະຈຳນວນສິ່ງຂອງໃນເຣື່ອງໄດ້ດີ. ເພື່ອໃຫ້ການນຳຕາມເຣື່ອງລາບລື້ນດີພວກເຮົາຈະບໍ່ຖາມຜູ້ຟັງເຖິງຊື່ຄົນ ແລະຈຳນວນສິ່ງຂອງ.

ການຕັດສິນໃຈວ່າເມື່ອໃດຈະຖາມຊື່ຄົນນັ້ນຕ້ອງໃຊ້ສະຕິປັນຍາໜ້ອຍນຶ່ງ. ໃນເຣື່ອງສັ້ນ ຊື່ຂອງມາທາ, ມາຣີອາ ແລະພຣະເຢຊູໄດ້ເວົ້າເຖິງເລື້ອຍໆ ດັ່ງນັ້ນບັນດາຜູ້ຟັງສາມາດຈື່ຊື່ເຫລົ່ານີ້ໄດ້ດີ. ຈົ່ງໃຊ້ຄຳຖາມແບບງ່າຍໆ ເພື່ອຈະຊ່ອຍໃຫ້ຜູ້ຟັງເກີດມີຄວາມກ້າຫານ ແລ້ວເຂົາເຈົ້າຈະເລີ້ມຕອບສນອງຢ່າງງ່າຍດາຍຕໍ່ຄຳຖາມຂອງທ່ານ.

ຖາມວ່າ, "ມາທາໄດ້ເຊີນໃຜມາເຮັດຫຍັງ?" ຫລັງຈາກເຂົາເຈົ້າຕອບວ່າ, "ມາທາໄດ້ເຊີນພຣະເຢຊູເຂົ້າມາໃນເຮືອນຂອງລາວ." ທ່ານກໍຕອບວ່າ, "ຖືກແລ້ວ."

ບາງຄັ້ງຜູ້ເລົ່າເຣື່ອງຈະຢຸດແລ້ວໃຫ້ບັນດາຜູ້ຟັງເລົ່າຕອນຕໍ່ໄປຂອງເຣື່ອງ ໂດຍກ່າວວ່າດັ່ງນີ້, "ມາທາມີນ້ອງສາວຄົນນຶ່ງລາວຊື່ຫຍັງ ແລະລາວກຳລັງເຮັດຫຍັງ?" ບັນດາຜູ້ຟັງຈະຕອບວ່າ, "ມາທາມີນ້ອງສາວຊື່ມາຣີອາ ແລະໄດ້ນັ່ງຢູ່ໃກ້ພຣະບາດພຣະເຢຊູ ຟັງຖ້ອຍຄຳຂອງພຣະອົງ." ທ່ານກໍເວົ້າວ່າ, "ແມ່ນແລ້ວ."

ທ່ານເວົ້າຕໍ່ໄປວ່າ, "ເຮົາເຫັນວ່າມາທາມີບັນຫາ ຫລືມີບາງສິ່ງທີ່ລາວຄິດວ່າເປັນບັນຫາ ສິ່ງນັ້ນແມ່ນຫຍັງ?"

ເພື່ອໃຫ້ບັນດາຜູ້ຟັງຊ່ອຍໃນການນຳຕາມເຣື່ອງ ທ່ານຕ້ອງເຮັດເປັນລັງເລ ຫລືທຳທ່າເໝືອນກັບທ່ານຈື່ຕອນຕໍ່ໄປຂອງເຣື່ອງບໍ່ໄດ້ ດັ່ງນັ້ນຈົ່ງໃຊ້ວິທີໃຫ້ຜູ້ຟັງ ເຕີມໃສ່ຊ່ອງວ່າງ, ເລົ່າຕອນຕໍ່ໄປ ເພື່ອໜູນໃຈໃຫ້ບັນດາຜູ້ຟັງຈື່ເຣື່ອງໄດ້.

ຖ້າຫາກເວລານີ້ ຫລືເວລາໃດເວລານຶ່ງ ບັນດາຜູ້ຟັງບໍ່ຕອບສນອງຫລັງຈາກທ່ານໄດ້ລົງເລເພື່ອໃຫ້ເຂົາເຈົ້າເຕີມບາງບ່ອນໃສ່ເຣື່ອງ ໃຫ້ທ່ານຕອບເອງໂດຍເວົ້າຊ້າໆເພື່ອໃຫ້ໂອກາດແກ່ບັນດາຜູ້ຟັງຈື່ເຣື່ອງໄດ້ແລະໃຫ້ເຂົາເຈົ້າເຕີມບາງບ່ອນໃສ່ເຣື່ອງຕໍ່ໆ ໄປຈົນຈົບ.

ໂດຍການບອກຄຳໄຂ(ຖ້ອຍຄຳທີ່ພາໃຫ້ຄິດເຫັນສິ່ງທີ່ກ່ຽວຂ້ອງກັນຢູ່ໃນເຣື່ອງ)ໃສ່ຄຳຖາມຂອງທ່ານ ກໍເປັນການເຕືອນໃຫ້ຜູ້ຟັງຮູ້ຕອນຕໍ່ໄປຂອງເຣື່ອງ. ເ ຫັນວ່າເປັນສິ່ງສຳຄັນທີ່ຄຳຖາມຂອງທ່ານມີຄຳໄຂເຫລົ່ານັ້ນ ເພາະວ່າຄຳເຫລົ່ານັ້ນຈະຊ່ອຍໃຫ້ບັນດາຜູ້ຟັງຕອບຄຳຖາມໃນຕອນຕໍ່ໄປຂອງເຣື່ອງໂດຍທີ່ບໍ່ຕ້ອງຂ້າມເນື້ອເຣື່ອງໃດໆ.

ປາສຈາກຄຳໄຂ: ຍົກຕົວຢ່າງເຊັ່ນ ໃນຂະນະທີ່ທ່ານເລົ່າເຣື່ອງລືມເຣື່ອງຄືນ ຖ້າຫາກທ່ານເວົ້າວ່າ, "ແລະມາທາໄດ້ເວົ້າວ່າ?" ຜູ້ຟັງອາດຈະຕອບໄດ້ຢ່າງຖືກຕ້ອງວ່າ, "ມາທາເວົ້າວ່າ, ບອກມາຣີອາມາຊ່ອຍຂ້ານ້ອຍແດ່." ດັ່ງນັ້ນຈຶ່ງເຫັນວ່າມາທາໄດ້ເວົ້າເຊັ່ນນັ້ນແທ້, "ບອກມາຣີອາມາຊ່ອຍຂ້ານ້ອຍແດ່," ດັ່ງນັ້ນຜູ້ຟັງໄດ້ຕອບຢ່າງຖືກຕ້ອງ. ແຕ່ວ່າກ່ອນມາທາຈະເວົ້າວ່າ, "ບອກມາຣີອາມາຊ່ອຍຂ້ານ້ອຍແດ່," ມາທາໄດ້ເວົ້າວ່າ, "ນາຍເຈົ້າເອີຍ, ທ່ານບໍ່ສົນໃຈຫລືທີ່

ມາຣີອາປ່ອຍໃຫ້ຂ້ານ້ອຍເຮັດວຽກຄົນດຽວ?" ດັ່ງນັ້ນຖ້າທ່ານຖາມບໍ່ເຈາະຈີ ກໍຈະເຮັດໃຫ້ບັນດາຜູ້ຟັງຂ້າມໄປຕອນໜ້າຂອງເຣື່ອງ. *(ໝາຍເຫດ: Keyword = ຄຳທີ່ເປັນກຸນແຈໄຂເພື່ອເປີດທາງ)*

ໃຊ້ຄຳໄຂ: ເພື່ອຊ່ອຍໃຫ້ບັນດາຜູ້ຟັງຕອບຄຳຖາມທີ່ທ່ານຕ້ອງການ ທ່ານສາມາດຖາມຄຳຖາມທີ່ເຕືອນຜູ້ຟັງໃຫ້ຄິດເຫັນບາງຢ່າງທີ່ຢູ່ໃນເຣື່ອງ. ຍົກຕົວຢ່າງເຊັ່ນ, "ມາທາໄດ້ຖາມພຣະເຢຊູວ່າແນວໃດ?" ດ້ວຍການໃຊ້ຄຳວ່າ "ຖາມ" ໃນຄຳຖາມຂອງທ່ານ ທ່ານກໍໄດ້ນຳພາບັນດາຜູ້ຟັງໃຫ້ຄິດເຖິງວ່າມາທາໄດ້ຖາມພຣະເຢຊູວ່າແນວໃດ.

ເພື່ອຊ່ອຍບັນດາຜູ້ຟັງໃຫ້ໄດ້ພົບກັບຄຳຕອບຫລາຍຂຶ້ນ ເພື່ອເປັນການໜູນໃຈເຂົາເຈົ້າໃຫ້ເວົ້າອອກຢ່າງສະບາຍໃຈ, ຈົ່ງພຍາຍາຕອບສນອງດ້ວຍທາງບວກ ເຖິງແມ່ນຄຳຕອບຂອງຄົນນັ້ນບໍ່ຖືກຕ້ອງຢ່າງແທ້ຈີງ.
ຍົກຕົວຢ່າງ, ທົດລອງໃຊ້ຄຳຖາມນີ້. "ບັດນີ້ ມາທາໄດ້ເອີ້ນພຣະເຢຊູວ່າແນວໃດ; ຕຳແໜ່ງໃດທີ່ນາງໃຊ້ກັບພຣະອົງ?" ເຂົາເຈົ້າອາດຈະຕອບວ່າ "ອາຈານ" ຫລື "ພຣະຜູ້ເປັນເຈົ້າ/ນາຍ." ຖ້າເຂົາເຈົ້າຕອບວ່າ "ພຣະຜູ້ເປັນເຈົ້າ/ນາຍ" ທ່ານກໍເວົ້າວ່າຖືກຕ້ອງ ແຕ່ຖ້າເຂົາເຈົ້າຕອບວ່າ "ອາຈານ" ທ່ານກໍເວົ້າວ່າແມ່ນແລ້ວ. ມາທາໄດ້ເອີ້ນພຣະເຢຊູວ່າ "ພຣະຜູ້ເປັນເຈົ້າ/ນາຍ." ເຖິງແມ່ນບັນດາຜູ້ຟັງໄດ້ຕອບວ່າ "ອາຈານ" ຊຶ່ງບໍ່ຖືກຕ້ອງກັບທີ່ມາທາເວົ້າ ແຕ່ຄົນຕອບກໍມີຄວາມຄິດທີ່ຖືກ ທ່ານກໍໜູນໃຈລາວໃນການຕອບສນອງນັ້ນ ແຕ່ໃນເວລາດຽວກັນຈົ່ງບອກຄຳຕອບທີ່ຖືກຕ້ອງດ້ວຍຄວາມສຸພາບເພື່ອໃຫ້ເຣື່ອງຢູ່ໃນຄວາມຖືກຕ້ອງ.

ໃນຂະນະທີ່ທ່ານນຳຕາມເຣື່ອງຈາກຕອນຕົ້ນໄປຈົນຈົບ ທ່ານສາມາດຕັ້ງຄຳຖາມເຊັ່ນ; ໃຜເປັນຜູ້ຕ້ອນຮັບ(ເຊີນ)ພຣະເຢຊູເຂົ້າມາໃນເຮືອນ? ໃນເຣື່ອງນີ້ມາຣີອາກຳລັງເຮັດຫຍັງ? ມາທາຫຍຸ້ງຢູ່ກັບວຽກງານແນວໃດ? ແລ້ວກໍມີບັນຫາເກີດຂຶ້ນ ອະທິບາຍເຖິງບັນຫານັ້ນ. ເມື່ອມາທາເວົ້າກັບພຣະເຢຊູ ນາງເອີ້ນພຣະອົງວ່າແນວໃດ? ແລ້ວມາທາໄດ້ຖາມພຣະເຢຊູວ່າແນວໃດ? ມາທາຢາກແກ້ໄຂບັນຫາແນວໃດ? ແມ່ນຫຍັງແດ່ທີ່ພຣະເຢຊູໄດ້ເວົ້າກັບມາທາວ່າລາວເຮັດຫລາຍຢ່າງໂພດ? ດັ່ງນັ້ນພຣະເຢຊູຈຶ່ງເວົ້າວ່າ, "ມາຣີອາ ຈົ່ງອອກໄປຈາກຫ້ອງໄວໆ!" ແມ່ນບໍ? ບໍ່! ທ່ານຕອບຖືກແລ້ວ, ພຣະເຢຊູບໍ່ໄດ້ເວົ້າແນວນັ້ນ. ຄັນຊັ້ນ ພຣະເຢຊູເວົ້າແນວໃດກ່ຽວກັບມາຣີອາ ແລະການເລືອກຂອງນາງ?

ຈົ່ງສັງເກດວ່າ ຂ້າງເທິງນີ້ພວກເຮົາໄດ້ແນະນຳເຖິງການເວົ້າບາງສິ່ງທີ່ຜິດຢ່າງເຫັນໄດ້ແຈ້ງ. ຖ້າທ່ານເວົ້າບາງສິ່ງທີ່ຜິດແທ້ໆ ໂດຍຄິດບໍ່ເຖິງວ່າໄດ້ເວົ້າຜິດ ຜູ້ຟັງຈະຊ່ອຍທ່ານແລະແກ້ໄຂເຣື່ອງໃຫ້ຖືກຕ້ອງ. ການທຳທ່າເວົ້າຜິດເປັນການຊ່ອຍຜູ້ຟັງອີກວິທີນຶ່ງເພື່ອໃຫ້ເຂົາເຈົ້າຈີ່ເຣື່ອງ ເຮັດໃຫ້ຜູ້ຟັງປລາດໃຈແລະເຮັດໃຫ້ເຂົາເຈົ້າມີສ່ວນຮ່ວມ ແຕ່ຢ່າໃຊ້ເລື້ອຍ ອາດຈະໃຊ້ພຽງເທື່ອດຽວກໍພໍ ເວລາທ່ານນຳຕາມເຣື່ອງ.

ໃນຊ່ວງເວລາເລົ່າເຣື່ອງເທື່ອທີສາມນີ້, ເຣື່ອງກໍຈະຊາບຊຶມເຂົ້າໄປສູ່ຈິດໃຈຂອງບັນດາຜູ້ຟັງ. ບໍ່ພຽງແຕ່ເທົ່ານັ້ນ, ຄຳຖາມທີ່ງ່າຍ(ຊຶ່ງເປັນການລົ້ມເຣື່ອງຄືນອີກ) ກໍຈະໜູນໃຈໃຫ້ບັນດາຜູ້ຟັງຕອບຄຳຖາມຂອງຜູ້ເລົ່າເຣື່ອງດ້ວຍສຽງດັງ. ດັ່ງທີ່ໄດ້ກ່າວມານັ້ນ ເມື່ອຜູ້ຟັງໄດ້ຕອບຄຳຖາມງ່າຍໆ ເຫລົ່ານີ້ ແລະເປັນການຢືນຢັນວ່າເຂົ້າເຈົ້າມີຄວາມໝັ້ນໃຈເພີ້ມຂຶ້ນອີກ ຄວາມໝັ້ນໃຈນີ້ແມ່ນຈຳເປັນແທ້ສຳລັບຜູ້ຟັງ ເພື່ອຈະໃຊ້ກັບສອງພາກຕໍ່ໄປໃນການເລົ່າເຣື່ອງເຈາະໃຈ ຊຶ່ງຈະພົບກັບຄວາມທ້າທາຍເພີ້ມຂຶ້ນອີກ. ຜ່ານການໂອ້ລົມສົນທະນາ ບັນດາຜູ້ຟັງຕ້ອງໄດ້ຄົ້ນຫາຂຸມຊັບໃນເຣື່ອງ ແລະບອກຂຸມຊັບທີ່ເຂົາເຈົ້າໄດ້ພົບດ້ວຍການເວົ້າສຽງດັງ.

ທ່ານພ້ອມແລ້ວຫລືຍັງ? ໃຫ້ພວກເຮົາທົດລອງຄວາມສາມາດຂອງພວກເຮົາໃນການເລົ່າເຣື່ອງຕໍ່ໄປ

ການນຳສເນີ ຂັ້ນທີສອງ:
ການຄົ້ນຫາຊຸມຊັບດ້ວຍການສົນທະນາ

ການຄົ້ນຫາຊຸມຊັບຝ່າຍວິນຍານ. ທ່ານຈະໄດ້ພົບຊຸມຊັບຈຳນວນຫລາຍເມື່ອທ່ານຄົ້ນຫາຊຸມຊັບຝ່າຍວິນຍານແລະການນຳໃຊ້ໃນຊີວິດຝ່າຍວິນຍານ. ໃນການພົບຊຸມຊັບສາມາດທີ່ຈະນຳສເນີໄດ້ພຽງສ່ວນນຶ່ງ ຫລືທັງໝົດ, ໃນຂະນະທີ່ທ່ານສອນເຣື່ອງນີ້. ບໍ່ຕ້ອງສົງສັຍເລີຍວ່າຈະຕ້ອງໄດ້ພົບກັບຊຸມຊັບເພີ້ມອີກ ເມື່ອອົງພຣະວິນຍານບໍຣິສຸດຊົງເປີດເຜີຍໃຫ້ພວກເຮົາເຫັນ ບໍ່ວ່າຈະເປັນທາງເລິກແລະຄວາມອຸດົມສົມບູນຂອງພຣະຄຳຂອງພຣະເຈົ້າ.

ເມື່ອທ່ານເປັນຜູ້ເລົ່າເຣື່ອງ ຫລັງຈາກນຳຕາມເຣື່ອງແລ້ວ ທຳອິດທ່ານຕ້ອງເລົ່າພາກສ່ວນຂອງເຣື່ອງທີ່ທ່ານຈະນຳໄປສົນທະນາ. ຈົ່ງເວົ້າດັ່ງນີ້; "ດຽວນີ້ພວກເຮົາຢູ່ຕອນຕົ້ນຂອງເຣື່ອງ..." ແລະທ່ານກໍເລົ່າພາກສ່ວນນັ້ນທັງໝົດ. ຖ້າຫາກເຣື່ອງທີ່ມີຂໍ້ພຣະຄັມພີ 7 ຫາ 14 ຂໍ້ ກໍສາມາດແບ່ງອອກເປັນ 3 ຫາ 4 ຕອນ. ຈົ່ງແບ່ງເຣື່ອງເປັນຕອນບ່ອນທີ່ເຫັນວ່າເຣື່ອງໃນຕອນນັ້ນໄດ້ສຸດລົງ ຫລືຕ່າງກັນກັບຕອນຕໍ່ໄປ ທ່ານຈະເລົ່າແບບບ່ອອກທ່າທາງກໍໄດ້.

ການແບ່ງເຣື່ອງເປັນຕອນແລະເລົ່າແບບໃຊ້ທ່າທີທີ່ແຕກຕ່າງກັນໄປ ຜູ້ຟັງຈະບໍ່ສົ່ງເກດເຫັນວ່າທ່ານໄດ້ເລົ່າເຣື່ອງອີກເທື່ອນຶ່ງ ເຂົາເຈົ້າພຽງແຕ່ຮູ້ວ່າເຂົາເຈົ້າກຳລັງຟັງຕອນນັ້ນຂອງເຣື່ອງ ແລະເຂົາເຈົ້າກໍມີໂອກາດໄດ້ຟັງເລົ່າເຣື່ອງອີກເທື່ອນຶ່ງ ຊຶ່ງຈະຊ່ວຍເຂົາເຈົ້າຈື່ເຣື່ອງໄດ້ດີຂຶ້ນ.

ຕົວຢ່າງຄຳຖາມຕໍ່ໄປນີ້ຈະນຳໄປສູ່ຊຸມຊັບຫລາຍໆ ຊຸມທີ່ທ່ານໄດ້ພົບ ເໝືອນກັບຊຸມຊັບເຫລົ່ານັ້ນທີ່ໄດ້ພົບໃນເຣື່ອງມາທາແລະມາຣີອາທີ່ໄດ້ຝຶກອົບຮົມມາທົ່ວໂລກ. ຕໍ່ໄປໃຫ້ສັງເກດເບິ່ງເມື່ອເຮົາເລົ່າຕາມລຳດັບຂັ້ນຕອນຂອງເຣື່ອງສົນທະນາການຄົ້ນຫາຊຸມຊັບແຕ່ລະຕອນເພື່ອໃຫ້ລ່ຽນໄຫລໄປຕາມເຣື່ອງ.

[ຖ້ອຍຄຳທີ່ຕົວໜັງສືເນ້ັງໃນແຕ່ລະຂໍ້ຂອງການຄົ້ນຫາຊຸມຊັບຕໍ່ໄປນີ້ແມ່ນຄຳເວົ້າຂອງຜູ້ເລົ່າເຣື່ອງທີ່ອາດຈະຖາມບັນດາຜູ້ຟັງ. ຖ້ອຍຄຳທີ່ຕົວໜັງສືບໍ່ເນ້ັງອາດຈະເປັນຄຳຕອບຫລືຊຸມຊັບທີ່ບັນດາຜູ້ຟັງໄດ້ຄົ້ນພົບແລະເວົ້າອອກມາດ້ວຍສຽງດັງ ຫລືອາດຈະເປັນຄຳເວົ້າຂອງຜູ້ເລົ່າເຣື່ອງເພື່ອຢືນຢັນຄວາມເຂົ້າໃຈແຈ້ງຂອງບັນດາຜູ້ຟັງ.]

1. *ໃນເຣື່ອງນີ້, ເບິ່ງເໝືອນວ່າອົງພຣະເຢຊູເຫັນດີນຳການກະທຳຂອງມາຣີອາ, ແຕ່ຕຳໜິການກະທຳຂອງມາທາ, ແມ່ນຫລືບໍ່?* (ລໍຖ້າຟັງຄຳຕອບ)
   ໃນຕອນນີ້ຂ້ອຍກຳລັງມີຄວາມສັບສົນໃຈ ການມີນ້ຳໃຈຕ້ອນຮັບແຂກເປັນສິ່ງທີ່ດີບໍ່ແມ່ນບໍ່? (ລໍຖ້າຟັງຄຳຕອບ)
   ການຈັດຕຽມອາຫານຕ້ອນຮັບແຂກເປັນສິ່ງທີ່ດີຫລືບໍ່? (ລໍຖ້າຟັງຄຳຕອບ)
   ຄັນຊັ້ນ ສົງສັຍວ່າ ພຣະເຢຊູພໍໃຈການກະທຳຂອງມາຣີອາ ແລະບໍ່ໄດ້ຍ້ອງຍໍການກະທຳຂອງມາທາ.

2. *ຖ້າເຮົາເຫັນວ່າ ໃນເຣື່ອງນີ້ສອນວ່າ ການຮຽນພຣະຄັມພີສຳຄັນກວ່າການປຸງແຕ່ງອາຫານ ແລ້ວແມ່ນໃຜຈະເປັນຜູ້ຈັດຕຽມອາຫານເພື່ອພວກເຮົາ?* (ລໍຖ້າຟັງຄຳຕອບ) *ຖ້າເຮົາຫາກບອກໃຫ້ພັຣຍາໄປຕຽມອາຫານ ກໍຈະເຮັດໃຫ້ລາວບໍ່ໄດ້ຮຽນພຣະຄັມພີ ແລະຈະຕີຣາຄາວ່າລາວໄດ້ເຮັດສິ່ງທີ່ມີຄ່ານ້ອຍກວ່າແມ່ນບໍ່?* (ລໍຖ້າຟັງຄຳຕອບ)
   ຄັນຊັ້ນເປັນດ້ວຍເຫດໃດພຣະເຢຊູຈຶ່ງພໍໃຈມາຣີອາ ແທນທີ່ຈະພໍໃຈມາທາ ເຮົາຮູ້ວ່າພຣະເຢຊູເວົ້າແຕ່ຄວາມຈິງ

ສເມີ ແຕ່ໃນຕອນນີ້ພຣະອົງກຳລັງຊີ້ໃຫ້ພວກເຮົາເຫັນຄວາມຈິງອັນໃດ ໃຫ້ເຮົາສຳຣວດເບິ່ງອີກເທື່ອ.

3. ຍັງຈື່ໄດ້ຢູ່ບໍ່ວ່າ ມາທາເປັນຜູ້ເຊີນພຣະເຢຊູເຂົ້າມາໃນເຮືອນ ເຮົາເຫັນຫຍັງໃນເຣື່ອງນີ້ທີ່ບົ່ງບອກວ່າ ມາທາເຫັນພຣະເຢຊູເປັນແຂກທີ່ພິເສດ? (ລໍຖ້າຟັງຄຳຕອບ)
ໃນຕອນນີ້ຜູ້ຟັງອາດຈະຕອບວ່າ "ມາທາເປັນຜູ້ເຊີນພຣະເຢຊູ" ນາງໄດ້ເອີ້ນພຣະອົງວ່າ "ພຣະອົງເຈົ້າ" ສ່ວນມາຣີອາໄດ້ຟັງພຣະເຢຊູສັ່ງສອນ. ຜູ້ຟັງອາດຈະເວົ້າອີກວ່າພຣະເຢຊູມີພວກສາວົກຕິດຕາມມານຳຕອນທີ່ມາທາພົບກັບພຣະອົງ, ຈຶ່ງສະແດງວ່າພຣະເຢຊູຊົງເປັນ "ພຣະອາຈານ" ແລະທັງໝົດນີ້ກໍເປັນຄຳຕອບທີ່ຖືກຕ້ອງ.

4. ໃນເຣື່ອງນີ້ ມາຣີອານັ່ງໃກ້ພຣະບາດພຣະເຢຊູຟັງຖ້ອຍຄຳຂອງພຣະອົງ ການນັ່ງໃກ້ພຣະບາດມີຄວາມໝາຍຄືແນວໃດ? (ລໍຖ້າຟັງຄຳຕອບ)
ການນັ່ງໃກ້ພຣະບາດນັ້ນເປັນການກະທຳຂອງລູກສິດກັບອາຈານ ລູກສິດເປັນຜູ້ອຸທິດຖວາຍຕົນໃຫ້ແກ່ຜູ້ເປັນອາຈານ ໝາຍເຖິງຄວາມໃກ້ຊິດສນິດກັນ.

5. ມາທາເອີ້ນພຣະເຢຊູວ່າແນວໃດ? (ລໍຖ້າຟັງຄຳຕອບ) *"ພຣະອົງເຈົ້າເອີຍ" ມີຄວາມໝາຍວ່າແນວໃດ?* (ລໍຖ້າຟັງ ຄ□ຳຕອບ) *ໃນຕອນນີ້ກຳລັງຊີ້ບອກວ່າພຣະອົງເປັນຜູ້ສູງສົ່ງ . ແຕ່ຢາກໃຫ້ຮູ້ວ່າເວລາທີ່ມາທາເອີ້ນພຣະອົງວ່າ "ພຣະອົງເຈົ້າເອີຍ" ນັ້ນບໍ່ໄດ້ໝາຍຄວາມວ່ານາງຮູ້ຈັກວ່າພຣະເຢຊູຊົງເປັນພຣະເຈົ້າເທື່ອ, ໃນສາຍຕາຂອງມາທາ ເວລານັ້ນພຣະເຢຊູມີຖານະແນວໃດສຳລັບນາງ?* (ລໍຖ້າຟັງຄຳຕອບ)
ມາທາຮູ້ວ່າພຣະເຢຊູເປັນບຸກຄົນສຳຄັນ ເປັນຄົນທີ່ສູງກວ່ານາງ. ເຖິງແມ່ນມາທາຈະເອີ້ນພຣະເຢຊູວ່າ "ພຣະອົງເຈົ້າເອີຍ" ແຕ່ນາງກໍບໍ່ໄດ້ຟັງຖ້ອຍຄຳຂອງພຣະອົງໃນຂະນະທີ່ຢູ່ໃນເຮືອນຄົວ ທ່ານຄິດວ່າການກະທຳຂອງນາງເປັນແນວໃດ? (ລໍຖ້າຟັງຄຳຕອບ)
ການກະທຳແລະຄຳເວົ້າຂອງມາທາບໍ່ສອດຄ່ອງກັນແນວໃດ ທ່ານເຫັນຢູ່ຕອນໃດໃນເຣື່ອງນີ້? (ລໍຖ້າຟັງຄຳຕອບ)

6. ໃນເຣື່ອງນີ້ບອກວ່າ ມາທາມີພາຣະທີ່ຕ້ອງເຮັດໃນເຮືອນຄົວ ແລະເຮັດງານບົວລະບັດພຽງຄົນດຽວ ທ່ານພໍຈະບອກໄດ້ບໍ່ວ່ານາງໄດ້ຕຽມອາຫານໜ້ອຍຫລາຍປານໃດ ແລະການຕຽມອາຫານເທື່ອນີ້ນາງໄດ້ຮັບຄວາມຫຍຸ້ງຍາກຢ່າງໃດແດ່? (ລໍຖ້າຟັງຄຳຕອບ)
ມາທາໄດ້ຕຽມອາຫານແບບງ່າຍໆ ຫລືວ່າລາວຕ້ອງຕຽມອາຫານທີ່ດີຢ່າງຫລວງຫລາຍ? (ລໍຖ້າຟັງຄຳຕອບ)
ຄຳຖາມຍັງມີອີກວ່າ ຖ້າມາທາຮູ້ວ່າພຣະເຢຊູມີສິ່ງທີ່ມີຄ່າຈະໂອ້ລົມ ຈະສອນລາວກັບນ້ອງສາວ ເປັນດ້ວຍເຫດໃດມາທາຈຶ່ງເລືອກຕຽມອາຫານທີ່ຕ້ອງໃຊ້ເວລາຫລາຍ ນາງມີເຫດຜົນແນວໃດ? (ລໍຖ້າຟັງຄຳຕອບ)

7. ສິ່ງທີ່ມາທາຢາກໄດ້ຈາກພຣະເຢຊູແທ້ໆ ນັ້ນແມ່ນຫຍັງ? (ລໍຖ້າຟັງຄຳຕອບ) *ມາທາໄດ້ເວົ້າຫຍັງ? ໄດ້ເວົ້າກັບໃຜ?* (ລໍຖ້າຟັງຄຳຕອບ) *ຖ້ອຍຄຳທີ່ວ່າ "ທ່ານບໍ່ສົນໃຈບໍ?" ຖ້ອຍຄຳນີ້ໄດ້ບອກພວກເຮົາວ່າ ມາທາໄດ້ວາງໃຈໃນພຣະເຢຊູຫລືບໍ່?* (ລໍຖ້າຟັງຄຳຕອບ)

8. ທ່ານຄິດວ່າມາທາໄດ້ແກ້ບັນຫາຂອງລາວເອງແນວໃດ? "ນາງໄດ້ສັ່ງໃຫ້ພຣະເຢຊູບອກມາຣີອາມາຊ່ວຍ" ມາທາໄດ້ປະຕິບັດຕໍ່ພຣະເຢຊູແນວໃດ? (ລໍຖ້າຟັງຄຳຕອບ) *ນາງໄດ້ເຮັດກັບພຣະອົງເໝືອນກັບວ່າພຣະອົງຊົງເປັນເຈົ້າ*

ນາຍຫລືບໍ? (ລໍຖ້າຟັງຄຳຕອບ) *ແມ່ນແລ້ວ, ມາທາເຮັດເໝືອນກັບວ່ານາງເປັນນາຍຂອງພຣະເຢຊູ ແລະພຣະອົງເປັນເໝືອນກັບຄົນໃຊ້ຂອງນາງ, ມາທາກຳລັງໃຫ້ເຮົາເຫັນວ່ານາງໄດ້ຄິດເຖິງຄົນອື່ນຢ່າງໃດ?* (ລໍຖ້າຟັງຄຳຕອບ)

9. *ໃນຂະນະທີ່ເຮົາຟັງມາທາເວົ້າ ແລະຟັງຄຳຕອບຈາກພຣະເຢຊູ ເຮົາເຫັນບໍ່ວ່າເປັນດ້ວຍເຫດໃດພຣະເຢຊູຈຶ່ງຕຳໜິມາທາແລະຍ້ອງຍໍມາຣີອາ ພຣະອົງເວົ້າວ່າມີສິ່ງດຽວທີ່.....ເປັນຫຍັງ?* (ລໍຖ້າຟັງຄຳຕອບ)

10. *ແທ້ຈິງແລ້ວ ມາທາໄດ້ຕຳໜິໃສສອງຄົນ ທີ່ເປັນເຫດໃຫ້ນາງຕ້ອງເຮັດວຽກໜັກເກີນກຳລັງ? ແມ່ນແລ້ວ, ມາທາໄດ້ຕຳໜິມາຣີອາແລະພຣະເຢຊູ, ມາທາໄດ້ຕຳໜິທັງສອງຄົນແນວໃດແດ່?* (ລໍຖ້າຟັງຄຳຕອບ) *ມາທາຖາມພຣະເຢຊູວ່າ, "ທ່ານບໍ່ສົນໃຈບໍ ທີ່ນ້ອງຂອງຂ້ານ້ອຍປະໃຫ້ຂ້ານ້ອຍເຮັດວຽກຢູ່ຄົນດຽວ? ຕອນນີ້ມາທາໄດ້ຊີ້ໃຫ້ເຮົາເຫັນວ່າ ມາຣີອາໄດ້ປະໃຫ້ນາງເຮັດວຽກພຽງຄົນດຽວ, ແຕ່ເຮົາຍັງຈື່ໄດ້ບໍ່ວ່າ ແມ່ນໃຜເປັນຜູ້ເຊີນພຣະເຢຊູ?* (ລໍຖ້າຟັງຄຳຕອບ) *ໃຜເປັນຜູ້ເລືອກຕຽມອາຫານຄ່ຳໃຫຍ່?* (ລໍຖ້າຟັງຄຳຕອບ)
ໃນເຣື່ອງນີ້ ບໍ່ໄດ້ເວົ້າເຖິງວ່າແມ່ນໃຜຕ້ອງເປັນຄົນຮັບຜິດຊອບຕໍ່ພາຣະອັນໜັກໜ່ວງ ແມ່ນໃສກັນແທ້? (ລໍຖ້າຟັງຄຳຕອບ)
ແມ່ນແລ້ວ, ມາທາບໍ່ຄິດວ່ານາງເອງຕ້ອງເປັນຜູ້ຮັບຜິດຊອບຕໍ່ພາຣະອັນໜັກນີ້.

11. *ໄດ້ສັງເກດເຫັນບໍ່ວ່າ ນອກຈາກມາທາໄດ້ເລືອກເຮັດໃນສິ່ງທີ່ລາວບໍ່ສາມາດໂອ້ລົມກັບພຣະເຢຊູໄດ້ແລ້ວ ວິທີແກ້ບັນຫາຂອງນາງໄດ້ສິ່ງຜິນສະທ້ອນໄປຫາຄົນອື່ນນຳ?ແມ່ນແລ້ວມາທາບໍ່ມີໂອກາດໄດ້ໂອ້ລົມກັບພຣະເຢຊູ. ອະທິບາຍໄດ້ບໍ່ວ່າ ເປັນດ້ວຍເຫດໃດທາງເລືອກຂອງມາທາຈຶ່ງບໍ່ສລາດເລີຍ?* (ລໍຖ້າຟັງຄຳຕອບ)

12. *ມາທາໄດ້ສະແດງທ່າທີທີ່ໂຄຣິບພຣະເຢຊູຫລືບໍ?* (ລໍຖ້າຟັງຄຳຕອບ)
ຄຳເວົ້າຂອງມາທາຊີ້ບອກວ່ານາງບໍ່ໄດ້ໂຄຣິບພຣະເຢຊູ ນາງເວົ້າວ່າພຣະອົງບໍ່ສົນໃຈໃນບັນຫາຂອງນາງ ແລະຍັງເຮັດເໝືອນວ່າພຣະອົງເປັນຄົນໃຊ້.

13. *ຕອນທີ່ພຣະເຢຊູຕອບມາທາ ພຣະອົງມີອາລົມແບບໃດ?* (ລໍຖ້າຟັງຄຳຕອບ) *ແທ້ຈິງແລ້ວ ພຣະເຢຊູຈະຕອບແບບດຽວກັບທີ່ມາທາສະແດງອອກມາກໍໄດ້ ແຕ່ພຣະອົງໄດ້ຕອບນາງແບບໃດ?* (ລໍຖ້າຟັງຄຳຕອບ)
ພຣະເຢຊູອາດຈະບໍ່ພໍໃຈທີ່ມາທາບໍ່ໄດ້ສະແດງຄວາມໂຄຣິບພຣະອົງ ພຣະອົງອາດຈະຍ່າງອອກຈາກເຮືອນໄປກໍໄດ້ ແຕ່ພຣະອົງບໍ່ເຮັດແບບນັ້ນ ລອງອະທິບາຍເບິ່ງວ່າເວລາທີ່ພຣະເຢຊູຕອບມາທາພຣະອົງເວົ້າແບບໃດ? (ລໍຖ້າຟັງຄຳຕອບ)
ພຣະອົງເວົ້າຢ່າງນຸ້ມນວນວ່າ ສິ່ງທີ່ມາຣີອາເລືອກເອົານັ້ນດີກວ່າ.

14. *ມາທາໄດ້ສະແດງທ່າທີທີ່ບໍ່ໂຄຣິບພຣະເຢຊູແນວອື່ນອີກບໍ ແນວໃດແດ່?* (ລໍຖ້າຟັງຄຳຕອບ)
ພຣະເຢຊູ ເປັນພຣະອາຈານທີ່ຄົນທັງຫລາຍໂຄຣິບ ມາທາໄດ້ຕໍ່ວ່າພຣະອົງຕໍ່ໜ້າພວກສາວົກ ການກະທຳເຊັ່ນນັ້ນຊີ້ໃຫ້ເຫັນວ່ານາງບໍ່ໄດ້ໂຄຣິບພຣະອົງ.
ພຣະເຢຊູໄດ້ຕອບມາທາແບບໃດ? ດ້ວຍຄວາມຖ່ອມໃຈ ຫລືດ້ວຍການຍົກສູງຂອງພຣະອົງເອງຂຶ້ນ? (ລໍຖ້າຟັງຄຳຕອບ)

15. *ພຣະເຢຊູຊົງເອີ້ນມາທາວ່າແນວໃດ? ບອກໄດ້ບໍ່ວ່າພຣະອົງຮູ້ຈັກກັບນາງດີຫລືບໍ່?* (ລໍຖ້າຟັງຄຳຕອບ)
ແມ່ນແລ້ວພຣະອົງຊົງສົນໃຈນາງ ດ້ວຍການເອີ້ນຊື່ນາງເຖິງສອງເທື່ອ.

16. *ໃນເຣື່ອງນີ້ ເຮົາມີຂໍ້ມູນບໍ່ວ່າ ຄວາມກະວົນກະວາຍຂອງມາທາເກີດຂຶ້ນພຽງຊົ່ວຄາວ ຫລືວ່າເປັນນິດສັຍທີ່ແທ້ຈິງຂອງນາງ?* (ລໍຖ້າຟັງຄຳຕອບ)
ພຣະເຢຊູເວົ້າວ່າ ມາທາກະວົນກະວາຍໃນຫລາຍເຣື່ອງ ຊຶ່ງຊີ້ບອກວ່າອາດຈະເປັນນິສັຍຂອງນາງ.

17. *ແມ່ນສິ່ງໃດທີ່ພຣະເຢຊູກ່າວ ທີ່ສາມາດເຮັດໃຫ້ມາທາປ່ຽນໃຈບໍ່ໄປຫຍຸ້ງຍ່ອງໃນເຮືອນຄົວ ແລະຈຸ້ງໃຈນາງໃຫ້ນາງມານັ່ງຟັງພຣະເຢຊູສັ່ງສອນ?* (ລໍຖ້າຟັງຄຳຕອບ)
ແມ່ນແລ້ວ ສິ່ງນັ້ນແມ່ນພຣະເຢຊູໄດ້ເວົ້າກັບມາທາວ່າ, "ມາຣີອາໄດ້ເລືອກເອົາສິ່ງທີ່ດີນັ້ນແລ້ວ"
ໃນຕອນນີ້ເຮົາເຫັນວ່າມາທາເປັນຜູ້ເລືອກເອງແມ່ນບໍ່? (ລໍຖ້າຟັງຄຳຕອບ) *ຈາກຖ້ອຍຄຳຂອງພຣະເຢຊູ ທ່ານເຫັນວ່າພຣະເຢຊູເວົ້າຢ່າງໃດເຖິງສິ່ງທີ່ມາທາໄດ້ເລືອກ?* (ລໍຖ້າຟັງຄຳຕອບ)

18. *ພຣະເຢຊູກ່າວວ່າ, ມາທາ ມາທາເອີຍ ເຈົ້າກະວົນກະວາຍແລະຮ້ອນໃຈໃນຫລາຍສິ່ງແທ້ໜໍ ສິ່ງທີ່ຈຳເປັນນັ້ນມີແຕ່ສິ່ງດຽວ ມາຣີອາໄດ້ເລືອກເອົາສິ່ງດີນັ້ນແລ້ວ.." ໃນຈຸດນີ້ພຣະເຢຊູກຳລັງບອກວ່າທາງເລືອກຂອງມາທາເມື່ອປຽບທຽບກັບທາງເລືອກຂອງມາຣີອາແລ້ວ ເປັນແນວໃດ?* (ລໍຖ້າຟັງຄຳຕອບ)
ສິ່ງທີ່ມາຣີອາເລືອກເປັນສິ່ງທີ່ດີ, ເປັນສິ່ງທີ່ຈຳເປັນ.

19. *ເບິ່ງເໝືອນວ່າ ສິ່ງທີ່ມາທາເລືອກນັ້ນແມ່ນສິ່ງທີ່ຈຳເປັນແມ່ນບໍ່?* (ລໍຖ້າຟັງຄຳຕອບ) *ພຣະເຢຊູເຫັນວ່າສິ່ງທີ່ມາທາເລືອກນັ້ນຈຳເປັນບໍ່? ການກິນຈຳເປັນຫລືບໍ່?* (ລໍຖ້າຟັງຄຳຕອບ) *ຊ່ວຍໃຫ້ມີຄວາມເຂົ້າໃຈແດ່ວ່າ ແມ່ນຫຍັງທີ່ພຣະເຢຊູກ່າວວ່າຈຳເປັນ ແລະບໍ່ຈຳເປັນໃນເຣື່ອງນີ້?* (ລໍຖ້າຟັງຄຳຕອບ)

20. *ໃນປະເພນີທີ່ເຫັນວ່າ ການຕ້ອນຮັບແຂກເປັນສິ່ງສຳຄັນນັ້ນ ຄົນທົ່ວໄປຄາດຫວັງໄວ້ວ່າມາຣີອາຄວນຈະເຮັດແນວໃດ?* (ລໍຖ້າຟັງຄຳຕອບ) *ມາຣີອາຕ້ອງເລືອກທີ່ຈະເຮັດຫຍັງ ທັງໆ ທີ່ເປັນເຣື່ອງຍາກ? ທາງເລືອກຂອງມາຣີອາໄດ້ຂັດກັບອັນໃດ?* (ລໍຖ້າຟັງຄຳຕອບ)
ແມ່ນແລ້ວ ຂັດກັບປະເພນີ ແລະຂັດກັບຄວາມຄາດຫວັງຂອງຄົນໃນຄອບຄົວ.

21. *ເຮົາເຫັນວ່າ ມາທາໄດ້ເຮັດສິ່ງທີ່ລາວຮູ້ແລ້ວວ່າມັນເກີນກຳລັງ ແລະອາດຈະບໍ່ສຳເຣັດ ນາງຈະເຮັດແນວໃດແດ່ ເພື່ອນາງຈະເຮັດວຽກງານນີ້ໄດ້ສຳເຣັດ?* (ລໍຖ້າຟັງຄຳຕອບ)
(ມາທາມີຫລາຍທາງເລືອກ, ໜູນໃຈໃຫ້ຜູ້ຟັງຄິດວ່າ ມາທາຄວນເຮັດວຽກອື່ນແທນ ເມື່ອນາງເຫັນວ່າບໍ່ສາມາດເຮັດວຽກນັ້ນໃຫ້ສຳເຣັດດ້ວຍຕົນເອງ)

22. *ມີຫຍັງແດ່ທີ່ຊ່ວຍມາທາໄດ້?* (ລໍຖ້າຟັງຄຳຕອບ) *ແມ່ນໃຜທີ່ນາງຈະໄປຂໍໃຫ້ມາຊ່ວຍນາງໄດ້?* (ລໍຖ້າຟັງຄຳຕອບ) *ຫລາຍເທື່ອທີ່ເຮົາຟັງເຣື່ອງນີ້ ແລະຕີຄວາມໝາຍ ມີຫລາຍຄົນໃຫ້ຄຳເຫັນວ່າ ນາງຄວນຈະໄປຫາພຣະເຢ

ຊ ແລ້ວທູນພຣະອົງວ່າ,"ພຣະອົງເຈົ້າເອີຍ ຂ້ານ້ອຍຄົນດຽວບໍ່ສາມາດຕຽມອາຫານໃຫ້ສຳເຣັດໄດ້ ຂ້ານ້ອຍຄວນ ຈະເຮັດແນວໃດ? "

23. *ສາຍເຫດທີ່ມາທາບໍ່ໄປຂໍຄວາມຊ່ວຍເຫລືອຈາກພຣະເຢຊູ ກໍເພາະວ່ານາງອາຍແມ່ນບໍ່?* (ລໍຖ້າຟັງຄຳຕອບ) *ທ່ານເຫັນວ່າທ່າທີຂອງມາທາເປັນແນວໃດ?* (ລໍຖ້າຟັງຄຳຕອບ) *ຈົ່ງປຽບທຽບທ່າທີຂອງມາທາກັບພຣະເຢຊູ.*

24. *ປຽບທຽບທາງເລືອກຂອງມາຣີອາແລະມາທາ ເປັນທາງເລືອກດຽວກັນ ຫລືແຕກຕ່າງກັນ?* (ລໍຖ້າຟັງຄຳຕອບ) *ຣະຫວ່າງມາຣີອາແລະມາທາ ແມ່ນໃຜເປັນຜູ້ເອົາໃຫ້ພຣະເຢຊູ ແລະແມ່ນໃຜເປັນຜູ້ຮັບຈາກພຣະອົງ?* (ລໍຖ້າຟັງ ຄຳຕອບ) *ການກະທຳອັນໃດ ທີ່ພຣະເຢຊູໃຫ້ຄຸນຄ່າຫລາຍກວ່າ?* (ລໍຖ້າຟັງຄຳຕອບ) *ສິ່ງນີ້ໄດ້ບອກຫຍັງແດ່ແກ່ເຮົາ?* (ລໍຖ້າຟັງຄຳຕອບ)

ຫວັງວ່າຜູ້ຟັງຈະຄົ້ນພົບວ່າ ມາທາໄດ້ເຮັດຫຍັງເພື່ອພຣະເຢຊູໃນຂະນະທີ່ມາຣີອາເປັນຜູ້ໄດ້ຮັບຈາກພຣະອົງ ພຣະເຢຊູຊົງບອກວ່າວຽກງານທີ່ມາທາກຳລັງເຮັດຢູ່ບໍ່ແມ່ນສິ່ງທີ່ຈຳເປັນ ແລະໃນຈຸດນີ້ອາດຈະນຳໄປສົນທະນາ ແລກປ່ຽນຄວາມຄິດເຫັນໃນຫົວຂໍ້ທີ່ວ່າ **"ການພຍາຍາມທຳດີ ກັບ ພຣະຄຸນຂອງພຣະເຈົ້າ"**

ຄຳຖາມຂອງທ່ານໄດ້ບົ່ງບອກເຖິງທ່າ ທີ ຂອງການສອນ

ກ່ອນທີ່ຈະຕັ້ງຄຳຖາມເພື່ອຊ່ວຍໃຫ້ຜູ້ຟັງພົບຂຸມຊັບຝ່າຍວິນຍານຈາກເຣື່ອງເໝືອນກັບທີ່ທ່ານໄດ້ພົບນັ້ນ ເຮົາຈຳເປັນ ຕ້ອງເບິ່ງວິທີການໃຊ້ຄຳຖາມທີ່ຄຣູແຕ່ລະຄົນໃຊ້ ຜູ້ຟັງຈະເຫັນຜູ້ເລົ່າໃນແບບໃດນັ້ນແມ່ນຂຶ້ນກັບວິທີຕັ້ງຄຳຖາມ ... ການໃຊ້ສຽງ ອາລົມ ກິຣິຍາທ່າທາງແລະປໂຍກຄຳຖາມ ສິ່ງເຫລົ່ານີ້ໄດ້ບອກເຖິງບຸກຄະລິກຂອງແຕ່ລະຄົນ ຍົກຕົວ ຢ່າງເຊັ່ນ ຄຣູທີ່ຮ້າຍ ອາຈານທີ່ໃຈດີ ຫລື ເປັນເພື່ອນຮ່ວມກຸ່ມປົ້ນພູ

ທ່າ ທີຂອງຄຣູທີ່ຮ້າຍນັ້ນຈະບໍ່ເຂົ້າກັນກັບການເລົ່າເຣື່ອງເຈາະໃຈ ເພາະຄວາມເຂັ້ມງວດເຮັດໃຫ້ຜູ້ຟັງຮູ້ສຶກວ່າ "ຄົງຈະ ບໍ່ມີຄຳຕອບທີ່ຖືກ ແລະຖ້າຂ້ອຍຝືນຕອບແລະຕອບຜິດ ຂ້ອຍກໍຈະອາຍຕໍ່ໜ້າຄົນທັງຫລາຍ" ດັ່ງນັ້ນຜູ້ຟັງຈຶ່ງບໍ່ຕອບ ສນອງເທົ່າທີ່ຄວນໃນການເລົ່າເຣື່ອງເຈາະໃຈ ພວກເຮົາສນັບສນຸນໃຫ້ຜູ້ຟັງໃຊ້ຄວາມສາມາດໃນການໃຫ້ເຫດ ຜົນທີ່ ພຣະເຈົ້າປະທານໃຫ້ ແລະໜູນໃຈໃຫ້ຜູ້ຟັງຄົ້ນພົບຄວາມລ້ຳເລີກຝ່າຍວິນຍານໃນພຣະຄຳຂອງພຣະເຈົ້າ ເຮົາ ບໍ່ຕ້ອງ ເປັນຄຣູທີ່ຮ້າຍ.

ສ່ວນອາຈານທີ່ໃຈດີ ກໍມັກຍົ້ມແລະໃຈກວ້າງ ແຕ່ຄຳຖາມຈາກອາຈານເຮັດໃຫ້ເຫັນຄຳຕອບຊັດເຈນຢູ່ແລ້ວ ຜູ້ຟັງກຳ ລັງຄິດວ່າ ອາ ຈານກຳລັງບອກວ່າ, "ຂ້າພະເຈົ້າກຳລັງຢືນຢູ່ເທິງຈອມພູຂອງຄວາມຮູ້ທີ່ສູງສຸດ ທ່ານມີຄວາມສລາດພໍ ທີ່ຈະປີນຂຶ້ນມາຈົນຮອດຈອມພູນີ້ໄດ້ບໍ່ ເພື່ອສະແດງວ່າທ່ານໄດ້ຮັບຂໍ້ມູນຈາກຂ້າພະເຈົ້າແລ້ວ?"

ຜູ້ຟັງຈະມີສ່ວນໃນການໂອ້ລົມສົນທະນາ ແຕ່ເບິ່ງຢ່າງຄັກແນ່ແລ້ວຜູ້ທີ່ມີສ່ວນຮ່ວມໃນການຕອບແມ່ນຜູ້ທີ່ຄິດໄດ້ໄວ ສາມາດຕອບຢ່າງຖືກຕ້ອງສເມີ. ພວກເຮົາມັກວິທີການຂອງຄຣູປະເພດນີ້ ເພາະຈະມີຄວາມສຸກໃຈທີ່ໄດ້ຢູ່ໃນກຸ່ມຄົນ ທີ່ຮູ້ຫລາຍກວ່າຄົນອື່ນ ແຕ່ໜ້າເສັງດາຍທີ່ຄົນກຸ່ມນີ້ບໍ່ໄດ້ຄິດເຖິງຄົນອີກພວກນຶ່ງທີ່ບໍ່ໄດ້ມີສ່ວນເຂົ້າຮ່ວມໃນການໂອ້

ລົມສົນທະນາ ເພາະເຂົາເຈົ້າຮູ້ສຶກວ່າພວກຕົນບໍ່ເກ່ັງ ບໍ່ໝັ້ນໃຈ ແລະບໍ່ເຊື່ອວ່າພວກຕົນຈະປັ້ນໜູຂຶ້ນໄປໄດ້.

ສ່ວນຄົນເລ່ົາເຣ່ືອງທ່ີເປັນເພ່ືອນປັ້ນຂຶ້ນໜູນຳກັນນັ້ນ ຈະຊ່ວຍໃຫ້ທຸກຄົນມີຄວາມຮູ້ສຶກວ່າ ເຂົາເຈົ້າກຳລັງປັ້ນຂຶ້ນໜູໄປນຳກັນ ແລະໄດ້ພົບເຫັນຂໍ້ມູນນຳກັນ.

ການເຮັດໜ້າທ່ີຂອງຜູ້ປັ້ນໜູເປັນໜ້າທ່ີໆ ທ້າທາຍ ໂດຍສ່ວນຕົວແລ້ວຜູ້ເລ່ົາເຣ່ືອງສາມາດທ່ີຈະຮັບເອົາບົດບາດນ້ີໄດ້ ໜ້າທ່ີນ້ີເປັນທາງເລືອກທ່ີທຸກໆ ຄົນຈະໄດ້ຮັບຜົນຢ່າງກຸ້ມຄ່າ ເພາະເປັນການເຊີນໃຫ້ຜູ້ຟັງເຂົ້າຮ່ວມຢ່າງເປັນທັມມະຊາດ ແລະມີໂອກາດໜ້ອຍທ່ີສຸດທ່ີຄົນໃດຄົນນ່ຶງຈະໂອ້ອວດໃນໃຈຕົນເອງ ທັ້ງຜູ້ຟັງແລະຜູ້ເລ່ົາເຣ່ືອງ.
ຕອນພັກທ່ຽງຂອງການຝຶກອົບຮົມຄ້ັງນ່ຶງ ຜູ້ເຂົ້າຮ່ວມຝຶກອົບຮົມໃຫ້ຄຳເຫັນວ່າ ຜູ້ເລ່ົາເຣ່ືອງທ່ີເປັນເພ່ືອນປັ້ນໜູຂຶ້ນໄປນຳກັນນັ້ນສຳຄັນຫລາຍ ລາວເວ້ົາວ່າ, "ຂ້າພະເຈ້ົາມັກເຣ່ືອງມາຫາແລະມາຮີອາຫລາຍ ເພາະມັນເຮັດໃຫ້ຂ້າພະເຈ້ົາເອົາມາຄິດອີກ ຮູ້ບ່ໍວ່າຂ້າພະເຈ້ົາມັກຫຍັງຫລາຍທ່ີສຸດ?" ຄຣູຝຶກໄດ້ຖາມວ່າ, "ແມ່ນຫຍັງທ່ີທ່ານມັກ?" ລາວຕອບວ່າ, "ຂ້າພະເຈ້ົາມັກບ່ອນທ່ີຂ້າພະເຈ້ົາບ່ໍຮູ້ຄຳຕອບ ແລະທ່ານໄດ້ປ່ອຍໃຫ້ພວກເຮົາຊອກຫາຄຳຕອບໃຫ້ທ່ານ"

ຂ້າພະເຈ້ົາໄດ້ເປ່ັງສຽງອອກໄປວ່າ, "ດີອີຫລີເນາະ, ຂ້າພະເຈ້ົາໄດ້ເຮັດແບບຢ່າງທ່ີພວກເຮົາສອນການເລ່ົາເຣ່ືອງເຈາະໃຈໄດ້ສຳເຮັດແລ້ວ ຄວາມຈ່ິງນັ້ນພວກເຮົາໄດ້ເລ່ົາເຣ່ືອງນ້ີຫລາຍເທ່ືອແລ້ວໃນທ່ົວໂລກ ດັ່ງນັ້ນເມ່ືອຕັ້ງຄຳຖາມ ສ່ວນຫລາຍຕົນເອງຈະຮູ້ຄຳຕອບກ່ອນແລ້ວ ແຕ່ກ່ໍຢາກໃຫ້ທ່ານມີໂອກາດຄົ້ນຫາດ້ວຍຕົນເອງ ຂ້າພະເຈ້ົາຈ່ຶງບ່ໍຕອບແທນທ່ານ"

ຄົນໆ ນັ້ນງຶກຫົວ, "ຂ້າພະເຈ້ົາຮູ້ແລ້ວ ແຕ່ສ່ິງທ່ີຂ້າພະເຈ້ົາກຳລັງເວ້ົາເຖ່ິງນ້ີແມ່ນ ທ່ານບ່ໍຮູ້ຄຳຕອບແຕ່ທ່ານໃຫ້ພວກເຮົາຫາຄຳຕອບໃຫ້ ຂ້າພະເຈ້ົາມັກຫລາຍທ່ີທ່ານບ່ໍຢ້ານທ່ີຈະໃຫ້ພວກເຮົາຮູ້ວ່າ ທ່ານບ່ໍໄດ້ຮູ້ໝົດທຸກຢ່າງ"

ອືຮື...ຂ້າພະເຈ້ົາຄິດ ຂ້າພະເຈ້ົາເຫັນວ່າໄດ້ເຮັດໜ້າທ່ີຂອງຕົນເອງແລ້ວ ບ່ໍຈ່ຳເປັນທ່ີຈະຕ້ອງບອກຜູ້ໃດ ວ່າເຮົາຮູ້ທຸກຢ່າງທ່ີກຳລັງຄົ້ນຫາ ແລະຮູ້ທຸກຢ່າງທ່ີຄົນໃນກຸ່ມກຳລັງພົບ ທຸກຄົນໃນກຸ່ມຕ່າງກ່ໍເຂົ້າຮ່ວມການເລ່ົາເຣ່ືອງເຈາະໃຈຢ່າງເຕັມຮ້ອຍ ເຂົາເຈ້ົາຮູ້ສຶກວ່າໄດ້ຮັບອະນຸຍາດໃຫ້ມີເສລີພາບທ່ີຈະຄິດແລະຄົ້ນຫາ ພວກເຮົາໄດ້ປັ້ນຂຶ້ນໜູໄປນຳກັນຢ່າງແທ້ຈ່ິງ.

ບ່ໍວ່າເຮົາຈະນຳເອົາເຣ່ືອງທ່ີຄຸ້ນເຄ່ັຍຫລາຍໆ ໄປເລ່ົາກ່ໍຕາມ ຜູ້ເຂ້ົາຝຶກອົບຮົມຈະຕ້ອງໄດ້ຄົ້ນຫາຊຸມຊັບຝ່າຍວິນຍານ ແລະນຳໃຊ້ໃນຊ່ີວິດຝ່າຍວິນຍານ ຊ່ຶງເຂົາເຈ້ົາໄດ້ຄົ້ນພົບສ່ິງໃໝ່ໆ ຊ່ຶງຄຣູຝຶກບ່ໍເຄ່ັຍຄິດມາກ່ອນ ການຄົ້ນພົບໃໝ່ດັ່ງກ່າວບ່ໍໄດ້ເກ່ີດຈາກການຕອບຄຳຖາມຂອງຄຣູແຕ່ມັນເກ່ີດຂຶ້ນໃນຊ່ວງໂອ້ລົມສົນທະນາແລກປ່ຽນຄວາມຄິດ ຊ່ຶງພຣະວິນຍານຊ່ຶງປະທານຄວາມເຂ້ົາໃຈໃຫ້ເກ່ີດຄວາມຄິດຂອງຄົນທ່ີລໍຄອຍຟັງສຽງຂອງພຣະອົງ ການໂອ້ລົມກັນນ້ັນໄດ້ເປັນຈຸດເລ່ີມຕົ້ນໃຫ້ແຕ່ລະຄົນຢາກຄົ້ນພົບແລະຍັງເປັນເວທ່ີໃຫ້ຜູ້ຟັງໄດ້ແບ່ງປັນສ່ິງທ່ີເຂົາເຈ້ົາຫາກ່ໍເຂ້ົາໃຈອີກນຳ.

ວິທ່ີການເປັນເພ່ືອນຮ່ວມປັ້ນຂຶ້ນໜູ

ວິທ່ີການໃຊ້ຖ້ອຍຄຳໃນການຕັ້ງຄຳຖາມເປັນ ໄດ້ ທັ້ງ ບວກ ແລະ ລົບ ສາມາດຈູງໃຈຜູ້ຟັງໃຫ້ຢາກຈະເຂ້ົາມາມີສ່ວນຮ່ວມ

ຫລືອາດຈະເຮັດໃຫ້ເຂົາເຈົ້າທໍ້ຖອຍໃຈກໍເປັນໄດ້ ຖ້າຜູ້ເລົ່າເຣື່ອງຖາມວ່າ, "ອັບຣາຮາມມີອູດຈັກໂຕ?" ຄຳຖາມແບບນີ້ແມ່ນ ຕ້ອງການຄຳຕອບທີ່ຊັດແຈ້ງແລະຖືກຕ້ອງ ຜູ້ຟັງກໍຈະຄິດວ່າຂ້ອຍຕ້ອງຕອບໃຫ້ຖືກ ຖ້າ ຕອບບໍ່ຖືກຂ້ອຍຕ້ອງອາຍ ຄຳຖາມແບບນີ້ຈະເຮັດໃຫ້ການໂອ້ລົມສົນທະນາຕໍ່ໄປໄດ້ຍາກ.

ແທນທີ່ຈະເປັນແນວນັ້ນທ່ານອາດຈະໃຊ້ສ່ງທີ່ເຮັດໃຫ້ຮູ້ສຶກວ່າແປກໃຈໂດຍໃຊ້ຄຳຖາມວ່າ, "ເອີ...ອັບຣາຮາມມີອູດຈັກໂຕເນາະ?" ທ່າທາງການສະແດງອອກທາງໃບໜ້າແລະສ່ງ ຊີ້ບອກວ່າທ່ານກຳລັງຄິດເຖິງຈຳນວນອູດຢ່າງແທ້ຈິງ ການກະທຳແບບນີ້ຈະເຮັດໃຫ້ຜູ້ຟັງຢາກອາສາຕອບຄຳຖາມ ຖ້າມີຄົນນຶ່ງເວົ້າວ່າມີ 12 ໂຕ, ທ່ານອາດຈະຕອບວ່າ "ອາດຈະຖືກ ຫລືວ່າມີຫລາຍກວ່າ 12 ໂຕ ບໍ?" ອາດຈະມີອີກຄົນນຶ່ງເວົ້າວ່າມີ 14 ໂຕ, ທ່ານກໍຕອບວ່າ "ອາ ... ຂ້າພະເຈົ້າເຫັນດີນຳ ຂ້າພະເຈົ້າກໍຄິດວ່າ 14 ໂຕ, ຂອບໃຈເນີ ເປັນຄຳຕອບທີ່ ດີຫລາຍ."

ຖ້າທ່ານທຳທ່າເໝືອນກັບວ່າທ່ານຕ້ອງການໃຫ້ຊ່ວຍ ກໍຈະມີຄົນອາສາຕອບຄຳຖາມ ບໍ່ວ່າຈະເປັນຊ່ວງເລົ່າເຣື່ອງ ວດດຽວຈີບ ຫລືຊ່ວງຄົ້ນຫາຂຸມຊັບ ຫລືຊ່ວງນຳໃຊ້ໃນຊີວິດ ຜູ້ຟັງຢາກຈະຊ່ວຍທ່ານ ເຂົາເຈົ້າຮູ້ສຶກສະບາຍໃຈຢາກເຂົ້າມາມີສ່ວນຮ່ວມແລະອອກຄວາມຄິດເຫັນ ແທນທີ່ຈະພຍາຍາມຕອບໃຫ້ຖືກທີ່ສຸດ.

ທ່ານສາມາດສ້າງບັນຍາກາດດ້ວຍວິທີການຕັ້ງຄຳຖາມຂອງທ່ານເອງ ເມື່ອຄຣູຫລືສິດຍາພິບານທຳການສອນ ຄົນທີ່ຮຽນສ່ວນຫລາຍຈະເຫັນວ່າພວກເພິ່ນຮູ້ຈັກຄຳຕອບທຸກຢ່າງແລ້ວ ເຂົາເຈົ້າບໍ່ເຄີຍເຫັນການຮຽນດ້ວຍການສົນທະນາ ແລກປ່ຽນຄວາມຄິດເຫັນດັ່ງທີ່ໄດ້ເຫັນໃນການເລົ່າເຣື່ອງ ຊຶ່ງຜູ້ເລົ່າສາມາດເຮັດໃຫ້ເກີດບັນຍາກາດຈູງໃຈຜູ້ຟັງໃຫ້ເຂົ້າມາມີສ່ວນຮ່ວມ ໂດຍສະເພາະແມ່ນຄົນທີ່ຍັງໃໝ່ບໍ່ຄຸ້ນເຄີຍກັບການໃຊ້ຄຳຕອບທີ່ຄົ້ນພົບດ້ວຍຕົນເອງ ດັ່ງນັ້ນຈຶ່ງເປັນສິ່ງທີ່ດີເມື່ອຜູ້ເລົ່າເຣື່ອງບໍ່ເຮັດເໝືອນຄຣູທີ່ຕ້ອງການຄຳຕອບທີ່ຖືກຕ້ອງ ຫລືຄຳຕອບທີ່ເຈາະຈົງ.

ຕອນທີ່ຜູ້ຟັງເລີ້ມຄົ້ນພົບມູນຄວາມຈິງຕ່າງໆ ຫລາຍຂຶ້ນ ມີຜູ້ຈະຕອບຄືນດ້ວຍຄວາມຍິນດີແລະປລາດໃຈ ທ່ານຜູ້ເປັນຄຣູຝຶກອົບຮົມອາດຈະເວົ້າວ່າ,"ຂ້າພະເຈົ້າມັກຄຳຕອບຂອງທ່ານຫລາຍ ເຫັນວ່າທ່ານມີຄວາມຄິດທີ່ດີໆໃນຕອນນັ້ນແມ່ນບໍ?" ຫລືອາດຈະເວົ້າວ່າ, "ເອີ...ຟັງແລ້ວກໍເປັນໜ້າສົນໃຈເນາະ"

ມີບາງເທື່ອຜູ້ຟັງຈະອອກຄວາມຄິດທີ່ບໍ່ກົງກັບເຣື່ອງທີ່ເລົ່າເລີຍ ໃນຖານະທີ່ຜູ້ເລົ່າເຣື່ອງເປັນເພື່ອນຮ່ວມປັນພູກັບເຂົາເຈົ້າ ຜູ້ເລົ່າເຣື່ອງສາມາດທີ່ຈະຂໍໃຫ້ຄົນນັ້ນເວົ້າດ້ວຍຄວາມກະຈ່າງແຈ້ງໄດ້ ໂດຍທີ່ບໍ່ໃຫ້ຄົນນັ້ນມີຄວາມຂັດເຄືອງໃຈ.

ຕົວຢ່າງອີກອັນນຶ່ງ ບາງຄົນອາດຈະເວົ້າອອກມາໂດຍຄິດວ່າຖືກຕ້ອງທີ່ສຸດ ແຕ່ທ່ານເຫັນວ່າສິ່ງທີ່ລາວເວົ້ານັ້ນບໍ່ໄດ້ຢູ່ໃນເຣື່ອງທີ່ເລົ່ານັ້ນເລີຍ ແຕ່ທ່ານກໍສາມາດຖາມດ້ວຍຄວາມເປັນມິດວ່າ, "ລອງເວົ້າອີກເທື່ອນຶ່ງໄດ້ບໍ່ ເພາະຢາກຮູ້ວ່າມັນຢູ່ໃນຕອນໃດຂອງເຣື່ອງນີ້" ຫລືຖ້າທ່ານຄິດວ່າການຖາມຄືນແບບນັ້ນອາດຈະບໍ່ຊ່ວຍຫຍັງໄດ້ ທ່ານກໍສາມາດຕອບກັບຄືນໂດຍທີ່ບໍ່ເຮັດໃຫ້ລາວເສັງໜ້າ ຄືຢ່າພຍາຍາມດັດແປງແກ້ໄຂລາວຕໍ່ໜ້າຄົນອື່ນ ເພື່ອຈະເຮັດໃຫ້ການຄົ້ນຫາຂຸມຊັບຢູ່ໃນບັນຍາກາດອັນດີແລະຄົນອື່ນໆ ກໍພຍາຍາມຄົ້ນຫາຕໍ່ໄປ.

ຖ້າມີຄວາມສົງສັຍ ຫລືມີການອອກຄວາມຄິດເຫັນທີ່ບໍ່ຖືກຕ້ອງ ເປັນການດີທີ່ສຸດທີ່ຂໍຮ້ອງໃຫ້ຄົນອື່ນໆ ໃນກຸ່ມອອກຄວາມຄິດຄວາມເຫັນເພີ້ມອີກເຊັ່ນ, "ອື...ເປັນຄວາມຄິດທີ່ໜ້າສົນໃຈ ພີ່ນ້ອງຄົນອື່ນເດມີຄວາມຄິດເຫັນແນວໃດ

ໃນເຣື່ອງນີ້?" ເມື່ອເຮົາໃຫ້ການສົນທະນາເປັນຂອງຄົນທີ່ຢູ່ໃນກຸ່ມ ເຮົາກໍບໍ່ໄດ້ທຳຕົວເປັນເໝືອນຄຣູຫລືອາຈານຂອງເຂົາເຈົ້າ ແລະມອບໃຫ້ພຣະຄຳຂອງພຣະເຈົ້າເປັນຄຳຕອບສຸດທ້າຍ.

ຈົ່ງຈື່ຈຳໄວ້ສເມີວ່າ, ຍິ່ງທ່ານທຳທ່າບໍ່ຮູ້ ຜູ້ຟັງກໍຈະພຍາຍຍາມຊ່ອຍທ່ານຫລາຍຂຶ້ນ ທ່ານຈົ່ງທຳຕົວໃຫ້ຢູ່ໃນລັກສະນະແບບນີ້ໃນການອາງຄຳຖາມແລະໃນການໂອ້ລົມສົນທະນາຕໍ່ໄປ. ແຕ່ຖ້າທ່ານເອງທຳຕົວວ່າຮູ້ໝົດທຸກສິ່ງ ພວກຜູ້ຟັງກໍຈະລັງເລໃຈແລະບໍ່ຢາກຕອບຄຳຖາມຂອງທ່ານ ດັ່ງນັ້ນຈົ່ງພຍາຍາມຢ່າໃຫ້ກຸ່ມຂອງທ່ານມີບັນຍາກາດແບບຫ້ອງຮຽນ ເພາະບັນຍາກາດຫ້ອງຮຽນ ເຮັດໃຫ້ຜູ້ຟັງບໍ່ຢາກຕອບເພາະຢ້ານຕອບຜິດ.

ດັ່ງນັ້ນໃຫ້ທ່ານຕັ້ງຄຳຖາມແບບຈູງໃຈ ຫລືຊ່ອຍຜູ້ຟັງໃຫ້ໃຊ້ຄວາມຄິດເຊັ່ນ "ຂ້ອຍຄິດວ່າ.....?" "ເປັນໄປໄດ້ ບໍ່....?" "ມັນເປັນແບບນີ້ແມ່ນບໍ.....?" "ພີ່ນ້ອງໄດ້ເຫັນຫຍັງແດ່.....?" "ອັນນີ້ມີຄວາມໝາຍແນວໃດເນາະ....?" ການຕັ້ງຄຳຖາມແບບບໍ່ແນ່ໃຈ ຈະຈູງໃຈ ຫລືເປີດທາງໃຫ້ຜູ້ຟັງເວົ້າຕໍ່ ໃຊ້ຄວາມຄິດ ຈະຊ່ວຍໃຫ້ມີບັນຍາກາດແບບເປັນມິດເປັນເພື່ອນໃນການຄົ້ນຫາຂຸມຊັບໄປນຳກັນ.

ຄວາມສາມາດເປັນສິ່ງທີ່ທ້າທາຍຫລາຍທີ່ສຸດໃນການເລົ່າເຣື່ອງເຈາະໃຈ ແລະຈະຕ້ອງໃຊ້ເວລາຝຶກຝົນຫລາຍທີ່ສຸດນັ້ນແມ່ນ ຄວາມສາມາດໃນການຕັ້ງຄຳຖາມ ທັງໆ ທີ່ທ່ານຮູ້ເຣື່ອງດີຢູ່ແລ້ວ ທ່ານກໍຈຳເປັນຕ້ອງຕັ້ງຄຳຖາມທີ່ເໝືອນກັບວ່າທ່ານບໍ່ຮູ້ ເປັນຄຳຖາມທີ່ທ່ານເອງກໍເປັນຄົນນຶ່ງທີ່ຮ່ວມໃນການຄົ້ນຫາຂຸມຊັບນຳກັນກັບຜູ້ຟັງ ການຕັ້ງຄຳຖາມແບບນີ້ຈະເຮັດໃຫ້ຜູ້ຟັງມີສ່ວນຮ່ວມແລະພ້ອມທີ່ຈະຕອບຄຳຖາມຂອງທ່ານ.

ການນຳສເນີ ຂັ້ນທີສອງ:
ການໂອ້ລົມສົນທະນາເຖິງການນຳມາໃຊ້ໃນຊີວິດຝ່າຍວິນຍານ

ການນຳມາໃຊ້ໃນຊີວິດຝ່າຍວິນຍານ ກ່ອນໜ້ານີ້ ເມື່ອພວກເຮົາເບິ່ງເຣື່ອງມາທາແລະມາຣີອາ ພວກເຮົາພົບວ່າການນຳມາໃຊ້ໃນຊີວິດຝ່າຍວິນຍານເປັນທີ່ໜ້າສົນໃຈຫລາຍ ເຮົາຄົ້ນພົບສິ່ງທີ່ສຳຄັນຈາກພຣະຄຳຂອງພຣະເຈົ້າ ແລະເຮົາຍັງຄຶດເຖິງພຣະເຈົ້າວ່າ ພຣະອົງຈະໃຫ້ເຮົານຳມາໝູນໃຊ້ໃນຊີວິດຝ່າຍວິນຍານຢ່າງໃດ.

ພາກສ່ວນຕໍ່ໄປຂອງຂະບວນການເລົ່າເຣື່ອງເຈາະໃຈ ການຕັ້ງຄຳຖາມທີ່ຈູງໃຈໃຫ້ຜູ້ຟັງຢາກສົນທະນາແລະ ຄົ້ນພົບການນຳມາໃຊ້ໃນຊີວິດຝ່າຍວິນຍານທີ່ທ່ານເອງໄດ້ພົບກ່ອນແລ້ວ ຄວາມສາມາດດັ່ງກ່າວນີ້ໄດ້ທ້າທາຍແລະເປັນລາງວັນສຳລັບຕົວທ່ານເອງດ້ວຍ ທ່ານຈະຕ້ອງບໍ່ຍື່ນຂຸມຊັບໃສ່ມືໃຫ້ຜູ້ຟັງ ຫລືບໍ່ຊີ້ໃຫ້ຜູ້ຟັງເຫັນຂຸມຊັບຈາກທ່ານເອງ ແຕ່ທ່ານຈະຕ້ອງສ້າງຄວາມສາມາດໃນການຕັ້ງຄຳຖາມ ເພື່ອຊ່ອຍໃຫ້ຜູ້ຟັງໄປພົບກັບຂຸມຊັບດ້ວຍຕົວເຂົາເຈົ້າເອງ.

ຕໍ່ໄປນີ້ແມ່ນຄຳຖາມຕົວຢ່າງທີ່ຈະຊ່ອຍຜູ້ຟັງພົບກັບການນຳໃຊ້ໃນຊີວິດຈາກເຣື່ອງມາທາ ມາຣີອາ ອີກເຊັ່ນເຄີຍ ເມື່ອເຮົາພົບກັບການນຳມາໃຊ້ໃນຊີວິດຝ່າຍວິນຍານ ເຣື່ອງນັ້ນຈະຖືກກວດເບິ່ງອີກຕັ້ງແຕ່ຕົ້ນຈົນຈົບ ຈົ່ງສັງເກດເບິ່ງວ່າແຕ່ລະເທື່ອກ່ອນທີ່ຈະຖາມກໍມີການເວົ້າລົ້ມຄືນເພື່ອໃຫ້ສັງເກດເຫັນ ຕໍ່ຈາກນັ້ນຈຶ່ງຖາມ ຊຶ່ງເຮັດໃຫ້ການນຳມາໃຊ້ໃນຊີວິດຂອງຜູ້ຟັງນັ້ນຍ້າຍຈາກພາບລວມທີ່ກວ້າງໄປເປັນການນຳໃຊ້ທີ່ເຈາະຈົງ ແລະເປັນການສ່ວນຕົວຂອງໃຜລາວ ຕາມຕົວຢ່າງຕໍ່ໄປນີ້;

1. *ໃນເຣື່ອງນີ້ ມາຣີອາບໍ່ໄດ້ຍົອລະບັດຮັບໃຊ້ ແຕ່ໄດ້ມານັ່ງໃກ້ພຣະບາດພຣະເຢຊູແລະຮຽນໃນສິ່ງທີ່ພຣະອົງຊົງສັ່ງ ສອນ. ຖ້ອຍຄຳຂອງພຣະເຢຊູແມ່ນຢູ່ໃນພຣະຄັມພີ. ໃນທຸກມື້ນີ້, ພວກເຮົາເລືອກເຮັດຕົມາຣີອາໄດ້ບໍ ຄືໄປນັ່ງ ໃກ້ພຣະບາດພຣະເຢຊູ?* (ລໍຖ້າຟັງຄຳຕອບ)

2. *ເຮົາເຫັນວ່າມາທາເລືອກທີ່ຈະເຮັດວຽກໜັກຈົນເກີນກຳລັງ ເພື່ອຍົວລະບັດຮັບໃຊ້ພຣະເຢຊູ. ພວກເຮົາໃນສມັຍ ທຸກມື້ນີ້ຍັງມີບັນຫາດັ່ງກ່າວນີ້ຢູ່ບໍ? ທ່ານຄິດວ່າແນວໃດ?* (ລໍຖ້າຟັງຄຳຕອບ) *ໃນສມັຍທຸກມື້ນີ້ ບັນດາຜູ້ທີ່ຮັບໃຊ້ ພຣະເຈົ້າ ຫລືຜູ້ເຮັດງານໃນເຮືອນ ໄດ້ເຮັດວຽກເກີນກຳລັງຂອງຕົນຢູ່ບໍ? ບັນຫາດັ່ງກ່າວນີ້ເກີດຂຶ້ນໄດ້ຢ່າງໃດ?* (ລໍຖ້າຟັງຄຳຕອບ) *ພວກເຮົາຈະເຮັດແນວໃດເມື່ອວຽກງານຮັບໃຊ້ຫລືວຽກງານອື່ນໆທີ່ເຮົາເລືອກເຮັດເລີ້ມທີ່ຈະ ເປັນພາຣະໜັກທີ່ຕ້ອງແບກ ແລະເຮັດໃຫ້ເຮົາບໍ່ມີເວລາທີ່ຈະຮຽນຮູ້ນຳອົງພຣະຜູ້ເປັນເຈົ້າ?* (ລໍຖ້າຟັງຄຳຕອບ)

3. *ເໜືອນກັບມາທາ ເລືອກທີ່ຈະເຮັດງານທີ່ດີຊຶ່ງເປັນຄວາມຄິດຂອງນາງເອງ ບໍ່ແມ່ນຂອງພຣະເຢຊູ; ຄົນໃນສມັຍ ທຸກມື້ນີ້ກໍມີທາງເລືອກງານດີໆ ທີ່ຈະເຮັດຢູ່ບໍ?* (ລໍຖ້າຟັງຄຳຕອບ) *ຄົນທັງຫລາຍມີທາງເລືອກທີ່ດີຢູ່ບໍ ເພາະວ່າ ທາງເລືອກນັ້ນແມ່ນເພື່ອຈະເຮັດງານທີ່ດີ, ຫລືແມ່ນແຕ່ງານຮັບໃຊ້ຂອງຄຣິສຕຽນ? ຄົນທັງຫລາຍເລືອກເຮັດງານ ເພື່ອພຣະເຈົ້າຢ່າງໃດ ໃນເມື່ອພຣະອົງບໍ່ໄດ້ໃຊ້ແລະບໍ່ຕ້ອງການໃຫ້ເຂົາເຈົ້າເຮັດ? ທ່ານເຄີຍໄດ້ເຮັດວຽກທີ່ພຣະ ເຈົ້າບໍ່ໄດ້ໃຊ້ ຫລືເຄີຍເຫັນຄົນອື່ນເຮັດບໍ? ທ່ານສາມາດອະທິບາຍໄດ້ບໍ?* (ລໍຖ້າຟັງຄຳຕອບ)

   ມີງານໃດແດ່ທີ່ເຮົາເລືອກເຮັດເພື່ອພຣະເຈົ້າ ແລະງານນັ້ນເຮັດໃຫ້ເຮົາບໍ່ມີເວລາກັບພຣະເຈົ້າ? (ລໍຖ້າຟັງຄຳ ຕອບ) *ເຮົາຈະເຮັດແນວໃດເມື່ອເຮົາຮູ້ວ່າງານຮັບໃຊ້ທີ່ເຮົາເລືອກເຮັດນັ້ນກີດກັ້ນເຮົາບໍ່ໃຫ້ມີເວລາກັບພຣະເຈົ້າ ແລະບໍ່ໄດ້ຮຽນຮູ້ຈາກພຣະອົງ?* (ລໍຖ້າຟັງຄຳຕອບ)

4. *ມາທາຕຳໜິມາຣີອາວ່າບໍ່ຊ່ວຍລາວຕ້ອນຮັບແຂກ ທັງໆ ທີ່ເປັນແຜນງານຂອງມາທາເອງ ແລະພຣະເຢຊູກໍບໍ່ໄດ້ ບອກໃຫ້ມາຣີອາຍົວລະບັດຮັບໃຊ້. ໃນສມັຍທຸກມື້ນີ້ ເມື່ອຄົນທັງຫລາຍເຮັດງານເກີນກຳລັງຂອງຕົນ ເຂົາເຈົ້າຈົ່ມ ຫຍັງແລະຈົ່ມໃຫ້ໃຜ? ຊຶ່ງໝາຍຄວາມວ່າຄົນທັງຫລາຍໄວຕໍ່ການຮັບຜິດຊອບວ່າເຮັດວຽກໜັກ ຫລືເຂົາເຈົ້າຈົ່ມ ວ່າຄົນອື່ນບໍ່ຊ່ວຍ?* (ລໍຖ້າຟັງຄຳຕອບ)

5. *ເຮົາເຫັນວ່າມາທາມີຄວາມກ້າຫ່າວຫາພຣະເຢຊູວ່າພຣະອົງບໍ່ສົນໃຈຕໍ່ບັນຫາຂອງນາງ. ໃນສມັຍທຸກມື້ນີ້, ຄົນທັງ ຫລາຍໄດ້ຈົ່ມໃຫ້ຄົນອື່ນຢູ່ບໍ ທັງໆ ທີ່ສະຖານະການແລະທາງເລືອກກໍແມ່ນເຂົາເຈົ້າຕັດສິນໃຈເອງ?* (ລໍຖ້າຟັງຄຳ ຕອບ) *ຫລືຄົນທັງຫລາຍໄດ້ຕຳໜິພຣະເຈົ້າຢູ່ບໍ ທັງໆ ທີ່ເຂົາເຈົ້າໄດ້ເລືອກເຮັດເອງແລະເມື່ອສະຖານະການບໍ່ເຂົ້າ ຂ້າງຕົນ ແລະຍັງເວົ້າອີກວ່າພຣະເຈົ້າບໍ່ໄດ້ເປັນຫ່ວງ?* (ລໍຖ້າຟັງຄຳຕອບ)

6. *ເຮົາເຫັນວ່າ ມາທາຮູ້ວ່າພຣະເຢຊູເປັນພຣະອາຈານແລະມີພວກລູກສິດຕິດຕາມ. ນາງເອີ້ນພຣະເຢຊູວ່າ "ນາຍ ເອີຍ" ຊຶ່ງເປັນຖ້ອຍຄຳທີ່ມີຄວາມໝາຍວ່ານາງເຫັນພຣະອົງເປັນຜູ້ນຳຂອງນາງ, ເປັນຜູ້ທີ່ມີຕຳແໜ່ງສູງກວ່ານາງ ແລະນາງໄດ້ໃຊ້ພຣະອົງໃຫ້ແກ້ໄຂບັນຫາຂອງນາງ. ໃນສມັຍທຸກມື້ນີ້ ເມື່ອຄົນມີບັນຫາ(ແມ່ນແຕ່ບັນທີ່ເຂົາເຈົ້າ ສ້າງຂຶ້ນມາເອງ) ແລະໄດ້ອະທິຖານຕໍ່ພຣະເຈົ້າແຫ່ງຈັກກະວານແລະບອກພຣະອົງໃຫ້ຊ່ວຍແກ້ບັນຫາ ມີຢູ່ບໍ?* (ລໍຖ້າຟັງຄຳຕອບ)

   ຄົນເຮົາເຮັດຢ່າງນັ້ນໃນທາງໃດແດ່? (ລໍຖ້າຟັງຄຳຕອບ) ເຫັນວ່າຖືກຕ້ອງຢູ່ບໍທີ່ເອີ້ນພຣະເຈົ້າວ່າ "ອົງພຣະຜູ້ເປັນ

ເຈົ້າ" ແລ້ວບອກພຣະອົງວ່າຕ້ອງຊ່ວຍແກ້ບັນຫາແນວໃດ ຊຶ່ງແມ່ນບັນຫາເຮົາສ້າງຂຶ້ນເອງ? (ລໍຖ້າຟັງຄຳຕອບ)

7. *ການຕໍ່ວ່າເປັນສິ່ງທີ່ໜ້າສົນໃຈ. ພຣະເຈົ້າຈະຮູ້ສຶກຢ່າງໃດເມື່ອຄົນເຮົາເຮັດເກີນກຳລັງຂອງຕົນ ແລ້ວມາຕໍ່ວ່າພຣະເຈົ້າວ່າ, "ພຣະອົງບໍ່ສົນໃຈແດ່ບໍ ທີ່ຄົນອື່ນບໍ່ຊ່ວຍຂ້ານ້ອຍ?"* (ລໍຖ້າຟັງຄຳຕອບ)

8. *ເຮົາພົບວ່າມາຣີອາໄດ້ເລືອກເອົາສິ່ງທີ່ດີ ແຕ່ມາທາຜູ້ເປັນເອື້ອຍໄດ້ຕໍ່ວ່າການເລືອກຂອງນ້ອງສາວ. ໃນທຸກມື້ນີ້ມີຢູ່ບໍທີ່ບາງຄົນໄດ້ເລືອກສິ່ງທີ່ດີແລ້ວຖືກຄົນອື່ນຕຳໜິຕິຕຽນ?* (ລໍຖ້າຟັງຄຳຕອບ) *ມັນເກີດຂຶ້ນແນວໃດແດ່? ເກີດຂຶ້ນຢູ່ໃສ? ບາງເທື່ອອາດຈະເກີດຂຶ້ນຢູ່ເຮືອນ ບ່ອນເຮັດງານ ທີ່ໂຮງຮຽນ ໃນວົງການການຮັບໃຊ້ ບາງເທື່ອກໍຢູ່ໃນກຸ່ມຜູ້ຮັບໃຊ້ນຳກັນມີຢູ່ບໍ?* (ລໍຖ້າຟັງຄຳຕອບ)

9. *ເຮົາຮູ້ສຶກແນວໃດເມື່ອເຮົາເລືອກສິ່ງທີ່ດີແຕ່ຖືກຄົນອື່ນຕຳໜິເຮັດໃຫ້ອາຍ?* (ລໍຖ້າຟັງຄຳຕອບ) *ເຮົາໄດ້ເຫັນວ່າພຣະເຢຊູໄດ້ຈັດການກັບຄວາມບໍ່ຮູ້ຈັກໂຄຣົບຂອງຄົນອື່ນ. ໃນຕອນນີ້ເຮົາໄດ້ຮຽນຮູ້ຫຍັງຈາກພຣະອົງ?*

10. *ເປັນໄປໄດ້ບໍ່ທີ່ເຮົາຈະເຮັດງານທີ່ໃຊ້ເຫື່ອແຮງເໝືອນກັບມາທາແລະໃນເວລາດຽວກັນເຮົາກໍຮຽນຮູ້ຈາກພຣະເຈົ້າໄປນຳ? ຈົ່ງຍົກຕົວຢ່າງອະທິບາຍສັ້ນໆ.* (ລໍຖ້າຟັງຄຳຕອບ)

11. *ໃນອີກທາງນຶ່ງ ທ່ານຄິດບໍ່ວ່າຄົນໃດຄົນນຶ່ງອາດຈະເປັນເໝືອນມາຣີອາທີ່ກຳລັງສຶກສາພຣະຄຳພີ ແຕ່ໃນໃຈຂອງລາວກໍຄິດເຖິງສິ່ງອື່ນໆ? (ລໍຖ້າຟັງຄຳຕອບ) ທ່ານເອງ ຫລືຄົນທີ່ທ່ານຮູ້ຈັກເຄີຍເປັນແບບນີ້ຫລືບໍ່?* (ລໍຖ້າຟັງຄຳຕອບ)

12. *ຄັ້ງນຶ່ງຂ້າພະເຈົ້າອ່ານພຣະຄຳພີ, ອະທິຖານ ແຕ່ໃຈພັດລ່ອງລອຍໄປທາງອື່ນ ຄິດເຖິງການງານແລະເຣື່ອງອື່ນໆ ທ່ານເຄີຍມີປະສົບການແບບນີ້ບໍ? ອີງຕາມເຣື່ອງມາທາແລະມາຣີອາ ທ່ານຈະຍົກຕົວຢ່າງເຣື່ອງໃຈລອຍນີ້ຢ່າງໃດ?.* (ລໍຖ້າຟັງຄຳຕອບ)

13. *ພຣະເຢຊູຊົງກ່າວກັບມາທາວ່າ ມາຣີອາໄດ້ເລືອກເອົາສິ່ງທີ່ບໍ່ມີໃຜຍາດເອົາໄປຈາກນາງໄດ້. ໃນທຸກມື້ນີ້ ມີບໍ່ຜູ້ທີ່ເລືອກເອົາຄວາມສັມພັນກັບພຣະເຢຊູກ່ອນສິ່ງອື່ນ, ເຊື່ອໃນພຣະອົງ, ສແວງຫາໃຫ້ມີຊີວິດທີ່ເລິກເຊິ່ງກັບພຣະອົງຫລາຍຂຶ້ນ ຫລືເລືອກທີ່ຈະຮັບໃຊ້ພຣະອົງເຕັມເວລາ? ຈົນຖືກຄອບຄົວ ແລະສັງຄົນຕິຕຽນ?* (ລໍຖ້າຟັງຄຳຕອບ) *ການເລືອກແບບໃດທີ່ເຮັດໃຫ້ເກີດຄວາມຂັດແຍ່ງຂຶ້ນ?* (ລໍຖ້າຟັງຄຳຕອບ)

14. *ລອງຄິດເບິ່ງກ່ຽວກັບສາສນາ. ໃນສາສນານັ້ນ ຜູ້ທີ່ເຊື່ອໄດ້ເຮັດບາງສິ່ງເພື່ອຍ້ອງຍໍ ສັຣເສີນສິ່ງສັກສິດບໍ່, ຜູ້ທີ່ເຊື່ອຖືສາສນານັ້ນໄດ້ຮັບສິ່ງໃດລ້ຳໆ ຈາກສິ່ງສັກສິດໃນສາສນານັ້ນບໍ່? ໃນເຣື່ອງນີ້ໄດ້ຊ່ວຍໃຫ້ເຮົາຮູ້ວ່າ ແມ່ນການກະທຳແບບໃດທີ່ອົງພຣະເຢຊູໃຫ້ຄຸນຄ່າທີ່ສຸດ?* (ລໍຖ້າຟັງຄຳຕອບ)

15. *ຕາມທີ່ເຮົາເຫັນໃນເຣື່ອງນີ້ ເມື່ອມາທາຮູ້ວ່າວຽກງານທີ່ນາງກຳລັງເຮັດນັ້ນຫລາຍເກີນກຳລັງ ນາງຈຶ່ງອ່ອຍໄປກ່າວໂທດພຣະເຢຊູກັບນາງມາຣີອາ ລາວບໍ່ໄດ້ຕຳໜິຕົນເອງ. ເມື່ອມາທາເຫັນວ່າລາວບໍ່ສາມາດເຮັດງານນັ້ນໃຫ້ສຳເຣັດໄດ້ ລາວຄວນຈະຖາມພຣະເຢຊູວ່າລາວຈະຕ້ອງເຮັດແນວໃດ. ສຳລັບເຮົາເອງເມື່ອພົບກັບປັນຫາກ່ຽວກັບວຽກງານຫລາຍເກີນໄປ ເຮົາຄວນຈະເຮັດຢ່າງໃດ ເຮົາໄດ້ຮຽນຮູ້ຫຍັງກ່ຽວກັບການເລືອກທີ່ຖືກຕ້ອງ?* (ລໍຖ້າຟັງຄຳຕອບ)

16. *ພຣະເຢຊູຊົງຍົກຍ້ອງມາຣີອາທີ່ນາງໄດ້ເລືອກຟັງພຣະອົງ ເຖິງແມ່ນການກະທຳຂອງນາງນັ້ນກົງກັນຂ້າມກັບຄວາມຄິດຂອງຄົນອື່ນແລະຂັດກັບປະເພນີ, ສິ່ງນີ້ໄດ້ສອນຫຍັງໃຫ້ແກ່ເຮົາ?* (ລໍຖ້າຟັງຄຳຕອບ) *ໃນການສແວງຫາພຣະເຈົ້າແລະການໃຊ້ເວລາກັບພຣະອົງ ເຮົາເຄີຍເລືອກເຮັດທີ່ຂັດກັບປະເພນີແລະຄວາມຕ້ອງການຂອງຄົນອື່ນຫລືບໍ່? ຂັດຢ່າງໃດ?* (ລໍຖ້າຟັງຄຳຕອບ)

ທ່ານກຳລັງສເນີເຣື່ອງມາທາ ມາຣີອາ ໂດຍໃຊ້ວິທີເລົ່າເຣື່ອງເຈາະໃຈ
ທ່ານອາດຈະຈົບເຣື່ອງລົງໃນທາງທີ່ແຕກຕ່າງກັນໄປ ແລະອາດຈະຈົບລົງດ້ວຍການອະທິຖານ
ຫລືອາດຈະຖາມເພີ້ມເຕີມດັ່ງນີ້;

- ພີ່ນ້ອງໄດ້ຮຽນຫຍັງຈາກເຣື່ອງນີ້?
- ພຣະເຈົ້າໄດ້ຊີ້ໃຫ້ເຮົາເຫັນຫຍັງແດ່?
- ທ່ານໄດ້ຮຽນຮູ້ຫຍັງແດ່ກ່ຽວກັບພຣະເຈົ້າ?
- ມີຫຍັງແດ່ທີ່ທ່ານຄົ້ນພົບ?

ໃນພາກເພີ້ມເຕີມ ຂ. ຍັງຈະມີການຄົ້ນຫາຂຸມຊັບໃນເຣື່ອງແບບເລິກເຊິ່ງເພີ້ມເຕີມອີກ ເຊັ່ນວິທີການຕຽມຄຳຖາມ ແລະເດີນຜ່ານໄປຕາມຕົວຢ່າງ.

ການເສີມສ້າງໃນທາງບວກ.

ຄຸນຄ່າທີ່ໄດ້ເພີ້ມເຕີມຈາກການຄົ້ນຫາຂຸມຊັບໃນເຣື່ອງນັ້ນແມ່ນ ຜູ້ຟັງຈະຮູ້ເຣື່ອງເປັນຢ່າງດີ ຫລັງຈາກຄົ້ນພົບຂຸມຊັບແລ້ວເຂົາເຈົ້າກໍນຳມາໃຊ້ໃນຊີວິດ ຜູ້ເລົ່າອາດຈະຊ່ອຍສິ່ງເສີມເຂົາເຈົ້າໃນການຮຽນເພື່ອເຮັດໃຫ້ເຣື່ອງລາວທີ່ໄດ້ຮຽນຝັງແໜ້ນຢູ່ໃນຊີວິດຂອງເຂົາເຈົ້າ.

ຍົກຕົວຢ່າງເຊັ່ນ ໃນການຝຶກອົບຮົມໂດຍການປະຕິບັດຕົວຈິງ 5 ວັນ ຜູ້ເຂົ້າຮ່ວມຈະໄດ້ຮຽນເຣື່ອງທັງໝົດ 21 ເຣື່ອງ ຫລັງຈາກນັ້ນເຂົາເຈົ້າຈະຕ້ອງພຍາຍາມທີ່ຈະຈື່ຈຳໃຫ້ໄດ້ທຸກເຣື່ອງທີ່ໄດ້ຮຽນ ຄືຕ້ອງມີການເລົ່າລົ້ມຄືນ ຝຶກຝົນຕົນເອງ ເພື່ອໃຫ້ເຣື່ອງເລົ່ານັ້ນຝັງຢູ່ໃນຄວາມຊົງຈຳຕລອດໄປ.

ບາງເທື່ອເຮົາອາດຈະຂໍໃຫ້ຜູ້ທີ່ມາຮ່ວມ ຝຶກຊ້ອມເລົ່າເຣື່ອງໃຫ້ກັນແລະກັນຟັງ ຫລືອາດຈະຂໍໃຫ້ບາງຄົນແຕ່ງເປັນກອນ ແຕ່ງເປັນເພງ ຫລືແນວໃດກໍໄດ້ທີ່ອອກມາໃນຮູບແບບເລົ່າປາກເປົ່າ ເພື່ອຈະຈື່ເຣື່ອງໄດ້ງ່າຍຂຶ້ນແລະຊ່ອຍໃຫ້ຜູ້ເລົ່າເຣື່ອງເລົ່າໄດ້ຢ່າງຖືກຕ້ອງ ກໍເຫັນວ່າເປັນການດີທັງນັ້ນ

ການສ້າງສັນເພື່ອຊິດຊ່ອຍຢູ່ເບື້ອງຫລັງແບບນີ້ເປັນສິ່ງຈຳເປັນ ໂດຍສະເພາະຜູ້ທີ່ອ່ານບໍ່ໄດ້ແລະບໍ່ມີພຣະຄັມພີເປັນພາສາຂອງເຂົາເຈົ້າເອງ ແລະເຣື່ອງທີ່ອັດບັນທຶກໄວ້ກໍບໍ່ມີໃນພາສາທີ່ເຂົາເຈົ້າເຂົ້າໃຈໄດ້. ຜູ້ທີ່ມາຝຶກອົບຮົມທີ່ອ່ານແລະຂຽນບໍ່ໄດ້ ແລະຜູ້ທີ່ຢູ່ໃນກຸ່ມພາສາທີ່ບໍ່ມີໃນພຣະຄັມພີ ຫລືບໍ່ມີເຣື່ອງພຣະຄັມພີ ກໍຍິ່ງຕ້ອງການຄວາມຊ່ວຍເຫລືອຫລາຍ.

ເມື່ອພວກເຮົາ(ອົງການ)ປະສົບກັບບັນຫາແບບນີ້ ກໍເຮັດໃຫ້ພວກເຮົາຫາທາງແກ້ໄຂຢ່າງມີຄຸນພາບ ຖ້າຫາກກຸ່ມຜູ້ຟັງຕ້ອງການຢາກອັດສຽງຂອງເຣື່ອງໄວ້ເປັນພາສາຂອງເຂົາເຈົ້າ ໂອກາດທີ່ດີທີ່ສຸດແມ່ນການຈັດໃຫ້ມີເວລາໃນການຝຶກອົບຮົມໃຫ້ມີການອັດສຽງເພື່ອເຂົາເຈົ້າຈະໄດ້ເອົາເມືອຟັງຢູ່ບ້ານເຮືອນຂອງຕົນ.

ໃນຊ່ວງເວລາ 2-3 ປີໃນການເລົ່າເຣື່ອງເຈາະໃຈ ພວກເຮົາຄິດເຖິງຄຳວ່າ **"ຖົ່ງໃຈ"** ພວກເຮົາບອກຜູ້ຟັງວ່າ "ເມື່ອ ພວກທ່ານໄດ້ຮຽນຮູ້ເຣື່ອງແລ້ວ ເຣື່ອງເຫລົ່ານັ້ນກໍຢູ່ໃນຖົ່ງໃຈຂອງທ່ານ"

ຕໍ່ມາອີກພວກເຮົາພົບບັນຫາກັບຄົນທີ່ອ່ານບໍ່ໄດ້ ເຂົາເຈົ້າໄດ້ຮຽນຫລາຍກວ່າຮ້ອຍເຣື່ອງ ເຂົາເຈົ້າຮູ້ເຣື່ອງເລົ່ານັ້ນດີ ແຕ່ຍ້ອນວ່າເຂົາເຈົ້າບໍ່ສາມາດຈົດຊື່ເຣື່ອງເຫລົ່ານັ້ນໄດ້ ເຂົາເຈົ້າກໍເລີຍບໍ່ຮູ້ວ່າມີເຣື່ອງໃດແດ່ທີ່ເຂົາເຈົ້າໄດ້ຮຽນໄດ້ ຈີ່ຈຳຜ່ານມາແລ້ວ.

ຍ້ອນເຫດຜົນດັ່ງກ່າວນີ້ ເຮັດໃຫ້ພວກເຮົາພັທະນາປຶ້ມ **"ຖົ່ງໃຈ"** ຂຶ້ນມາ ເປັນບັດຂນາດນ້ອຍທີ່ມີຮູບພາບຂອງແຕ່ລະ ເຣື່ອງເພື່ອຊ່ວຍໃຫ້ເຂົາເຈົ້າຈີ່ເຣື່ອງເຫລົ່ານັ້ນໄດ້ ແຕ່ບໍ່ແມ່ນຮູບໄອຄອນສຳລັບເອົາມາຈີ່ຈຳ ແຕ່ຫາກເປັນຮູບສັນຍາ ລັກຂອງແຕ່ລະເຣື່ອງ ພວກເຮົາກໍເຄືອບບັດຮູບເຫລົ່ານັ້ນໄວ້ແລ້ວເຈາະເປັນຮູເອົາເຫລັກຫ້ວງຮ້ອຍໄວ້ເໝືອນກັບພວງ ລູກກຸນແຈ ດັ່ງນັ້ນເຂົາເຈົ້າຈຶ່ງມີບັດຮູບດັ່ງກ່າວເປັນຂອງສ່ວນຕົວເອົາຕິດຖົ່ງໄປນຳ ແມ່ນແຕ່ຄົນທີ່ອ່ານອອກຂຽນໄດ້ ກໍມັກປຶ້ມນ້ອຍດັ່ງກ່າວນີ້ເໝືອນກັນ.

ພວກເຮົາຈຶ່ງຂອບພຣະຄຸນພຣະເຈົ້າທີ່ໃຫ້ພວກເຮົາມີຄຳຕອບທີ່ມີຄຸນພາບ.

✞

ບົດທີ 6

ວິທີການນຳພາສົນທະນາແລກປ່ຽນຄວາມຄິດເຫັນ

ເມື່ອເຮົາກຳລັງຢູ່ໃນຊ່ວງສົນທະນາ ພຣະເຈົ້າຈະຊົງປະທານປະສົບການໃນອະດີດ ແລະຄວາມຮູ້ໃນພຣະຄັມພີໃຫ້ແກ່ເຮົາ ເພື່ອໃຫ້ສາມາດຕັ້ງຄຳຖາມ ພຣະວິນຍານບໍຣິສຸດຊົງຮູ້ວ່າຄວນຈະໂອ້ລົມກັນເຣື່ອງໃດ ພຣະອົງຈະຊົງນຳພາໃນທຸກໆ ຕອນໃນຂະນະທີ່ທ່ານກຳລັງສອນ.

ຄວາມສາມາດຢ່າງນຶ່ງທີ່ສຳຄັນຫລາຍນັ້ນແມ່ນ **"ການຟັງແລະການຕອບກັບຄືນ"** ໃນຂະນະທີ່ຕຽມເຣື່ອງທ່ານຈະຕ້ອງຕັ້ງໃຈຟັງພຣະຄຳຂອງພຣະເຈົ້າ ໃນຖານະທ່ານເປັນຄົນເລົ່າເຣື່ອງທ່ານຈະຕ້ອງຕອບກັບຄືນໃນສິ່ງທີ່ພຣະເຈົ້າຊົງສຳແດງໃຫ້ທ່ານເຫັນໃນເຣື່ອງນັ້ນ ແລະໃນຖານະທີ່ທ່ານເປັນຄົນເລົ່າເຣື່ອງ ທ່ານຈະຕ້ອງຟັງຄົນອື່ນໃຫ້ດີແລະຕອບເຂົາເຈົ້າກັບຄືນໃຫ້ໄດ້ດີ ເຊັ່ນດຽວກັນ.

ພໍ່ຕູ້ທີ່ຮັກ

ເມື່ອເຖິງຍາມນັ້ນຂອງແຕ່ລະມື້ ປະຊາຊົນໃນບ້ານພາກັນໄປເຕົ້າໂຮມຫຸ້ມພວກຜູ້ເຖົ້າເພື່ອສົນທະນາ. ບາງຄົນເລືອກຟັງຜູ້ເຖົ້າທີ່ເລົ່າເຣື່ອງສລາດໃຫ້ຟັງ; ຄົນອື່ນໆມັກໄປຢູ່ກັບຜູ້ເຖົ້າທີ່ນັ່ງຟັງຄົນທັງຫລາຍເວົ້າ; ແຕ່ຄົນສ່ວນຫລາຍໃນບ້ານມັກໄປໃຊ້ເວລາກັບພໍ່ຕູ້ຄົນນຶ່ງເປັນພິເສດ. ຄວາມຈິງແລ້ວໄຫບ້ານນີ້ເອີ້ນລາວວ່າ "ພໍ່ຕູ້ທີ່ຮັກ."

ເຖິງພໍ່ຕູ້ທີ່ຮັກນີ້ບໍ່ຄ່ອຍໄດ້ເລົ່າເຣື່ອງທີ່ສລາດກໍຕາມ, ແຕ່ລາວເປັນຄົນຟັງທີ່ດີ. ແຕ່ນອກຈາກຄວາມສາມາດນີ້ແລ້ວ ພໍ່ຕູ້ຄົນນີ້ຍັງເປັນຄົນເລິກເຊິ່ງ; ລາວແບ່ງປັນສະຕິປັນຍາໃຫ້ຄົນອື່ນໆໂດຍໃຫ້ໂອກາດຄິດ ແລະຄົ້ນພົບເອງ. ເຖິງວ່າລາວຈະມີສະຕິປັນຍາຫລາຍກວ່າຄົນທັງຫລາຍກໍຕາມ, ລາວຊັກຊວນໃຫ້ຄົນທັງຫລາຍທີ່ມາຫາລາວແບ່ງປັນແລະສະແດງຄວາມຄິດເຫັນ; ຫລາຍເທື່ອພໍ່ຕູ້ນີ້ຈະບໍ່ເວົ້າຫຍັງ ເຖິງລາວຈະຮູ້ຄຳຕອບແລ້ວກໍຕາມ ການກະທຳເຊັ່ນນີ້ເປັນໂອກາດໃຫ້ຜູ້ທີ່ມາຫາລາວໄດ້ຮຽນຄິດ ແລະຮຽນແກ້ບັນຫາ.

ພໍ່ຕູ້ທີ່ຮັກນີ້ຍັງສິ່ງເສີມໃຫ້ເມັ່ງ, ລູກຊາຍ, ແລະລູກສາວຂອງລາວສະແດງຄວາມຄິດເຫັນ. ລາວບໍ່ຢ້ານທີ່ຈະໃຫ້ຜູ້ອື່ນເວົ້າ ເພາະລາວຮູ້ວ່າລາວເອງມີຄວາມຮູ້ອັນຍິ່ງໃຫຍ່ຢູ່ແລ້ວ. ລາວຮູ້ດີວ່າ ຖ້າລາວສາມາດຊ່ວຍຄົນອື່ນໃຫ້ມີຄວາມກ້າຫານແລະຄວາມໝັ້ນໃຈຫລາຍຂຶ້ນ, ພວກເຂົາກໍຈະເຫັນຄຸນຄ່າໃນການນຳພາຂອງລາວຫລາຍຂຶ້ນເຊັ່ນກັນ.

ສິ່ງທີ່ດີກໍຄື ພວກຜູ້ທີ່ຕິດຕາມລາວພາກັນຮຽນແບບການນຳພາຂອງລາວ ແລະເຂົາເຈົ້າກໍໜູນໃຈຄົນອື່ນໆໃຫ້ຄົ້ນພົບສະຕິປັນຍາ. ລູກໆຂອງພໍ່ຕູ້ຄົນນີ້ໄດ້ເຕີບໃຫຍ່ເປັນຄົນສລາດແລະມີຄວາມໝັ້ນໃຈ, ແລະເຂົາເຈົ້າກໍເດີນຕາມຮອຍພໍ່ຂອງເຂົາເຈົ້າ.

ຕອນນຶ່ງ ພຣະຄັມພີໄດ້ເວົ້າເຖິງການເລີ້ມຕົ້ນຮັບໃຊ້ຂອງພຣະເຢຊູ ທີ່ມີຄົນເຖິງ 5000 ຄົນມາຟັງຄຳສອນຂອງພຣະອົງ. ແຕ່ຄົນທັງຫລາຍຕ້ອງການອາຫານ; ພຣະເຢຊູໄດ້ຖາມພວກສາວົກ, ຊຶ່ງມີຟີລິບຮ່ວມຢູ່ດ້ວຍ, ແລະໃຫ້ໂອກາດເຂົາເຈົ້າໄດ້ຄິດເພື່ອຈະແກ້ໄຂບັນຫາ; ແຕ່ບໍ່ມີໃຜທີ່ໄດ້ສະແດງຄວາມເຕີບໃຫຍ່ພໍ ໂດຍຂໍໃຫ້ພຣະເຢຊູເຮັດການອັສຈັນ. ສະນັ້ນພຣະເຢຊູຊົງໄດ້ໃຫ້ຄຳຕອບແກ່ພວກເຂົາໂດຍການເຮັດການອັສຈັນ ຄືປ່ຽນອາຫານຂອງເດັກຄົນນຶ່ງໃຫ້ກາຍເປັນອາຫານເພື່ອລ້ຽງຄົນທັງໝົດ.

ມີອີກຫລາຍໆເທື່ອ ທີ່ພຣະເຢຊູໄດ້ໃຫ້ໂອກາດພວກສາວົກແລະຄົນອື່ນໆໃຫ້ຄິດແລະຕອບຄຳຖາມຕາມທັສນະຂອງພຣະເຈົ້າ. ພຣະເຢຊູຊົງສືບຕໍ່ຝຶກສອນພວກສາວົກເປັນເວລາເຖິງສາມປີ ໂດຍໜູນໃຈພວກເພິ່ນໃຫ້ຟັງຖ້ອຍ

ຄຳຂອງພຣະອົງ, ໃຊ້ຄວາມຄິດ, ມີຄວາມເຊື່ອ ແລະໃຊ້ສະຕິປັນຍາ. ພຣະເຢຊູໄດ້ຈັດຕຽມພວກເພິ່ນເພື່ອຮັບໃຊ້ ແລະນຳພາຄົນອື່ນ.

ໃນມື້ນີ້ ເມື່ອພວກເຮົາສົນທະນາແລກປ່ຽນຄວາມຄິດເຫັນກັນໃນຮູບແບບການເລົ່າເຣື່ອງເຈາະໃຈ ຫລາຍຄົນທີ່ເຂົ້າ ມາມີສ່ວນຮ່ວມນັ້ນເປັນຜູ້ນຳໃນຄອບຄົວ ຫລືເປັນຜູ້ຮັບໃຊ້ຢູ່ແລ້ວ ດັ່ງນັ້ນເຂົາເຈົ້າຈຶ່ງມີຄວາມຮູ້ຫລາຍກວ່າຄົນທັງ ຫລາຍທີ່ເຂົາເຈົ້ານຳພາແລະສັ່ງສອນຢູ່ ພວກເຮົາຂໍຕົບມືຍ້ອງຍໍທີ່ພວກຜູ້ນຳເຫລົ່ານັ້ນບໍ່ຮີບຕອບໃນທັນທີ ແຕ່ເຂົາ ເຈົ້າໃຫ້ຄົນອື່ນໄດ້ມີໂອກາດຄິດແລະຕອບຄຳຖາມ.

ຂໍຍ້ອງຍໍຊົມເຊີຍທີ່ໄດ້ເຫັນຜູ້ນຳເຫລົ່ານີ້ທີ່ມີປັນຍາ ມີຄວາມໝັ້ນໃຈ ທີ່ປ່ອຍໃຫ້ຄົນອື່ນໄດ້ໂຕ້ຕອບເຮັດໃຫ້ພວກເຮົາມີ ຄວາມສນຸກຊື່ນຊົມຍິນດີຫລາຍ ພວກເຮົາເຫັນວ່າການໃຫ້ຄົນອື່ນໄດ້ໃຊ້ຄວາມຄິດແລະຕອບກັບນັ້ນໄດ້ຊີ້ບອກພວກ ເຮົາວ່າຄວາມຄິດຂອງເຂົາເຈົ້າມີຄຸນຄ່າຢ່າງຍິ່ງ ພວກຜູ້ນຳເຫລົ່ານີ້ກຳເປັນເໝືອນພໍ່ຕູ້ທີ່ຮັກແລະອົງພຣະເຢຊູ ເພາະ ເຂົາເຈົ້າຮູ້ຈັກວິທີສ້າງຄວາມໝັ້ນໃຈໃຫ້ແກ່ຄົນອື່ນ ພວກຜູ້ນຳເຫລົ່ານີ້ຮູ້ດີວ່າບັນດາຜູ້ຮ່ວມຟັງການເລົ່າເຣື່ອງຕ້ອງໄດ້ ຮັບສະຕິປັນຍາຈາກເຂົາເຈົ້າ ແລະສາມາດແບ່ງປັນ ອອກຄວາມຄິດເຫັນໃນເວລາອັນເໝາະສົມ.

ຄວາມທ້າທາຍໃນການຟັງແລະການຕອບກັບ

ຕອນທຳອິດ ທີ່ທ່ານພຍາຍາມສ້າງຄວາມສາມາດໃນການເລົ່າເຣື່ອງເຈາະໃຈນັ້ນ ກໍມີຫລາຍຢ່າງທີ່ທ່ານຕ້ອງໄດ້ຮຽນ ຮູ້ແລະຈື່ຈຳໄວ້. ຜູ້ທີ່ມາຟັງການເລົ່າເຣື່ອງເຈາະໃຈໃໝ່ ມັກສົນໃຈແຕ່ການນຳສເນີເຣື່ອງ ການເລົ່າເຣື່ອງ ການຮຽບ ຮຽງເປັນລຳດັບ ເປັນຂັ້ນເປັນຕອນແລະການຕັ້ງຄຳຖາມ ແຕ່ກໍເປັນໜ້າສົນໃຈທີ່ມຸ້ງໝັ້ນເອົາໃຈໃສ່ໃນຂະບວນການ ສອນຈົນເຮັດໃຫ້ເບິ່ງຂ້າມສິ່ງທີ່ສຳຄັນໄປນັ້ນຊຶ່ງໄດ້ແກ່ "ຄົນຟັງ" ໜ້າທີ່ຂອງທ່ານທີ່ເປັນຜູ້ເລົ່າເຣື່ອງກໍຄືນຳພາຜູ້ຟັງ ສົນທະນາເຣື່ອງລາວໃນພຣະຄັມພີ ຖ້າທ່ານບໍ່ຟັງໃຫ້ດີເມື່ອເຂົາເຈົ້າເວົ້າແລະຖາມ ແລະທ່ານບໍ່ຍອມຕອບກັບຄືນໃນ ສິ່ງທີ່ເຂົາເຈົ້າສເນີມາ ການສົນທະນາແລກປ່ຽນຄວາມຄິດເຫັນກໍຈະບໍ່ເກີດຂຶ້ນ.

ວິທີການທີ່ດີທີ່ສຸດໃນການກະຕຸ້ນ ສ້າງສັນຄວາມຄິດກໍຄື "ການສົນທະນາ" ຫລັງຈາກທີ່ໄດ້ຄົ້ນພົບຂຸມຊັບອັນມີຄ່າ ຢ່າງຫລວງຫລາຍໃນເຣື່ອງແລ້ວ ກໍເປັນການດີທີ່ຈະເວົ້າເຖິງເຣື່ອງທີ່ເລົ່ານັ້ນກັບບັນດາຜູ້ຟັງ ດັ່ງນັ້ນແທນທີ່ຜູ້ເລົ່າ ເຣື່ອງຈະມົວເມົານຳແຕ່ຄວາມຄິດທີ່ວ່າ ຈະສເນີເຣື່ອງນີ້ຢ່າງໃດ ຈະວາງແຜນການເວົ້າຢ່າງໃດ ຈະຕັ້ງຄຳຖາມຢ່າງ ໃດ ຈະຟັງຄົນໃນກຸ່ມຢ່າງໃດ ຂໍໃຫ້ທ່ານສົນທະນາເຣື່ອງທີ່ເລົ່ານັ້ນກັບເຂົາເຈົ້າ ສົນທະນາໃນຫົວຂໍ້ເຫລົ່ານັ້ນ.

ໃນຣະຫວ່າງການສົນທະນາ ທ່ານອາດຈະໃຊ້ຄຳຖາມເພື່ອຊ່ວຍເລີ້ມຕົ້ນໃນການສົນທະນາໃນຂະນະທີ່ເລົ່າເຣື່ອງ ໄປນຳ ຫວັງວ່າຄຳຖາມຂອງທ່ານຈະຊ່ວຍໃຫ້ຄົນໃນກຸ່ມໄດ້ພົບຂຸມຊັບທີ່ທ່ານໄດ້ພົບໄວ້ກ່ອນແລ້ວໃນຕອນທີ່ທ່ານ ຕຽມເຣື່ອງ ເຮົາທຸກຄົນໄດ້ເວົ້າໂອ້ລົມກັບຄົນອື່ນໆ ທຸກມື້ໂດຍທີ່ບໍ່ໄດ້ຈົດບັນທຶກໃດໆ ໄວ້ ເຮົາໂອ້ລົມກັນ ບໍ່ວ່າເຣື່ອງ ໃດໆ ກໍຕາມທີ່ເຮົາສົນໃຈ ຈະເຮັດໃຫ້ເຮົາຜ່ອນຄາຍຄວາມຕຶງຄຽດ ໃນຂະນະທີ່ຄ່ອຍໆ ໂອ້ລົມໃນເຣື່ອງນັ້ນ ແທ້ຈິງ ແລ້ວການຟັງແລະການຕອບກັບ ເປັນຫົວໃຈຂອງການເລົ່າເຣື່ອງ ຄວາມໝາຍຂອງ **"ການເລົ່າເຣື່ອງເຈາະໃຈ"** ນັ້ນ ແມ່ນ **ການຟັງແລະການຕອບກັບ** ນັ້ນເອງ.

ການຟັງແລະການຕອບກັບຈາກການກະທຳ

ເຣື່ອງນຶ່ງທີ່ເຮົາຂຸດຄົ້ນກໍຄື ເພງສັຣເສີນ 23 ຄົນສ່ວນຫລາຍຈະຄຸ້ນເຄີຍກັບພຣະຄຳຕອນນີ້ດີ ເມື່ອອ່ານໄປຊ້ຳໆ ແລະຖາມໄປນຳ ຈະຊ່ອຍໃຫ້ເຮົາໄດ້ຍິນສິ່ງພຣະເຈົ້າປະທານໄວ້ໃຫ້ເຮົາ ຢ່າງໜ້າປລາດໃຈ.

ຄັ້ງນຶ່ງທ່ານ ຣາເມຊ ຊຶ່ງເປັນ "ຜູ້ອຳນວຍການພະແນກ 'ໂລກຊາວພຸດ' " ຂອງພວກເຮົາ ໄດ້ເລົ່າໃຫ້ຟັງວ່າ ລາວໄດ້ສອນພຣະທັມເພງສັຣເສີນ 23 ແບບການເລົ່າເຣື່ອງເຈາະໃຈ (ຄິດເບິ່ງດູ ລາວເປັນຄົນເນປານທີ່ພວກເຮົາເຄີຍອົບຮົມການເລົ່າເຣື່ອງເຈາະໃຈໃຫ້) ຂ້າພະເຈົ້າຮູ້ສຶກວ່າເປັນຕາຫົວທີ່ລາວໃຊ້ພຣະທັມສັຣເສີນ 23 ສອນດ້ວຍວິທີເລົ່າເຣື່ອງເຈາະໃຈນີ້ ຂ້າພະເຈົ້າກໍເລີຍຂໍໃຫ້ລາວສອນພວກເຮົາ ແລະເປັນວັນທີ່ພວກເຮົາບໍ່ສາມາດລືມໄດ້ຕລອດຊີວິດ.

ເບິ່ງຈາກຄຳບອກເລົ່າຂ້າງເທິງນີ້ ຂ້າພະເຈົ້າຈຶ່ງຊ້າໃນການຟັງເຣື່ອງແລະຟັງຜູ້ເລົ່າ ແລະຂ້າພະເຈົ້າກໍໄດ້ທົດລອງວິທີທີ່ທ່ານ ຣາເມຊ ໄດ້ຢາຍເຂົ້າຈີ່ປ່ຽງນ້ອຍໆ ໃຫ້ຂ້າພະເຈົ້າຕິດຕາມມາຈົນໃກ້ຊຸມຊັບ ແລ້ວລາວກໍຖອຍອອກໄປ່ອຍໃຫ້ຂ້າພະເຈົ້າພົບກັບຊຸມຊັບດ້ວຍຕົວເອງ ລາວຈະຟັງແລະເຈາະປ່ອງນ້ອຍໆໃຫ້ຂ້າພະເຈົ້າໄດ້ເບິ່ງເຫັນພໍລາໆ ໃນທີ່ສຸດຈາກປ່ອງນ້ອຍໆ ນັ້ນ ຂ້າພະເຈົ້າກໍເຫັນຊຸມຊັບນັ້ນແຈ້ງຂຶ້ນແລະສາມາດຂຸດຄົ້ນຂຶ້ນມາໄດ້ດ້ວຍຕົວເອງ.

ທ່ານ ຣາເມຊ ຈະໃຊ້ຄຳຖາມຕລອດທັ້ງເຣື່ອງ ແຕ່ຂໍ້ມູນທີ່ຊ່ອຍຜູກພັນເຣື່ອງນັ້ນໄວ້ຍັງຄົງຢູ່ເທົ່າທຸກວັນນີ້ ສຳລັບຂ້າພະເຈົ້າເອງ ຈະຖາມຂ້າມໄປເປັນບາງຄັ້ງ ແຕ່ຈະເນັ້ນຄຳຖາມທີ່ເຊື່ອມໂຍງເຣື່ອງໃຫ້ເຂົ້າດ້ວຍກັນ.

ທ່ານ ຣາເມຊ ຖາມວ່າ, "ທຳອິດ, ແກະໄດ້ເວົ້າເຖິງຜູ້ລ້ຽງຂອງມັນວ່າຢ່າງໃດ?" ຂ້າພະເຈົ້າກໍຕອບຕາມທີ່ເຄີຍຮຽນຮູ້ມາວ່າ, "ຜູ້ລ້ຽງຂອງຂ້ອຍ....ໝາຍຄວາມວ່າ ເຮົາຮູ້ຈັກພຣະເຢຊູເປັນສ່ວນຕົວໄດ້" ແຕ່ທ່ານ ຣາເມຊ ບ່ຍອມໃຫ້ຂ້າພະເຈົ້າກ້າວຂ້າມໄປກ່ອນໄວໂພດ ໃນການເລົ່າເຣື່ອງເຈາະໃຈເຮົາຈະຕ້ອງຟັງຢ່າງຕັ້ງໃຈວ່າ ເຣື່ອງນັ້ນໄດ້ເລົ່າຢ່າງໃດ ແລ້ວເຮົາຈຶ່ງຊອກຫາທາງນຳມາໝູນໃຊ້ກັບຕົວເຮົາ.

ທ່ານ ຣາເມຊ ບັງຄັບໃຫ້ຂ້າພະເຈົ້າຊ້າລົງແລະຟັງ ວ່າເຣື່ອງຈະເປັນຢ່າງໃດ ໃຫ້ເບິ່ງພຣະຄຳຕອນນີ້ຢ່າງລະອຽດດີ ລາວພະຍາຍາມໃຫ້ຂ້າພະເຈົ້າຕັ້ງໃຈຟັງຢ່າງເອົາຈິງເອົາຈັງ.

ຂ້າພະເຈົ້າຈຶ່ງຕົກລົງຍອມຟັງລາວ ເພາະຄິດວ່າຈະກວດສອບເບິ່ງວິທີການຂອງລາວ ແທ້ຈິງແລ້ວຂ້າພະເຈົ້າສົງສັຍວ່າ ມັນເປັນໄປໄດ້ແນວໃດທີ່ນັກຮຽນຂອງຂ້າພະເຈົ້າຈະມາສອນພຣະຄຳທີ່ຂ້າພະເຈົ້າທັ້ງຮູ້ດີແລະທັ້ງໄດ້ສອນມາຕັ້ງຫລາຍເທື່ອແລ້ວ ແຖມຍັງເປັນຜູ້ຊຽນບົດສອນອີກດ້ວຍ.

"ນີ້ແມ່ນແກະເປັນຜູ້ເວົ້າແມ່ນບໍ່" ລາວຖາມ, ຂ້າພະເຈົ້າກໍງຶກຫົວຕອບ

"ຄັນຊັ້ນ ແກະຕົວນີ້ເວົ້າເຖິງຜູ້ລ້ຽງຂອງມັນໄດ້ຢ່າງໃດ ມັນເວົ້າເຖິງຜູ້ລ້ຽງວ່າຢ່າງໃດ?" ຂ້າພະເຈົ້າເລີຍຖາມລາວວ່າ ທ່ານໝາຍຄວາມວ່າ ແກະກຳລັງເອີ້ນຜູ້ລ້ຽງວ່າ "ພຣະອົງ" ຈັ່ງຊັ້ນບໍ? "ແມ່ນແລ້ວ" ທ່ານ ຣາເມຊ ຕອບຂ້າພະເຈົ້າ "ທ່ານເຫັນບໍ່ວ່າ ມັນເບິ່ງຜູ້ລ້ຽງວ່າມາຈາກໃສ?" ລາວຖາມຂ້າພະເຈົ້າເພີ້ມເຕີມ. ຂ້າພະເຈົ້າຈຶ່ງຕອບໄປວ່າ, ແມ່ນທ່ານເວົ້າຫຍັງ?' ຂ້າພະເຈົ້າບໍ່ເຂົ້າໃຈ.

"ແກະຕົວທີ່ກ່ຽວຂ້ອງກັບຜູ້ລ້ຽງ ມັນຢູ່ບ່ອນໃດ? ທ່ານເຫັນຫລືບໍ່?" ຣາເມຊ ຖາມຈົ້ເຂົ້າເພາະລາວຢາກໃຫ້ຂ້າພະເຈົ້າເຫັນສິ່ງທີ່ຂ້າພະເຈົ້າບໍ່ເຄີຍພົບມາກ່ອນ (ໃນການເລົ່າເຣື່ອງເຈາະໃຈ ເຮົາມັກເວົ້າຈີ້ຈ້ໃຫ້ຄົນອື່ນເຫັນສິ່ງທີ່ເຮົາເຫັນຢູ່ໃນເຣື່ອງ ແຕ່ໃນຈຸດນີ້ ຣາເມຊ ເຄີຍຮຽນນຳຂ້າພະເຈົ້າ ລາວຕ້ອງການແບ່ງປັນຄວາມເຂົ້າໃຈຂອງລາວເປັນຢ່າງຍິ່ງ ໃນການຟັງແລະຕອບກັບ ຕອນນີ້ ຣາເມຊ ຮູ້ວ່າ ການທີ່ລາວເວົ້າຈີ້ຈ້ໃຫ້ຂ້າພະເຈົ້າຊ້າລົງແລະຄິດໃຫ້ດີໆ ນັ້ນ ເປັນເຣື່ອງທີ່ຮັບເອົາໄດ້ ເພາະວ່າພວກເຮົາທັ້ງສອງຮູ້ຈັກກັນດີ)

"ອືມ....ເດົາເອົາວ່າ ຖ້າຫາກແກະມີຄົນນຳ ກຳໜາຍຄວາມວ່າຜູ້ລ້ຽງຈະຢູ່ທາງໜ້າແກະແມ່ນບໍ່?"
"ແມ່ນແລ້ວ ຖືກແລ້ວ" ຣາເມຊ ຮ້ອງອອກມາ "ແລະມາເບິ່ງຕອນທີ່ມັນເຂົ້າໄປໃນຄວາມມືດມົນອັນເລິກລັບ (ຫຸບເຂົາເງົາມັດຈຸຣາດ) ມັນເວົ້າເຖິງຜູ້ລ້ຽງວ່າຢ່າງໃດ?" ຂ້າພະເຈົ້າຕອບລາວວ່າ, "ພຣະອົງ"

"ລອງເບິ່ງໃຫ້ຄັກໆ ອີກເທື່ອ" ຣາເມຊກະຕຸ້ນເຕືອນຂ້າພະເຈົ້າ "ໃນເຣື່ອງບອກວ່າຂ້າພຣະອົງກໍຈະບໍ່ຢ້ານ **ເພາະວ່າພຣະອົງຊົງຢູ່ກັບຂ້າພຣະອົງ** ແກະມັນເອີ້ນຜູ້ລ້ຽງຢ່າງໃດ ມັນກ່າວເຖິງຜູ້ລ້ຽງແບບໃດ?"
"ໂອ..ໂຈະບຶດນຶ່ງ" ຂ້າພະເຈົ້າບອກລາວ "ເຂົ້າໃຈແລ້ວ ເພາະມີການປ່ຽນແປງ ໃນຕອນນີ້ແກະກຳລັງ<u>ເວົ້າກັບ</u>ຜູ້ລ້ຽງຂອງມັນ ມັນບໍ່ໄດ້<u>ເວົ້າ</u>ເຖິງຜູ້ລ້ຽງອີກແລ້ວ ແຕ່ມັນເວົ້າໜ້າຕໍ່ໜ້າກັບຜູ້ລ້ຽງ ວ້າວ...ຍອດຢ້ຽມອີຫລີ"

ຣາເມຊ ເວົ້າຕໍ່ໄປວ່າ, "ແມ່ນແລ້ວ ແລະເບິ່ງຕໍ່ໄປວ່າ ຜູ້ລ້ຽງຢູ່ບ່ອນໃດ ຕອນນີ້ມີການປ່ຽນແປງເດີ ເບິ່ງແມ"
"ເບິ່ງຫຍັງເນາະ?" ຂ້າພະເຈົ້າຖາມລາວ
"ເບິ່ງວ່າມີຫຍັງປ່ຽນແປງໄປ ເບິ່ງຄັກໆ ກ່ອນໜ້ານັ້ນຜູ້ລ້ຽງຢູ່ທາງໜ້າຝູງແກະ ຕອນນີ້ຜູ້ລ້ຽງຢູ່ບ່ອນໃດ?"
"ໂອເຄ ເຫັນຕອນນີ້ແລ້ວ" ຂ້າພະເຈົ້າຕອບ "ທຳອິດຜູ້ລ້ຽງຢູ່ທາງໜ້າ ຕໍ່ມາຜູ້ລ້ຽງຢູ່ກັບຝູງແກະ"

"ຖືກຕ້ອງ ຕອນທຳອິດຜູ້ລ້ຽງນຳໜ້າຝູງແກະໄປ ຕອນນີ້ຢູ່ນຳຝູງແກະ" ຣາເມຊຍິ້ມຢ່າງໃຫຍ່ "ແຕ່ຍັງບໍ່ໝົດພຽງທ່ານັ້ນ ອ່ານຕໍ່ໄປ ໃນເຣື່ອງເວົ້າເຖິງ "ພຣະອົງ" ອີກ ແກະໄດ້ເວົ້າວ່າ, ພຣະອົງ...ຖອກນ້ຳມັນຫອມໃສ່ເທິງຫົວຂ້າພຣະອົງ ຖ້າຫາກພຣະອົງຖອກນ້ຳມັນໃສ່ເທິງຫົວແກະ ຕອນນີ້ພຣະອົງຢູ່ບ່ອນໃດ?
"ເອີ...ຂ້າພະເຈົ້າເຫັນແລ້ວ ຕອນນີ້ພຣະອົງຢູ່ເໜືອ(ທາງເທິງ)ແກະ"
"ອ່ານຕໍ່ໄປ" ຣາເມຊໄດ້ໜູນໃຈຂ້າພະເຈົ້າ "ໃນເຣື່ອງບອກວ່າ ຄວາມດີແລະຄວາມຮັກຂອງພຣະອົງຈະຢູ່ກັບຂ້າພຣະອົງຕລອດຊົ່ວຊີວິດ....ແກະຮູ້ສຶກວ່າ ພຣະອົງຊົງຢູ່ບ່ອນໃດ ໃນຕອນນີ້?"
"ອືມ...ເຫັນແລ້ວ ເຫັນແລ້ວ ຍອດຢ້ຽມອີຫລີ" ຂ້າພະເຈົ້າເຫັນນຳ

ຕອນນີ້ໜ້າຕາຂອງຣາເມຊ ຍິ້ມເປັນປະກາຍ "ພຣະຜູ້ລ້ຽງຊົງຢູ່ທາງໜ້າ, ຊົງຢູ່ນຳ, ຊົງຢູ່ເບື້ອງເທິງ, ຊົງຕິດຕາມ ແລະຊົງຢູ່ອ້ອມຮອບຕົວແກະ"

ຕ່ຈາກນັ້ນ ພວກເຮົາກໍມາເຖິງຕອນຈົບ ພວກເຮົາຈຶ່ງຄົ້ນຫາການນຳມາໃຊ້ໃນຊີວິດຝ່າຍວິນຍານ ພວກເຮົາຈຶ່ງລົມກັນວ່າມີຫຍັງແດ່ທີ່ເຮົາຈະນຳມາໃຊ້ຈາກສິ່ງທີ່ເຮົາເຫັນຢູ່ໃນເຣື່ອງ ນີ້ແມ່ນການຄົ້ນພົບໃໝ່ທີ່ອ້າງອີງມາເຖິງພຣະເຢຊູ ວ່າພຣະອົງຊົງເປັນຜູ້ລ້ຽງຂອງເຮົາ ພຣະອົງຊົງຢູ່ທາງໜ້າ, ຊົງຢູ່ນຳ, ຊົງຢູ່ເໜືອ(ຂ້າງເທິງ), ແລະຢູ່ອ້ອມຮອບເຮົາ.

ພຣະອົງຊົງຄອບຄອງການສົນທະນາຂອງພວກເຮົາ ເມື່ອຮູ້ຢ່າງນີ້ແລ້ວ ເຮັດໃຫ້ໃຈຂອງພວກເຮົາມີຄວາມສຸກຫຼາຍ

ຄວາມຄິດເຫັນຕອນທ້າຍ: ບາງຄັ້ງເມື່ອພວກເຮົາກັບມາທີ່ສຳນັກງານ ເພື່ອນຮ່ວມງານກໍຈະມາໂອ້ລົມເຣື່ອງຄວາມຜິດພາດຂອງພວກເຮົາ ແລະເຫັນວ່າພຣະເຈົ້າຊົງເມດຕາແລະຊ່ວຍເຮົາໃຫ້ຜ່ານໄປໄດ້ເທື່ອແລ້ວເທື່ອເລົ່າ ຂ້າພະເຈົ້າມີຄວາມເຫັນວ່າ, "ພຣະເຈົ້າຊົງຢູ່ຂ້າງເຮົາ ໃນຂະນະທີ່ພວກເຮົາທ້າທາຍເຂົາເຈົ້າ ພຣະເຈົ້າຊົງເປັນຜູ້ສນັບສນູນຢ່າງເຂັ້ມແຂງ ພຣະອົງຊົງກ່າວວ່າ, "ເຮັດຕໍ່ໄປຢ່າກັງວົນ ເຮົາຈະປົກປ້ອງເຈົ້າແລະຈະຄອຍດູແລ ບ່ໃຫ້ໃຜລັກເຂົ້າມາລອບກັດເຈົ້າ..."

ແລະແລ້ວພຣະທັມເພງສັຣເສີນບົດນີ້ກໍກັບມາຫາຂ້າພະເຈົ້າ "ໂອ...ເພງສັຣເສີນ 23 ນີ້ເອີຍ...ພຣະເຈົ້າຊົງປົກປ້ອງພວກເຮົາ....ແລະໄດ້ບອກກັບພວກເຮົາເຊັ່ນດຽວກັນວ່າ....ຄວາມດີແລະຄວາມຮັກຂອງພຣະອົງຈະຢູ່ກັບຂ້າພຣະອົງຕລອດຊ່ວຊີວິດຂອງຂ້າພຣະອົງ"

ການແລກປ່ຽນຢ່າງນີ້ ທີ່ຜູ້ເຊື່ອທ້ອງຖິ່ນມີໂອກາດສອນຄົນທີ່ມາຈາກປະເທດຕາເວັນຕົກ ມາຈາກຢູໂຣບ ໄດ້ກາຍເປັນເຣື່ອງທັມມະດາໄປແລ້ວ. ມິສຊັນນາຣີໃນປະເທດອິນເດັຽ ໂຕໂກ ໂມແຊມບິກ ໄນຈີເຣັຽ ຟິລິບປິນຕ່າງກໍພາກັນເຂົ້າມາຝຶກອົບຮົມການເລົ່າເຣື່ອງເຈາະໃຈນຳຄຣູທີ່ເປັນຄົນທ້ອງຖິ່ນ.

ໃນທີ່ສຸດ ການເລົ່າເຣື່ອງເຈາະໃຈມາຈົບລົງທີ່ຄົນ ຄົນທີ່ຟັງຄົນອື່ນ ຄົນທີ່ຟັງພຣະຄຳຂອງພຣະເຈົ້າ ການຟັງແລະການຕອບກັບນັ້ນມີໄວ້ໃຫ້ສຳລັບທຸກຄົນ ຜົນທີ່ໄດ້ຮັບນັ້ນແມ່ນ ຄົນທີ່ໄດ້ຍົນສຽງຂອງພຣະເຈົ້າບ່ພຽງແຕ່ຄົນທີ່ເປັນຜູ້ນຳສູງສຸດເທົ່ານັ້ນທີ່ແບ່ງປັນຄວາມຮູ້ໃຫ້ແກ່ຄົນອື່ນໆ ແຕ່ຄົນທີ່ເປັນຄຣູທ້ອງຖິ່ນກໍໄດ້ຝຶກອົບຮົມບັນດາມິສຊັນນາຣີສາມສີ່ລຸ້ນຕໍ່ໆ ກັນໄປເໝືອນກັນ.

ລາຍລະອຽດທີ່ນຳໄປສູ່ຄວາມສຳເຣັດ

ພວກເຮົາເຊື່ອວ່າ ລາຍງານທີ່ເລົ່າມານັ້ນຈະຊ່ວຍບັນດົນໃຈໃຫ້ທ່ານໄດ້ຮຽນຮູ້ການເລົ່າເຣື່ອງເຈາະໃຈແລະເພີ້ມພູນຄວາມສາມາດໃໝ່ໆ ສເມີ ໃນຕອນນີ້ໃຫ້ພວກເຮົາເລີ້ມຕົ້ນຊ່ວຍຜູ້ທີ່ອ່ານອອກຂຽນໄດ້ກ່ອນ ເຖິງແມ່ນທ່ານຄິດວ່າທ່ານບ່ສາມາດຈື່ຈຳຄຳຖາມໄດ້ແລະຕ້ອງໄດ້ຈົດໄວ້ກໍຕາມ ແຕ່ມັນສຳຄັນຫລາຍທີ່ທ່ານຈະຕ້ອງບ່ຈົດຄຳຖາມທີ່ກ່ຽວຂ້ອງກັບເຣື່ອງທີ່ທ່ານເລົ່າ ການຄິດເຖິງຄຳຖາມໄດ້ໂດຍຄິດໄປຕາມເນື້ອເຣື່ອງ ໃຫ້ເນື້ອເຣື່ອງນັ້ນຊ່ວຍທ່ານໃຫ້ຄິດເຫັນຄຳຖາມທີ່ຕຽມໄວ້ໄດ້ ເຣື່ອງລາວກໍຈະກາຍເປັນວິທີ່ຊ່ວຍຄວາມຈື່ຈຳ **ເນື້ອເຣື່ອງຈະກາຍເປັນການຈົດບັນທຶກຂອງທ່ານ.**

ຄິດທົບທວນຄຳນຳຂອງທ່ານ. ໃນຕອນນີ້ທ່ານໄດ້ຄົ້ນພົບຂຸມຊັບທີ່ຊຸກເຊື່ອງໄວ້ຢ່າງຫລວງຫລາຍ ທ່ານອາດຈະມີການແກ້ໄຂຄຳນຳຂອງທ່ານໂດຍການເພີ້ມເຂົ້າຫລືຕັດອອກຕາມຄວາມເໝາະສົມ ຖ້າທ່ານຫາກເຫັນວ່າຂໍ້ມູນມີຢູ່ໃນເຣື່ອງແລ້ວກໍຄວນຕັດຕອນນັ້ນອອກຈາກຄຳນຳ.

ຍົກຕົວຢ່າງເຊັ່ນ ທ່ານອາດຈະວາງແຜນເຮັດ "ຄຳນຳ" ຈາກພຣະທັມປະຖົມມະການ 12:1-9 "ເຣື່ອງນີ້ເປັນເຣື່ອງ

ຂອງຊາຍຄົນນຶ່ງທີ່ພຣະເຈົ້າຊົງຮຽກເອີ້ນໃຫ້ອອກຈາກຄອບຄົວແລະປະເທດຂອງລາວເພື່ອໄປສ້າງຊາດໃໝ່" ແຕ່ເມື່ອທ່ານໃຊ້ເວລາຄິດໃນຂະນະທີ່ຄົ້ນຫາຂຸມຊັບໃນເຣື່ອງນີ້ຢູ່ ທ່ານຈະເຫັນວ່າຂໍ້ມູນດັ່ງກ່າວນີ້ມີຢູ່ໃນເຣື່ອງອັບຣາມແລ້ວ ດັ່ງນັ້ນທ່ານກໍສາມາດເອົາຂໍ້ມູນນີ້ອອກຈາກຄຳນຳໄດ້.
ແຕ່ຖ້າທ່ານເກີດມີຄວາມເຂົ້າໃຈເຣື່ອງລາວແລະເຫັນວ່າຂໍ້ມູນບາງຢ່າງຄວນຈະເພີ້ມເຂົ້າ ທ່ານກໍສາມາດເພີ້ມເຂົ້າໃສ່ໃນຄຳນຳໄດ້.

ເໝືອນດັ່ງ ນຶ່ງໃນຂຸມຊັບທີ່ເຮົາພົບໃນເຣື່ອງຂອງມາທາ ມາຣີອາ ເປັນເຣື່ອງທີ່ມາທາໄດ້ເລືອກວ່າຈະຄົວກິນຢ່າງຫຼວງຫລາຍເພື່ອລ້ຽງແຂກ ອີກປະການນຶ່ງທີ່ເຮັດໃຫ້ເຮົາຕິກໃຈນັ້ນແມ່ນ ຄຳເວົ້າຂອງມາທາທີ່ເວົ້າກັບພຣະເຢຊູ ຊຶ່ງເຫັນວ່າເປັນຄຳສັ່ງໃຫ້ພຣະອົງເຮັດຕາມຄຳສັ່ງຂອງລາວຕໍ່ໜ້າພວກສາວົກຂອງພຣະອົງ ເຣື່ອງນີ້ເລີ້ມຕົ້ນເມື່ອພຣະເຢຊູກັບພວກສາວົກເຂົ້າໄປໃນເມືອງນຶ່ງ ແຕ່ຢູ່ໃນເຣື່ອງເຮົາຮູ້ວ່າ ພຣະເຢຊູໄດ້ຮັບເຊີນຈາກມາທາ ແຕ່ບໍ່ໄດ້ຂຽນໄວ້ວ່າມີພວກສາວົກຢູ່ນຳໃນທີ່ນັ້ນ.

ເພື່ອໃຫ້ຄົນຟັງເຂົ້າໃຈຄວນຈະເລີ້ມຕົ້ນເຣື່ອງດັ່ງນີ້ "ເມື່ອພຣະເຢຊູຊົງຢູ່ໃນໂລກນີ້ ພຣະອົງຊົງເລືອກບາງຄົນໃຫ້ເປັນສາວົກຕິດຕາມພຣະອົງໄປ ບໍ່ວ່າພຣະອົງຈະໄປມາທາງໃດພວກສາວົກຈະຕິດຕາມພຣະອົງໄປສເມີ ຍົກເວັ້ນເມື່ອພຣະຄັມພີເວົ້າວ່າພຣະອົງສະເດັດໄປຜູ້ດຽວ ຫລືບາງຄັ້ງພຣະອົງຈະເອົາແຕ່ສອງຫລືສາມຄົນໄປນຳ" ຂໍ້ມູນດັ່ງກ່າວນີ້ຈະເຮັດໃຫ້ຜູ້ຟັງເຂົ້າໃຈວ່າ ພຣະເຢຊູໄປເຮືອນມາທາພ້ອມກັບພວກສາວົກຂອງພຣະອົງ.

ໃນຖານະທີ່ເຮົາເປັນຄົນເລົ່າເຣື່ອງ ເຮົາຕ້ອງລະນຶກຢູ່ສເມີວ່າຈະມີຄົນນຶ່ງຫລືຫລາຍຄົນບໍ່ມີຄວາມຮູ້ໃນພຣະຄັມພີເລີຍ ນອກຈາກໃນບົດນຳຂອງເຣື່ອງທີ່ທ່ານເລົ່າ ດັ່ງນັ້ນຖ້າຈະໃຫ້ການສົນທະນາແລກປ່ຽນຄວາມຄິດເຫັນປະສົບຄວາມສຳເຣັດເປັນຢ່າງດີ ກໍຈຳເປັນທີ່ຈະຕ້ອງໃຫ້ຂໍ້ມູນກັບຜູ້ຟັງໃນຄຳນຳຂອງເຣື່ອງ ຫລືຢູ່ໃນເຣື່ອງຢ່າງຊັດແຈ້ງ.

ຖ້າທ່ານຫາກໄດ້ສອນຫລາຍເຣື່ອງພໍສົມຄວນແລ້ວ ທ່ານກໍສາມາດຕັ້ງຄຳຖາມທີ່ຄ້າຍຄືກັນທີ່ເຄີຍພົບເຫັນໃນເຣື່ອງກ່ອນໆ ນັ້ນໄດ້ເໝືອນກັນ ຈົ່ງລະນຶກຢູ່ສເມີວ່າສ່ວນຫລາຍເຣື່ອງຕ່າງໆໃນພຣະຄັມພີມີຂໍ້ມູນຢ່າງຫລວງຫລາຍຢູ່ແລ້ວ ທ່ານບໍ່ຈຳເປັນຕ້ອງໄປຄົ້ນຄວ້າຫາຂໍ້ມູນຈາກບ່ອນອື່ນມາເພີ້ມເຕີມ.

ໃນບາງໂອກາດ ກໍມີການໃຫ້ຂໍ້ມູນເພີ້ມເຕີມໃນຄຳນຳ ຕົວຢ່າງເຊັ່ນ ກົດຂອງພຣະເຈົ້າກ່ຽວກັບຄົນເປັນຂີ້ທູດ, ວັນຊະບາໂຕ, ການກິນດື່ມ ຫລືຄວາມຮູ້ສຶກຂອງຄົນຢິວທີ່ມີຕໍ່ຄົນຊະມາເຣັຍ ຂໍ້ມູນເຫລ່ານີ້ຈະຊ່ວຍໃຫ້ຜູ້ຟັງເຂົ້າໃຈດີຂຶ້ນ. ຢ່າງໃດກໍຕາມ, ບໍ່ວ່າສິ່ງໃດທີ່ເຮົາເອົາໃສ່ໃນຄຳນຳຈະຕ້ອງໄດ້ມາຈາກພຣະຄັມພີ ບໍ່ແມ່ນເອົາມາຈາກທາງອື່ນ. ເຮົາຮູ້ວ່າພຣະຄັມພີເທົ່ານັ້ນທີ່ບໍ່ປ່ຽນແປງ ເປັນແຫລ່ງທີ່ໄວ້ວາງໃຈໄດ້. ອີກປະການນຶ່ງ, ຖ້າຂໍ້ມູນທີ່ເຮົາໃຊ້ບໍ່ໄດ້ມາຈາກພຣະຄັມພີກໍຈະເຮັດໃຫ້ຜູ້ທີ່ບໍ່ມີຄວາມຮູ້ສາສນາສາດ ຫລືການຕີຄວາມໝາຍພຣະຄັມພີ ຮູ້ສຶກວ່າເຂົາເຈົ້າບໍ່ສາມາດຮ່ວມຟັງເຣື່ອງນຳໄດ້ ເພາະເຂົາເຈົ້າບໍ່ມີຄວາມຮູ້ພຽງພໍແລະບໍ່ມີອຸປກອນໃນການຝຶກອົບຮົມ.

ເຊັ່ນດຽວກັນ ຫລັງຈາກໄດ້ສົນທະນາແລກປ່ຽນຄວາມຄິດເຫັນໃນການເລົ່າເຣື່ອງແລ້ວ ທ່ານອາດຈະແນະນຳ "ສັນຍາລັກ" ບາງຢ່າງທີ່ຢູ່ໃນເຣື່ອງໃຫ້ຜູ້ຟັງເຂົ້າໃຈ ເພື່ອຊ່ວຍໃຫ້ຜູ້ຟັງໄດ້ຄົ້ນພົບຄວາມໝາຍຂອງສັນຍາລັກດ້ວຍການເລົ່າເຣື່ອງອື່ນໆ ຕໍ່ໄປ ນຳເຂົາເຈົ້າເຂົ້າໄປສູ່ເຣື່ອງໃໝ່ ຫລືຂໍ້ໃໝ່ໃນພຣະຄັມພີໂດຍເລົ່າແບບເຈາະໃຈ ຖ້າທ່ານເຫັນ

ວ່າຜູ້ຟັງຈະເຂົ້າໃຈດີຂຶ້ນກໍຈິ່ງກະທຳຕາມທີ່ກ່າວມານັ້ນ ແຕ່ກໍຂຶ້ນຢູ່ກັບວ່າອົງພຣະວິນຍານບໍຣິສຸດຈະຊົງນຳທ່ານໃຫ້ເຮັດເຊັ່ນນັ້ນຫລືບໍ່.

ການເພີ້ມຂໍ້ມູນເຂົ້າໃນຄຳນຳຈະຕ້ອງເຮັດໃຫ້ຊັດແຈ້ງ ແລະງ່າຍຕໍ່ການທີ່ຈະນຳໄປໝູນໃຊ້ໃນຊີວິດຝ່າຍວິນຍານ ຊຶ່ງອາດຈະເລີ້ມຕົ້ນວ່າ, "ມີເຣື່ອງນຶ່ງເກີດຂຶ້ນ ຫລັງຈາກເຣື່ອງນີ້ດົນນານມາແລ້ວ..." ແລ້ວທ່ານກໍນຳຜູ້ຟັງເຂົ້າໄປສູ່ພຣະຄຳຕອນທີ່ມີສັນຍາລັກຫລືຮູບແບບທີ່ພິເສດ ສ່ວນຫລາຍເຣື່ອງທີ່ສອງຈະຢູ່ໃນພຣະຄັມພີໃໝ່.

ຕົວຢ່າງເຊັ່ນ ຖ້າທ່ານເລົ່າເຣື່ອງໂມເຊກັບງູທອງໃນພຣະທັມອົບພະຍົບ 21:4-9 ເມື່ອຄົນໃນກຸ່ມໄດ້ພົບກັບຊຸມຊັບ ແລະນຳໃຊ້ໃນຊີວິດແລ້ວ ທ່ານອາດຈະເວົ້າວ່າ, "ເຮົາຕ້ອງໃຊ້ເວລາຫລາຍ ທີ່ເຮົາຈະສົນທະນາເຣື່ອງໃນພຣະຄັມພີຫລາຍໆ ເຣື່ອງໄປພ້ອມກັນ ແຕ່ກໍມີບາງເຣື່ອງທີ່ເກີດຂຶ້ນໃນຍຸກຫລັງນີ້ທີ່ຢາກຈະເລົ່າສູ່ຟັງ ຄືເຣື່ອງໂມເຊກັບງູທອງ ຊຶ່ງອາດຈະຊ່ອຍເຮົາໃຫ້ຄົ້ນພົບຫລາຍໆ ສິ່ງ (ຖ້າຫາກມີເວລາພໍ ທ່ານອາດຈະນຳດ້ວຍການເລົ່າເຣື່ອງຈາກພຣະທັມໂຢຮັນ 3:1-16 ແຕ່ຖ້າຫາກເວລາໜ້ອຍກໍໃຫ້ນຳໂດຍເອົາຂໍ້ 1-13 ຮວມເຂົ້າກັນແລະເລົ່າສັ້ນໆ ທີ່ພຣະເຢຊູໄດ້ເລົ່າໃຫ້ຊາຍຄົນນຶ່ງຊື່ ນິໂກເດມ ຟັງ ໂຢຮັນ 14-16 ແຕ່ຕ້ອງຈື່ໄວ້ວ່າຈະຕ້ອງເລົ່າແບບເລົ່າເຣື່ອງເຈາະໃຈ.

> *ໂມເຊໄດ້ຍົກງູຂຶ້ນໃນປ່າສັນໃດ ບຸດມະນຸດຈະຕ້ອງຖືກຍົກຂຶ້ນສັນນັ້ນ ເພື່ອທຸກຄົນທີ່ວາງໃຈເຊື່ອໃນພຣະອົງຈະມີຊີວິດອັນຕລອດໄປເປັນນິດ ເພາະວ່າພຣະເຈົ້າຊົງຮັກໂລກຈົນໄດ້ປະທານພຣະບຸດອົງດຽວຂອງພຣະອົງ ເພື່ອທຸກຄົນທີ່ວາງໃຈເຊື່ອໃນພຣະບຸດນັ້ນຈະບໍ່ຈິບຫາຍ ແຕ່ມີຊີວິດອັນຕລອດໄປເປັນນິດ.*
> (**<u>ໝາຍເຫດ</u>**: ງູທອງ ແມ່ນສັນຍາລັກ ຂອງໄມ້ກາງແຂນ)

ຟັງການຕອບກັບຈາກຜູ້ຟັງເຣື່ອງ ຄຳຕອບທີ່ຜູ້ຟັງຕອບກັບມາຈະເຮັດໃຫ້ທ່ານໄດ້ຮູ້ວ່າ ເຂົາເຈົ້າຕ້ອງການຫຍັງ ແລະເຂົາເຈົ້າມີຄຳຖາມຫຍັງທີ່ສະເພາະເຈາະຈົງ ຖ້າທ່ານເຂົ້າໃຈກໍຈະຊ່ອຍໃຫ້ທ່ານຕັ້ງຄຳຖາມທີ່ເໝາະສົມໄດ້ ການກະທຳດັ່ງນີ້ເອີ້ນວ່າ, "ການສອນຈາກຊ່ວງເວລານັ້ນ"

ຄຳຖາມສ່ວນຫລາຍຈະກ່ຽວຂ້ອງກັບ "ການກະທຳ" ຂອງຄົນ ຫລືຂອງພຣະເຈົ້າ ຄຳຖາມເຫລົ່ານີ້ຈະຊ່ອຍໃຫ້ຜູ້ຟັງຄົ້ນພົບຄວາມຈິງຝ່າຍວິນຍານ ພຽງແຕ່ທົບທວນ ລຶ້ມຄືນເບິ່ງການກະທຳແລະຄຳເວົ້າຂອງບຸກຄົນໃນເຣື່ອງ. ແຕ່ໃຫ້ຫລີກເວັ້ນບໍ່ໃຊ້ຄຳຖາມທີ່ວ່າ **"ເປັນຫຍັງ?"** ເພາະຈະເຮັດໃຫ້ຜູ້ຟັງເດົາແລະຄາດຄະເນເຣື່ອງທີ່ເລົ່າໂດຍບໍ່ໄດ້ຮັບການສນັບສນູນຈາກຂໍ້ພຣະຄັມພີໃນຕອນນັ້ນ ແຕ່ຄວນໃຊ້ຄຳຖາມທີ່ວ່າ "ແມ່ນຫຍັງ?" ເປັນຫລັກ ແລະເປັນໜ້າສົນໃຈທີ່ພົບວ່າຄຳຕອບທີ່ອອກມານັ້ນບໍ່ກ່ຽວຂ້ອງກັບຄຳຖາມທີ່ວ່າ "ເປັນຫຍັງ?" ນັ້ນເລີຍ. *(ແມ່ນຫຍັງ? ກໍໝາຍເຖິງ "ແມ່ນສາຍເຫດອັນໃດ..? ແມ່ນເຫດຜົນອັນໃດ...? ແມ່ນສິ່ງໃດ...? ແມ່ນການກະທຳອັນໃດ..? ແມ່ນຄຳເວົ້າອັນໃດ..?)*

ການຕັ້ງຄຳຖາມທີ່ຊ່ອຍໃຫ້ເກີດມີການສັ່ງເກດ ຫລັງຈາກທີ່ໄດ້ເວົ້າເຖິງຕອນສັ້ນໆ ຂອງຕົ້ນເຣື່ອງແລ້ວ ອາດຈະໃຊ້ຄຳຖາມວ່າ, "ເຣື່ອງໃນຕອນທຳອິດນີ້ ໄດ້ບອກເຮົາເຖິງຄວາມເຊື່ອຂອງຄົນທີ່ຢູ່ໃນເຣື່ອງຢ່າງໃດ?" (ທ່ານອາດຈະເອ່ຍຊື່ຄົນໃດຄົນນຶ່ງໃນເຣື່ອງ) ...ຈາກເນື້ອເຣື່ອງນີ້ ຄົນຜູ້ນັ້ນມີບົດບາດໜ້າທີ່ສຳຄັນຢ່າງໃດ?

ຖາມຕໍ່ໄປວ່າ, "ມີຫຍັງແດ່ໃນຕອນນີ້ທີ່ບອກໃຫ້ເຮົາເຫັນພຣະລັກສະນະຂອງພຣະເຈົ້າ?" ຫລືຖາມວ່າ, "ເຮົາໄດ້ເຫັນ

ຄວາມສັດຊື່ຂອງພຣະເຈົ້າໃນຕອນນີ້ບໍ?" ເມື່ອເຮົາຄົ້ນຫາຊຸມຊັບໃນເຣື່ອງຕ່ໄປໃຫ້ເຮົາສັງເກດເບິ່ງວ່າບຸກຄົນທີ່ຢູ່ໃນເຣື່ອງໄດ້ສະແດງອາການດັ່ງຕ່ໄປນີ້ຫລືບໍ່...ບໍ່ໂຄຣິບນັບຖື, ຢ້ານກົວ, ໂລບມາກ, ສັບສົນໃຈ, ມີນ້ຳໃຈ, ກ້າຫານ, ມີຄວາມໄວ້ວາງໃຈ ຫລືສະແດງວ່າລາວມີປັນຍາຈາກຄຳເວົ້າແລະການກະທຳຂອງລາວແນວໃດແດ່ ຄຳຖາມຂ້າງເທິງຈະຕ້ອງໄດ້ຮັບຄຳຕອບມາຈາກເນື້ອເຣື່ອງທີ່ເລ່ົາ.

ຖ້າຫາກມີຄຳຖາມທີ່ຕ້ອງໄດ້ຕອບວ່າ ແມ່ນຫລືບໍ່ແມ່ນ ເຮົາອາດຈະຖາມຕ່ໄປຫາກຄຳຕອບໆ ວ່າ ແມ່ນ, ແລະຖາມເພີ້ມອີກວ່າ "ບອກໄດ້ບໍ່ວ່າ ທ່ານໄດ້ເຫັນຄຳຕອບຈາກເຣື່ອງໃນຕອນນີ້ຢ່າງໃດ (ຫລືຈາກບ່ອນໃດ?)"

ຊ່ອຍຜູ້ຟັງໃຫ້ນຳຄວາມຈິງຈາກເຣື່ອງໄປໝູນໃຊ້ ໃນຂະນະທີ່ສົນທະນາກັນເຖິງເຣື່ອງການນຳມາໃຊ້ໃນຊີວິດຝ່າຍວິນຍານ ຂໍໃຫ້ທ່ານຕັ້ງໃຈຟັງແລະຫາໂອກາດທີ່ຈະຖາມວ່າ ຕົວຜູ້ຟັງເອງຫລືຄົນທີ່ລາວຮູ້ຈັກເຄີຍມີປະຕິກິຣິຍາຫລືມີຄວາມຮູ້ສຶກແນວໃດໃນເຣື່ອງນີ້? (ເຊ່ັ່ນ ຢ້ານກົວ, ສົງສັຍ, ເຊື່ອ, ຫວັງໃຈ, ສັບສົນ) ເມື່ອລາວຕອບວ່າມີ ຫລືໄດ້ຄຳຕອບຈາກທ່າທາງວ່າ ມີ ກໍເປັນການດີທີ່ທ່ານຈະຖາມຕ່ໄປວ່າ "ມີໃຜຢາກຈະແບ່ງປັນປະສົບການດັ່ງກ່າວນີ້ບໍ່?"

ແບ່ງປັນການນຳໃຊ້ໃນຊີວິດສ່ວນຕົວ ເມື່ອທ່ານສົນທະນາເຣື່ອງການນຳໃຊ້ໃນຊີວິດຈົບລົງແລ້ວ ຖ້າຫາກພຣະເຈົ້ານຳ ທ່ານອາດຈະແບ່ງປັນຕ່ໄປວ່າ "ເຣື່ອງໃນຕອນນັ້ນໄດ້ຖືກກັບຊີວິດຂອງທ່ານຢ່າງໃດ?" ຫລືອາດຈະຖາມວ່າ, "ມີຕອນໃດໃນເຣື່ອງນີ້ທີ່ຖືກກັບຊີວິດຂອງພວກພີ່ນ້ອງແດ່?"

ສ່ວນປະກອບສຳຄັນຂອງຄຳຖາມທີ່ດີ ຄຳຕອບນັ້ນຈະຕ້ອງ...

- ມີຢູ່ໃນເຣື່ອງທີ່ເລ່ົາ
- ພິສູດໄດ້ດ້ວຍເຣື່ອງທີ່ເລ່ົານັ້ນ

ຂໍ້ມູນນອກເຣື່ອງ ຖ້າຫາກວ່າເຮົາຈຳເປັນຕ້ອງໃຊ້ຂໍ້ມູນທີ່ນອກເຣື່ອງເພື່ອຊ່ອຍໃຫ້ເກີດຄວາມເຂົ້າໃຈ ເຮົາກໍສາມາດເພີ້ມຂໍ້ມູນນັ້ນເຂົ້າໃສ່ໃນ "ຄຳນຳ" ຊຶ່ງເປັນຂໍ້ພຣະຄຳ ແລະຂໍ້ພຣະຄຳທີ່ເພີ້ມໃສ່ຄຳນຳນັ້ນອາດຈະໃຫ້ຜູ້ຟັງໄດ້ຮັບຟັງພ້ອມກັບເນື້ອເຣື່ອງກໍໄດ້.

ແຕ່ຖ້າເຮັດແບບນີ້ເລ້ືອຍໆ ຈະເຮັດໃຫ້ຜູ້ຟັງຄົ້ນຫາຄວາມຈິງຈາກຂໍ້ພຣະຄຳທີ່ເພີ້ມເຂົ້າໃສ່ ແທນທີ່ຈະຄົ້ນຫາຢູ່ພາຍໃນເຣື່ອງ ຫລືຜູ້ເລ່ົາອາດຈະຕັ້ງຄຳຖາມກ່ຽວກັບພຣະຄັມພີຈາກສິ່ງທີ່ຜູ້ຟັງເຄີຍໄດ້ຟັງຈາກເທ່ືອກ່ອນໆ ນັ້ນກໍໄດ້.

ຄຳຕອບທີ່ດີ ເມື່ອມີຜູ້ຕອບຄຳຖາມໄດ້ດີ ກໍໃຫ້ໝູນໃຈລາວເຊ່ັ່ນ, "ເຈ້ົາຕອບໄດ້ດີຫລາຍ" "ຂ້ອຍຄິດບໍ່ເຖິງເລີຍຈາກຄຳຕອບທີ່ເຈ້ົາຕອບ" "ເອີ...ເປັນຄຳຕອບທີ່ປະທັບໃຈຫລາຍ."

ຄຳຕອບທີ່ບໍ່ຄ່ອຍດີເທ່ົາໃດ ຖ້າທ່ານຄິດວ່າຜູ້ຟັງຕອບບໍ່ຄ່ອຍດີປານໃດທ່ານອາດຈະເວົ້າວ່າ, "ຢາກໃຫ້ກັບໄປເບ່ິງໃນເຣື່ອງອີກເທ່ືອ ວ່າມີຢູ່ໃນເຣື່ອງຫລືບໍ່?" ແຕ່ກໍຕ້ອງລະວັງໃນການໃຊ້ຄຳເວົ້າຂອງທ່ານ ເພື່ອຈະບໍ່ໃຫ້ຜູ້ຟັງນ້ອຍເນ້ືອຕ່ຳໃຈ.

ຖ້າຫາກຄຳຕອບຫລືຄຳຖາມຂອງຜູ້ຟັງອອກນອກເຣື່ອງ ທ່ານກໍສາມາດເວົ້າໄດ້ວ່າ, "ເຮົາຈະໂອ້ລົມກັນໃນເຣື່ອງນີ້ ຫລັງຈາກທີ່ເຮົາຮຽນຈົບລົງ" ຫລືອາດຈະເວົ້າວ່າ, "ບາງເທື່ອເຮົາອາດຈະພົບກັບຄຳຕອບໃນເຣື່ອງຕໍ່ໄປ" ຄຳຖາມ ບາງຢ່າງຈະບໍ່ພາໄປໃນທາງທີ່ດີ ຈະພາຄົນໃນກຸ່ມອອກນອກທາງ ຖ້າຫາກທ່ານຕອບຄຳຖາມເຫລົ່ານັ້ນຈະເຮັດໃຫ້ເສັງເວລາແລະຈະເຮັດໃຫ້ຄົນໃນກຸ່ມບໍ່ໄດ້ຮຽນຮູ້ສິ່ງທີ່ສົມຄວນຮູ້.

ຖ້າຫາກກຸ່ມຂ້ອນຂ້າງໃຫຍ່ແລະເວລາມີໜ້ອຍ. ການຖາມແລະການຕອບກັບ ເປັນວິທີຫລືເປັນຫົວໃຈຂອງການເລົ່າ ເຣື່ອງເຈາະໃຈ ຖ້າຫາກບໍ່ມີເວລາສຳລັບຄຳຕອບ ຫລືຖ້າກຸ່ມຫາກໃຫຍ່ເກີນໄປຈົນບໍ່ອາດໄດ້ຄຳຕອບນັ້ນກໍຍັງມີທາງ ເລືອກຢູ່ ຜູ້ເລົ່າເຣື່ອງອາດຈະຖາມແບບໂນ້ມນ້າວໃຈ ຄືໃຫ້ຜູ້ຟັງໄດ້ຄິດກ່ອນໂດຍທີ່ບໍ່ຕ້ອງເວົ້າອອກມາໃນທັນທີ ແຕ່ ຜູ້ເລົ່າເຣື່ອງຕ້ອງໝັ້ນໃຈວ່າໄດ້ໃຫ້ເວລາພຽງພໍແກ່ຜູ້ຟັງທີ່ຈະໃຊ້ຄວາມຄິດຢ່າງໜ້ອຍສອງຫລືສາມນາທີ ເພື່ອໃຫ້ເຂົາ ເຈົ້າສາມາດຕອບໄດ້.

ຮັກສາຄວາມຖືກຕ້ອງ: ຄຸນຄ່າຂອງການທົບທວນຄືນ

ຂໍ້ດີຂອງການສົນທະນາແລກປ່ຽນຄວາມຄິດເຫັນໃນຮູບແບບການເລົ່າເຣື່ອງເຈາະໃຈນັ້ນກໍແມ່ນ ເຄື່ອງມືໃນການທົບ ທວນຄືນ ການທົບທວນຄືນໃນການເລົ່າເຣື່ອງເຈາະໃຈຈະເກີດຜົນແລະໃຫ້ຄຸນຄ່າຫລາຍທີ່ສຸດ ເມື່ອເຮົານຳສເນີເຣື່ອງ ເປັນລຳດັບຕາມເຫດການຢ່າງຖືກຕ້ອງ ແທ່ນທີ່ຜູ້ເລົ່າເຣື່ອງຈະເປັນຜູ້ກ່າວຄຳນຳ ແຕ່ລາວອາດຂໍໃຫ້ຄົນທີ່ເຄີຍຟັງ ເຣື່ອງມາກ່ອນໃຫ້ເລົ່າທົບທວນລົ້ມຄືນແບບຫຍໍ້ໆ ທັງເນື້ອເຣື່ອງແລະສິ່ງທີ່ຄົ້ນພົບໃນເຣື່ອງ.

ອາດຈະມີຄົນໃໝ່ເຂົ້າມາຮ່ວມຮຽນນຳຫລືອາດຈະມີຄົນເກົ່າຂາດການຮຽນ ດັ່ງນັ້ນການທົບທວນຄືນກ່ອນຈະຮຽນກໍ ໄດ້ຊ່ວຍຄົນທີ່ຂາດມາຮຽນເທື່ອກ່ອນນັ້ນໄດ້ ການທີ່ໃຫ້ຜູ້ຮຽນໄດ້ຟັງການທົບທວນເຣື່ອງຄືນ ຈະຊ່ວຍໃຫ້ເຂົາເຈົ້າຈື່ ຈຳໄດ້ອີກ.

ບໍ່ພຽງແຕ່ເທົ່ານັ້ນ ທຸກຄົນຄວນຈະໄດ້ແບ່ງປັນຊຸມຊັບທີ່ເຂົາເຈົ້າຄົ້ນພົບເທື່ອກ່ອນ ຮວມທັງສິ່ງທີ່ເຂົາເຈົ້າໄດ້ຮຽນຮູ້ ການທົບທວນຄືນເຮັດໃຫ້ຜູ້ຟັງໄດ້ໃຊ້ຂໍ້ມູນປະກອບກັບຄວາມຄິດຂອງເຂົາເຈົ້າ ຊຶ່ງເປັນເວລາທີ່ເໝາະສົມທີ່ຈະໄດ້ ຍິນຄຳພະຍານວ່າເຂົາເຈົ້າໄດ້ໃຊ້ເຣື່ອງນີ້ຢ່າງໃດໃນຊີວິດທີ່ໄດ້ຮຽນຈາກອາທິດກ່ອນ.

ເຊັ່ນດຽວກັນ ເມື່ອສະມາຊິກໃນຫ້ອງຮຽນໄດ້ຮັບໂອກາດທີ່ຈະແບ່ງປັນສິ່ງທີ່ເຂົາເຈົ້າໄດ້ຮຽນມາໃນຫ້ອງຮຽນເທື່ອ ກ່ອນນັ້ນ ຜູ້ເລົ່າເຣື່ອງຕ້ອງໝັ້ນໃຈວ່າທຸກຄົນເຂົ້າໃຈໃນເຣື່ອງກ່ອນນັ້ນແລະໄດ້ຄົ້ນພົບຊຸມຊັບຢ່າງຖືກຕ້ອງ ຖ້າຫາກ ຜູ້ຟັງຍັງງົງກັບເຣື່ອງທີ່ຕົນໄດ້ຮຽນມານັ້ນ ແລະບໍ່ສາມາດຈະຈື່ເຣື່ອງໄດ້ ຜູ້ເລົ່າຈະຕ້ອງທົບທວນຄືນໃຫ້ທຸກຄົນຟັງອີກ.

ບໍ່ມີເຫດຜົນໃດທີ່ຈະເລົ່າເຣື່ອງໃໝ່ຕໍ່ໄປເລື້ອຍໆ ຈົນກວ່າທຸກຄົນຈະເຂົ້າໃຈເຣື່ອງກ່ອນໆ ເປັນຢ່າງດີ.

ບົດທີ 7
ການນຳໃຊ້ຢ່າງຖືກຕ້ອງ
ການຮູ້ຈັກຊ້າງ

ເມື່ອຄົນເລົ່າເຣື່ອງເພີ້ມພູນຄວາມສາມາດໃນການຊອກສແວງຫາ ລາວກໍຈະເລີ້ມເຫັນລາຍລະອຽດໃນພຣະຄັມພີທີ່ເທື່ອທຳອິດລາວບໍ່ເຫັນ ເຖິງແມ່ນລາຍລະອຽດເບິ່ງເໝືອນວ່າເລັກນ້ອຍແຕ່ເມື່ອລາວພົບແລ້ວລາວຈະມີຄວາມຮູ້ສຶກຕື່ນເຕັ້ນຫລາຍ ຢ່າງໃດກໍຕາມເມື່ອພົບເຫັນສິ່ງເລັກນ້ອຍທີ່ໜ້າສົນໃຈຜູ້ເລົ່າເຣື່ອງຈະຕ້ອງລະວັງເພື່ອໃຫ້ຍັງຄົງເບິ່ງເຫັນພາບລວມຂອງເຣື່ອງນັ້ນຢູ່ ລາວຈະຕ້ອງຈື່ໄວ້ສເມີວ່າພຣະຄັມພີນັ້ນຍິ່ງໃຫຍ່ກວ່າໜັງສືບັນທຶກປະວັດສາດ.

ນັກເທດຫລາຍຄົນໄດ້ເລົ່າເຣື່ອງດາວິດກັບໂກລີອາດ ເຂົາເຈົ້າໄດ້ເທສນາແລະສົນທະນາເຣື່ອງດາວິດວ່າເປັນຄົນໜຸ່ມນ້ອຍທີ່ມີຄວາມສາມາດແລະກ້າຫານຫລາຍ ໝັ້ນໃຈທີ່ຈະປະເຊີນກັບຊາຍຮ່າງຍັກແລະເອົາຊະນະໄດ້ ແລະນຳເອົາເຣື່ອງນັ້ນໄປໝູນໃຊ້ໃນຊີວິດວ່າ, "ເຮົາຄວນເປັນເໝືອນດາວິດແລະມີຄວາມກ້າຫານຖ້າມກາງສະຖານະການອັນຄັບຂັນນັ້ນ"

ເຫັນວ່າເປັນເຣື່ອງລາວທີ່ໜ້າສົນໃຈ ແຕ່ວ່າ...ເຣື່ອງລາວມີພຽງເທົ່ານີ້ບໍ?

ເຖິງແມ່ນເຣື່ອງຈະມີຂໍ້ມູນດັ່ງນັ້ນ ແຕ່ຈະເຫັນວ່າຄຳສອນຝ່າຍວິນຍານໄດ້ຖືກເບິ່ງຂ້າມໄປ ເພາະໃນເຣື່ອງດາວິດນີ້ເຮົາຮູ້ວ່າພຣະເຈົ້າຂອງລາວນັ້ນຍິ່ງໃຫຍ່ສາມາດຈັດການກັບຊາຍຮ່າງຍັກໄດ້ ແລະຕໍ່ຕ້ານກອງທັບທີ່ເຊື່ອຖືພຣະທຽມຫລາຍກວ່ານັ້ນ ກອງທັບອິສຣາເອນແລະກະສັດຊາອູນຄວນຈະໄວ້ວາງໃຈວ່າພຣະເຈົ້າຈະເອົາຊະນະຊາຍຮ່າງຍັກແລະພຣະທຽມທີ່ພວກສັດຕຣູເຊື່ອຖື ແຕ່ອິສຣາເອນບໍ່ໄດ້ໄວ້ວາງໃຈໃນພຣະເຈົ້າເມື່ອປະເຊີນກັບເສິກສົງຄາມຢ່າງແທ້ຈິງ. ປະເທດທີ່ນະມັສການພຣະທຽມນັ້ນຈະພ່າຍແພ້ ເມື່ອປະທະກັບຄົນນຶ່ງທີ່ເບິ່ງຄືວ່າບໍ່ສຳຄັນແຕ່ລາວເດີນໄປດ້ວຍຄວາມເຊື່ອ.

ທຸກເຣື່ອງໃນພຣະຄັມພີເຮົາຈະພົບຄວາມຈິງເລັກນ້ອຍແຕ່ມີຄຸນຄ່າ ແຕ່ທ່ານຈະຕ້ອງເຊື່ອຟັງຢ່າງໝົດໃຈ ເພື່ອທ່ານຈະໄດ້ເຂົ້າໃຈຄວາມຈິງທີ່ສຳຄັນທີ່ສຸດຊຶ່ງມີຢູ່ໃນເຣື່ອງນັ້ນ. ຫລັກການຄົ້ນພົບຊ້າງຈະຊ່ວຍເຮົາໃນຖານະເປັນຜູ້ເລົ່າເຣື່ອງ ເພື່ອຮັກສາຄວາມຖືກຕ້ອງຂອງເຣື່ອງລາວໃນຂະນະທີ່ພຍາຍາມຄົ້ນຫາຊຸມຊັບຝ່າຍວິນຍານ.

ທຳອິດ, ຈະເຫັນວ່າການ**ເຫັນຊ້າງທີ່ແທ້ຈິງນັ້ນໄດ້ຜິດພາດ**ໄປ;

ທ່ານອາດຈະເຄີຍໄດ້ຍິນຄົນເລົ່າເຣື່ອງທີ່ຄ້າຍຄືກັນນີ້ມາກ່ອນທີ່ເລົ່າວ່າ ມີຄົນເອົາຊາຍຕາບອດຫ້າຄົນເຂົ້າໄປໃກ້ໆຊ້າງ ແຕ່ໃຫ້ສີ່ຄົນເປັນຜູ້ເບິ່ງຊ້າງກ່ອນ ເວົ້າວ່າ, "ພວກເຈົ້າກຳລັງຢືນຢູ່ຂ້າງຊ້າງເດີ ຊ່ວຍອະທິບາຍຮູບຮ່າງລັກສະນະຂອງຊ້າງໃຫ້ຟັງແດ່" ແລ້ວຊາຍທັງສີ່ຄົນກໍພາກັນແຕະຕ້ອງລູບຄາເບິ່ງຊ້າງ
ແລະໄດ້ອະທິບາຍຕາມທີ່ໃຜລາວໄດ້ລູບຄຳ ແລະແຕະຕ້ອງ...

- ຄົນທຳອິດຄຳຖືກຫາງຊ້າງ ຈຶ່ງເວົ້າວ່າ, "ຊ້າງຄືກັນກັບຟອຍປັດເຮືອນ"

- ຄົນທີສອງຄຳໄປຖືກໜູຊ້າງ ແລ້ວເວົ້າວ່າ, "ຊ້າງຄືກັນກັບກະດ້ຶງຟັດເຂົ້າ"
- ຄົນທີສາມຄຳໄປຖືກງວງຊ້າງ ກໍເວົ້າວ່າ, "ຊ້າງຄືກັນກັບງູໃຫຍ່"
- ຄົນທີສີ່ຄຳໄປຖືກຂາຊ້າງ ຈຶ່ງເວົ້າວ່າ, "ຊ້າງເປັນຄືກັບບັ້ງສູບລົມຂອງຊ່າງຕີເຫລັກ"
- ຄົນທີຫ້າ ໄດ້ຫົວເຍາະເຍີ້ຍພວກສີ່ຄົນນັ້ນວ່າ, "ຮາ ຮາ...ເຮົາບໍ່ຈຳເປັນຕ້ອງໄປລູບຄຳເບິ່ງໂຕຊ້າງດອກ ເຮົາຊິເວົ້າໃຫ້ຟັງກໍໄດ້ ເຮົາເຄີຍໄດ້ຍິນສຽງແກຈາກຊ້າງນີ້ຕັ້ງຫລາຍເທື່ອ ທຸກຄົນຈຶ່ງຮູ້ເຖີດວ່າຊ້າງຄືເຄື່ອງດົນຕຣີໃຫຍ່ຊະນິດນຶ່ງ."

ເຖິງແມ່ນຊາຍຕາບອດທັງຫ້າຈະສາມາດອະທິບາຍແຕ່ລະພາກສ່ວນຂອງຊ້າງໄດ້ ແຕ່ບໍ່ມີໃຜຈັກຄົນທີ່ຮູ້ແລະເຂົ້າໃຈວ່າໂຕຊ້າງທີ່ແທ້ຈິງນັ້ນເປັນໂຕຈັ່ງໃດ ເຂົາເຈົ້າໄດ້ຜິດພາດໃນການເຫັນລັກສະນະລວມຂອງຊ້າງທັງໂຕ

ເຊັ່ນດຽວກັນ ເມື່ອເຮົາຄົ້ນຫາຊຸມຊັບຢູ່ໃນເຣື່ອງລາວຂອງພຣະຄັມພີ ເຮົານຶກເຖິງຫລັກການທີ່ຕ້ອງຈື່ຈຳໄວ້ວ່າ ເຣື່ອງທຸກເຣື່ອງມີຄວາມຄົບຖ້ວນສົມບູນ ເຮົາເອີ້ນຄວາມຄົບຖ້ວນນີ້ວ່າ, "ຊ້າງຕົວຈິງ" ໃນເຣື່ອງທີ່ຍາວກໍຈະເປັນເໝືອນກັບຊ້າງນີ້ ໃນເຣື່ອງຈະມີສ່ວນປະກອບຫລາຍຕອນ ຊຶ່ງຄ້າຍກັບລະຄອນຫລືໜັງທີ່ມີຫລາຍສາກ ຫລາຍຕອນ ດັ່ງນັ້ນໃນແຕ່ລະສາກແຕ່ລະຕອນຂອງເຣື່ອງຈະຂຶ້ນຢູ່ກັບ "ຊ້າງຕົວຈິງ" ທີ່ຮັກສາແຕ່ລະພາກສ່ວນຂອງມັນໄວ້.

ບາງເທື່ອ ເມື່ອເຮົາອ່ານເຣື່ອງທີ່ຄຸ້ນເຄີຍ ເຮົາອາດຈະມີຄວາມຄິດແບບເກົ່າໆ ຢູ່ວ່າເຣື່ອງລາວນັ້ນເປັນມາຢ່າງໃດເຮົາຈຶ່ງພາດພັ້ງທີ່ຈະຟັງເຣື່ອງນັ້ນໃຫ້ຖ່ອງແທ້ ເໝືອນກັບພວກຕາບອດນັ້ນບໍ່ໄດ້ໃຊ້ເວລາພຽງແຕ່ໜ້ອຍນຶ່ງເພື່ອຈະລູບຄຳເບິ່ງຊ້າງໃຫ້ທົ່ວວ່າໂຕຊ້າງນັ້ນເປັນແນວໃດ ຄົນຕາບອດຄົນນຶ່ງເຂົ້າໃຈວ່າຊ້າງເປັນເຄື່ອງດົນຕຣີຊະນິດນຶ່ງເໝືອນກັບເຮົາເອງທີ່ອາດຈະຄິດວ່າຕົວເຮົາເອງຮູ້ເຣື່ອງຕອນນັ້ນດີແລ້ວ ຈຶ່ງເຮັດໃຫ້ເຮົາພາດບໍ່ສາມາດພົບກັບຄວາມຈິງທີ່ເປັນຫລັກຂອງເຣື່ອງນັ້ນໄດ້.

ເຮົາຈຶ່ງໄດ້ເຮັດຜິດໄປເໝືອນກັບບັນດາຄົນຕາບອດໂດຍການຍຶດເອົາພຽງບາງພາກສ່ວນຂອງເຣື່ອງແລະກໍຢຸດຢູ່ທີ່ນັ້ນ ການທີ່ເຮົາບໍ່ໄດ້ຢືນຢູ່ໄກໆ ແລ້ວເພັ່ງເບິ່ງພາບລວມຂອງເຣື່ອງ ເພື່ອຈະໄດ້ຮູ້ວ່າມັນເຊື່ອມໂຍງຕິດຕໍ່ກັນຢ່າງໃດ ກໍຈະເຮັດໃຫ້ເຮົາເບິ່ງບໍ່ເຫັນພາບລວມຂອງເຣື່ອງຢ່າງຄົບຖ້ວນ.

ແທ້ຈິງແລ້ວ ເຮົາຈຳເປັນຕ້ອງຟັງດ້ວຍການພິຈາຣະນາໄຕ່ຕອງດ້ວຍການອະທິຖານ ເພື່ອໃຫ້ແນ່ໃຈວ່າເຮົາໄດ້ຈັບເອົາເຣື່ອງລາວນັ້ນທັງເຣື່ອງຢ່າງຄົບຖ້ວນ ເຖິງຄວາມຈິງທີ່ເຮົາຄົ້ນພົບນັ້ນມີຄຸນຄ່າໃນຕົວຂອງມັນເອງກໍຈິງ ແຕ່ສ່ວນທີ່ເລັກນ້ອຍນັ້ນອາດຈະອະທິບາຍທັງເຣື່ອງໄດ້ບໍ່ໝົດ

ຕົວຢ່າງຂອງການຄົ້ນພົບຊ້າງຈາກພຣະຄັມພີ
ອ່ານມາຣະໂກ 1:40-45 ແລ້ວໃຊ້ເວລາຊອກຫາຊ້າງດັ່ງຕໍ່ໄປນີ້;

ຊາຍຂີ້ທູດຄົນນຶ່ງມາຫາພຣະເຢຊູ ລາວໄດ້ຄຸເຂົ່າລົງຕໍ່ໜ້າພຣະອົງແລ້ວອ້ອນວອນວ່າ, "ຖ້າທ່ານພໍໃຈ, ທ່ານກໍເຮັດໃຫ້ຂ້ານ້ອຍດີສະອາດໄດ້. ພຣະເຢຊູມີໃຈສົງສານຊາຍຄົນນັ້ນ ຈຶ່ງເດ່ມືອອກວາງເທິງຄົນນັ້ນ ແລ້ວເວົ້າວ່າ, "ເຮົາພໍໃຈແລ້ວ, ຈົ່ງດີສະອາດສາ." ໃນທັນໃດນັ້ນພຍາດຂີ້ທູດກໍຫາຍແລະຊາຍຄົນນັ້ນກໍດີສະອາດ.

ກ່ອນຈະໃຫ້ຊາຍຄົນນັ້ນໄປ ພຣະເຢຊູສັ່ງຄົນນັ້ນຢ່າງເຂັ້ມງວດ....ວ່າ, "ເຈົ້າຈົ່ງລະວັງ, ຢ່າບອກເຣື່ອງນີ້ໃຫ້ຜູ້ໃດຟັງເປັນເດັດຂາດ ແຕ່ຈົ່ງໄປສເນີຕົວຕໍ່ປະໂຣຫິດ ແລະຖວາຍເຄື່ອງບູຊາຕາມທີ່ໂມເຊໄດ້ສັ່ງໄວ້ ເພື່ອເປັນຫລັກຖານແກ່ຄົນທັ້ງຫລາຍ." ແຕ່ຄົນນັ້ນ ເມື່ອອອກໄປແລ້ວກໍຕັ້ງຕົ້ນປ່າວຮ້ອງຢ່າງຫລວງຫລາຍໃຫ້ເຣື່ອງນັ້ນຂ່າລືໄປ ຈົນພຣະເຢຊູເຂົ້າໄປໃນເມືອງໂດຍເປີດເຜີຍຕໍ່ໄປບໍ່ໄດ້ ແຕ່ໄດ້ຢູ່ນອກເມືອງຕາມບ່ອນງຽບສງັດ ແລະມີຄົນຈາກທຸກທີ່ທຸກບ່ອນມາຫາພຣະອົງ.

ມີຂຸມຊັບຫລາຍຢ່າງທີ່ຊຸກເຊື່ອງຢູ່ໃນເຣື່ອງນີ້ ພວກເຮົາໄດ້ເຫັນແດ່ບໍ່? ຄຣູສອນຫລາຍຄົນໄດ້ເບິ່ງພາດໄປ ເພາະເຂົາໄດ້ເຫັນພຽງແຕ່ດັ່ງລຸ່ມນີ້;

1. ຄົນໃນເຣື່ອງ(ຊາຍຂີ້ທູດ)ເຊື່ອວ່າພຣະເຢຊູຊົງໂຜດໃຫ້ດີພຍາດໄດ້
2. ພຣະເຢຊູເຕັມພຣະທັຍທີ່ຈະປິ່ນປົວໂຜດໃຫ້ດີ
3. ພຣະເຢຊູມີຣິດເດດສາມາດປິ່ນປົວຂີ້ທູດໃຫ້ດີໄດ້
4. ພຣະເຢຊູຊົງມີພຣະທັຍທີ່ສົງສານແລະມີຄວາມອ່ອນໂຍນ
5. ພຣະເຢຊູຊົງສຳແດງຄວາມຮັກດ້ວຍການວາງມືເທິງຕົວຄົນຂີ້ທູດ
6. ພຣະເຢຊູເຫັນວ່າພຣະອົງມີສະພາບເໝືອນຄົນຂີ້ທູດ...ຄືບໍ່ມີໃຜຢາກແຕະຕ້ອງ

ຕໍ່ຈາກນັ້ນພວກຄຣູສອນຍັງໄດ້ຄົ້ນພົບຂໍ້ສັງເກດທີ່ໜ້າສົນໃຈອີກ

1. ພຣະເຢຊູຫ້າມຄົນຂີ້ທູດບໍ່ໃຫ້ບອກຜູ້ໃດເຣື່ອງພຣະອົງໂຜດໃຫ້ລາວດີພຍາດ ແຕ່ໃຫ້ໄປສເນີຕົວຕໍ່ພວກປະໂຣຫິດ ແຕ່ຜູ້ເລົ່າເຣື່ອງມັກຈະກະທຳນັ້ນແມ່ນ ລາວເລົ່າວ່າຊາຍທີ່ດີຂີ້ທູດມີຄວາມຕື່ນເຕັ້ນຫລາຍອົດບໍ່ໄດ້ຈົ່ງປ່າວຮ້ອງ ໃຫ້ຄົນທັ້ງຫລາຍຮູ້ວ່າພຣະເຢຊູຊົງຊ່ວຍລາວຢ່າງໃດ ຕໍ່ຈາກນັ້ນຜູ້ເລົ່າເຣື່ອງກໍຖືໂອກາດເທດເຣື່ອງຄວາມຍິນດີແລະຄວາມມີໃຈກະຕັນຍູ
2. ເຖິງແມ່ນຊາຍທີ່ດີຂີ້ທູດຈະບໍ່ບອກຄົນອື່ນເຖິງເຣື່ອງທີ່ເກີດຂຶ້ນກໍຕາມ ແຕ່ລາວກໍດີໃຈຫລາຍຈົ່ງອົດບໍ່ໄດ້ທີ່ຈະເລົ່າເຣື່ອງທີ່ຕົນດີພຍາດໃຫ້ຄົນອື່ນຟັງ, ແລ້ວຜູ້ເລົ່າເຣື່ອງກໍເທດຕໍ່ໄປເຖິງຄວາມສຳຄັນຂອງການເປັນພຍານ
3. ເພາະຊາຍທີ່ດີພຍາດຂີ້ທູດໄດ້ປ່າວຮ້ອງໃຫ້ຄົນທັ້ງຫລາຍຮູ້ ຈົນເຮັດໃຫ້ພຣະເຢຊູເຂົ້າໄປໃນເມືອງບໍ່ໄດ້ ພຣະອົງຕ້ອງໄດ້ຢູ່ນອກເມືອງ ແລະມີຄົນຈາກທຸກບ່ອນທຸກທີ່ມາຫາພຣະອົງ ເພາະຄົນທີ່ດີພຍາດຂີ້ທູດໄດ້ປ່າວຮ້ອງໃຫ້ຄົນທັ້ງຫລາຍຮູ້ ເຮັດໃຫ້ຄົນຈຳນວນຫລວງຫລາຍມາຫາພຣະເຢຊູເພື່ອຈະໃຫ້ພຣະອົງໂຜດໃຫ້ດີພຍາດ ຕໍ່ຈາກນັ້ນຜູ້ເລົ່າເຣື່ອງກໍເທສນາໂດຍເນັ້ນວ່າ ພຣະປະສົງອັນສຸດຍອດຂອງພຣະເຈົ້ານັ້ນໄດ້ສຳເຣັດຜ່ານຊາຍທີ່ດີພຍາດຂີ້ທູດຄົນນີ້.

ຕອນນີ້ໃຫ້ເຮົາທັນກັບມາເບິ່ງເຣື່ອງລາວແລະພິຈາຣະນາເບິ່ງວ່າ ຂຸມຊັບຫລາຍໆ ຢ່າງຈະເອົາມາລວມກັນເຂົ້າເປັນອັນດຽວກັນໄດ້ຢ່າງໃດ.

ຂໍ້ສັງເກດຂຸມຊັບ 9 ຢ່າງຂ້າງເທິງນີ້ເປັນຄວາມຈິງຕົງຕາມເຣື່ອງຫລືບໍ່? ຫລືວ່າໄດ້ພາດຈາກຂຸມຊັບອັນສຳຄັນໄປ? ເປັນໄປໄດ້ບໍ່ທີ່ພວກຄຣູສອນຄົ້ນພົບຂ້າງແຕ່ພຽງເຄິ່ງຕົວ?

ເຫັນວ່າສຳຄັນຫລາຍ ທີ່ເຮົາຈະຕ້ອງສົນທະນາກັນຫລາຍໆ ຊຸມຊັບທີ່ຢູ່ໃນເຣື່ອງ ບໍ່ວ່າຈະເປັນການໂຜດໃຫ້ດີພຍາດ, ຄວາມເຊື່ອຂອງຊາຍຂີ້ທູດ, ແຕ່ຖ້າເຮົາພາດບາງຕອນໄປ ຫລືສອນສິ່ງທີ່ບໍ່ໄດ້ຢູ່ໃນເຣື່ອງ ເຮົາກໍພາດໄປຈາກຄວາມຄົບຖ້ວນຂອງເຣື່ອງນັ້ນ.

ເມື່ອເຮົາຟັງການເລົ່າເຣື່ອງ ແລະໄດ້ຍິນປໂຍກທີ່ເປັນກຸນແຈໄຂເຣື່ອງຈາກເຣື່ອງນັ້ນ ແລ້ວນຳມາສົນທະນາກັນວ່າມີຫຍັງແດ່ເກີດຂຶ້ນ ເຮົາທຸກຄົນມັກຄວາມກ້າຫານໃນການເປັນພຍານເພື່ອພຣະຄຣິດ ດັ່ງນັ້ນເຮົາຈຶ່ງເຫັນວ່າການກະທຳຂອງຊາຍທີ່ດີພຍາດເປັນສິ່ງທີ່ດີ ຢ່າງໜ້ອຍລາວກໍໄດ້ບອກຄົນຈຳນວນຫລວງຫລາຍໃຫ້ຮູ້ວ່າພຣະເຢຊູໄດ້ເຮັດຫຍັງໃຫ້ແກ່ລາວ ບໍ່ພຽງເທົ່ານັ້ນເຮົາມັກເວົ້າເຖິງຄວາມຍິ່ງໃຫຍ່ຂອງພຣະເຈົ້າເຮົາຈຶ່ງເອົາສິ່ງນັ້ນມາເປັນຈຸດສຳຄັນ

ແຕ່ໃນຕອນນີ້ໃຫ້ເຮົາເດີນຜ່ານເຣື່ອງນີ້ໄປຊ້າໆ ເບິ່ງວ່າເຮົາຈະພົບກັບສິ່ງໃດແດ່. ພຣະເຢຊູໄດ້ບອກຊາຍທີ່ດີພຍາດວ່າຕ້ອງເຮັດແລະຕ້ອງບໍ່ເຮັດສິ່ງໃດແດ່? ຄຳສັ່ງຂອງພຣະເຢຊູເປັນຄຳເວົ້າແບບເຜີນໆ ເ ລືອກເຮັດຕາມໃຈໄດ້ບໍ່? ບໍ່ໄດ້ແນ່ນອນ, ພຣະເຢຊູສັ່ງຊາຍຄົນນັ້ນຢ່າງເຂັ້ມງວດວ່າບໍ່ໃຫ້ບອກຜູ້ໃດເປັນເດັດຂາດ ແຕ່ລາວຕ້ອງໄປພົບປະໂຣຫິດເພື່ອໃຫ້ປະໂຣຫິດປະກາດວ່າລາວໄດ້ດີພຍາດຂີ້ທູດແລ້ວ ແລະໃຫ້ໄປຖວາຍເຄື່ອງບູຊາຊຶ່ງເປັນສ່ວນປະກອບຂອງການປະກາດຮັບຮອງຂອງປະໂຣຫິດ.

ຕອນນີ້ເຮົາໄດ້ເຮັດຕາມທີ່ເຣື່ອງໄດ້ບອກໄວ້ຫລືບໍ່ ໃນເມື່ອເຮົາໄປສອນເຣື່ອງຄວາມຍິນດີທີ່ຊາຍຄົນນັ້ນອົດໄວ້ບໍ່ໄດ້ ການເປັນພຍານທີ່ດີຂອງລາວ ແລະຄວາມຍິ່ງໃຫຍ່ສູງສຸດຂອງພຣະເຈົ້າ? ພຣະເຈົ້າໄດ້ປະທານຂໍ້ມູນໃຫ້ເຮົາຢ່າງພຽງພໍເພື່ອຊ່ວຍເຮົາໃຫ້ຮູ້ວ່າເກີດຫຍັງຂຶ້ນແດ່ຢູ່ໃນເຣື່ອງນີ້. ຖ້າເຮົາຟັງເຣື່ອງບໍ່ດີພໍ ເຮົາຈະເຫັນຊ້າງຜິດພາດໄປທັງຕົວ. ຜູ້ເລົ່າເຣື່ອງທີ່ດີຈະຕ້ອງເບິ່ງສິ່ງທີ່ເກີດຂຶ້ນກ່ອນຫລືຫລັງເຣື່ອງທີ່ເລົ່ານັ້ນກ່ອນ ພຣະຄຳທີ່ກ່າວເຖິງສິ່ງທີ່ເກີດຂຶ້ນກ່ອນເຣື່ອງນີ້ໄດ້ບອກໃຫ້ເຮົາຮູ້ເຖິງຄວາມຕັ້ງພຣະທັຍຂອງພຣະເຢຊູ ດັ່ງທີ່ເຫັນຢູ່ຂ້າງລຸ່ມນີ້

> *ພຣະອົງຊົງຕອບວ່າ, "ໃຫ້ເຮົາທັງຫລາຍໄປໃນເຂດບ້ານເມືອງໃກ້ຄຽງ ເພື່ອເຮົາຈະປະກາດທີ່ນັ້ນດ້ວຍ ເພາະເຫດການນີ້ແຫລະ, ເຮົາຈຶ່ງໄດ້ອອກມາ" ພຣະອົງໄດ້ສະເດັດໄປປະກາດໃນໂຮງທັມຂອງເຂົາຕລອດທົ່ວແຂວງ ຄາລີເລ ແລະໄດ້ຂັບໄລ່ຜີຫລາຍໂຕອອກເສັ.* (ມາຣະໂກ 1:38-39)

ສັງເກດເຫັນບໍ່ວ່າໃນຂໍ້ 38 ພຣະຄັມພີບອກວ່າ ພຣະເຢຊູຢາກເຂົ້າໄປໃນເມືອງທີ່ຢູ່ໃກ້ຄຽງ?

ພຣະເຢຊູຢາກໃຫ້ຊາຍຂີ້ທູດໄປພົບປະໂຣຫິດເພື່ອເຮັດຫຍັງ? ໃນເຣື່ອງນີ້ພຣະເຢຊູຊົງສັ່ງລາວຢ່າງເຂັ້ມງວດວ່າໃຫ້ໄປຫາປະໂຣຫິດ, " *ແຕ່ຈົ່ງໄປສເນີຕົວຕໍ່ປະໂຣຫິດ ແລະຖວາຍເຄື່ອງບູຊາຕາມທີ່ໂມເຊໄດ້ສັ່ງໄວ້ ເພື່ອເປັນຫລັກຖານແກ່ຄົນທັ້ງຫລາຍ."* ເຮົາເຫັນວ່າພຣະເຢຊູໃຫ້ລາວເຊື່ອຟັງບັນຍັດຂອງໂມເຊແຕ່ລາວບໍ່ສົນໃຈ ອີກສິ່ງນຶ່ງທີ່ພຣະເຢຊູບອກໃຫ້ລາວເຮັດນັ້ນແມ່ນ ໃຫ້ລາວໄປສເນີຕົວຕໍ່ປະໂຣຫິດເພື່ອເປັນຫລັກຖານຮັບຮອງວ່າລາວໄດ້ດີຈາກພຍາດຂີ້ທູດແລ້ວ ແຕ່ລາວຊ້ຳພັດບໍ່ເຮັດຕາມ ຖ້າຈະເວົ້າຕາມບັນຍັດຂອງໂມເຊແລ້ວລາວຍັງບໍ່ໄດ້ຖືກຮັບຮອງວ່າລາວໄດ້ດີສະອາດເທື່ອ.

ຊາຍຂີ້ທູດບໍ່ເຊື່ອຟັງຄຳສັ່ງຂອງພຣະເຢຊູທີ່ວ່າ ລາວຈະຕ້ອງໄປສເນີຕົວຕໍ່ປະໂຣຫິດເພື່ອໃຫ້ປະໂຣຫິດຮັບຮອງແລະ

ປະກາດວ່າລາວໄດ້ຫາຍດີແລ້ວ ເມື່ອເບິ່ງຕາມເຣື່ອງນີ້ເຮົາສາມາດບອກໄດ້ບໍ່ວ່າ ພຣະເຢຊູຢາກບອກການດີພຍາດ ໃຫ້ປະໂຣຫິດຮູ້ ໃຫ້ປະໂຣຫິດຍອມຮັບແລະປະກາດການດີພຍາດນັ້ນ. ດັ່ງນັ້ນແມ່ນໃຜກັນແທ້ທີ່ຊາຍດີພຍາດໄດ້ໃຫ້ ຄວາມໂຄຣົບນັບຖື? ພຣະເຢຊູ? ປະໂຣຫິດ? ກົດຂອງພຣະເຈົ້າໃນພຣະຄັມພີເດີມ? ເຮົາຈະເຫັນວ່າ ລາວບໍ່ໄດ້ ໃຫ້ຄວາມໂຄຣົບນັບຖືຜູ້ໃດເລີຍ ນອກຈາກຕົວຂອງລາວເອງ.

ຫລັງຈາກໄດ້ດີພຍາດແລ້ວ ດ້ວຍຄວາມມຸ້ງໝັ້ນຕັ້ງໃຈຂອງຊາຍທີ່ດີພຍາດ ເຮັດໃຫ້ພຣະເຢຊູເຂົ້າໄປໃນເມືອງຢ່າງ ເປີດເຜີຍບໍ່ໄດ້ອີກ. ການຊົງໂຜດໃຫ້ດີພຍາດແລະຄວາມເຊື່ອຂອງຊາຍທີ່ດີພຍາດ ລວມໄປເຖິງສິ່ງຕ່າງໆ ທີ່ເກີດຂຶ້ນ ທີ່ກ່ຽວຂອງກັບພຣະເຢຊູລ້ວນແຕ່ເປັນຄວາມຈິງອັນຍິ່ງໃຫຍ່ ແຕ່ເຮົາໄດ້ພາດໄປຈາກຄວາມບໍ່ເຊື່ອຟັງຂອງຊາຍທີ່ດີ ຈາກພຍາດຂີ້ທູດ ການທີ່ເຮົາບໍ່ເຫັນລາວໃຫ້ຄວາມໂຄຣົບນັບຖືພຣະອົງຜູ້ຊົງໂຜດໃຫ້ລາວດີພຍາດຢ່າງແທ້ຈິງນັ້ນເຮົາ ກໍພາດການເຫັນຊ້ໍາໆໄປເຄິ່ງໂຕແລ້ວ. ເຮົາອາດຈະສົນໃຈເຣື່ອງການໂຜດໃຫ້ດີພຍາດ ແຕ່ເຮົາກໍຕ້ອງເອົາໃຈໃສ່ໃນ ເຣື່ອງຄວາມບໍ່ເຊື່ອຟັງດ້ວຍ ເຮົາຕ້ອງຖືວ່າການທີ່ຊາຍຄົນນັ້ນບໍ່ເຊື່ອຟັງເປັນເຣື່ອງສໍາຄັນ.

ສ່ວນຕອນທ້າຍຂອງເຣື່ອງບໍ່ໄດ້ກ່ຽວຂ້ອງກັບຄວາມຍິນດີຫລືການເປັນພຍານແຕ່ຢ່າງໃດ ແຕ່ເປັນເຣື່ອງຂອງການ ເອົາແຕ່ໃຈຕົນເອງ ເປັນເຣື່ອງຂອງຜູ້ທີ່ທູນຂໍແລ້ວກໍໄດ້ຮັບຂອງປະທານເຮັດໃຫ້ຊີວິດໄດ້ຮັບການປ່ຽນແປງ ແຕ່ຊາຍ ຄົນນັ້ນກັບບໍ່ເຊື່ອຟັງຄໍາສັ່ງຂອງພຣະອົງ.

ດັ່ງນັ້ນເຮົາຈຶ່ງຄວນອ່ານເຣື່ອງຢ່າງລະມັດລະວັງ (ແລະບໍ່ຄວນເອົາຄວາມເຫັນຂອງຕົນເອງໃສ່ເຂົ້າໄປໃນເຣື່ອງ) ແລ້ວ ເຮົາຈະພົບຄວາມຈິງຢ່າງຄົບຖ້ວນຫລືເຫັນຊ້ໍາໝົດທັງຕົວໄດ້. ພຣະເຢຊູຊົງໂຜດໃຫ້ດີພຍາດຢ່າງອັສຈັນແລະດ້ວຍ ຄວາມເມດຕາສົງສານ ພຣະອົງຊົງນໍາຊີວິດໃໝ່ມາໃຫ້ຊາຍຂີ້ທູດຜູ້ຊຶ່ງບໍ່ມີຜູ້ໃດກ້າຈັບບາຍ ແຕ່ຊາຍຄົນນັ້ນກັບເອົາ ໃຈຕົນເອງບໍ່ເຊື່ອຟັງພຣະອົງຜູ້ຊົງປົ່ນປົວລາວ ໃນຕອນນີ້ແມ່ນພາກສ່ວນນຶ່ງຂອງຊ້າງທີ່ຖືກເບິ່ງຂ້າມໄປ.

ຊາຍຄົນນີ້ສົນໃຈໃນການຢາກດີພຍາດຫລາຍກວ່າໃຫ້ຄວາມສົນໃຈພຣະອົງຜູ້ຊົງໂຜດລາວ ຢູ່ໃນຫລາຍໆ ເຣື່ອງໃນ ພຣະຄັມພີເຮົາຈະເຫັນຄົນເຮັດຜິດທີ່ຄ້າຍໆ ຄືກັນນີ້ ເຂົາເຈົ້າເຮັດຜິດກົດທາງສາສນາ ແລະເຮັດງານເພື່ອພຣະເຈົ້າ ດ້ວຍຄວາມກະຕືລືລົ້ນ ແຕ່ກັບບໍ່ເຊື່ອຟັງຫລືໂຄຣົບນັບຖືສິ່ງທີ່ພຣະເຈົ້າຊົງສັ່ງໃຫ້ເຂົາເຈົ້າເຮັດ. ຄັນຊັ້ນ ການທີ່ເປັນ ພຍານນັ້ນຜິດບໍ່? ບໍ່ຜິດດອກ...ເພາະເຮົາຖືກສອນໃຫ້ເປັນພຍານຢູ່ແລ້ວ ຫລືວ່າເປັນການເຮັດຜິດຕໍ່ແຜນການຂອງ ພຣະເຢຊູໃນເວລານັ້ນແລະໃນສະຖານທີ່ນັ້ນ? ແມ່ນແທ້ ແນ່ນອນ !

ຕົວຢ່າງທີ່ເຫັນໄດ້ຢ່າງແຈ່ມແຈ້ງຢູ່ໃນເຣື່ອງນຶ່ງນັ້ນແມ່ນ ພຣະເຈົ້າຊົງເຫັນຄົນທີ່ເຮັດຜິດຢ່າງໂຈ່ງແຈ້ງ ແຕ່ເບິ່ງຄືວ່າ ຖືກຕ້ອງ ຊຶ່ງຢູ່ໃນພຣະທັມ 1 ຊາມູເອນ ເຮົາເຫັນຄົນຜູ້ນຶ່ງປະກອບພິທີທາງສາສນາ ແຕ່ສະຖານະການໃນເວລານັ້ນ ລາວກະທໍາດ້ວຍການບໍ່ເຊື່ອຟັງພຣະເຈົ້າ ພຣະເຈົ້າຊົງຖືວ່າການບໍ່ເຊື່ອຟັງພຣະອົງນັ້ນເປັນການເຮັດບາບທີ່ຮ້າຍແຮງ ທີ່ສຸດ.

> *ຊາມູເອນໄດ້ເວົ້າວ່າ, "ພຣະຜູ້ເປັນເຈົ້າຊົງຕ້ອງການຢາກໃຫ້ມະນຸດເຊື່ອຟັງ ຫລືຖວາຍບູຊາແດ່ພຣະອົງ ສິ່ງທີ່ ຖືກຄືການເຊື່ອຟັງພຣະອົງດີກວ່າເອົາແກະຕົວງາມທີ່ສຸດມາຖວາຍເປັນເຄື່ອງບູຊາແດ່ພຣະອົງ. ການກະບົດ ຕໍ່ສູ້ພຣະອົງເປັນການຊົ່ວຮ້າຍເທົ່າກັບການໃຊ້ເວດມົນຄາຖາ ແລະຄວາມຈອງຫອງກໍແມ່ນບາບເທົ່າກັບການ*

ຂາບໄຫວ້ຮູບໂຄຣົບ ຍ້ອນວ່າພຣະອົງໄດ້ປະຖິ້ມຄຳສັ່ງຂອງພຣະເຈົ້າ ພຣະເຈົ້າຈຶ່ງຊົງປົດພຣະອົງອອກຈາກ ຕຳແໜ່ງເຈົ້າຊີວິດ"(1 ຊາມູເອນ 15:22-23)

ການບໍ່ເອົາໂທດຫລືບໍ່ຕັດສິນຄວາມບໍ່ເຊື່ອຟັງຂອງຊາຍຂີ້ທູດ ໃນຂະນະທີ່ເຮົາສົນທະນາແລກປ່ຽນຄວາມຄິດເຫັນກັນ ນັ້ນ ເທົ່າກັບວ່າເຮົາຍອມໃຫ້ມະນຸດເຮັດບາບຂອງການບໍ່ເຊື່ອຟັງພຣະເຈົ້າ ບາງເທື່ອບາບແບບນີ້ກໍສລັບຊັບຊ້ອນ ເພາະເຮົາບໍ່ໄດ້ເວົ້າອອກດ້ວຍສຽງດັງໆ ວ່າ, "ເຮີຍ...ຂ້ອຍຊິເລືອກທາງຂອງຂ້ອຍເອງແທນທາງຂອງພຣະເຈົ້າ" ແຕ່ ຍາມໃດທີ່ເຮົາບໍ່ສົນໃຈຄຳສັ່ງຂອງພຣະເຈົ້າແລະເລືອກເຮັດສິ່ງທີ່ຕົວເອງມັກແລະຕ້ອງການນັ້ນກໍເປັນບາບ ການບໍ່ມີ ຄວາມເຊື່ອຟັງກໍຄືການບໍ່ຍອມເຊື່ອຟັງນັ້ນເອງ.

ເຮົາຢ່າເບິ່ງຂ້າມພາກສ່ວນທີສອງຂອງເຮົາ ຄືການກະທຳແລະຜົນທີ່ຕາມມາຂອງການບໍ່ເຊື່ອຟັງ ຖ້າເຮົາຫາກແກ້ ຕົວແທນຊາຍຂີ້ທູດຄົນນີ້ ກໍເທົ່າກັບວ່າເຮົາສນັບສນູນໃຫ້ຄຣິສຕຽນເຮັດຕາມໃຈຕົນເອງແທນທີ່ຈະເຮັດຕາມນ້ຳພຣະ ທັຍພຣະເຈົ້າ ຈະເປັນໜ້າເສັງໃຈເທົ່າໃດໜໍຖ້າໄດ້ຍິນຄຣິສຕຽນເວົ້າວ່າ, "ໂອ ຂ້ອຍຮູ້ດີວ່າພຣະເຈົ້າຊົງເວົ້າຢ່າງໃດ ໃນເຣື່ອງນີ້ ແຕ່ຂ້ອຍກໍມີເຫດຜົນອື່ນຂອງຂ້ອຍທີ່ຕ້ອງເຮັດ" ເຮົາບໍ່ຄ່ອຍໄດ້ຍິນຄົນເວົ້າວ່າ, "ຂ້ອຍຈະບໍ່ເຊື່ອຟັງຄຳ ຂອງພຣະເຈົ້າ ເພາະຂ້ອຍຕັດສິນໃຈໄດ້ດີກວ່າພຣະອົງ."

ພວກເຮົາໄດ້ເລືອກເອົາພຣະຄັມພີຕອນນີ້ມາສົນທະນາເພາະເປັນຕົວຢ່າງໃຫ້ເຫັນວ່າ ຜູ້ເລົ່າເຣື່ອງຫລາຍທ່ານບໍ່ຟັງ ເຣື່ອງໃຫ້ດີ ຜູ້ຂຽນຕ້ອງການຢາກໃຫ້ເຫັນວ່າເຮົາພາດໄປຈາກຄວາມໝາຍທັງໝົດຂອງເຣື່ອງໄດ້ຢ່າງໃດ ຊຶ່ງເຮັດໃຫ້ ເຮົາບໍ່ໄດ້ຮັບຂ່າວສານທັງໝົດຈາກພຣະເຈົ້າຕາມທີ່ພຣະອົງມີພຣະປະສົງ. ເຮົາເອງຕ້ອງມີຄວາມຮັບຜິດຊອບໃນຂະ ນະທີ່ເຮົາຕຽມເຣື່ອງ ຕົວຢ່າງເຣື່ອງຊ້າງໄດ້ຊ່ວຍໃຫ້ເຮົາຟັງຢ່າງຕັ້ງໃຈໃນສິ່ງທີ່ພຣະເຈົ້າກ່າວໄວ້ທັງໝົດຢ່າງລະອຽດ ດັ່ງທີ່ໄດ້ຂຽນໄວ້ໃນພຣະຄັມພີວ່າ, "ໃຜມີຫູ ຈົ່ງຟັງເອົາ"

ຫລັກການຂອງການເລົ່າເຣື່ອງເຈາະໃຈນັ້ນ ສຳຄັນຢູ່ທີ່ການຟັງໝົດທັງເຣື່ອງຢ່າງພິຈາຣະນາໄຕ່ຕອງ ອະທິຖານຂໍ ຄວາມເຂົ້າໃຈ ແລະເຊື່ອໃນສິ່ງທີ່ພຣະເຈົ້າກ່າວໄວ້ທຸກຢ່າງ ຕ້ອງເຂົ້າໃຈວ່າແຕ່ລະພາກສ່ວນຂອງເຣື່ອງໄດ້ຊ່ວຍໃຫ້ ເຮົາເຫັນເຣື່ອງທັງໝົດຢ່າງຄົບຖ້ວນຢ່າງໃດ.

ພຣະເຈົ້າຊົງຊ່ວຍໃຫ້ເຮົາເຫັນຜົນທີ່ຕາມມາຂອງການບໍ່ເຊື່ອຟັງຂອງຊາຍຂີ້ທູດ ແຕ່ຢ່າງໃດກໍດີໃນຫລາຍໆ ເຣື່ອງ ເຮົາບໍ່ໄດ້ເຫັນຜົນຂອງບາບຂອງບຸກຄົນທີ່ຢູ່ໃນເຣື່ອງ ແຕ່ເຮົາກໍຍັງໃຊ້ເຣື່ອງເຫລົ່ານັ້ນສອນເຖິງສະຕິປັນຍາທີ່ມາຈາກ ການເຊື່ອຟັງພຣະເຈົ້າໄດ້ເຊັ່ນ ເຮົາໄວ້ວາງໃຈໃນການຊົງນຳຂອງພຣະອົງບໍ່ແມ່ນເພາະຢ້ານກົວຜົນຂອງບາບ.

ຖ້າຫາກເຮົາເລົ່າເຣື່ອງນີ້ຈາກພຣະທັມມາຣະໂກຢ່າງຄົບຖ້ວນ ກໍຈະຊ່ວຍໃຫ້ຜູ້ຟັງໄດ້ເຫັນເຖິງຄວາມເສົ້າໃຈແລະຜົນ ຂອງການບໍ່ເຊື່ອຟັງພຣະອົງ ທັງໆ ທີ່ພຣະອົງປະທານຊີວິດໃໝ່ແລະຄວາມສຸກໃຈມາໃຫ້ແລ້ວ ແຕ່ຖ້າເຮົາເບິ່ງເຣື່ອງ ຜ່ານໄປພໍເຜີນໆ ເຮົາຈະບໍ່ພົບຄວາມບໍ່ເຊື່ອຟັງດັ່ງກ່າວນີ້ ເຮັດໃຫ້ເຮົາບໍ່ໄດ້ໜູນໃຈຜູ້ທີ່ເຊື່ອ ໃຫ້ເຊື່ອຟັງພຣະເຈົ້າ.

✞

ບົດທີ 8
ໂຮງຮຽນພຣະຄັມພີປາກເປົ່າ

ຝຶກການປະຕິບັດຕົວຈິງນຳກັນ ລະຫວ່າງຄົນອ່ານໜັງສືໄດ້ແລະຄົນອ່ານບໍ່ໄດ້

ໄດ້ມີຄົນທີ່ອ່ານໜັງສືບໍ່ໄດ້ເຂົ້າມາຝຶກອົບຮົມການເລົ່າເຣື່ອງເຈາະໃຈຢູ່ບໍ່ຂາດ ດັ່ງນັ້ນຈຶ່ງຕ້ອງມີຄົນອ່ານເຣື່ອງລາວສູ່ເຂົາເຈົ້າຟັງ ບອກເຂົາເຈົ້າອອກສຽງຕາມໃນເຣື່ອງໃຫ້ຟັງ

ເມື່ອມີເຣື່ອງທີ່ຈຳເປັນຕ້ອງອັດສຽງໄວ້ ໂຄງການເມກະວອຍຊ໌ ຈະເປັນຜູ້ຜລິດເຣື່ອງ ພວກເຮົາມີໂຄງການເຣື່ອງລາວຂອງພຣະເຈົ້າທີ່ອັດສຽງໄວ້ໃຫ້ສຳລັບຜູ້ທີ່ຝຶກອົບຮົມຫລາຍພາສາ ເປັນເຣື່ອງຂອງພຣະເຈົ້າ ແລະເຣື່ອງໃນພັນທະສັນຍາໃໝ່ ໂດຍເປັນພາສາຂອງຜູ້ທີ່ມາຮັບການຝຶກອົບຮົມ ແລະພວກເຮົາຍັງຄົງອັດສຽງເຣື່ອງລາວໃນພຣະຄັມພີໃໝ່ຕໍ່ໄປເລື້ອຍໆ

ເມື່ອໂອກາດອຳນວຍ, ຫລັງຈາກການຝຶກອົບຮົມ ກໍຈະມີການມອບເຄື່ອງຟັງສຽງໃຫ້ໝູ່ບ້ານລະນຶ່ງເຄື່ອງ ຊຶ່ງເປັນເຄື່ອງມືຊ່ວຍໃຫ້ຄົນໄດ້ຮຽນເຣື່ອງເພີ້ມຂຶ້ນ

ສ່ວນຫລາຍແລ້ວ ຊາວບ້ານມັກຟັງເຣື່ອງຈາກພຣະຄັມພີ ບາງຄົນທີ່ມາຝຶກອົບຮົມເຫັນວ່າເຄື່ອງຟັງສຽງນີ້ດີຫລາຍຈົນເຂົາເຈົ້າໄດ້ມອບໃຫ້ສິດຍາພິບານເປັນຂອງຂວັນ ແລະສິດຍາພິບານກໍໄດ້ຮັບປໂຍດຈາກເຣື່ອງລາວສຳລັບວຽກງານການຮັບໃຊ້ ເຄື່ອງຟັງສຽງເປັນສິ່ງສຳຄັນຫລາຍເພາະໄດ້ຊ່ວຍຄົນທີ່ອ່ານບໍ່ໄດ້ ໄດ້ຮຽນຮູ້ເຣື່ອງໃນພຣະຄັມພີຫລາຍຂຶ້ນ ມັນເປັນເຄື່ອງມືຊ່ວຍໃຫ້ເຣື່ອງທີ່ເລົ່ານັ້ນຖືກຕ້ອງກັບພຣະຄັມພີ.

ສິ່ງທີ່ໜ້າສົນໃຈຫລາຍນັ້ນແມ່ນ ການຝຶກອົບຮົມເລົ່າເຣື່ອງເຈາະໃຈນີ້ ສາມາດໃຊ້ໄດ້ທັ້ງກັບຄົນທີ່ອ່ານໄດ້ແລະຄົນທີ່ອ່ານບໍ່ໄດ້ໃນຂະນະທີ່ຝຶກອົບຮົມໄປພ້ອມກັນ. ຫລາຍໆ ເທື່ອຈະເຫັນວ່າຄົນທີ່ອ່ານບໍ່ໄດ້ມີຄວາມສາມາດຮຽນຮູ້ເຣື່ອງໄດ້ດີກວ່າແລະເລົ່າເຣື່ອງໄດ້ດີກວ່າຄົນທີ່ອ່ານໄດ້.

ຜູ້ມາຝຶກອົບຮົມທີ່ອ່ານບໍ່ໄດ້ນັ້ນສ່ວນຫລາຍສາມາດຄົ້ນຫາຊຸມຊັບຝ່າຍວິນຍານໄດ້ຢ່າງສລ່ຽວສລາດ ເຖິງຢ່າງໃດກໍດີ ຜູ້ເຂົ້າຮັບການຝຶກອົບຮົມທຸກຄົນບໍ່ວ່າຈະເປັນຄົນທີ່ອ່ານໄດ້ຫລືຄົນທີ່ອ່ານບໍ່ໄດ້ ໃນຕອນທຳອິດຈະມີບັນຫາເຣື່ອງການຕັ້ງຄຳຖາມເພື່ອນຳຄົນອື່ນຄົ້ນຫາຊຸມຊັບດ້ວຍການສົນທະນາແລກປ່ຽນຄວາມຄິດເຫັນ. ດັ່ງນັ້ນ ຢ່າລືມວ່າການຕັ້ງຄຳຖາມຈຶ່ງເປັນຄວາມສາມາດທີ່ທຸກຄົນຕ້ອງຝຶກຝົນຕົນເອງ ພ້ອມທີ່ຈະນຳທັ້ງຄົນທີ່ອ່ານໄດ້ແລະອ່ານບໍ່ໄດ້.

ການນຳໃຊ້ທີ່ບໍ່ຄາດຝັນ ໃນການຝຶກອົບຮົມທີ່ດະວັນນີໂຣ ປະເທດອູການດາ ຊາຍຊະຣາຄົນນຶ່ງໄດ້ເລົ່າເຣື່ອງສູ່ຟັງຊຶ່ງທັ້ງຜູ້ອຳນວຍການ TGSP ປະຈຳອັຟຣິກາແລະຂ້າພະເຈົ້າເອງ ບໍ່ມີວັນທີ່ຈະລືມໄດ້ ລາວໄດ້ເລົ່າໃຫ້ຟັງວ່າ ...

"ຄົນທີ່ຢູ່ແຖວນີ້ເປັນຄົນຍາກຈົນແລະຜູ້ທີ່ເຊື່ອເກືອບທຸກຄົນອ່ານໜັງສືບໍ່ໄດ້ ທີ່ນີ້ເປັນເໝືອນກັບໂລກສມັຍບູຮານ...ມີຜູ້ເລົ່າເຣື່ອງຄົນນຶ່ງຢືນຢູ່ກ້ອງຕົ້ນໄມ້ເລົ່າເຣື່ອງເຈາະໃຈເຣື່ອງທຳອິດໃຫ້ອີກ 5 ຄົນຟັງຊຶ່ງບໍ່ເຄີຍໄດ້ຮຽນການເລົ່າເຣື່ອງ

ມາກ່ອນເລີຍ ຊາຍຊະຣາຄົນນີ້ອາຍຸປະມານ 65 ປີ ໄດ້ເລົ່າເຣື່ອງຫົວຂວານຕົກນ້ຳຈາກພຣະຫັມ 2 ປະວັດກະສັດ ຂ້າພະເຈົ້າຈຶ່ງຄອຍເຝົ້າເບິ່ງໃນຂະນະທີ່ລາວນຳພາພວກເພື່ອນໆ ສົນທະນາແລກປ່ຽນຄວາມຄິດເຫັນໃນເຣື່ອງນັ້ນ.

ເມື່ອກຳລັງຢູ່ໃນຊ່ວງນຳມາໃຊ້ໃນຊີວິດຝ່າຍວິນຍານ ລາວຖາມວ່າ..."ຈີ່ໄດ້ບໍ່ ຕອນທີ່ລູກສິດຂອງເອລີຊາກຳລັງກັງວົນໃຈຫລາຍ ເພາະວ່າຂວານນັ້ນໄດ້ຢືມເຂົາມາ?" ຄົນໃນກຸ່ມກໍພາກັນງຶກຫົວ ..."ພວກເຮົາກຳລັງເວົ້າເຖິງເອລີຊາ ແລະພຣະເຈົ້າ ໄດ້ຊ່ວຍໃຫ້ເຂົາເຈົ້າພົບກັບຂວານທີ່ຢືມເຂົາມາ?"

"ພວກທ່ານມີຫຍັງແດ່ຢູ່ໃນເຮືອນທີ່ຢືມຄົນອື່ນມາ?" ຄຳຖາມນີ້ເຮັດໃຫ້ຄົນໃນກຸ່ມເບິ່ງໜ້າກັນ ແລ້ວກໍຍິກບ່າ

ຜູ້ເລົ່າກໍເລົ່າເຣື່ອງຕໍ່ໄປ "ມີຫຍັງແດ່ທີ່ບໍ່ໄດ້ເປັນຂອງພວກທ່ານເອງຢູ່ໃນເຮືອນ? ຄົນໃນກຸ່ມກໍງຶງ...ເພາະເຂົາເຈົ້າກໍບໍ່ມີສິ່ງໃດຢູ່ໃນເຮືອນຢູ່ແລ້ວ ຈຶ່ງພາກັນແກວ່ງຫົວ ແລ້ວຕອບວ່າ, "ບໍ່ມີສິ່ງໃດທີ່ເປັນຂອງຄົນອື່ນຢູ່ໃນເຮືອນພວກເຮົາ"

ຜູ້ເລົ່າເຣື່ອງສະແດງອາການທີ່ເຄືອງໃຈອອກມາໜ້ອຍນຶ່ງ ເພາະວ່າຄົນໃນກຸ່ມບໍ່ເຫັນສິ່ງທີ່ເຂົາເຈົ້າໄດ້ຄົ້ນພົບ ດັ່ງນັ້ນ ຜູ້ເລົ່າເຣື່ອງຈຶ່ງຮ້ອງອອກໄປວ່າ, "ຄັນຊັ້ນ ເມັ່ງຂອງພວກທ່ານຫັ້ນເດ? ເຂົາເຈົ້າເປັນຂອງພວກທ່ານຫລືບໍ່?

"ແນ່ນອນ ເຮົາເປັນເຈົ້າຂອງເມັ່ງຂອງເຮົາ ເຮົາເອົາແບ້ 4 ໂຕຈ່າຍເປັນຄ່າດອງ" ທຸກຄົນໃນກຸ່ມຕອບຄຳດຽວກັນ

"ຂ້ອຍຮູ້" ຜູ້ເລົ່າເຣື່ອງຕອບກັບ "ແຕ່ແມ່ນໃຜທີ່ໃຫ້ຊີວິດແບ້ເຫລົ່ານັ້ນ ໃຜເປັນຜູ້ໃຫ້ພວກທ່ານມີປັນຍາລ້ຽງແບ້ເຫລົ່ານັ້ນຈົນໃຫຍ່? ບໍ່ແມ່ນພຣະເຈົ້າບໍ? ພຣະເຈົ້າເປັນເຈົ້າຂອງເມັ່ງຂອງພວກທ່ານ ບໍ່ແມ່ນຕົວທ່ານເອງ" ຊາຍທັງ 5 ຄົນອ່ວາຍໜ້າເບິ່ງກັນແລະກັນ ແຕ່ແລ້ວກໍເຫັນດີນຳຜູ້ເລົ່າເຣື່ອງ

"ເອົາລະ ໃນຕອນນີ້ຢາກຖາມວ່າພວກທ່ານໄດ້ເຮັດກັບເມັ່ງຂອງພວກທ່ານຢ່າງໃດ? ພວກທ່ານເຮັດກັບເຂົາເຈົ້າເໝືອນກັບເປັນເຈົ້າຂອງ ທີ່ພວກທ່ານບໍ່ໄດ້ຢືມມາຈາກພຣະເຈົ້າ ແມ່ນບໍ່?" ຄົນນຶ່ງໃນກຸ່ມຕອບວ່າ, "ຂ້າພະເຈົ້າເຄີຍຕິບຕິເມັ່ງເໝືອນກັບວ່າລາວເປັນຂອງຂ້າພະເຈົ້າເອງ ຂ້າພະເຈົ້າຢາກເຮັດກັບນາງແນວໃດກໍໄດ້ ແຕ່ດຽວນີ້ຂ້າພະເຈົ້າຫາກໍຮູ້ວ່າຂ້າພະເຈົ້າໄດ້ຢືມນາງມາຈາກພຣະເຈົ້າ ຂ້າພະເຈົ້າບໍ່ໄດ້ເປັນເຈົ້າຂອງ ແຕ່ນີ້ຕໍ່ໄປຂ້າພະເຈົ້າຕ້ອງເຮັດກັບນາງເໝືອນກັບວ່ານາງເປັນຂອງພຣະເຈົ້າ ລວມໄປເຖິງຕ້ອງເຮັດກັບລູກທຸກໆ ຄົນນຳ"

ແລະລາວກໍຮ້ອງໄຫ້ອອກມາ ກົ້ມໜ້າລົງດ້ວຍຄວາມອັບອາຍ ລາວເລີ້ມສາຣະພາບຕໍ່ພຣະເຈົ້າ ແລະຄົນອື່ນໆຢູ່ໃນກຸ່ມກໍຮູ້ສຶກເຊັ່ນດຽວກັນ ເມື່ອພຣະວິນຍານຊົງທຳງານໃນຈິດໃຈຂອງເຂົາເຈົ້າ ທຸກຄົນກໍນ້ຳຕາໄຫລ...ແລະການເລົ່າເຣື່ອງໄດ້ສິ້ນສຸດລົງເພາະຕ່າງຄົນຕ່າງກໍສາຣະພາບບາບ ຖິ້ມໃຈເກົ່າເອົາໃຈໃໝ່ຕໍ່ພຣະເຈົ້າ.

ເມື່ອຂ້າພະເຈົ້າເຫັນການເລົ່າເຣື່ອງເທື່ອນີ້ ໃຈຂອງຂ້າພະເຈົ້າກໍວຸ້ນເໝືອນກັບມີລົມພັດຢູ່ທາງໃນ *ຂ່າວສານດັ່ງກ່າວຢູ່ໃນເຣື່ອງຫລືບໍ່? ຂ້າພະເຈົ້າຮູ້ວ່າການຢືມມີຢູ່ໃນເຣື່ອງແທ້ ແຕ່ການນຳມາໃຊ້ແບບນີ້ຖືກຕ້ອງຫລືບໍ່? ສຳລັບເຂົາເຈົ້າແລ້ວມັນກໍສອດຄ່ອງກັບໃຈເຂົາເຈົ້າ...ແຕ່ແລ້ວໃນທັນໃດນັ້ນຂ້າພະເຈົ້າກໍຄິດຂຶ້ນໄດ້ວ່າ ໂອ...ຂ້າພະເຈົ້າໄດ້ເຮັດກັບເພື່ອນຮ່ວມງານແນວໃດແດ່ ຄິດວ່າຕົນເອງເປັນເຈົ້າຂອງໆ ເຂົາເຈົ້າ ເມື່ອເກີດຄວາມຜິດພາດກໍຕຳໜິເຂົາເຈົ້າ*

ໂດຍທີ່ບໍ່ຄິດ ຂ້າພະເຈົ້າເຮັດກັບເຂົາເຈົ້າເໝືອນກັບວ່າໄດ້ຍືມມາຈາກພຣະເຈົ້າຫລືບໍ? ຄວາມສຳນຶກດັ່ງກ່າວໄດ້ເກີດຂຶ້ນກັບຂ້າພະເຈົ້າເໝືອນກັນ.

ຊາຍຊະຣາທີ່ອ່ານບໍ່ໄດ້ຄົນນີ້ໄດ້ໃຊ້ເຫດຜົນແລະການເບິ່ງເຫັນຄວາມຈິງທັງໝົດ ແລ້ວມາສລຸບໃຫ້ເຫດຜົນເພື່ອໃຫ້ມີຄວາມເຂົ້າໃຈແລະໝູນໃຊ້ພຣະຄຳຂອງພຣະເຈົ້າຫລືບໍ? ລາວໄດ້ໃຊ້ຄຳຖາມເພື່ອໃຫ້ຜູ້ຟັງໄດ້ຄົ້ນພົບຄວາມຈິງຝ່າຍວິນຍານຫລືບໍ? ຜູ້ນຳທີ່ຈົບການສຶກສາ, ຄົນທີ່ຮູ້ພຣະຄັມພີດີ, ຈະໄດ້ຮັບການສອນເຣື່ອງການໝູນໃຊ້ພຣະຄຳຂອງພຣະເຈົ້າຈາກຜູ້ທີ່ອ່ານບໍ່ໄດ້ ແລະຈາກວັດທະນະທັມອື່ນໄດ້ຫລືບໍ? ໄດ້...ໄດ້ຕິ...ໄດ້ແທ້.

ໂຮງຮຽນພຣະຄັມພີປາກເປົ່າ Oral Bible School (OBSs)

ໂຮງຮຽນນີ້ເກີດຂຶ້ນຈາກຄວາມສົນໃຈຂອງຜູ້ທີ່ມາຝຶກອົບຮົມເລົ່າເຣື່ອງເຈາະໃຈ ທີ່ຢາກຈະຮຽນພຣະຄັມພີໃຫ້ເລິກເຊິ່ງຫລາຍຂຶ້ນ ທັງສິດຍາພິບານແລະຜູ້ນຳໄດ້ຮ້ອງຂໍໃຫ້ມີໂອກາດໄດ້ຮຽນເຣື່ອງຕ່າງໆ ໃນຊຸມຊົນຫລາຍຂຶ້ນ ດ້ວຍເຫດນີ້ຈຶ່ງເຮັດໃຫ້ພວກເຮົາອອກແບບໂຮງຮຽນພຣະຄັມພີປາກເປົ່າຂຶ້ນມາ.

ຄົນທີ່ຕ້ອງການເຂົ້າໂຮງຮຽນຕ້ອງສົ່ງໃບສມັກຂອງຕົນ ຫລືສິດຍາພິບານທ້ອງຖິ່ນຈະເປັນຜູ້ເລືອກເອົາຄົນຂອງຕົນເພື່ອເປັນນັກຮຽນ ຈະເລືອກເອົາ 12 ຄົນ ສ່ວນຫລາຍແມ່ນຜູ້ເຄີຍຜ່ານການຝຶກອົບຮົມມາແລ້ວ ຫລັງຈາກນັ້ນເຂົາເຈົ້າກໍຈະໄດ້ຮັບການຝຶກອົບຮົມເປັນພິເສດອີກ 1 ອາທິດໂດຍຄຣູສອນເລົ່າເຣື່ອງເຈາະໃຈ ຜູ້ສອນຈະເຂົ້າໄປມີໜ້າທີ່ເປັນຜູ້ດູແລທີ່ວໄປ.

ສ່ວນຫລາຍໂຮງຮຽນຈະໃຊ້ເວລາ 1 ປີ, ໃນຫລັກສູດ 1 ປີນັ້ນນັກຮຽນຈະພົບກັນເທື່ອລະ 2 ອາທິດແລະກັບຄືນເມືອບ້ານ 2 ອາທິດ ບາງຄົນອາດຈະຕ້ອງເດີນທາງທຸກມື້ ສ່ວນຜູ້ດູແລຈະເຂົ້າມາຢ້ຽມຢາມໂຮງຮຽນສາມວັນໃນຕອນຈົບຂອງທຸກໆ ການຮຽນ 2 ອາທິດ ນັກຮຽນຕ້ອງຊື້ອາຫານກິນເອງຫລືເອົາອາຫານຂອງຕົນມາກິນທີ່ໂຮງຮຽນ ສິດຍາພິບານຫລືສະມາຊິກຈະຈັດທີ່ພັກໃຫ້ແກ່ນັກຮຽນຕາມຄວາມເໝາະສົມ.

ຫລັກສູດການຮຽນແມ່ນ ການຮຽນຮູ້ແລະໃຊ້ເຣື່ອງເພື່ອສົນທະນາ 210 ເຣື່ອງຈາກພຣະຄັມພີ ຖ້າຫາກຈົບການຮຽນແລ້ວແຕ່ເຫັນວ່າບາງຄົນຍັງຮູ້ເຣື່ອງບໍ່ໝົດ ສຳລັບຜູ້ທີ່ຮູ້ເຣື່ອງບໍ່ໝົດຈະບໍ່ໄດ້ຮັບໃບປະກາສນີຍະບັດເທື່ອຈົນກວ່າເຂົາເຈົ້າຈະຮຽນຈົບທຸກເຣື່ອງ. ໃຜທີ່ມີຄວາມສາມາດໃນການຝຶກອົບຮົມແລະສາມາດປະກາດໄດ້ ເຮົາຈະເອີ້ນເຂົາເຈົ້າວ່າ "ຄຣູຝຶກ" ແລະເປັນສ່ວນນຶ່ງຂອງການຝຶກອົບຮົມເຊັ່ນດຽວກັນ.

ອາຈານທ່ານນຶ່ງ (ບິດຊ໊ອບ) ສາມາດຈັດໂຮງຮຽນພຣະຄັມພີປາກເປົ່າໄດ້ດີຫລາຍ ສະມາຊິກຄຣິສຕະຈັກຂອງເພິ່ນທີ່ເຮັດງານໃນສວນດອກໄມ້ຈະພົບກັນທຸກມື້ຕອນກິນເຂົ້າທ່ຽງ ເພິ່ນໄດ້ຈັດໃຫ້ມີການຮຽນເປັນ 4 ກຸ່ມຊຶ່ງມີການສົນທະນາກັນຈາກການຮຽນ 5 ເຣື່ອງຕໍ່ອາທິດ ເມື່ອຄົນງານອື່ນໆໄດ້ຍິນຂ່າວນີ້ກໍຢາກຮຽນນຳ ຈຶ່ງເຂົ້າມາຮ່ວມຟັງການເລົ່າເຣື່ອງ ໃນສີ່ເດືອນທຳອິດໄດ້ມີຄົນຮັບເຊື່ອຫລາຍຈົນໄດ້ຕັ້ງຄຣິສຕະຈັກຂຶ້ນໃໝ່ອີກ 16 ແຫ່ງ.

ໃນບ່ອນເຮັດງານບາງບ່ອນ ຄົນງານຈະພົບກັນທຸກມື້ຫລັງຈາກເລີກງານ ໂດຍມີເປົ້າໝາຍວ່າຈະຮຽນເລົ່າເຣື່ອງໃຫ້ໄດ້ເຖິງ 296 ເຣື່ອງ.

ໃນປະເທດອິນເດັຽ ຈັດໃຫ້ມີໂຮງຮຽນຂຶ້ນໃນບ້ານທຸກຕອນແລງ ໂດຍມີສາມສີ່ຄອບຄົວມາຮວມກັນຮຽນ.

ມີຜູ້ນຳທ່ານນຶ່ງໃນປະເທດຟີລິບປິນທີ່ຈັດລາຍການວິທະຍຸ ລາວໄດ້ເລົ່າເຣື່ອງເຈາະໃຈໃຫ້ສອງສາມຄົນຟັງໃນຫ້ອງສິ່ງ ຄົນທີ່ຟັງວິທະຍຸຈະໂທຣະສັບມາຫາ ຫລືສິ່ງເທັກມາເພື່ອຕອບຄຳຖາມ ບາງຄຳຕອບມາຈາກບັນດາຜູ້ທີ່ຢູ່ໃນຂົງເຂດຂອງກຸ່ມຜູ້ກໍ່ການຮ້າຍ.

ດັ່ງນັ້ນ ຜູ້ນຳຄົນນັ້ນຈຶ່ງຕັດສິນໃຈທຳການຝຶກອົບຮົມຜ່ານທາງວິທະຍຸ ຄວາມສຳເຣັດໃນການຝຶກອົບຮົມທາງວິທະຍຸຈຶ່ງເກີດຂຶ້ນຢ່າງເດັ່ນຊັດ ເມື່ອລາວເວົ້າເຖິງໂຮງຮຽນພຣະຄັມພີປາກເປົ່າກໍມີຄົນໂທຣະສັບຖາມວ່າ, "ເປັນຫຍັງເຮົາຈຶ່ງຈະມີໂຮງຮຽນໃນເກາະຂອງພວກເຮົາບໍ່ໄດ້?"

ຈາກຄຳຮ້ອງຂໍນັ້ນ ຈຶ່ງເຮັດໃຫ້ເກີດໂຮງຮຽນພຣະຄັມພີປາກເປົ່າເຄື່ອນທີ່ຂຶ້ນມາ ໃນສາມບ່ອນຈະມີກຸ່ມເຈັດຄົນ, ກຸ່ມສິບສາມຄົນແລະກຸ່ມສິບເຈັດຄົນ ທີ່ຈະຮວມເຂົ້າກັນໃນຂົງເຂດຂອງເຂົາເຈົ້າ ແລະຮຽນເລົ່າເຣື່ອງຕ່າງໆ ສາມເທື່ອຕໍ່ອາທິດ ເຂົາເຈົ້າຈະໂທຣະສັບມາຫາຜູ້ສອນເພື່ອເລົ່າເຣື່ອງໃຫ້ຟັງ ແລະເວົ້າວ່າເຂົາເຈົ້າໄດ້ພົບຂຸມຊັບຝ່າຍວິນຍານຢູ່ໃນເຣື່ອງໃດແດ່.

ຫລັງຈາກຕັ້ງໂຮງຮຽນດັ່ງກ່າວຂຶ້ນໄດ້ສອງປີ ກໍສິ່ງຜົນໃຫ້ມີຈຳນວນໂຮງຮຽນພຣະຄັມພີປາກເປົ່າເພີ້ມຂຶ້ນອີກໃນ 9 ປະເທດ ຈາກໂຮງຮຽນດຽວກາຍເປັນໂຮງຮຽນເຖິງ 60 ແຫ່ງ. ນັກຮຽນໃນໂຮງຮຽນພຣະຄັມພີປາກເປົ່າປະມານ 40 % ເປັນຄົນທີ່ຈົບການສຶກສາຈາກໂຮງຮຽນພຣະຄັມພີ ສ່ວນຫລາຍຈະເປັນສິດຍາພິບານ ແລະເປັນຜູ້ປະກາດຂ່າວປະເສີດ. ສະຖິຕິການຮຽນຈົບມີເຖິງ 95%

ຜົນກະທົບຈາກໂຮງຮຽນພຣະຄັມພີປາກເປົ່າ ຕົກໃຈ ປລາດໃຈ ແລະຢ້ານກົວ

ລອງຄິດເບິ່ງດູວ່າ ພວກເຮົາຕົກໃຈຫລາຍພຽງໃດ ເມື່ອຜູ້ອຳນວຍການໂຮງຮຽນຈາກອັຟຣິກາໂທຣະສັບມາບອກວ່າ, "ເຈົ້າໜ້າທີ່ຜູ້ທຳການຝຶກອົບຮົມທີ່ທະເລສາບວິກຕໍເຣັຽ ຫາກໍພົບບັນຫາໃໝ່ ຄົນໃນຂົງເຂດນັ້ນມີເມັຽຫລາຍຄົນ ບໍ່ພຽງແຕ່ທ່ານັ້ນ ສິດຍາພິບານສ່ວນຫລາຍກໍມີເມັຽຫລາຍຄົນເຊັ່ນດຽວກັນ! ແລ້ວພວກເຮົາຈະເຮັດແນວໃດດີ?" ເຮົາຈະເລືອກເອົາເຣື່ອງໃດມາເລົ່າຈຶ່ງຈະຊ່ອຍແກ້ບັນຫານີ້ໄດ້?"

ຫລັງຈາກຢູ່ກັບຄວາມຕົກໃຈຄາວນຶ່ງ ຂ້າພະເຈົ້າກໍສແວງຫານ້ຳພຣະທັຍພຣະເຈົ້າວ່າຄວນຈະໃຊ້ເຣື່ອງໃດ ພຣະເຈົ້າຊົງເຕືອນໃນທັນທີວ່າ, "ເຈົ້າບໍ່ຕ້ອງເລືອກເຣື່ອງໃດເຣື່ອງນຶ່ງໂດຍສະເພາະດອກ ພຣະວິນຍານຈະຊົງນຳເຣື່ອງທີ່ໃຊ້ໃນການຝຶກອົບຮົມນັ້ນ ເຮັດໃຫ້ເຂົາເຈົ້າເຂົ້າໃຈຂ່າວສານທີ່ພຣະອົງຊົງມີໄວ້ໃຫ້ແຕ່ລະຄົນເອງ"

"ແນ່ໃຈແທ້ບໍ ຂນ້ອຍ?" ຜູ້ອຳນວຍການຖາມກັບຄືນ "ຢ່າລືມວ່າແຖວນີ້ຢູ່ຫ່າງໄກຈາກຄົນອື່ນໆ ຫລາຍ ຄຣູທີ່ສອນກຳລັງຢູ່ເທິງຕົ້ນໄມ້ເພາະເປັນບ່ອນດຽວເທົ່ານີ້ທີ່ມີສັນຍານໂທຣະສັບ "ນີ້ແມ່ນຄຳຕອບສຸດທ້າຍແມ່ນບໍ ຂນ້ອຍ?"

ຂ້າພະເຈົ້າບອກລາວ່າ ນີ້ແມ່ນຄຳຕອບທີ່ພຣະເຈົ້າປະທານໃຫ້ຢ່າງແຈ່ມແຈ້ງວ່າ ຫາກເຮົາເຊື່ອໃນພຣະເຈົ້າຢ່າງ ແທ້ຈິງກໍບໍ່ຄວນມີຊີວິດແບບນັ້ນ ຂ້າພະເຈົ້າຢາກໃຫ້ພຣະເຈົ້າສັ່ງສອນເຂົາເຈົ້າໃນເວລາຂອງພຣະອົງ" ດັ່ງນັ້ນເມື່ອ ຄຣູສອນໄດ້ຄຳຕອບແລ້ວລາວກໍລົງຈາກຕົ້ນໄມ້...ສ່ວນພວກເຮົາກໍພາກັນອະທິຖານເພື່ອ.
ຫລັງຈາກຈົບການຝຶກອົບຮົມ ກຸ່ມຄຣູສອນກໍເດີນທາງກັບແລະສິ່ງລາຍງານມາວ່າ...
"ໃນມື້ທີສາມທີ່ພວກເຮົາຝຶກອົບຮົມ ຄົນນຶ່ງກຳລັງຕຸ່ມເຣື່ອງຊຶ່ງເຮັດໃຫ້ເກີດການໂຕ້ຖຽງກັນຢ່າງຮຸນແຮງ ລອງເດົາ ເບິ່ງດູ ວ່າແມ່ນເຣື່ອງຫຍັງ? ກໍແມ່ນເຣື່ອງມີເມັຽຫລາຍຄົນນັ້ນແຫລະ ແຕ່ກໍແປກໃຈແທ້ໆ ທີ່ບໍ່ມີຄຣູຄົນໃດເອົາເຣື່ອງ ນີ້ມາເວົ້າເລີຍ ແລະບໍ່ມີການແກ້ໄຂບັນຫາໃດໆ ແຕ່ພຣະວິນຍານບໍຣິສຸດໄດ້ຫວ່ານເມັດພຣະຄຳລົງໃສ່ຖ້ຳມກາງເຂົາ ເຈົ້າແລ້ວ"

ເຂົາເຈົ້າແລະພວກສິດຍາພິບານໄດ້ມາອ້ອມຮອບພວກເຮົາແລະບອກວ່າ, "ຄຣູຄຣິສຕຽນຫາກໍເຂົ້າມາໃນເກາະຂອງ ພວກເຮົາເປັນເທື່ອທຳອິດຍັງໄດ້ເອົາພຣະຄັມພີມານຳ ແລະຍັງໃຊ້ວິທີທີ່ເຮັດໃຫ້ພວກເຮົາເຂົ້າໃຈພຣະຄັມພີເພີ້ມອີກ ຢ່າງຫລວງຫລາຍ" ເຂົາເຈົ້າຮ້ອງຂໍໃຫ້ພວກເຮົາຕັ້ງໂຮງຮຽນພຣະຄັມພີປາກເປົ່າຂຶ້ນແລະພວກເຮົາກໍຕອບຕົກລົງ

ສອງອາທິດຜ່ານໄປ ໂຮງຮຽນກໍໄດ້ເລີ້ມທຳການສອນ...
ສາມເດືອນທີ່ໂຮງຮຽນໄດ້ທຳການສອນ ພວກເຮົາໄດ້ຮັບລາຍງານທີ່ເຮັດໃຫ້ແປກໃຈຈາກຜູ້ອຳນວຍການ (ເວລານັ້ນ ມີນັກຮຽນ 12 ຄົນ ແລະຮຽນໄປພ້ອມກັບມີການສົນທະນາໄປແລ້ວ 60 ເຣື່ອງ) ຜູ້ອຳນວຍການລາຍງານວ່າພຣະເຈົ້າ ຊົງໃຊ້ເຣື່ອງໃດເພື່ອເຮັດໃຫ້ເຂົາເຈົ້າປ່ຽນແປງສິດຍາພິບານໃນຂົງເຂດນັ້ນ ເຂົາເຈົ້າໄດ້ເຫັນພ້ອມກັນວ່າການມີເມັຽ ຫລາຍຄົນເປັນເຣື່ອງທີ່ບໍ່ຖືກຕ້ອງ ດັ່ງນັ້ນເຂົາເຈົ້າຈຶ່ງໄດ້ເຮັດສັນຍາຮ່ວມກັນວ່າຈະບໍ່ມີເມັຽຫລາຍຄົນອີກຕໍ່ໄປ ເຂົາ ເຈົ້າໄດ້ຕົກລົງກັນວ່າຈະໂຄຣິບນັບຖືພຣະຄຳຂອງພຣະເຈົ້າ ສ່ວນສິດຍາພິບານທີ່ມີເມັຽຫລາຍຄົນກໍໄດ້ເຊົາເປັນສິດ ຍາພິບານ. ຕັ້ງແຕ່ນັ້ນມາເຂົາເຈົ້າທຸກຄົນກໍໄດ້ເຮັດຕາມທີ່ຕົກລົງກັນໄວ້.

ນຶ່ງປີຜ່ານໄປ ການຮຽນກໍຈົບຫລັກສູດ ນັກຮຽນທັງ 12 ຄົນໄດ້ຮຽນຈົບ ເຂົາເຈົ້າຕ່າງກໍພາກັນອອກໄປສ້າງໂຮງຮຽນ ແບບດຽວກັນນີ້ອີກ.

ຊາຍຄົນທຳອິດໄດ້ເຊີນໃຫ້ຄຣູໄປສອນ ແລະໄດ້ກ່າວຄຳພยานທີ່ໜ້າປະທັບໃຈວ່າ...

"ຂ້ານ້ອຍໄດ້ພยายามເຖິງສາມປີ ທີ່ຢາກໃຫ້ຜູ້ອຳນວຍການເລົ່າເຣື່ອງເຈາະໃຈເຂົ້າມາທີ່ນີ້ ພວກເຮົາຕ້ອງການ ເງິນ ເພື່ອຊ່ອຍບ້ານລ້ຽງເດັກກາຫ້າ ແລະຂ້ານ້ອຍໝັ້ນໃຈວ່າເພິ່ນຈະຊ່ອຍຂ້ານ້ອຍແນ່ນອນ ເພາະເພິ່ນມີຕາ ນ່າງພົ້ອພັນກັບທາງຕາເວັນຕົກ, ຂ້ານ້ອຍໄດ້ພົບກັບເພິ່ນປີກາຍນີ້ແຕ່ເພິ່ນບໍ່ໄດ້ໃຫ້ເງິນຂ້ານ້ອຍ ທີມງານຂອງ ເພິ່ນກັບສອນຂ້ານ້ອຍແລະເພື່ອນໆ ໃນທະເລສາບອີກຕໍ່ເຮັ່ງນີ້ ວ່າຈະຮຽນພຣະຄາຂອງພຣະເຈົ້າຢ່າງໃດ" ຕອນນີ້ຂ້ານ້ອຍມີຄວາມຊົມຊື່ນຍິນດີຫລາຍ ຈຶ່ງຢາກຈະລາຍງານວ່າ ອາທິດທີ່ຜ່ານມານີ້ ເດັກນ້ອຍຈານວນ 70 ຄົນໄດ້ຮັບການສນັບສນູນຊ່ອຍເຫລືອ ຊຶ່ງເປັນຊຸມຊົນຂອງພວກເຮົາເອງທີ່ຊີວິດໄດ້ຮັບການປ່ຽນແປງເປັນຜູ້ ຊ່ອຍເຫລືອເດັກກຳພ້າຂອງພວກເຮົາ.

[ພວກເຮົາຕ້ອງຕົກຊະເງືໍກັບການປ່ຽນແປງທີ່ເກີດຂຶ້ນໃນຊຸມຊົນນັ້ນ ເມື່ອຄົນຟັງພຣະຄຳຂອງພຣະເຈົ້າແລະມີຄວາມ ເຂົ້າໃຈຢ່າງຖ່ອງແທ້ ເຂົາເຈົ້າກໍຈະຕອບສນອງດ້ວຍການຖິ້ມໃຈເກົ່າເອົາໃຈໃໝ່ ແລະປ່ຽນແປງຈາກວັທນະທັມປະ

ເພນີທີ່ຢັ່ງ ຮາກເລິກມາດິນ ເຂົາເຈົ້າສະແດງຄວາມຮັກຕໍ່ຄົນທີ່ຊ່ອຍເຫລືອຕົນເອງບໍ່ໄດ້ ເຂົາເຈົ້າໃຊ້ເງິນຂອງເຂົາເຈົ້າເອງ ເຂົາ ເຈົ້າກາຍເປັນຄົນທີ່ "ຂັບຕາມພຣະຄຳ" ດັ່ງທີ່ຂຽນໄວ້ໃນພຣະທັມຢາໂກໂບ 1:27 *"ທັມມະທີ່ບໍຣິສຸດແລະບໍ່ມີການຊົ່ວ ມົວຫມອງຕໍ່ພຣະພັກພຣະເຈົ້າ ຜູ້ຊົງເປັນພຣະບິດາ ກໍມີດັ່ງນີ້ ຄືການຢ້ຽມຢາມລູກກຳພ້າ ແລະຍິງໝ້າຍທີ່ມີຄວາມ ທຸກຮ້ອນ ແລະການຮັກສາຕົວໃຫ້ພົ້ນຈາກການດ່າງພ້ອຍຂອງໂລກ"*]

ຍັງມີຄົນຮຽນຈົບ...ຕໍ່ໄປ

ຖ້າຫາກມີເງິນທຶນ ຜູ້ຜ່ານການຝຶກອົບຮົມ OBS ຈະໄດ້ຮັບຂອງຂວັນເປັນເຄື່ອງຟັງສຽງທີ່ໃຊ້ພລັງງານແສງຕາເວັນ ຫລັງຈາກຮຽນຈົບໄປແລ້ວຫລາຍຄົນຍັງຄົງຮັບໃຊ້ເປັນສິດຍາພິບານ ເປັນຄຣູ ແລະເປັນຜູ້ປະກາດຂ່າວປະເສີດ ປະ ມານ 25% ຂອງຜູ້ທີ່ຮຽນຈົບ ໄດ້ຕັດສິນໃຈເລືອກທີ່ຈະເປັນຜູ້ດູແລໂຮງຮຽນພຣະຄັມພີປາກເປົ່າ ແລະເປັນຜູ້ຝຶກອົບ ຮົມການເລົ່າເຣື່ອງເຈາະໃຈ ເຂົາເຈົ້າອາສາສມັກຮັບໃຊ້ໂດຍບໍ່ໄດ້ຮັບເງິນເດືອນ ເມື່ອມີຄວາມຕ້ອງການເກີດຂຶ້ນ TGSP ຈະຊ່ອຍຄ່າເດີນທາງໃນອັຕຣາຄ່າຕ່ຳສຸດແລະຄ່າອາຫານສຳລັບຜູ້ຝຶກອົບຮົມແລະຜູ້ດູແລ ບາງເທື່ອກໍຈະມີເງິນ ພິເສດຊ່ອຍເຫລືອຜູ້ທີ່ມີຄວາມຈຳເປັນຢ່າງແທ້ຈິງ.

ການເພີ້ມສັກຍະພາບ(ຄວາມສາມາດ)ໃນພູມິພາກ

ຜູ້ອຳນວຍການໃນປະເທດນຶ່ງໄດ້ຖືກຮັບເຊີນໃຫ້ໄປສອນໃນໂຮງຮຽນທົ່ວປະເທດຂອງລາວ ນອກຈາກຈະມີສ່ວນໃນ ໂຮງຮຽນແລ້ວ ຄຣູສອນເລົ່າເຣື່ອງເຈາະໃຈໃນປະເທດນີ້ຍັງໄດ້ທຳການຝຶກອົບຮົມແລະດູແລໂຮງຮຽນພຣະຄັມພີ ປາກເປົ່ານຳ ການຖືກເຊີນເທື່ອນັ້ນເຮັດໃຫ້ພວກເຮົາໄດ້ພັທນາເພີ້ມສັກຍະພາບ(ຄວາມສາມາດ) ໃນຂົງເຂດນັ້ນໆ ຊຶ່ງເປັນແຜນການທີ່ຈະໃຊ້ເງິນທຶນ ເວລາ ແລະຄຣູຝຶກອົບຮົມຢ່າງມີປະສິດທິພາບ ແລະໄດ້ຮັບປະສິດທິຜົນຫລາຍທີ່ ສຸດ

ຍຸດທະວິທີທີ່ມີຕໍ່ຂົງເຂດນັ້ນໆ ໃນແຕ່ລະບ່ອນແມ່ນການຮັບໃຊ້ແບບຮ່ວມມືກັນ ການຝຶກອົບຮົມແລະໂຮງຮຽນພຣະ ຄັມພີປາກເປົ່າ ໃນເຂດນຶ່ງປະກອບດ້ວຍໝູ່ບ້ານ 25 ບ່ອນ ໃນລະຍະເກົ້າເດືອນຈະມີຄຣູຝຶກອົບຮົມໄປຢ້ຽມຢາມ ແຕ່ລະເຂດສາມເທື່ອ ຫລັງຈາກການຝຶກອົບຮົມສາມເທື່ອນັ້ນ ຄຣູຝຶກອົບຮົມຄົນນຶ່ງໄດ້ອອກໄປຢ້ຽມຢາມເຂດທີ່ມີ ໂຮງຮຽນພຣະຄັມພີປາກເປົ່າຕໍ່ໄປ ສິບເອັດເດືອນຕໍ່ມາຄຣູສອນຍັງຄົງອອກຢ້ຽມຢາມໂຮງຮຽນ ເພື່ອສນັບສນູນ ແລະ ດູແລທຸກໆ ເດືອນ.

ການເພີ້ມສັກຍະພາບນັ້ນຍັງຮວມໄປເຖິງການໃຫ້ເຣື່ອງຂອງພຣະເຈົ້າ ເຄື່ອງຟັງສຽງພລັງແສງຕາເວັນ ພ້ອມກັບເນື້ອ ຫາພຣະຄັມພີ ແລະການຝຶກອົບຮົມ ລວມທັງອຸປກອນອື່ນໆ ທີ່ເຫັນວ່າຈຳເປັນ ເພາະການເດີນທາງແຕ່ລະເທື່ອນັ້ນ ກໍມີເປົ້າໝາຍຫລາຍຢ່າງ ແລະຄ່າເດີນທາງ ຄ່າຢູ່ກິນ ຂອງຄຣູກໍບໍ່ມີຫລາຍ ຈະມີຄົນຈຳນວນ 2500 ຄົນໄດ້ຮັບຜົນ ປໂຍດຈາກການໄປຢ້ຽມຢາມ ຫລັງຈາກໄດ້ຢ້ຽມຢາມແລ້ວຜູ້ນຳທ້ອງຖິ່ນຈະໄດ້ຮັບການຝຶກອົບຮົມ ແລະມີອຸປກອນ ທຸກຢ່າງນຳ ເພີ້ມຄວາມສາມາດເພື່ອໃຫ້ເຂົາເຈົ້ານຳພາແລະຮັບໃຊ້ ແລະໃຊ້ພຣະຄຳພຣະເຈົ້າຢ່າງເຂົ້າໃຈ ແລະສາ ມາດໝູນໃຊ້ໃນຊີວິດຝ່າຍວິນຍານໄດ້.

✞

ບົດທີ 9

ເຊົາໃຊ້ສໍ ປາກກາ....ຫັນມາໃຊ້ຂະບວນການຄວາມຄິດ

ເຊົາໃຊ້ປາກກາ: ຄວາມພຍາຍາຍາມເພື່ອໝູນໃຊ້ຍຸທວິທີປາກເປົ່າ

ເວລາໂຕເໝັ້ນຢ້ານກົວ ມັນຊິປ່ອຍຂົນທີ່ແຫລມອອກໄປຕໍ່ສູ້ກັບສັດຕຣູ ຂົນທີ່ແຫລມຂອງມັນຈະປັກເຂົ້າໄດ້ງ່າຍ ເພາະມັນແຫລມຄົມ ແຕ່ການທີ່ຂົນອອກໄປຈາກໂຕມັນນັ້ນ ກໍເຮັດໃຫ້ມັນເຈັບປວດເໝືອນກັນ

ການດຶງຂົນແຫລມອອກ ຫລືດຶງປາກກາອອກຈາກມືນັ້ນ ບໍ່ໄດ້ໝາຍເຖິງການເຊົາໃຊ້ວິທີການເທສນາແລະການສອນ ຊຶ່ງໄດ້ປະສົບກັບຄວາມສຳເຣັດມາແລ້ວ ແຕ່ປາກກາໃນທີ່ນີ້ໝາຍເຖິງຄວາມເຊື່ອທີ່ວ່າ...

- ທ່ານອາດຈະສອນບໍ່ໄດ້ດີ ຖ້າບໍ່ໄດ້ຈົດບັນທຶກໄວ້ເພື່ອເຕືອນຄວາມຊົງຈຳ
- ທ່ານຕ້ອງໃຊ້ຂໍ້ມູນອື່ນໆ ນຳ ນອກເໜືອໄປຈາກພຣະຄັມພີ
- ທ່ານບໍ່ສາມາດສອນໄດ້ຢ່າງເລິກເຊິ່ງ ຖ້າບໍ່ເຮັດຕາມທີ່ເຄີຍເຮັດມາ
- ຜູ້ທີ່ບໍ່ໄດ້ຮຽນໜັງສື ບໍ່ສາມາດຮຽນດ້ວຍວິທີຫາຂໍ້ສລຸບຈາກສິ່ງທີ່ສັງເກດໄດ້ (ຄາດຄະເນ)

ຈາກປະສົບການຂອງພວກເຮົາ ຄົນທຳອິດທີ່ເຂົ້າມາຮັບການຝຶກອົບຮົມຕ້ອງຕໍ່ສູ້ກັບຄວາມຮູ້ສຶກແບບເກົ່າໆ ຂອງຕົນ ເມື່ອລາວມາພົບກັບວິທີການເລົ່າເຣື່ອງເຈາະໃຈ ໂດຍສະເພາະແລ້ວແມ່ນຄົນທີ່ເຄີຍຮຽນສາສນາສາດມາ ມັກຈະມີ ບັນຫາຫລາຍກວ່າຄົນທີ່ຮຽນແບບປາກເປົ່າ.

ເພື່ອຈະໄດ້ສອນຢ່າງມີປະສິດທິພາບທີ່ສຸດ ພວກເຮົາຂໍໃຫ້ທ່ານທົດລອງແນວຄວາມຄິດທຸກໆ ແນວຄິດ ຂອງການ ເລົ່າເຣື່ອງເຈາະໃຈ ແຕ່ການທີ່ຈະບໍ່ຈົດບັນທຶກກໍເປັນເຣື່ອງທີ່ຍາກຫລາຍສຳລັບຄົນທີ່ຄຸ້ນເຄີຍຈົດມາແລ້ວ ເຮົາຈຳ ເປັນຕ້ອງດຶງມັນອອກ ເໝືອນກັບດຶງຂົນເໝັ້ນ ຜູ້ທີ່ຖືກດຶງ...ກໍຈະຮ້ອງ...ໂອຍ ແຕ່ເມື່ອມັນອອກໄປແລ້ວ ລາວກໍຈະ ແປກໃຈແລະດີໃຈທີ່ຄວາມສາມາດທຸກຂັ້ນຕອນນັ້ນເຮັດໜ້າທີ່ຂອງມັນຢ່າງໄດ້ຜົນ !

ການນຳສເນີພຣະຄຳວິທີເກົ່າ ປຽບທຽບກັບ ການເລົ່າເຣື່ອງເຈາະໃຈ

ວິທີການສອນຈາກເຣື່ອງລາວໂດຍທົ່ວໄປ. ເມື່ອໃຊ້ວິທີເທສນາແລະການສອນແບບເກົ່າ ກໍຈະມີການອ່ານເຣື່ອງ ຕໍ່ ຈາກນັ້ນກໍຈະອະທິບາຍເປັນຂໍ້ໆ ແລະຈາກນັ້ນຂໍ້ທີ່ອ່ານໄປກໍຈະເປັນໂຄງຮ່າງໃນການສອນຂອງມື້ນັ້ນ ແລະຈະມີການ ເພີ້ມເຕີມພຣະຄຳເຂົ້າໃສ່ເພື່ອເນັ້ນຄວາມຈິງບາງປະການ.

ບາງເທື່ອຈະມີການສເນີຂໍ້ມູນອື່ນໆ ທີ່ບໍ່ຢູ່ໃນພຣະຄັມພີ ແລະຈະມີຄຳກຣິຍາ ເຮັບເຮີ ພ້ອມກັບຄວາມໝາຍຂອງມັນ ເພື່ອເສີມໃຫ້ມີຄວາມເຂົ້າໃຈຫລາຍຂຶ້ນ ບາງເທື່ອກໍເພີ້ມເຣື່ອງຕລົກ ຊວນຫົວ ເຂົ້າໃສ່ ເພື່ອໃຫ້ຄົນຟັງມີສ່ວນແລະ ສົນໃຈຫລາຍຂຶ້ນ. ເມື່ອມີການນຳໃຊ້ໃນຊີວິດ ກໍຈະເອົາການນຳໃຊ້ນັ້ນເຊື່ອມໂຍງເຂົ້າກັບຄຳເທສນາ ຫລືອາດຈະ ເອົາສລຸບກ່ອນຈະຈົບການເທສນາ ເຮົາໄດ້ເຫັນມາແລ້ວວ່າການນຳມາໃຊ້ແມ່ນມາຈາກຜູ້ເທດທີ່ບອກວ່າ ຜູ້ຟັງຄວນ ເຮັດຫຍັງ ແລະບໍ່ຄວນເຮັດຫຍັງ ວິທີແບບນີ້ກໍບໍ່ຜິດແຕ່ຢ່າງໃ ແຕ່ກໍບໍ່ແມ່ນແຕ່ວິທີດຽວເທົ່ານີ້ທີ່ຈະເທດແລະຈະ ສອນ

ວິທີການເລົ່າເຣື່ອງເຈາະໃຈ ໃນທາງກົງກັນຂ້ານ ເມື່ອເຮົາເລົ່າເຣື່ອງເຈາະໃຈຜູ້ຟັງຈະມີສ່ວນຮ່ວມໃນການຄົ້ນຫາຂໍ້ມູນຝ່າຍວິນຍານຈາກພຣະຄັມພີ ສິດຍາພິບານທີ່ຢາກໃຫ້ຜູ້ຟັງຂອງລາວມີສ່ວນໃນການສຶກສາພຣະຄັມພີກໍຈະດີໃຈທີ່ໄດ້ເຫັນຄົນຂອງລາວມີຄວາມຕື່ນເຕັ້ນດີໃຈທີ່ໄດ້ຄົ້ນພົບສິ່ງໃໝ່ໆ ຈາກພຣະຄຳຂອງພຣະເຈົ້າ.

ສິດຍາພິບານທີ່ເປັນນັກຂຽນຊຶ່ງມີການສຶກສາສູງທ່ານນຶ່ງ ລາວເປັນທັງຜູ້ນຳໃນການປະກາດກັບນັກສຶກສາໃນສະຫະຣັດອະເມຣິກາ ໄດ້ເຂົ້າມາຮັບການຝຶກອົບຮົມເລົ່າເຣື່ອງເຈາະໃຈ ໄດ້ໃຊ້ການເລົ່າເຣື່ອງເຈາະໃຈປະກອບກັບງານຮັບໃຊ້ຂອງລາວ ລາວໄດ້ຂຽນໄວ້ວ່າ...

> ຄວາມແຕກຕ່າງຂອງວິທີການເລົ່າເຣື່ອງເຈາະໃຈແລະວິທີການອ່ານແບບອື່ນໆ ນັ້ນແມ່ນ ວິທີເລົ່າເຣື່ອງເຈາະໃຈ ເຮົາບໍ່ເຮັດໃຫ້ພຣະຄັມພີເປັນປຶ້ມທີ່ຕ້ອງແປຄວາມໝາຍ ຊຶ່ງແບ່ງອອກເປັນຕອນໆ ແລະບໍ່ໄດ້ເຫັນວ່າເປັນການຈົດບັນທຶກທີ່ເກີດຂຶ້ນທີ່ນອກເໜືອໄປຈາກປະວັດສາດທີ່ແທ້ຈິງ ໃນຂອບເຂດຂອງການເລົ່າເຣື່ອງເຈາະໃຈ ເຮົາເຫັນເຫດການທີ່ມີຊີວິດ ເປັນພາບສະທ້ອນໃຫ້ເຫັນຄວາມຈິງ ຊຶ່ງເຮົາຈະຄົ້ນພົບຄວາມຈິງເຫລົ່ານັ້ນເຊັ່ນ ອາລົມແລະຄວາມຮູ້ສຶກຂອງຄົນໃນເຣື່ອງ ແລະຄວາມເຊື່ອມໂຍງຝ່າຍວິນຍານ ໄປຈົນຕລອດຈົບເຣື່ອງ.

ເມື່ອການເລົ່າເຣື່ອງເຈາະໃຈໄດ້ນຳສເນີໄປທົ່ວໂລກ ສິ່ງທີ່ຕອບກັບມານັ້ນແມ່ນ ຄົນທີ່ມີການສຶກສາໜ້ອຍຂໍ້ພັດມີຄວາມສາມາດໃນການເລົ່າເຣື່ອງໄດ້ໄວກວ່າຄົນທີ່ມີຄວາມຮູ້ສູງ ຄັນຊັ້ນຄົນທີ່ມີຄວາມຮູ້ໜ້ອຍສລາດກວ່າຊັ້ນບໍ? ບໍ ບໍ່ແມ່ນຈັ່ງຊັ້ນດອກ.

ເຮົາຄວນເຂົ້າໃຈວ່າ ເມື່ອຄົນໆ ນຶ່ງໄດ້ຮຽນຮູ້ດ້ວຍຣະບົບແບບນຶ່ງ ແລະປະສົບຄວາມສຳເຣັດດ້ວຍຣະບົບນັ້ນ ເມື່ອລາວມາຮຽນຕາມຣະບົບໃໝ່ກໍເບິ່ງຄືວ່າມັນກົງກັນຂ້ານກັບສິ່ງທີ່ລາວເຄີຍຮຽນມາ ຊຶ່ງເຫັນວ່າເປັນການທ້າທາຍທີ່ໃຫຍ່ພໍສົມຄວນ ດັ່ງທີ່ເວົ້າມານັ້ນ ຄົນທີ່ຮຽນສູງມັກຈະມີບັນຫາຫລາຍໃນການທີ່ຈະນຳເອົາປໂຍດຈາກທຸກຂັ້ນຕອນຂອງການເລົ່າເຣື່ອງເຈາະໃຈມາໃຊ້.

ເຖິງແມ່ນມີຄົນທີ່ຮຽນສູງໆ ເຂົ້າມາຝຶກອົບຮົມເລົ່າເຣື່ອງເຈາະໃຈ ເຂົາເຈົ້າກໍບໍ່ເຕັມໃຈທີ່ຈະຮຽນເຖິງ 100% ເມື່ອເຂົາເຈົ້າເລີ້ມຮຽນພຣະຄັມພີແບບປາກເປົ່າ ເຂົາເຈົ້າຈະມີຄວາມຮູ້ສຶກແບບແປກປລາດ ເພາະມັນແຕກຕ່າງຈາກສິ່ງທີ່ເຂົາເຈົ້າເຄີຍໄດ້ຮຽນມາ ແລະຜົນງານຕ່າງໆ ທີ່ເຂົາເຈົ້າໄດ້ສ້າງມາກໍບໍ່ແມ່ນຈາກການຮຽນແບບປາກເປົ່າ ດັ່ງນັ້ນປະຕິກິຣິຍາການຕອບໂຕ້ຕໍ່ວິທີການໃໝ່ໆ ນີ້ກໍແມ່ນ ເຂົາເຈົ້າຈະເລືອກເອົາບາງສ່ວນຂອງຂະບວນການເລົ່າເຣື່ອງເຈາະໃຈນີ້ພຽງເທົ່ານັ້ນ.

ການທີ່ເຂົາເຈົ້າຮູ້ສຶກບໍ່ສະດວກໃຈນັ້ນ ມາຈາກສາຍເຫດດັ່ງລຸ່ມນີ້...

- ຕ້ອງປະຖິ້ມເນື້ອຫາຂອງເຣື່ອງທີ່ຄືກັນ ເລືອກເອົາພຽງເຣື່ອງດຽວກໍພໍ
- ເປັນການຮຽນໂດຍທີ່ບໍ່ຕ້ອງຈົດບັນທຶກ
- ສອນໂດຍທີ່ບໍ່ມີການຈົດບັນທຶກ
- ຕ້ອງນຳສເນີໃນການຝຶກອົບຮົມຂອງເຣື່ອງດຽວ

- ບໍ່ມີໂອກາດທີ່ຈະໄດ້ໃຊ້ຂໍ້ມູນນອກພຣະຄັມພີ
- ການສົນທະນາແລກປ່ຽນຄວາມຄິດເຫັນນຳໄປສູ່ຄວາມຈິງ ບໍ່ເໝືອນກັບການອະທິບາຍ
- ນຳສເນີເຣື່ອງ(ເລ່ົາ)ໂດຍບໍ່ໄດ້ອ່ານ (ຫລືອ່ານໜ້ອຍທີ່ສຸດ)
- ເຊື່ອວ່າເຣື່ອງລາວນັ້ນໃຊ້ຢ່າງໂດດດ່ຽວ ບໍ່ຕ້ອງເພິ່ງຢ່າງອື່ນ
- ຍອມໃຫ້ມີການຄົ້ນພົບຄວາມຈິງຝ່າຍວິນຍານ ຣະຫວ່າງການສົນທະນາ
- ເຊື່ອວ່າສິ່ງທີ່ຄົ້ນພົບຈະຢູ່ໃນເຣື່ອງທີ່ຄຣູເລ່ົາມານັ້ນ ແລະຄ່ອຍເພີ້ມເຕີມຜ່ານທາງສົນທະນາ

ສິ່ງສຳຄັນ ພວກເຮົາບໍ່ໄດ້ຄິດວ່າ ເທັກນິກການສອນທີ່ເຄີຍໃຊ້ມານັ້ນຜິດແລະຕ້ອງປະຖິ້ມ ແຕ່ຍ້ອນຄວາມເຂົ້າໃຈດີ ຂອງພວກເຮົາວ່າ ຍັງມີຄົນຈຳນວນຫລາຍພ້ອມທີ່ຈະຍອມຮັບເອົາຂ່າວປະເສີດໂດຍຜ່ານການເລ່ົາເຣື່ອງທາງປາກ ເປ່ົາ ພວກເຮົາເຫັນຄວາມສຳຄັນຂອງການຊ່ວຍໃຫ້ເຂົາເຈ້ົາໄດ້ໃຊ້ເທັກນິກການສອນແບບໃໝ່ທີ່ເຫັນຜົນ ພວກເຮົາ ດີໃຈທີ່ໄດ້ເຫັນຄຣິສຕຽນ ສິດຍາພິບານແລະນັກສຶກສາ ມີຄວາມສົນໃຈທີ່ຈະໃຊ້ການນຳສເນີພຣະຄຳຂອງພຣະເຈ້ົາ ໂດຍຮວມເອົາວິທີການເລ່ົາເຣື່ອງເຈາະໃຈເຂົ້ົາໄປຮ່ວມ.

ຕ່ໍໄປນີ້ແມ່ນລາຍງານຈາກປະເທດໄທແລະປະເທດໄນຈີເຣັຽ ເຮັດໃຫ້ພວກເຮົາເຫັນຄຳຕອບກ່ຽວກັບບັນຫາທີ່ໄດ້ ກ່າວມານັ້ນ ໂດຍທ່ົວໄປແລ້ວພວກເຮົາຈະເຫັນວ່າ ເຂົາເຈ້ົາເຫັນຄວາມສຳຄັນຂອງການນຳເອົາວິທີການເລ່ົາເຣື່ອງ ເຈາະໃຈເຂົ້ົາປະກອບໃສ່.

ຜູ້ເຮັດງານກ່ຽວກັບຊາວໜຸ່ມໃນປະເທດໄທສັງເກດວ່າ...

"ຂ້ົາພະເຈ້ົາຄຸ້ນເຄັຽກັບການຕຽມບົດຮຽນ ວາງເປ້ົາໝາຍ ແລະເລ້ີມສອນບົດຮຽນດ້ວຍເປ້ົາໝາຍທີ່ຊັດແຈ້ງ ແລະ ຈະເນັ້ນເປ້ົາໝາຍນັ້ນຕລອດບົດຮຽນ ຮວບຮວມສລຸບໃນຕອນທ້ົາຍອີກເພ່ືອໃຫ້ຜູ້ຟັງຖືກຍ້ົາເຕືອນອີກ ຢ່ົາງໃດ ກໍດີ ເບ່ິງຄືວ່ົາ ຫລັງຈາກຮຽນແລ້ວຜູ້ຮຽນຍັງຈ່ືຈຳຫຍັງບ່ໍໄດ້ເລີຍ.

ແຕ່ສຳລັບການເລ່ົາເຣື່ອງເຈາະໃຈນ້ີ ມັນມີເປ້ົາໝາຍດີຄວບຄູ່ໄປກັບເປ້ົາໝາຍຂອງຂ້ົາພະເຈ້ົາ ຄວາມແຕກຕ່ົາງ ນັ້ນແມ່ນ ໃນຕອນສົນທະນານັ້ນຜູ້ຟັງພັດສາມາດພົບເປ້ົາໝາຍນັ້ນດ້ວຍຕ່ົວເອງໃນຂະນະທ່ີລາວຕອບຄຳຖາມ ຂອງຂ້ົາພະເຈ້ົາ ການຄົ້ນພົບດ້ວຍຕ່ົວເອງເປັນການຈາຣ່ືກເຣື່ອງລາວໄວ້ໃນໃຈແລະໃນຄວາມຄິດ ດ່ັງນັ້ນເຂົາ ເຈ້ົາຈ່ຶງຈ່ືຈຳສ່ິງທ່ີຂ້ົາພະເຈ້ົາຢາກຈະສອນໄດ້."

ຜູ້ນຳຄຣິສຕຽນທ່ີຮອບຄອບບາງທ່ົານ ມີຄວາມຫ່ວງໃຍນຳການສອນແຕ່ລະເຣື່ອງ ໂດຍສະເພາະຢ່ົາງຍ່ິງແມ່ນການ ໃຊ້ພຽງເຣື່ອງດຽວໂດຍບ່ໍໃຊ້ພຣະຄັມພີຂ້ົໍອ່ືນ ຈາກເຣື່ອງອ່ືນມາສນັບສນຸນ ຕ່ົໍຢ່ົາງເຊ່ັນ ມີຄົນຖາມວ່ົາ, "ແລ້ວຄົນ ຟັງຈະຮູ້ໄດ້ບ່ໍວ່ົາ ແຕ່ລະເຣື່ອງເປັນສ່ວນນ່ຶງຂອງແຜນການໄຖ່ບາບຂອງພຣະເຈ້ົາ ແລະຊ້ີໄປຍັງຣາຊກິດຂອງພຣະ ເຢຊູເທ່ິງໄມ້ກາງແຂນ? (ເບ່ິງ ລູກາ 24:27; ກິຈການ 8:35) ເມ່ືອເຮົາແຍກເຣື່ອງອອກຈາກເຣື່ອງໃຫຍ່ຂອງພຣະ ເຈ້ົາ(ຂ່າວປະເສີດ) ພຣະຄັມພີກ່ໍຈະກາຍເປັນພຽງບົດຮຽນສອນສົນທັມ"

ພວກເຮົາກ່ໍຈະຕອບຄວາມຫ່ວງໃຍນ້ີໄດ້ສອງສາມຂ້ົໍ ສັດຕຣູຂອງໄມ້ກາງແຂນພຍາຍາມທ່ີຈະດຶງພຣະເຢຊູໃຫ້ຕ່ົໍາລ່ົງ ບ່ໍຍອມໃຫ້ຄົນທ້ັງຫລາຍເຫັນວ່າມະນຸດຕ້ອງການພຣະເຈ້ົາຫລາຍພຽງໃດ ບ່ໍຍອມໃຫ້ຮູ້ຈັກແຜນການໄຖ່ບາບຂອງ

ພຣະເຈົ້າ ພວກເຮົາເຂົ້າໃຈດີເຖິງເລ້ຫລ່ຽມດັ່ງກ່າວນີ້.
ພວກເຮົາພົບວ່າ ຄຳຕອບສຳລັບການທີ່ຕ້ອງຢູ່ໃນຄຳຖາມຈາກພຽງແຕ່ເຣື່ອງດຽວນັ້ນກໍຄື ບົດບາດແລະຣາຊກິດຂອງ ພຣະວິນຍານບໍຣິສຸດ ພຣະອົງຈະຊົງສື່ສານສິ່ງທີ່ພຣະອົງຕ້ອງການສອນອອກມາຈາກເຣື່ອງ ໂດຍທີ່ບໍ່ຕ້ອງໃຊ້ຫົວຂໍ້ທີ່ ຜູ້ເລົ່າໄດ້ຕຽມໄວ້ລ່ວງໜ້າ ເຫດການແບບນີ້ໄດ້ເກີດຂຶ້ນເທື່ອແລ້ວເທື່ອເລົ່າໃນຂະນະທີ່ພວກເຮົາກຳລັງສົນທະນາກັນ ຢ່າງເລິກເຊິ່ງ ແລະພຍາຍາມຄົ້ນຫາແຕ່ສິ່ງທີ່ຢູ່ໃນເຣື່ອງລາວນັ້ນ.

ເມື່ອພວກເຮົາໃຊ້ການສົນທະນາອະທິບາຍພຣະຄຳ ວິທີການນີ້ບໍ່ໄດ້ຊ່ອຍໃຫ້ຄຣູຈັບໄດ້ວ່າໃຜເປັນຜູ້ທີ່ພ້ອມແລ້ວໃນ ການຮັບຄວາມພົ້ນ ດັ່ງນັ້ນຈຶ່ງມີການເຊີນຊວນໂດຍການຫວ່ານໄປສູ່ທຸກຄົນ ແຕ່ການສົນທະນາແບບເລົ່າເຣື່ອງເຈາະ ໃຈຈະຊ່ອຍໃຫ້ຜູ້ເລົ່າໄດ້ໂອ້ລົມກັບຜູ້ຟັງ ທັງມີການໂອ້ລົມກັນກ່ຽວກັບເຣື່ອງຝ່າຍວິນຍານເປັນກຸ່ມ.

ຣະຫວ່າງການສົນທະນານັ້ນ ເມື່ອໃດຫາກມີຄວາມສົນໃຈຢາກຮູ້ຈັກພຣະເຈົ້າຫລາຍຂຶ້ນ ຫລືມີຄຳຖາມວ່າຈະຮູ້ຈັກ ກັບພຣະເຈົ້າໄດ້ຢ່າງໃດ ຜູ້ເລົ່າສາມາດຕອບສນອງຕໍ່ຄວາມຕ້ອງການນັ້ນໄດ້ທັນທີ ຜູ້ເລົ່າອາດຈະນຳສເນີຂ່າວປະ ເສີດແລະຂໍ້ພຣະຄຳທີ່ບອກເຖິງແຜນການແຫ່ງຄວາມພົ້ນຂອງພຣະເຈົ້າ ເມື່ອຮູ້ສຶກວ່າໄດ້ຮັບການຊົງນຳ ລາຍງານຕໍ່ ໄປນີ້ຈະບອກທ່ານເຖິງເຣື່ອງທີ່ໄດ້ເລົ່າມານັ້ນ

ບໍ່ມີໃຜນອກຈາກພຣະເຈົ້າ ທີ່ຈະຊົງເລືອກເຣື່ອງນັ້ນ-ປະເທດໄນຈີເຣັຽ ມີການຝຶກອົບຮົມເລົ່າເຣື່ອງເຈາະໃຈ 5 ເທື່ອ ທາງຕາເວັນອອກແລະທາງເໜືອຂອງປະເທດໄນຈີເຣັຽ ສາມເດືອນຕໍ່ມາຜູ້ຝຶກອົບຮົມໄດ້ກັບໄປປະເທດໄນຈີເຣັຽເພື່ອ ເບິ່ງວ່າເຂົາເຈົ້າສາມາດເຮັດໄດ້ຫລືບໍ່ ເພາະໃນຕອນທີ່ມີການຝຶກອົບຮົມນັ້ນໄດ້ມີການແປອອກເປັນ 4 ພາສາ ຈຶ່ງບໍ່ ຄ່ອຍມີຄວາມແນ່ໃຈເທົ່າໃດ

ເຂົາເຈົ້າລາຍງານວ່າ, "ເຂົາເຈົ້າເຂົ້າໃຈດີ, ນອກຈາກນັ້ນຍັງມີການຝຶກຝົນ ແລະນຳເອົາໄປໃຊ້ອີກ

ຜູ້ປະກາດຂ່າວປະເສີດຄົນນຶ່ງບອກຜູ້ຝຶກອົບຮົມເລົ່າເຣື່ອງເຈາະໃຈວ່າ ລາວໄດ້ນຳຄົນມຸສລິມ 9 ຄົນມາຮູ້ຈັກກັບພຣະ ເຈົ້າ ລາວແບ່ງປັນຕໍ່ໄປວ່າ ຜູ້ເຊື່ອໃໝ່ເວົ້າແນວນີ້, "ເຮົາຮູ້ຈັກຄົນຢູ່ໃນເຣື່ອງທີ່ເລົ່າ ແຕ່ໂກຣ່ານບໍ່ໄດ້ເລົ່າເຣື່ອງທັ້ງໝົດ ແລະບໍ່ເຄີຍມີຜູ້ໃດໂອ້ລົມເຣື່ອງນີ້ກັບພວກເຮົາ" ເມື່ອຖາມລາວວ່າ ທ່ານໃຊ້ເຣື່ອງໃດຈຶ່ງເຂົ້າໄປເຖິງໃຈໄດ້ແນວນັ້ນ? ລາວຕອບວ່າ, "ເຣື່ອງໂມເຊຕີນຫີນ ທ່ານຮູ້ແລ້ວເນາະ ທີ່ຢູ່ໃນພຣະທັມອົບພະຍົບບົດທີ 17?"

ໃນຖານະທີ່ເປັນຜູ້ຝຶກອົບຮົມ ລາຍງານດັ່ງກາວນີ້ເຮັດໃຫ້ຂ້າພະເຈົ້າປລາດໃຈ ຈຶ່ງຖາມວ່າ, "ແມ່ນຫຍັງທີ່ຢູ່ໃນເຣື່ອງ ທີ່ເຮັດໃຫ້ເຂົາເຈົ້າປ່ຽນແປງ?" ເຂົາເຈົ້າບອກວ່າ;

> "ເມື່ອໄດ້ຍິນເຣື່ອງນີ້ແລ້ວກໍໄດ້ໂອ້ລົມກັນ ພວກເຮົາໄດ້ເຫັນວ່າໂມເຊເປັນຜູ້ນຳທີ່ສັດຊື່ ແຕ່ປະຊາຊົນບໍ່ນັບຖື ທ່ານ ແປກໃຈທີ່ໂມເຊໄດ້ອ່ວຍໄປຫາພຣະເຈົ້າແລະຖາມພຣະເຈົ້າວ່າ ຈະໃຫ້ຂ້ານ້ອຍເຮັດແນວໃດກັບປະຊາ ຊົນເຫລົ່ານີ້ ໂມເຊມີຄວາມເປັນຫ່ວງເຂົາເຈົ້າ ແຕ່ຜູ້ນຳຂອງພວກເຮົາບໍ່ເຄີຍເປັນຫ່ວງພວກເຮົາເລີຍ ແລະພຣະ ເຈົ້າກໍບໍ່ໄດ້ລົງໂທດປະຊາຊົນເຫລົ່ານັ້ນ ກັບຊົງປະທານນ້ຳໃຫ້ເຂົາເຈົ້າດື່ມອີກ ພຣະອົງຊົງມີຄວາມເມດຕາ ພວກເຮົາຈຶ່ງຢາກຮູ້ຈັກກັບພຣະເຈົ້າອົງນັ້ນ"

ຂ້າພະເຈົ້າຄິດໃນໃຈຕົນເອງວ່າ...ຖ້າເປັນຕົວເອງຈະເລືອກເອົາເຣື່ອງນັ້ນມາເປັນເຣື່ອງປະກາດຫລືບໍ? ເຣື່ອງນັ້ນຈະເໝາະສົມກັບຄົນມຸສລິມຂອງຂ້າພະເຈົ້າຫລືບໍ? ບໍ່ດອກ ຂ້າພະເຈົ້າຄົງຈະບໍ່ເລືອກເອົາເຣື່ອງນັ້ນ ຢ່າງໜ້ອຍກໍບໍ່ເລືອກກ່ອນທີ່ຈະຮູ້ວ່າ ຄົນທີ່ຢາກມີພຣະເຈົ້າຈະຖືກດຶງດູດເຂົ້າໄປຫາພຣະອົງດ້ວຍພຣະຄຳຂອງພຣະອົງເອງ ລວມທັງເຣື່ອງລາວທີ່ເລົ່ານັ້ນນຳ.

ເຖິງແມ່ນເຣື່ອງນັ້ນຈະຢູ່ຫລືບໍ່ຢູ່ໃນລາຍການຂອງຂ້າພະເຈົ້າກໍຕາມ ແຕ່ມັນກໍຢູ່ໃນລາຍການເຣື່ອງເລົ່າຂອງອົງພຣະວິນຍານບໍຣິສຸດ ! ພວກເຮົາໄດ້ເຫັນເຫດການຢ່າງນີ້ເທື່ອແລ້ວເທື່ອເລົ່າຈາກການເລົ່າເຣື່ອງເຈາະໃຈ ເມື່ອພຣະຄຳຂອງພຣະເຈົ້າຖືກນຳມາສອນຢ່າງຄົບຖ້ວນຕາມທີ່ພຣະອົງຊົງບັນດານໃຫ້ຂຽນໄວ້ ແລະເມື່ອຜູ້ຟັງຄົ້ນພົບຂຸມຊັບຝ່າຍວິນຍານດ້ວນການສົນທະນາ ອຳນາດທີ່ເໜືອທັມມະຊາດກໍຖືກສົ່ງອອກມາ!

ດັ່ງນັ້ນຖ້າຜູ້ໃດໃຊ້ເຣື່ອງລາວໃນພຣະທັມອົບພະຍົບບົດທີ 17 ພວກເຮົາຈຶ່ງຂໍແນະນຳໃຫ້ໃຊ້ເຣື່ອງອື່ນຕໍ່ຈາກເຣື່ອງນີ້ ໃນທັນທີ ຜູ້ຟັງຈະໄດ້ສົນທະນາເຖິງວິທີການທີ່ພຣະເຈົ້າປະທານນ້ຳແຫ່ງຊີວິດອອກມາຈາກຫິນ ດັ່ງນັ້ນເຂົາເຈົ້າຈຶ່ງຈະຕົກຊະເງື້ດ້ວຍຄວາມຢຳເກງພຣະເຈົ້າເມື່ອໄດ້ຍິນເຣື່ອງຈາກ 1 ໂກຣິນໂທ 10:1-6 ເຂົາເຈົ້າຈະເຂົ້າໃຈຄວາມສຳຄັນຂອງສ່ວນທີ່ອະທິບາຍເຫດການຂອງຫິນແລະນ້ຳ *"... ແລະໄດ້ດື່ມນ້ຳທິບຢ່າງດຽວກັນທຸກຄົນ ດ້ວຍວ່າເຂົາເຄີຍໄດ້ດື່ມນ້ຳໄຫລອອກມາຈາກສີລາສັກສິດທີ່ຕາມເຂົາໄປ ສີລານັ້ນແມ່ນອົງພຣະຄຣິດ."* ຜູ້ຟັງຈະເຂົ້າໃຈຄວາມໝາຍຈາກເຣື່ອງໃໝ່ທີ່ເລົ່າຕໍ່ ເຂົາເຈົ້າກໍຈະໄດ້ເຫັນພຣະເຢຊູ.

ຖ້າຫາກຈະເວົ້າເຖິງແຜນການຊົງໄຖ່ບາບຂອງພຣະເຈົ້າ ທັງສອງເຣື່ອງທີ່ເລົ່າຕໍ່ກັນນັ້ນຈະເຮັດໃຫ້ເຫັນພາບແຜນການຂອງພຣະເຈົ້າ ແຕ່ເຣື່ອງທີສອງຈະມີຜົນຕໍ່ມຸສລິມທັງເກົ້າຄົນຫລືບໍ່? ບໍ່ມີເລີຍ ໄດ້ສັງເກດເບິ່ງລາຍງານຈາກໄນຈີເຣັຽບໍ່ວ່າ ແມ່ນຫຍັງໃນເຣື່ອງຂອງໂມເຊທີ່ເຮັດໃຫ້ເຂົາເຈົ້າຢາກຈະຮູ້ຈັກກັບພຣະເຈົ້າ? ເປັນເຣື່ອງພຣະເມດຕາຂອງພຣະເຈົ້າທີ່ສາມາດເຫັນໄດ້ ແລະເຂົາເຈົ້າຢາກຮູ້ຈັກກັບພຣະເຈົ້າຜູ້ຊົງເມດຕາ ດັ່ງນັ້ນ ຜູ້ປະກາດທີ່ຫາກໍເລົ່າເຣື່ອງໂມເຊຈົບລົງ ຈຶ່ງມີຄວາມສຸກຫລາຍທີ່ລາວຈະໄດ້ອະທິບາຍທາງແຫ່ງຄວາມເຊື່ອກັບຄົນມຸສລິມຕໍ່ໄປ ລາວໄດ້ບອກເຖິງວິທີການທີ່ຈະຮູ້ຈັກກັບພຣະເຈົ້າຜ່ານທາງພຣະບຸດຂອງພຣະອົງຄື...ອົງພຣະເຢຊູຄຣິດ.

ສຳລັບພຣະຄັມພີໝວດຈົດໝາຍຝາກເດ?

ເມື່ອພວກເຮົາພິຈາຣະນາເບິ່ງການປ່ຽນຮູບແບບການສອນພຣະຄັມພີໂດຍການເລົ່າເຣື່ອງປາກເປົ່າ ຫລາຍຄົນທີ່ຮັກພຣະຄຳຂອງພຣະເຈົ້າ ແລະຮູ້ວ່າພຣະຄຳຂອງພຣະເຈົ້ານັ້ນຕ້ອງສອນໃຫ້ຄົບຖ້ວນ ຈຶ່ງຖາມຄຳຖາມທີ່ດີວ່າ, "ແລ້ວພຣະຄັມພີໝວດຈົດໝາຍຝາກເດ?" ພວກເຮົາຂໍສເນີຄວາມຄິດເຫັນເພື່ອໃຫ້ພິຈາຣະນາດັ່ງນີ້...

ປະການທີນຶ່ງແມ່ນ ເປັນເວລາດົນນານມາແລ້ວທີ່ເຮົາໄດ້ແຍກເຣື່ອງລາວໃນພຣະຄັມພີອອກຈາກກັນເປັນຕອນເລັກຕອນນ້ອຍ ໄດ້ຂຽນໃສ່ແຜ່ນກະດານສົ່ງອອກໄປເພື່ອອະທິບາຍຄຳເທສນາທີ່ເປັນຫົວຂໍ້ ແຕ່ໜ້າເສັ້ງດາຍທີ່ເຣື່ອງລາວເຫລົ່ານີ້ໄດ້ຖືກສົ່ງຕໍ່ໄປດ້ວຍການເລົ່າສູ່ກັນຟັງຕາມທີ່ໄດ້ຂຽນສົ່ງມາ ຜູ້ຟັງຈຶ່ງເຂົ້າໃຈແລະຈື່ຈຳເຣື່ອງໄດ້.

ສິ່ງທີ່ເຮັດໃຫ້ດີໃຈນັ້ນແມ່ນ ແຕ່ກ່ອນຄົນຈຳນວນ 80% ບໍ່ເຄີຍເຂົ້າໃຈເຣື່ອງພຣະຄັມພີ ເມື່ອມີການໃຊ້ວິທີເລົ່າເຣື່ອງ

ປາກເປົ່າເກີດຂຶ້ນມາ ເຂົາເຈົ້າຈຶ່ງມີຄວາມເຂົ້າໃຈເນື້ອຫາໃນພຣະຄັມພີເຖິງ 75%

ພວກເຮົາເອງກໍມີກຳລັງໃຈຫລາຍຂຶ້ນເມື່ອນັກສຶກສາຄຣິສຕຽນ ສິດຍາພິບານແລະມິສຊັນນາຣີ ໄດ້ຄົ້ນພົບວິທີການສອນພຣະຄັມພີຢ່າງເກີດຜົນ ປະສິດທິພາບຂອງການເລົ່າເຣື່ອງເຈາະໃຈນັ້ນເປັນສິ່ງທີ່ເໜືອກວ່າທີ່ສະດີ ຜູ້ທີ່ທົດລອງເລົ່າເຣື່ອງຢ່າງຄົບຖ້ວນແລະໃຊ້ການສົນທະນາຢ່າງເລິກເຊິ່ງ ພ້ອມດ້ວຍການສັງເກດສິ່ງຕ່າງໆ ໃນເຣື່ອງຢ່າງຕັ້ງໃຈ ກໍຈະໄດ້ເຫັນຜົນທີ່ເປັນຈິງ.

ຫ້າປີຫລັງຈາກທີ່ໄດ້ນຳວິທີການເລົ່າເຣື່ອງເຈາະໃຈໄປຍັງປະເທດຕ່າງໆ ມີຜູ້ເລີ້ມໃຊ້ວິທີດັ່ງກ່າວຫລາຍກວ່າ 90 ປະເທດແລ້ວ. ຕົວຢ່າງທີ່ເຫັນໄດ້ຊັດແຈ້ງວ່າ ວິທີການນີ້ໄດ້ເຕີບໃຫຍ່ຂຶ້ນຢ່າງໄວ ຈາກການຝຶກອົບຮົມທີ່ປະເທດຟິລິບປິນສາມເທື່ອ ຄຣູຝຶກອົບຮົມສິ່ງຂ່າວມາວ່າ, "ສີ່ເດືອນຫລັງຈາກທີ່ພວກເຮົາທຳການຝຶກອົບຮົມ ແລະໄດ້ຕິດຕໍ່ກັບຜູ້ທີ່ມາຮັບການຝຶກອົບຮົມທີ່ກັບເມືອແລ້ວ ໄດ້ພົບວ່າໃນປະເທດຂອງພວກເຮົາມີຄົນໄດ້ຮັບການຝຶກອົບຮົມແລ້ວ 1400 ຄົນ ແລະຝຶກອົບຮົມເປັນພາສາຕ່າງໆ ເຖິງ 25 ພາສາ.

ຜູ້ແປພຣະຄັມພີຂອງອົງການໄວຄລິຟ ໄດ້ຮຽນການເລົ່າເຣື່ອງເຈາະໃຈໃນສະຫະຣັດອະເມຣິກາ ນາງໄດ້ສິ່ງຜູ້ນຳສາມຄົນໃນບ້ານແຫ່ງນຶ່ງມາຮຽນເພີ້ມເຕີມ ໄດ້ສາມເດືອນຜ່ານໄປມີຊາວບ້ານໃນຟິລິບປິນຫ້າຄົນທີ່ໄດ້ຮັບການຝຶກອົບຮົມຈາກຜູ້ນຳດັ່ງກ່າວ ໄດ້ເຂົ້າໄປໃນເມືອງໃຫຍ່ແລະນຳພາໃນການຝຶກອົບຮົມ ຫລັງຈາກນັ້ນນາງໄດ້ຂຽນມາເຖິງພວກເຮົາວ່າ, "ສິດຍາພິບານທີ່ຮຽນຈົບໂຮງຮຽນພຣະຄັມພີຖາມວ່າ...ອີກດົນປານໃດຈະກັບຄືນໄປສອນເພີ້ມອີກ?" ໂດຍທີ່ສິດຍາພິບານທ່ານນັ້ນບໍ່ຮູ້ເລີຍວ່າ ຄຣູຝຶກອົບຮົມທັງຫ້າຄົນນັ້ນເປັນຄົນອ່ານຫນັງສືບໍ່ໄດ້"

ຄົນທີ່ເຂົ້າມາຮຽນວິທີການປາກເປົ່າໃໝ່ໆ ເຫລົ່ານີ້ທີ່ມີໄຟແຮງ ສ່ວນຫລາຍເປັນຄົນທີ່ອ່ານໜັງສືບໍ່ໄດ້ ແຕ່ໄດ້ສະແດງອອກເຖິງຄວາມເຂົ້າໃຈດ້ວຍການເລົ່າເຣື່ອງລາວໃຫ້ຄົນອື່ນຟັງດ້ວຍຄວາມກະຕືລືລົ້ນ ຊຶ່ງເປັນຜົນຝ່າຍວິນຍານອັນໜັ້ນຄົງທີ່ເຫັນໄດ້ ການເປັນພຍານເຖິງຣິດເດດຂອງພຣະຄຳທີ່ໄດ້ຮັບການເລົ່າຕໍ່ຢ່າງຕົງໄປຕົງມາຕາມເຣື່ອງ.

ແຕ່...ຍັງຄົງມີຄຳຖາມອີກຕໍ່ໄປວ່າ, "ແລ້ວເຣື່ອງຈົດໝາຍຂອງອັຄສາວົກໂປໂລ ເດ ຈະເຮັດແນວໃດ?"

ຫລັກຂອງການເລົ່າເຣື່ອງເຈາະໃຈນັ້ນ ສາມາດນຳໄປໝູນໃຊ້ໄດ້ກັບທຸກຕອນຂອງພຣະຄັມພີ

ໃນການຝຶກອົບຮົມ ພວກເຮົາໄດ້ສອນວ່າ ຈົດໝາຍຝາກຂອງອັຄສາວົກໂປໂລກໍສາມາດນຳສເນີໄດ້ໂດຍໃຊ້ວິທີການເລົ່າເຣື່ອງເຈາະໃຈເຕັມຮູບແບບ ພວກເຮົາມັກຈະຮວມເອົາເຣື່ອງຈາກຈົດໝາຍຝາກແລະເພງສັຣເສີນນຳ ຊຶ່ງພຣະຄັມພີພາກສ່ວນດັ່ງກ່າວນີ້ພວກເຮົາບໍ່ເບິ່ງເປັນເນື້ອເຣື່ອງ ແຕ່ໄດ້ເຫັນວ່າຫລາຍຕອນໃນຈົດໝາຍຂອງອັຄສາວົກໂປໂລແລະເພງສັຣເສີນຮວມໄປເຖິງພຣະທັມຜູ້ທຳນວາຍຕ່າງໆ ເຮັດໃຫ້ພວກເຮົາເຫັນພາບແລະມີເນື້ອເຣື່ອງຢ່າງແທ້ຈິງ ດັ່ງນັ້ນພວກເຮົາຈຶ່ງນຳສເນີໃນແນວທາງເລົ່າເຣື່ອງເຈາະໃຈໄດ້ຢ່າງເກີດຜົນເຊັ່ນດຽວກັນ.

ຖ້າທ່ານຄຸ້ນເຄີຍກັບພຣະທັມເພງສັຣເສີນ 1:1-5 ລອງຫລັບຕາແລ້ວໃຊ້ຄຳຖາມຂອງຜູ້ໃຫ້ຄຳປຶກສາທີ່ສລາດ ທ່ານຈະເຫັນວ່າມີຄົນສອງປະເພດໃນພຣະທັມເພງສັຣເສີນບົດທີ 1 ສອງຄົນນີ້ເຮັດໃນສິ່ງທີ່ແຕກຕ່າງກັນ ແມ່ນຫຍັງຄືຫາໆ

ເລືອກຂອງເຂົາເຈົ້າ ແມ່ນຫຍັງທີ່ເຂົາເຈົ້າຄວນຈະເລືອກ ແມ່ນຫຍັງຄືຜົນຕາມມາຈາກການເລືອກຂອງເຂົາເຈົ້າ. ຈົ່ງສັງເກດເບິ່ງວ່າພຣະເຈົ້າຊົງຕອບໂຕ້ຢ່າງໃດກັບຊີວິດຂອງສອງຄົນນີ້ ແລະທ່ານໄດ້ເຫັນພຣະລັກສະນະຂອງພຣະເຈົ້າຢ່າງໃດ.

ອີກເທື່ອນຶ່ງ ຂໍໃຫ້ທ່ານຫລັບຕາແລ້ວລອງຄິດເຖິງພຣະຄັມພີອີກຕອນນຶ່ງ ຄິດເຖິງແກະຕົວນຶ່ງໃນພຣະທັມເພງສັຣເສີນ 23 ວ່າມັນໄດ້ເວົ້າເຖິງຜູ້ລ້ຽງທີ່ມັນຮູ້ຈັກດີວ່າຢ່າງໃດ ກ່ຽວກັບຄວາມສັມພັນອັນດີຂອງມັນແລະຜູ້ລ້ຽງ ຈົ່ງຟັງແກະຕົວນີ້ເວົ້າຢ່າງຕັ້ງໃຈ ຫລັງຈາກທີ່ທ່ານໄດ້ເຫັນເຣື່ອງນີ້ທັ້ງໝົດແລ້ວ ໃຫ້ກັບຄືນໄປແລະຕັ້ງຄຳຖາມເພື່ອໝູນໃຊ້ໃນຊີວິດຈາກເນື້ອເຣື່ອງທີ່ທ່ານໄດ້ສັງເກດເຫັນ. ໃນຖານະທີ່ເຮົາເປັນແກະເຮົາຈະເອົາຫຍັງມາໝູນໃຊ້ໃນຊີວິດປະຈຳວັນ ແລະພຣະເຢຊູນັ້ນເອງທີ່ຊົງເປັນຜູ້ລ້ຽງ?

ຈົ່ງເບິ່ງເນື້ອເຣື່ອງໃນພຣະທັມເອຊາຢາ 1:10-20; ໂຣມ 1:14-25 ແລະຢາໂກໂບ 1:22-27 ຕ້ອງໄດ້ຍອມຮັບວ່າ ຂໍ້ຄວາມທັງສາມຕອນນີ້ຈະຈື່ຈຳໄດ້ຍາກກວ່າເຣື່ອງລາວທີ່ມີຄຳສົນທະນາ ແລະເຫດການຕ່າງໆ ຂອງຄົນຢູ່ໃນເຣື່ອງ ຈົ່ງອ່ານຊ້າໆ ແລ້ວສັງເກດວ່າຄົນທີ່ຢູ່ໃນຕອນນັ້ນໄດ້ເວົ້າຫຍັງ ໄດ້ເຮັດຫຍັງ ລາວຕັດສິນໃຈອັນໃດຫລືບໍ່? ມີຜົນກະທົບຫຍັງແດ່ຈາກການຕັດສິນໃຈນັ້ນ?

ເຮົາຈະເຫັນວ່າທັງສາມຕອນນັ້ນ ພຣະເຈົ້າໄດ້ເປີດເຜີຍພຣະລັກສະນະຂອງພຣະອົງໃນຫລາຍມຸມມອງ ຈົ່ງໃຊ້ຫລັກການເລົ່າເຣື່ອງເຈາະໃຈ ໂດຍໃຫ້ຂໍ້ສັງເກດຂອງທ່ານນັ້ນຈຳກັດຢູ່ໃນສິ່ງທີ່ເຫັນຢູ່ໃນເຣື່ອງເທົ່ານັ້ນ ຫລັງຈາກນັ້ນໃຫ້ກັບຄືນໄປຕົ້ນເຣື່ອງ ແລະເບິ່ງອີກວ່າຂໍ້ສັງເກດເຫລົ່ານັ້ນຈະນຳມາໝູນໃຊ້ໃນຊີວິດປະຈຳວັນຢ່າງໃດ

ເຮົາຈະພົບເນື້ອຫາຢູ່ສາມແບບໃນພຣະຄັມພີ

- ເນື້ອຫາທີ່ເປັນເຣື່ອງລາວ
- ເນື້ອຫາເຄ່ິງເຣື່ອງລາວ
- ເນື້ອຫາທີ່ບໍ່ເປັນເຣື່ອງລາວ

ເນື້ອຫາທີ່ເປັນເຣື່ອງລາວ ນັ້ນຈະຈື່ຈຳໄດ້ງ່າຍທີ່ສຸດ ເພາະເຮົາສາມາດເຫັນແລະຕິດຕາມໄປໄດ້ ເຣື່ອງລາວເປັນເຫດການທີ່ເກີດຂຶ້ນໃນໂລກທີ່ຈັບຕ້ອງໄດ້ ມີຄວາມສັມພັນຂອງສິ່ງຕ່າງໆ ບຸກຄົນໃນເຣື່ອງ ມີການກະທຳ ມີການສົນທະນາ ຊຶ່ງສິ່ງຜົນໃຫ້ເຮົາສາມາດມີປະສົບການຕິດຕາມບຸກຄົນໃນເຣື່ອງໄປໄດ້ ເຮົາໄດ້ເຫັນ ໄດ້ຍິນ ໄດ້ຮູ້ສຶກຮ່ວມໄປກັບລາວ.

ເນື້ອຫາເຄ່ິງເຣື່ອງລາວ ຈະຮຽນຮູ້ຍາກໜ້ອຍນຶ່ງ ມີເນື້ອເຣື່ອງໜ້ອຍກວ່າ ແຕ່ກໍຍັງມີບາງຢ່າງທີ່ເຮັດໃຫ້ເຮົາຄິດເປັນພາບໃນຄວາມຄິດເຮົາໄດ້ ດັ່ງນັ້ນເຮົາຈຶ່ງຈື່ຈຳໃນສິ່ງທີ່ເຮົາໄດ້ເຫັນ ແລະໄດ້ຍິນ ເນື້ອຫາເຄ່ິງເຣື່ອງລາວຈະມີການຕອບໂຕ້ທາງຄວາມສັມພັນໜ້ອຍກວ່າ ເບິ່ງຄືວ່າຈະເປັນຄຳເວົ້າແລະຄຳອະທິບາຍຈາກຝ່າຍດຽວ ພຣະທັມພວກຜູ້ທຳນວາຍຈະຕົກຢູ່ໃນກໍຣະນີນີ້ ຍົກຕົວຢ່າງເຊັ່ນ ເພງສັຣເສີນ 1, ໂຣມ 11, ແລະ ຢາໂກໂບ ເປັນຕົ້ນ

ເນື້ອຫາທີ່ບໍ່ແມ່ນເຣື່ອງລາວ ຈະຈື່ຈຳໄດ້ຍາກທີ່ສຸດ ເພາະຈະຄິດເປັນຮູບພາບໄດ້ຍາກ ມັກຈະເປັນຄຳເວົ້າແລະຄຳສອນຈາກຝ່າຍດຽວ ມີຫົວຂໍ້ເປັນຫລັກ ຈິດໝາຍຝາກສ່ວນຫລາຍຈະເປັນໄປໃນທຳນອງນີ້

ເຖິງແມ່ນຈິດໝາຍຂອງອັຄສາວົກສ່ວນຫລາຍຈະມີເນື້ອຫາທີ່ບໍ່ເປັນເຣື່ອງລາວ ເຮົາກໍຍັງສາມາດໃຊ້ເທັກນິກຈາກການເລົ່າເຣື່ອງເຈາະໃຈໄດ້ ເຣື່ອງທີ່ເລົ່າໄດ້ດີຈະເປັນທີ່ຈັບໃຈຂອງຄົນຟັງ ຈິດໝາຍຂອງອັຄສາວົກເປັນຈິດໝາຍແຫ່ງຄວາມຮັກ ຂຽນໂດຍຄົນທີ່ມີໃຈຮັກຈາກພຣະເຈົ້າຜູ້ຊົງເຕັມໄປດ້ວຍຄວາມຮັກ ຣະຫວ່າງການນຳສເນີເຣື່ອງນັ້ນ ຄຣູເລົ່າເຣື່ອງຈະຕ້ອງລະນຶກເຖິງຫົວໃຈອັນກະຕືລືລົ້ນຂອງຜູ້ຂຽນ ແລະນຳສເນີອາລົມນັ້ນຢ່າງຕົງໄປຕົງມາ.

ມີວິທີນຶ່ງທີ່ຈະເຮັດໃຫ້ເຣື່ອງທີ່ບໍ່ເປັນເຣື່ອງລາວສາມາດຈື່ຈຳໄດ້ນັ້ນກໍຄື ຕ້ອງອ່ານອອກສຽງດັງໆ ແລະໃຊ້ຫລັກການເລົ່າເຣື່ອງເຈາະໃຈຕໍ່ໄປ. ບາງເທື່ອເຮົາອາດຈະໃຊ້ສອງສາມຂໍ້ຕໍ່ຄັ້ງ ການສອນສັ້ນໆ ໃນແຕ່ລະເທື່ອສ່ວນຫລາຍຈະສອນໃນຮູບແບບອະທິບາຍ ແຕ່ຖ້າເຮົາສອນສອງສາມຂໍ້ດ້ວຍຄວາມຮູ້ສຶກແລະໃຊ້ການໂອ້ລົມສົນທະນາຕາມມາໂດຍເຮັດເປັນລຳດັບ ຜູ້ຟັງກໍຈະຈື່ຈຳຖ້ອຍຄຳໃນຕອນນັ້ນໄດ້ ສິ່ງທີ່ທ້າທາຍນັ້ນແມ່ນທ່ານຕ້ອງພຍາຍາມຢູ່ໃນຂໍ້ຄວາມນັ້ນຢ່າອອກນອກເຣື່ອງ ທ່ານອາດຈະມີຄຳນຳສັ້ນໆ ເພື່ອຊ່ວຍໃຫ້ຜູ້ຟັງເຂົ້າໃຈໃນຂໍ້ຄວາມນັ້ນຫລາຍຂຶ້ນ

ທ່ານເຮັດໄດ້ບໍ? ທ່ານມີເນື້ອຫາຫລາຍພໍທີ່ຈະເວົ້າໄດ້ ທີ່ຈະເຮັດໃຫ້ພຣະຄຳນັ້ນມີຄວາມກະຈ່າງແຈ້ງໂດຍທີ່ບ່ອອກນອກພຣະຄຳຕອນນັ້ນໄປບ່ອນອື່ນ ເຮັດໄດ້ບໍ? ທ່ານເຮັດໄດ້ແນ່ນອນ ພວກເຮົາຈະເຮັດໃຫ້ທ່ານເບິ່ງໃນການຝຶກອົບຮົມຈາກຂໍ້ພຣະຄຳສັ້ນໆ ພວກເຮົາຈະໃຫ້ທ່ານເຫັນຄວາມອຸດົມສົມບູນແຫ່ງພຣະຄຳຂອງພຣະເຈົ້າ.

ທຳອິດ ພວກເຮົາຈະມີຄຳນຳສັ້ນໆ ເພື່ອໃຫ້ຜູ້ຟັງເຂົ້າໃຈສິ່ງທີ່ເກີດຂຶ້ນໃນຄວາມເປັນມາຂອງຕອນນັ້ນ ຊຶ່ງຈະໃຊ້ໃນການສົນທະນາແລກປ່ຽນຄວາມຄິດເຫັນກັນຕໍ່ໄປ ພວກເຮົາບອກວ່າ, "ພຣະເຢຊູໄດ້ເວົ້າກັບພວກສາວົກເທື່ອສຸດທ້າຍໃນກຸງເຢຣູຊາເລັມ ຊຶ່ງຈະກາຍເປັນຫົວເມືອງຂອງຄຣິສຕະຈັກໃນຍຸກແຣກ ພວກສາວົກໄດ້ຕິດຕາມພຣະເຢຊູເປັນເວລາເຖິງສາມປີ ສ່ວນຫລາຍຈະຢູ່ໃນແຂວງຢູດາຍ ຣວມໄປເຖິງແຂວງຊາມາເຣັຍ ຊຶ່ງເປັນເມືອງຂອງພວກທີ່ຄົນຢິວກຽດຊັງ"

ຕໍ່ຈາກນັ້ນ ພວກເຮົາກໍຈະເລົ່າເຣື່ອງທີ່ເກີດຂຶ້ນໃນກິຈການ 1:8 ແມ່ນແລ້ວ...ພວກເຮົາເລົ່າເຣື່ອງເຈາະໃຈຈາກພຣະຄັມພີພຽງຂໍ້ດຽວ ແລະພວກເຮົາເລົ່າແຕ່ເຄິ່ງຫລັງຂອງຂໍ້ນັ້ນພຽງເທົ່ານັ້ນ ເພາະວ່າມີຫລາຍສິ່ງທີ່ພວກເຮົາຄົ້ນພົບເຣື່ອງນີ້ໃຊ້ເວລາ 30 ນາທີ ຄົນທີ່ຮູ້ຈັກພຣະຄຳຫລາຍແລະຄົນທີ່ຮູ້ຈັກພຣະຄັມພີດີ ຕ່າງກໍພາກັນຮ່ວມໂອ້ລົມກັນຢ່າງມີຣົດຊາດອັນດີ ມີການຄົ້ນພົບອັນອັສຈັນ ມີການນຳມາໃຊ້ໃນຊີວິດດ້ວຍນ້ຳຕາອັ່ງເບີ້ຳ ຫລາຍໄປກວ່ານັ້ນກໍແມ່ນພວກຜູ້ຟັງໄດ້ກັບເມືອບ້ານດ້ວຍຄວາມເຂົ້າໃຈໃນພຣະຄຳຕອນນີ້ ເຂົາເຈົ້າກາຍເປັນເຈົ້າຂອງພຣະຄຳຕອນນີ້ແລະຍັງໄດ້ແບ່ງປັນໃຫ້ແກ່ຄົນອື່ນໄດ້ອີກດ້ວຍ.

ສິດຍາພິບານແລະນັກວິຊາການຄຣິສຕຽນ ຕ້ອງພິຈາຣະນາຄວາມເປັນໄປໄດ້ດັ່ງກ່າວມານີ້ຢ່າງແທ້ຈິງ ຣະບົບແບບການເທສນາແລະອະທິບາຍທີ່ໃຊ້ກັນຢູ່ນີ້ອາດຈະບໍ່ແມ່ນວິທີທີ່ມີປະສິດທິພາບຫລາຍທີ່ສຸດໃນການນຳສເນີຄວາມຈິງຈາກພຣະຄັມພີ ເພື່ອໃຫ້ຜູ້ຟັງໄດ້ຮຽນແລະນຳໄປໃຊ້ ຢ່າງນ້ອຍຜູ້ສື່ສານພຣະຄຳຄວນພິຈາຣະນາທີ່ຈະໃຊ້ວິທີທີ່ມີການຕອບກັບໄດ້ ມີການຄົ້ນພົບເອງຈາກຜູ້ຟັງ.

ບາງຄົນທີ່ໃຊ້ເຣື່ອງລາວໄດ້ຢ່າງຍອດຢ້ຽມ ເວລາສອນພຣະທັມກິຈການກໍຈະນຳສເນີເນື້ອຫາຈາກຈົດໝາຍຂອງອັຄ ສາວົກນຳ ເມື່ອເຂົາເຈົ້າສອນດ້ວຍວິທີການສົນທະນາຕອບໂຕ້ກໍສາມາດນຳເອົາສ່ວນທີ່ເປັນຈົດໝາຍອັຄສາວົກຊຶ່ງມີ ຄວາມເຊື່ອມໂຍງກັບພຣະທັມກິຈການມາໃຊ້ໄດ້ເຊັ່ນ ໃນຕອນເດີນທາງຂອງອັຄສາວົກໂປໂລ ວິທີທີ່ຈະຊ່ວຍໃຫ້ ການເລົ່າເຣື່ອງເຈາະໃຈເກີດຜົນກໍຄື ການຕັ້ງຄຳຖາມແລະໂອ້ລົມໂຕ້ຕອບເພື່ອຫາຂໍ້ສັງເກດຝ່າຍວິນຍານ ແລະການ ນຳໃຊ້ໃນຊີວິດຝ່າຍວິນຍານ ຊຶ່ງຈຸດນີ້ຈະໄດ້ຜົນດີເມື່ອນຳໄປສອນຮວມກັບຈົດໝາຍຂອງອັຄສາວົກ.
ຫລາຍເທື່ອ ຜູ້ມີການສຶກສາສູງຄືຜູ້ທີ່ຝຶກອົບຮົມສິດຍາພິບານແລະຄຣູ ຖ້າຫາກເຂົາເຈົ້າບໍ່ຄຸ້ນເຄີຍກັບພລັງຂອງການ ເລົ່າເຣື່ອງປາກເປົ່າ ເຂົາເຈົ້າຈະສອນຄົນທີ່ຢາກນຳເອົາໄປແບ່ງປັນກັບຄົນທີ່ອ່ານໜັງສືບໍ່ໄດ້ຢ່າງໃດ ຄົນທີ່ອ່ານໜັງ ສືບໍ່ໄດ້ຄວນຈະເຂົ້າໃຈເນື້ອຫາທີ່ບໍ່ເປັນເຣື່ອງລາວຫລືບໍ່? ຖ້າຄວນເຂົ້າໃຈ ຄົນທີ່ມີການສຶກສາສູງ ເປັນຄົນມີປັນຍາ ຈະໃຊ້ຂອງປະທານຂອງເຂົາເຈົ້າຫາທາງທີ່ຈະສອນຄົນທີ່ມີຄວາມຮູ້ໜ້ອຍແລະມີຂອງປະທານທີ່ໜ້ອຍກວ່າຢ່າງໃດ?

ຄວາມສຳຄັນຂອງການທ່ອງຈຳພຣະຄຳ ແບບຄຳຕໍ່ຄຳ

ມີຄວາມຄິດສອງຢ່າງເກີດຂຶ້ນ; **ຢ່າງທຳອິດ** ຄວາມຈຳເປັນແລະລຳດັບທີ່ເຮົາເກັບພຣະຄຳຂອງພຣະເຈົ້າໄວ້ໃນໃຈ **ຢ່າງທີສອງ** ການທີ່ຈະເຫັນເປົ້າໝາຍຂອງການທ່ອງຈຳພຣະຄຳແລະຈື່ພຣະຄຳທີ່ທ່ອງຈຳໄດ້.

ຜູ້ທີ່ເຊື່ອຈຳນວນຫລາຍ ໄດ້ເຂົ້າມາມີສ່ວນໃນໂປຣກຣາມຝຶກທ່ອງຈຳພຣະຄຳດ້ວຍພຣະຄຸນຂອງພຣະເຈົ້າ ສ່ວນ ຫລາຍໂປຣກຣາມເນັ້ນການຈື່ຈຳແບບຄຳຕໍ່ຄຳ ລວມທັງຂໍ້ແລະບົດ ພວກເຮົາທີ່ເຄີຍຈື່ຈຳພຣະຄຳມາຕັ້ງແຕ່ຍັງເປັນ ເດັກນ້ອຍນັ້ນ ເຮົາຮູ້ວ່າໄດ້ຮັບປໂຍດຢ່າງຫລວງຫລາຍຈາກການທ່ອງຈຳ.

ແຕ່ສິ່ງທີ່ທ້າທາຍນັ້ນແມ່ນ ມີຄົນບໍ່ຫລາຍເທົ່າໃດທີ່ຈະຈື່ຈຳພຣະຄຳແບບຄຳຕໍ່ຄຳ ແລະການທີ່ຈະຈື່ຈຳໄດ້ດີກໍຕ້ອງມີ ການທົບທວນລົ້ມຄືນເລື້ອຍໆ ແຕ່ການຮຽນເຣື່ອງລາວດັ່ງທີ່ກ່າວມານັ້ນ ເມື່ອທ່ານໄດ້ເລົ່າເຣື່ອງສອງສາມເທື່ອແລ້ວ ທ່ານອາດຈະບໍ່ທົບທວນລົ້ມຄືນອີກກໍໄດ້ ເນື້ອເຣື່ອງນັ້ນຈະຝັງຢູ່ໃນຄວາມຊົງຈຳຂອງທ່ານເມື່ອທ່ານຈື່ເຣື່ອງດ້ວຍຄຳ ເວົ້າຂອງທ່ານເອງ ເປັນຄວາມຈື່ຈຳແບບທັມມະຊາດແລະສາມາດເລົ່າໄດ້ອີກຢ່າງງ່າຍ.

ໃນການຝຶກອົບຮົມ 37 ຊົ່ວໂມງ ຜູ້ເຂົ້າຮ່ວມອົບຮົມຈະໄດ້ຍິນແລະໄດ້ໂອ້ລົມກັນປະມານ 21 ເຣື່ອງ ແລະຖ້າໄດ້ຝຶກ ອົບຮົມເພີ້ມອີກສອງຫລືສາມເທື່ອ ກໍຈະສາມາດເລົ່າເຣື່ອງເຫລົ່ານັ້ນໄດ້ຢ່າງຖືກຕ້ອງ ແລະເກືອບເວົ້າໄດ້ວ່າສາມາດ ຈື່ຈຳໄດ້ໄປຈົນຕລອດຊີວິດ ກໍວ່າໄດ້. ແລະເຣື່ອງທັງ 21 ເຣື່ອງນີ້ກໍມີຂໍ້ພຣະຄັມພີເຖິງ 148 ຂໍ້

ໜ້າອັສຈັນແມ່ນບໍ່ ການຮຽນຮູ້ແລະເກັບຂໍ້ພຣະຄັມພີ 148 ຂໍ້ໄວ້ໃນ "ຖົງໃຈ" ແລະສາມາດເລົ່າໄດ້ທັງເວລາທີ່ມີໂອ ກາດແລະບໍ່ມີໂອກາດ ຈະເຮັດໃຫ້ເຮົາກ້າວໜ້າໄປອີກໄກ.

ການທ່ອງຈຳ ແລະການຈື່ຈຳໄດ້. ເມື່ອປຽບທຽບຈຳນວນໜ້າຂອງພຣະຄັມພີພາສາຕ່າງໆ ນັ້ນ ຄືກັນຫລືບໍ່? ເປັນຄຳ ເດ ຄືກັນຫລືບໍ່? ບໍ່ຄືກັນເລີຍ. ແທ້ຈິງແລ້ວ ແຕ່ລະພາສາອາດຈະຂຽນເປັນຄຳອອກມາ ແຕ່ລະຄຳນັ້ນກໍບໍ່ຄືກັນ ການ ອອກສຽງກໍຕ່າງກັນ ແຕ່ມີຢ່າງນຶ່ງທີ່ເປັນນຶ່ງດຽວນັ້ນກໍຄື "ແນວຄິດ" ເຖິງຂໍ້ມູນຈະບໍ່ເປັນຄຳດຽວກັນ ເຖິງແມ່ນຄຳ

ຈະບໍ່ຄືກັນແຕ່ເນື້ອຫາໃນພຣະຄັມພີຈະບໍ່ປ່ຽນ.

ໃນການເລົ່າເຣື່ອງເຈາະໃຈ ພວກເຮົາຂໍເຕືອນໃຫ້ຣະວັງທີ່ສຸດ ທີ່ຈະບໍ່ເພີ້ມເຕີມ ຫລືຕັດອອກ ຫລືປ່ຽນແປງເນື້ອຫາ ຂອງເຣື່ອງລາວຈາກການໃຊ້ຄຳທີ່ບໍ່ລະວັງ ການໃຊ້ສຽງ ຫລືອອກທ່າທາງ ພວກເຮົາຂໍສນັບສນູນໃຫ້ເລົ່າເຣື່ອງແບບ ສິນທະນາ ແຕ່ໃຫ້ເນັ້ນຄວາມສຳຄັນໃນການເລົ່າເຣື່ອງຢ່າງຕົງໄປຕົງມາ ບໍ່ປ່ຽນແນວຄິດແລະຂໍ້ມູນ ບໍ່ວ່າຈຸດນັ້ນຫລື ຕອນນັ້ນເບິ່ງຄືວ່າບໍ່ສຳຄັນໃນຄວາມຄິດແລະໃນສາຍຕາຂອງເຮົາ.

ການທ່ອງຈຳນັ້ນເປັນວິທີການທີ່ຈະຊ່ວຍໃຫ້ເຮົາເກັບພຣະຄຳຂອງພຣະເຈົ້າໄວ້ໃນໃຈ ແຕ່ການທີ່ຈະຈື່ຈຳເຣື່ອງລາວ ແລະເນື້ອຄວາມແບບຄຳຕໍ່ຄຳ ແລະເມື່ອນຳມາໂອ້ລົມສິນທະນາກໍສາມາດຢູ່ໃນຄັງຄວາມຈື່ຈຳຂອງເຮົາເຊັ່ນດຽວກັນ.

ຄົນທີ່ບໍ່ມີການສຶກສາຈະຮຽນຮູ້ພຣະຄຳດ້ວຍວິທີຫາຂໍ້ສຣຸບຈາກການສັງເກດໄດ້ບໍ?

ບາງເທື່ອຄົນເຮົາຈະເຂົ້າໃຈວ່າ ຄົນທີ່ອ່ານອອກຂຽນໄດ້ເປັນຜູ້ທີ່ມີຄວາມຄິດໄຈ້ແຍກ ແລະຄົນທີ່ອ່ານບໍ່ໄດ້ຫລືມາ ຈາກສັງຄົມປາກເປົ່າບໍ່ອາດຄິດໄຈ້ແຍກໄດ້ ຫລືບໍ່ສາມາດໃຫ້ເຫດຜົນ ຫລືຄິດຈາກສິ່ງສັງເກດຮອບໆ ຕົວໄດ້ ເຣື່ອງ ນີ້ເຮົາອາດຈະຕ້ອງໄດ້ໂອລົມກັນອີກດົນ ແລະຕ້ອງມາເບິ່ງຄວາມໝາຍທີ່ແທ້ຈິງຂອງຄວາມຄິດປະເພດຕຳໜິ ເມື່ອ ເຊື່ອມໂຍງກັບຜູ້ທີ່ຮຽນຮູ້ຈາກປາກເປົ່າ

ຈາກມຸມມອງຂອງພຣະຄັມພີ ເຮົາສຣຸບໄດ້ບໍ່ວ່າຄວາມສາມາດໃນການຄິດໄຈ້ແຍກນີ້ຈຳກັດຢູ່ແຕ່ສະເພາະຄົນທີ່ ອ່ານອອກຂຽນໄດ້ຫລືຜູ້ທີ່ມີການສຶກສາສູງເທົ່ານັ້ນ.

ຖ້າເຮົາຄິດຢ່າງນັ້ນກໍຈະຕ້ອງໄດ້ຄິດໃໝ່ ໃນເມື່ອເຮົາຮູ້ວ່າທຸກຄົນຖືກສ້າງມາຕາມພຣະລັກສະນະຂອງພຣະເຈົ້າ (ປະ ຖົມມະການ 1:26-27) ດັ່ງນັ້ນກໍເທົ່າກັບວ່າທຸກຄົນໄດ້ຮັບຂອງປະທານໃນເຣື່ອງເຫດຜົນແລະມີຈິດສຳນຶກ ມີເຫດ ຜົນທາງສິນທັມເປັນຕົ້ນມາຕັ້ງແຕ່ລາວຕົກຢູ່ໃນຄວາມບາບ ເຖິງແມ່ນລາວຈະປະຕິເສດບໍ່ຍອມຮັບເຫດຜົນນັ້ນ (ໂຣມ 1:19-23)

ລອງມາເບິ່ງໃນພຣະທັມມາທະໂກ 12:24 ຕອນທີ່ຄົນຊາດູກາຍຊຶ່ງມີການສຶກສາສູງມາຫາພຣະເຢຊູ ແລະພຍາຍາມ ໃຊ້ກົນອຸບາຍກັບພຣະອົງດ້ວຍຄຳຖາມ ພຣະເຢຊູຊົງຕອບລາວວ່າ, "ພວກທ່ານຜິດແລ້ວບໍ່ແມ່ນຫລື ເພາະພວກທ່ານ ບໍ່ຮູ້ຈັກພຣະຄັມພີ ແລະບໍ່ຮູ້ຣິດເດດຂອງພຣະເຈົ້າ?"

ເຮົາຮູ້ວ່າຊາດູກາຍຄົນນັ້ນຮູ້ພຣະຄຳຂອງພຣະເຈົ້າ ພຣະເຢຊູກຳລັງກ່າວວ່າລາວບໍ່ສາມາດສັງເກດຄວາມໝາຍຝ່າຍ ວິນຍານຂອງພຣະຄຳ ເພາະລາວບໍ່ມີຄວາມສາມາດໃນການສັງເກດລາວຈຶ່ງພາດຈາກຂໍ້ມູນທີ່ສຳຄັນໄປ ດັ່ງນັ້ນ ຄວາມຄິດໄຈ້ແຍກຂອງລາວ ລວມໄປເຖິງຄວາມສາມາດໃນການໃຫ້ເຫດຜົນຂອງລາວ ຈຶ່ງບໍ່ອາດນຳລາວມາເຖິງ ຄວາມຈິງໄດ້.

ດັ່ງທີ່ກ່າວມານັ້ນ ເຮົາເຫັນພຣະຄຳຂອງພຣະເຈົ້າເປັນສິ່ງທີ່ເໜືອວັທນະທັມ ຜູ້ເລົ່າທີ່ໃຊ້ການເລົ່າເຣື່ອງເຈາະໃຈຈະ

ພົບວ່າ ຖ້າລາວຫາກຕຽມຄຳນຳໃຫ້ພ້ອມພໍ່ໆ ຜູ້ຟັງກໍຈະຄົ້ນພົບຂຸມຊັບຝ່າຍວິນຍານໃນເນື້ອເຣື່ອງ ບໍ່ວ່າຈະຢູ່ໃນປະເທດໃດ ບໍ່ວ່າຈະມີການສຶກສາລະດັບໃດ.

ໃນພຣະທັມກິຈການ 4:13 ເຮັດໃຫ້ເຮົາໄດ້ເຫັນພູມຫລັງການສຶກສາຂອງສາວົກບາງຄົນ ເບິ່ງຄືວ່າເປໂຕກັບໂຢຮັນ ເຮັດໃຫ້ພວກຊາດູການແລະຜູ້ນຳທາງສາສນາໂກດຮ້າຍເພາະພວກເພິ່ນທັງສອງໄດ້ເທສນາເຣື່ອງພຣະເຢຊູຢ່າງເຖິງໃຈ ດັ່ງນັ້ນເຂົາເຈົ້າຈຶ່ງຈັບພວກເພິ່ນໄປຢູ່ຕໍ່ໜ້າສະພາເພື່ອໃຫ້ຕອບຄຳຖາມ ດ້ວຍການຊີ້ນຳຂອງພຣະວິນຍານບໍຣິສຸດ ເປໂຕໄດ້ຕອບຄຳຖາມຜູ້ນຳທາງສາສນາແລະເວົ້າເຣື່ອງພຣະເຢຊູດ້ວຍເຫດຜົນແລະດ້ວຍຖ້ອຍຄຳທີ່ເໝາະສົມ ເປັນຄຳທີ່ເຮັດໃຫ້ຄົນທີ່ມີການສຶກສາສູງທີ່ຈັບພວກເພິ່ນມາຕ້ອງຈົນຕາແຈ.
ຖ້ອຍຄຳຂອງເປໂຕສິ່ງຜົນບາງຢ່າງຕໍ່ຄົນໃນສະພາ;

> *ເມື່ອເຂົາໄດ້ເຫັນຄວາມກ້າຫານຂອງເປໂຕກັບໂຢຮັນ ແລະສັງເກດວ່າທ່ານທັງສອງຂາດການສຶກສາ ແລະເປັນຄົນທັມມະດາສາມັນ ກໍປລາດໃຈ ແລ້ວສຳນຶກໄດ້ວ່າຄົນທັງສອງເຄີຍຢູ່ກັບພຣະເຢຊູ (ກິຈການ 4:13)*

ໃນທຸກມື້ນີ້ເຫດການແບບນີ້ຍັງເກີດຂຶ້ນຫລືບໍ່? ຄົນບໍ່ມີການສຶກສາແຕ່ໄດ້ຕິດຕາມພຣະເຢຊູແລະໄດ້ຟັງພຣະຄຳມາເປັນຢ່າງດີ ໄດ້ຄົ້ນພົບສິ່ງຕ່າງໆ ດ້ວຍເຫດແລະຜົນ ເຂົາເຈົ້າຈະສອນຄວາມຈິງອັນລ້ຳເລີກໃຫ້ແກ່ຄົນອື່ນໄດ້ບໍ່?

ລາຍງານຄວາມຈິງຈາກພາກສນາມຈະຊ່ວຍຕອບຄຳຖາມ

ພຣະຄຳຂອງພຣະເຈົ້າ ເວົ້າໂດຍຕົງກັບສິ່ງທີ່ຊຸກເຊື່ອງຢູ່ໃນໃຈ. ບາງເທື່ອຜູ້ຝຶກອົບຮົມເລົ່າເຣື່ອງເຈາະໃຈຊາວຕາເວັນຕົກມີໂອກາດທີ່ຈະເຫັນ ຫລືໃຊ້ການເລົ່າເຣື່ອງໃນຊົນນະບົດ ພວກເຮົາໄດ້ໄປຢ້ຽມຢາມໝູ່ບ້ານອີຄາລາຄາລາ ໃນປະເທດແຄນຢາ ກ່ອນໜ້ານັ້ນມີຜູ້ຝຶກອົບຮົມເລົ່າເຣື່ອງເຈາະໃຈ ໃຫ້ແກ່ຜູ້ທີ່ເຊື່ອບາງຄົນ.

ຄົນທີ່ນຳພວກເຮົາໄປອະທິບາຍວ່າ, "ຕອນທີ່ພວກເຮົາມາເທື່ອທຳອິດ ໃນຄຣິສຕະຈັກຈະມີການຮ້ອງເພງ ຕົບມື ເທສນາ ແລະອາດຈະມີພຣະຄຳອີກ 1 ຂໍ້ ກໍພຽງແຕ່ເທົ່ານັ້ນ ຜູ້ທີ່ເຊື່ອເກືອບຈະບໍ່ຮູ້ຈັກພຣະຄັມພີເລີຍ ແຕ່ໃນຕອນນີ້ ສິດຍາພິບານກໍໄດ້ເຫັນຄົນໄດ້ຮັບຄວາມພົ້ນແລະເຕີບໃຫຍ່ຂຶ້ນ" ໄດ້ເຂົ້າມາເຫັນເຫດການນີ້ເໝືອນກັບພວກເຮົາໄດ້ເຫັນ.

ເມື່ອເຂົ້າໄປໃນຕົວຕຶກຄຣິສຕະຈັກບ້ານຄາລາຄາລາ ຊຶ່ງກໍ່ສ້າງດ້ວຍຊີມັງ ຫລັງຄາມຸງດ້ວຍສັງກະສີ ມີຄົນ 60 ຄົນທີ່ມາຈາກເຜົ່າຄັມບາ ທີ່ຄອຍຖ້າການຝຶກອົບຮົມຢູ່ ໃນນັ້ນມີ 15 ຄົນເປັນສິດຍາພິບານ ທີ່ມາຈາກ 11 ຄຣິສຕະຈັກ

ຈະສັງເກດເຫັນພວກຜູ້ຍິງທີ່ນຸ່ງເຄື່ອງດ້ວຍຜ້າສີສົດໃສໃສ່ພວກ ສ່ວນພວກທີ່ນຸ່ງທີ່ມດ້ວຍຜ້າທີ່ດີທີ່ສຸດ ຜູກເນັກໄທ ເມື່ອເບິ່ງໃຫ້ຄັກແລ້ວຈະເຫັນວ່າ ເສື້ອນອກນັ້ນຂນາດໃຫຍ່ລົ້ນຕົວຂອງຜູ້ໃສ່ຫລາຍ ແລະຈະສັງເກດເຫັນແຂນເສື້ອກັບສິ້ງທີ່ເກົ່າຫລາຍຈົນບາງ ມີໃຜພໍຈະຮູ້ໄດ້ແດ່ວ່າ ສິ້ງເສື້ອຊຸດນີ້ມີຈັກຄົນທີ່ຢືມກັນນຸ່ງໄປໂບດ?"

ມີຄົນມາບອກພວກເຮົາວ່າ ຕ້ອງສອນໃຫ້ຈົບກ່ອນບ່າຍສີ່ໂມງ ເພື່ອວ່າເຂົາເຈົ້າຈະໄດ້ຂ້າມທ້ວຍນ້ຳກັບເມືອກ່ອນ

ໂຕຮິບໂປ(ຊ້າງນ້ຳ)ຈະອອກມາ ສ່ວນຫລາຍເຂົາເຈົ້າຈະຍ່າງໃຊ້ເວລາຫລາຍກວ່າສີ່ຊົ່ວໂມງຈຶ່ນກວ່າຈະເຖິງບ້ານທີ່ມີເຮືອນທີ່ເຮັດດ້ວຍດິນເປັນຮູບມົນໆ.

ມີຊາວອັຟຣິກາຄົນນຶ່ງຕຽມເລົ່າເຣື່ອງຈາກພຣະທັມປະຖົມມະການ 35:1-5 ແລະລາວຈະເປັນຜູ້ນຳໃນການໂອ້ລົມສົນທະນານຳ ລາວຈະເລົ່າເປັນພາສາສະວາຮິລີແລະແປເປັນພາສາຄັມບາ ຫລັງຈາກທີ່ພວກເຮົາໄປນັ່ງຢູ່ຕ່ຳແຖວຫລັງສຸດລ່າມແປພາສາກໍຈະບອກພວກເຮົາວ່າລາວກຳລັງເວົ້າຫຍັງ.

"ຕອນນີ້ຜູ້ເລົ່າເຣື່ອງກຳລັງເລົ່າວ່າ ຢາໂຄບເປັນຜູ້ນຳຝ່າຍວິນຍານຂອງຄອບຄົວ ລາວບອກໃຫ້ທຸກຄົນປະຖົ້ມພຣະທຽມ ລາວເອີ້ນຢາໂຄບວ່າ...**ເປັນຄົນທີ່ເຊື່ອຟັງພຣະເຈົ້າ**...ຜູ້ເລົ່າເຣື່ອງກຳລັງຖາມວ່າ "ພີ່ນ້ອງເຫັນວ່າ ຢາໂຄບຫາກໍເປັນຜູ້ນຳຝ່າຍວິນຍານຂອງຄອບຄົວຫລືວ່າລາວເປັນຜູ້ນຳຝ່າຍວິນຍານມາດົນແລ້ວ?" ແລະຜູ້ເລົ່າຖາມຕໍ່ໄປອີກວ່າ, "ການກຳຈັດຮູບໂຄຣິບຂອງຢາໂຄບ ໄດ້ບອກຫຍັງກັບພວກເຮົາ? " ແລ້ວຄົນໃນກຸ່ມກໍໂອ້ລົມສົນທະນາກັນຢ່າງມີຣົດຊາດ.

ສອງສາມນາທີຕໍ່ມາ ລ່າມແປພາສາໄດ້ຊົ່ມໃສ່ຫູວ່າ, "ຕອນນີ້ເຂົາເຈົ້າໄດ້ເຫັນຫລາຍຢ່າງຢູ່ໃນເຣື່ອງ ລາວເວົ້າວ່າ, "ຢາໂຄບໄດ້ຮວບຮວມຮູບໂຄຣິບແລ້ວຝັງໄວ້ກ້ອງຕົ້ນໝາກກ່ໍໃກ້ກັບເມືອງເຊເຄັມ ລາວໄດ້ບອກອີກວ່າໄດ້ຝັງໄວ້ບ່ອນໃດ" ເອີ..ແລ້ວກໍເລີຍເວົ້າເຣື່ອງຢາໂຄບວ່າລາວເປັນຄົນໂລບມາກ...ລາວບໍ່ເຊື່ອວ່າພຣະເຈົ້າຈະຊົງຈັດຫາໃຫ້.

ເຂົາເຈົ້າໂອ້ລົມກັນວ່າ, "ຢາໂຄບຍອມໃຫ້ຄອບຄົວເກັບຮູບໂຄຣິບໄວ້..." ອີກຄົນນຶ່ງເວົ້າຂຶ້ນວ່າ, "ຂອງບາງຢ່າງທີ່ເອີ້ນວ່າຂອງດີນັ້ນແມ່ນຕຸ້ມຫູ ດັ່ງນັ້ນຢາໂຄບຕ້ອງຮູ້ແນ່ນອນເຣື່ອງຮູບໂຄຣິບຢູ່ໃນເຮືອນຂອງລາວ" ໃນຂະນະທີ່ທຸກຄົນກຳລັງໂອ້ລົມກັນເຖິງການກະທຳຂອງຢາໂຄບ ຜູ້ຍິງຄົນນຶ່ງໄດ້ຢືນຂຶ້ນມີທ່າທາງທີ່ຕື່ນເຕັ້ນ ລາວໄດ້ເວົ້າອອກມາເປັນພາສາຄັມບາ.

ລ່າມແປພາສາຊົ່ມວ່າ, "ຜູ້ຍິງຄົນນີ້ບອກພວກເພື່ອນວ່າ ພວກເຮົາເປັນຄຣິສຕຽນ ແຕ່ພວກເຮົາຍັງມີຂອງດີ (ຮູບໂຄຣິບ)ຊຸກເຊື່ອງໄວ້ຢູ່ ພວກເຮົາບໍ່ຕ້ອງເຊື່ອງມັນໄວ້ອີກແລ້ວ ພວກເຮົາຕ້ອງທຳລາຍມັນສາ" ສອງສາມນາທີຕໍ່ມາຊາຍຮ່າງໃຫຍ່ຄົນນຶ່ງເວົ້າຂຶ້ນດ້ວຍສຽງດັງ ແລະຜູ້ຊາຍທຸກຄົນກໍງຶກຫົວເຫັນດີນຳລາວ. ຕອນນີ້ທ່ານອາດຈະຢາກຮູ້ວ່າຊາຍຮ່າງໃຫຍ່ເວົ້າຫຍັງ ຂ້າພະເຈົ້າຈຶ່ງຫັນໜ້າໄປຫາລ່າມ ຖາມວ່າ, "ລາວກຳລັງເວົ້າເຣື່ອງຫຍັງ?"

ລ່າມໄດ້ຄອຍຖ້າໃຫ້ລາວເວົ້າຈົບ ແລ້ວບອກວ່າ, "ລາວເວົ້າວ່າ ລາວເປັນຄົນປົກຄອງຄອບຄົວ ທຸກຄົນຕ້ອງເຮັດຕາມທີ່ລາວບອກ ແຕ່ລາວກັບເປັນເໝືອນຢາໂຄບ ບໍ່ໄດ້ນຳພາຄອບຄົວໃຫ້ຢູ່ໃນຝ່າຍວິນຍານ ລາວຈະຕ້ອງປ່ຽນແປງຕົວເອງໃໝ່" [ໃນມື້ນັ້ນທຸກຄົນໃນຄຣິສຕະຈັກໄດ້ຄົ້ນພົບຄວາມໜ້າຊື່ໃຈຄົດຂອງຢາໂຄບຈາກເຣື່ອງໃນພຣະຄັມພີ ທັ້ງຊາຍແລະຍິງທີ່ລຸກຂຶ້ນເວົ້າ ຍອມຮັບຄວາມບາບຂອງຕົນເອງ ເມື່ອເຂົາເຈົ້າໄດ້ເຫັນບາບຂອງຢາໂຄບ.

ພວກເຮົາໄດ້ເຫັນຣົດເດດອັນເໜືອທັມມະຊາດຢູ່ໃນເຣື່ອງຂອງພຣະເຈົ້າ ເຣື່ອງນີ້ໄດ້ເວົ້າກົງກັບມຸມມອງໂລກຂອງແຕ່ລະຄົນ ຜູ້ສື່ສານປາກເປົ່າທີ່ອ່ານບໍ່ໄດ້ກັບພົບຄວາມຈິງອັນເລິກເຊິ່ງແລະໄດ້ນຳໄປໝູນໃຊ້ໃນຊີວິດໃນມື້ດຽວ ຊຶ່ງເຫດການເຫລົ່ານີ້ ພວກມິສຊັນນາຣີອາດໃຊ້ເວລາຫລາຍປີໃນການເປັນພຍານ ແລະອະທິຖານສແວງຫາພຣະເຈົ້າ.]

ບໍ່ຫລ້າສວາຍຈົນເກີນໄປ ບໍ່ຫລິ້ງໄປໄກຈົນເກີນໄປ. ໃນທ້ອງຖິ່ນແຫ່ງນຶ່ງໃນປະເທດເນປານ ມີໝໍຜີຄົນນຶ່ງອາຍຸ 66 ປີ ບໍ່ເຄີຍຮຽນອ່ານໜັງສືເລີຍ ແຕ່ລາວສາມາດຄວບຄຸມຄົນຈຳນວນເປັນຮ້ອຍ ຄົນເຫລົ່ານັ້ນຕ່າງກໍໂຄຣົບແລະຍຳເກງລາວຫລາຍ.

ຕອນທີ່ລາວອາຍຸໄດ້ 60 ປີນັ້ນ ລາວໄດ້ຍິນເຣື່ອງພຣະເຢຊູ ແຕ່ລາວຄິດວ່າລາວບໍ່ຕ້ອງການພຣະອົງ ແມ່ນແລ້ວ... ລາວເຄີຍໄດ້ຍິນເຣື່ອງຄົນອະທິຖານໃນພຣະນາມພຣະເຢຊູແລະໄດ້ຮັບຄຳຕອບ ແຕ່ລາວເຫັນວ່າເຫລົ່າວິນຍານຊົ່ວ

ກຳຊ່ອຍລາວຢູ່ແລ້ວ ລາວຈຶ່ງບໍ່ມີເຫດຜົນໃດໆ ທີ່ຈະໃຫ້ພຣະເຢຊູຊ່ອຍ.

ໃນມື້ນຶ່ງ ຫລານຊາຍຂອງລາວໄດ້ລົ້ມປ່ວຍລົ້ງຈົນເກືອບຕາຍ ໝໍຜີຄົນນັ້ນທັ້ງສູດມົນ ທັ້ງອ້ອນວອນໃຫ້ວິນຍານທັ້ງຫລາຍຊ່ອຍປິ່ນປົວຫລານຊາຍຂອງລາວ ແຕ່ເດັກກຳກຳລັງຈະຕາຍ ດ້ວຍຄວາມທໍ້ແທ້ໃຈ ໃນທີ່ສຸດລາວຈຶ່ງໄປຫາຄຣິສຕຽນ ຂໍໃຫ້ອ້ອນວອນເພື່ອຫລານຊາຍຂອງລາວ ປາກົດວ່າເມື່ອລາວຮ່ວມອະທິຖານນຳຄຣິສຕຽນ ຫລານຊາຍຂອງລາວໄດ້ຫາຍດີເປັນປົກກະຕິ ແຕ່ໝໍຜີຍັງບໍ່ໄດ້ຕິດຕາມອົງພຣະເຢຊູເທື່ອ ແລະລາວຍັງສືບຕໍ່ເປັນໝໍຜີຕໍ່ໄປ.

ສາມເດືອນຕໍ່ມາ ເມັ່ງຂອງລາວຊຶ່ງເປັນຜູ້ເຊື່ອໃນພຣະເຢຊູ ໄດ້ມາຮັບການຝຶກອົບຮົມເລົ່າເຣື່ອງເຈາະໃຈ ໃນຄືນນັ້ນ ລາວໄດ້ກັບເມືອເຮືອນແລະເວົ້າເຣື່ອງທີ່ລາວໄດ້ຮຽນໃຫ້ຜູ້ເປັນພ້ອຟັງ.

ຊຶ່ງເປັນເຣື່ອງຂອງນາອາມານຈາກ 2 ປະວັດກະສັດບົດທີ 5 ຊຶ່ງມີຊາວເນປານຄົນນຶ່ງເປັນຄົນເລົ່າເຣື່ອງແລະໄດ້ສົນທະນາແລກປ່ຽນຄວາມຄິດເຫັນໃນເຣື່ອງນັ້ນວ່າ ນາອາມານເປັນແມ່ທັບຂອງກອງທັບທະຫານປະເທດຊີເຣັ່ງ ແລະໄດ້ເປັນຂີ້ທູດ ລາວໄດ້ຍິນວ່າ ຜູ້ປະກາດພຣະທັມຂອງພຣະເຈົ້າໃນປະເທດອິສຣາເອນສາມາດປິ່ນປົວພຍາດນີ້ໄດ້ ເຖິງແມ່ນຊີເຣັ່ງເປັນສັດຕຣູກັບປະເທດອິສຣາເອນ ແຕ່ລາວກໍຕ້ອງເດີນທາງໄປອິສຣາເອນເພື່ອຈະໄດ້ດີພຍາດ.

ແຕ່ເມື່ອໄປຮອດເຮືອນຂອງເອລີຊາ ເອລີຊາບໍ່ໄດ້ເຮັດຕາມທີ່ນາອາມານຄາດຫວັງໄວ້ ແທ້ຈິງແລ້ວທ່ານເອລີຊາບໍ່ໄດ້ອອກມາຫານາອາມານເລີຍ ແລະເມື່ອເພິ່ນໄດ້ບອກຄົນໃຫ້ມາບອກນາອາມານໄປມຸດລົ້ງທີ່ແມ່ນ້ຳຈໍແດນ 7 ເທື່ອ ເພື່ອຈະໄດ້ດີພຍາດ ນາອາມານໄດ້ຕອບວ່າ, "ແມ່ນ້ຳອາບານາ ແລະແມ່ນ້ຳຟາຣ໌ປາທີ່ເມືອງດາມາເຊຍັງດີກວ່າແມ່ນ້ຳໃນອິສຣາເອນນີ້ ເຮົາໄປອາບໃນແມ່ນ້ຳເຫລົ່ານັ້ນກໍຄົງຈະຫາຍດີຢູ່ຕື້" ແລ້ວທ່ານກໍຫັນຫລັງຄືນໄປດ້ວຍຄວາມໂກດຮ້າຍ

ແຕ່ຄົນໃຊ້ຂອງນາອາມານໄດ້ຮ້ອງຂໍໃຫ້ເພິ່ນຖ່ອມຕົວລົ້ງແລ້ວໄປເຮັດໃນສິ່ງທີ່ເອລີຊາບອກ ຄືໄປມຸດນ້ຳເພື່ອຈະໄດ້ດີພຍາດ ເພິ່ນຈຶ່ງໄປມຸດນ້ຳຕາມທີ່ເອລີຊາບອກ ແລະເພິ່ນກໍຫາຍຈາກພຍາດຂີ້ທູດໃນທັນທີ.

ເມື່ອໝໍຜີໄດ້ຍິນເຣື່ອງນີ້ ລາວໄດ້ເວົ້າກັບເມັ່ງຂອງລາວວ່າ, "ຂ້ອຍນີ້ແຫລະ ທີ່ເປັນນາອາມານ ຂ້ອຍອວດໂຕຫລາຍ ຈຶ່ງບ່ຍອມຕິດຕາມພຣະເຢຊູ" ມື້ໃໝ່ຕໍ່ມາ ໝໍຜີໄດ້ຕິດຕາມເມັ່ງຂອງລາວໄປຮັບການຝຶກອົບຮົມ ລາວໄດ້ບອກກັບຄຣູຜູ້ຝຶກອົບຮົມວ່າ,"ຂ້ອຍຢາກຕິດຕາມພຣະເຢຊູ" ຈຶ່ງມີການໂອ້ລົມກັນແລະອະທິຖານຮ່ວມກັນເພື່ອຮັບເອົາຄວາມ

ພົ້ນ ຫຼັງຈາກນັ້ນຊາຍຊະຣາທີ່ບໍ່ເຄີຍຮຽນໜັງສື ຫລືໝໍຜີຜູ້ທີ່ໃຊ້ເວລາສ່ວນຫລາຍໃນໂລກໄສຍະສາດໄດ້ຂໍອະນຸຍາດ ບອກສິ່ງທີ່ເກີດຂຶ້ນກັບລາວໃຫ້ຄົນທີ່ຢູ່ໃນການຝຶກອົບຮົມຟັງ ລາວເວົ້າວ່າ...

"ນາອາມານເປັນຊາຍທີ່ອວດອີ່ງທະນົງຕົວ ລາວເກືອບຈະບໍ່ດີພຍາດຍ້ອນຄວາມໂອ້ອວດຂອງລາວ ຂ້ອຍກໍເປັນຄົນໂອ້ອວດຄືກັນ ຂ້ອຍຮູ້ເຣື່ອງພຣະເຢຊູມາຫລາຍປີແລ້ວແລະຄວນຕິດຕາມພຣະອົງ ແຕ່ຂ້ອຍບໍ່ຢາກຍອມຮັບວ່າຂ້ອຍຕ້ອງການພຣະອົງ ຄົນທັງຫລາຍໂຄຣົບນັບຖືຂ້ອຍ ຂ້ອຍບໍ່ຢາກສູນເສັຽຕຳແໜ່ງນັ້ນໄປເຖິງແມ່ນຮູ້ວ່າພຣະເຈົ້າໄດ້ໂຜດຫລານຊາຍຂອງຂ້ອຍໃຫ້ຫາຍດີ ເບິ່ງແມ ຂ້ອຍເກືອບຊິບໍ່ໄດ້ຮັບຄວາມພົ້ນ ແຕ່ດຽວນີ້ ຂ້ອຍໄດ້ເປັນຜູ້ຕິດຕາມພຣະເຢຊູແລ້ວ"

ເມື່ອຜູ້ໃດຜູ້ນຶ່ງຄົ້ນພົບຄວາມຈິງຝ່າຍວິນຍານໃນພຣະຄັມພີ ບໍ່ວ່າລາວຈະເປັນຄົນທີ່ມີການສຶກສາຫລືບໍ່ກໍຕາມ ຜູ້ທີ່ຈະໄດ້ຮັບກຽດກ່ອນແມ່ນພຣະວິນຍານບໍຣິສຸດ ພວກເຮົາໄດ້ເຫັນຢ່າງຊັດແຈ້ງວ່າ ຫລັງຈາກໝໍຜີຄົນນີ້ໄດ້ຟັງເຣື່ອງຈາກພຣະຄັມພີ ລາວກໍໃຊ້ເຫດຜົນໃຊ້ຄວາມຄິດສາມາດສລຸບສິ່ງທີ່ລາວໄດ້ຍິນວ່າລາວເປັນຄົນແນວໃດ ຊຶ່ງສະທ້ອນຈາກບຸກຄົນທີ່ຢູ່ໃນເຣື່ອງນັ້ນ ຄວາມເລິກເຊິ່ງຂອງສິ່ງທີ່ລາວຄົ້ນພົບນັ້ນບໍ່ໄດ້ຂຶ້ນຢູ່ກັບການສຶກສາຂອງລາວເລີຍ.

ສິ່ງທີ່ໜ້າສົນໃຈກໍແມ່ນ ການລາຍໆຄນຈາກຄຣູຝຶກພາກສນາມ ຄົນທີ່ຮັບໃຊ້ໃນການຝຶກອົບຮົມພາກປະຕິບັດຕົວຈິງ ນັ້ນເປັນຄົນທ້ອງຖິ່ນ ທີ່ເຂົ້າມາຝຶກອົບຮົມລຸ້ນທີສອງ ທີສາມ ແລະທີສີ່ ເຂົາເຈົ້າທຸກຄົນມາຈາກຊຸມຊົນວັທນະທັມປາກເປົ່າ ແລະສ່ວນຫລາຍມາຈາກໝູ່ບ້ານຊົນນະບົດ.

ເຣື່ອງການໃຊ້ປຶ້ມອະທິບາຍພຣະຄັມພີ

ປຶ້ມອະທິບາຍພຣະຄັມພີສ່ວນຫລາຍຈະໃຫ້ປັນຍາແກ່ຄົນທີ່ສົນໃຈສຶກສາພຣະຄຳ ຄຣິສຕຽນຕ່າງກໍໄດ້ຮັບປໂຍດຈາກຄວາມເຂົ້າໃຈທີ່ຄົນຂອງພຣະເຈົ້າໄດ້ແບ່ງປັນທັງຈາກຄຳເວົ້າແລະການຂຽນ ການຄົ້ນຄວ້າຄວາມເຫັນຂອງຜູ້ອະທິບາຍພຣະຄັມພີເໝືອນການຟັງຄົນຜູ້ນຶ່ງໃຫ້ຄວາມເຫັນ ແຕ່ຄວາມແຕກຕ່າງຂອງການຍອມຮັບຂໍ້ມູນນັ້ນແມ່ນເຮົາມັກຈະຄາດຫວັງເອົາວ່າຄຳສອນທີ່ພິມນັ້ນຈະຖືກຕ້ອງສເມີ ເພາະວ່າກ່ອນຈະພິມເປັນປຶ້ມກໍຕ້ອງໄດ້ຜ່ານເວລາການຄົ້ນຄວ້າ ແລະຄວາມເຂົ້າໃຈຫລາຍພໍສົມຄວນ ຢ່າງໃດກໍຕາມ ບໍ່ວ່າຈະເປັນຄວາມເຫັນ ຫລືຂໍ້ມູນທີ່ພິມ ບໍ່ວ່າຈະມາຈາກໃສ ເຮົາຈະຕ້ອງໃຫ້ພຣະຄັມພີເປັນຜູ້ກວດສອບ(ໃຊ້ພຣະຄັມພີເປັນບັນທັດຖານ ວັດແທກ)

ພຣະເຈົ້າຊົງໃຫ້ເຮົາເຫັນວ່າຈະເຮັດໃຫ້ສິ່ງທີ່ເຮົາສອນໄປເກີດເປັນຈິງໄດ້ຢ່າງໃດ

> *ໃນຍັດດຽວນັ້ນພວກພີ່ນ້ອງຈຶ່ງໃຫ້ໂປໂລກັບຊີລາອອກໄປຍັງເມືອງເບຣອຍອາໃນເວລາກາງຄືນ ເມື່ອເຖິງແລ້ວທ່ານທັງສອງໄດ້ເຂົ້າໄປໃນໂຮງທັມມະເທສນາຂອງຊາວຢິວ ພວກຢິວເຫລົ່ານີ້ມີຈິດໃຈສູງສົ່ງກວ່າຊາວເມືອງເທຊະໂລນິກ ເພາະເຂົາມີໃຈເຫລື້ອມໃສຮັບເອົາພຣະທັມແລະຄົ້ນເບິ່ງພຣະຄັມພີທຸກວັນ ເພື່ອຢາກຮູ້ວ່າຂໍ້ຄວາມນັ້ນເປັນຈິງດັ່ງກ່າວຫລືບໍ່.* ກິຈການ 17:10-11

ຊາວເມືອງເບຣອຍອາໄດ້ຮັບຄຳຍ້ອງຍໍເພາະວ່າເຂົາເຈົ້າໄດ້ກວດສອບສິ່ງທີ່ເຂົາເຈົ້າໄດ້ຮຽນຮູ້ໃສ່ກັບພຣະຄັມພີ ເຂົາ

ເຈົ້າຖືວ່າພຣະຄັມພີເປັນອຳນາດສຸດທ້າຍ ເປັນໜ້າສົນໃຈ ແມ່ນຄຳສອນຂອງໃຜໜໍ່ທີ່ຖືກກວດສອບ? ແມ່ນແລ້ວ... ຄຳສອນຂອງອາຈານໂປໂລນັ້ນເອງທີ່ຖືກກວດສອບ !

ທຸກມື້ນີ້ເຮົາຍັງຄົງໃຊ້ພຣະຄັມພີເປັນບັນທັດຖານວັດແທກ ກວດສອບຂໍ້ມູນທີ່ເຮົາໄດ້ຮັບ ບໍ່ວ່າຈະມາຈາກທາງໃດ ມາຈາກບຸກຄົນໃດ ມາຈາກການອະທິບາຍໃດໆ ຫລືແມ່ນແຕ່ປຶ້ມຄູ່ມືຄຣູສອນ. ເມື່ອເຮົາສອນເຣື່ອງລາວກັບຄົນທີ່ສາມາດເຂົ້າເຖິງພຣະຄັມພີໄດ້ ໃນຕອນຈົບຂອງການສົນທະນາ ເຮົາຄວນຈະບອກບົດແລະຂໍ້ພຣະຄັມພີເປັນການອ້າງອີງແກ່ເຂົາເຈົ້າ ເພື່ອໃຫ້ເຂົາເຈົ້າເອົາໄປອ່ານ ໃຫ້ເຂົາເຈົ້າເຫັນວ່າສິ່ງທີ່ທ່ານສອນແລະສົນທະນານັ້ນຖືກຕ້ອງຫລືບໍ່.

ໃນການປະຊຸມໃຫຍ່ໃນອັຟຣິກາ ຕ່າງຄົນກໍຊື່ນຊົມກັບເຣື່ອງລາວແລະວິທີການເລົ່າເຣື່ອງເຈາະໃຈ ຊາຍໜຸ່ມຄົນນຶ່ງທີ່ກະຕືລືລົ້ນເມື່ອໄດ້ຮຽນເຣື່ອງລາວແລ້ວ ລາວໄດ້ຕັ້ງຄຳຖາມທີ່ໜ້າສົນໃຈແລະຖາມວ່າ, "ຂໍໃຫ້ທ່ານສິ່ງປຶ້ມອະທິບາຍພຣະຄັມພີມາໃຫ້ຂ້ານ້ອຍໄດ້ບໍ່?" ທຳອິດຂ້າພະເຈົ້າຮູ້ສຶກແປກໃຈ ຕອບລາວໄປວ່າ, "ອາດຈະໄດ້ຢູ່ຕໍ່" ຂ້າພະເຈົ້າຍົ້ມໃຫ້ລາວແລ້ວເວົ້າວ່າ, "ເອົາຈັ່ງຊີ້ສາ ໃຫ້ທ່ານຕິດຕໍ່ຫາພວກເຮົາອີກເທື່ອ ເມື່ອທ່ານຮຽນຈົບ 296 ເຣື່ອງ ທີ່ຢູ່ໃນລາຍການນີ້ ເພາະວ່າທ່ານຈະໄດ້ວັດແທກຄວາມຖືກຕ້ອງຂອງຂໍ້ມູນໃນປຶ້ມອະທິບາຍພຣະຄັມພີໄດ້"

ຄຣິສຕຽນໃນບາງກຸ່ມ ເຫັນວ່າປຶ້ມອະທິບາຍພຣະຄັມພີມີຄວາມໜັກແໜ້ນກວ່າພຣະຄຳພຣະເຈົ້າ ບາງຄັ້ງມີຄົນຍຶດຖືເອົາເນື້ອຫາຈາກປຶ້ມອະທິບາຍພຣະຄັມພີເພາະຂີ້ຄ້ານທີ່ຈະຮຽນເອງ ແທນທີ່ຈະໃຊ້ເວລາຂຸດຄົ້ນຈາກພຣະຄັມພີ ເຂົາເຈົ້າປກັບໄປຍຶດເອົາຄວາມເຫັນຂອງນັກສາສນາສາດ ຕ່າງໆ ນາໆ

ເຮົາທຸກຄົນຕ້ອງເຝົ້າຣະວັງຄວາມຄິດທີ່ວ່າ ເຖິງພຣະຄັມພີຈະເປັນປຶ້ມສຳລັບຄົນທັມມະດາສາມັນ ແຕ່ຄວາມຈິງອັນເລິກເຊິ່ງຈະບໍ່ເປັນຂອງນັກສາສນາສາດ ຂອງນັກເທດ ຫລືຂອງນັກຂຽນເທົ່ານັ້ນ ພຣະເຈົ້າຊົງພໍພຣະທັຍທີ່ທຸກຄົນເຂົ້າເຖິງຄວາມຈິງຂອງພຣະອົງໄດ້ ບໍ່ພຽງແຕ່ຄົນທີ່ເກ່ັງ ທີ່ມີໂອກາດໄດ້ຮຽນສູງໆ ເທົ່ານັ້ນ.

ການເຂົ້າມາມີສ່ວນໃນການສົນທະນາເຣື່ອງພຣະຄັມພີເປັນກຸ່ມຈຶ່ງເປັນເໝືອນຂໍ້ມູນທີ່ມີຄ່າ ຊຶ່ງນັກຂຽນໄດ້ຂຽນໃນປຶ້ມອະທິບາຍພຣະຄັມພີ ໃນຣະຫວ່າງການສົນທະນາເມື່ອມີຄົນໃດຄົນນຶ່ງໃຫ້ຄວາມຄິດເຫັນຊຶ່ງອາດຈະຈິງຫລືອາດຈະບໍ່ຈິງກໍຕາມ ເຮົາຮູ້ສຶກມີອິສຣະພາບທີ່ຈະຖາມວ່າ, "ໃນຕອນນີ້ ທ່ານເຫັນຫຍັງແດ່ໃນເຣື່ອງ?" ໃນທາງດຽວກັນ ພວກເຮົາສນັບສນູນໃຫ້ທຸກຄົນຫາຄວາມຈິງຂອງຂໍ້ມູນຈາກປຶ້ມອະທິບາຍພຣະຄັມພີ ໃນທຳນອງດຽວກັນນີ້.

ແທ້ຈິງແລ້ວ ເມື່ອມີໃຜຄົນນຶ່ງໃຫ້ຄວາມໝາຍຂອງຂໍ້ຄວາມຕອນໃດຕອນນຶ່ງ ກໍເທົ່າກັບວ່າລາວກຳລັງເຮັດໜ້າທີ່ອະທິບາຍພຣະຄັມພີ ດັ່ງນັ້ນບໍ່ວ່າຜູ້ໃດຈະໃຫ້ຄວາມເຫັນ ຈະເຫັນຄົນທີ່ເຊື່ອໃໝ່ ຫລືຄົນທີ່ຮຽນສູງ ໄດ້ຮຽນພຣະຄັມພີມາດົນນານແລ້ວ ຂໍໃຫ້ເຮົາແນ່ໃຈສເມີວ່າສິ່ງທີ່ແບ່ງປັນກັນນັ້ນເປັນສິ່ງທີ່ເຫັນຈິງ ວັດແທກໄດ້ຈາກພຣະຄັມພີ.

✞

ບົດທີ 10
ຜູ້ທຳໜ້າທີ່ຕ່າງໆ ໃນຣະບົບການເລົ່າເຣື່ອງເຈາະໃຈ

ຜູ້ຝຶກຫັດ Practitioner. ໃນການຝຶກອົບຮົມພາກປະຕິບັດ ຜູ້ເຂົ້າຮ່ວມຝຶກອົບຮົມຈະໄດ້ຮັບການອົບຮົມແລະການຝຶກເປັນສ່ວນຕົວ ຄວາມຮັບຜິດຊອບແລະຄວາມສຸກຂອງພວກເຮົາກໍຄື ການຈະໄດ້ສິ່ງຕໍ່ຂໍ້ມູນວິທີການເລົ່າເຣື່ອງເຈາະໃຈ ຜູ້ຮຽນຈຳເປັນຕ້ອງຝຶກການເລົ່າເຣື່ອງຕາມແນວຄິດຂອງການເລົ່າເຣື່ອງເຈາະໃຈ ແລະຕ້ອງເຮັດໃຫ້ຄວາມສາມາດດີຂຶ້ນໄປເລື້ອຍໆ

ຜູ້ທີ່ເຂົ້າຮ່ວມພາກປະຕິບັດການເລົ່າເຣື່ອງເຈາະໃຈ ເປັນຜູ້ຮັບການຝຶກອົບຮົມ ເມື່ອເຂົາເຈົ້າເປີດຮັບເອົາແນວຄິດນີ້ ສ່ວນຫລາຍຈະສາມາດໃຊ້ແນວຄິດການເລົ່າເຣື່ອງເຈາະໃຈໄດ້ເປັນຢ່າງດີ ພໍທີ່ຈະກັບໄປຫາກຸ່ມຂອງລາວແລະເລົ່າເຣື່ອງຈາກພຣະຄັມພີ ນຳຂ່າວສານແຫ່ງຄວາມຈິງຝ່າຍວິນຍານຜ່ານການສົມທະນາແລະປ່ຽນຄວາມຄິດເຫັນ ພວກເຮົາຂໍສນັບສນູນໃຫ້ຜູ້ທີ່ໄດ້ຮັບການຝຶກອົບຮົມອອກໄປເລົ່າເຣື່ອງຈາກພຣະຄັມພີ ພວກເຮົາສເນີທີ່ຈະໃຫ້ອຸປກອນເພື່ອເຂົາເຈົ້າຈະໄດ້ໃຊ້ສິ່ງຕໍ່ວິທີການເລົ່າເຣື່ອງເຈາະໃຈ.

ໃນຂະນະທີ່ຜູ້ຮັບການຝຶກອົບຮົມກຳລັງຕຽມຕົວທີ່ຈະເປັນຄົນເລົ່າເຣື່ອງ ລາວຍັງບໍ່ພ້ອມທີ່ຈະເປັນຜູ້ນຳໃນການຝຶກອົບຮົມເລົ່າເຣື່ອງເຈາະໃຈເທື່ອ ຫລືເປັນຜູ້ຝຶກອົບຮົມຜູ້ອື່ນພາຍໃຕ້ຊື່ຂອງແນວທາງການເລົ່າເຣື່ອງເຈາະໃຈເທື່ອ.

ບາງເທື່ອກໍມີຄຳຖາມຈາກຜູ້ທີ່ຮັບໃຊ້ຢູ່ແລ້ວວ່າ, "ການທີ່ຈະນຳເອົາການເລົ່າເຣື່ອງເຈາະໃຈໄປປະສົມກັບວິທີການອື່ນໆ ທີ່ໃຊ້ຢູ່ໄດ້ຫລືບໍ່?" ພວກເຮົາອາດຈະຕອບວ່າ ນັ້ນເປັນຄວາມຄິດທີ່ດີ ຜູ້ຮັບການຝຶກອົບຮົມສາມາດຮວມເອົາຄວາມຄິດນັ້ນ ແລະສາມາດບອກຂໍ້ມູນເພື່ອເຮັດໃຫ້ຄົນອື່ນກະຕືລືລົ້ນທີ່ຈະຮຽນການເລົ່າເຣື່ອງເຈາະໃຈນຳ ເຂົາເຈົ້າສາມາດທີ່ຈະຮວມເອົາສິ່ງທີ່ເຂົາເຈົ້າຮູ້ກັບຂໍ້ມູນທີ່ພວກເຮົາຈະໃຫ້ແກ່ເຂົາເຈົ້າ ເອົາເຂົ້າໃສ່ກັນໄດ້. ພວກເຮົາກໍຢາກເຫັນສິ່ງນີ້ເກີດຂຶ້ນ.

ສິ່ງທີ່ຄວນລະວັງນັ້ນແມ່ນ... ການຈະເປັນຜູ້ຝຶກອົບຮົມເລົ່າເຣື່ອງເຈາະໃຈແກ່ຄົນອື່ນນັ້ນ ລາວຈະຕ້ອງ...

- ມີຄວາມເຂົ້າໃຈຢ່າງຖ່ອງແທ້ໃນຂະບວນການຂອງການເລົ່າເຣື່ອງເຈາະໃຈທຸກພາກສ່ວນ
- ສາມາດສະແດງແບບຢ່າງການເລົ່າເຣື່ອງເຈາະໃຈຢ່າງຊັດແຈ້ງ
- ຮູ້ເປົ້າໝາຍແລະການໃຊ້ທຸກສ່ວນປະກອບ ທີ່ເປັນການເລົ່າເຣື່ອງເຈາະໃຈ

ບາງທ່ານອາດຈະຕ້ອງຂ້າມຜ່ານ ກາຍເປັນຜູ້ຝຶກອົບຮົມທີ່ມີຄຸນນະວຸດທິໄດ້ຢ່າງໄວ ເພາະລາວຕ້ອງການເຮັດໃຫ້ມັນງ່າຍ ແລະນຳເອົາຂໍ້ມູນໃໝ່ໆ ເຫລົ່ານີ້ໄປຍັງຄົນທີ່ຕ້ອງການ.

ມີບາງເທື່ອ ເຮົາເຫັນຄົນທີ່ໄດ້ຮັບການຝຶກອົບຮົມເລົ່າເຣື່ອງເຈາະໃຈມີຄວາມກະຕືລືລົ້ນ ເປີດການຝຶກອົບຮົມທັງໆທີ່ບໍ່ໄດ້ຮັບອະນຸຍາດຈາກພວກເຮົາ ແທ້ຈິງແລ້ວ ເຂົາເຈົ້າຍັງບໍ່ອາດຈະທຳການຝຶກອົບຮົມເລົ່າເຣື່ອງເຈາະໃຈຢ່າງຄົບຖ້ວນໄດ້ເທື່ອ ເພາະເຂົາເຈົ້າຍັງບໍ່ໄດ້ຮັບການຝຶກອົບຮົມໃຫ້ເປັນຜູ້ສອນການເລົ່າເຣື່ອງເຈາະໃຈຢ່າງເຕັມຂັ້ນ ຈະເຫັນວ່າເປັນຜົນເສັງຫລາຍກວ່າເກີດຜົນດີ ເພາະຄົນທີ່ມາຮັບການຝຶກອົບຮົມເຂົ້າໃຈວ່າລາວຈະໄດ້ຮຽນຮູ້ແບບແຜນການ

ສອນທີ່ມີປະສິດທິພາບ ຊຶ່ງນຳເອົາໄປເຮັດຕໍ່ໄປໄດ້ ແຕ່ລາວກັບໄດ້ຮັບປະສົບການທີ່ບໍ່ເພິ່ງພໍໃຈ ຄົນທີ່ມາຮຽນໄດ້ກັບໄປແລະເໝືອນກັບລາວຖືກຕຽມພຽງເທື່ອດຽວເທົ່ານັ້ນ ຫລາຍໄປກວ່ານັ້ນ ເຂົາເຈົ້າຄິດວ່າຕົນເອງໄດ້ຮຽນຮູ້ການເລົ່າເຣື່ອງເຈາະໃຈຢ່າງຄົບຖ້ວນແລ້ວ ຜົນຂອງການຮຽນແບບນີ້ເຮັດໃຫ້ລາວບໍ່ສົນໃຈຢາກຈະກັບມາຮຽນຮູ້ຢ່າງເລິກເຊິ່ງຂອງການເລົ່າເຣື່ອງເຈາະໃຈອັນແທ້ຈິງອີກ ເພາະລາວເຫັນວ່າການເລົ່າເຣື່ອງເຈາະໃຈບໍ່ເກີດຜົນອັນໃດເລີຍສຳລັບລາວ. ສິ່ງທີ່ໜ້າເສັງໃຈນັ້ນກໍຄື ເຮົາບໍ່ມີໂອກາດສອນລາວຢ່າງຄົບຫລັກສູດໄດ້ອີກ.

ແທ້ຈິງແລ້ວ ການເລົ່າເຣື່ອງເຈາະໃຈບໍ່ແມ່ນສິ່ງທີ່ງ່າຍ ທີ່ເຫັນວ່າພຽງແຕ່ເປັນການເລົ່າເຣື່ອງເທົ່ານັ້ນ ຖ້າຫາກມັນເປັນສິ່ງທີ່ງ່າຍແທ້ການຝຶກອົບຮົມກໍໃຊ້ເວລາພຽງແຕ່ມື້ດຽວກໍຄົງຈະພຽງພໍ ແຕ່ການເລົ່າເຣື່ອງເຈາະໃຈມີຫລາຍສິ່ງຫລາຍຢ່າງທີ່ກ່ຽວຂ້ອງ ທັງໃນການສອນແລະຍຸທວິທີກ່ຽວກັບພັນທະກິດນີ້.

ນອກຈາກນີ້ຍັງມີການປ່ຽນຂະບວນການຄິດວິເຄາະ(ໄຈ້ແຍກ) ວິທີຄິດ ວິທີປະຕິບັດ ແນວທາງດຳເນີນຊີວິດ ທັງໃນລະດັບສ່ວນຕົວແລະການຮັບໃຊ້ ໃນແງ່ທີ່ວ່າຄົນສ່ວນຫລາຍຈະຮຽນຢ່າງໃດ ແລະເຮົາຈະສື່ສານໃຫ້ຂໍ້ມູນພຣະຄັມພີແກ່ຄົນອື່ນຢ່າງມີປະສິດທິພາບທີ່ສຸດຢ່າງໃດ.

ໃນເມື່ອຜູ້ນຳໃນການຝຶກອົບຮົມໄດ້ທຸ້ມເທເວລາ ແລະຝຶກຝົນທີ່ຈະເຮັດໃຫ້ເກີດຄວາມກະຕືລືລົ້ນໃນກຸ່ມຄົນທີ່ເຂົ້າມາຮັບການຝຶກອົບຮົມ ພວກເຮົາຈຶ່ງຂໍໃຫ້ຄົນຜູ້ທີ່ຢາກຈະເປັນຄຣູໄດ້ທຸ້ມເທເວລາແລະຫົວໃຈ ໃນການຝຶກຝົນຕົນເອງເຊັ່ນດຽວກັນ. ຖ້າຫາກບໍ່ໄດ້ຮັບການຝຶກອົບຮົມຢ່າງຖືກຕ້ອງວ່າຈະສອນຄົນອື່ນຢ່າງໃດນັ້ນ ຄົນທີ່ມາຮຽນລຸ້ນຕໍ່ໄປກໍຈະໄດ້ຄວາມຮູ້ບໍ່ພຽງພໍ ເມື່ອລາວມີບັນຫາໃນການເລົ່າເຣື່ອງ ຄວາມຜິດຫວັງກໍເກີດຂຶ້ນເຮັດໃຫ້ລາວເຂົ້າໃຈວ່າການເລົ່າເຣື່ອງເຈາະໃຈບໍ່ເກີດຜົນ ລາວຈຶ່ງບໍ່ເລົ່າເຣື່ອງຕໍ່ໄປອີກ.

37 ຊົ່ວໂມງທຳອິດຂອງການຝຶກອົບຮົມເລົ່າເຣື່ອງເພື່ອຈະຝຶກອົບຮົມຄົນອື່ນຕໍ່ໄປ ບໍ່ໄດ້ລວມຢູ່ໃນວິທີຝຶກພາກປະຕິບັດຂອງການເລົ່າເຣື່ອງເຈາະໃຈ ແຕ່ແມ່ນວິທີປະເມີນເບິ່ງຖານະຂອງຜູ້ເປັນຄຣູຝຶກ ບໍ່ໄດ້ຮວມການຮຽນເຣື່ອງເປົ້າໝາຍ ແລະຫລັກການຂອງການປົກປ້ອງຄວາມເຊື່ອ ໃນການປັບປຸງຂະບວນການວິເຄາະ(ໄຈ້ແຍກ) ໃນການເລົ່າເຣື່ອງເຈາະໃຈ.

ບໍ່ໄດ້ໝາຍຄວາມວ່າ ຜູ້ຮັບການຝຶກອົບຮົມຈະບໍ່ມີໂອກາດໄດ້ເຂົ້າມາມີສ່ວນໃນການສ້າງສາວົກແລະຊ່ອຍຄົນອື່ນໃຫ້ຮຽນຮູ້ພັທະນາຄວາມສາມາດໃນການເລົ່າເຣື່ອງເຈາະໃຈ ແຕ່ຄວາມຈິງ ພວກເຮົາສນັບສນຸນທີ່ຈະສິ່ງຕໍ່ການເລົ່າເຣື່ອງເຈາະໃຈໃນຮູບແບບການສ້າງສາວົກ ຖ້າທ່ານຕ້ອງການຂໍ້ມູນເພີ້ມເຕີມໃນການທະວີຄູນສາວົກ ໃຫ້ເບິ່ງໃນບົດທີ 11 ສະຖານທີ່, ວິທີຮຽນ, ແລະການເຜີຍແຜ່ການເລົ່າເຣື່ອງເຈາະໃຈ.

ຖ້າຫາກທ່ານຕ້ອງການໃຫ້ກຸ່ມຂອງທ່ານໄດ້ຮັບການຝຶກອົບຮົມ ກະຣຸນາຕິດຕໍ່ຫາພວກເຮົາ ເພາະພວກເຮົາຍິນດີເຮັດງານຮ່ວມກັບທ່ານ ແລະພວກເຮົາຈະວາງແຜນເພື່ອເຮັດໃຫ້ທ່ານເປັນຄຣູຝຶກອົບຮົມຊຶ່ງໄດ້ຮັບການຮັບຮອງຈາກພວກເຮົາ ພວກເຮົາມີຄວາມຊ່ຽວຊານໃນການສ້າງຜູ້ນຳຢ່າງຮອບດ້ານ ທຸກຄົນສາມາດເປັນຄຣູຝຶກອົບຮົມຊຶ່ງໄດ້ຮັບການຮັບຮອງໄດ້ ເມື່ອຄົນໃດຄົນນຶ່ງເຂົ້າໃຈເນື້ອຫາການຝຶກອົບຮົມ ສະແດງຄວາມສາມາດໃນການເລົ່າເຣື່ອງເຈາະໃຈ ຮູ້ເຖິງເຫດຜົນແລະເປົ້າໝາຍຂອງການຝຶກອົບຮົມເລົ່າເຣື່ອງເຈາະໃຈທຸກສ່ວນ ສະແດງຄວາມສາມາດໃນການເປັນ

ຜູ້ດູແລແລະສະແດງໃຫ້ເຫັນວ່າສາມາດທຳການຝຶກອົບຮົມໂດຍໃຊ້ແນວທາງການເລົ່າເຣື່ອງເຈາະໃຈ.

- ຮູ້ສ່ວນປະກອບຂອງການຝຶກອົບຮົມ
- ເລົ່າເຣື່ອງຕາມແບບເລົ່າເຣື່ອງເຈາະໄດ້ຢ່າງຄ່ອງແຄ້ວ
- ຮູ້ເຫດຜົນແລະຈຸດປະສົງຂອງແຕ່ລະພາກສ່ວນໃນການຝຶກອົບຮົມເລົ່າເຣື່ອງເຈາະໃຈ
- ສະແດງຄວາມສາມາດໃນການວິຈັຍຂອງການປະເມີນຜົນ
- ສາທິດໃຫ້ຄຣູຝຶກອາວຸໂສເຫັນຄວາມສາມາດການເປັນຜູ້ນຳຝຶກອົບຮົມຕາມແບບຢ່າງການເລົ່າເຣື່ອງເຈາະໃຈ

ຜູ້ອົບຮົມ: ຜູ້ຊ່ອຍຜູ້ອົບຮົມ, ຜູ້ອົບຮົມຊົ່ວຄາວ, ຜູ້ອົບຮົມຊຶ່ງໄດ້ຮັບການຮັບຮອງ ແລະຜູ້ອົບຮົມອາວຸໂສ
ທ່ານຈະໄດ້ຢູ່ໃນຕຳແໜ່ງໃດກໍຕາມ ພວກເຮົາຕ້ອງການໃຫ້ທຸກຄົນມີໃຈແລະຄວາມຄິດດຽວກັນໃນເຣື່ອງຄວາມເຊື່ອ ພວກເຮົາຂໍໃຫ້ຜູ້ທີ່ມຸ້ງຫວັງຈະເປັນຄຣູຝຶກອົບຮົມຕ່ໄປໄດ້ຕົກລົງໃນໜັງສືຂໍ້ເຊື່ອ (TGSP-STS Doctrinal State-ment) ຂອງພວກເຮົາດັ່ງລຸ່ມນີ້;

ຫລັກຂໍ້ເຊື່ອ:

- ພຣະເຈົ້າຊົງເປັນຜູ້ບັນດົນໃຈໃນການຂຽນທັງພຣະສັນຍາເດີມແລະພຣະສັນຍາໃໝ່ ເປັນປຶ້ມເຫຼັ້ມດຽວທີ່ໄດ້ຮັບການຊົງບັນດົນໃຈຈາກພຣະເຈົ້າ.
- ຫລັກຂໍ້ເຊື່ອເຣື່ອງຕຣີເອການຸພາບ
- ມະນຸດຕົກຢູ່ໃນຄວາມບາບ ຄວາມຊົ່ວຊ້າຕ່ຳຊ້ານທາງສິນທັມສິ່ງຜົນຮ້າຍ...ແລະລາວຕ້ອງການບັງເກີດໃໝ່
- ຄວາມເປັນພຣະເຈົ້າແລະເປັນມະນຸດຂອງພຣະເຢຊູຄຣິດ ການບັງເກີດຈາກຍິງພົມມະຈາຣີ ຊີວິດທີ່ປາສຈາກຄວາມບາບ ຕາຍແທນເພື່ອເປັນການໄຖ່ໂທດບາບຂອງມະນຸດ ຊົງຄືນພຣະຊົນ ສະເດັດສູ່ສວັນ ແລະຈະສະເດັດກັບມາອີກ.
- ເຮົາໄດ້ຮັບການປະກາດວ່າເປັນຄົນຊອບທັມເນື່ອງມາຈາກຄວາມເຊື່ອເທົ່ານັ້ນ ໃນອົງພຣະຄຣິດເທົ່ານັ້ນ
- ການຄືນມາມີຊີວິດຂອງຮ່າງກາຍ ທັງຄົນທີ່ຊອບທັມແລະຄົນອະທັມ
- ຊີວິດນິຣັນສຳລັບຜູ້ທີ່ພົ້ນແລ້ວ ແລະການລົງໂທດນິຣັນສຳລັບຜູ້ຫລົງເສັ່ງ(ຜູ້ບໍ່ເຊື່ອ)

Assistant Instructors. **ຜູ້ຊ່ວຍຝຶກອົບຮົມ** ຫລັງຈາກເຂົ້າມາຮັບການຝຶກອົບຮົມ ສ່ວນໃຫຍ່ຈະມີຄຸນນະສົມບັດສາມາດຊ່ອຍກຸ່ມນ້ອຍໆ ໄດ້ ໃນຖານະເປັນຜູ້ຊ່ອຍຄຣູຝຶກອົບຮົມ

Provisional Instructors **ເປັນຜູ້ຝຶກອົບຮົມຊົ່ວຄາວ** ຫລັງຈາກທີ່ໄດ້ເປັນຜູ້ຊ່ອຍໃນການຝຶກອົບຮົມຢ່າງໜ້ອຍສາມວັນ ຜູ້ຊ່ອຍຄຣູຝຶກອົບຮົບທີ່ຕ້ອງການເພີ້ມຄວາມສາມາດໃນການອະທິບາຍຂະບວນການຕຽມເຣື່ອງແລະນຳສເນີ ຕ້ອງສະແດງວ່າມີຄວາມສາມາດໃນການສອນການເລົ່າເຣື່ອງເຈາະໃຈໃຫ້ຄົນອື່ນດ້ວຍນ້ຳໃຈອັນດີ ມີສະຕິປັນຍາ ມີຄວາມອ່ອນໂຍນ ຜູ້ຝຶກອົບຮົມທີ່ມີຄຸນນະວຸດທິອາດຈະອະນຸມັດໃຫ້ຜູ້ທີ່ມີຄຸນນະສົມບັດດັ່ງກ່າວ ໄດ້ເປັນຜູ້ຝຶກອົບຮົມຊົ່ວຄາວ.

Certified Instructors. **ຜູ້ຝຶກອົບຮົມທີ່ໄດ້ຮັບການຮັບຮອງ** ຫລັງຈາກທີ່ໄດ້ຊ່ອຍການຝຶກອົບຮົມສອງສາມເທື່ອ ຜູ້ຝຶກອົບຮົມຊົ່ວຄາວອາດຈະຂໍສມັກເຂົ້າເປັນຜູ້ຝຶກອົບຮົມຊຶ່ງໄດ້ຮັບການຮັບຮອງ ລາວຈະຕ້ອງສະແດງໃຫ້ຜູ້ຝຶກອົບ

ຮົມອາວຸໂສເຫັນວ່າມີຄວາມສາມາດໃນທຸກໆ ສ່ວນຂອງຂະບວນການເລົ່າເຣື່ອງເຈາະໃຈ ແລະມີຄວາມເຂົ້າໃຈໃນແນວຄິດຂອງພວກເຮົາ ຜູ້ອີບຮົມຊຶ່ງໄດ້ຮັບການຮັບຮອງສາມາດທຳໜ້າທີ່ໃນການຝຶກອີບຮົມເລົ່າເຣື່ອງເຈາະໃຈທຸກຕຳແໜ່ງ ຍົກເວັ້ນການອະນຸມັດໃຫ້ຜູ້ອື່ນເປັນຜູ້ຝຶກອີບຮົມທີ່ໄດ້ຮັບການຮັບຮອງ.

Senior Instructors. **ຜູ້ຝຶກອີບຮົມອາວຸໂສ** ການກ້າວມາສູ່ຕຳແໜ່ງນີ້ ຜູ້ຝຶກອີບຮົມທີ່ໄດ້ຮັບການຮັບຮອງຈະຕ້ອງສອນຄູ່ກັນໄປກັບຜູ້ຝຶກອີບຮົມອາວຸໂສ ແລະສະແດງຄວາມສາມາດໃນການສອນ ການປະເມີນ ການໃຫ້ກຳລັງໃຈແກ່ຜູ້ທີ່ເລົ່າເຣື່ອງໃໝ່ໆ ສາມາດຈັດແລະນຳການຝຶກອີບຮົມພາກປະຕິບັດໄດ້. ຜູ້ຝຶກອີບຮົມອາວຸໂສຈະນຳການຝຶກອີບຮົມພາກປະຕິບັດ ແລະຍັງເປັນຜູ້ດຽວທີ່ຈະອະນຸມັດແລະອະນຸຍາດໃຫ້ຜູ້ຝຶກອີບຮົມທີ່ໄດ້ຮັບການຮັບຮອງເລື່ອນຂັ້ນມາເປັນຜູ້ອີບຮົມຊ່ວຄາວຊຶ່ງໄດ້ຮັບການຮັບຮອງຄຣູໃນໂຮງຮຽນພຣະຄັມພີປາກເປົ່າ ເວລານີ້ມີຢູ່ໃນຫລາຍປະເທດ ກໍມາຈາກຜູ້ຝຶກອີບຮົມທ້ອງຖິ່ນທີ່ໄດ້ຮັບການຝຶກອີບຮົມນັ້ນເອງ.

✞

ບົດທີ 11
ສະຖານທີ່ ວິທີຮຽນແລະເຜີຍແຜ່ການເລົ່າເຣື່ອງເຈາະໃຈ

ສະຖານທີ່ສຳລັບເລົ່າເຣື່ອງເຈາະໃຈ

ຂໍໃຫ້ຮວມການເລົ່າເຣື່ອງເຈາະໃຈເຂົ້າໃສ່ກັບການຮັບໃຊ້ທີ່ມີຢູ່ແລ້ວ ບໍ່ວ່າທ່ານຈະຮັບໃຊ້ພຣະເຈົ້າກັບກຸ່ມເດັກນ້ອຍ, ຊາຍໜຸ່ມ, ຜູ້ໃຫຍ່ວັຍໜຸ່ມ, ແລະວັຍອື່ນໆ ການເລົ່າເຣື່ອງເຈາະໃຈຈະຊ່ອຍໃຫ້ການໂອ້ລົມມີຊີວິດຊີວາ ເຮັດໃຫ້ຄົນ ຂອງທ່ານໄດ້ມີສ່ວນໃນການສຶກສາພຣະຄຳຂອງພຣະເຈົ້າ.

ທ່ານອາດຈະເຮັດໃຫ້ເຣື່ອງລາວທີ່ນຳສເນີນັ້ນຍາວຫລືສັ້ນໃຫ້ເໝາະສົມກັບເວລາທີ່ມີຢູ່ໄດ້ ໂດຍການປ່ຽນຈຳນວນ ການຄົ້ນຫາຂຸມຊັບຝ່າຍວິນຍານແລະການນຳໃຊ້ໃນຊີວິດຝ່າຍວິນຍານ ຖ້າຫາກມີເວລາໜ້ອຍກວ່າ 30 ນາທີ ທ່ານ ກໍສາມາດຫຍໍ້ໃສ່ກັບເວລາໄດ້ ດ້ວຍການເອົາຂັ້ນຕອນທີ 2 ຂອງຊ່ວງທຳອິດອອກ ຄືບໍ່ຕ້ອງມີອາສາສມັກເລົ່າເຣື່ອງ ລົ້ມຄືນ ໃຫ້ທ່ານເອງເປັນຄົນເລົ່າເຣື່ອງ ແລະນຳພາກຸ່ມເລົ່າເຣື່ອງໄປນຳກັນ ວິທີການເລົ່າເຣື່ອງກໍຍັງໄດ້ຮັບຜົນດີຢູ່.

ໂອ້ລົມການເລົ່າເຣື່ອງເຈາະໃຈ ເມື່ອມີເວລາໜ້ອຍຫລືໂອກາດເລົ່າເຣື່ອງນັ້ນສັ້ນຫລາຍ ເຮົາກໍອາດຈະເຮັດຢ່າງອື່ນ ທີ່ສ້າງສັນຂຶ້ນມາໄດ້ໃນການຝຶກອົບຮົມ ເມື່ອມີຜູ້ເຂົ້າມາຮັບການຝຶກອົບຮົມເພື່ອເຂົ້າໃຈພື້ນຖານການເລົ່າເຣື່ອງ ເຮົາ ຈະຊ່ອຍຝຶກດັ່ງນີ້...

ເຣື່ອງທີ່ມີຂໍ້ພຣະຄັມພີ 7 ຂໍ້ ສາມາດເລົ່າໄດ້ພາຍໃນ 1 ນາທີ ເລືອກຄົ້ນຫາຂຸມຊັບແລະນຳໃຊ້ໃນຊີວິດປະມານ 2-3 ຢ່າງ ໂດຍໃຊ້ເວລາປະມານ 5-10 ນາທີ. ເລົ່າເຣື່ອງຈົບຈົບ, ເລົ່າລົ້ມຄືນແຕ່ລະຕອນ, ແຕ່ລະເທື່ອໃນການເລົ່າ ເຣື່ອງໃຫ້ຖາມຄຳຖາມຄົ້ນຫາຂຸມຊັບ 2-3 ຢ່າງ. ຕ່ຈາກນັ້ນ, ຫລັງຈາກຜູ້ຟັງຄົ້ນພົບຂຸມຊັບ 2-3 ຢ່າງໃນເຣື່ອງແລ້ວ ກໍຖາມຄຳຖາມນຳໃຊ້ໃນຊີວິດຊຶ່ງໄດ້ມາຈາກຂຸມຊັບທີ່ເຂົາເຈົ້າໄດ້ຄົ້ນພົບນັ້ນ.

ກ່ອນຈະຕັ້ງຄຳຖາມ ໃຫ້ທົບທວນລາຍລະອຽດຂອງເຣື່ອງຕອນທີ່ມີຂຸມຊັບຢູ່ ຕົວຢ່າງເຊັ່ນ ໃນພຣະທັມມາຣະໂກ 1: 40-45 ເຮົາອາດຈະເລົ່າກ່ອນຕັ້ງຄຳຖາມວ່າ, "ມີຕອນນຶ່ງທີ່ວ່າ ພຣະເຢຊູຊົງເມດຕາຊາຍທີ່ເປັນຂີ້ທູດທີ່ຄຸເຂ່ົາລົງຕ່ໜ້າພຣະອົງ ເວົ້າວ່າ 'ຖ້າຫາກທ່ານພໍໃຈ ທ່ານກໍເຮັດໃຫ້ຂ້ານ້ອຍດີສະອາດໄດ້' ພີ່ນ້ອງຍັງຈື່ຈຳໄດ້ບໍ່?" ຕ່ຈາກນັ້ນກໍ ຕັ້ງຄຳຖາມ ນີ້ແມ່ນກຸນແຈທີ່ສຳຄັນຄື ຖາມຫລັງຈາກທີ່ທ່ານໄດ້ໃຫ້ລາຍລະອຽດທີ່ພຽງພໍ ເພື່ອເຮັດໃຫ້ຜູ້ຟັງຄິດເຖິງ ເຣື່ອງນັ້ນໄດ້ ແລະເຂົາເຈົ້າກໍຈະຕອບໄດ້ດີ.

ວິທີໃໝ່ໆ ຂອງສິດຍາພິບານ ສິດຍາພິບານທີ່ຢູ່ໃນກຸ່ມທີ່ພວກເຮົາຝຶກອົບຮົມມາໄດ້ດົນແລ້ວ ມັກລັງເລໃຈບໍ່ຢາກໃຊ ້ການເລົ່າເຣື່ອງເຈາະໃຈທີ່ທັມມາດ ການຕັ້ງຄຳຖາມໃນການເທສນາແມ່ນສິ່ງທີ່ບໍ່ຄ່ອຍໄດ້ເຮັດເທົ່າໃດ ການເລົ່າເຣື່ອງ ແທນການອ່ານກໍເຊັ່ນດຽວກັນ ສິດຍາພິບານທີ່ເຂົ້າມາຮັບການຝຶກອົບຮົມຈຶ່ງມີທາງອອກ;

1. ຫລາຍທ່ານລາຍງານວ່າ ໄດ້ໃຊ້ການເລົ່າເຣື່ອງເຈາະໃຈໃນການປະຊຸມກຸ່ມເດັກນ້ອຍແລະຊາວໜຸ່ມ ແລະໄດ້ຮັບ ຕອບສນອງດີ ຫລັງຈາກນັ້ນພໍ່ແມ່ໄດ້ຖາມວ່າ, "ເປັນຫຍັງອາຈານຈຶ່ງບໍ່ສອນພວກເຮົາໃນແບບດຽວກັນນີ້?"

2. ບາງທ່ານໃຊ້ການເລົ່າເຣື່ອງເຈາະໃຈໂດຍອ່ານເຣື່ອງຈາກພຣະຄັມພີໂດຍຕົງ ແຕ່ອ່ານແບບມີຣົດຊາດ ມີອາລົມ ປະກອບໄປດ້ວຍການທີ່ເອີ້ນວ່າອ່ານແບບ "ເລົ່າເຣື່ອງ" ຫລັງຈາກນັ້ນກໍຕັ້ງຄຳຖາມການຄົ້ນຫາຊຸມຊັບ ແລະ ການນຳໃຊ້ໃນຊີວິດ ບາງຄົນກໍໜູນໃຈໃຫ້ຜູ້ຟັງຕອບຄຳຖາມດ້ວຍການອອກສຽງດັງ ບາງທ່ານກໍຖາມຄຳຖາມ ແບບໃຊ້ຄຳເວົ້າທີ່ທ້າທາຍໜ້ອຍນຶ່ງ ເພື່ອໃຫ້ຜູ້ຟັງໄດ້ມີເວລາຄິດທັງຖາມແລະຕອບ ສິ່ງນີ້ເຫັນວ່າສຳຄັນຫລາຍ ເພາະສິດຍາພິບານຕ້ອງໃຫ້ເວລາກັບທຸກຄົນຫລາຍພຽງພໍ ເພື່ອເຂົາເຈົ້າຈະຄິດຫາຄຳຕອບໄດ້.
3. ໃນບາງກໍຣະນີ "ວິທີເຂົ້າເຖິງຄົນທີ່ອ່ານບໍ່ໄດ້ ຊຶ່ງຢູ່ຫ່າງໄກ" ວິທີທາງບວກໃນການນຳສເນີພຣະຄັມພີໃຫ້ແກ່ຄົນ ອື່ນນັ້ນ ຊ່ວຍໃຫ້ເຮົາມີໂອກາດໃຊ້ເວລາເລົ່າເຣື່ອງເຈາະໃຈໃນພຣະຄັມພີໄດ້.
4. ບາງທ່ານສເນີການເລົ່າເຣື່ອງເຈາະໃຈໃຫ້ແກ່ຜູ້ດູແລໂຮງຮຽນວັນອາທິດ ບາງທ່ານໃຊ້ໃນການປະຊຸມຕາມບ້ານ
5. ບາງທ່ານໃຊ້ໃນຫ້ອງຮຽນຜູ້ເຊື່ອໃໝ່

ການເລົ່າເຣື່ອງເຈາະໃຈທີ່ບໍ່ມີການຕອບສນອງ

1. ຫາກເປັນກຸ່ມທີ່ໃຫຍ່ຫລາຍ ແລະບໍ່ສາມາດໃຫ້ຄົນຕອບອອກສຽງໄດ້ ກໍຕ້ອງໝູນໃຊ້ວິທີການ ຂະບວນການເລົ່າ ເຣື່ອງເຈາະໃຈ ຍົກເວັ້ນຕອນທີ່ຂໍໃຫ້ອາສາສມັກເລົ່າເຣື່ອງລົ້ມຄົນ ສາມາດໃຫ້ອາສາສມັກໄດ້ພຽງແຕ່ຄົນດຽວ ໂດຍຜູ້ເລົ່າເຣື່ອງບໍ່ຕ້ອງຄາດຫວັງເອົາຄຳຕອບທີ່ຖືກ ຕັ້ງຄຳຖາມໃຫ້ມີວາທະສິລປ໌ໜ້ອຍນຶ່ງ ແລະໝັ້ນໃຈວ່າຜູ້ ຟັງມີເວລາຄິດພຽງພໍທີ່ຈະຕອບຄຳຖາມ

2. ເຣື່ອງເຈາະໃຈສາມາດເອົາອອກລາຍການວິທະຍຸໂທຣະທັດໄດ້ ແຕ່ຈະບໍ່ມີການເລົ່າເຣື່ອງລົ້ມຄົນ ແຕ່ຂັ້ນຕອນ ອື່ນໆ ຍັງຄົງໃຊ້ໄດ້ຢູ່ ຄືຫລັງຈາກຖາມແຕ່ລະຄຳຖາມໃນຊ່ວງເວລາທີ່ງຽບຢູ່ນັ້ນໃຫ້ໃຊ້ຄຳເວົ້າໂອ້ລົມໄປນຳ ເວົ້າ ໄປເລື້ອຍໆ ໂດຍທີ່ບໍ່ຕ້ອງການຄຳຕອບແຕ່ຢ່າງໃດ ເພາະໃນຕອນນັ້ນຄົນກຳລັງຟັງທ່ານຢູ່ ເຂົາເຈົ້າກໍບໍ່ຄິດທີ່ ຈະຕອບຄຳຖາມຂອງທ່ານ ຍົກຕົວຢ່າງເຊັ່ນ ຖ້າທ່ານຫາກເວົ້າວ່າ, "ທ່ານຄິດແນວໃດເນາະ?" "ທ່ານຄິດວ່າ ຈະມີຫຍັງເກີດຂຶ້ນຕໍ່ຈາກເຫດການນີ້?" ດັ່ງນີ້ເປັນຕົ້ນ...

ເຣື່ອງມາຫາແລະມາຣີອາ ທີ່ໃຊ້ໃນການເລົ່າເຣື່ອງເຈາະໃຈ ຊຶ່ງເປັນຕົວຢ່າງຖາມອອກໄປໂດຍບໍ່ຕ້ອງການຄຳຕອບ

3. ຖ້າທ່ານເລົ່າເຣື່ອງເຈາະໃຈໄດ້ເກັ່ງແລ້ວ ມີສາມສີ່ຄົນມາລວມໃນລາຍການ ຈະເຮັດໃຫ້ລາຍການນີ້ມ່ວນເພີ້ມຂຶ້ນ ຄົນທຳອິດທີ່ໃຊ້ວິທີນີ້ຢູ່ໃນປະເທດຟິລິບປິນ ຫລັງຈາກທີ່ອອກອາກາດໄດ້ສອງສາມເດືອນ ທາງສະຖານີໄດ້ຮັບ ເທັກປະມານຫລາຍກ່ວາ 650 ເທື່ອ ລວມທັງໂທຣະສັບໂທມາໃນລາຍການ ແລະຮູບແບບອື່ນໆ ທີ່ໃຊ້ເທັກນິກໃນ ການເລົ່າເຣື່ອງເຈາະໃຈ ກໍໃຊ້ໄດ້ຢ່າງເກີດຜົນໃນຫລາຍໆ ປະເທດ.

ລະຄອນ: ຄວາມສນຸກ ແລະ ພລັງ

ເຮົາມັກເບິ່ງລະຄອນເພາະເຫັນວ່າມັນມ່ວນດີ ເຮັດໃຫ້ເຣື່ອງເບິ່ງເປັນຈິງຫລາຍຂຶ້ນ ເຮົາອາດໃຊ້ການຫຼິ້ນລະຄອນ ເປັນວິທີເລົ່າເຣື່ອງກໍໄດ້. ຂໍໃຫ້ຜູ້ຮ່ວມສະແດງອອກທ່າທາງແບບງ່ງ ໆ ເຮັດໄປຕາມຜູ້ທີ່ເລົ່າ ຜູ້ຮ່ວມສະແດງກໍອອກ ທ່າທາງໄປເລື້ອຍໆ ຕາມເຣື່ອງ ຜູ້ຊົມຈະໄດ້ຍິນແຕ່ສຽງຄົນທີ່ເລົ່າພຽງຄົນດຽວ ແລະເຂົາເຈົ້າສາມາດນຳເອົາເຣື່ອງ

ກັບເມືອບ້ານເພື່ອເລົ່າໃຫ້ຄົນອື່ນຟັງໄດ້ອີກດ້ວຍ.

ການສະແດງລະຄອນແບບນີ້ເອີ້ນວ່າລະຄອນກີກ ຄືຜູ້ສະແດງຈະບໍ່ປາກບໍ່ເວົ້າອອກສຽງ ແຕ່ຈະອອກທ່າທາງໄປຕາມຜູ້ເລົ່າເຣື່ອງ ມີແຕ່ຜູ້ເລົ່າເຣື່ອງອອກສຽງຄົນດຽວ ເຮັດໃຫ້ຜູ້ເບິ່ງມ່ວນຊື່ນສນຸກເພີດເພີນດີ ແລະເຮັດໃຫ້ເຣື່ອງມີພລັງ

ໂຄງການເຣື່ອງຂອງພຣະເຈົ້າ ມີວິທີທີ່ຈະຊ່ວຍໃຫ້ຮຽນແລະຂຍາຍການເລົ່າເຣື່ອງເຈາະໃຈອອກໄປ ລວມທັງມີເຄື່ອງມືໃນການຊ່ວຍສອນອີກນໍາ.

1. **ຄູ່ມືການເລົ່າເຣື່ອງເຈາະໃຈ** ມີທັງແບບຟັງແລະອ່ານ ເປັນລາຍລະອຽດຂອງຂະບວນການເລົ່າເຣື່ອງເຈາະໃຈ

2. Vision Casting. **ການສເນີເພື່ອໃຫ້ເຫັນຕົວຢ່າງ** ຫາກທີ່ໃດພວກເຮົາມີຄົນສອນເລົ່າເຣື່ອງເຈາະໃຈ ພວກເຮົາກໍຈະໃຫ້ມີການຝຶກອົບຮົມນຶ່ງມື້ ຫລືໃຊ້ເວລາໜ້ອຍກວ່ານັ້ນໂດຍຈະນໍາສເນີການເລົ່າເຣື່ອງເຈາະໃຈ ອະທິບາຍຕົວຢ່າງແລະຜົນທີ່ຈະໄດ້ຮັບຈາກການເລົ່າເຣື່ອງເຈາະໃຈດ້ວຍວິທີນີ້ ຖ້າຫາກໃຊ້ເວລານໍາສເນີແນວຄິດ 4 ຊົ່ວໂມງຫລືດົນກວ່ານັ້ນ ກໍຈະໃຫ້ມີການປະຕິບັດຕົວຈິງນໍາ.

3. **ຝຶກອົບຮົມພາກປະຕິບັດສາມມື້** ແມ່ນການສະແດງວິທີການ ກັບການອະທິບາຍຫລັກການເລົ່າເຣື່ອງເຈາະໃຈ ລວມທັງໃຫ້ຜູ້ເຂົ້າຮ່ວມຝຶກອົບຮົມໄດ້ຮັບການຝຶກການເລົ່າເຣື່ອງ ຊຶ່ງເຫັນວ່າຫລາຍຄົນທີ່ໄດ້ເຂົ້າຮ່ວມໃນການຝຶກອົບຮົມໃນຊ່ວງສາມມື້ນັ້ນຈະມີຄວາມສາມາດພຽງພໍທີ່ຈະເປັນຜູ້ເລົ່າເຣື່ອງທີ່ດີໄດ້.

4. **ການຝຶກອົບຮົມພາກປະຕິບັດຈິງ one stop** ພວກເຮົາມີການຝຶກອົບຮົມພາກປະຕິບັດຈິງແບບນີ້ ເພາະວ່າຈະໄດ້ຊ່ວຍສ້າງຄຣູສອນເລົ່າເຣື່ອງເຈາະໃຈເພື່ອຈະຊ່ວຍຝຶກອົບຮົມຄົນອື່ນຕໍ່ໄປໄດ້ ການຝຶກອົບຮົມນີ້ເປັນທາງເລືອກທີ່ດີ ເມື່ອກຸ່ມຜູ້ຝຶກການອົບຮົມມາຈາກທາງໄກ ແລະຜູ້ເຂົ້າຮ່ວມຮັບການຝຶກອົບຮົມກໍມາຈາກທາງໄກ.

   ຣະຫວ່າງ 18 ຊົ່ວໂມງທໍາອິດ ກໍຈະເປັນການສອນກຸ່ມນ້ອຍ ຜູ້ສອນ 1 ຄົນຕໍ່ຜູ້ຮຽນ 3 ຄົນ ຫລັງຈາກໄດ້ 18 ຊົ່ວໂມງແລ້ວ ກໍຈະມີການຝຶກຢ່າງເຂັ້ມງວດ ຜູ້ທີ່ເຂົ້າຮ່ວມໃນການຝຶກອົບຮົມບາງຄົນກໍຈະຄ່ອຍໆ ກ້າວຂຶ້ນມາເປັນຜູ້ສອນຊ່ວຍໄດ້

   ຄຣູຊ່ວຍ ຈະຊ່ວຍຝຶກອົບຮົມກຸ່ມໃຫຍ່ອີກ ທີ່ເຂົ້າມາຮຽນຕໍ່ 19 ຊົ່ວໂມງ ຊຶ່ງມີສັດສ່ວນຂອງຄຣູຊ່ວຍນຶ່ງຄົນຕໍ່ຜູ້ທີ່ເຂົ້າມາຝຶກອົບຮົມ 5 ຄົນ ຫລັງຈາກຮຽນໄດ້ທັງໝົດ 37 ຊົ່ວໂມງແລ້ວກໍລວມເປັນເວລາທັງໝົດ 5 ວັນ ຄຣູຊ່ວຍກໍຈະເລື່ອນຊັ້ນຂຶ້ນເປັນຄຣູຝຶກສອນ ແລະເມື່ອໄດ້ປະຕິບັດການຝຶກສອນຕໍ່ໄປລວມທັງມີປະສົບການໃນການເປັນຜູ້ນໍາ ລາວອາດຈະໄດ້ຮັບການເລື່ອນຊັ້ນເປັນຄຣູຝຶກອົບຮົມທີ່ໄດ້ຮັບການຮັບຮອງ

5. **ການຝຶກອົບຮົມພາກປະຕິດບັດຈິງເພື່ອເພີ້ມພູນຄຣິສຕະຈັກ** ການໃຊ້ວັນທ້າຍອາທິດຕໍ່ເນື່ອງກັນ (ວັນສຸກ ວັນເສົາແລະ ວັນທິດ) ໂດຍຝຶກອົບຮົມຕິດຕໍ່ກັນ 4 ອາທິດ 14 ຊົ່ວໂມງຕໍ່ອາທິດ ສະມາຊິກໃນຄຣິສຕະຈັກທີ່ບໍ່ໃຫຍ່ຫລາຍ ສາມາດກາຍມາເປັນຄຣູຝຶກເລົ່າເຣື່ອງເຈາະໃຈທີ່ມີຄວາມສາມາດໄດ້.

ຈາກຫ້າຫາເຈັດອາທິດ ທຸກຄົນໃນຄຣິສຕະຈັກໃຫຍ່ຊຶ່ງອາດຈະມີສະມາຊິກເຖິງ 50,000 ຄົນ ຈະໄດ້ຮັບການຝຶກອົບຮົມ ແລະຍັງຈະມີກຸ່ມຄົນທີ່ເປັນແກນກາງທີ່ໄດ້ຮັບການຝຶກອົບຮົມເຖິງຂັ້ນເປັນຜູ້ຝຶກອົບຮົມທີ່ໄດ້ຮັບການຮັບຮອງ ໜ້າປລາດໃຈໃນການຝຶກອົບຮົມແບບເພີ້ມພູນນີ້ ຄົນສ່ວນຫລາຍທີ່ເຂົ້າມາຮ່ວມ ເຂົາເຈົ້າຈະເຂົ້າຮ່ວມໃນຊ່ວງທ້າຍອາທິດ ນຶ່ງຫລືສອງອາທິດກໍຈະໄດ້ຈຳນວນຊົ່ວໂມງຕາມທີ່ຕ້ອງການ.

6. **ຝຶກອົບຮົມພາກປະຕິບັດຕົວຈິງເລົ່າເຣື່ອງເຈາະໃຈຢູ່ທີ່ເຮືອນ** ຄຣູຝຶກລະດັບທີ່ໄດ້ຮັບການຮັບຮອງ ເຊີນເພື່ອນຜູ້ທີ່ເຊື່ອສາມຄົນມາຮັບການຝຶກອົບຮົມຢູ່ທີ່ເຮືອນ ອາທິດລະສອງຊົ່ວໂມງເຄິ່ງ ລວມທັງໝົດຫົກອາທິດ ໂດຍໃຊ້ເວລາແລງ ກາງຄືນ ຫລືທ້າຍອາທິດ ວິທີການຝຶກອົບຮົມແບບນີ້ຊ່ອຍໃຫ້ຄົນທີ່ບໍ່ສາມາດເດີນທາງໄປອົບຮົມນຶ່ງມື້ ຫລືດົນກວ່ານັ້ນໄດ້ ເພື່ອໃຫ້ເຂົາເຈົ້າໄດ້ມີໂອກາດຮັບການຝຶກອົບຮົມ ຫລາຍກວ່ານັ້ນອີກທີ່ເຮືອນຍັງໄດ້ໃຫ້ຄວາມສະດວກສະບາຍບໍ່ມີຄວາມຮູ້ສຶກກົດດັນໂດຍສະເພາະແມ່ນຄົນມັກອາຍ ພວກເຮົາອາດຈະແນະ**ນ**ຳແນວທາງໃຫ້ ຊຶ່ງລວມທັງເອກສານແລະຣະບົບການຝຶກອົບຮົມໃຫ້ຫລັງຈາກໄດ້ 6 ເທື່ອແລ້ວ ຄຣູຝຶກຈະຝຶກອົບຮົມສາມຄົນນີ້ເພື່ອເປັນຜູ້ເລົ່າເຣື່ອງ ທັງສາມຄົນນີ້ຈະໄດ້ໄປຮັບການຝຶກອົບຮົມເພີ້ມເຕີມຂັ້ນທີສອງອີກ 6 ອາທິດ ໂດຍທີ່ເຂົາເຈົ້າທັງສາມຄົນນີ້ເຊີນເພື່ອນມາຝຶກອົບຮົມອີກຜູ້ລະສາມຄົນ.

ເມື່ອເຮົາຝຶກອົບຮົມຫ້າວັນແລະນຳເຣື່ອງເພີ້ມພູນຄຣິສຕະຈັກ ໃນທີ່ສຸດຜູ້ຝຶກອົບຮົມກໍຈະນຳຜູ້ຄົນທີ່ໄດ້ຮັບການຝຶກອົບຮົມໃໝ່ເຂົ້າສູ່ການເປັນຜູ້ນຳ ຕອນສຸດທ້າຍຂອງການຮຽນຮອບສອງເປັນເວລາ 6 ອາທິດ ສາມຄົນທຳອິດຈະກໍໄດ້ຊ່ອຍສາມຄົນຕໍ່ມາ ເຂົາເຈົ້າໄດ້ເພີ້ມເຕີມຄວາມສາມາດເລົ່າເຣື່ອງເຈາະໃຈ ແລະໄດ້ມີໂອກາດເປັນຜູ້ຊ່ອຍສອນ. ເຂົາເຈົ້າອາດຈະຊ່ອຍຝຶກອົບຮົມກັນແລະກັນຕໍ່ໄປ ຫລືຕັດສິນໃຈທີ່ຈະຮ່ວມກັນສຶກສາພຣະຄຳຂອງພຣະເຈົ້າ ຊຶ່ງຕອນນີ້ອາດຈະກາຍເປັນກຸ່ມສຶກສາພຣະຄັມພີຕາມບ້ານ.

ຖ້າຫາກທັງ 12 ຄົນຍັງຄົງເຊີນຕໍ່ໄປອີກ ແຕ່ລະຄົນເຊີນອີກ 3 ຄົນເຂົ້າມາຝຶກອົບຮົມຄັ້ງທີ 3 ເປັນເວລາຫົກອາທິດ ກຸ່ມນີ້ກໍຈະລວມເປັນ 36 ຄົນ ລວມກັບຄຣູຜູ້ສອນຄົນທຳອິດ ເຮືອນສ່ວນຫລາຍຈະຮັບຄົນປະມານຈຳນວນນີ້ໄດ້ ເພາະສ່ວນຫລາຍເຮົາເຮັດເປັນກຸ່ມນ້ອຍ ກຸ່ມຮຽນທີ່ມີສີ່ຄົນອາດຈະແຍກອອກໄປຢູ່ບ່ອນອື່ນ ຫລືໂອ້ລົມກັນຢູ່ກ້ອງຕົ້ນໄມ້ກໍໄດ້. ຄົນເຫລົ່ານີ້ສາມາດຂຍາຍຈຳນວນໂດຍສ້າງຄຣູຝຶກເພີ້ມຂຶ້ນ ເຂົາເຈົ້າອາດຈະຕັ້ງກຸ່ມແຊລຢູ່ທີ່ເຮືອນໃຊ້ການເລົ່າເຣື່ອງພຣະຄັມພີເພື່ອເປັນການປະກາດ ຫລືໃຊ້ວິທີການສຶກສາພຣະຄັມພີແບບເລົ່າເຣື່ອງເຈາະໃຈເພື່ອເຂົ້າໃກ້ຊິດພຣະເຈົ້າ ເຫັນວ່າວິທີການຕ່າງໆ ນີ້ດີຫລາຍ ເພາະຄວາມສາມາດໃນການເລົ່າເຣື່ອງເຈາະໃຈຈະຊ່ອຍໃຫ້ຄົນຮຽນພຣະຄັມພີໄດ້ດີ ແລະແບ່ງປັນກໍໄດ້ດີອີກດ້ວຍ ທັງຕົນເອງແລະຄົນຟັງເຣື່ອງກໍໄດ້ຮັບການປ່ຽນແປງຊີວິດເປັນການຖວາຍກຽດແດ່ພຣະເຈົ້າ.

ຖ້າຄົນສ່ວນຫລາຍຫາກໄດ້ຮັບການຝຶກອົບຮົມ ແລະໄດ້ອົບຮົມຕໍ່ໄປພາຍໃນສອງປີ ກໍຈະເຂົ້າເຖິງຄົນຈຳນວນ 6,000 ຄົນ ນີ້ແມ່ນວິທີການໃຫ້ຄຳປຶກສາແລະການສ້າງສາວົກທີ່ເປັນທັມມະຊາດຫລາຍ ການເລົ່າເຣື່ອງເຈາະໃຈນີ້ແນໃສ່ການຟັງພຣະຄຳຂອງພຣະເຈົ້າກັບການນຳມາໃຊ້ໃນຊີວິດເປັນການສ່ວນຕົວ ຈຶ່ງເຮັດໃຫ້ເກີດຜົນຢ່າງຫລວງຫລາຍ.

7. **ການສ້າງສາວົກ-ການທະວີຄູນ** ຄົນທີ່ຈົບຈາກການຝຶກອົບຮົມເລົ່າເຣື່ອງເຈາະໃຈ ໃນຖານະເປັນຄຣູຝຶກການເລົ່າເຣື່ອງສາມາດໃຊ້ຄວາມສາມາດໃໝ່ນີ້ກັບຄົນອື່ນນຶ່ງຕໍ່ນຶ່ງຫລືເປັນກຸ່ມກໍໄດ້. ອຸປກອນແລະຫລັກສູດເຊັ່ນຄຳແນະນຳສັບລັບຜູ້ຝຶກອົບຮົມ ຈະບອກເຖິງວິທີສ້າງຄວາມສາມາດໃນຂະນະທີ່ເລົ່າເຣື່ອງ ສິ່ງສຳຄັນນັ້ນແມ່ນ ຂໍ້ມູນເຫລົ່ານີ້ຊ່ວຍໃຫ້ທ່ານໄດ້ສອນຄົນທີ່ຟັງເທື່ອລະນ້ອຍ ວ່າຈະເຮັດຢ່າງໃດໃນຂະນະທີ່ທ່ານກຳລັງເລົ່າເຣື່ອງຢູ່ (ເບິ່ງໃນເວັບໄຊ "Training Info" ແລະ Resources" ທ່ານຈະເຫັນທາງເລືອກຫລາຍໆ ຢ່າງ)

8. **ແຜ່ນພັບສາມຕອນ** ມີຄຳພຍານແລະວິທີແບ່ງປັນການເລົ່າເຣື່ອງເຈາະໃຈໃນແຜ່ນພັບນັ້ນ ແລະຍັງມີແຜ່ນພັບຊ່ວຍອະທິບາຍເຣື່ອງສະເພາະທີ່ທ່ານສົນໃຈ ເພື່ອຈະໄດ້ຮັບປໂຍດຈາກການເລົ່າເຣື່ອງເຈາະໃຈໃຫ້ຫລາຍທີ່ສຸດ

9. **ການຝຶກອົບຮົມຜູ້ເລົ່າເຣື່ອງດ້ວຍເຄື່ອງສຽງ** ເປັນການຕຽມສອນແບບເລິກ ໄດ້ແນະນຳການສົນທະນາເປັນກຸ່ມ ແຕ່ລະກຸ່ມຈະໃຊ້ເວລາ 2-6 ຊົ່ວໂມງເພື່ອໂອ້ລົມສົນທະນາແລະຄົ້ນຫາຊຸມຊັບ ຊຶ່ງມີຢູ່ຫລາຍພາສາເປັນ ເອັມພີ 3, ຊີດີ, ເຄື່ອງຟັງສຽງພລັງແສງຕາເວັນ.

10. ການຄົ້ນພົບພຣະຄັມພີແບບຕອບໂຕ້ ເຣື່ອງຢູ່ໃນພຣະຄັມພີພ້ອມກັບຄຳຖາມສຳລັບກຸ່ມ ໃຊ້ໃນໂຮງຮຽນ ຫ້ອງຮຽນ ແລະກຸ່ມແຊລຕາມບ້ານ ໃຊ້ເວລາປະມານ 60-90 ນາທີ ເປັນດີວີດີ ແລະເຄື່ອງສຽງຫລາຍພາສາ.

11. ອຸປກອນທາງອິນເຕີແນັດ ມີຂໍ້ມູນກ່ຽວກັບການເລົ່າເຣື່ອງເຈາະໃຈທັງເປັນເອກສານ ທາງສຽງແລະທາງຮູບພາບ ໃຫ້ເບິ່ງລາຍລະອຽດການເລົ່າເຣື່ອງເຈາະໃຈ, ການເລີ້ມຕົ້ນ, ຄຳຖາມທີ່ມັກຖາມ, ຄຳພຍານ, ຕາຕະລາງເວລາທີ່ຈະເກີດຂຶ້ນ ໂຮງຮຽນພຣະຄັມພີປາກເປົ່າ ຕົວຢ່າງເຣື່ອງແລະອື່ນໆ ໃຊ້ວີດີໂອສາມນາທີ ເຣື່ອງ "ແມ່ນຫຍັງແລະເປັນຫຍັງ" ໃນຄຣິສຕະຈັກ ເພື່ອຈະເຂົ້າໃຈການຝຶກອົບຮົມເລົ່າເຣື່ອງເຈາະໃຈແບບຜູ້ສອນເດີນທາງມາຝຶກອົບຮົມໃນເວລາລະຍະສັ້ນ ພວກເຮົາໄດ້ເພີ້ມເຕີມຂໍ້ມູນໃນເວັບໄຊຢ່າງຕໍ່ເນື່ອງ

12. ການຝຶກອົບຮົມຈິງແບບໄລຟ໌ ແລະການແນະນຳໃຫ້ຄຳປຶກສາ ໂດຍຜ່ານທາງສະໄກພ໌ ການຝຶກແບບໃຊ້ແຜ່ນເຈ້ັ້ງແຂງໃຫຍ່

13. ຄູ່ມືທາງສຽງ ຍັງມີຄູ່ມືທີ່ເປັນສຽງອີກ ໃຫ້ເບິ່ງ ດີວີດີ ຫົວຂໍ້ STS Training

14. ໃຊ້ທະວິດເຕີ ເພື່ອຕິດຕາມພວກເຮົາ http://www.twitter.com/SimplyTheStory

15. ການເປັນເຈົ້າພາບ ຖ້າທ່ານຮູ້ວ່າຈະເປັນເຈົ້າພາບຝຶກອົບຮົມພາກປະຕິບັດຈິງໄດ້ຢ່າງໃດ ກະຣຸນາຕິດຕໍ່ຜູ້ອຳນວຍການໃນປະເທດຂອງທ່ານ ພວກເຮົາຂຽນລາຍຊື່ໄວ້ທາງຫລັງປຶ້ມນີ້ ຫລືເບິ່ງທີ່ເວັບໄຊຄ□າວ່າ "hosting" ເພື່ອທ່ານຈະໄດ້ລາຍລະອຽດ.

✞

Appendix A: ພາກເພີ່ມເຕີມ ກ.
Coaching Review Forms ແບບຟອມການທົບທວນສຳລັບຄຣູຝຶກ

ຜູ້ເລົ່າ:_____ ຜູ້ສອນ:_____ ວັນທີ:_____
Storyteller Instructor Date

ລາຍລະອຽດຂອງຂະບວນການເລົ່າເຣື່ອງຢູ່ໃນປຶ້ມຄູ່ມື ໃຫ້ເຕືອນຄວາມຈຳຂອງຜູ້ເລົ່າເຣື່ອງວ່າ ຂ້າພະເຈົ້າຈະຝຶກ ອົບຮົມທ່ານຫລັງຈາກນີ້ ກ່ອນເລົ່າເຣື່ອງຂໍໃຫ້ຈື່ໄວ້ວ່າ ບໍ່ວ່າຜູ້ທີ່ຟັງທ່ານຈະເກັ່ງຊ໋ຳໃດທ່ານຕ້ອງຄິດຢູ່ໃນໃຈສເມີວ່າ ເຂົາເຈົ້າເປັນຜູ້ທີ່ຮຽນດ້ວຍວິທີຟັງຈາກການເລົ່າປາກເປົ່າ ແລະເຂົາເຈົ້າຈະຮູ້ສະເພາະເນື້ອຫາທີ່ທ່ານນຳສເນີເທົ່ານັ້ນ
ເຕືອນຄວາມຈຳໃຫ້ແກ່ຄຣູຝຶກອົບຮົມ, ຜູ້ເລົ່າເຣື່ອງຈະຕ້ອງ...

1. ໃນຄຳນຳຂອງເຣື່ອງ ບໍ່ໃຊ້ຂໍ້ມູນທີ່ນອກເໜືອໄປຈາກພຣະຄັມພີ (ຕ້ອງຢູ່ໃນພຣະຄັມພີ)
2. ຖ້າຈ□າເປັນກຳໃຫ້ເລົ່າເຣື່ອງເພື່ອ "ປູທາງ" ກ່ອນເລົ່າເນື້ອເຣື່ອງຈິງ (ຄຳນຳ)
3. ຮັກສາຄວາມຖືກຕ້ອງຂອງພຣະຄັມພີ ບໍ່ເພີ້ມເຕີມ ບໍ່ຕັດ ຂໍ້ມູນໃນເຣື່ອງອອກ
4. ຢູ່ໃນພຣະຄັມພີຕອນດຽວ ບໍ່ເອົາຕອນອື່ນໆ ທີ່ຄ້າຍຄືກັນມາປະສົມປົນເປກັນ
5. ໃຫ້ກຳລັງໃຈແລະໃຫ້ຄຳຕອບທີ່ດີໆ ແກ່ຜູ້ຟັງທີ່ອາສາສມັກເລົ່າເຣື່ອງລົ້ມຄືນ ຫລືຜູ້ທີ່ຕອບຄຳຖາມ
6. ມີຄວາມອະລຸ້ມອະລ່ວຍ ຜ່ອນສັ້ນຜ່ອນຍາວ ໃນການຕອບຄຳຖາມ
7. ນຳການເລົ່າເຣື່ອງຈົນຈົບໃຫ້ເປັນທີ່ໜ້າສົນໃຈ ເດີນເຣື່ອງໄວ ໃຊ້ວິທີການທີ່ຈະໃຫ້ຜູ້ຟັງເຂົ້າມາມີສ່ວນຮ່ວມ
8. ໃຊ້ຄຳຖາມເພື່ອນຳໄປສູ່ການສັງເກດສິ່ງຕ່າງໆ ໃນເຣື່ອງ ເພື່ອໃຫ້ຜູ້ຮຽນວິທີປາກເປົ່າສາມາດຕອບໄດ້
9. ໃຊ້ຄຳຖາມເພື່ອໃຫ້ຜູ້ຮຽນສາມາດຫາຄຳຕອບເພື່ອນຳມາໃຊ້ໃນຊີວິດຝ່າຍວິນຍານໄດ້
10. ບໍ່ສອນ ບໍ່ເທດ ຫລືບໍ່ອະທິບາຍເພີ້ມໃດໆ
11. ບໍ່ໃຊ້ເຣື່ອງເປັນຕົວນຳພາໄປສູ່ເຣື່ອງທີ່ຕົນມັກເປັນສ່ວນຕົວ ແຕ່ໃຫ້ເຊື່ອໃນຣິດເດດຂອງພຣະເຈົ້າໃນການສື່ສານ ພຣະຄຳ ແລະຍອມໃຫ້ເຣື່ອງນັ້ນເລົ່າຂ່າວສານໃຫ້ແກ່ຜູ້ຟັງເອງ
12. ສາມາດອະທິບາຍ ແລະສະແດງສ່ວນປະກອບ 5 ຢ່າງຂອງການນຳສເນີແບບການເລົ່າເຣື່ອງເຈາະໃຈ

ການໃຫ້ຄະແນນຂ້າງລຸ່ມສະທ້ອນໃຫ້ເຫັນວ່າ ຜູ້ເລົ່າເຣື່ອງສາມາດນຳສເນີສ່ວນປະກອບທັງຫ້າຢ່າງຂອງການເລົ່າ ເຈາະໃຈໄດ້ຫລືບໍ່ ສ່ວນບ່ອນທີ່ເວັ້ນໄວ້ນັ້ນ ຫລືບໍ່ໄດ້ສະແດງອອກມາຈະໃຊ້ຄຳວ່າ nty(not there yet) ຄືຍັງບໍ່ໄດ້ ເຮັດເທື່ອ Gi(Got it) ຄືເຮັດໄດ້ແລ້ວ.

ຄຳຄິດເຫັນຕາມຕາຕະລາງທາງລຸ່ມນີ້ອາດຈະເປັນຄຳຍ້ອງຍໍຈາກຄຣູຝຶກອົບຮົມ ເມື່ອມີການນຳສເນີເຣື່ອງໄດ້ຢ່າງດີ
ຄວາມຄິດເຫັນອາດຈະເປັນຄຳແນະນຳໃນຈຸດທີ່ຕ້ອງຝຶກຝົນເພີ້ມຂຶ້ນ ບາງຂໍ້ອາດຈະບໍ່ມີຄວາມເຫັນໃດໆ ຖ້າຫາກການນຳສເນີຕອນນັ້ນຜ່ານໄປດ້ວຍດີ

ลายການໃນຕາຕະລາງນີ້ຊ່ອຍໃຫ້ຜູ້ຝຶກອົບຮົມຈື່ໄດ້ວ່າຈະໃຫ້ຄວາມເຫັນຢ່າງໃດຫລັງຈາກທີ່ນໍາສເນີໄປແລ້ວ ເພື່ອຈະບໍ່ມີສິ່ງໃດເຂົ້າມາແຊກການເລົ່າເຣື່ອງອີກ ຖ້າຫາກຜູ້ເລົ່າເຣື່ອງຈື່ບໍ່ໄດ້ດີ...ລາວກໍສາມາດເລີ້ມຕົ້ນເລົ່າໃໝ່ໄດ້.

ປະເມີນຜົນການເລົ່າເຣື່ອງ 3 ຢ່າງ	
	ຄໍາເຫັນ, ການເລົ່າເຣື່ອງ
1. ຄໍານໍາ	
2. ເລົ່າໄດ້ຢ່າງຖືກຕ້ອງ	
3. ຄົນໃນກຸ່ມສົນໃຈຟັງ	
4. ບໍ່ອອກນອກເຣື່ອງ	
5. ຈັບໃຈໃນເຣື່ອງ	
6. ອອກທ່າທາງ ແລະໃຊ້ສຽງ	
	ຄໍາເຫັນ, ຂໍໃຫ້ອາສາເລົ່າເຣື່ອງລຶ້ມຄືນ
1. ຂໍໃຫ້ຜູ້ຟັງອາສາເລົ່າລຶ້ມຄືນ	
2. ໜູນໃຈໃຫ້ອາສາເລົ່າລຶ້ມຄືນ	
3. ແກ້ຄວາມຜິດຂອງຜູ້ອາສາ	
	ຄໍາເຫັນ, ການນໍາຕາມເຣື່ອງ
1. ນໍາຕາມເຣື່ອງຈົນຈົບ	
2. ໃຊ້ຫລາຍວິທີການ *3)* ຖາມ, ຍະວ່າງ ແລະ ເວົ້າກົງກັນຂ້າມ*	
3. ຜູ້ຟັງມີສ່ວນຮ່ວມ	
4. ນໍາໄດ້ຢ່າງຖືກຕ້ອງ	

ປະເມີນການຄົ້ນຫາຊຸມຊັບ 2 ຢ່າງ	
	ຄຳເຫັນ, ການຄົ້ນຫາຊຸມຊັບຝ່າຍອິນຍານ
1. ໃຊ້ຄຳໄຂເປີດທາງ	
2. ຄຳຖາມແບບປາກເປົ່າ	
3. ອອກທ່າທາງ, ຊີ້ທາງໃຫ້	
4. ຄົ້ນຫາຊຸມຊັບທີ່ໃຊ້ການໄດ້	
5. ສົນທະນາ ສອງທາງ	
6. ການຕອບໂຕ້ກັບຄົນໃນກຸ່ມ	
7. ແລກປ່ຽນຄວາມຄິດຢ່າງສຸພາບ	
8. ການຢືນຢັນ	
9. ຄຳຕອບຢູ່ໃນເຣື່ອງ	
10. ນຳໄປສູ່ຊຸມຊັບ	
11. ຟັງຢ່າງຕັ້ງໃຈ	
12. ໃຫ້ເຣື່ອງເປັນຜູ້ສອນ	
	ຄຳເຫັນ ການນຳໃຊ້ໃນຊີວິດຝ່າຍອິນຍານ
1. ໃຊ້ຄຳຖາມແບບປາກເປົ່າ	
2. ອອກທ່າທາງ ຊີ້ຊ່ອງທາງໃຫ້	
3. ການນຳໃຊ້ ທີ່ໃຊ້ການໄດ້	
4. ການສົນທະນາ ສອງທາງ	
5. ການຕອບໂຕ້ກັບຄົນໃນກຸ່ມ	
6. ແລກປ່ຽນຄວາມຄິດ ຢ່າງສຸພາບ	
7. ການຢືນຢັນ	
8. ນຳໃຊ້ໃນຊີວິດ ຢູ່ໃນເຣື່ອງ	
9. ນຳໄປເຖິງການນຳໃຊ້	
10. ເຂົ້າເຖິງຄຳຕອບ	
11. ຫລີກລ້ຽງການເທດ, ການສອນ	
	ຄວາມສາມາດໃນການນຳປະຊຸມກຸ່ມ
1. ການຈັດການກັບບັນຫາ	
2. ຕອບຮັບ ຄຳຖາມທີ່ບໍ່ຢູ່ໃນເຣື່ອງ	
3. ບອກເຖິງລັກສະນະຂອງກຸ່ມ	

Appendix B. ພາກເພີ້ມເຕີມ ຂ.

ເດີນທາງຜ່ານເຣື່ອງຕົວຢ່າງ

ວິທີຕຽມຄຳຖາມ

ຊັກຂາຍ ລູກາ 19:1-10

ເຮົາຈະເດີນທາງຜ່ານເຂົ້າໄປໃນເຣື່ອງຂອງຊັກຂາຍ ເຖິງແມ່ນເຣື່ອງນີ້ຄົນຈະເຫັນວ່າເປັນເຣື່ອງສຳລັບເດັກນ້ອຍກໍ ຕາມ ແຕ່ແທ້ຈິງແລ້ວ ມັນເປັນເຣື່ອງທີ່ເລິກເຊິ່ງຫລາຍ.

ເຣື່ອງນີ້ໄດ້ເລົ່າກັນເລື້ອຍໆວ່າ, "ມີຊາຍຄົນນຶ່ງຊື່ຊັກຂາຍ ລາວມີຮູບຮ່າງເຕັ້ຍ ຊັກຂາຍຢາກເຫັນພຣະເຢຊູ ດັ່ງນັ້ນລາວ ຈຶ່ງປີນຂຶ້ນໄປເທິງຕົ້ນໄມ້ເພື່ອຈະໄດ້ເຫັນພຣະອົງ ຝູງຊົນບໍ່ມັກຊັກຂາຍຢູ່ແລ້ວເພາະລາວເປັນນາຍດ່ານເກັບພາສີ ແຕ່ພຣະເຢຊູຊົງເຫັນລາວແລະໄດ້ເຂົ້າໄປຮັປທານອາຫານກັບລາວຢູ່ໃນເຮືອນ ຊັກຂາຍມີຄວາມສຸກຫລາຍຈົນໃຫ້ ເງິນເຄິ່ງນຶ່ງແກ່ຄົນຍາກຈົນ, ດັ່ງນັ້ນເຮົາກໍຄວນເຮັດເໝືອນກັບຊັກຂາຍ."

ເຖິງແມ່ນເຣື່ອງລາວຈະເປັນໃນທຳນອງນີ້ ແຕ່ກໍມີຫລາຍປະເດັນທີ່ຢູ່ໃນເຣື່ອງ ຖ້າຫາກໃຊ້ວິທີການເລົ່າເຣື່ອງເຈາະ ໃຈກໍຈະຄົ້ນພົບຄວາມຈິງຫລາຍຢ່າງ ເມື່ອເຮົາເລີ້ມຕົ້ນເຣື່ອງລາວທຳອິດກໍອາດຈະບໍ່ພົບສິ່ງໃດທີ່ເຮົາຈະນຳສເນີ ແຕ່ ບໍ່ຕ້ອງກັງວົນໃຈ ໃນຂະນະທີ່ທ່ານຕຽມເຣື່ອງເລົ່າເຈາະໃຈ ທ່ານກໍຈະຄົ້ນພົບຄວາມຈິງເພີ້ມຂຶ້ນໄປເລື້ອຍໆ ທ່ານ ອາດຈະຢາກກັບໄປເພີ້ມເຕີມຂຸມຊັບອັນມີຄ່າທີ່ທ່ານຄົ້ນພົບກ່ອນໜ້ານີ້ໄດ້ອີກ ພຣະຄຳຂອງພຣະເຈົ້າກໍເປັນແບບນີ້ ເຮົາຈະບໍ່ຂາດແຄນຄວາມຈິງເລີຍ.

ຈາກເຣື່ອງຊັກຂາຍ ພວກເຮົາໄດ້ນຳສເນີຂຸມຊັບຝ່າຍວິນຍານຢ່າງຫລວງຫລາຍ ໃນເຣື່ອງດຽວກໍເຫັນວ່າມີຢູ່ເຫລືອ ເຟືອເມື່ອເຮົານຳໄປເລົ່າແທ້ໆ ນັ້ນ ທ່ານບໍ່ຈຳເປັນຕ້ອງນຳຜູ້ຟັງໃຫ້ໄປພົບຄວາມຈິງທຸກປະການດັ່ງກ່າວ.

ເຖິງແມ່ນຂໍ້ມູນທີ່ຫາກໍເວົ້າມານີ້ຢູ່ໃນເນື້ອເຣື່ອງ ຍັງມີອີກຫລາຍຢ່າງທີ່ເຮົາສາມາດຄົ້ນພົບໄດ້ ໃນຂະນະທີ່ເຮົາໃຊ້ວິ ທີການເລົ່າເຣື່ອງເຈາະໃຈ ຂຸມຊັບທີ່ຝັງຢູ່ເລິກໆ ຈະຖືກຂຸດຂຶ້ນມາ. ເມື່ອເຮົາຄົ້ນຫາໃນເຣື່ອງຂອງຊັກຂາຍ ເຮົາຈະ ໃຊ້ວິທີການສື່ສານຫລາຍແບບທີ່ຢູ່ໃນການເລົ່າເຣື່ອງເຈາະໃຈ ແລະເຮົາຈະມຸ້ງໄປສູ່ພາກສ່ວນຂອງການ**ຕັ້ງຄຳຖາມ.**

ມີຄຳຖາມທີ່ຖືກຈົດບັນທຶກໄວ້ ຊຶ່ງເຫັນເຮັດກັນເລື້ອຍໆ ເນື່ອງຈາກວ່າພວກເຮົາບໍ່ໄດ້ຢູ່ນຳກັນເວລານີ້ ດັ່ງນັ້ນພວກ ເຮົາຈຶ່ງຕ້ອງບັນທຶກໄວ້ເປັນຄຳຂຽນ. ຖ້ອຍຄຳທີ່ຕິວໜັງສືເນີ້ງອາດເປັນຄວາມຄິດຂອງທ່ານ, ທ່ານອາດຈະໃຊ້ຄຳ ຖາມຕົວຢ່າງເພື່ອໂອ້ລົມສົນທະນາ.

ການຕຽມເຣື່ອງຈາກພຣະຄັມພີ ແລະຄົ້ນຫາຂຸມຊັບ ຕໍ່ຈາກນັ້ນກໍຄິດຕັ້ງຄຳຖາມຈາກຂຸມຊັບເຫລົ່ານັ້ນ ຖ້າທ່ານຄິດ ໄດ້ເຣື່ອງນັ້ນກໍຈະກາຍເປັນການຈົດບັນທຶກຂອງທ່ານ. ເຣື່ອງລາວນັ້ນເປັນເໝືອນກັບຮາວຕາກຜ້າ ໃນຂະນະທີ່ທ່ານ ຍ່າງໄປຕາມຮາວຄວາມຄິດຂອງທ່ານ ທ່ານຈະເຫັນຂຸມຊັບທີ່ທ່ານແຂວນໄວ້ຕາມຮາວນັ້ນ ແລະທ່ານກໍຕັ້ງຄຳຖາມ ໄປຕາມຮາວຄວາມຄິດໃນເຣື່ອງນັ້ນ.

ເມື່ອທ່ານເຫັນຄວາມຍາວຂອງຕົວຢ່າງການເດີນທາງເຂົ້າໄປໃນເຣື່ອງ ທ່ານອາດຈະຕົກໃຈ, "ໂອຍ..ຍາວໂພດ" ແຕ່ເມື່ອທ່ານເລີ້ມກະທຳຕໍ່ໄປ ທ່ານອາດຈະເວົ້າວ່າ, "ເປັນຫຍັງຈຶ່ງເຮັດຊ້ຳແລ້ວຊ້ຳອີກແນວນີ້" ແທ້ຈິງແລ້ວຕົວຢ່າງນີ້ອາດຈະບໍ່ເໝາະກັບວິທີການໃນການຮຽນຂອງທ່ານ. ແຕ່ພວກເຮົາຂໍໝູນໃຈໃຫ້ທ່ານຮຽນຮູ້ຈາກວິທີການນີ້ ແລ້ວທ່ານຈະເຫັນວ່າມັນສາມາດຊ່ວຍທ່ານຕັ້ງຄຳຖາມໄດ້.

ແທ້ຈິງແລ້ວ ບົດນີ້ເປັນບົດທີ່ຊ່ວຍໃຫ້ຫລາຍຄົນມີຄວາມກະຈ່າງແຈ້ງໃນການຕັ້ງຄຳຖາມ

ທຳອິດ ເມື່ອທ່ານຄົ້ນຄວ້າເຣື່ອງຊັກຂາຍດ້ວຍຕົວເອງ ທ່ານອາດຈະບໍ່ພົບຊຸມຊັບເໝືອນດັ່ງທີ່ພວກເຮົານຳສເນີ ຢ່າລືມວ່າພວກເຮົາໄດ້ສອນກ່ຽວກັບເຣື່ອງນີ້ເປັນເວລາດົນແລ້ວທົ່ວໂລກ ໃນຊ່ວງເວລານັ້ນກໍໄດ້ທຳການສົນທະນາແລກປ່ຽນຄວາມຄິດເຫັນກັບຄົນອື່ນໆ ຊຸມຊັບທີ່ຄົ້ນພົບຈຶ່ງມາຈາກການສະສົມໃນການຝຶກອົບຮົມ ມັນເຮັດໃຫ້ພວກເຮົາໄດ້ເຫັນສິ່ງຕ່າງໆ ຢ່າງຫລວງຫລາຍ ພວກເຮົາຈະໄດ້ຮັບຂໍ້ມູນຈາກຄົນອື່ນຢູ່ສເມີ ແລະມັກຈະເກີດຂຶ້ນເມື່ອທ່ານໄດ້ໂອ້ລົມກັບຄົນໃນກຸ່ມ.

ໃນຂະນະທີ່ທ່ານຕຽມແລະນຳສເນີເລົ່າເຣື່ອງເຈາະໃຈ ທ່ານອາດຈະພົບຊຸມຊັບຢ່າງອື່ນນຳ ທ່ານອາດຈະກັບໄປເບິ່ງເຣື່ອງອີກແລະພົບຊຸມຊັບອີກ ພຣະຄຳຂອງພຣະເຈົ້າກໍເປັນເຊັ່ນນີ້ ທ່ານຈະບໍ່ເມື່ອຍກັບຄວາມຈິງອັນຫລວງຫລາຍທີ່ເກີດຂຶ້ນມາເລື້ອຍໆ ນັ້ນເລີຍ.

ໃນບົດນີ້ມີລັກສະນະດັ່ງນີ້ ຫລັງຈາກທີ່ທ່ານໄດ້ອ່ານແລະຮຽນຮູ້ເຣື່ອງຂອງຊັກຂາຍ ພວກເຮົາຈະບອກວິທີຕິດຕາມຄົ້ນຫາຊຸມຊັບຝ່າຍວິນຍານ ຕ່ຈາກນັ້ນກໍຕັ້ງຄຳຖາມເພື່ອໃຫ້ຄົນອື່ນໄດ້ຄົ້ນຫາແລະພົບກັບຊຸມຊັບດ້ວຍ. ທ່ານອາດຈະບໍ່ເຫັນ ຫລືບໍ່ເຫັນນຳກັບຂໍ້ສັງເກດຄົ້ນຫາຊຸມຊັບຝ່າຍວິນຍານທີ່ສເນີມານັ້ນ ເຣື່ອງນີ້ຖືວ່າເປັນທັມມະດາ ຢ່າຖືວ່າເປັນບັນຫາ ເມື່ອເຮົາໃຊ້ເຣື່ອງເຈາະໃຈສອນເຮົາເອງ ເຮົາກໍຈະແບ່ງປັນແຕ່ສິ່ງທີ່ຕົວເຮົາເຫັນຊັດເຈນຈາກເຣື່ອງນັ້ນ.

ຄວາມຄິດບາງຢ່າງທີ່ພວກເຮົາສເນີ ເປັນພຽງຄວາມຄິດເພື່ອນຳສົນທະນາໃນກຸ່ມ ພຣະເຈົ້າຈະຕັດຜ່ານບາງຄົນຢູ່ໃນກຸ່ມ ແລະເຮົາກໍຈະເຂົ້າໃຈພຣະຄັມພີຕອນນັ້ນກະຈ່າງແຈ້ງຂຶ້ນ. ສ່ວນທີ່ທ້າທາຍທີ່ສຸດຂອງການເລົ່າເຣື່ອງເຈາະໃຈນັ້ນແມ່ນ ການຕັ້ງຄຳຖາມເພື່ອນຳພາຄົນອື່ນໄປພົບກັບຊຸມຊັບ ພວກເຮົາຫວັງວ່າການກະທຳທີ່ຊ້ຳແລ້ວຊ້ຳເລົ່າໃນບົດນີ້ຈະຊ່ວຍໃຫ້ທ່ານມີຄວາມຮູ້ສຶກທີ່ດີກັບຄວາມສາມາດໃໝ່ໆ ນີ້.

ເມື່ອທ່ານ(ສອນ)ເລົ່າເຣື່ອງນີ້ຢ່າງແທ້ຈິງ ແລະມີເວລາໜ້ອຍ ທ່ານອາດຈະສເນີຕັ້ງຄຳຖາມເພື່ອຄົ້ນຫາຊຸມຊັບແຕ່ພຽງຢ່າງນຶ່ງຫລືສອງຢ່າງກໍພໍ.

ໃຫ້ເຮົາເລີ້ມຕົ້ນໄດ້ແລ້ວ

ຂໍແນະນຳວ່າ ທ່ານຄວນຮຽນເຣື່ອງນີ້ຈາກ 10 ຂໍ້ ໃນວິທີການເລົ່າເຣື່ອງເຈາະໃຈ

ຮຽນເຣື່ອງທີ່ຈະເລົ່າ ຕາມທີ່ໄດ້ອະທິບາຍໄວ້ຕອນຕົ້ນ...."ວິທີຕຽມເຣື່ອງ"

1. ເທື່ອທຳອິດ ອ່ານເຣື່ອງທັ້ງສິບຂໍ້ ອອກສຽງດັ້ງໆ
2. ອ່ານອອກເປັນສຽງທັມມະຊາດ (ພາສາເວົ້າ) ຍົກຕົວຢ່າງ ແທນທີ່ຈະອ່ານວ່າ "ພະນັກງານເກັບພາສີ" ໃຫ້ປ່ຽນ ເປັນ "ຄົນເກັບພາສີ."
3. ໃຫ້ຈິນຕະນາການ(ຄິດ)ເບິ່ງວ່າ ມີຫຍັງເກີດຂຶ້ນແດ່ຢູ່ໃນເຣື່ອງ
4. ຫລັງຈາກອ່ານຈົບແລ້ວ ໃຫ້ຫລັບຕາໃນທັນທີ ແລະທົບທວນລຶ້ມຂໍ້ມູນຄືນໃຫ້ໄດ້ຫລາຍເທື່ອເທົ່າທີ່ຈະຫລາຍໄດ້ ສິ່ງທີ່ຕ້ອງການແມ່ນເຣື່ອງລາວຈິງ ບໍ່ແມ່ນຈາກການຂຽນຄຳຕໍ່ຄຳ (ຈື່ເປັນເຣື່ອງ ບໍ່ແມ່ນຈື່ຕາມທີ່ຂຽນຄຳຕໍ່ຄຳ)
5. ກັບໄປອ່ານເຣື່ອງອອກສຽງອີກເທື່ອນຶ່ງ ທ່ານຈະສັງເກດເຫັນສິ່ງທີ່ຂາດຫາຍ(ຂ້າມ)ໄປ
6. ຫລັບຕາ ແລະທົບທວນເຣື່ອງດ້ວຍການອອກສຽງດັ້ງ, ອອກທ່າທາງໄປນຳຕາມທີ່ທ່ານເຫັນທາງຈິນຕະນາການ

ຫລັງຈາກທ່ານອ່ານໄດ້ 4 ເທື່ອ ແລະເລົ່າເຣື່ອງລຶ້ມຄືນຕາມວິທີຂ້າງເທິງນີ້ ຫລາຍຄົນໄດ້ສັງເກດເຫັນວ່າເຂົາເຈົ້າສາ ມາດເລົ່າເຣື່ອງໄດ້ຢ່າງຖືກຕ້ອງ. ແຕ່ຖ້າຫາກເລົ່າໄປແລ້ວ 4-6 ເທື່ອ ຜູ້ເລົ່າຍັງຄົງຈື່ເຣື່ອງບໍ່ໄດ້ດີ ກໍມັກຈະເປັນຍ້ອນ ລາວຄິດວ່າຈະຕ້ອງຈື່ຈຳແບບຄຳຕໍ່ຄຳ ແທ້ຈິງແລ້ວຄວນຈື່ຈຳເປັນເນື້ອຫາ ເປັນເຣື່ອງ

ຖ້າຜູ້ເລົ່າພຍາຍາມຈື່ຈຳແບບຄຳຕໍ່ຄຳ ກໍເທົ່າກັບວ່າລາວກຳລັງປ່ຽນວິທີການຂອງການເລົ່າເຣື່ອງເຈາະໃຈ ທີ່ບົ່ງໄວ້.

ຖ້າຫາກຍັງມີບັນຫາຈື່ຈຳເຣື່ອງບໍ່ໄດ້ ພວກເຮົາຂໍແນະນຳໃຫ້ກັບໄປເຮັດຕາມຂັ້ນຕອນຂ້າງເທິງນັ້ນອີກ ຈົ່ງພຍາຍາມ ຮຽນເຣື່ອງຊັກຂາຍອີກເທື່ອໂດຍເຮັດຕາມແບບຂອງການເລົ່າເຣື່ອງເຈາະໃຈ ເທື່ອນີ້ບໍ່ຕ້ອງອ່ານ ແຕ່ໃຫ້ເຫລືອດຕາ ເບິ່ງໜ້ອຍນຶ່ງ ແລ້ວຈື່ຈຳໄວ້ ເລົ່າອອກສຽງດັ້ງໆ.....ດັ້ງໆ.....ດັ...ງ...ໆ

ຊັກຂາຍ:

1 ພຣະເຢຊູໄດ້ເຂົ້າໄປໃນເມືອງເຢຣີໂກ ແລະໄດ້ຜ່ານເມືອງນັ້ນໄປ 2 ແລະເບິ່ງແມ, ມີຊາຍຄົນນຶ່ງຊື່ ຊັກຂາຍ ເປັນນາຍດ່ານພາສີແລະເປັນຄົນຮັ່ງມີ 3 ຊັກຂາຍພຍາຍາມຢາກຈະເຫັນພຣະເຢຊູວ່າເປັນຄົນແນວໃດ ແຕ່ບໍ່ ເຫັນພຣະອົງເພາະຄົນໜາແໜ້ນ ແລະລາວກໍເປັນຄົນເຕ້ຍ 4 ຊັກຂາຍຈຶ່ງແລ່ນລັດໜ້າໄປຂຶ້ນຕົ້ນຊຸກະໂມເພື່ອຊິ ໄດ້ເຫັນພຣະເຢຊູເພາະພຣະອົງກຳລັງໄປທາງນັ້ນ 5 ເມື່ອພຣະເຢຊູມາເຖິງບ່ອນນັ້ນແລ້ວ ພຣະອົງກໍແຫງນໜ້າ ຂຶ້ນເບິ່ງຊັກຂາຍ ຈຶ່ງເວົ້າຕໍ່ຊັກຂາຍວ່າ, "ຊັກຂາຍເອີຍ, ຈົ່ງຮີບລົງມາ ເພາະວ່າມື້ນີ້ເຮົາຈະຕ້ອງພັກຢູ່ໃນເຮືອນ ຂອງທ່ານ" 6 ຊັກຂາຍກໍຮີບລົງມາແລະຕ້ອນຮັບພຣະເຢຊູດ້ວຍຄວາມຍິນດີ 7 ເມື່ອຄົນທັ້ງປວງໄດ້ເຫັນດັ່ງນັ້ນ ກໍພາກັນຈົ່ມວ່າ, "ເປັນຫຍັງໜໍ, ທ່ານຜູ້ນີ້ຈຶ່ງເຂົ້າໄປພັກຢູ່ກັບຄົນນອກສິນທັມ" 8 ຊັກຂາຍໄດ້ຢືນຂຶ້ນເວົ້າກັບ ພຣະເຢຊູວ່າ, "ເບິ່ງແມ ນາຍເອີຍ, ເຂົ້າຂອງຂອງຂ້ານ້ອຍ ຂ້ານ້ອຍກໍເອົາໃຫ້ແກ່ຄົນຍາກຈົນເຄິ່ງນຶ່ງ ແລະຖ້າຂ້ ານ້ອຍໄດ້ສໍ້ໂກງເອົາຂອງຂອງຜູ້ໃດ ຂ້ານ້ອຍກໍຍອມສົ່ງຄືນໃຫ້ສີ່ຕໍ່" 9 ພຣະເຢຊູຈຶ່ງເວົ້າວ່າ, "ມື້ນີ້ຄວາມພົ້ນໄດ້ມາ ເຖິງເຮືອນຫລັງນີ້ແລ້ວ ເພາະຄົນນີ້ກໍເປັນລູກຫລານຂອງອັບຣາຮາມ 10 ເພາະວ່າບຸດມະນຸດມາເພື່ອຈະຊອກ ຫາແລະໂຜດເອົາຜູ້ທີ່ຫລົງເສັ້ຽໄປແລ້ວນັ້ນໃຫ້ລອດພົ້ນ"(ລູກາ 19:1-10)

ຈົ່ງສັງເກດໃຫ້ດີ

ຫລັງຈາກທີ່ທ່ານຕຽມເຣື່ອງແລ້ວ ທ່ານອາດຈະພົບວ່າບໍ່ສາມາດພິສູດຄວາມຄິດທີ່ມີຢູ່ໃນຕອນຕຽມເຣື່ອງນັ້ນວ່າເປັນ ຈິງ ແລະໃຊ້ໄດ້ແທ້. ດັ່ງນັ້ນຂໍໃຫ້ທ່ານໂຈະໄວ້ ຢ່ານຳຄວາມຄິດທີ່ບໍ່ສາມາດສລຸບໄດ້ນັ້ນໄປສອນຄົນອື່ນ ຈົ່ງເອົາ ຄວາມຄິດນັ້ນເກັບໄວ້ໃນໃຈກ່ອນ ທ່ານອາດຈະໃຊ້ມັນກັບເຣື່ອງອື່ນໆ. ບາງຄັ້ງໃນຂະນະທີ່ເລົ່າເຣື່ອງແລະຕັ້ງຄຳຖາມ

ພຣະເຈົ້າຈະຊີ້ບອກຄວາມຈິງບາງຢ່າງເພີ້ມເຕີມໃຫ້ຈາກຄຳຕອບຂອງຄົນອື່ນ ເວລານັ້ນເອງ ຄວາມຄິດຂອງທ່ານທີ່ເກັບໄວ້ນັ້ນຈະໄດ້ຮັບການຕອກຍ້ຳ ຢືນຢັນວ່າເປັນຄວາມຈິງ.

ກ່ອນທີ່ຈະອ່ານຕາມປຶ້ມນີ້ຕໍ່ໄປ ຢາກຂໍໃຫ້ທ່ານຄິດເຣື່ອງຊັກຂາຍແຕ່ຕົ້ນຈົນຈົບອີກເທື່ອ ວ່າຈະເຫັນຂຸມຊັບຫຍັງແດ່ໃນເຣື່ອງ ການກະທຳເຊັ່ນນີ້ຈະຊ່ອຍຝຶກຄວາມສາມາດ ແລະທ່ານຈະສາມາດນຳເອົາມາປຽບທຽບກັບຂໍ້ສັງເກດທີ່ພວກເຮົາຈະນຳສເນີຕໍ່ໄປ ທ່ານອາດຈະພົບຂຸມຊັບທີ່ພວກເຮົາບໍ່ໄດ້ເວົ້າເຖິງ ແລະພວກເຮົາອາດຈະພົບຂຸມຊັບທີ່ທ່ານບໍ່ເຫັນ...ຂໍໃຫ້ທ່ານເພີດເພີນໄປກັບການຄົ້ນຫາຂຸມຊັບຕໍ່ໄປ

ຂໍ້ສັງເກດ(ການຄົ້ນຫາ)ຂຸມຊັບທີ່ພວກເຮົາພົບເຫັນ

1. *ກຸ່ມປະຊາຊົນໄດ້ບັງຊັກຂາຍບໍ່ໃຫ້ເຫັນພຣະເຢຊູ ແລະເຮັດໃຫ້ລາວເຂົ້າໄປໃກ້ພຣະເຢຊູບໍ່ໄດ້*
2. *ຊັກຂາຍເປັນຄົນເຕັ້ຍ ແຕ່ມີຕຳແໜ່ງສູງ ເປັນຄົນຮັ່ງມີ ແລະຍັງເປັນຫົວໜ້າຄົນເກັບພາສີ ລາວຕັ້ງໃຈຢ່າງແນ່ວແນ່ທີ່ຈະໄດ້ເຫັນພຣະເຢຊູ ໃນເມື່ອບໍ່ສາມາດເຫັນພຣະອົງໂດຍຕົງ ລາວຈຶ່ງຫາທາງອື່ນ*
3. *ເຖິງແມ່ນກຸ່ມຊົນຈະຫົວເຍາະເຍີ້ຍ ເພາະຊາຍຕຳແໜ່ງສູງໄດ້ປີນຂຶ້ນຕົ້ນໄມ້ ແຕ່ສິ່ງເຫລົ່ານັ້ນບໍ່ໄດ້ເຮັດໃຫ້ຊັກຂາຍເສົ້າລົ້ມຄວາມຕັ້ງໃຈຂອງລາວ.*
4. *ເຮົາເຫັນພຣະເຢຊູເດີນມາຕາມທາງພ້ອມກັບຝູງຊົນທີ່ບຽດສຽດຕິດຕາມພຣະອົງ ເຖິງແມ່ນປະຊາຊົນເຫລົ່ານັ້ນຈະບຽດພຣະອົງຈົນເຊໄປມາ ພຣະອົງກັບເບິ່ງຂ້າມເຂົາເຈົ້າໄປ ແລະສັງເກດເຫັນຊາຍຄົນດຽວທີ່ບໍ່ໄດ້ຢູ່ໃກ້ ແລະຊາຍຄົນນັ້ນກຳຢູ່ເທິງຕົ້ນໄມ້.*
5. *ພຣະເຢຊູຊົງສົນໃຈໃນຊັກຂາຍຢ່າງແທ້ຈິງ ເພາະພຣະອົງຊົງເອີ້ນຊື່ລາວ*
6. *ພຣະເຢຊູໄດ້ເຊີນພຣະອົງເອງເຂົ້າໄປເຮືອນຂອງຊັກຂາຍ ໃນຫລາຍວັທນະທັມເຫັນວ່າບໍ່ຄວນເຮັດ ແຕ່ສຳລັບພຣະເຢຊູ ພຣະອົງຊົງຮູ້ລ່ວງໜ້າວ່າຈະມີຫຍັງເກີດຂຶ້ນ.*
7. *ເມື່ອພຣະເຢຊູແຫງນໜ້າຂຶ້ນເບິ່ງຊັກຂາຍ ພວກປະຊາຊົນກໍແຫງນຂຶ້ນເບິ່ງນຳ ຈະເກີດຫຍັງຂຶ້ນ ເພາະພຣະເຢຊູ ແລະປະຊາຊົນເຫັນຊັກຂາຍຢູ່ເທິງຕົ້ນໄມ້ພ້ອມກັນ ແຕ່ຊັກຂາຍບໍ່ຢ້ານແລະບໍ່ອາຍ ລາວກັບດີໃຈຫລາຍ*
8. *ເມື່ອພຣະເຢຊູເອີ້ນ ຊັກຂາຍກໍຮີບລົງມາ ໂດຍທີ່ບໍ່ຊັກຊ້າຕໍ່ຄຳຮຽກເອີ້ນຂອງພຣະອົງ*
9. *ເຖິງແມ່ນປະຊາຊົນຈະຈົ່ມແລະຕຳໜິວ່າພຣະເຢຊູໄປເປັນແຂກໃນເຮືອນຂອງຄົນບາບ, ເປັນຫຍັງໜໍ, ທ່ານຜູ້ນີ້ຈຶ່ງເຂົ້າໄປພັກຢູ່ກັບຄົນນອກສິນທັມ" ໃນຕອນນີ້ບອກວ່າພຣະອົງເຂົ້າໄປໃນເຮືອນຂອງຊັກຂາຍແລ້ວ.*

   ຕອນທີ່ຊັກຂາຍແລະພຣະເຢຊູຮູ້ວ່າພວກປະຊາຊົນກຳລັງຕຳໜິທີ່ພຣະເຢຊູເຂົ້າໄປໃນເຮືອນຊັກຂາຍນັ້ນ ຕອນນີ້ຍັງບໍ່ຊັດແຈ້ງເທົ່າໃດ ຕາມໃນເຣື່ອງ ຕໍ່ມາສິ່ງທີ່ພຣະເຢຊູເວົ້າກັບຄົນທັ່ງຫລາຍຕໍ່ໜ້າຊັກຂາຍນັ້ນ ເຮົາເຫັນວ່າຊັກຂາຍ ແລະພຣະອົງຮູ້ວ່າປະຊາຊົນກຳລັງຕຳໜິ ແຕ່ຊັກຂາຍບໍ່ສະເທືອນຕໍ່ການຈົ່ມແລະຕຳໜິຂອງປະຊາຊົນເຫລົ່ານັ້ນເພາະຊັກຂາຍຍິນດີຕ້ອນຮັບພຣະເຢຊູ.

10. *ການທີ່ພວກປະຊາຊົນຕຳໜິວິຈານວ່າ ພຣະເຢຊູເຂົ້າໄປໃນເຮືອນຄົນບາບ ຊີ້ໃຫ້ເຫັນວ່າຄົນເຫລົ່ານັ້ນຄິດວ່າຕົນເອງບໍ່ເປັນຄົນບາບ.*
11. *ຝູງຊົນເຮັດເໝືອນກັບວ່າເຂົາເຈົ້າ "ຕິດຕາມ" ພຣະເຢຊູຢ່າງແທ້ຈິງ ເຂົາເຈົ້າບຽດກັນຢ່າງຕາມພຣະອົງໄປ ເຖິງແມ່ນການຈົ່ມແລະຄຳຕຳໜິຂອງເຂົາເຈົ້າເຮັດໃຫ້ຄົນສົນໃຈວ່າພຣະເຢຊູໄດ້ໄປຮັບທານອາຫານກັບຜູ້ໃດ ແຕ່ເຂົາເຈົ້າກໍຍັງຄິດວ່າ ພຣະຢຊູສົມຄວນທີ່ຈະໄປພັກໃນເຮືອນຂອງເຂົາເຈົ້າ ແທ້ຈິງແລ້ວ ພວກປະຊາຊົນບໍ່ໄດ້ນັບຖື

ພຣະເຢຊູຢ່າງແທ້ຈິງດອກ ຊຶ່ງເຮົາເຫັນໄດ້ຈາກການກະທຳຂອງເຂົາເຈົ້າ ແລະເຂົາເຈົ້າບໍ່ເຫັນເໝືອນກັບພຣະເຢຊູຊົງເຫັນ.

12. *ຝູງຊົນເຫລົ່ານີ້ເປັນກຸ່ມທີ່ມັກຈົ່ມ ເຂົາເຈົ້າມີຄວາມເຊື່ອແຕ່ບໍ່ກ້າຖາມພຣະເຢຊູໂດຍຕົງ ເຂົາເຈົ້າບໍ່ຮູ້ວ່າພຣະອົງຊົງມີຣິດເດດ ແລະຍັງບໍ່ຮູ້ວ່າພຣະອົງຊົງໄດ້ຍິນຄຳຈົ່ມວ່າຂອງເຂົາເຈົ້າ.*
13. *ຊັກຂາຍຜູ້ຮັ່ງມີບໍ່ໄດ້ສະແດງອອກໃຫ້ເຫັນວ່າລາວຄິດແນວໃດ ເມື່ອລາວສເນີວ່າຈະໃຫ້ຊັບເຄິ່ງນຶ່ງແກ່ຄົນຈົນ*
14. *ຊັກຂາຍປະກາດວ່າ ຖ້າລາວຫາກໂລບເອົາສິ່ງຂອງຜູ້ໃດ ລາວຈະສົ່ງຄືນໃຫ້ຜູ້ນັ້ນສີ່ຕໍ່ ຊັກຂາຍບໍ່ໄດ້ໃຊ້ຄຳວ່າ, "ຖ້າ" ລາວເຮັດຜິດແທ້ ລາວຈະສົ່ງສິ່ງທີ່ໂລບມານັ້ນຄືນສີ່ຕໍ່ ຊັກຂາຍສັນຍາຈາກຄວາມຕັ້ງໃຈຂອງລາວເອງ ແຕ່ບາງຄົນອາດຈະເວົ້າວ່າລາວໃຫ້ທານແກ່ຄົນຍາກຈົນຢູ່ແລ້ວ ແຕ່ຈາກການຈົ່ມຂອງຝູງຊົນເຮັດໃຫ້ເຮົາເຫັນວ່າຊັກຂາຍເປັນຄົນຢ່າງໃດ.*

ຖ້າຊັກຂາຍເປັນຄົນເກັບພາສີທີ່ໃຫ້ເງິນເຄິ່ງນຶ່ງແກ່ຄົນຍາກຈົນ ບາງເທື່ອລາວອາດຈະເຄີຍເຮັດຢ່າງລັບໆ ມາແລ້ວ ແຕ່ການທີ່ລາວຈະສົ່ງຄືນໃຫ້ແກ່ຄົນທີ່ລາວໂກງເຖິງສີ່ຕໍ່ນັ້ນ ຈະເຮັດໃຫ້ຝູງຊົນເຫັນວ່າລາວເປັນຄົນຊອບທັມກໍເປັນໄດ້.

ສິ່ງທີ່ເຮົາຮູ້ຈັກໃນເຣື່ອງນີ້ແມ່ນ ໃນຈຸດນຶ່ງຊັກຂາຍໄດ້ຍອມຮັບວ່າລາວເປັນຄົນບາບ ລາວຢາກຈະເຮັດທຸກສິ່ງໃນທາງທີ່ຖືກຕ້ອງ ພຣະເຢຊູຊົງກ່າວວ່າ ຄວາມພົ້ນໄດ້ເກີດຂຶ້ນໃນມື້ນັ້ນ ເຮົາໄດ້ເຫັນວ່າຊັກຂາຍໄດ້ສະແດງຄວາມມີນ້ຳໃຈຢ່າງຫລວງຫລາຍ.

15. *ຕອນທຳອິດເຮົາຄິດວ່າ ຊັກຂາຍພຍາຍາມຊື້ຈ້າງໃຫ້ພຣະເຢຊູຍອມຮັບລາວ ແຕ່ເຮົາຮູ້ວ່າສາເຫດທີ່ລາວມາເຊື່ອໃນພຣະເຢຊູນັ້ນເພາະພຣະເຢຊູເວົ້າກັບລາວວ່າ, "ມື້ນີ້ຄວາມພົ້ນໄດ້ມາເຖິງເຮືອນຫລັງນີ້ແລ້ວ ເພາະຄົນນີ້ກໍເປັນລູກຫລານຂອງອັບຣາຮາມ" ຢູ່ໃນເຣື່ອງຕອນນີ້ ຊັກຂາຍຄົນດຽວທີ່ຍອມຮັບວ່າລາວເອງເປັນຄົນບາບ ແລະເປັນຄົນດຽວທີ່ໄດ້ຮັບຄວາມພົ້ນ*

16. *ຢູ່ໃນເຣື່ອງ ພຣະເຢຊູຊົງເວົ້າກັບຊັກຂາຍໂດຍຕົງວ່າ, "ມື້ນີ້ຄວາມພົ້ນໄດ້ມາເຖິງເຮືອນຫລັງນີ້ແລ້ວ" ພຣະເຢຊູຊົງກ່າວຕໍ່ໄປວ່າ, "ເພາະຄົນນີ້(ຊັກຂາຍ)ກໍເປັນລູກຫລານຂອງອັບຣາຮາມ" ມີຄົນອື່ນຮ່ວມຢູ່ໃນເຣື່ອງຕອນນີ້ດ້ວຍ ບໍ່ພຽງເທົ່ານັ້ນ ຈາກຖ້ອຍຄຳຂອງພຣະເຢຊູເຮົາເຫັນວ່າ ພຣະອົງກຳລັງຫັນໜ້າໄປຫາຄົນອື່ນທີ່ຢູ່ໃນທີ່ນັ້ນ ແລະພຣະອົງຊົງປົກປ້ອງຊັກຂາຍຈາກຄວາມຈົ່ມແລະການຕຳໜິຂອງກຸ່ມຊົນເຫລົ່ານັ້ນ.*

17. *ຄຳເວົ້າຂອງພຣະເຢຊູໄດ້ບອກເຖິງເປົ້າໝາຍການສະເດັດມາຂອງພຣະອົງ, "ເພາະວ່າບຸດມະນຸດມາເພື່ອຈະຊອກຫາແລະໂຜດເອົາຜູ້ທີ່ຫລົງເສັ້ຽໄປແລ້ວນັ້ນໃຫ້ລອດພົ້ນ" ເປັນຄຳເວົ້າທີ່ໃຫ້ກຽດແກ່ຊັກຂາຍຫລາຍ ແລະເປັນຄຳເວົ້າສລຸບກັບຄືນໄປຕຳໜິກຸ່ມຊົນເຫລົ່ານັ້ນ.*

18. *ໃນເຣື່ອງນີ້ ເຮົາໄດ້ເຫັນວ່າພຣະເຢຊູ ພຽງແຕ່ເປັນຜູ້ນຳທີ່ສຳຄັນຄົນນຶ່ງ ທີ່ມີຄວາມເປັນຫ່ວງຊາຍຄົນນຶ່ງທີ່ຄົນທັ້ງຫລາຍກຽດຊັງລາວ. ພຣະເຢຊູຮູ້ຈັກຊື່ຂອງຊາຍຄົນນັ້ນດີ ພຣະເຢຊູບໍ່ເຫັນດີນຳຄວາມຄິດຂອງຝູງຊົນເຫລົ່ານັ້ນ ພຣະອົງຮູ້ດີເຖິງການຈົ່ມຢູ່ໃນໃຈຂອງເຂົາເຈົ້າ. ເຊັ່ນດຽວກັນ ພຣະເຢຊູສາມາດທີ່ຈະເວົ້າໄດ້ວ່າ ຊັກຂາຍໄດ້ຮັບຄວາມພົ້ນແລ້ວໃນມື້ນັ້ນ. ຈາກເຫດການໃນເຣື່ອງນີ້ໄດ້ຊີ້ໃຫ້ເຮົາເຫັນວ່າພຣະເຢຊູຊົງເປັນພຣະເຈົ້າ.*
19. *ຕອນທຳອິດ ກໍຊັດແຈ້ງດີວ່າ ຊັກຂາຍຕາມຫາພຣະເຢຊູ ແລະໃນເວລາອັນບໍ່ດົນນັ້ນ ກັບກາຍເປັນພຣະເຢຊູຊົງຕາມຫາຊັກຂາຍ*

ການຕັ້ງຄຳຖາມທີ່ເຮັດໃຫ້ເກີດການສັງເກດ(ຄົ້ນຫາ)

ໃນຕອນນີ້ພວກເຮົາຈະບອກເຖິງວິທີຕັ້ງຄຳຖາມ ທີ່ຈະຊ່ວຍຜູ້ຟັງໃຫ້ສັງເກດເຫັນສິ່ງຕ່າງໆ ໃນເຣື່ອງ ບາງເທື່ອໃນຂໍ້ ດຽວທີ່ເຮົາສັງເກດ ເຮົາຕ້ອງໃຊ້ຫລາຍໆຄຳຖາມ.

ຕົວຢ່າງຕໍ່ໄປນີ້ຈະຊ່ວຍໃຫ້ຜູ້ຟັງໄດ້ເຫັນຂໍ້ສັງເກດຝ່າຍວິນຍານ(ຊຸມຊັບຝ່າຍວິນຍານ) ຈຶ່ງໄດ້ຫຍໍ້ເປັນພາສາອັງກິດວ່າ "SO" (Spiritual Observation) ສ່ວນຄຳຖາມທີ່ນຳໄປສູ່ຂໍ້ສັງເກດ(ຊຸມຊັບຝ່າຍວິນຍານນັ້ນ) ກໍໄດ້ຫຍໍ້ເປັນພາ ສາອັງກິດວ່າ "SOQ" (Spiritual Observation Question)

ຕົວຢ່າງຕໍ່ໄປນີ້ຈະຊ່ວຍໃຫ້ທ່ານເຂົ້າໃຈ ນຳພາຜູ້ຟັງເທື່ອລະນ້ອຍເພື່ອໃຫ້ເຂົາເຈົ້າພົບເຫັນຂໍ້ສັງເກດ ເໝືອນກັບເຮົາ ໂຮຍເຂົ້າຈີ່ປ່ຽງນ້ອຍໆ ລໍ້ນົກເຂົ້າໄປໃນກົ້ງຂັງ. *(**ໝາຍເຫດ:** ***ຂໍ້ສັງເກດ= ໝາຍເຖິງ ຄົ້ນຫາຊຸມຊັບຝ່າຍວິນຍານ)***

1. **SO - ຂໍ້ສັງເກດ:** ຄົນທີ່ເບິ່ງຄືວ່າສົນໃຈພຣະເຢຊູ ກັບເປັນຜູ້ກີດກັ້ນຊັກຂາຍບໍ່ໃຫ້ລາວພົບກັບພຣະເຢຊູ
   SOQ - ຄຳຖາມນຳໄປສູ່ຂໍ້ສັງເກດ
   - ໃນເຣື່ອງ ເຮົາເຫັນວ່າຊັກຂາຍຢາກພົບພຣະເຢຊູ ແຕ່ລາວບໍ່ສາມາດເຂົ້າໄປໃກ້ພຣະອົງໄດ້ ລາວເປັນ ຄົນເຕັ້ຽ ແລະຝູງຊົນກີດກັ້ນລາວໄວ້ ຄົນເຫລົ່ານີ້ໄດ້ເຮັດຫຍັງເພື່ອກີດກັ້ນຊັກຂາຍບໍ່ໃຫ້ເຫັນພຣະເຢຊູ?
   - ທ່ານກຳລັງບອກວ່າ ຄົນທີ່ຢາກຢູ່ໃກ້ພຣະເຢຊູກີດກັ້ນຄົນອື່ນໆ ທີ່ກຳລັງສແວງຫາພຣະອົງ ແມ່ນບໍ່?
   - ທ່ານເອງຄິດຢ່າງໃດກ່ຽວກັບເຣື່ອງນີ້?

2. **SO - ຂໍ້ສັງເກດ:** ຊັກຂາຍເປັນຄົນເຕັ້ຽ ແຕ່ມີຕຳແໜ່ງສູງ ເປັນຄົນຮັ່ງມີ ເປັນຫົວໜ້າຄົນເກັບພາສີ ແຕ່ມີຄວາມ ຕັ້ງໃຈຢາກຈະເຫັນພຣະເຢຊູ ເມື່ອເຂົ້າພົບພຣະອົງແບບງ່າຍໆ ບໍ່ໄດ້ ລາວຈຶ່ງໃຊ້ວິທີການຂອງລາວເອງ.
   SOQ - ຄຳຖາມນຳໄປສູ່ຂໍ້ສັງເກດ
   - ທ່ານຈະອະທິບາຍຖານະທາງສັງຄົມ, ທຸຣະກິດ ແລະເສຖກິດ ໃນຊຸມຊົນຂອງຊັກຂາຍໄດ້ຢ່າງໃດ?
   - ຊັກຂາຍໄດ້ໃຊ້ອິດທິພົນທາງສັງຄົມແລະຄວາມຮັ່ງມີ ຢູ່ເໜືອຝູງຊົນຫລືບໍ່?
   - ໃນຕອນນີ້ເຮົາໄດ້ເຫັນຫຍັງ? ຄົນທີ່ສຳຄັນທີ່ຢາກພົບກັບພຣະເຢຊູແບບວິທີທັມມະດາບໍ່ໄດ້ ລາວໄດ້ ເຮັດຫຍັງໃນທີ່ສຸດ?

3. **SO - ຂໍ້ສັງເກດ:** ການທີ່ລາວຖືກຫົວຂວັນເຍາະເຍີ້ຍ ເພາະຊາຍຜູ້ມີຕຳແໜ່ງສູງຕ້ອງແລ່ນໄປຕາມທາງແລະ ປີນຂຶ້ນຕົ້ນໄມ້ ການທີ່ຕ້ອງກະທ□າດັ່ງກ່າວນັ້ນ ກໍບໍ່ໄດ້ເຮັດໃຫ້ຊັກຂາຍເລີກລົ້ມຄວາມຕັ້ງໃຈຂອງລາວ.
   SOQ - ຄຳຖາມນຳໄປສູ່ຂໍ້ສັງເກດ
   - ຈາກເນື້ອເຣື່ອງ ຝູງຊົນເຫລົ່ານັ້ນຄິດຢ່າງໃດກັບຊັກຂາຍ?
   - ເຖິງຊັກຂາຍຈະເປັນຄົນທີ່ສຳຄັນ ແຕ່ລາວຮູ້ດີວ່າຄົນທັ້ງຫລາຍເຫັນວ່າລາວເປັນຄົນໄຮ້ຄ່າ ທ່ານຄິດວ່າ ເຣື່ອງນີ້ເປັນເຣື່ອງທັມມະດາບໍ່ ແມ່ນຫຍັງຄືຄວາມສ່ຽງສຳລັບຊັກຂາຍໃນການແລ່ນໄປປີນຂຶ້ນຕົ້ນໄມ້?

4. **SO - ຂໍ້ສັງເກດ:** ເຮົາເຫັນພຣະເຢຊູຊົງເດີນມາຕາມທາງພ້ອມກັບຝູງຊົນທີ່ຍ່າງບຽດພຣະອົງ ເຖິງແມ່ນຄົນເຫລົ່ານັ້ນຈະບຽດພຣະອົງເຊໄປມາ ພຣະເຢຊູກັບເບິ່ງຂ້າມເຂົາເຈົ້າ ເຫັນແຕ່ຊາຍຄົນດຽວທີ່ຢູ່ໄກແລະປີນຢູ່ເທິງຕົ້ນໄມ້.

SOQ - ຄຳຖາມນຳໄປສູ່ຂໍ້ສັງເກດ

- ເມື່ອພຣະເຢຊູຊົງເດີນໄປຕາມທາງ ຝູງຊົນຫລວງຫລາຍອ້ອມຮອບພຣະອົງ ພຣະອົງສນອງຕອບຄົນກຸ່ມນັ້ນແບບໃດ?
- ການກະທຳຂອງພຣະເຢຊູໄດ້ບອກຫຍັງແກ່ເຮົາ?

5. **SO - ຂໍ້ສັງເກດ:** ພຣະເຢຊູຊົງສົນໃຈຊັກຂາຍຢ່າງແທ້ຈິງ ເພາະພຣະອົງຊົງເອີ້ນຊື່ລາວ

SOQ - ຄຳຖາມນຳໄປສູ່ຂໍ້ສັງເກດ

- ພຣະເຢຊູຊົງເວົ້າແນວໃດແດ່ ທີ່ບອກໃຫ້ເຫັນວ່າພຣະອົງຊົງສົນໃຈຊັກຂາຍເປັນການສ່ວນຕົວ?

6. **SO - ຂໍ້ສັງເກດ:** ພຣະເຢຊູຊົງເຊີນພຣະອົງເອງເຂົ້າໄປໃນເຮືອນຂອງຊັກຂາຍ ໃນຫລາຍວັທນະທັມເຫັນວ່າເປັນການບໍ່ສົມຄວນ ແຕ່ສຳລັບພຣະເຢຊູເອງ ພຣະອົງຮູ້ວ່າຈະມີຫຍັງເກີດຂຶ້ນ.

SOQ - ຄຳຖາມນຳໄປສູ່ຂໍ້ສັງເກດ

- ໃຜເປັນຜູ້ເລີ້ມຕົ້ນໂອ້ລົມສົນທະນາ ພຣະເຢຊູຫລືຊັກຂາຍ? ແລະການເຊີນນັ້ນແປກບໍ່ ແປກຢ່າງໃດ?

7. **SO - ຂໍ້ສັງເກດ:** ເມື່ອພຣະເຢຊູຊົງແຫງນໜ້າຂຶ້ນຕົ້ນໄມ້ ກຸ່ມຄົນກໍແຫງນໜ້າຂຶ້ນໄປນຳພຣະອົງເພື່ອຢາກຮູ້ວ່າແມ່ນຫຍັງເກີດຂຶ້ນ ທັ້ງພຣະເຢຊູແລະກຸ່ມຊົນກໍເຫັນຊັກຂາຍພ້ອມໆ ກັນ ແຕ່ຊັກຂາຍກໍບໍ່ຢ້ານແລະບໍ່ຄິດລະອາຍເລີຍ ແຕ່ລາວກັບດີໃຈຫລາຍ.

SOQ - ຄຳຖາມນຳໄປສູ່ຂໍ້ສັງເກດ

- ທ່ານເຄີຍຢູ່ເປັນກຸ່ມ ເມື່ອມີຄົນນຶ່ງແນມໄປເບິ່ງສິ່ງໃດສິ່ງນຶ່ງ ແລະທຸກຄົນໃນກຸ່ມກໍແນມເບິ່ງນຳ ມີຢູ່ບໍ່?
- ຄົນໃນກຸ່ມພາກັນເຮັດແນວໃດ ເມື່ອເຫັນຊັກຂາຍຢູ່ເທິງຕົ້ນໄມ້?
- ຈາກເຣື່ອງນີ້ ພີ່ນ້ອງຄິດວ່ານອກຈາກພຣະເຢຊູແລ້ວ ມີໃຜອີກແດ່ທີ່ເຫັນຊັກຂາຍຢູ່ເທິງຕົ້ນໄມ້?
- ຊັກຂາຍຖືກກຸ່ມຊົນເພ່ງເບິ່ງ ລາວຮູ້ສຶກແນວໃດເມື່ອທຸກຄົນເບິ່ງລາວທີ່ຢູ່ໃນສະພາບນັ້ນ ເພາະລາວເປັນຄົນມີຕຳແໜ່ງສູງທີ່ປີນຂຶ້ນໄປຢູ່ເທິງຕົ້ນໄມ້ເໝືອນກັບເດັກນ້ອຍ?
- ຊັກຂາຍພຍາຍາມລີ້ ຫລືຫາຂໍ້ແກ່ຕົວຫລືບໍ່?
- ຈາກເຣື່ອງນີ້ ພີ່ນ້ອງຄິດວ່າຊັກຂາຍຮູ້ສຶກແນວໃດ?

8. **SO - ຂໍ້ສັງເກດ:** ຊັກຂາຍໄດ້ຕອບສນອງຕໍ່ພຣະເຢຊູໃນທັນທີ ເມື່ອພຣະອົງເອີ້ນລາວໃຫ້ຮີບລົງມາຈາກຕົ້ນໄມ້

SOQ - ຄຳຖາມນຳໄປສູ່ຂໍ້ສັງເກດ

- ເມື່ອພຣະເຢຊູເອີ້ນຊັກຂາຍລົງມາແລ້ວ ລາວໄດ້ເຮັດຫຍັງ?

9. **SO - ຂໍ້ສັງເກດ:** ເຖິງແມ່ນກຸ່ມຊົນຈະຈົ່ມແລະຕຳໜິທີ່ພຣະເຢຊູເຂົ້າໄປເປັນແຂກໃນເຮືອນຂອງຄົນບາບ ພຣະເຢຊູເຂົ້າໄປພັກຢູ່ກັບຄົນບາບ ຊີ້ໃຫ້ເຫັນວ່າພຣະອົງໄດ້ເຂົ້າໄປໃນເຮືອນຂອງຊັກຂາຍແລ້ວ ຕອນທີ່ຊັກຂາຍກັບພຣະເຢຊູຮູ້ວ່າກຸ່ມຊົນກຳລັງຈົ່ມແລະຕຳໜິວ່າພຣະເຢຊູເຂົ້າໄປໃນເຮືອນຊັກຂາຍນັ້ນຍັງບໍ່ຊັດແຈ້ງເທົ່າໃດ ແຕ່ຕໍ່ມາຕາມເຣື່ອງນີ້ ສິ່ງທີ່ພຣະເຢຊູເວົ້າກັບກຸ່ມຊົນຕໍ່ໜ້າຊັກຂາຍເຮົາເຫັນວ່າ ທັ້ງຊັກຂາຍແລະພຣະເຢຊູຮູ້ວ່າຄົນທັ້ງຫລາຍກຳລັງຈົ່ມແລະພາກັນຕຳໜິ ແຕ່ຊັກຂາຍບໍ່ສະເທືອນຕໍ່ການຈົ່ມແລະການຕຳໜິວິຈານຈາກຄົນເຫລົ່ານັ້ນ ເພາະສັກຂາຍມີຄວາມຍິນດີຕ້ອນຮັບພຣະເຢຊູ.

SOQ - ຄຳຖາມນຳໄປສູ່ຂໍ້ສັງເກດ

- ກຸ່ມຊົນຈີ່ມວ່າ ຊັກຂາຍເປັນຄົນນອກສິນທັມ ເຮົາຈຶ່ງຮູ້ວ່າຄົນເຫລົ່ານັ້ນຄິດວ່າເຂົາເຈົ້າດີກວ່າຊັກຂາຍ ພີ່ນ້ອງຄິດວ່າ ຈາກການຈົ່ມແລະຄວາມຄິດຂອງຝູງຊົນໄດ້ສິ່ງຜົນກະທົບຕໍ່ຊັກຂາຍຫລືບໍ?
- ຊັກຂາຍໄດ້ຕອບໂຕ້ ຕໍ່ການຈົ່ມຂອງຝູງຊົນຢ່າງໃດ?
- ມີວິທີຕອບໂຕ້ຢ່າງອື່ນ ຕໍ່ຄົນເຫລົ່ານີ້ອີກບໍ?
- ພວກເຮົາໄດ້ຮຽນຮູ້ຫຍັງແດ່ຈາກປະຕິກິຣິຍາ ການຕອບໂຕ້ຂອງຊັກຂາຍຕໍ່ຝູງຊົນ?

10. SO - **ຂໍ້ສັງເກດ:** ການທີ່ຝູງຊົນຈົ່ມແລະຕຳໜິວ່າພຣະເຢຊູເຂົ້າໄປໃນເຮືອນຂອງຄົນບາບ ຊີ້ໃຫ້ເຫັນວ່າຄົນເຫຼົ່ານັ້ນຄິດວ່າເຂົາເຈົ້າບໍ່ເປັນຄົນບາບ.

    SOQ - ຄຳຖາມນຳໄປສູ່ຂໍ້ສັງເກດ
    - ເຮົາໄດ້ເຫັນສະພາບຈິດວິນຍານຂອງຊັກຂາຍຈາກຄຳເວົ້າຂອງກຸ່ມຊົນຫລືບໍ່ ຄືແນວໃດ?
    - ຈາກການຈົ່ມແລະຕຳໜິໃຫ້ຊັກຂາຍ ຝູງຊົນຄິດຢ່າງໃດຕໍ່ຕົວເຂົາເຈົ້າເອງ?

11. SO - **ຂໍ້ສັງເກດ:** ຝູງຊົນເຮັດຄືວ່າເຂົາເຈົ້າເປັນຜູ້ "ຕິດຕາມ" ພຣະເຢຊູ ເຂົາເຈົ້າໄດ້ຕິດຕາມໄປ ຢ່າງບຸງດກັນໄປ ເຖິງແມ່ນການຈົ່ມແລະການຕຳໜິຂອງເຂົາເຈົ້າເຮັດໃຫ້ເຫັນວ່າ ເຂົາເຈົ້າສົນໃຈທີ່ພຣະເຢຊູຈະໄປຮັບທານອາຫານຮ່ວມກັບໃຜ ແຕ່ຝູງຊົນຄົງຄິດວ່າພຣະເຢຊູຄວນຈະໄປໃນເຮືອນຂອງເຂົາເຈົ້າກໍດີກວ່າ ແທ້ຈິງແລ້ວຝູງຊົນບໍ່ນັບຖືພຣະເຢຊູເລີຍ ເພາະເຮົາເຫັນໄດ້ຈາກເຣື່ອງນີ້ວ່າເຂົາເຈົ້າບໍ່ເຫັນດີນຳພຣະອົງ.

    SOQ - ຄຳຖາມນຳໄປສູ່ຂໍ້ສັງເກດ
    - ໃນຕອນທຳອິດຂອງເຣື່ອງ ມີຫຍັງແດ່ທີ່ບອກວ່າຄົນເຫລົ່ານັ້ນເປັນຜູ້ຕິດຕາມພຣະເຢຊູ?
    - ຕອນທີ່ຝູງຊົນກຳລັງບຸງດກັນໄປມາ ຈາກການກະທຳຂອງເຂົາເຈົ້ານີ້ ເຂົາເຈົ້າອາດຈະສັງເກດເຫັນບໍ່ວ່າ ພຣະເຢຊູກຳລັງເວົ້າກັບໃຜເປັນການສ່ວນຕົວ ໃນຕອນນີ້ໄດ້ຊີ້ບອກໃຫ້ເຮົາເຫັນຫຍັງແດ່?
    - ຕາມຄວາມຈິງແລ້ວ ຝູງຊົນໄດ້ສະແດງຄວາມໂຄຣິບນັບຖືພຣະເຢຊູຫລືບໍ່?

12. SO - **ຂໍ້ສັງເກດ:** ຝູງຊົນນີ້ເປັນກຸ່ມຊົນທີ່ມັກຈົ່ມແລະຕຳໜິ ເຂົາເຈົ້າມີຄວາມເຊື່ອໃນພຣະເຢຊູ ແຕ່ບໍ່ກ້າທີ່ຈະຖາມພຣະເຢຊູໂດຍຕົງ ເຂົາເຈົ້າຍັງບໍ່ຮູ້ອີກວ່າພຣະອົງມີຣິດເດດ ເຂົາເຈົ້າຄິດວ່າພຣະເຢຊູບໍ່ໄດ້ຍິນການຈົ່ມວ່າຂອງເຂົາເຈົ້າ

    SOQ - ຄຳຖາມນຳໄປສູ່ຂໍ້ສັງເກດ
    - ຈື່ໄດ້ບໍ່ວ່າ ພວກກຸ່ມຊົນສັບສົນໃຈ ດັ່ງນັ້ນເຂົາເຈົ້າຈຶ່ງຖາມວ່າ ເປັນດ້ວຍເຫດໃດພຣະເຢຊູຈຶ່ງປະເຂົາເຈົ້າ ເພື່ອເຂົ້າໄປໃນເຮືອນຂອງຄົນບາບ? ບໍ່, ເຂົາເຈົ້າບໍ່ໄດ້ຖາມດອກ, ຄັນຊັ້ນເຂົາເຈົ້າເຮັດຫຍັງ?
    - ພຶດຕິກັມຂອງຝູງຊົນໄດ້ຊີ້ໃຫ້ເຫັນວ່າ ເຂົາເຈົ້າໂຄຣິບພຣະເຢຊູຫລືບໍ?

13. SO - **ຂໍ້ສັງເກດ:** ຊັກຂາຍເປັນຄົນຮັ່ງມີ ສະແດງໃຫ້ເຫັນວ່າລາວຄິດຢ່າງໃດ ທີ່ລາວສເນີຈະໃຫ້ຊັບ(ເງິນ)ແກ່ຄົນຍາກຈົນເຄິ່ງນຶ່ງ

    SOQ - ຄຳຖາມນຳໄປສູ່ຂໍ້ສັງເກດ
    - ແມ່ນຫຍັງຄືຄຳສັນຍາທີ່ມີນ້ຳໃຈຂອງຊັກຂາຍ?
    - ເຮົາໄດ້ເຫັນທັສນະຄະຕິ(ການເບິ່ງເຫັນ) ຂອງຊັກຂາຍຫລືບໍ?

14. SO - **ຂໍ້ສັງເກດ:** ຊັກຂາຍປະກາດວ່າ ຖ້າລາວໄດ້ສໍ້ໂກງເອົາຂອງຜູ້ໃດ ລາວຈະສົ່ງຄືນໃຫ້ສີ່ຕໍ່ ລາວບໍ່ໄດ້ເນັ້ນ

ວ່າ "ຖ້າ" ລາວໄດ້ເຮັດຜິດຢ່າງແທ້ຈິງ ກໍພ້ອມທີ່ຈະສົ່ງເງິນຄືນໃຫ້ສີ່ຕໍ່ ແຕ່ຊັກຂາຍສັນຍາຕາມຄວາມເຂົ້າໃຈ ຂອງລາວເອງ. ບາງຄົນອາດຈະເວົ້າວ່າ ຊັກຂາຍໄດ້ໃຫ້ທານແກ່ຄົນຍາກຈົນຢູ່ແລ້ວ ແຕ່ເບິ່ງຈາກຄວາມເຫັນ ຂອງຝູງຊົນເຮັດໃຫ້ເຮົາຮູ້ວ່າຊັກຂາຍເປັນຄົນແນວໃດ. ຖ້າຊັກຂາຍຜູ້ຊຶ່ງເປັນເຖິງນາຍດ່ານເກັບພາສີໄດ້ແຈກ ຢາຍເງິນເຄິ່ງນຶ່ງທີ່ລາວມີໃຫ້ແກ່ຄົນຍາກຈົນ ບາງເທື່ອລາວອາດຈະເຮັດໄປແລ້ວໂດຍທີ່ຄົນອື່ນບໍ່ຮູ້ນຳ. ແຕ່ການ ທີ່ຊັກຂາຍຈະສົ່ງເງິນຄືນສີ່ຕໍ່ໃຫ້ແກ່ຜູ້ທີ່ລາວເຄີຍໂກງນັ້ນ ກໍອາດຈະເຮັດໃຫ້ຝູງຊົນເຫັນວ່າລາວເປັນຄົນຊອບທັມ ກໍເປັນໄດ້. ສິ່ງທີ່ເຮົາຮູ້ຈັກຈາກເຣື່ອງນີ້ແມ່ນ ໃນຈຸດໆ ນຶ່ງ ຊັກຂາຍຍອມຮັບວ່າລາວເປັນຄົນບາບ ແລະຢາກໃຫ້ ທຸກສິ່ງຖືກຕ້ອງບໍ່ຖືກຕຳໜິ, ພຣະເຢຊູຊົງກ່າວວ່າ ຄວາມພົ້ນໄດ້ເກີດຂຶ້ນແລ້ວໃນມື້ນີ້ ເຮົາກໍໄດ້ເຫັນວ່າຊັກຂາຍ ໄດ້ສະແດງອອກເຖິງຄວາມມີນ້ຳໃຈຢ່າງຫລວງຫລາຍ.

SOQ - ຄຳຖາມນຳໄປສູ່ຂໍ້ສັງເກດ

- ຈາກເຣື່ອງນີ້ ຊັກຂາຍຖືກຈັບໄດ້ແລະຕ້ອງຖືກລົງໂທດຫລືບໍ່? ແລະໃນຕອນນີ້ລາວພຍາຍາມໃຊ້ໜີ້ ເພື່ອເປັນການຊິດເຊີຍເພື່ອຈະພົ້ນຈາກຄວາມຜິດ ແມ່ນບໍ່?
- ຈາກເຣື່ອງນີ້ ພີ່ນ້ອງເຫັນບໍ່ວ່າຊັກຂາຍເຄີຍເອົາເງິນໃຫ້ຄົນຍາກຈົນມາກ່ອນ ຫລືລາວຫາກໍຕັດສິນໃຈ ໃນເວລາທີ່ພຣະເຢຊູມາຢ້ຽມຢາມລາວ?
- ຈາກຄວາມເຫັນຂອງຝູງຊົນ ຊັກຂາຍເປັນຄົນສັດຊື່ໃນການເກັບພາສີ ແລະແບ່ງເງິນເຄິ່ງນຶ່ງທີ່ລາວເກັບ ໄດ້ໃຫ້ແກ່ຄົນຍາກຈົນຫລືບໍ່?
- ຖ້າຊັກຂາຍຕ້ອງໄດ້ໄປຫາຄົນທີ່ລາວເຄີຍໂກງເຂົາເຈົ້າເພື່ອເອົາເງິນຄືນໃຫ້...ພີ່ນ້ອງເຫັນວ່າຍາກຫລືບໍ່?
- ຈາກເຣື່ອງນີ້ ພີ່ນ້ອງເຫັນບໍ່ວ່າການໄດ້ພົບກັບພຣະເຢຊູເຮັດໃຫ້ຊີວິດຂອງຊັກຂາຍປ່ຽນໃໝ່ ຊີວິດລາວ ໄດ້ປ່ຽນໄປຢ່າງໃດແດ່?

15. **SO - ຂໍ້ສັງເກດ:** ທຳອິດເຮົາຄິດວ່າຊັກຂາຍອາດຈະພຍາຍາມຊື້ການຍອມຮັບຈາກພຣະເຢຊູ ດ້ວຍການໃຫ້ເງິນ ແກ່ຄົນຍາກຈົນແລະສິ່ງຄືນແກ່ຜູ້ທີ່ລາວໂກງ ແຕ່ເຮົາຮູ້ວ່າຊັກຂາຍໄດ້ເຊື່ອໃນພຣະເຢຊູໃນມື້ນັ້ນເພາະພຣະເຢຊູ ເວົ້າກັບລາວວ່າ, "ມື້ນີ້ຄວາມພົ້ນໄດ້ມາເຖິງເຮືອນຫລັງນີ້ແລ້ວ" ຊັກຂາຍແມ່ນຄົນດຽວໃນເຣື່ອງນີ້ທີ່ຍອມຮັບວ່າ ຕົນເອງເປັນຄົນບາບແລະເປັນຄົນດຽວໃນມື້ນັ້ນທີ່ໄດ້ຮັບຄວາມພົ້ນ.

SOQ - ຄຳຖາມນຳໄປສູ່ຂໍ້ສັງເກດ

- ມີຈັກຄົນໃນເຣື່ອງ ທີ່ເບິ່ງຄືວ່າສົນໃຈໃນພຣະເຢຊູ?
- ພີ່ນ້ອງຄິດວ່າຊັກຂາຍພຍາຍາມເປັນຄົນເອົາໃຈພຣະເຢຊູຫລືບໍ່?
- ມີຫຍັງແດ່ໃນເຣື່ອງທີ່ຊ່ວຍໃຫ້ເຮົາຮູ້ວ່າ ຊັກຂາຍໄດ້ປ່ຽນຊີວິດໃໝ່ຝ່າຍວິນຍານຫລືບໍ່?
- ປໂຍກທີ່ພຣະເຢຊູເວົ້າກັບຊັກຂາຍ ຊີ້ໃຫ້ເຫັນວ່າລາວໄດ້ກັບໃຈເຊື່ອແລ້ວແມ່ນບໍ່?
- ຜູ້ໃດໃນເຣື່ອງນີ້ທີ່ຍອມຮັບວ່າຕົນເປັນຄົນບາບ?
- ຜູ້ໃນເຣື່ອງທີ່ເຫັນວ່າຕົນບໍ່ເປັນຄົນບາບ?
- ທຸກຄົນທີ່ຢູ່ໃນເຣື່ອງ ແມ່ນໃຜທີ່ໄດ້ຮັບຄວາມພົ້ນ?
- ເຮົາໄດ້ເຫັນຄວາມແຕກຕ່າງແນວໃດຈາກຄົນທີ່ມາພົບພຣະເຢຊູ ພວກນຶ່ງເຊື່ອ ແຕ່ອີກພວກນຶ່ງບໍ່ເຊື່ອ?

16. **SO - ຂໍ້ສັງເກດ:** ພຣະເຢຊູເວົ້າກັບຊັກຂາຍວ່າ, "ມື້ນີ້ຄວາມພົ້ນໄດ້ມາເຖິງເຮືອນຫລັງນີ້ແລ້ວ" ພຣະອົງຊົງ ກ່າວຕໍ່ໄປວ່າ, "*ເພາະຄົນນີ້ກໍເປັນລູກຫລານຂອງອັບຣາຮາມ*" ຕອນນີ້ເຫັນວ່າມີຄົນອື່ນໆ ຢູ່ນຳ ບໍ່ພຽງເທົ່ານັ້ນ ເຮົາເຫັນວ່າພຣະເຢຊູກຳລັງຫັນໜ້າໄປເວົ້າກັບໃຜ ແລະພຣະອົງຊົງປົກປ້ອງຊັກຂາຍຈາກການຈົ່ມແລະຕຳໜິ

ຂອງຝູງຊົນກຸ່ມນັ້ນ.

SOQ - ຄຳຖາມນຳໄປສູ່ຂໍ້ສັງເກດ

- ໃນເຣື່ອງນີ້ ຂະນະທີ່ຊັກຂາຍໄດ້ຮັບຄວາມພົ້ນ ເບິ່ງຄືວ່າມີແຕ່ສອງຄົນເທົ່ານັ້ນທີ່ໂອ້ລົມກັນ ແຕ່ເມື່ອອີງ ພຣະເຢຊູກ່າວວ່າ, "ເພາະຄົນນີ້ກໍເປັນລູກຫລານຂອງອັບຣາຮາມ" ພີ່ນ້ອງເຫັນໃນຕອນນີ້ວ່າມີຫລາຍຄົນ ບ່ທີ່ຢູ່ນຳກັນ?
- ທຳອິດພຣະເຢຊູເວົ້າກັບຊັກຂາຍທ່ານັ້ນ ຕ່ມາພຣະອົງເວົ້າ "ຄົນນີ້" ພີ່ນ້ອງຄິດວ່າ "ຄົນນີ້" ໝາຍເຖິງໃຜ?
- ພຣະເຢຊູຊົງປົກປ້ອງຊັກຂາຍຫລືບ່?
- ພຣະເຢຊູພຍາຍາມໃຫ້ຄົນເຫລ່ານັ້ນເຫັນເຂົາເຈົ້າເອງແລະເຫັນຊັກຂາຍຢ່າງໃດ?

17. **SO - ຂໍ້ສັງເກດ:** ຖ້ອຍຄຳຂອງພຣະເຢຊູທີ່ບອກເປົ້າໝາຍຂອງການສະເດັດມາວ່າ, "*ເພາະວ່າບຸດມະນຸດມາ ເພື່ອຈະຊອກຫາແລະໂຜດເອົາຜູ້ທີ່ຫລົງເສັ້ງໄປແລ້ວນັ້ນໃຫ້ລອດພົ້ນ*" ທ່ານໄດ້ເຫັນຫຍັງໃນປໂຍກນີ້ ຊຶ່ງເປັນຖ້ອຍຄຳແບບສລຸບ?

SOQ - ຄຳຖາມນຳໄປສູ່ຂໍ້ສັງເກດ

- ພຣະເຢຊູຊົງກ່າວໃນຕອນທ້າຍເຖິງເປົ້າໝາຍທີ່ພຣະອົງລົງມາໃນໂລກນີ້ກໍເພື່ອ, "*ຈະຊອກຫາແລະໂຜດ*
- *ເອົາຜູ້ທີ່ຫລົງເສັ້ງໄປແລ້ວນັ້ນໃຫ້ລອດພົ້ນ*" ທ່ານເຫັນຫຍັງໃນປໂຍກສລຸບນີ້?
- ທ່ານຄິດບ່ວ່າ ພຣະເຢຊູພຍາຍາມໃຫ້ຝູງຊົນສຳຣວດເບິ່ງຕົນເອງ?
- ຈົ່ງອະທິບາຍຄຳເຫັນຂອງທ່ານ ໃນຖ້ອຍຄຳຂອງພຣະເຢຊູຕອນນີ້?

18. **SO - ຂໍ້ສັງເກດ:** *ໃນ*ເຣື່ອງນີ້ ເຮົາໄດ້ເຫັນວ່າພຣະເຢຊູ ພຽງແຕ່ເປັນຜູ້ນຳທີ່ສຳຄັນຄົນນຶ່ງ ທີ່ມີຄວາມເປັນຫ່ວງ ຊາຍຄົນນຶ່ງທີ່ຄົນທັ້ງຫລາຍກຽດຊັງລາວ. ພຣະເຢຊູຮູ້ຈັກຊື່ຂອງຊາຍຄົນນັ້ນດີ ພຣະເຢຊູບ່ເຫັນດີນຳຄວາມຄິດ ຂອງຝູງຊົນເຫລ່ານັ້ນພຣະອົງຮູ້ດີເຖິງການຈົ່ມຢູ່ໃນໃຈຂອງເຂົາເຈົ້າ. ເຊັ່ນດຽວກັນ ພຣະເຢຊູສາມາດທີ່ຈະເວົ້າ ໄດ້ວ່າ ຊັກຂາຍໄດ້ຮັບຄວາມພົ້ນແລ້ວໃນມື້ນັ້ນ. ຈາກເຫດການໃນເຣື່ອງນີ້ໄດ້ຊີ້ໃຫ້ເຮົາເຫັນວ່າພຣະເຢຊູຊົງເປັນ ພຣະເຈົ້າ.

SOQ - ຄຳຖາມນຳໄປສູ່ຂໍ້ສັງເກດ:

- *ເຮົາໄດ້ເຫັນພຣະເຢຊູເຮັດຫຍັງໃນເຣື່ອງນີ້ ທີ່ຊີ້ໃຫ້ເຮົາເຫັນວ່າພຣະອົງເປັນບຸກຄົນປະເພດໃດ?*
- *ມີສິ່ງໃດບ່ທີ່ພຣະເຢຊູໄດ້ເວົ້າແລະໄດ້ກະທຳທີ່ບອກເຮົາວ່າພຣະອົງບ່ພຽງແຕ່ເປັນມະນຸດເທົ່ານັ້ນ? ຍົກຕົວຢ່າງເຊັ່ນ; ແມ່ນຜູ້ໃດທີ່ຢັ່ງຮູ້ເຖິງຄວາມຄິດຂອງຄົນອື່ນ ແລະຍັງຮູ້ອີກວ່າຄວາມບາບຂອງຜູ້ໃດໄດ້ຖືກ ຍົກແລ້ວ?*

19. **SO - ຂໍ້ສັງເກດ:** ຕອນທຳອິດ ເຮົາເຫັນໄດ້ຢ່າງຊັດແຈ້ງວ່າຊັກຂາຍຕາມຫາພຣະເຢຊູ ແຕ່ຕອນຫລັງເຮົາ ໄດ້ເຫັນວ່າພຣະເຢຊູກັບກາຍເປັນຜູ້ຕາມຫາຊັກຂາຍ.

SOQ - ຄຳຖາມນຳໄປສູ່ຂໍ້ສັງເກດ

- ມາເຖິງຕອນນີ້ ທ່ານຈະເວົ້າໄດ້ບ່ວ່າຊັກຂາຍກຳລັງຕາມຫາພຣະເຢຊູ?
- ແມ່ນຫຍັງເປັນສິ່ງທີ່ບົ່ງບອກວ່າລາວຕາມຫາພຣະເຢຊູ?
- ອີກເທື່ອນຶ່ງ ທ່ານສາມາດເວົ້າໄດ້ບ່ວ່າ ພຣະເຢຊູຊົງຕາມຫາຊັກຂາຍ?
- ແມ່ນຫຍັງທີ່ເປັນຕົວຢ່າງບົ່ງບອກວ່າ ພຣະເຢຊູຊົງຕາມຫາຊັກຂາຍ?
- ແມ່ນຫຍັງກັນແທ້? ຊັກຂາຍຕາມຫາພຣະເຢຊູ ຫລືວ່າພຣະເຢຊູຕາມຫາຊັກຂາຍ?

- ຖືກຕ້ອງທັງສອງກໍຣະນີແມ່ນບໍ່? ຫລືທ່ານຄິດວ່າຢ່າງໃດ?

ການນຳມາໃຊ້ໃນຊີວິດຝ່າຍວິນຍານ ຕາມທີ່ເຮົາເຫັນ:

ຂັ້ນຕອນຕໍ່ໄປນີ້ແມ່ນການຕຽມການນຳໃຊ້ໃນຊີວິດຝ່າຍວິນຍານ ເພື່ອຊ່ວຍໃຫ້ທ່ານເຫັນວ່າການນຳໃຊ້ແຕ່ລະຢ່າງຈະຕ້ອງຢູ່ໃນຂໍ້ສັງເກດຂໍ້ໃດຂໍ້ນຶ່ງ ພວກເຮົາຈະວາງລາຍການຂໍ້ສັງເກດອີກເທື່ອ ແຕ່ລະເທື່ອຈະຕາມມາດ້ວຍການນຳໃຊ້ໃນໃນຊີວິດຝ່າຍວິນຍານທີ່ກ່ຽວຂ້ອງກັນຫລາຍທີ່ສຸດ ພວກເຮົາຈະຊ່ວຍໃຫ້ທ່ານຕັ້ງຄຳຖາມເພື່ອນຳໄປສູ່ການນຳໃຊ້ ຊ່ວງນີ້ທ່ານຈະພົບຂໍ້ສັງເກດແລະຕາມມາດ້ວຍການນຳໃຊ້ ແລ້ວຈາກນັ້ນແມ່ນຄຳຖາມທີ່ນຳໄປສູ່ການນຳໃຊ້.

ພວກເຮົາເຮັດເຊັ່ນນີ້ກໍເພື່ອໃຫ້ທ່ານເຫັນວິທີການໃຊ້ຄຳຖາມເພື່ອນຳຜູ້ຟັງໄປສູ່ຂໍ້ສັງເກດ ຈາກຂໍ້ສັງເກດໄປສູ່ການນຳໃຊ້ແລະຄຳຖາມທີ່ນຳໄປສູ່ການນຳໃຊ້ ການຕັ້ງຄຳຖາມເພື່ອນຳພາໃຫ້ຜູ້ຟັງໄດ້ຄົ້ນພົບຂຸມຊັບເປັນວິທີການທີ່ທ້າທາຍທີ່ສຸດຂອງການເລົ່າເຣື່ອງເຈາະໃຈ.

SO= Spiritual Observation ຂໍ້ສັງເກດ (ສັງເກດ ຫລືຄົ້ນຫາຂຸມຊັບຝ່າຍວິນຍານ)
SA= Spiritual Application ການນຳໃຊ້ໃນຊີວິດຝ່າຍວິນຍານ

1. SO - **ຂໍ້ສັງເກດ:** ຄົນທັງຫລາຍທີ່ສົນໃຈໃນພຣະເຢຊູ ໄດ້ບັງຊັກຂາຍບໍ່ໃຫ້ເຫັນພຣະເຢຊູ ແລະເຮັດໃຫ້ລາວເຂົ້າໄປໃກ້ພຣະເຢຊູບໍ່ໄດ້
   SA - **ການນຳໃຊ້ໃນຊີວິດຝ່າຍວິນຍານ:** ບາງຄັ້ງໃນການຕິດຕາມພຣະເຢຊູ ເຮົາໄດ້ເຂົ້າໄປໃກ້ພຣະເຢຊູ ທຳຕົວເປັນຄົນທີ່ເຄັ່ງຄັດ ເຮັດໃຫ້ຄົນອື່ນບໍ່ຢາກມາພົບພຣະເຢຊູ ໂດຍທີ່ເຮົາເອງບໍ່ຮູ້ສຶກຕົວ

2. SO - **ຂໍ້ສັງເກດ:** ຊັກຂາຍເປັນຄົນເຕັ້ຍ ແຕ່ມີຕຳແໜ່ງສູງ ເປັນຄົນຮັ່ງມີ ແລະເປັນຫົວໜ້າຄົນເກັບພາສີ ລາວໄດ້ຕັ້ງໃຈຢ່າງແນ່ວແນ່ທີ່ຈະເຫັນພຣະເຢຊູ ແລະໃນເມື່ອບໍ່ສາມາດເຫັນພຣະອົງໄດ້ ລາວຈຶ່ງຫາທາງອື່ນ.
   SA - **ການນຳໃຊ້ໃນຊີວິດຝ່າຍວິນຍານ:** ເມື່ອເຮົາຢາກຕິດຕາມພຣະເຢຊູ ເຮົາຕ້ອງພ້ອມແລ້ວທີ່ຈະຖິ້ມຄວາມເຍີ້ຫຍິ່ງ ຫລືຄວາມໂອ້ອວດ ແລະເຮັດໃນສິ່ງທີ່ຈະຊ່ວຍໃຫ້ເຮົາສແວງຫາພຣະອົງ ແລະຕິດຕາມພຣະອົງ.

3. SO - **ຂໍ້ສັງເກດ:** ແທນທີ່ຊັກຂາຍຈະອາຍເພາະຖືກຄົນຫົວເຍາະເຍີ້ຍ ແຕ່ຊາຍຕຳແໜ່ງສູງໄດ້ແລ່ນໄປຕາມທາງແລະປີນຂຶ້ນຕົ້ນໄມ້ ສິ່ງເຫລົ່ານັ້ນບໍ່ໄດ້ເຮັດໃຫ້ຊັກຂາຍເລີກລົ້ມຄວາມຕັ້ງໃຈຂອງລາວເລີຍ
   SA - **ການນຳໃຊ້ໃນຊີວິດຝ່າຍວິນຍານ:** ເຮົາຕ້ອງບໍ່ຍອມໃຫ້ຄວາມໂອ້ອວດ ຢ້ານກົວແລະອັບອາຍຕໍ່ຄຳເວົ້າຂອງຄົນອື່ນມາກີດກັ້ນເຮົາບໍ່ໃຫ້ຕິດຕາມພຣເຢຊູ ເຖິງຄົນທັງຫລາຍຄິດວ່າເຮົາເປັນຄົນໂງ່ ເປັນຄົນຕ່ຳຕ້ອຍ ແຕ່ໃຫ້ເຮົາເດີນມຸ້ງໜ້າຕໍ່ໄປໃນການຕິດຕາມພຣະອົງ.

4. SO - **ຂໍ້ສັງເກດ:** ເຮົາໄດ້ເຫັນພຣະເຢຊູຊົງເດີນມາຕາມທາງພ້ອມທັງຝູງຊົນທີ່ບຽດພຣະອົງ ເຖິງແມ່ນເຂົາເຈົ້າຈະຕຳພຣະອົງເຊໄປມາ ແຕ່ພຣະອົງໄດ້ເບິ່ງຂ້າມເຂົາເຈົ້າແລະສັງເກດເຫັນຊາຍຄົນນຶ່ງຢູ່ເທິງຕົ້ນໄມ້ທີ່ຫ່າງໄກ
   SA - **ການນຳໃຊ້ໃນຊີວິດຝ່າຍວິນຍານ:** ຫລາຍຄົນໃນມື້ນັ້ນພຍາຍາມເຮັດໃຫ້ພຣະເຈົ້າພໍພຣະທັຍ ທຳທ່າສົນໃຈໃນພຣະເຢຊູ ແຕ່ພຣະເຢຊູບໍ່ໄດ້ສົນໃຈພວກເຂົາເພາະພຣະອົງຊົງເລືອກຄົນດຽວເທົ່ານັ້ນ. ຄົນທັງຫລາຍໃນໂລກທຳທ່າເໝືອນສົນໃຈໃນພຣະເຈົ້າ ແຕ່ເຂົາເຈົ້າບໍ່ມີຄວາມຈິງໃຈເໝືອນກັບຝູງຊົນໃນເຣື່ອງນີ້ ພຣະເຢຊູຊົງເອີ້ນເອົາຄົນທີ່ມີຄວາມຈິງໃຈ ພຣະເຈົ້າຊົງຮູ້ຈັກໃຈເຮົາ ພຣະອົງຮູ້ວ່າເຮົາໄດ້ຕິດຕາມພຣະອົງແທ້ຈິງຫລືບໍ່.

5. SO - **ຂໍ້ສັງເກດ:** ພຣະເຢຊູຊົງສົນພຣະທັຍຊັກຂາຍຢ່າງແທ້ຈິງ ເພາະພຣະອົງຊົງເອີ້ນຊື່ຂອງລາວ
   SA - **ການນຳໃຊ້ໃນຊີວິດຝ່າຍວິນຍານ:** ໃນຈຸດນີ້ ເຮົາໄດ້ເຫັນພຣະເຈົ້າຮູ້ຈັກມະນຸດເປັນສ່ວນຕົວ ຊົງຮູ້ວ່າເຮົາແມ່ນໃຜ ແລະຊື່ວ່າແນວໃດ ຖ້າເຮົາຫາກເຂົ້າໃຈວ່າພຣະເຈົ້າຊົງເມດຕາທຸກຄົນທີ່ສແວງຫາພຣະອົງ ເຮົາກໍປາຖນາຢາກໃຫ້ພຣະອົງຊົງຮູ້ຈັກຊື່ຂອງເຮົາ ການທີ່ພຣະອົງຊົງຮູ້ຈັກຊັກຂາຍກໍເຮັດໃຫ້ເຮົາມີຄວາມຮູ້ສຶກອົບອຸ່ນໃຈ ຊັກຂາຍມີຄວາມກະຕືລືລົ້ນຢາກຈະພົບກັບພຣະເຢຊູ ດັ່ງນັ້ນພຣະອົງຈຶ່ງຊົງເອີ້ນຊື່ຂອງລາວ ລາວກໍຕອບຮັບພຣະອົງດ້ວຍຄວາມຍິນດີ.

6. SO - **ຂໍ້ສັງເກດ:** ພຣະເຢຊູຊົງເຊີນພຣະອົງເອງເຂົ້າໄປໃນເຮືອນຂອງຊັກຂາຍ ຊຶ່ງຫລາຍວັທນະທັມເຫັນວ່າບໍ່ສົມຄວນ ແຕ່ສຳລັບພຣະເຢຊູພຣະອົງຊົງຮູ້ລ່ວງໜ້າແລ້ວວ່າຈະມີຫຍັງເກີດຂຶ້ນ.
   SA - **ການນຳໃຊ້ໃນຊີວິດຝ່າຍວິນຍານ:** ການທີ່ພຣະເຢຊູຊົງພໍພຣະທັຍທີ່ຈະໄປຢູ່ກັບຄົນທີ່ສແວງຫາພຣະອົງ ເປັນເຣື່ອງທີ່ຊົມຊື່ນຍິນດີແລະໜູນໃຈຫລາຍ.

7. SO - **ຂໍ້ສັງເກດ:** ການທີ່ພຣະເຢຊູຊົງແຫງນພຣະພັກຂຶ້ນໄປເທິງຕົ້ນໄມ້ ຍ່ອມເຮັດໃຫ້ຝູງຊົນແຫງນໜ້າໄປເບິ່ງນຳວ່າກຳລັງເກີດຫຍັງຂຶ້ນ ທັງພຣະເຢຊູແລະຝູງຊົນກໍເຫັນຊັກຂາຍພ້ອມໆ ກັນ ແຕ່ຊັກຂາຍບໍ່ຮູ້ສຶກອັບອາຍແຕ່ຢ່າງໃດ ແຕ່ລາວກັບມີຄວາມດີໃຈຫລາຍ.
   SA - **ການນຳໃຊ້ໃນຊີວິດຝ່າຍວິນຍານ:** ເມື່ອຄົນທີ່ບໍ່ເຊື່ອ ຫລືຜູ້ຕິດຕາມພຣະເຈົ້າຢ່າງບໍ່ສັດຊື່ເຫັນເຮົາ ແລະ ເຫັນວ່າເຮົາຢາກຮູ້ຈັກພຣະເຈົ້າເຂົາເຈົ້າເຫັນວ່າເປັນເຣື່ອງໄຮ້ປໂຍດ. ຢ່າຍອມໃຫ້ຄວາມຄິດຂອງຄົນເຫລ່ານັ້ນມີອິດທິພົນຢູ່ເໜືອຊີວິດເຮົາ ເມື່ອເຮົາຮູ້ວ່າພຣະເຈົ້າຊົງສົນພຣະທັຍເຮົາເປັນສ່ວນຕົວ ໃຫ້ເຮົາຕອບສນອງພຣະອົງດ້ວຍຄວາມຍິນດີ.

8. SO - **ຂໍ້ສັງເກດ:** ຊັກຂາຍບໍ່ໄດ້ລັງເລໃຈທີ່ຈະຕອບຮັບພຣະເຢຊູ ເມື່ອພຣະອົງເອີ້ນໃຫ້ລາວລົງມາຈາກຕົ້ນໄມ້.
   SA - **ການນຳໃຊ້ໃນຊີວິດຝ່າຍວິນຍານ:** ຖ້າພຣະເຈົ້າຊົງຮຽກເອີ້ນໃຫ້ເຮົາເຮັດແນວໃດແນວນຶ່ງ ເຮົາຕ້ອງຕອບສນອງຕາມທີ່ພຣະອົງສັ່ງໃນທັນທີ ຄວາມເຊື່ອຟັງທີ່ເສີຍຊ້າ ອາດຈະເທົ່າກັບວ່າເຮົາບໍ່ເຊື່ອພຣະອົງ.

9. SO - **ຂໍ້ສັງເກດ:** ເຖິງແມ່ນຝູງຊົນຈະຈົ່ມ ຕຳໜິວ່າພຣະເຢຊູເຂົ້າໄປເປັນແຂກໃນເຮືອນຂອງຄົນບາບ ເຂົ້າໄປພັກຢູ່ກັບຄົນບາບ ຊີ້ໃຫ້ເຮົາເຫັນວ່າ ພຣະອົງໄດ້ເຂົ້າໄປໃນເຮືອນນັ້ນແລ້ວ.
   ຕອນທີ່ຊັກຂາຍກັບພຣະເຢຊູຮູ້ວ່າ ຝູງຊົນກຳລັງຈົ່ມແລະຕຳໜິທີ່ພຣະເຢຊູເຂົ້າໄປໃນເຮືອນຊັກຂາຍນັ້ນ ກໍຍັງບໍ່ຊັດແຈ້ງເທົ່າໃດ ແຕ່ຕໍ່ມາເມື່ອພຣະເຢຊູຊົງກ່າວຕໍ່ຄົນທັງຫລາຍຕໍ່ໜ້າຊັກຂາຍ ເຮົາຈຶ່ງເຫັນວ່າຊັກຂາຍກັບພຣະເຢຊູກຳລັງຖືກຝູງຊົນຕຳໜິ ຊັກຂາຍບໍ່ສະທ້ານຕໍ່ການຕຳໜິຂອງຄົນເຫລ່ານັ້ນ ແຕ່ລາວຍິນດີຕ້ອນຮັບພຣະອົງ.
   SA - **ການນຳໃຊ້ໃນຊີວິດຝ່າຍວິນຍານ:** ເມື່ອເຮົາເລີ້ມຕົ້ນດີແລ້ວ ໃຫ້ເຮົາດຳເນີນຕໍ່ໄປ ເຖິງແມ່ນຝູງຊົນຫລືຄົນທີ່ເຄັ່ງສາສນາຈະຈົ່ມຫລືຕຳໜິເຮົາແນວໃດກໍຕາມ.

10. SO - **ຂໍ້ສັງເກດ:** ການທີ່ຄົນຕຳໜິວ່າພຣະເຢຊູເຂົ້າໄປໃນເຮືອນຄົນບາບ ສະແດງວ່າຄົນເຫລ່ານັ້ນບໍ່ຄິດວ່າເຂົາເຈົ້າເປັນຄົນບາບ.
    SA - **ການນຳໃຊ້ໃນຊີວິດຝ່າຍວິນຍານ:** ຄົນທີ່ເຍີ້ຫຍິ່ງ ໂອ້ອວດ ມັກຈະພິພາກສາຄົນອື່ນ ຢ່າເປັນເໝືອນຄົນທີ່ໂອ້ອວດທີ່ຄິດວ່າຕົນເອງບໍ່ບາບ.

11. **SO - ຂໍ້ສັງເກດ:** ຝູງຊົນເຮັດເໝືອນກັບວ່າເຂົາເຈົ້າ "ຕິດຕາມພຣະເຢຊູ" ເຂົາເຈົ້າຕາມໄປ ບຸດກັນໄປ ແມ່ນແຕ່ການຈົ່ມແລະການຕຳໜິຂອງເຂົາເຈົ້າທີ່ວ່າພຣະເຢຊູໄປຮ່ວມຮັບປະທານອາຫານກັບໃຜ ກໍເໝືອນກັບວ່າເຂົາເຈົ້າສົນໃຈພຣະເຢຊູ ຝູງຊົນນັ້ນຍັງຄິດອີກວ່າພຣະເຢຊູຄວນໄປຮັບປະທານອາຫານໃນເຮືອນເຂົາເຈົ້າ ແທ້ຈິງແລ້ວເຂົາເຈົ້າບໍ່ໄດ້ໂຄຣົບນັບຖືພຣະເຢຊູເລີຍ ເພາະເຂົາເຈົ້າບໍ່ເຫັນດີກັບການກະທຳຂອງພຣະອົງ.
SA - ການນຳໃຊ້ໃນຊີວິດຝ່າຍວິນຍານ: ບໍ່ແມ່ນທຸກຄົນທີ່ເວົ້າວ່າເຂົາເຈົ້າໄດ້ຕິດຕາມພຣະເຢຊູຫລືໄດ້ຮູ້ຈັກກັບພຣະເຢຊູ ເປັນຜູ້ຕິດຕາມພຣະເຢຊູຢ່າງແທ້ຈິງນັ້ນ ບໍ່ແມ່ນຄົນທີ່ເຄັ່ງສາສນາທຸກຄົນທີ່ໂຄຣົບພຣະຄຳພຣະເຈົ້າ

12. **SO - ຂໍ້ສັງເກດ:** ຝູງຊົນນີ້ເປັນຄົນທີ່ມັກຈົ່ມ ມັກຕຳໜິ, ເຂົາເຈົ້າມີຄວາມເຊື່ອແຕ່ບໍ່ກ້າທີ່ຈະຖາມພຣະເຢຊູໂດຍຕົງ ເຂົາເຈົ້າບໍ່ຮູ້ວ່າພຣະອົງຊົງມີຣິດເດດຢ່າງໃດແດ່ ແລະຍັງຄິດວ່າພຣະເຢຊູບໍ່ໄດ້ຍິນສຽງຈົ່ມຂອງເຂົາເຈົ້າ.
SA - ການນຳໃຊ້ໃນຊີວິດຝ່າຍວິນຍານ: ຝູງຊົນໃນເຣື່ອງກໍຄືກັນກັບຄົນໃນສມັຍນີ້ ຊຶ່ງເຮັດເໝືອນກັບວ່າພຣະເຈົ້າບໍ່ໄດ້ຍິນສຽງທີ່ເຂົາເຈົ້າຊຸບຊິບຊຶມຕໍ່ກັນແລະກັນ ເຂົາເຈົ້າຍັງຄິດອີກວ່າພຣະອົງບໍ່ເຫັນໃນສິ່ງເຂົາເຈົ້າກະທຳໃນບ່ອນມືດແລະລັບລີ້.

13. **SO - ຂໍ້ສັງເກດ:** ຊັກຂາຍຜູ້ຮັ່ງມີໄດ້ສະແດງໃຫ້ເຫັນວ່າລາວຄິດຢ່າງໃດເມື່ອລາວສເນີຈະໃຫ້ຊັບເຄິ່ງນຶ່ງແກ່ຄົນທີ່ຍາກຈົນ.
SA - ການນຳໃຊ້ໃນຊີວິດຝ່າຍວິນຍານ: ໃຜກໍຕາມທີ່ໄດ້ພົບພຣະເຢຊູຢ່າງແທ້ຈິງ ຈະເຮັດໃຫ້ລາວປ່ຽນມຸມມອງການເຫັນໂລກແບບໃໝ່ ປ່ຽນທັສນະຄະຕິ ແລະປ່ຽນແປງຊີວິດໃໝ່.

14. **SO - ຂໍ້ສັງເກດ:** ຊັກຂາຍປະກາດວ່າຖ້າລາວຫາກສໍ້ໂກງເອົາສິ່ງຂອງຜູ້ໃດ ລາວຈະສົ່ງຄືນໃຫ້ສີ່ຕໍ່ ແຕ່ລາວບໍ່ໄດ້ເນັ້ນວ່າ "ຖ້າ" ລາວຫາກຜິດຢ່າງແທ້ຈິງ ກໍພ້ອມທີ່ຈະສົ່ງສິ່ງຂອງຄືນໃຫ້ສີ່ຕໍ່ ຊັກຂາຍໄດ້ສັນຍາຈາກຄວາມຕັ້ງໃຈຂອງລາວເອງ ບາງຄົນອາດຈະເວົ້າວ່າລາວໃຫ້ທານແກ່ຄົນຍາກຈົນຢູ່ແລ້ວ ແຕ່ຈາກຄວາມເຫັນຂອງຝູງຊົນເຮັດໃຫ້ເຮົາຮູ້ວ່າຊັກຂາຍເປັນຄົນແນວໃດ.
ຖ້າຫາກຄົນເກັບພາສີໃຫ້ເງິນເຄິ່ງນຶ່ງແກ່ຄົນຍາກຈົນ ບາງເທື່ອລາວອາດຈະໄດ້ເຮັດມາແລ້ວໂດຍທີ່ບໍ່ມີຜູ້ໃດຮູ້ເຫັນນຳ ແຕ່ການທີ່ຈະສົ່ງສິ່ງຂອງຄືນໃຫ້ຄົນທີ່ລາວໄດ້ໂກງເຖິງສີ່ຕໍ່ນັ້ນ ອາດຈະເຮັດໃຫ້ຝູງຊົນເຫັນວ່າລາວເປັນຄົນຊອບທັມກໍເປັນໄດ້.
SA - ການນຳໃຊ້ໃນຊີວິດຝ່າຍວິນຍານ: ຊັກຂາຍເປັນຄົນຮັ່ງມີ ເປັນຫົວໜ້າຄົນເກັບພາສີ ທີ່ໄດ້ປ່ຽນແປງຊີວິດໃໝ່ ລາວບໍ່ໂລບອີກຕໍ່ໄປ ກາຍເປັນຄົນທີ່ມີນ້ຳໃຈແລະສັດຊື່ ລາວໄດ້ຖ່ອມຕົວລົງໂດຍບອກວ່າຖ້າລາວໄດ້ສໍ້ໂກງໃຜລາວກໍຈະສົ່ງຄືນໃຫ້ສີ່ຕໍ່ ເມື່ອເຮົາມາເຊື່ອໃນພຣະເຢຊູແລະຍອມຮັບຜິດ ເຮົາກໍຄວນສະແດງຄວາມຖ່ອມໃຈ ແລະເຕັມໃຈທີ່ຈະກັບໄປແກ້ໄຂຄວາມຜິດໃນອະດີດ.

15. **SO - ຂໍ້ສັງເກດ:** ທຳອິດ ເຮົາອາດຈະຄິດວ່າຊັກຂາຍພຍາຍາມຊື້ການຍອມຮັບຈາກພຣະເຢຊູ ແຕ່ເຮົາຮູ້ວ່າ ທີ່ລາວມາເຊື່ອໃນພຣະເຢຊູນັ້ນ ເພາະພຣະເຢຊູໄດ້ເວົ້າກັບລາວວ່າ, "ມື້ນີ້ ຄວາມພົ້ນໄດ້ມາເຖິງເຮືອນຫລັງນີ້ແລ້ວ" ໃນເຣື່ອງນີ້ແມ່ນຊັກຂາຍຄົນດຽວທີ່ຍອມຮັບວ່າລາວເອງເປັນຄົນບາບ ແລະເປັນຄົນດຽວທີ່ໄດ້ຮັບຄວາມພົ້ນ.
SA - ການນຳໃຊ້ໃນຊີວິດຝ່າຍວິນຍານ: ຄົນທີ່ບໍ່ຍອມຮັບວ່າຕົນເອງເປັນຄົນບາບ ກໍຈະບໍ່ໄດ້ຮັບຄວາມພົ້ນ.

16. **SO - ຂໍ້ສັງເກດ:** ໃນເຣື່ອງນີ້ ພຣະເຢຊູຊົງກ່າວກັບຊັກຂາຍວ່າ, "ມື້ນີ້ຄວາມພົ້ນໄດ້ມາເຖິງເຮືອນຫລັງນີ້ແລ້ວ." ແລະພຣະອົງຊົງກ່າວຕໍ່ໄປວ່າ, "ຄົນນີ້ກໍເປັນລູກຫລານຂອງອັບຣາຮາມ." ເຫັນວ່າມີຄົນອື່ນໆ ກໍຢູ່ໃນບ່ອນນີ້ນໍາ ນອກຈາກນີ້ ຈາກຄໍາເວົ້າຂອງພຣະເຢຊູ ເຮົາຍັງເຫັນວ່າພຣະອົງກໍາລັງຫັນໄປເວົ້າກັບຄົນອື່ນ ແລະພຣະອົງຊົງ ປົກປ້ອງຊັກຂາຍຈາກການຕໍາໜິຂອງປະຊາຊົນເຫລົ່ານັ້ນ.

    SA - ການນໍາໃຊ້ໃນຊີວິດຝ່າຍວິນຍານ: ເຮົາເຫັນບາງສິ່ງທີ່ພຣະເຢຊູໄດ້ກະທໍາກັບຊັກຂາຍ ແລະຊັກຂາຍກໍ ໄດ້ເຊື່ອໃນພຣະອົງ ໃນເວລານັ້ນຝູງຊົນທີ່ມັກຈົ່ມແລະຕໍາໜິກໍຢູ່ທີ່ນັ້ນແລະໄດ້ເຫັນເຫດການຕ່າງໆ ພຣະເຢຊູ ພຍາຍາມເຂົ້າຫາເຂົາເຈົ້າ ແຕ່ເຂົາເຈົ້າເຫັນວ່າເຂົາເຈົ້າບໍ່ຕ້ອງການພຣະອົງເໝືອນກັບຊັກຂາຍ ເຂົາເຈົ້າຄວນ ຈະເປີດໃຈຍອມຮັບວ່າຊັກຂາຍມີຄຸນຄ່າພໍທີ່ຈະໄດ້ຮັບຄວາມສົນໃຈຈາກພຣະເຈົ້າ ໃນມື້ນີ້ ກໍຍັງມີຄົນທີ່ຄິດວ່າ ຕົນເອງເປັນຄົນຊອບທັມຢູ່ ທີ່ມັກຕໍາໜິວິຈານຄົນອື່ນທີ່ມີຊີວິດປ່ຽນແປງເພາະພຣະເຢຊູຄຣິດ.

17. **SO - ຂໍ້ສັງເກດ:** ຖ້ອຍຄໍາຂອງພຣະເຢຊູທີ່ບອກເຖິງເປົ້າໝາຍການສະເດັດລົງມາວ່າ, "*ບຸດມະນຸດມາເພື່ອຈະ ຊອກຫາແລະໂຜດເອົາຜູ້ທີ່ຫລົງເສັ້ງໄປແລ້ວນັ້ນໃຫ້ລອດພົ້ນ*" ເປັນຖ້ອຍຄໍາທີ່ໃຫ້ກຽດແກ່ຊັກຂາຍຢ່າງຫລວງ ຫລາຍ ແລະກາຍເປັນຖ້ອຍຄໍາສລຸບກັບຄືນໄປຫາຝູງຊົນ.

    SA - ການນໍາໃຊ້ໃນຊີວິດຝ່າຍວິນຍານ: ຖ້າເຮົາຢາກໃຫ້ພຣະເຈົ້າຊົງຕອບຮັບເຮົາ ເຮົາເອງຕ້ອງຍອມຮັບວ່າ ເຮົາເປັນຄົນຫລົງເສັ້ງ ແລະຕ້ອງຍອມໃຫ້ພຣະເຈົ້າຊົງຊ່ອຍເຮົາ.

18. **SO - ຂໍ້ສັງເກດ:** ໃນເຣື່ອງນີ້ ເຮົາໄດ້ເຫັນວ່າພຣະເຢຊູ ພຽງແຕ່ເປັນຜູ້ນໍາທີ່ສໍາຄັນຄົນນຶ່ງ ທີ່ມີຄວາມເປັນຫ່ວງ ຊາຍຄົນນຶ່ງທີ່ຄົນທັ້ງຫລາຍກຽດຊັງລາວ. ພຣະເຢຊູຮູ້ຈັກຊື່ຂອງຊາຍຄົນນັ້ນດີ ພຣະເຢຊູບໍ່ເຫັນດີນໍາຄວາມຄິດ ຂອງຝູງຊົນເຫລົ່ານັ້ນ ພຣະອົງຮູ້ດີເຖິງການຈົ່ມຢູ່ໃນໃຈຂອງເຂົາເຈົ້າ. ເຊັ່ນດຽວກັນ ພຣະເຢຊູສາມາດທີ່ຈະເວົ້າ ໄດ້ວ່າ ຊັກຂາຍໄດ້ຮັບຄວາມພົ້ນແລ້ວໃນມື້ນັ້ນ. ຈາກເຫດການໃນເຣື່ອງນີ້ໄດ້ຊີ້ໃຫ້ເຮົາເຫັນວ່າພຣະເຢຊູຊົງເປັນ ພຣະເຈົ້າ.

    SA - ການນໍາໃຊ້ໃນຊີວິດຝ່າຍວິນຍານ: ເມື່ອເຮົາຢາກຮູ້ວ່າໃນທຸກມື້ນີ້ພຣະເຈົ້າໄດ້ພົວພັນກັບເຮົາຢ່າງໃດ ເຮົາ ສາມາດເບິ່ງໄດ້ຈາກເຣື່ອງນີ້ວ່າພຣະເຈົ້າຊົງກະທໍາກັບຝູງຊົນ ແລະກັບຊັກຂາຍແນວໃດ.

19. **SO - ຂໍ້ສັງເກດ:** ຕອນທໍາອິດ ເຮົາເຫັນຢ່າງຊັດແຈ້ງວ່າຊັກຂາຍໄດ້ຕິດຕາມພຣະເຢຊູ ຕອນຕໍ່ໆ ມາເຮົາເຫັນ ວ່າພຣະເຢຊູຊົງຕາມຫາຊັກຂາຍຄືກັນ.

    SA - ການນໍາໃຊ້ໃນຊີວິດຝ່າຍວິນຍານ: ໃນເຣື່ອງນີ້ເຮົາເຫັນວ່າຊັກຂາຍໄດ້ຕາມຫາພຣະເຢຊູຢ່າງແທ້ຈິງ ແຕ່ ພຣະເຢຊູກໍຕາມຫາລາວເໝືອນກັນ ທັງສອງກໍຣະນີນີ້ແມ່ນຄວາມຈິງ ເຮົາຕ້ອງສແວງຫາພຣະເຈົ້າ ແລະໃຫ້ເຮົາ ຮູ້ວ່າ ພຣະເຈົ້າກໍຊົງຕາມຫາເຮົາເໝືອນກັນ.

ການຕັ້ງຄໍາຖາມເພື່ອນໍາໄປໃຊ້ໃນຊີວິດຝ່າຍວິນຍານ

ໃນທີ່ສຸດ ໃຫ້ເຮົາເບິ່ງຄໍາຖາມທີ່ນໍາໄປສູ່ການນໍາໃຊ້ໃນຊີວິດຝ່າຍວິນຍານ ຂໍ້ສັງເກດຝ່າຍວິນຍານ(ຄົ້ນຫາຂຸມຊັບ) ແລະການນໍາໃຊ້ໃນຊີວິດຝ່າຍວິນຍານ ທີ່ໄດ້ລຽງລໍາດັບໄວ້ອີກເທື່ອ ເພື່ອທ່ານຈະໄດ້ເຫັນຂັ້ນຕອນຕາມລໍາດັບ ຈຶ່ງ ສັງເກດການນໍາໃຊ້ໃນຊີວິດຝ່າຍວິນຍານຈາກຄໍາຖາມເຫລົ່ານີ້. ຄໍາຖາມທີ່ນໍາໄປໃຊ້ໃນຊີວິດຝ່າຍວິນຍານຈະຂຽນ ຫຍໍ້ເປັນພາສາອັງກິດດັ່ງນີ້; "SAQ" = Spiritual Application Question

1. **SO - ຂໍ້ສັງເກດ:** ຄົນທັງຫລາຍທີ່ສົນໃຈພຣະເຢຊູ ໄດ້ບັງຊັກຂາຍບໍ່ໃຫ້ເຫັນພຣະເຢຊູ ແລະເຮັດໃຫ້ລາວບໍ່ສາມາດເຂົ້າໄປໃກ້ພຣະເຢຊູ

   SA - **ການນຳໃຊ້ໃນຊີວິດຝ່າຍວິນຍານ:** ໃນການຕິດຕາມພຣະເຢຊູ ບາງເທື່ອເຮົາກໍຢູ່ໃກ້ຊິດພຣະອົງ ທຳຕົວເປັນຄົນທີ່ເຄັ່ງຄັດ ຈົນເຮັດໃຫ້ຄົນອື່ນບໍ່ຢາກມາຫາພຣະອົງ ເຮົາເຮັດໂດຍບໍ່ໄດ້ຕັ້ງໃຈແລະບໍ່ໄດ້ຮະວັງຕົວ.

   SAQ - ຄຳຖາມນຳໄປສູ່ການນຳໃຊ້ໃນຊີວິດຝ່າຍວິນຍານ:
   - ເປັນໄປໄດ້ບໍ່ ຄົນທີ່ທຳຕົນເປັນຄົນເຄັ່ງຄັດ ຈົນກາຍເປັນອຸປສັກກີດກັ້ນຄົນທີ່ຢາກເຂົ້າໃກ້ພຣະເຈົ້າ?
   - ຄົນດັ່ງກ່າວ ເຮັດໃຫ້ການກີດກັ້ນເກີດຂຶ້ນໄດ້ຢ່າງໃດ?
   - ມີໃຜແດ່ຢາກຈະແບ່ງປັນກ່ຽວກັບການຖົ້ມຄວາມໂອ້ອວດເຍີ່ຍິ່ງນີ້?

2. **SO - ຂໍ້ສັງເກດ:** ຊັກຂາຍເປັນຄົນເຕັ້ງ ແຕ່ມີຕຳແໜ່ງສູງ ເປັນຄົນຮັ່ງມີ ແລະເປັນຫົວໜ້າຄົນເກັບພາສີ ລາວຕັ້ງໃຈແນ່ວແນ່ທີ່ຈະເຫັນພຣະເຢຊູ ແລະເມື່ອເຫັນພຣະອົງບໍ່ໄດ້ງ່າຍ ລາວຈຶ່ງຫາທາງອື່ນ.

   SA - ການນຳໃຊ້ໃນຊີວິດຝ່າຍວິນຍານ: ເມື່ອເຮົາຢາກຕິດຕາມພຣະເຢຊູ ເຮົາຕ້ອງພ້ອມທີ່ຈະຖົ້ມຄວາມໂອ້ອວດເຍີ່ຍິ່ງ ແລະເຮັດໃນສິ່ງທີ່ຈະຊ່ວຍໃຫ້ເຮົາໄດ້ສແວງຫາພຣະອົງ ແລະຕິດຕາມພຣະອົງ.

   SAQ - ຄຳຖາມນຳໄປສູ່ການນຳໃຊ້ໃນຊີວິດຝ່າຍວິນຍານ:
   - ໃນສມັຍທຸກມື້ນີ້ ເຮົາຕ້ອງຖົ້ມຄວາມໂອ້ອວດເພື່ອຈະມາໃກ້ພຣະເຢຊູ ເໝືອນກັບຊັກຂາຍຫລືບໍ່?
   - ຍາມໃດທີ່ເຮົາຈຳເປັນຕ້ອງຖົ້ມຄວາມໂອ້ອວດ ຄວາມເຍີ່ຍິ່ງ?
   - ຢາກໜູນໃຈໃຫ້ພີ່ນ້ອງແບ່ງປັນກ່ຽວກັບເຣື່ອງນີ້ ໄດ້ບໍ່?

3. **SO - ຂໍ້ສັງເກດ:** ຊຸມຊົນໄດ້ຫົວເຍາະເຍີ້ຍຊາຍທີ່ມີຕຳແໜ່ງສູງ ເພາະລາວຕ້ອງແລ່ນໄປຕາມທາງແລະປີນຂຶ້ນຕົ້ນໄມ້ ແຕ່ການຫົວຂວັນເຍາະເຍີ້ຍນັ້ນ ບໍ່ໄດ້ເຮັດໃຫ້ຊັກຂາຍເລີກລົ້ມຄວາມຕັ້ງໃຈ.

   SA - ການນຳໄປໃຊ້ໃນຊີວິດຝ່າຍວິນຍານ: ເຮົາຕ້ອງບໍ່ຍອມໃຫ້ຄວາມໂອ້ອວດເຍີ່ຍິ່ງ ຫລືຄວາມອັບອາຍມາກີດກັ້ນບໍ່ໃຫ້ເຮົາຮູ້ຈັກພຣະເຢຊູ. ເຖິງຄົນອື່ນຈະຄິດວ່າເຮົາໂງ່, ຕ່ຳຕ້ອຍ ໃຫ້ເຮົາເດີນໜ້າຕໍ່ໄປ.

   SAQ - ຄຳຖາມນຳໄປສູ່ການນຳໃຊ້ໃນຊີວິດຝ່າຍວິນຍານ:
   - ມີຄົນທີ່ຖືກເຍາະເຍີ້ຍເພາະລາວສແວງຫາພຣະເຈົ້າຫລືບໍ່?
   - ທ່ານຮູ້ສຶກຢ່າງໃດເມື່ອຖືກເຍາະເຍີ້ຍ?
   - ທ່ານເອງຫລືຄົນທີ່ທ່ານຮູ້ຈັກ ເຄີຍຖືກເຍາະເຍີ້ຍເພາະຕິດຕາມພຣະເຈົ້າຫລືບໍ່?
     ທ່ານເຄີຍໄດ້ເສັ່ງສລະ ຖົ້ມແນວໃດແນວນຶ່ງທີ່ສຳຄັນເພື່ອຖ່ອມຕົວລົງແລ້ວສແວງຫາພຣະເຈົ້າຫລືບໍ່?
   - ເຮົາຢາກຈະຫລີກໜີຈາກການເຍາະເຍີ້ຍນັ້ນຫລືບໍ່?
   - ມີຫຍັງຢູ່ໃນເຣື່ອງຊັກຂາຍ ທີ່ຊ່ວຍໃຫ້ເຮົາຕັດສິນໃຈຢ່າງຖືກຕ້ອງ?

4. **SO - ຂໍ້ສັງເກດ:** ເຮົາເຫັນພຣະເຢຊູເດີນມາຕາມທາງພ້ອມກັບຝູງຄົນທີ່ຍ່າງບຽດພຣະອົງຈົນເຊໄປມາ ແຕ່ພຣະອົງກັບເບິ່ງຂ້າມເຂົາເຈົ້າ ແລະສັງເກດເຫັນຊາຍຄົນດຽວຢູ່ເທິງຕົ້ນໄມ້ທີ່ຫ່າງໄກອອກໄປ.

   SA - ການນຳໃຊ້ໃນຊີວິດຝ່າຍວິນຍານ: ໃນມື້ນັ້ນມີຫລາຍຄົນທີ່ພຍາຍາມເຮັດໃຫ້ພຣະເຈົ້າພໍພຣະທັຍ ເຂົາເຈົ້າເຮັດເໝືອນກັບວ່າສົນໃຈໃນພຣະເຢຊູ ແຕ່ພຣະເຢຊູກັບບໍ່ສົນພຣະທັຍໃນເຂົາເຈົ້າ. ຄົນໃນໂລກນີ້ກໍທຳຕົວເໝືອນກັບວ່າສົນໃຈໃນພຣະເຈົ້າ ແຕ່ເຂົາເຈົ້າບໍ່ມີຄວາມຈິງໃຈເໝືອນກັບຝູງຊົນທີ່ຢູ່ໃນເຣື່ອງ. ພຣະເຢຊູຊົງ

ຮຽກເອີ້ນຄົນທີ່ຈິງໃຈ ພຣະເຈົ້າຊົງຮູ້ຈັກໃຈຂອງເຮົາ ແລະຍັງຊົງຮູ້ອີກວ່າເຮົາຕິດຕາມພຣະອົງແທ້ຈິງຫລືບໍ່?

SAQ - ຄຳຖາມນຳໄປສູ່ການນຳໃຊ້ໃນຊີວິດຝ່າຍວິນຍານ:

- ທ່ານຄິດວ່າຄົນທີ່ນັບຖືສາສນາໃນໂລກນີ້ມີຈັກເປີເຊັນ?
- ທ່ານເຄີຍພົບກັບຄົນທີ່ເຄັ່ງຄັດ ແຕ່ບໍ່ແມ່ນຄົນທີ່ຕິດຕາມພຣະເຈົ້າຢ່າງແທ້ຈິງ ຫລືບໍ່?
- ໃນໂລກນີ້ ທ່ານຄິດວ່າມີທັງຄົນນັບຖືສາສນາ ແລະມີທັງຄົນທີ່ຕິດຕາມພຣະເຈົ້າທີ່ແທ້ຈິງ ຫລືບໍ່?
- ແມ່ນຫຍັງທີ່ບົ່ງບອກໃຫ້ທ່ານຮູ້ວ່າຄົນໃດຄົນນຶ່ງໄດ້ສແວງຫາພຣະເຈົ້າຢ່າງແທ້ຈິງ?

5. **SO - ຂໍ້ສັງເກດ:** ພຣະເຢຊູຊົງສົນພຣະທັຍຊັກຂາຍຢ່າງແທ້ຈິງ ເພາະພຣະອົງຊົງເອີ້ນຊື່ຂອງລາວ

   SA - ການນຳໃຊ້ໃນຊີວິດຝ່າຍວິນຍານ: ຢູ່ໃນຈຸດນີ້ ເຮົາໄດ້ເຫັນພຣະເຈົ້າຜູ້ຊົງຮູ້ຈັກມະນຸດເປັນສ່ວນຕົວ ຊົງຮູ້ວ່າເຮົາແມ່ນໃຜ ແລະຊື່ຫຍັງ ຖ້າເຮົາຫາກເຂົ້າໃຈວ່າພຣະເຈົ້າຊົງເມດຕາຕໍ່ທຸກຄົນທີ່ສແວງຫາພຣະອົງ ເຮົາກໍ ປາຖນາໃຫ້ພຣະອົງຊົງຮູ້ຈັກຊື່ເຮົາ..ແລະເຮົາກໍຮູ້ສຶກອົບອຸ່ນໃຈ ຊັກຂາຍມີຄວາມກະຕືລືລົ້ນຢາກຈະພົບກັບພຣະເຢຊູ ດັ່ງນັ້ນເມື່ອພຣະອົງຊົງເອີ້ນຊື່ຂອງລາວ ລາວຈຶ່ງຕອບພຣະອົງດ້ວຍຄວາມຍິນດີ.

   SAQ - ຄຳຖາມນຳໄປສູ່ການນຳໃຊ້ໃນຊີວິດຝ່າຍວິນຍານ:

   - ຕາມວິທີທີ່ພຣະເຢຊູໄດ້ເວົ້າກັບຊັກຂາຍນັ້ນ ເຮັດໃຫ້ທ່ານມີຄວາມຫວັງບໍ່?
   - ຈົ່ງອະທິບາຍວ່າ ເປັນຫຍັງຈຶ່ງມີຄວາມຫວັງ?
   - ການທີ່ເຮົາມີພຣະເຈົ້າທີ່ຮູ້ຈັກເຮົາ ກັບມີພຣະເຈົ້າທີ່ບໍ່ຮູ້ຈັກເຮົາ ອັນໃດດີກວ່າກັນ?
   - ການທີ່ມີພຣະເຈົ້າທີ່ຮູ້ຈັກເຮົານັ້ນ ທ່ານຄິດວ່າມີຜົນດີຜົນເສັຽຢ່າງໃດ?
   - ພຣະເຈົ້າເຄີຍເວົ້າກັບທ່ານເປັນສ່ວນຕົວບໍ່?

6. **SO - ຂໍ້ສັງເກດ:** ພຣະເຢຊູໄດ້ເຊີນພຣະອົງເອງເຂົ້າໄປໃນເຮືອນຂອງຊັກຂາຍ ແຕ່ຫລາຍອັທນະທັມເຫັນວ່າບໍ່ສົມຄວນ ສ່ວນພຣະເຢຊູເອງພຣະອົງຊົງຮູ້ລ່ວງໜ້າວ່າຈະຕ້ອງມີຫຍັງເກີດຂຶ້ນ.

   SA - ການນຳໃຊ້ໃນຊີວິດຝ່າຍວິຍານ: ການທີ່ພຣະເຢຊູພໍພຣະທັຍທີ່ຈະຢູ່ກັບຄົນທີ່ສແວງຫາພຣະອົງ ເຫັນວ່າ ເປັນເຣື່ອງທີ່ຊົມຊື່ນຍິນດີແລະເປັນການໜູນໃຈເຮົາຫລາຍ.

   SAQ - ຄຳຖາມທີ່ນຳໄປສູ່ການນຳໃຊ້ຝ່າຍວິນຍານ.

   - ແມ່ນຫຍັງເຮັດໃຫ້ເຮົາແປກໃຈທີ່ພຣະເຢຊູ(ເຊີນພຣະອົງເອງ)ເຂົ້າໄປໃນເຮືອນຂອງຊັກຂາຍ?
   - ແມ່ນຫຍັງທີ່ພຣະເຢຊູຊົງກ່າວ ທີ່ຊີ້ໃຫ້ເຮົາເຫັນວ່າການໄປໃນເຮືອນຊັກຂາຍຕ້ອງເກີດຂຶ້ນແນ່ນອນ?
   - ການທີ່ພຣະເຢຊູເຊີນພຣະອົງເອງເຂົ້າໄປໃນເຮືອນຊັກຂາຍ ໄດ້ໜູນໃຈເຮົາຢ່າງໃດໃນການສແວງຫາ ພຣະເຈົ້າ?

7. **SO - ຂໍ້ສັງເກດ:** ການທີ່ພຣະເຢຊູຊົງແຫງນພຣະພັກຂຶ້ນໄປເທິງຕົ້ນໄມ້ ທຸກຄົນໃນກຸ່ມຊົນກໍແຫງນຂຶ້ນເບິ່ງນຳວ່າ ແມ່ນຫຍັງເກີດຂຶ້ນ ທັງພຣະເຢຊູແລະກຸ່ມຊົນກໍເຫັນຊັກຂາຍພ້ອມໆ ກັນ ແຕ່ຊັກຂາຍບໍ່ຢ້ານແລະບໍ່ອາຍເລີຍທີ່ ຝູງຊົນເຫັນລາວ ແຕ່ລາວກັບຮູ້ສຶກດີໃຈຫລາຍ.

   SA - ການນຳໃຊ້ໃນຊີວິດຝ່າຍວິນຍານ: ເມື່ອຄົນທີ່ບໍ່ເຊື່ອຫລືຕິດຕາມພຣະເຈົ້າຢ່າງບໍ່ສັດຊື່ເບິ່ງເຮົາແລະຄິດວ່າ ການທີ່ເຮົາຢາກຮູ້ຈັກພຣະເຈົ້າເປັນເຣື່ອງທີ່ໄຮ້ສາຣະປໂຍດ ເຮົາຕ້ອງບໍ່ໃຫ້ຄວາມຄິດແລະອິດທິພົນຂອງເຂົາ ເຈົ້າຢູ່ເໜືອເຮົາ ເມື່ອເຮົາຮູ້ວ່າພຣະເຈົ້າຊົງສົນພຣະທັຍໃນຕົວເຮົາຢ່າງເຈາະຈົງ ເຮົາຄວນຕອບສນອງຕໍ່ພຣະອົງ ດ້ວຍຄວາມຍິນດີ.

SAQ - ຄຳຖາມນຳໄປສູ່ການນຳໃຊ້ໃນຊີວິດຝ່າຍວິນຍານ:

- ໃນການຕິດຕາມເພື່ອຈະຮູ້ຈັກພຣະເຈົ້າ ຄົນນັ້ນຕ້ອງແຕກຕ່າງຈາກຄົນໃນຄອບຄົວໃນສັງຄົມຂອງລາວ ຫລືບໍ່?
- ເຄີຍເຫັນຄົນທີ່ກ່າວມາຂ້າງເທິງນີ້ຫລືບໍ່?
- ເຮົາໄດ້ເຫັນຫຍັງແດ່ຈາກການກະທຳຂອງຊັກຂາຍ ແລະຜົນຈາກການເລືອກຂອງລາວທີ່ຊ່ວຍໜູນໃຈເຮົາໃນມື້ນີ້ ໂດຍສະເພາະເມື່ອເຮົາຕ້ອງທຳຕົວໃຫ້ແຕກຕ່າງ?
- ສິ່ງທີ່ທ່ານໄດ້ເຫັນຈາກຊີວິດຂອງຊັກຂາຍ ຊ່ວຍໜູນໃຈທ່ານໃນການຕັດສິນໃຈຢ່າງໃດ?

8. **SO - ຂໍ້ສັງເກດ:** ຊັກຂາຍບໍ່ລັງເລໃຈທີ່ຈະຕອບຮັບ ເມື່ອພຣະເຢຊູຊົງຮຽກເອີ້ນໃຫ້ລາວຮີບລົງມາຈາກຕົ້ນໄມ້.
SA - ການນຳໃຊ້ໃນຊີວິດຝ່າຍວິນຍານ: ຖ້າພຣະເຈົ້າຊົງຮຽກເອີ້ນເຮົາໃຫ້ເຮັດສິ່ງໃດ ເຮົາຕ້ອງຕອບສນອງຕໍ່ພຣະອົງໃນທັນທີຕາມທີ່ພຣະອົງຊົງສັ່ງ ຖ້າເຮົາເຊື່ອຟັງຢ່າງເສີຍຊ້າ ອາດຈະເປັນການບໍ່ເຊື່ອຟັງກໍເປັນໄດ້
SAQ - ຄຳຖາມເພື່ອນຳໄປສູ່ການນຳໃຊ້ໃນຊີວິດຝ່າຍວິນຍານ:

- ໃນທຸກມື້ນີ້ພຣະເຈົ້າຍັງຊົງຮຽກເອີ້ນຄົນຢູ່ບໍ?
- ຖ້າພຣະອົງຍັງຊົງຮຽກເອີ້ນ ພຣະອົງຊົງຮຽກເອີ້ນວິທີໃດ?
- ຫາກເຮົາຮູ້ວ່າພຣະເຈົ້າຊົງຮຽກເອີ້ນເຮົາໃຫ້ເຮັດແນວໃດແນວນຶ່ງ ເຣື່ອງນີ້ຈະຊ່ວຍເຮົາຢ່າງໃດ?
- ນອກຈາກເຮົາຈະຮີບຕອບຮັບແລ້ວ ຄຳສັ່ງຂອງພຣະເຈົ້າອາດຈະມີຄວາມໝາຍຢ່າງໃດຕໍ່ເຮົາ? ຖ້າເຮົາຫາກລັງເລໃຈທີ່ຈະເຊື່ອຟັງນັ້ນ ການລັງເລນັ້ນແມ່ນຫຍັງ?

9. **SO - ຂໍ້ສັງເກດ:** ເຖິງແມ່ນຝູງຊົນຈະຈຶ່ມແລະຕຳໜິ ທີ່ອົງພຣະເຢຊູໄປເປັນແຂກໃນເຮືອນຂອງຄົນບາບ ພຣະອົງເຂົ້າໄປພັກກັບຄົນບາບ ສະແດງວ່າ ພຣະເຢຊູໄດ້ເຂົ້າໄປໃນເຮືອນນັ້ນແລ້ວ.
ຕອນທີ່ຊັກຂາຍກັບພຣະເຢຊູຮູ້ວ່າ ຝູງຊົນກຳລັງຈຶ່ມແລະຕຳໜິວ່າພຣະເຢຊູເຂົ້າໄປໃນເຮືອນຂອງຊັກຂາຍນັ້ນກໍຍັງບໍ່ຊັດແຈ້ງເທົ່າໃດ ແຕ່ຕໍ່ມາທີ່ຢູ່ໃນເຣື່ອງ ສິ່ງທີ່ພຣະເຢຊູຊົງກ່າວກັບຄົນທັງຫລາຍຕໍ່ໜ້າຊັກຂາຍ ພວກເຮົາຮູ້ວ່າທັງຊັກຂາຍແລະພຣະເຢຊູຮູ້ວ່າຝູງຊົນກຳລັງຈຶ່ມແລະຕຳໜິ ແຕ່ຊັກຂາຍບໍ່ສະເທືອນຕໍ່ຄວາມເວົ້າຂອງຄົນເຫລົ່ານັ້ນ ເພາະຊັກຂາຍຍິນດີຕ້ອນຮັບພຣະເຢຊູ
SA - ການນຳໃຊ້ໃນຊີວິດຝ່າຍວິນຍານ: ເຮົາອາດຈະເລີ້ມຕົ້ນດີ ແລະເຮົາຕ້ອງກະທຳຕໍ່ໄປ ບໍ່ວ່າຜູ້ໃດຫລືຄົນທີ່ເຄັ່ງສາສນາ ຈະຈຶ່ມແລະຕ□ໜິໃຫ້ເຮົາແນວໃດກໍຕາມ.
SAQ - ຄຳຖາມນຳໄປສູ່ການນຳໃຊ້ໃນຊີວິດຝ່າຍວິນຍານ:

- ຝູງຊົນໄດ້ຈຶ່ມແລະຕຳໜິໃຫ້ພຣະເຢຊູກັບຊັກຂາຍຢ່າງເປີດເຜີຍ ເຄີຍມີຄົນທີ່ເໜືອທ່ານຢຽບຫຍາມທ່ານບໍ?
- ທ່ານຮູ້ສຶກແນວໃດ ຕໍ່ການຢຽບຫຍາມຂອງຄົນເຫລົ່ານັ້ນ?
- ຈາກເຣື່ອງນີ້ ເຮົາຈະຕອບສນອງການບໍ່ເຫັນນຳຈາກຄົນອື່ນຢ່າງໃດ?

10. **SO - ຂໍ້ສັງເກດ:** ການທີ່ຝູງຊົນຈຶ່ມແລະຕຳໜິພຣະເຢຊູວ່າພຣະອົງເຂົ້າໄປໃນເຮືອນຂອງຄົນບາບ ສະແດງວ່າ ຄົນເຫລົ່ານັ້ນຄິດວ່າເຂົາເຈົ້າເອງບໍ່ເປັນຄົນບາບ .
SA - ການນຳໃຊ້ໃນຊີວິດຝ່າຍວິນຍານ: ຄົນທີ່ໂອ້ອວດເຍີ້ຍິ່ງນັ້ນມັກພິພາກສາຄົນອື່ນ ຢ່າເປັນເໝືອນກັບຄົນທີ່ໂອ້ອວດເຍີ້ຍິ່ງທີ່ຄິດວ່າຕົນເອງບໍ່ບາບ.

SAQ - ຄຳຖາມນຳໄປສູ່ການນຳໃຊ້ໃນຊີວິດຝ່າຍວິນຍານ;

- ໃນຊ່ວງເວລາທີ່ທ່ານສແວງຫາພຣະເຈົ້າ ທ່ານເຄີຍໄດ້ໂອ້ລົມກັບຄົນທີ່ເຄັ່ງສາສນາທີ່ຄິດວ່າຕົນເອງບໍ່ມີບາບຫລືບໍ່?
- ທ່ານຈະອະທິບາຍຄຳວ່າ, **<u>ຄົນທີ່ເຫັນຕົວເອງວ່າບໍ່ຣິສຸດ</u>** ຢ່າງໃດ?
- ຄວາມຄິດທີ່ວ່າ ຂ້ອຍເປັນຄົນດີ ຄວນຈະມີຢູ່ໃນຕົວຂອງຄົນທີ່ຕິດຕາມພຣະເຈົ້າທີ່ແທ້ຈິງຫລືບໍ່?

11. SO - **ຂໍ້ສັງເກດ:** ຝູງຊົນເຮັດເໝືອນກັບວ່າເຂົາເຈົ້າເປັນຜູ້ "ຕິດຕາມ" ພຣະເຢຊູ ເຂົາເຈົ້າຕາມພຣະອົງໄປຢ່າງບຸງດກັນໄປ ແມ່ນແຕ່ການຈົ່ມການຕຳໜິຈະເຮັດໃຫ້ເຮົາເຫັນວ່າ ເຂົາເຈົ້າສົນໃຈຢູ່ທີ່ວ່າພຣະເຢຊູຈະໄປຮັບທານອາຫານກັບຜູ້ໃດ ເຂົາເຈົ້າຄິດວ່າພຣະເຢຊູຄວນຈະໄປໃນເຮືອນຂອງເຂົາເຈົ້າກໍດີກວ່າ ແທ້ຈິງແລ້ວຝູງຊົນເຫລົ່ານີ້ສະແດງໃຫ້ເຫັນວ່າເຂົາເຈົ້າບໍ່ໄດ້ນັບຖືພຣະເຢຊູເລີຍ ເຮົາເຫັນໄດ້ຈາກການທີ່ເຂົາເຈົ້າບໍ່ເຫັນດີນຳການກະທຳຂອງພຣະອົງ.

SA - ການນຳໃຊ້ໃນຊີວິດຝ່າຍວິນຍານ: ບໍ່ແມ່ນທຸກຄົນທີ່ເວົ້າວ່າເປັນຜູ້ຕິດຕາມພຣະເຢຊູຈະຮູ້ຈັກແລະນັບຖືພຣະອົງຢ່າງແທ້ຈິງ ບໍ່ແມ່ນທຸກຄົນທີ່ເຄັ່ງໃນສາສນາຈະໂຄຣົບພຣະຄຳຂອງພຣະເຈົ້າສເມີໄປ.

SAQ - ຄຳຖາມນຳໄປສູ່ການນຳໃຊ້ໃນຊີວິດຝ່າຍວິນຍານ;

- ທ່ານຈື່ໄດ້ບໍ່ ທີ່ຝູງຊົນເຮັດເໝືອນກັບວ່າເຂົາເຈົ້າໂຄຣົບພຣະເຢຊູ ແຕ່ໄດ້ສະແດງຄວາມໃນໃຈອອກມາດ້ວຍການຈົ່ມແລະຕຳໜິວ່າ ພຣະອົງໄດ້ເລືອກທີ່ຈະເຂົ້າໄປເຮືອນຂອງໃຜ?
- ໃນທຸກມື້ນີ້ຍັງມີຢູ່ບໍ່ ທີ່ມີຄົນທຳທ່າວ່າໄດ້ຕິດຕາມພຣະເຈົ້າ ແຕ່ໂຄຣົບຕົວເອງຫລາຍກວ່າໂຄຣົບພຣະເຈົ້າ?
- ການທຳທ່າວ່າໄດ້ຕິດຕາມພຣະເຈົ້າ ເປັນລັກສະນະແບບໃດ ຈົ່ງອະທິບາຍ?

12. SO - **ຂໍ້ສັງເກດ:** ຝູງຊົນນີ້ເປັນຄົນທີ່ມັກຈົ່ມແລະຕຳໜິ ເຂົາເຈົ້າມີຄວາມເຊື່ອແຕ່ບໍ່ກ້າທີ່ຈະຖາມພຣະເຢຊູໂດຍຕົງ ເຂົາເຈົ້າບໍ່ຮູ້ວ່າພຣະອົງມີຣິດເດດ ເຂົາເຈົ້າຍັງຄິດອີກວ່າພຣະເຢຊູບໍ່ໄດ້ຍິນການຈົ່ມແລະຕຳໜິຂອງເຂົາເຈົ້າ

SA - ການນຳໃຊ້ໃນຊີວິດຝ່າຍວິນຍານ: ຝູງຊົນເຫລົ່ານັ້ນກໍເໝືອນກັບຄົນໃນສມັຍນີ້ທີ່ເຮັດເໝືອນກັບວ່າພຣະເຈົ້າບໍ່ໄດ້ຍິນການຈົ່ມວ່າ ການກະຊຸບກະຊິບຊຶ່ມໃສ່ກັນ ແລະຍັງຄິດວ່າພຣະເຈົ້າບໍ່ເຫັນການກະທຳຂອງເຂົາເຈົ້າໃນບ່ອນມືດແລະໃນທີ່ລັບລີ້.

SAQ - ຄຳຖາມນຳໄປສູ່ການນຳໃຊ້ໃນຊີວິດຝ່າຍວິນຍານ;

- ຄົນເຮົາມັກເວົ້າຄວາມລັບ ຫລືເຮັດບາງສິ່ງໃນບ່ອນລັບລີ້ ເພາະຄິດວ່າບໍ່ມີໃຜເຫັນແມ່ນບໍ່?
- ມີຫຍັງທີ່ຢູ່ໃນເຣື່ອງ ບອກໃຫ້ເຮົາເຫັນວ່າພຣະເຈົ້າຊົງຮູ້ທຸກຢ່າງທີ່ເຮົາເວົ້າແລະກະທຳ?
- ເມື່ອເຮົາຮູ້ຢ່າງນີ້ແລ້ວ.....ເຮົາຈະເຮັດແນວໃດຕໍ່ໄປ?

13. SO - **ຂໍ້ສັງເກດ:** ຊັກຂາຍຜູ້ຮັ່ງມີໄດ້ບອກໃຫ້ເຮົາເຫັນວ່າລາວຄິດແນວໃດເມື່ອລາວສເນີວ່າຈະໃຫ້ຊັບເຄິ່ງນຶ່ງແກ່ຄົນຍາກຈົນ.

SA - ການນຳໃຊ້ໃນຊີວິດຝ່າຍວິນຍານ: ການພົບກັບພຣະເຢຊູຢ່າງແທ້ຈິງ ຈະເຮັດໃຫ້ຄົນຜູ້ນັ້ນປ່ຽນມຸມມອງເຫັນໂລກແບບໃໝ່ແລະມີທັສນະຄະຕິແບບໃຫມ່.

SAQ - ຄຳຖາມນຳໄປສູ່ການນຳໃຊ້ໃນຊີວິດຝ່າຍວິນຍານ;

- ການພົບກັບພຣະເຢຊູຢ່າງແທ້ຈິງ ມີຜົນຕໍ່ການເບິ່ງໂລກແລະທັສນະຄະຕິຂອງຄົນຜູ້ນັ້ນຢ່າງໃດ?

- ຍົກຕົວຢ່າງຂອງຄົນທີ່ພົບກັບພຣະເຢຊູຢ່າງແທ້ຈິງ ແລະມີການປ່ຽນແປງໃນຊີວິດຢ່າງໃດ?

14. SO - **ຂໍ້ສັງເກດ:** ຊັກຂາຍປະກາດວ່າຖ້າລາວຫາກສໍ້ໂກງເອົາສິ່ງຂອງຈາກຜູ້ໃດ ລາວຈະສົ່ງຄືນໃຫ້ຜູ້ນັ້ນສີ່ຕໍ່ ແຕ່ບໍ່ໄດ້ເວົ້າເນັ້ນວ່າ, "ຖ້າ" ລາວຫາກໄດ້ເຮັດຜິດແທ້ລາວພ້ອມທີ່ຈະສົ່ງຄືນສີ່ຕໍ່ ຊັກຂາຍສັນຍາຈາກຄວາມຕັ້ງໃຈຂອງລາວເອງ ບາງຄົນອາດຈະເວົ້າວ່າຊັກຂາຍໄດ້ໃຫ້ເງິນແກ່ຄົນທຸກຍາກຢູ່ແລ້ວ ຈາກຄວາມເຫັນຂອງຝູງຊົນຈະເຮັດໃຫ້ເຮົາຮູ້ວ່າແທ້ຈິງແລ້ວລາວເປັນຄົນແນວໃດ.
ຖ້າຫາກລາວເປັນຄົນເກັບພາສີຍອມໃຫ້ເງິນເຄິ່ງນຶ່ງແກ່ຄົນຍາກຈົນ ບາງເທື່ອລາວອາດຈະເຮັດມາແລ້ວແຕ່ບໍ່ມີຜູ້ໃດເຫັນນຳ ແຕ່ການທີ່ຈະສົ່ງເງິນຄືນໃຫ້ຜູ້ທີ່ລາວສໍ້ໂກງເຖິງສີ່ຕໍ່ນັ້ນ ກໍຈະເຮັດໃຫ້ຝູງຊົນເຫັນວ່າລາວເປັນຄົນຊອບທັມກໍເປັນໄດ້.
ສິ່ງທີ່ເຮົາຮູ້ຈັກທີ່ຢູ່ໃນເຣື່ອງ ນັ້ນແມ່ນ ໃນຈຸດໆ ນຶ່ງຊັກຂາຍຍອມຮັບວ່າລາວເປັນຄົນບາບ ແລະຢາກຈະເຮັດທຸກສິ່ງໃຫ້ຖືກຕ້ອງ ພຣະເຢຊູຊົງກ່າວວ່າຄວາມພົ້ນໄດ້ເກີດຂຶ້ນແລ້ວໃນມື້ນັ້ນ ເຮົາໄດ້ເຫັນຢ່າງແທ້ຈິງວ່າຊັກຂາຍມີນ້ຳໃຈຢ່າງຫລວງຫລາຍ.
SA - ການນຳໃຊ້ໃນຊີວິດຝ່າຍວິນຍານ: ຊັກຂາຍເປັນຄົນຮັ່ງມີ ເປັນຫົວໜ້າຄົນເກັບພາສີ ໄດ້ກາຍເປັນຄົນທີ່ບໍ່ໂລບອີກຕໍ່ໄປ ກາຍເປັນຄົນທີ່ສັດຊື່ແລະມີນ້ຳໃຈ ຖ່ອມຕົວລົງບອກວ່າລາວໄດ້ເຮັດຜິດຕໍ່ໃຜແດ່ ຖ້າສໍ້ໂກງຜູ້ໃດກໍຈະໃຊ້ຄືນ. ເມື່ອເຮົາມາເຊື່ອໃນພຣະເຢຊູແລະຍອມຮັບຜິດ ເຮົາກໍຄວນສະແດງຄວາມຖ່ອມໃຈ ແລະເຕັມໃຈທີ່ຈະກັບຄືນໄປແກ້ໄຂຄວາມຜິດພາດໃນອະດີດ.
SAQ - ຄຳຖາມນຳໄປສູ່ການນຳໃຊ້ໃນຊີວິດ.
- ທ່ານເຄີຍເຫັນຄົນທີ່ມາເຊື່ອໃນພຣະເຈົ້າແລ້ວຊີວິດລາວໄດ້ປ່ຽນເໝືອນໜ້າມືເປັນຫລັງມື ບໍ?
- ຖ້າເຄີຍເຫັນ ລາວໄດ້ປ່ຽນພຶດຕິກັມຂອງລາວຢ່າງໃດແດ່?
- ອາລົມແລະທັສນະຄະຕິແບບໃດໃນຕົວເຮົາ ທີ່ຊ່ອຍກະຕຸ້ນເຮົາກັບໄປຊົດໃຊ້ຄວາມຜິດທີ່ເຄີຍເຮັດກັບຄົນອື່ນມາ?
- ເຄີຍເຫັນຜູ້ທີ່ມາເຊື່ອໃນພຣະເຢຊູແລ້ວ ໄດ້ກັບໄປຊົດໃຊ້ຄວາມຜິດທີ່ເຄີຍເຮັດກັບຄົນອື່ນຫລືບໍ?
- ແລ້ວ ແມ່ນຫຍັງເກີດຂຶ້ນຈາກການກະທຳຂອງລາວ?

15. SO - **ຂໍ້ສັງເກດ:** ຕອນທຳອິດເຮົາຄິດວ່າ ຊັກຂາຍອາດຈະພຍາຍາມຊື້ການຍອມຮັບຈາກພຣະເຢຊູ ແຕ່ເຮົາຮູ້ວ່າການທີ່ລາວເຊື່ອໃນພຣະເຢຊູໃນມື້ນັ້ນ ກໍເພາະພຣະເຢຊູຊົງເວົ້າກັບລາວວ່າ, "ມື້ນີ້ຄວາມພົ້ນໄດ້ມາເຖິງເຮືອນຫລັງນີ້ແລ້ວ" ໃນເຣື່ອງ ແມ່ນຊັກຂາຍຄົນດຽວທີ່ຍອມຮັບວ່າຕົນເອງເປັນຄົນບາບ ແລະເປັນຄົນດຽວທີ່ໄດ້ຮັບຄວາມພົ້ນ.
SA - ການນຳໃຊ້ໃນຊີວິດຝ່າຍວິນຍານ: ຄວາມພົ້ນບໍ່ມາເຖິງຄົນທີ່ບໍ່ຍອມຮັບວ່າຕົນເອງເປັນຄົນບາບ.
SAQ - ຄຳຖາມນຳໄປສູ່ການນຳໃຊ້ໃນຊີວິດ:
- ໃຫ້ເຮົາສົນທະນາກັນວ່າ ຊັກຂາຍພຍາຍາມເຮັດໃຫ້ພຣະເຢຊູຍອມຮັບລາວຫລືບໍ່? ໃນມື້ນີ້ ຍັງມີຢູ່ບໍ່ທີ່ຄົນພຍາຍາມເຮັດດີເພື່ອໃຫ້ພຣະເຈົ້າພໍພຣະທັຍ? (ອາດຈະໝາຍເຖິງ ລູບແຂ່ງ ເລັ່ງຂາ)
- ຄົນໃນທຸກມື້ນີ້ພາກັນເຮັດຢ່າງໃດແດ່?
- ທ່ານເຄີຍຄິດຢາກຈະເຮັດຢ່າງນັ້ນຫລືບໍ່? ຫລືຮູ້ຈັກຄົນທີ່ເຮັດຢ່າງນັ້ນແດ່ບໍ?
- ຢູ່ໃນເຣື່ອງ ມີຄົນດຽວທີ່ຍອມຮັບວ່າເປັນຄົນບາບຄືຊັກຂາຍ ລາວໄດ້ສະແດງຄວາມຈິງໃຈອອກມາດ້ວຍ

ການປ່ຽນແປງເຣື່ອງການເງິນ ແລະເຣື່ອງຄວາມສັມພັນກັບຄົນອື່ນ, ພຣະເຢຊູຊົງຮັບວ່າຊັກຂາຍໄດ້ ປ່ຽນແປງຢ່າງແທ້ຈິງຫລືບໍ?

- ທຸກມື້ນີ້ ຍັງມີຄົນທີ່ມີບັນຫາທີ່ຈະຍອມຮັບວ່າຕົນເອງບາບຫລືບໍ?
- ຈາກເຣື່ອງນີ້ ທ່ານເຫັນວ່າການສາຣະພາບບາບມີຄວາມສຳຄັນຕໍ່ຄົນໃນສມັຍນີ້ຫລືບໍ?

16. SO - **ຂໍ້ສັງເກດ:** ໃນເຣື່ອງ ພຣະເຢຊູໄດ້ເວົ້າໂດຍກົງກັບຊັກຂາຍວ່າ, "ມື້ນີ້ຄວາມພົ້ນໄດ້ມາເຖິງເຮືອນຫລັງນີ້ ແລ້ວ" ແລ້ວພຣະອົງຊົງກ່າວຕໍ່ໄປວ່າ, "ເພາະວ່າຄົນນີ້ກໍແມ່ນລູກຫລານຂອງອັບຣາຮາມ" ຊຶ່ງມີຄົນອື່ນໆ ຢູ່ໃນທີ່ນັ້ນດ້ວຍ. ບໍ່ພຽງແຕ່ເທົ່ານັ້ນ ຈາກຖ້ອຍຄຳຂອງພຣະເຢຊູເຮົາຍັງໄດ້ເຫັນວ່າພຣະອົງຫັນໄປເວົ້າກັບຄົນອື່ນນຳ ແລະພຣະອົງຊົງປົກປ້ອງຊັກຂາຍຈາກການຈົ່ມແລະການຕ□າໜິຂອງຄົນເຫລົ່ານັ້ນ.

SA - ການນຳໃຊ້ໃນຊີວິດຝ່າຍວິນຍານ: ເຮົາໄດ້ເຫັນພຣະເຢຊູກະທຳບາງສິ່ງກັບຊັກຂາຍ ແລະຊັກຂາຍກໍໄດ້ຫັນມາເຊື່ອໃນພຣະອົງ ໃນເວລານັ້ນຝູງຊົນທີ່ຈົ່ມແລະຕຳໜິກໍເຝົ້າເບິ່ງຢູ່ ພຣະເຢຊູພຍາຍາມທີ່ຈະເຂົ້າເຖິງເຂົາເຈົ້າເພື່ອໃຫ້ເຂົາເຈົ້າເຂົ້າໃຈວ່າເຂົາເຈົ້າກໍມີຄວາມຕ້ອງການເໝືອນກັບຊັກຂາຍ ແລະໃຫ້ເຂົາເຈົ້າເປີດໃຈເພື່ອຈະໄດ້ຮູ້ວ່າຊັກຂາຍມີຄຸນຄ່າພໍທີ່ຈະໄດ້ຮັບຄວາມສົນພຣະທັຍຈາກພຣະເຈົ້າ. ໃ ນທຸກມື້ນີ້ກໍຍັງມີຢູ່ ຄົນທີ່ຄິດວ່າຕົນເອງມີຄວາມຊອບທັມທີ່ຄອຍຖ້າຕຳໜິຜູ້ທີ່ມີຊີວິດປ່ຽນແປງຍ້ອນພຣະເຢຊູ.

SAQ - ຄຳຖາມນຳໄປສູ່ການນຳໃຊ້ໃນຊີວິດຝ່າຍວິນຍານ:

- ຊາຍຄົນນຶ່ງທີ່ມີຄົນກຽດຊັງໄດ້ມາເຊື່ອໃນພຣະເຈົ້າ ແລະພຣະເຢຊູເອງກໍໄດ້ປົກປ້ອງລາວຈາກກຸ່ມຊົນທີ່ຄິດວ່າຕົນເອງດີ ໃນທຸກມື້ນີ້ ຍັງມີຄົນທີ່ຖືກເຍາະເຍີ້ຍໝິ່ນປມາດຍ້ອນອາຊີບຫລືການດຳເນີນຊີວິດຂອງລາວຫລືບໍ?
- ຄົນແບບໃດທີ່ຄົນອື່ນເຫັນວ່າລາວເປັນຄົນບາບ ໂດຍສະເພາະຈາກກຸ່ມຄົນທີ່ຄິດວ່າເຂົາເຈົ້າເປັນຄົນດີ?
- ທ່ານເຄີຍເຫັນໃນກໍຣະນີນີ້ເກີດຂຶ້ນຫລືບໍ?
- ພຣະເຢຊູຍັງບໍ່ໄດ້ປະຖິ້ມຝູງຊົນ...ສິ່ງນີ້ມີຄວາມໝາຍຕໍ່ທ່ານຢ່າງໃດ?

17. SO - **ຂໍ້ສັງເກດ:** ຖ້ອຍຄຳທີ່ພຣະເຢຊູຊົງກ່າວວ່າ ເຮົາມາເພື່ອສແວງຫາແລະຊ່ອຍຜູ້ທີ່ຫລົງເສັ້ງໃຫ້ລອດພົ້ນ ຊຶ່ງເໝືອນກັບເປັນການໃຫ້ກຽດຊັກຂາຍແລະເປັນຂໍ້ສລຸບໃຫ້ເຫັນວ່າ ຄົນອື່ນຢູ່ທີ່ນັ້ນກຳລັງຄິດແນວໃດ.

SA - ການນຳໃຊ້ໃນຊີວິດຝ່າຍວິນຍານ: ຖ້າເຮົາປາຖນາໃຫ້ພຣະເຈົ້າຮັກເຮົາ ເຮົາກໍຕ້ອງຍອມຮັບວ່າ ເຮົາໄດ້ຫລົງເສັ້ງໄປຈາກພຣະເຈົ້າ ເຮົາເປັນຄົນບາບແລະຍອມຈຳນົນເພື່ອໃຫ້ພຣະເຈົ້າຊົງຊ່ອຍເຮົາ.

SAQ - ຄຳຖາມນຳໄປສູ່ການນຳໃຊ້ໃນຊີວິດຝ່າຍວິນຍານ;

18. SO - **ຂໍ້ສັງເກດ:** *ໃນເຣື່ອງນີ້ ເຮົາໄດ້ເຫັນວ່າພຣະເຢຊູ ພຽງແຕ່ເປັນຜູ້ນຳທີ່ສຳຄັນຄົນນຶ່ງ ທີ່ມີຄວາມເປັນຫ່ວງຊາຍຄົນນຶ່ງທີ່ຄົນທັງຫລາຍກຽດຊັງລາວ. ພຣະເຢຊູຮູ້ຈັກຊື່ຂອງຊາຍຄົນນັ້ນດີ ພຣະເຢຊູບ່ເຫັນດີນຳຄວາມຄິດຂອງຝູງຊົນເຫລົ່ານັ້ນ ພຣະອົງຮູ້ດີເຖິງການຈົ່ມຢູ່ໃນໃຈຂອງເຂົາເຈົ້າ. ເຊັ່ນດຽວກັນ ພຣະເຢຊູສາມາດທີ່ຈະເວົ້າໄດ້ວ່າ ຊັກຂາຍໄດ້ຮັບຄວາມພົ້ນແລ້ວໃນມື້ນັ້ນ. ຈາກເຫດການໃນເຣື່ອງນີ້ໄດ້ຊີ້ໃຫ້ເຮົາເຫັນວ່າພຣະເຢຊູຊົງເປັນພຣະເຈົ້າ.*

SA - ການນຳໃຊ້ໃນຊີວິດຝ່າຍວິນຍານ: ເມື່ອເຮົາຍາກຮູ້ວ່າໃນທຸກມື້ນີ້ພຣະເຈົ້າໄດ້ພົວພັນກັບເຮົາຢ່າງໃດ ເຮົາ ສາມາດເບິ່ງໄດ້ຈາກເຣື່ອງນີ້ວ່າພຣະເຈົ້າຊົງກະທຳກັບຝູງຊົນ ແລະກັບຊັກຂາຍແນວໃດ.

SAQ - ຄຳຖາມນຳໄປສູ່ການນຳໃຊ້ໃນຊີວິດຝ່າຍວິນຍານ:

- ໃນທຸກມື້ນີ້ ທ່ານຄິດວ່າມີຄົນຢາກຮູ້ວ່າພຣະເຈົ້າອາດຈະພົວພັນກັບເຂົາເຈົ້າຢູ່ບໍ?
- ແມ່ນຫຍັງໃນເຣື່ອງນີ້ ທີ່ຄົນທັ້ງຫລາຍອາດຈະຢາກຮູ້?
- ແມ່ນຫຍັງໃນເຣື່ອງນີ້ ອາດຈະຕອບຄຳຖາມຂອງທ່ານ ຫລືຄຳຖາມຂອງຄົນອື່ນໆ ?

19. SO - **ຂໍ້ສັງເກດ:** ທຳອິດ ເຮົາເຫັນແຈ້ງວ່າຊັກຂາຍຕາມຫາພຣະເຢຊູ ແຕ່ເວລາຕໍ່ມາ ແທ້ຈິງແລ້ວແມ່ນພຣະເຢຊູເປັນຜູ້ຊົງຕາມຫາຊັກຂາຍ.

SA - ການນຳໃຊ້ໃນຊີວິດຝ່າຍວິນຍານ: ໃນເຣື່ອງ ເຮົາເຫັນວ່າຊັກຂາຍຕາມຫາພຣະເຢຊູ ແຕ່ພຣະເຢຊູກໍຊົງຕາມຫາຊັກຂາຍເໝືອນກັນ ຊຶ່ງທັ້ງສອງກໍຣະນີນີ້ແມ່ນຄວາມຈິງ ເຮົາຕ້ອງສແວງຫາພຣະເຈົ້າ ແຕ່ໃຫ້ເຮົາຮູ້ວ່າພຣະເຈົ້າກໍຊົງຕາມຫາເຮົາເໝືອນກັນ.

SAQ - ຄຳຖາມນຳໄປສູ່ການນຳໃຊ້ໃນຊີວິດຝ່າຍວິນຍານ:

- ຈິງຫລືບໍ່ ທີ່ຄົນເຮົາຈຳເປັນຕ້ອງສແວງຫາພຣະເຈົ້າ?
- ເຮົາເຫັນຫຍັງໃນເຣື່ອງນີ້ທີ່ບອກວ່າ ພຣະເຈົ້າຊົງຕາມຫາມະນຸດຢູ່?
- ຄັນຊັ້ນ...ແມ່ນຫຍັງກັນແທ້? ພຣະເຈົ້າຕາມຫາມະນຸດ ຫລືມະນຸດຕາມຫາພຣະເຈົ້າ?
- ທັ້ງສອງຢ່າງນີ້ ໄດ້ຂັດແຍ່ງກັນຫລືບໍ່? ຈົ່ງໃຫ້ຄຳອະທິບາຍ?

Appendix C: ພາກເພີ້ມເຕີມ ຄ.

ລາຍງານຈາກຜູ້ໃຊ້ ການເປັນທີ່ປຶກສາແລະການເຕີບໃຫຍ່ຢ່າງທະວີຄູນ

ຂ້າພະເຈົ້າອ່ານບໍ່ໄດ້ ແຕ່ໄດ້ຮັບໃຊ້ພຣະເຈົ້າເປັນສິດຍາພິບານໄດ້ 5 ປີແລ້ວ ຂ້າພະເຈົ້າໄດ້ພົບກັບພຣະເຈົ້າໃນປີ 1933 ແລະຂ້າພະເຈົ້າມີຄວາມປາຖນາຈະຮັບໃຊ້ພຣະເຈົ້າ ຢາກມີຄວາມຮູ້ໃນພຣະຄັມພີໂດຍເຂົ້າຮຽນໃນໂຮງຮຽນພຣະຄັມພີບ່ອນໃດກໍໄດ້ ແຕ່ໂຮງຮຽນບໍ່ສາມາດຮັບເອົາຂ້າພະເຈົ້າເຂົ້າໄປຮຽນເພາະວ່າອ່ານແລະຂຽນບໍ່ໄດ້ ແລະຂ້າພະເຈົ້າເອງກໍບໍ່ເຂົ້າໃຈພຣະຄຳທີ່ເທສນາຢ່າງຖ່ອງແທ້ເພາະມັນເປັນຮູບແບບທີ່ຈະຕ້ອງໄດ້ອ່ານ ຂ້າພະເຈົ້າບໍ່ສາມາດແບ່ງປັນຂ່າວປະເສີດໃຫ້ຄົນໃນຄອບຄົວແລະເພື່ອນໆ ໄດ້. ແລ້ວພຣະເຈົ້າໄດ້ຊົງນຳ TGSP ເຂົ້າມາໃນຊີວິດແລະໃນການຮັບໃຊ້ ຂ້າພະເຈົ້າຂອບພຣະຄຸນພຣະອົງເປັນຢ່າງຍິ່ງທີ່ໄດ້ຮຽນຮູ້ເຣື່ອງເຖິງ 155 ເຣື່ອງຜ່ານວິທີການເລົ່າເຣື່ອງເຈາະໃຈ ໃນຕອນນີ້ຂ້າພະເຈົ້າມີຄວາມສຸກໃຈທີ່ສາມາດແບ່ງປັນຂ່າວປະເສີດໃຫ້ແກ່ຄົນທີ່ອ່ານແລະຂຽນໄດ້ ກັບທັງຄົນທີ່ອ່ານແລະຂຽນບໍ່ໄດ້.

Y. Babu - Evangelist/Pastor MMBC - Karnataka, India.

"ລອງຄິດເຖິງຄົນກຸ່ມນຶ່ງຈາກວັທນະທັມໃດວັທນະທັມນຶ່ງ ທີ່ມີອາຍຸໃກ້ຄຽງກັນ ທັງເຊື່ອແລະບໍ່ເຊື່ອໃນພຣະເຈົ້າ ແລະມີສ່ວນເຂົ້າມາຄົ້ນຫາຊຸມຊັບທີ່ມີຢູ່ໃນພຣະຄຳຂອງພຣະເຈົ້າ."
ຖ້າທ່ານຄິດໄດ້ ທ່ານຈະເຫັນພາບຂອງສິ່ງທີ່ເກີດຂຶ້ນໃນກຸ່ມສຶກສາການເລົ່າເຣື່ອງເຈາະໃຈ ພວກເຮົາໄດ້ນຳເອົາການເລົ່າເຣື່ອງເຈາະໃຈໄປໃຊ້ໃນຫລາຍທີ່ຫລາຍບ່ອນ ໃນການອອກໄປປະກາດ ທັງກຸ່ມຜູ້ໃຫຍ່ທີ່ສຶກສາພຣະຄັມພີຕາມບ້ານເຮືອນ, ກຸ່ມຊາວໜຸ່ມແລະກຸ່ມເດັກນ້ອຍ ແລະໄດ້ພົບວ່າແນວຄິດການເລົ່າເຣື່ອງເຈາະໃຈມີຜົນຕໍ່ການເທສນາຂອງຂ້າພະເຈົ້ານຳ.

Pastor Chris Johnson - Calvary Chapel, USA

ການເລົ່າເຣື່ອງເຈາະໃຈເປັນວິທີການທີ່ພຣະເຈົ້າປະທານໃຫ້ເພື່ອຄຣິສຕະຈັກຈະບັນລຸຜົນສຳເຣັດພຣະມະຫາບັນຊາໃນຍຸກສມັຍຂອງພວກເຮົາ ເຖິງແມ່ນເຮົາຍັງຕ້ອງໃຊ້ວິທີການອະທິບາຍພຣະຄຳຂອງພຣະເຈົ້າມາເປັນເວລາຫລາຍສັດຕະວັດ ເຮົາກໍຍອມຮັບວ່າຍັງມີຄວາມຈຳກັດຢູ່.

ຫລັງຈາກທີ່ໄດ້ຮຽນວິທີການເລົ່າເຣື່ອງເຈາະໃຈຈາກປຶ້ມຄູ່ມືແລ້ວ ຂ້າພະເຈົ້າກ້າເວົ້າວ່ານີ້ແມ່ນວິທີການສ້າງສາວິກທີ່ດີກວ່າ ການເລົ່າເຣື່ອງເຈາະໃຈໄດ້ປ່ຽນການເບິ່ງໂລກຂອງຂ້າພະເຈົ້າ ແລະເຮັດໃຫ້ຂ້າພະເຈົ້າເຫັນພຣະຄຳຂອງພຣະເຈົ້າເລິກເຊິ່ງຫລາຍຂຶ້ນ ການເລົ່າເຣື່ອງເຈາະໃຈສຳຄັນຫລາຍໃນປະເທດຊູດານໃຕ້ ປະເທດຂອງຂ້າພະເຈົ້າ ສະຖິຕິຂອງຄົນທີ່ອ່ານບໍ່ໄດ້ນັ້ນສູງຫລາຍ ແຕ່ຂ້າພະເຈົ້າກໍເຫັນວ່າມັນມີຜົນດີຕໍ່ຄົນທີ່ມີການສຶກສາອີກດ້ວຍ. ຂ້າພະເຈົ້າຂໍແນະນຳປຶ້ມຄູ່ມືເຫລັ້ມນີ້ຕໍ່ຜູ້ນຳຄຣິສຕຽນທົ່ວໂລກ ແລະອະທິຖານວ່າ ທີຈີແອສພີ ຈະພຍາຍາມຫລາຍຂຶ້ນອີກສອງເທົ່າ ໃນການຝຶກອົບຮົມໃຫ້ຫລາຍຂຶ້ນ ກວ້າງຂຶ້ນ ປຶ້ມຄູ່ມືເຫລັ້ມນີ້ເປັນຈຸດເລີ້ມຕົ້ນທີ່ດີ ຖ້າທ່ານຕ້ອງການຝຶກອົບຮົມຈົນກາຍເປັນຜູ້ຝຶກອົບຮົມທີ່ມີຄຸນນະວຸດທິ.

Rev. Danniel Chagai Gak - Anglican Church of Sudan

ຂ້າພະເຈົ້າເປັນນັກວິຊາການ ແລະນັກສາສນາສາດດ້ານມິສຊັນ ຈົບປະຣິຍາເອກຈາກມະຫາວິທຍາລັຍສາສນາສາດ

ຟູລເລີ ແລະທຳງານຖ້າມກາງຄົນທີ່ມີການສຶກສາສູງມາຫລາຍປີ ແຕ່ຂ້າພະເຈົ້າເລີ້ມເຂົ້າໃຈວ່າ ຣະບົບການສຶກສາ ທາງປະເທດຕາເວັນຕົກສມັຍໃໝ່ໄດ້ຈຳກັດສມອງຂອງຂ້າພະເຈົ້າໃຫ້ແຕ່ສມອງຂ້າງເບື້ອງຊ້າຍເທົ່ານັ້ນໃນການສອນ (ສມອງເບື້ອງຂວາໃຊ້ສຳລັບການວິເຄາະ ຄາດຄະເນ ການຮຽນແບບອະທິບາຍຖ້ອຍຄຳ)

ດ້ວຍພລັງຂອງວິທີການເລົ່າເຣື່ອງເຈາະໃຈ ຊຶ່ງກໍ່ຕັ້ງຂຶ້ນໂດຍ ນາງໂດໂຣທີ ແລະກຸ່ມທີ່ນາງນຳພາ ຂ້າພະເຈົ້າເລີ້ມ ເຂົ້າໃຈວ່າຫລາຍຕໍ່ຫລາຍຄັ້ງອົງພຣະເຢຊູຄຣິດຊົງສອນດ້ວຍວິທີເລົ່າເຣື່ອງ ແມ່ນແຕ່ຄົນທີ່ມີຄວາມຮູ້ສູງໃນສມັຍຂອງ ພຣະອົງ ການເຂົ້າມາຝຶກອົບຮົມການເລົ່າເຣື່ອງຈຶ່ງໄດ້ປ່ຽນການຮັບໃຊ້ຊາວຢິວຂອງຂ້າພະເຈົ້າ. ຈຳເປັນທີ່ຂ້າພະ ເຈົ້າຕ້ອງປ່ຽນໃໝ່ ແລະຕ້ອງໃຫ້ຫລຸດອອກຈາກຄວາມຄິດທີ່ເຂົ້າຂີ້ໝ້ຽງຂອງຂ້າພະເຈົ້າ ຈະຕ້ອງນຳເອົາພຣະຄຳຂອງ ພຣະເຈົ້າອອກມາເປັນຊີວິດແລະສິ່ງຜົນກະທົບທີ່ດີໃນຊີວິດຂອງຄົນອື່ນນຳ.

ການເລົ່າເຣື່ອງເຈາະໃຈຊ່ອຍກະຕຸ້ນໃຫ້ຊາວຕາເວັນຕົກໃນຍຸກຫລັງ ໃນສມັຍໃໝ່ ກອບກູ້ຄືນຄວາມສາມາດໃນການ ເລົ່າເຣື່ອງ ແລະຍັງຊ່ອຍຄົນໃນຄຣິສຕະຈັກທີ່ມີຄົນຮຽນຮູ້ດ້ວຍວິທີປາກເປົ່າໃນທະວີບອື່ນໆ ອີກນຳ ຄຣູຝຶກຜູ້ຊຳນານ ທຸກຄົນຈະໄດ້ພົບວ່າ ການຊົງຮຽກເອີ້ນຂອງພຣະເຈົ້າໄດ້ຮັບການປັບປຸງໃຫ້ດີຢ່າງເລິກເຊິ່ງ ຜ່ານພລັງແຫ່ງການເລົ່າ ເຣື່ອງ ຂ້າພະເຈົ້າຈຶ່ງຂໍແນະນຳໃຫ້ໃຊ້ການເລົ່າເຣື່ອງເຈາະໃຈເປັນທາງໄປສູ່ເປົ້າໝາຍນັ້ນ.

Bill Bjoraker, PhD -Professor of Judeo-Christian Study
William Carey International University, USA

ໃນຂະນະທີ່ຄຣິສຕຽນກຳລັງແລ່ນຕາມຫລັງໂອກາດ ທີ່ຈະທຳງານເພື່ອຄວາມຍຸດຕິທັມໃນສັງຄົມ ໂລກຍັງຄົງຫິວກະ ຫາຍຄວາມຊອບທັມອັນແທ້ຈິງ ແລະມີຢ່າງດຽວທີ່ຈະເຮັດໃຫ້ຄວາມຫິວກະຫາຍໄດ້ກາຍເປັນຄວາມອີ່ມເຕັມນັ້ນກໍ ແມ່ນພຣະຄຳຂອງພຣະເຈົ້າ...ພຣະເຢຊູຄຣິດ.

ວິທີການສ້າງສາວິກແບບການເລົ່າເຣື່ອງເຈາະໃຈນັ້ນມີຄວາມຫລັກແຫລມທີ່ຈະເຮັດໃຫ້ຄົນທັງປລາດແລະອັສຈັນໃຈ ກັບອົງພຣະເຢຊູຄຣິດ ເຮົາໄດ້ເລົ່າເຣື່ອງເຈາະໃຈກັບພວກລູກຫລານ ໃຊ້ເປັນແນວທາງໃນການເຂົ້າເຝົ້າພຣະເຈົ້າ. ສິດ ຍາພິບານທຸກທ່ານຜ່ານການຝຶກອົບຮົມການເລົ່າເຣື່ອງເຈາະໃຈ ແລະຕອນນີ້ໄດ້ນຳໄປໃຊ້ໃນກຸ່ມຊາວໜຸ່ມ ສິດຍາພິ ບານຝ່າຍພັນທະກິດ ແລະຄະນະກັມມະການ ກໍໄດ້ຫັນມາສນັບສນຸນໃນການພັດທະນາໂປຣກຣາມການເລົ່າເຣື່ອງ ເຈາະໃຈແລະໂຮງຮຽນພຣະຄັມພີປາກເປົ່າໃນອັຟຣິກາ.

ໂອກາດໃຊ້ວິທີການສຶກສາພຣະຄັມພີໂດຍການຫາຂໍ້ສລຸບຈາກການສັງເກດເນື້ອເຣື່ອງ ເຮັດໃຫ້ການປະກາດແລະ ການສ້າງສາວິກເຕີບໃຫຍ່ຂຶ້ນ ເຮົາໄດ້ຮັບການຊົງຮຽກໃຫ້ເຂົ້າໄປຮັບໃຊ້ໃນເມືອງຕ່າງໆ ໃນອະເມຣິກາຊຶ່ງມີປະຊາ ຊົນທີ່ບໍ່ມີຄວາມຫວັງ ເພາະເຂົາເຈົ້າພົບແຕ່ຜູ້ສອນປອມ ຂ່າວປະເສີດທີ່ປອມແປງ ແລະລັດທິຕ່າງໆ ຄວາມຫວັງ ດຽວຂອງເຂົາເຈົ້າກໍແມ່ນຂ່າວປະເສີດແທ້ເທົ່ານັ້ນ ດຽວນີ້ເຮົາສາມາດໃຊ້ວິທີການຂອງພຣະເຢຊູໃນການສອນ ເຮົາ ມີຫລັກການເລົ່າເຣື່ອງເຈາະໃຈທີ່ສາມາດໃຊ້ໄດ້ໃນທັນທີ ເຊື່ອວ່າພຣະເຈົ້າຊົງທຳການໄຖ່ແລະການຮື້ຟື້ນມາໃຫ້ແກ່ ວັດທະນະທັມທີ່ໄດ້ຖືກທຳລາຍໄປ.

Mark Sands - President Church Builder Foundation, Global

Mentoring and Multiplication
ການເປັນຜູ້ໃຫ້ຄຳປຶກສາແລະການເຕີບໃຫຍ່ຢ່າງທະວີຄູນ

ຄຳພຍານສາມຄົນທຳອິດມາຈາກຊາຍສາມຄົນທີ່ໄດ້ຮັບການຝຶກໂດຍຜູ້ບໍຣິຫານ TGSP ຜູ້ທີ່ລາວໄດ້ຝຶກກ່ຳຈະໄປຝຶກອົບຮົມຄົນອື່ນຕໍ່ໄປ...ນີ້ແມ່ນທາງຂອງພຣະເຈົ້າ ບໍ່ແມ່ນບໍ?

ບິດຊ໊ອບທ່ານນຶ່ງໃນເອມບູ ຢືນຂຶ້ນແລະເວົ້າວ່າ "ຄຣິສຕະຈັກກຳລັງມີບັນຫາ ເພາະເຂົາເຈົ້າຂາດຄົນລຸ້ນພໍ່ ທີ່ມີຄວາມຮູ້ຄວາມເຂົ້າໃຈໃນພຣະຄັມພີ ຊ່ອຍບອກຄຣູຝຶກຂອງທ່ານແດ່ວ່າ ຂໍຂອບໃຈຫລາຍໆ ທີ່ໄດ້ໃຫ້ຄວາມສາມາດແກ່ບຣາມູເອນ ເພື່ອຈະໄດ້ເປັນພໍ່ໃຫ້ແກ່ບິດຊ໊ອບ"

Bramuel Musya - CEO Straight Path Resources, Kenya

ວິທີການເລົ່າເຣື່ອງເຈາະໃຈຊ່ອຍໃຫ້ຂ້າພະເຈົ້າຝຶກອົບຮົມຜູ້ນຳຝ່າຍວິນຍານຫລາຍຂຶ້ນກວ່າແຕ່ກ່ອນ ຊຶ່ງເວົ້າໄດ້ວ່າເປັນແບບທະວີຄູນ ແລະຊ່ອຍໃຫ້ເຂົາເຈົ້າຢູ່ໃນຄຣິສຕະຈັກ ແລະສິ່ງເຂົາເຈົ້າອອກໄປເຮັດງານພັນທະກິດພຣະຄຳຂອງພຣະເຈົ້າ ສຳລັບຄົນທີ່ອ່ານໄດ້ແລະອ່ານບໍ່ໄດ້ ທັງເດັກນ້ອຍແລະຄົນແກ່ຊະຣາ ຊຶ່ງເປັນອາຫານຝ່າຍວິນຍານເພື່ອໃຫ້ເຮົາໄດ້ສັມພັນສນິດກັບພຣະເຈົ້າຕຣິເອການຸພາບ.

Dr. Mark Muniyappa - All India Council / TGSP- India

ຈະກ່າວຄຳຂອບໃຈນຳທຸກທ່ານຢ່າງໃດດີ? ຂອບພຣະຄຸນພຣະເຈົ້າຫລາຍໆ ແລະສຳລັບເຄື່ອງມືເລົ່າເຣື່ອງເຈາະໃຈ ເພາະເປັນເຄື່ອງມືທີ່ໃຊ້ປໂຍດໄດ້ຫລາຍທີ່ສຸດ ທີ່ຂ້າພະເຈົ້າໄດ້ພົບເຫັນຫລັງຈາກທຳງານມາໄດ້ 20 ປີ ການເລົ່າເຣື່ອງເຈາະໃຈຊ່ອຍໃຫ້ຂ້າພະເຈົ້າເຂົ້າໃຈເຖິງພຣະຄຳຂອງພຣະເຈົ້າເລິກເຊິ່ງແລະກວ້າງອອກ ແລະຍັງມີປໂຍດນຳໄປໃຊ້ໃນຊີວິດຝ່າຍວິນຍານອີກ ບິດຮຽນທີ່ໄດ້ຮຽນຮູ້ແມ່ນໃຫ້ເຮົາຊອກຫາທາງເລືອກກ່ອນຈະຕັດສິນໃຈຢ່າງໃດຢ່າງນຶ່ງ ເຮັດໃຫ້ທີມງານຂອງຂ້າພະເຈົ້າມີສາຍຕາກວ້າງໄກ ເຫັນຜົນກະທົບອັນດີທີ່ເກີດຂຶ້ນຈາກການເຮັດງານ.

Ramesh Sapkota - CEO Kingdom Investment Nepal,
Organisation Fighting against Human Trafficking

ສິ່ງທຳອິດ ຢາກຈະຂໍຖວາຍພຣະກຽດແລະຄຳຂອບພຣະຄຸນຈາກຫົວໃຈແດ່ອົງພຣະເຢຊູຄຣິດເຈົ້າ ແລະອ້າຍຜູ້ເປັນເພື່ອນຮ່ວມອະທິຖານຄືທ່ານ ຣາເມສ

ຕອນທີ່ຂ້າພະເຈົ້າພົບກັບລາວເທື່ອທຳອິດ ຂ້າພະເຈົ້າຍັງເປັນຄຣິສຕຽນໃໝ່ແລະງານຮັບໃຊ້ກ່ຳເໝືອນກັບເດັກນ້ອຍທີ່ເກີດໃໝ່ ຂ້າພະເຈົ້າຕ້ອງການແມ່ນຝ່າຍວິນຍານທີ່ຈະລ້ຽງດູຂ້າພະເຈົ້າ ທ່ານຣາເມສໄດ້ຝຶກອົບຮົມການເລົ່າເຣື່ອງ

ເຈາະໃຈໃຫ້ຊຶ່ງເປັນພຽງການເລີ້ມຕົ້ນ ໃນເວລານັ້ນພວກເຮົາມີຜູ້ຂຽນບໍ່ຫລາຍຄົນເທົ່າໃດ ແລະການປະຊຸມຂອງພວກເຮົາກໍຍັງອ່ອນຢູ່ ລາວໄດ້ຝຶກອົບຮົມການເລົ່າເຣື່ອງເຈາະໃຈໃນຄຣິສຕະຈັກຂອງຂ້າພະເຈົ້າ.

ພຣະເຈົ້າໄດ້ສ້າງຄຣິສຕະຈັກຂອງພຣະອົງ 8 ບ່ອນຜ່ານການອົບຮົມເລົ່າເຣື່ອງເຈາະໃຈໃນເວລາອັນສັ້ນ ແລະປີນີ້ ພວກເຮົາຈະສ້າງຂຶ້ນອີກ 2 ຄຣິສຕະຈັກ.

ຂ້າພະເຈົ້າໃຊ້ວິທີການເລົ່າເຣື່ອງເຈາະໃຈເພື່ອເພີ້ມຄຣິສຕະຈັກ ແລະນີ້ແມ່ນສາເຫດທີ່ເຮັດໃຫ້ຂ້າພະເຈົ້າໄດ້ຮັບຄຳເຊີນໃຫ້ມີສ່ວນໃນການຝຶກອົບຮົມຊຶ່ງຮວ ມໄປເຖິງຜູ້ນຳໃນຄຣິສຕະຈັກລູກກໍໄດ້ຮັບການຝຶກອົບຮົມດ້ວຍ ແລະເຂົາເຈົ້າສາມາດໃຊ້ວິທີນີ້ໄດ້ດີກວ່າຂ້າພະເຈົ້າ ຂໍຂອບໃຈນຳທ່ານຣາເມສຫລາຍໆ ຂ້າພະເຈົ້າພຽງແຕ່ເປັນໂຕດ້ວງທີ່ອ່ອນນ້ອຍແລະຕອນນີ້ທ່ານກຳລັງຊ່ອຍໃຫ້ຂ້າພະເຈົ້າເປັນແມງກະເບື້ອທີ່ໃຫຍ່ເຕັມທີ່.

ຂໍຂອບໃຈຜູ້ຮັບໃຊ້ຂອງພຣະເຈົ້າທີ່ທຳການຮັບໃຊ້ຜ່ານວິທີການເລົ່າເຣື່ອງເຈາະໃຈ ເພື່ອຖວາຍພຣະກຽດແດ່ພຣະນາມຂອງພຣະອົງ ເພື່ອເປັນພຣະພອນແກ່ຂ້າພະເຈົ້າແລະວຽກງານການຮັບໃຊ້.

Ps. Krishna P. Ghimire - Ass. Grn. Secretary,
National Churches Fellowship of Nepal.

✞

Appendix D: ພາກເພີ່ມເຕີມ ງ.

ມິສຊັນນາຣີຖ້າມກາງຜູ້ທີ່ຍັງເຂົ້າໄປບໍ່ເຖິງໃນປະເທດທີ່ປິດປະຕູ

ເທື່ອທຳອິດທີ່ໄດ້ຍິນເຣື່ອງໂຮງຮຽນພຣະຄັມພີປາກເປົ່າກໍບໍ່ໄດ້ສົນໃຈ ເພາະຄິດວ່າພວກເຮົາບໍ່ສາມາດສ້າງຄຣິສຕະຈັກທີ່ເຂັ້ມແຂງມີຮາກຢັ່ງເລິກໃນພຣະຄຳຈາກການເລົ່າເຣື່ອງພຣະຄັມພີແບບເດັກນ້ອຍນີ້ ແຕ່ເມື່ອຂ້າພະເຈົ້າໄດ້ໄປຮ່ວມປະຊຸມມິສຊັນໃນສະຫະຣັດເທື່ອນຶ່ງ ຂ້າພະເຈົ້າໄດ້ພັກເຊົາກັບຄອບຄົວທີ່ສາມີແລະພັຣຍາສອນການເລົ່າເຣື່ອງແບບປາກເປົ່າທົ່ວໂລກ ຂ້າພະເຈົ້າຈຶ່ງມີຄຳຖາມຢ່າງຫລວງຫລາຍໃນໃຈ ຈຶ່ງເດີນທາງໄປກັບເຂົາເຈົ້າເພື່ອຖ່າຍວິດີໂອໃນສິ່ງທີ່ເຂົາເຈົ້າສອນໃນທ້າຍອາທິດນັ້ນ.

ຂ້າພະເຈົ້າເຊື່ອວ່າ ຄຣິສຕະຈັກແລະຜູ້ເຊື່ອຈະເຂັ້ມແຂງໄດ້ກໍຕ້ອງຍຶດໝັ້ນ ເຂັ້ມແຂງໃນພຣະຄຳ ຈະເປັນໄປບໍ່ໄດ້ຖ້າມີແຕ່ຄົນດຽວທີ່ຄຸ້ນເຄີຍກັບພຣະຄຳ ແຕ່ລາວຕ້ອງສາມາດອະທິບາຍພຣະຄັມພີໄດ້ອີກດ້ວຍ ແລະຕ້ອງສາມາດຈັດແບ່ງຄວາມຈິງໄດ້ຢ່າງຖືກຕ້ອງ ສິ່ງໃດທີ່ໜ້ອຍໄປກວ່ານີ້ກໍຈະເຮັດໃຫ້ຄຣິສຕຽນພົບກັບລັດທິທີ່ຈະປະສົມເຂົ້າກັບຄວາມເຊື່ອ ແລະບັນຫາຕ່າງໆ ຢ່າງຫລວງຫລາຍ.

ຂ້າພະເຈົ້າໄດ້ທຸ້ມເທເວລາໃນການສຶກສາພຣະຄັມພີແບບສັງເກດແລະຕີຄວາມໝາຍຫລາຍເພີ້ມຂຶ້ນເລື້ອຍໆ ສິ່ງເຫລົ່ານີ້ບໍ່ໄດ້ສູນເສັຽໄປເມື່ອຂ້າພະເຈົ້າມາພົບການເລົ່າເຣື່ອງເຈາະໃຈ ແຕ່ໄດ້ທຸ້ມເທເວລາໃສ່ຫລາຍຂຶ້ນໄປເລື້ອຍໆ

ແຕ່ເມື່ອຕ້ອງໄດ້ສຶກສາແບບສັງເກດແລະຕີຄວາມໝາຍແບບປາກເປົ່າ ກໍພົບກັບບັນຫາວ່າມັນເປັນໄປໄດ້ບໍ່ ແລະເປັນຫຍັງຈຶ່ງຈຳເປັນ?

ປະການທຳອິດ ເປັນຫຍັງຈຶ່ງຈຳເປັນ? ຄົນທີ່ສອນຄວາມສາມາດການສຶກສາພຣະຄັມພີປາກເປົ່າ ໄດ້ໃຊ້ຊີດີແລະວິດີໂອຄລິບຊຶ່ງກໍໄດ້ຮັບຜົນດີກວ່າທີ່ຂ້າພະເຈົ້າຈະອະທິບາຍເຖິງຄວາມຈຳເປັນຂອງການສອນພຣະຄັມພີແບບປາກເປົ່າ.

ຈົນມາຮອດມື້ນຶ່ງໄດ້ມີການປ່ຽນແປງເກີດຂຶ້ນ ຈາກການລາຍງານຂອງຄະນະກັມມະການພັນທະກິດໂລກທີ່ໂລຊານໃນປີ 2004 ໄດ້ພົບສະຖິຕິວ່າຄົນຈຳນວນຫລາຍໃນໂລກເປັນຄົນທີ່ຮຽນແບບປາກເປົ່າ ແມ່ນແຕ່ໃນສັງຄົມທີ່ມີສະຖິຕິສູງທີ່ອ່ານໄດ້ຂຽນໄດ້ ບໍ່ວ່າຈະຢູ່ໃນປະເທດອັງກິດຫລືອະເມຣິກາ ສະຖິຕິການຮຽນແບບນີ້ຍິ່ງສູງຂຶ້ນໃນສັງຄົມທີ່ບໍ່ຄ່ອຍມີຄົນອ່ານໜັງສື.

ທີມງານຂອງພວກເຮົາຮັບໃຊ້ມາເປັນເວລາ 17 ປີ ພວກເຮົາໃຊ້ວິທີການປະກາດແບບປາກເປົ່າ ໂດຍທີ່ບໍ່ໄດ້ໃຊ້ຕິວໜັງສືເລີຍ ຄົນໃນທີມໄດ້ຮຽນ ໄດ້ທ່ອງຈຳ ແລະສເນີຂ່າວປະເສີດແບບປາກເປົ່າ ແລະເຮົາໄດ້ເຫັນຜົນອອກມາເປັນຮູບພຣະທັມຢ່າງແທ້ຈິງ ແລະມີຄົນຈຳນວນຫລາຍໄດ້ມາເຊື່ອໃນພຣະເຢຊູຄຣິດ.

ເມື່ອພວກເຮົາທຳການຕິດຕາມຜົນ ພວກເຮົາໄດ້ຫັນກັບໄປໃຊ້ແບບວິຊາການ ຄືຈັດໃຫ້ຜູ້ທີ່ເຊື່ອມີພຣະຄັມພີຄົນລະເຫຼັ້ມ ແລະພົບກັບຄົນເຫລົ່ານັ້ນເພື່ອຈະອ່ານ ຮຽນ ແລະຮຽນຮູ້ວ່າຈະສັງເກດຫຍັງແດ່ໃນສິ່ງທີ່ອ່ານມານັ້ນ ການຕິດຕາມຜົນແບບນີ້ເໝືອນກັບເອົາຫົວໄປຊົນຝາ ເພາະຄົນທີ່ເຊື່ອໃໝ່ກັບອ່ອນແຮງ ບໍ່ເຕີບໃຫຍ່ໃນຄວາມເຊື່ອ ແລະກາຍເປັນຄົນແຂງກະດ້າງ ບາງຄົນກໍຫລົງເສັ້ງໄປ.

ໃນໝູ່ບ້ານແຫ່ງນຶ່ງມີ 20 ຄົນກັບໃຈມາເຊື່ອພຣະເຈົ້າ ເຮົາເນັ້ນການອ່ານພຣະຄັມພີແລະສອນວິທີອ່ານໃຫ້ ວິທີສັງເກດໃນເວລາອ່ານ ລວມທັງໃຊ້ເວລາກັບເຂົາເຈົ້າ ແບ່ງປັນປະສົບການຊີວິດນຳກັນ ຈົນມາເຖິງມື້ນີ້ຍັງບໍ່ມີຜູ້ໃດທີ່ຈະເອີ້ນໄດ້ວ່າເປັນຜູ້ "ຕິດຕາມພຣະເຢຊູຄຣິດ" ໄດ້ເລີຍ ຫລາຍຄົນຢາກຕິດຕາມພຣະເຈົ້າ ແຕ່ເວລາທີ່ຜ່ານໄປເໝືອນກັບວ່າເຂົາເຈົ້າບໍ່ໄດ້ໃສ່ໃຈໃນພຣະຄຳຂອງພຣະເຈົ້າເລີຍ ພຣະຄຳບໍ່ໄດ້ຝັງເລິກໃນຊີວິດຂອງເຂົາເຈົ້າ ການອ່ານ ແລະການສຶກສາພຣະຄັມພີກໍບໍ່ໄດ້ເຂົ້າໄປໃນຄວາມຄິດຂອງເຂົາເຈົ້າເລີຍ.

ບໍ່ພຽງເທົ່ານັ້ນ **ເຂົາເຈົ້າບໍ່ເຄີຍເອົາພຣະຄັມພີໄປເພື່ອຈະແບ່ງປັນກັບຄົນອື່ນ** ແລະເຮົາຈະເຂົ້າເຖິງຄົນທີ່ເຂົ້າໄປບໍ່ເຖິງໄດ້ແນວໃດ ຖ້າຫາກຄົນທີ່ຮັບໃຊ້ຢູ່ນັ້ນບໍ່ໄປຮັບໃຊ້ຄົນອື່ນໆ ຕໍ່ໄປ. ຂ້າພະເຈົ້າເຊື່ອວ່າການສອນພຣະຄັມພີແບບປາກເປົ່າມີປໂຍດທີ່ເປັນພື້ນຖານຫລາຍຢ່າງ ປະການທຳອິດ ພຣະຄຳຂອງພຣະເຈົ້າຈະຊາບຊຶມເຂົ້າໄປໃນຊີວິດຄົນຫລາຍກວ່າການອ່ານ ປະການທີສອງ ເຂົາເຈົ້າສາມາດແບ່ງປັນຄວາມຈິງໃຫ້ກັບຄົນອື່ນໄດ້ດີກວ່າ ຊຶ່ງເປັນການຮັບໃຊ້ທີ່ຈະເກີດຜົນຕໍ່ໄປ

ສຳລັບປະເທດທີ່ປິດປະຕູນັ້ນ ຄົນທີ່ຟັງເຣື່ອງຂອງພຣະເຈົ້າໄປແລ້ວກໍຈະບໍ່ມີບັນຫາກັບທາງອຳນາດການປົກຄອງ ຂ້າພະເຈົ້າໄດ້ຂຽນກ່ຽວກັບເຣື່ອງນີ້ໄວ້ຢ່າງຫລວງຫລາຍ ແຕ່ທ່ານຈະໄດ້ຟັງແລະໄດ້ເຫັນຈາກຊີດີແລະວີດີໂອຄລິບ.. ແລະທ່ານຈະໄດ້ເຫັນຢ່າງຊັດແຈ້ງເຖິງວິທີນີ້.

ອີກປະການນຶ່ງ ແມ່ນຄຳຖາມທີ່ສຳຄັນທີ່ສຸດຄື "ເປັນໄປໄດ້ບໍ່ທີ່ຈະສອນພຣະຄັມພີຂອງພຣະເຈົ້າແບບສັງເກດແລະອະທິບາຍຖ້ອຍຄຳແບບປາກເປົ່າ?"

ຫລາຍອົງການມີພະແນກທີ່ຈະຊ່ວຍສົ່ງເສີມແລະສອນການຮຽນພຣະຄັມພີແບບປາກເປົ່າ ສ່ວນໃຫຍ່ຈະເປັນສະມາຊິກຂອງ International Orality Network (ION) ມີອົງການທີ່ຊຳນານເປັນພິເສດໃນການສອນພຣະຄັມພີແບບປາກເປົ່າບໍ່ຫລາຍເທົ່າໃດ ຂ້າພະເຈົ້າເອງໄດ້ສຶກສາວິທີການຂອງເຂົາເຈົ້າມາແລ້ວ. ເມື່ອຂ້າພະເຈົ້າໄປຢ້ຽມຢາມສຳນັກງານນຶ່ງໄດ້ຖາມເຂົາເຈົ້າວ່າ "ໃຜເປັນອົງການທີ່ຝຶກອົບຮົມເຣື່ອງການສອນພຣະຄັມພີແບບປາກເປົ່າທີ່ດີທີ່ສຸດ?" ເຂົາເຈົ້າຕອບວ່າ "STS" ຫລືເລົ່າເຣື່ອງເຈາະໃຈ ຂ້າພະເຈົ້າຈຶ່ງໄປເບິ່ງທີ່ເວັບໄຊ ເມື່ອໄດ້ຂໍ້ມູນມາຈຶ່ງເຫັນວ່າແຕກຕ່າງຈາກອົງການອື່ນໆ.

ສິ່ງທີ່ຂ້າພະເຈົ້າມັກຫລາຍທີ່ສຸດແມ່ນ ເຂົາເຈົ້າສາມາດສອນໃຫ້ຄົນສັງເກດຂໍ້ພຣະຄັມພີດ້ວຍວິທີການແບບປາກເປົ່າຢ່າງແທ້ຈິງ ຊຶ່ງໃກ້ຄຽງກັບການຮຽນອະທິບາຍຖ້ອຍຄຳໃນພຣະຄັມພີ ດ້ວຍການໃຊ້ປາກເປົ່າຢ່າງແທ້ຈິງ ໃນທີ່ສຸດຂ້າພະເຈົ້າກໍໄດ້ພົບກັບສິ່ງທີ່ຕາມຫາ ຕໍ່ຈາກນັ້ນກໍໄດ້ໂອ້ລົມກັບເຂົາເຈົ້າທາງສະໄກພ໌

ໃນຕົ້ນເດືອນພຶສຈິກາໄດ້ມີຜູ້ມາຮັບຝຶກອົບຮົມເລົ່າເຣື່ອງເຈາະໃຈສອງຄົນ ແລະໄດ້ທຳການອົບຮົມ 5 ມື້ ສອງມື້ທຳອິດແມ່ນສຳລັບຄຣູຝຶກທີ່ເລືອກມາຈາກທີ່ມ ສາມມື້ຫລັງຈາກນັ້ນແມ່ນຄົນທີ່ຫາກໍໄດ້ຮັບການຝຶກອົບຮົມ ເປັນຜູ້ຝຶກອົບຮົມໝູ່ເພື່ອນຕໍ່ໄປ ດ້ວຍການຊ່ວຍເຫລືອຂອງຄຣູຝຶກອົບຮົມ ເຮັດໃຫ້ພວກເຮົາມີແຮງຊຸກຍູ້ໃນການເຮັດງານພັນທະກິດໄດ້ຢ່າງຫລາຍ ເພາະພວກເຮົາໄດ້ເລີ້ມນຳເອົາວິທີການນີ້ເຂົ້າໄປເພີ້ມເຕີມໃສ່ງານຮັບໃຊ້ທີ່ພວກເຮົາມີຢູ່. ພວກເຮົາເລີ້ມໃຊ້ການເລົ່າເຣື່ອງເຈາະໃຈທັນທີ ແລະພໍໃຈກັບລາຍງານທີ່ໄດ້ຮັບກ່ຽວກັບການດຳເນີນງານນັ້ນ ແຕ່ບໍ່ໄດ້ໝາຍຄວາມວ່າພວກເຮົາເຊົາສອນການສັງເກດ ແລະອະທິບາຍຖ້ອຍຄຳໃນພຣະຄັມພີແບບເດີມ ເພາະວ່າເຖິງຢ່າງໃດແບບເກົ່ານັ້ນກໍຍັງສຳຄັນຢູ່.

ສິ່ງທີ່ພວກເຮົາໄດ້ກະທຳປາກເປົ່າແມ່ນດັ່ງນີ້:

1. ເໝາະສົມ ຮວມເຂົ້າກັບການຮຽນພຣະຄຳທີ່ເປັນຂໍ້ຂຽນ ບໍ່ແມ່ນເອົາມາທົດແທນ ແຕ່ແມ່ນເອົາມາເພີ້ມໃສ່
2. ສາມາດເຂົ້າເຖິງຄົນທີ່ບໍ່ອ່ານຫລືອ່ານບໍ່ໄດ້
3. ໃຊ້ໄດ້ກັບຄົນທຸກລະດັບ ແມ່ນແຕ່ຄົນງານເກັບເອກສານ(ສມງນ)ກໍສາມາດເຮັດໄດ້ (ພວກເຮົາໄດ້ໜູນໃຈໃຫ້ສະມາຊິກຄົນອື່ນໆ ໄດ້ເຮັດເຊັ່ນດຽວກັນ)
4. ເຮັດໃຫ້ພວກເຮົາແບ່ງປັນກັບຄົນອື່ນໄດ້ງ່າຍຂຶ້ນ ຄົນທີ່ພວກເຮົາບໍ່ສາມາດເຂົ້າເຖິງໄດ້ຮັບຝຶກອົບຮົມກ່ອນ ແລະ ໄດ້ຖືກເຜີຍແຜ່ຕໍ່ໄປຢ່າງໄວ.
5. ເປັນວິທີດຽວທີ່ພຣະຄຳຂອງພຣະເຈົ້າຈະແພ່ຂຍາຍໃນປະເທດທີ່ປິດປະຕູຢ່າງປອດພັຍທີ່ສຸດ
6. **ບໍ່ຕ້ອງໃຊ້ເງິນ ເຄື່ອງມື ຫລືຊັພຍາກອນຈາກນອກປະເທດ** ຈຶ່ງເປັນຍຸທວິທີໃນການເຮັດພັນທະກິດທີ່ເກີດຜົນຢ່າງຕໍ່ເນື່ອງຫລາຍທີ່ສຸດ.

ດັ່ງທີ່ກ່າວມາແລ້ວວ່າ ເຄີຍໄດ້ເຫັນວິທີການປາກເປົ່າແບບຕ່າງໆ ຈາກຫລາຍໆ ອົງການ ແຕ່ສ່ວນຫລາຍບໍ່ໄດ້ເລົ່າພຣະຄັມພີປາກເປົ່າ ການເລົ່າເຣື່ອງເຈາະໃຈເນັ້ນໃນການເລົ່າເຣື່ອງໃນພຣະຄັມພີຢ່າງຕົງໄປຕົງມາ ຢ່າງຖືກຕ້ອງ ຊຶ່ງນຳເອົາຂໍ້ພຣະຄັມພີມາເລົ່າຕໍ່ແບບຖອດຖອນຖ້ອຍຄຳ (ທີ່ບໍ່ອອກນອກເຣື່ອງ) ເພື່ອວ່າສິ່ງທີ່ທ່ານແບ່ງປັນນັ້ນຍັງເປັນພຣະຄຳຂອງພຣະເຈົ້າຜ່ານທາງປາກ ວິທີດຽວກັນກັບເຮົາອ່ານພຣະຄັມພີ.

ພຣະຄັມພີທີ່ຂຽນໄວ້ນັ້ນຖືກຈັດໄວ້ເປັນແຫລ່ງຂໍ້ມູນ ເຮົາຕ້ອງສອນພຣະຄຳແລະວິທີຕີຄວາມໝາຍຢ່າງຖືກຕ້ອງ ຈາກພຣະຄຳທີ່ເປັນຂໍ້ຂຽນນັ້ນເຮົາສາມາດໄດ້ພຣະຄຳປາກເປົ່າ ເມື່ອເຮົາສອນພຣະຄັມພີແບບປາກເປົ່າເຮົາຖືປຶ້ມ ແລະເປີດໄວ້ເພື່ອໃຫ້ຮູ້ວ່າຖ້ອຍຄຳທີ່ເຮົາເວົ້ານັ້ນມາຈາກໃສ ຄົນທີ່ຟັງກໍຈະຮູ້ແລະຕິດຕາມໄປນຳ.

ໃນຄຣິສຕະຈັກຍຸກທຳອິດ ໄດ້ມີການອ່ານຖ້ອຍຄຳຈາກພຣະຄັມພີແລະຈະມີຄົນເຂົ້າມາຟັງ ເມື່ອໂປໂລສິ່ງຈົດໝາຍຝາກອອກໄປ ເພິ່ນຂໍໃຫ້ອ່ານດັງໆ ໃນຄຣິສຕະຈັກ ຂ້າພະເຈົ້າແປກໃຈກັບຄຳຖາມຈາກຊີດີແຜ່ນນຶ່ງ...ຄົນໃນສັດຕະວັດແຣກນັ້ນສາມາດອ່ານແລະຂຽນໄດ້ຈັກເປີເຊັນ ໃນເວລາທີ່ມີຄົນຖົ້ມໃຈເກົ່າເອົາໃຈໃໝ່ 3000 ຄົນໃນມື້ດຽວ? ຄຳຕອບກໍຄືປະມານ 5 ເປີເຊັນ.

ອີກຢ່າງນຶ່ງທີ່ຂ້າພະເຈົ້າມັກໃນການເລົ່າເຣື່ອງເຈາະໃຈນັ້ນແມ່ນ ຄວາມຖືກຕ້ອງຕາມພຣະຄັມພີ ສ່ວນສິ່ງອື່ນນັ້ນກໍມີວິທີການສອນແບບໃຫ້ສັງເກດເໝືອນກັນ ຕົວຢ່າງເຊັ່ນ ເມື່ອເລົ່າເຣື່ອງຈົບແລ້ວຈະຕັ້ງຄຳຖາມວ່າຜູ້ຟັງໄດ້ຍິນຫຍັງ ແລະໃຫ້ບອກວ່າສັງເກດເຫັນຫຍັງແດ່ ຈາກນັ້ນກໍມີຄຳຖາມເພື່ອຊ່ວຍໃຫ້ຜູ້ຟັງສາມາດຕີຄວາມໝາຍຢ່າງຖືກຕ້ອງ ແລະໄດ້ເຫັນວ່າຈະນຳໃຊ້ໃນຊີວິດຝ່າຍວິນຍານຢ່າງໃດ ນີ້ເປັນເຄື່ອງມືທີ່ດີຫລາຍ ປັບປຸງແກ້ໄຂຢ່າງດີ ແລະສອນຢ່າງຊ່ຽວຊານ.

ເຣື່ອງລາວຂອງພຣະເຈົ້າ ຈາກການນິຣະມິດສ້າງ ສູ່ ນິຣັນດອນ

ພວກເຮົາໄດ້ພັທນາວິທີການເລົ່າເຣື່ອງເຈາະໃຈມາຈາກຜົນງານທີ່ມີພລັງສິ່ງຜົນໄປທົ່ວໂລກຄື ວິດີໂອເຣື່ອງລາວຂອງພຣະເຈົ້າ ເຣື່ອງນີ້ຍາວ 80 ນາທີຊຶ່ງເປັນເຣື່ອງເລົ່າເປັນລຳດັບເຫດການ ຈາກພັນທະສັນຍາເດີມສູ່ພັນທະສັນຍາໃໝ່ ຊຶ່ງສາມາດຫາຟັງແລະເບິ່ງໄດ້ຕັ້ງແຕ່ປີ 2011 ເປັນຕົ້ນມາ ເຣື່ອງລາວຂອງພຣະເຈົ້າໄດ້ຜລິດອອກເຖິງ 3000 ພາສາ.

ຄຳພຍານຈາກຜູ້ຟັງເຣື່ອງລາວຂອງພຣະເຈົ້າ ຈາກເຄື່ອງຟັງສຽງທີ່ໃຊ້ພລັງແສງຕາເວັນ

ເດັກຜູ້ຊາຍຄົນນຶ່ງໃນປະເທດຊູດານໃຈຮ້າຍໃຫ້ເພື່ອນຮ່ວມຫ້ອງຮຽນຄົນນຶ່ງ ດັ່ງນັ້ນ ລາວຈຶ່ງຖືມີດໄປໂຮງຮຽນນຳເພື່ອຈະຂ້າເພື່ອນຄົນນັ້ນ ໃນມື້ນັ້ນ ຄຣູທ່ານໄດ້ຮັບເຄື່ອງຟັງສຽງທີ່ໃຊ້ພລັງແສງຕາເວັນທີ່ເປັນເຣື່ອງລາວຂອງພຣະເຈົ້າ ຊຶ່ງເປັນພາສາພື້ນເມືອງຂອງເຂົາເຈົ້າ ແລະຄຣູກໍໄດ້ເປີດເຄື່ອງຟັງສຽງເຣື່ອງກາອິນກັບອາເບນໃຫ້ພວກນັກຮຽນຟັງ.

ເມື່ອເດັກຜູ້ຊາຍຄົນນັ້ນໄດ້ຟັງ ກໍມີບາງສິ່ງທີ່ປລາດເກີດຂຶ້ນ ລາວໄດ້ເອົາມີດມາມອບໃຫ້ຄຣູ ສາຣະພາບແຜນການຮ້າຍຂອງລາວ ພຣະເຈົ້າໄດ້ສັມຜັດໃຈຂອງລາວ ໃນມື້ນັ້ນເອງເດັກຊາຍຄົນນັ້ນຂໍໃຫ້ພຣະເຈົ້າຍົກໂທດຄວາມຜິດບາບທັງໝົດໃຫ້ແກ່ລາວ ແລະລາວໄດ້ຕ້ອນຮັບເອົາພຣະເຢຊູເປັນພຣະຜູ້ໂຜດໃຫ້ພົ້ນຂອງລາວ.

ພຣະຄຳຂອງພຣະເຈົ້າໄດ້ເວົ້າກັບໃຈຂອງຄົນ ພວກເຮົາຈຶ່ງຂໍໜູນໃຈໃຫ້ທຸກຄົນໃຊ້ການເລົ່າເຣື່ອງເຈາະໃຈ ໃຊ້ປໂຍດຈາກເຣື່ອງຂອງພຣະເຈົ້າໃນພາສາທ້ອງຖິ່ນນຳດ້ວຍ.

ມີຄົນໃຊ້ "ເຣື່ອງລາວຂອງພຣະເຈົ້າ" ໂດຍໃຊ້ເຄື່ອງຟັງສຽງພລັງແສງຕາເວັນ ຊີດີ ແລະ ເອັມພີ 3 ແລະຍັງມີວິດີໂອ ຊຶ່ງມີພາບປະກອບນຳ ເຮັດໃຫ້ເຣື່ອງລາວມີຊີວິດຊີວາຫລາຍຂຶ້ນ ຄົນຫລາຍລ້ານໄດ້ເບິ່ງ "ເຣື່ອງລາວຂອງພຣະເຈົ້າ" ທັ້ງເປັນສ່ວນຕົວແລະຈາກລາຍການທີວີ ໄດ້ຕອບສນອງຮັບເຊື່ອເປັນຜູ້ຕິດຕາມອົງພຣະເຢຊູຄຣິດ. ຜູ້ຮັບໃຊ້ພຣະເຈົ້າໃນກຸ່ມຕ່າງໆ ຫລາຍພັນຄົນໄດ້ຮັບປໂຍດຈາກ "ເຣື່ອງລາວຂອງພຣະເຈົ້າ"

ການຜລິດເຣື່ອງລາວຂອງພຣະເຈົ້າທີ່ໃຊ້ຜູ້ເລົ່ານຶ່ງຄົນ ຊ່ວຍໃຫ້ຄົນຟັງສາມາດເລົ່າເນື້ອຫາໃນພຣະຄັມພີໃຫ້ຄົນອື່ນຕໍ່ໄປໄດ້ ທີ່ສຳຄັນນັ້ນແມ່ນຄົນທີ່ຢູ່ໃນສັງຄົມແບບປາກເປົ່າຈະມີຄວາມເຊື່ອເມື່ອເຂົາເຈົ້າໄດ້ຍິນ "ເຣື່ອງທັງໝົດ" ທີ່ເລີ້ມຈາກການສ້າງໂລກ, ມະນຸດຕົກຢູ່ໃນຄວາມບາບ ແລະພຣະສັນຍາຂອງພຣະເຈົ້າວ່າຈະມີພຣະຜູ້ໂຜດໃຫ້ພົ້ນສະເດັດມາ ອັນເປັນພື້ນຖານທີ່ຈະເຂົ້າໃຈໃນຂ່າວປະເສີດໄດ້ ພວກເຮົາເຫັນຜົນກະທົບອັນດີແລະພລັງຂອງ "ເຣື່ອງລາວຂອງພຣະເຈົ້າ" ທັ້ງໃນການປະກາດແລະການສ້າງສາວົກ.

ການໃຊ້ "ເຣື່ອງລາວຂອງພຣະເຈົ້າ" ດ້ວຍເຄື່ອງຟັງສຽງພລັງແສງຕາເວັນພ້ອມກັບຮູບປະກອບ (ເປັນພາບດຽວກັນກັບໃນວິດີໂອ) ເຮັດໃຫ້ຜູ້ປະກາດທີ່ເຂົ້າໄປໃນໝູ່ບ້ານ ເຮັດໃຫ້ບ້ານນັ້ນເປັນໂຮງຊິເນມາເຄື່ອນທີ່ ການມີເຄື່ອງອຸປກອນເພີ້ມເຕີມເຊັ່ນ ຄຳສິນທະນາທີ່ຂຽນໄວ້ ຄຳສິນທະນາທີ່ໃຊ້ທາງວິທະຍຸ ຈະຊ່ວຍໃຫ້ຜູ້ໃຊ້ມີຫລາຍວິທີເພື່ອຈະເຮັດໃຫ້ "ເຣື່ອງລາວຂອງພຣະເຈົ້າ" ມີຊີວິດຊີວາ.

World Contacts
ติดต่อพวกเรำได้ที่

Africa: EAfrica@Gods-Story.org

Ethiopia: Ethiopia@SimplyTheStory.org

West Africa: "French & English"
STSWestAfrica@SimplyTheStory.org

West Africa "French"
GSWestAfrica@SimplyTheStory.org

Europe: BT@SimplyTheStory.org

India: IndiaDirector@Gods-Story.org

Nepal: Nepal@SimplyTheStory.org

South East Asia: Asia@SimplyTheStory.org

Spanish: LatinAmerica@SimplyTheStory.org

Oceania: Oceania@SimplyTheStory.org

Philippines: eb@SimplyTheStory.org

USA: info@SimplyTheStory.org

✞